ຢູ. ອາວະດາກິນ, ວ. ໂນໂວກິນ

ວິທີການກໍ່ສ້າງ ອຸດສາຫະກຳສັງຄົມນິຍົມ ໃນ ສະຫະພາບໂຊວຽດ

ບຸນສິ່ງ ແກ້ວບົວສາຍ
ສ. ສາຍບຸນມີ

01 JAN 2009

ຢູ. ອາວະດາກົບ, ວ. ໂບໂລດິນ

ວິທີການກໍ່ສ້າງ ອຸດສາຫະກຳສັງຄົມນິຍົມ ໃນ ສະຫະພາບໂຊວຽດ

ບຸນສິ່ງ ແກ້ວບົວສາຍ
ສ. ສາຍບຸນມີ

ສຳນັກພິມ "ປະໂລກະເລັດ"
ມົດສະກູ
1981

ແປແລະຮຽບຮຽງໂດຍ:

ມູນທະລາ ສຸທຳມະວົງ
ກິແກ້ວ ສຸວັນນະພູມ
ດະນິຕິ ກະລິນໂກ

Ю. Авдаков, В. Бородин

КАК СОЗДАВАЛАСЬ СОЦИАЛИСТИЧЕСКАЯ
ПРОМЫШЛЕННОСТЬ В СССР

(на лаосском языке)

© ແປເປັນພາສາລາວ, ສຳນັກພິມ "ປະໂລກະເລັດ", 1981
ພິມໃນສະຫະພາບໂຊວຽດ

A $\frac{10801-948}{014(01)-81}$ 857–81

0604020101

ບຸນສົ່ງ ແກ້ວບົວລາຍ
ສ. ສາຍບຸນມີ

ສາລະບານ

ໜ້າ

ບົດແນະນຳຂອງສຳນັກພິມ 6

ການກໍ່ສ້າງໂຄງຮ່າງການຈັດຕັ້ງ
ຈຸ້ມຄອງອຸດສາຫະກຳແຫ່ງຊາດ (ປີ ໑໙໑໗-໑໙໒໑)

ການປະກອບສະພາເສດຖະກິດແຫ່ງຊາດສູງສຸດ ແລະ ການກໍ່ສ້າງກົງຈັກເສດຖະກິດສູນກາງຂອງມັນ . 9

ບົດບາດຂອງສະພາເສດຖະກິດທ້ອງຖິ່ນ ໃນວຽກງານ ຈຸ້ມຄອງອຸດສາຫະກຳ 26

ກອງປະຊຸມໃຫຍ່ຂອງສະພາເສດຖະກິດແຫ່ງຊາດຂອງ ລັດເຊຍທັງໝົດ 42

ການຈຸ້ມຄອງອຸດສາຫະກຳລັດ
ໃນໄລຍະ ແຕ່ປີ ໑໙໑໗ ຫາປີ ໑໙໒໑

ການໂອນເອົາຊັບສິນບັດຂອງນາຍທຶນມາເປັນຂອງລັດ -ແມ່ນພື້ນຖານຂອງການກໍ່ສ້າງຂະແໜງ ອຸດສາຫະກຳລັດ 53

ໜ້າ

ການຈັດຕັ້ງຄຸ້ມຄອງໂຮງຈັກໂຮງງານ ທີ່ຖືກໂອນມາ-ເປັນຂອງລັດ 81

ບັນຫາການເງິນແລະ ການສິນເຊື່ອຂອງອຸດສາຫະກຳລັດ 112

ການຈັດຕັ້ງຈຳລະຈອນແຈກຢາຍວັດຖຸປະກອນເຕັກນິກ. 127

<u>ການຂ້າມຜ່ານ ໄປສູ່ນະໂຍບາຍເສດຖະກິດໃໝ່ ແລະການປ່ຽນແປງ ລະບົບຄຸ້ມຄອງອຸດສາຫະກຳລັດ ໃນສະໄໝແຕ່ປີ ໑໙໒໑ ຫາປີ ໑໙໓໐</u>

ການປ່ຽນແປງໂຄງຮ່າງການຈັດຕັ້ງຄຸ້ມຄອງອຸດສາຫະກຳ 153

ການຈັດຕັ້ງສະຫະບໍລິສັດ 166

ສະຫະບໍລິສັດໃນໄລຍະການດັດສ້າງອຸດສາຫະກຳ .. 179

ການເຄື່ອນໄຫວດ້ານການຜະລິດແລະດ້ານເສດຖະກິດຂອງສະຫະບໍລິສັດ 194

<u>ບົດບາດຂອງສະມາຄົມບໍລິສັດອຸດສາຫະກຳ ໃນການຈັດຕັ້ງອຸດສາຫະກຳໂຊວຽດ</u>

ການເກີດຂຶ້ນຂອງສະມາຄົມບໍລິສັດອຸດສາຫະກຳ ... 205

ການສ້າງສາຍພົວພັນທາງດ້ານກຳເນີດການຈັດຕັ້ງ , ດ້ານເສດຖະກິດລະຫວ່າງສະມາຄົມບໍລິສັດອຸດສາຫະກຳແລະສະຫະບໍລິສັດອຸດສາຫະກຳ 219

ບັນດາທິດທາງຕົ້ນຕໍຂອງນະໂຍບາຍເອົາອຸດສາຫະກຳ

ຫນ້າ

ເຂົ້າສະມາຄົມຂອງສະພາເສດຖະກິດ ແຫ່ງຊາດ
ສູງສຸດ 234

ສະມາຄົມສະຫະບໍລິສັດໃນລະບົບຄຸ້ມຄອງອຸດສາຫະກຳ
ໂຊວຽດ ໃນໄລຍະຟື້ນຟູອຸດສາຫະກຳ 271

ວິວັດທະນາການຂອງລະບົບສະມາຄົມສະຫະບໍລິສັດໃນ
ໄລຍະຟື້ນຟູອຸດສາຫະກຳ 285

ການຄຸ້ມຄອງອຸດສາຫະກຳລັດ ແລະ ກຸ່ມຂະແຫນງອຸດສາຫະກຳ ໃນໄລຍະ ແຕ່ປີ ໑໙໒໙ ຫາປີ ໑໙໓໖

ການຂ້າມຜ່ານໄປສູ່ການເຮັດໃຫ້ເປັນປະເທດ ອຸດສາ
ຫະກຳ, ແລະການປັບປຸງການຄຸ້ມຄອງ ອຸດສາຫະ
ກຳ 305

ກຸ່ມຂະແຫນງອຸດສາຫະກຳ 317

ຫມາຍເຫດ 361

ບົດແນະນຳຂອງສຳນັກພິມ

ບົດເລື່ອງນີ້ ໄດ້ສະຫລຸບບົດຮຽນພາກປະຕິບັດຕົວຈິງ,ທີ່ລັດ ໂຊວຽດ ໄດ້ສະສົມມາຕັ້ງແຕ່ໄລຍະຕອນຕົ້ນ ຂອງການກໍ່ສ້າງ ເສດຖະກິດ ສັງຄົມນິຍົມ. ບົດແນະນຳນີ້ໄດ້ເອົາໃຈໃສ່ບັນຫາ ການສ້າງຕັ້ງ ແລະການຂະຫຍາຍຮູບການຈັດຕັ້ງ ພ້ອມທັງວິທີ ຄຸ້ມຄອງຊຸດສາຫະກຳຂອງລັດ ຢູ່ໃນປະເທດຂອງພວກເຮົາໃນ ໄລຍະປີ ໑໙໑໗ ຫາປີ ໑໙໓໘.

ໃນໄລຍະນັ້ນ ເປັນໄລຍະເວລາທີ່ພື້ນຖານເສດຖະກິດ ສັງ ຄົມນິຍົມ ຢູ່ພາຍໃນປະເທດ ໄດ້ຖືກກໍ່ສ້າງຂຶ້ນ ແລະຈັດຕັ້ງລະ ບົບຄຸ້ມຄອງຊຸດສາຫະກຳ ຕາມຂະແໜງການ, ເປັນໄລຍະ ວາງວິທີໃໝ່ຄຸ້ມຄອງ ແລະຈັດວາງຊຸດສາຫະກຳສັງຄົມນິຍົມ.

ໂດຍອີງໃສ່ເອກະສານຕົວຈິງ ຫລາຍສະບັບ,ເຊິ່ງບັນດາຜູ້ ແຕ່ງ ໄດ້ສະແດງໃຫ້ເຫັນວ່າ ເສັ້ນທາງການກໍ່ສ້າງເສດຖະ- ກິດ ສັງຄົມນິຍົມນັ້ນ ໄດ້ມີການສ້າງຕັ້ງບັນດາອົງການແລະວິທີ ການແບບໃໝ່ ກ່ຽວກັບການຄຸ້ມຄອງຊຸດສາຫະກຳພ້ອມທັງກົງ

ຈັກເສດຖະກິດສູນກາງແລະອີງການທ້ອງຖິ່ນຂອງລະບົບສະພາ ເສດຖະກິດແຫ່ງຊາດສູງສຸດຂັ້ນ.

ແນ່ນອນ, ຫົວເລື່ອງຂອງປຶ້ມນີ້ ມັນເປັນໜ້າສົນໃຈ ແທ້. ການສຶກສາບົດຮຽນຄຸ້ມຄອງເສດຖະກິດ ໃນທົດສະວັດທີ ສາມ (ໃນໄລຍະແຕ່ປີ ໑໙໒໑ ຫາປີ ໑໙໓໐) ນັ້ນ ບໍ່ແມ່ນພຽງແຕ່ມີຄວາມໝາຍທາງປະຫວັດສາດເທົ່ານັ້ນ, ແຕ່ມັນຍັງມີຄວາມໝາຍອັນສຳຄັນທາງດ້ານປະສົບການສຳລັບບັນດາປະເທດ,ທີ່ກ້າວເຂົ້າສູ່ເສັ້ນທາງການຂະຫຍາຍຕົວແບບສັງຄົມນິຍົມ.ການວິໄຈແບບວິທະຍາສາດ ຂອງໄລຍະດັ່ງກ່າວມັນມີຄວາມໝາຍສຳຄັນອັນໜຶ່ງອີກ ຢູ່ບ່ອນວ່າ ບັນດານັກເສດຖະສາດທຶນນິຍົມກໍສະແດງ "ທັດສະນະ" ຂອງພວກເຂົາອອກ ກ່ຽວກັບໄລຍະຂ້າມຜ່ານ ຢູ່ໃນ ສ.ສ.ສ.ຊ. ຫລາຍຢ່າງຫລາຍແນວ,ທີ່ບິດເບືອນຄວາມຈິງ ກ່ຽວກັບການເຄື່ອນໄຫວ ຂອງຂະບວນການຈັດຕັ້ງເສດຖະກິດ ໃນໄລຍະຂ້າມຜ່ານ ໂດຍມີໜ້າທີ່ທາງສັງຄົມ ອັນແນ່ນອນຂອງພວກເຂົາ. ພວກເຂົາຍັງໄດ້ພະຍາຍາມເຮັດໃຫ້ບັນດາປະເທດ ທີ່ພວມກ້າວໄປຕາມເສັ້ນທາງ ແຫ່ງການຕໍ່ສູ້ຍາດແຍ້ງເອົາຄວາມເປັນເອກະລາດ ທາງດ້ານການເມືອງ, ດ້ານເສດຖະກິດແລະຫັນໄປສູ່ເສັ້ນທາງຂະຫຍາຍຕົວແບບສັງຄົມນິຍົມນັ້ນ ຫລົງທິດຫລົງທາງ.

ນອກຈາກນັ້ນ ໃນປີຫລັງໆມານີ້ ພວກນັກເສດຖະສາດນາຍທຶນ ແຮງມີຄວາມສົນໃຈຫລາຍທີ່ສຸດ ຕໍ່ບັນຫາການປັບປຸງ ກົງຈັກເສດຖະກິດ ຢູ່ໃນ ສ.ສ.ສ.ຊ. ແລະໃນບັນດາ ປະເທດ

ສັງຄົມນິຍົມອື່ນໆອີກ. ເຊັ່ນຕົວຢ່າງວ່າ: ນັກຂຽນບາງຈຳພວກ ຂອງເຂົາ ໄດ້ຊອກຊ່ອງທາງ ເພື່ອອ້າງອອກມາວ່າ ແນວຄິດການຈັດຕັ້ງກຸ່ມວິສາຫະກິດ ການຜະລິດນັ້ນ ແມ່ນກ່າຍອອກມາຈາກບົດຮຽນຂອງທຶນນິຍົມ. ແຕ່ໃນຕົວຈິງແທ້ແລ້ວກ່ຽວກັບບັນຫານີ້,ໂດຍອີງໃສ່ບັນດາເອກະສານຂອງປຶ້ມຫົວນີ້ເພິ່ນກໍສາມາດພິສູດໄດ້ວ່າ ແນວຄິດການຈັດຕັ້ງ ກຸ່ມວິສາຫະກິດການຜະລິດນີ້ໄດ້ກຳເນີດຂຶ້ນ ຕັ້ງແຕ່ໃນໄລຍະປີທຳອິດຂອງອຳນາດໂຊວຽດ. ກຸ່ມວິສາຫະກິດ ທີ່ເກີດຂຶ້ນຫລາຍຮູບຫລາຍແບບ ໄດ້ດຳເນີນການເຄື່ອນໄຫວຂອງຕົນ ຢູ່ພາຍໃນປະເທດຂອງພວກ ເຂົາເປັນໄລຍະເກືອບເຖິງ ໑໔ ປີແລ້ວ.

ຜູ້ຂຽນໄດ້ຢັ້ງຢືນໃຫ້ເຫັນ ທີ່ຕັ້ງຂອງກຸ່ມວິສາຫະກິດ ໃນລະບົບຄຸ້ມຄອງອຸດສາຫະກຳ ໃນໄລຍະຂ້າມຜ່ານ, ໄດ້ເຜີຍແບລັກສະນະພິເສດ ຂອງກຸ່ມວິສາຫະກິດ ອຸດສາຫະກຳ ຂະແຫນງການ ແລະບົດບາດຂອງວິສາຫະກິດ ທີ່ນຳໃຊ້ຫລັກການກຸ້ມຕົນເອງ ດ້ານເສດຖະກິດ. ຢູ່ໃນພາກສຸດທ້າຍຂອງປຶ້ມຫົວນີ້ ຍັງໄດ້ຕີລາຄາຮູບການການຈັດຕັ້ງ ຄຸ້ມຄອງອຸດສາຫະກຳ ແຕ່ລະປະເພດອີກ.

ປຶ້ມວິທະຍາການຫົວນີ້ ຂຽນຂຶ້ນເພື່ອມຸ່ງຫວັງ ນຳພົນປະໂຫຍດແກ່ນັກອ່ານ ຜູ້ທີ່ສົນໃຈທົ່ວໆໄປ. ແຕ່ເຖິງຢ່າງໃດກໍດີປຶ້ມຫົວນີ້ ມັນເປັນຄູ່ມືສຳລັບນັກວິຊາການທີ່ຄົ້ນຄວ້າບັນຫາຄຸ້ມຄອງເສດຖະກິດໂດຍສະເພາະ.

ການກໍ່ສ້າງໂຄງຮ່າງ

ການຈັດຕັ້ງລຸ້ມຄອງຊຸດສາທະກຳ ແຫ່ງຊາດ

(ປີ ໑໙໑໗–໑໙໔໑)

ການປະກອບສະພາເສດຖະກິດແຫ່ງຊາດສູງສຸດ ແລະການກໍ່ສ້າງກົງຈັກເສດຖະກິດສູນກາງຂອງມັນ

ຫລັງຈາກມະຫາປະຕິວັດສັງຄົມນິຍົມເດືອນຕຸລາ ສຳເລັດລົງແລ້ວ ພາຍໃຕ້ການນຳພາຂອງພັກ ກອມມູນິດ, ຈຸ້ມຈຸ້ມກຳມະກອນລັດເຊຍ ໄດ້ກ້າວເຂົ້າການດຳເນີນ ການຈັດຕັ້ງເສດຖະກິດແຫ່ງຊາດ ໂດຍອີງໃສ່ພື້ນຖານໃຫມ່ ແບບສັງຄົມນິຍົມ. ໃນປຶດນີພົນ "ພາລະຫນ້າທີ່ສະເພາະຫນ້າ ຂອງອຳນາດໂຊວຽດ" ທ່ານ ວ.ອີ.ເລນິນ ໄດ້ຂຽນໄວ້ວ່າ " ການຈັດຕັ້ງເສດຖະກິດ ແມ່ນບັນຫາທີ່ສັບສົນທີ່ສຸດ, ເພາະວ່າ ມັນແມ່ນວຽກງານ ທີ່ພົວພັນເຖິງການຈັດຕັ້ງພື້ນຖານເສດຖະກິດ ອັນເລິກເຊິ່ງແບບໃຫມ່ ຂອງຊີວິດຄົນຈຳນວນຕັ້ງຫລາຍໆສິບລ້ານ ແລະກໍ່ແມ່ນບັນຫາທີ່ຫມົກຊຽດ ອັນສູງສົ່ງທີ່ສຸດ. ເພາະວ່າ ຫລັງຈາກການແກ້ໄຂບັນຫາດັ່ງກ່າວເທົ່ານັ້ນ (ໃນບັນດາລັກສະນະສຳຄັນແລະພື້ນຖານ) ມັນອາດຈະເວົ້າໄດ້ວ່າ ປະເທດລັດເຊຍ ບໍ່ພຽງແຕ່ກາຍເປັນ ສາທາລະນະລັດໂຊວຽດ ເທົ່ານັ້ນ ແຕ່ຫາກຍັງເປັນ ສາທາລະນະລັດສັງຄົມນິຍົມອີກດ້ວຍ" (ວ.

ອີ.ເລນິນ, ປະມວນບົດນິພົນ ສະບັບສົມບູນ, ເຫຼັ້ມທີ່ ໒໕, ໜ້າ ໑໗໕.)

ໃນການຄົ້ນຄ້ວາເສດຖະກິດ ຂອງປະເທດລັດເຊຍ ກ່ອນໜ້າມະຫາປະຕິວັດ ສັງຄົມນິຍົມເດືອນຕຸລານັ້ນ ທ່ານ ວ.ອີ. ເລນິນ ໄດ້ຂຽນໄວ້ວ່າ, ລະດັບສູງຂອງການຜູກຂາດດ້ານອຸດສາຫະກຳ, ດ້ານການຄ້າ ແລະດ້ານທະນາຄານ, ຂະບວນການອັນແຮງຂອງການສ້າງຕັ້ງ ການຜູກຂາດໃນການ ລົງທຶນແຫ່ງຊາດ ໂດຍສະເພາະທີ່ຢູ່ໃນໄລຍະ ສົງຄາມໂລກຄັ້ງທີໜຶ່ງ, ການຂະຫຍາຍຕົວຂອງຂະບວນການຈັດຕັ້ງກຳມະກອນທີ່ມີການນຳພາ ໂດຍພັກກອມມູນິດນັ້ນ ທັງໝົດເຫລົ່ານີ້ ເຮັດໃຫ້ຊົນຊັ້ນກຳມາຊີບ ຂອງປະເທດລັດເຊຍ ເຫັນມີຄວາມ ຈຳເປັນຕ້ອງນຳເອົາພາຫະນະການຜະລິດຂັ້ນພື້ນຖານເຂົ້າມາໄວ້ໃນກຳມືຂອງສັງຄົມທັງໝົດ.

ຫລັງຈາກໄຊຊະນະ ຂອງມະຫາປະຕິວັດສັງຄົມນິຍົມເດືອນຕຸລານັ້ນແລ້ວ ໃນບັນດາເງື່ອນໄຂສຳຄັນຈຳນວນໜຶ່ງ ຂອງວຽກງານ ເຮັດໃຫ້ເສດຖະກິດແຫ່ງຊາດ ສະຖຽນໝັ້ນ ນັ້ນແມ່ນວຽກງານຄຸ້ມຄອງເສດຖະກິດແຫ່ງຊາດ ຈາກຝ່າຍລັດ . ເພື່ອຈຸດປະສົງດັ່ງກ່າວ ບັນຫາຕົ້ນຕໍ, ກ່ອນອື່ນໝົດ ແມ່ນຈຳຕ້ອງລົບລ້າງກົງຈັກປົກຄອງລັດ ແລະກົງຈັກບໍລິຫານ ເສດຖະກິດ ທີ່ສ້າງຂຶ້ນໃນສະໄໝ ກ່ອນການ ປະຕິວັດລັດເຊຍນັ້ນຖິ້ມ.

ດັ່ງນັ້ນບັນຫາຕົ້ນຕໍອັນໜຶ່ງຂອງຊົນຊັ້ນກຳມາຊີບຫຼັງຈາກສຳເລັດການຕໍ່ສູ້ຍາດແຍ່ງເອົາອຳນາດທາງດ້ານການເມືອງ ມາ

ໄດ້ແລ້ວນັ້ນ ແມ່ນການກໍ່ສ້າງອົງການສູນກາງເສດຖະກິດຂຶ້ນ, ເຊິ່ງໃນພາກປະຕິບັດຕົວຈິງ ທີອາດສາມາດເຮັດໃຫ້ ແຜນການຕ່າງໆ ໃນການສ້າງພື້ນຖານເສດຖະກິດໂຊວຽດ ປາກົດເປັນຈິງໄດ້. ຍ້ອນມີການປ່ຽນແປງສະພາບເສຖະກິດ ແລະການເມືອງ ຢ່າງກະທັນຫັນນັ້ນ ຢູ່ພາຍໃນປະເທດ,ຕໍ່ໜ້າອຳນາດໂຊວຽດບາງຄັ້ງ ເກີດມີບັນຫາໃໝ່ສັບສົນໂດຍສະເພາະແມ່ນບັນຫາໃນດ້ານການຈັດຕັ້ງເສດຖະກິດ, ເຊິ່ງໃນດ້ານນີ້ຊົນຊັ້ນກຳມາຊີບ ຍັງບໍ່ທັນມີບົດຮຽນພຽງພໍແລະຍັງຂາດຄວາມຮູ້ພິເສດ ເພື່ອແກ້ໄຂບັນຫາດັ່ງກ່າວໄດ້. ພາຍໃຕ້ເງື່ອນໄຂທີ່ກ່າວມານັ້ນ ການກໍ່ສ້າງລະບົບການຈັດຕັ້ງຄຸ້ມຄອງເສດຖະກິດແຫ່ງຊາດ ໃຫ້ເປັນແບບຖາວອນບາດດຽວໂລດນັ້ນ ເປັນການເຮັດໄດ້ຍາກທີ່ສຸດ. ພ້ອມທັງການຊັ່ງຊາຍຢ່າງລະອຽດ ທີ່ຖ້ວນທຸກແງ່ແບບການຈັດຕັ້ງທີ່ຄົ້ນພົບ ທັງຄັດເລືອກເອົາບັນດາຂໍ້ສະເໜີ ອັນດີເດັ່ນນັ້ນ ພັກໂບນເຊວິກ ເຊິ່ງແມ່ນ ທ່ານ ວ.ອີ. **ເລນິນ ເປັນຫົວໜ້າ, ໄດ້ຄົ້ນຄິດແລະໄດ້ນຳໃຊ້ ແນວຄິດການຈັດຕັ້ງ ສະພາເສດຖະກິດ ແຫ່ງຊາດສູງສຸດເຂົ້າໃນພາກປະຕິບັດຕົວຈິງ.**

ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ຖືກສ້າງຕັ້ງຂຶ້ນເປັນອົງການເສດຖະກິດ ສູນກາງຂອງສາທາລະນະລັດ ໂຊວຽດ, ທີ່ມີໜ້າທີ່ນຳພາທຸກສາຂາ ເສດຖະກິດແຫ່ງຊາດ,ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ຖືກຄົ້ນຄິດເປັນອົງການວາງແຜນ, ຄຸ້ມຄອງແລະກວດກາ. ໜ້າທີ່ຕົ້ນຕໍຂອງອົງການດັ່ງກ່າວແມ່ນ

ການຈັດຕັ້ງຄຸ້ມຄອງເສດຖະກິດ ແລະການເງິນແຫ່ງຊາດ.

ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ຖືກມອບສິດໃຫ້ປະຕິບັດວຽກງານ ໂອນເອົາຈັບເອກະຊົນເຂົ້າເປັນຂອງລັດ,ໂດຍວິທີການການຍຶດຈັບ, ການເວນຈັບ ການກັກຈັບ, ການບັງຄັບໃຫ້ຈັດຕັ້ງສະມາຄົມສາຂາອຸດສາຫະກຳ ແລະ ການຄ້າ , ການຈໍລະຈອນຜະລິດຕະພັນ ແລະການຈັດຕັ້ງການເງິນ ແຫ່ງຊາດ.

ສະພາເສດຖະກິດແຫ່ງຊາດສູງສຸດ ເຊິ່ງແມ່ນສູນ ປະສານງານແຫ່ງຊາດ ໄດ້ມີພາລະໜ້າທີ່ ປະສົມປະສານ ແລະ ສັງລວມການເຄື່ອນໄຫວວຽກງານ ຂອງບັນດາກະຊວງ ແລະບັນດາກິດຈະການຢູ່ສູນກາງ ແລະຢູ່ທ້ອງຖິ່ນ. ມັນເຮັດໜ້າ ທີ່ກວດກາ ຕໍ່ບັນດາອົງການກວດກາກຳມະກອນສູນກາງ ແລະທ້ອງຖິ່ນ, ມີພາລະໜ້າທີ່ປະສົມປະສານ ແລະສັງລວມ ການເຄື່ອນໄຫວວຽກງານ ຂອງບັນດາການຈັດຕັ້ງກຳມະກອນແລະກຳມະບານ ຢູ່ໃນໂຮງຈັກໂຮງງານ ໃນດ້ານການຄຸ້ມ ຄອງການຜະລິດ. ບັນດາສະຖາບັນຕ່າງໆ ມີໜ້າທີ່ຄຸ້ມຄອງ ເສດຖະກິດແຫ່ງຊາດ ດຳເນີນການເຄື່ອນໄຫວຂອງຕົນພາຍໃຕ້ອຳນາດຂອງສະພາເສດຖະກິດແຫ່ງຊາດສູງສຸດ.

ໃນປີທຳອິດຂອງການດຳລົງຄົງຕົວຂອງຕົນ,ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ກຳກັບບັນດາບັນຫາການຈັດຕັ້ງ ເສດຖະກິດແຫ່ງຊາດ, ໄດ້ວາງພື້ນຖານນະໂຍບາຍ ເສດຖະກິດຂອງສາທາລະນະລັດໂຊວຽດອອກ, ໄດ້ວາງແຜນການ ກ່ຽວ

ກັບວຽກງານເສດຖະກິດຂອງແຕ່ລະກະຊວງປະຊາຊົນ, ໄດ້ປະກອບສ່ວນຢ່າງຫ້າວຫັນ ເຂົ້າໃນການກະກຽມກົດໝາຍ ໃນດ້ານເສດຖະກິດ ໃຫ້ແກ່ສາທາລະນະລັດໂຊວຽດ.

ສະພາເສດຖະກິດແຫ່ງຊາດສູງສຸດຍັງມີໜ້າທີ່: ການໂອນເອົາໂຮງຈັກໂຮງງານຫຸ້ນນິຍົມມາເປັນຂອງລັດ ແລະການຈັດຕັ້ງການຜະລິດຄືນຢູ່ໃນໂຮງຈັກໂຮງງານດັ່ງກ່າວ; ການແກ້ໄຂບັນຫາການກໍ່ສ້າງຂະໜາດໃຫຍ່, ການລົງທຶນ; ການແກ້ໄຂບັນຫາທີ່ພົວພັນເຖິງການຜະລິດພາຫະນະຂົນສົ່ງ, ການສ້ອມແປງຫົວລົດໄຟແລະຕູ້ລົດໄຟ; ການຄວບຄຸມການຈໍລະຈອນ ສິນຄ້າຕ່າງປະເທດ. ໃນດ້ານຈໍລະຈອນສິນຄ້າພາຍໃນປະເທດສະພາເສດຖະກິດແຫ່ງຊາດສູງສຸດມີໜ້າທີ່: ຈັດຕັ້ງ ການກວດກາກອງທຶນເອກກະເທດ; ໂອນເອົາສາງສິນຄ້າແລະບໍລິສັດເອກະຊົນມາເປັນຂອງລັດ; ຂົນກັບບັນຊີສິນຄ້າສຳລອງ; ຈັດວາງລາຄາສິນຄ້າໃນທ້ອງຕະຫຼາດພາຍໃນ; ຈັດຕັ້ງລຳລຽງສິນຄ້າບໍລິໂພກໃຫ້ແກ່ປະຊາຊົນ; ຄວບຄຸມການຈໍລະຈອນສິນຄ້າ ໃນຕົວເມືອງແລະຊົນນະບົດ; ຜະລິດເຄື່ອງມືກະສິກຳ; ປຸງແຕ່ງ ວັດຖຸດິບຕັກນິກ; ຄວບຄຸມການນຳໃຊ້ເນື້ອທີ່ດິນໃຫ້ຖືກຕ້ອງ. ໃນດ້ານການເງິນລັດ ສະພາເສດຖະກິດແຫ່ງຊາດສູງສຸດໄດ້ແຈກຢາຍເງິນສິນເຊື່ອ, ປະຕິບັດວຽກງານກວດກາທະນາຄານຂອງລັດ, ວຽກງານຂອງກະຊວງການເງິນແລະອົງການເງິນອື່ນໆ.

ດັ່ງນັ້ນ ສະພາເສດຖະກິດແຫ່ງຊາດສູງສຸດໄດ້ກະກຽມແລະໄດ້ນຳສະເໜີທຸກບັນຫາ ທີ່ພົວພັນກັບວິວັດທະນາການເສດຖະກິດແຫ່ງຊາດ ໃຫ້ກອງປະຊຸມຂອງລັດຖະບານໂຊວຽດ (ສະ

ພາລັດຖະນິຕິ) ພິຈາລະນາຄົ້ນຄ້ວາມັນ. ແຕ່ເມື່ອຕົກມາເຖິງລະດູໃບໄມ້ຫລົ່ນຂອງປີ ໑໙໑໘ ສະພາເສດຖະກິດແຫ່ງຊາດ-ສູງສຸດ ເລີ່ມພົບບັນຫາຫຍຸ້ງຍາກ ໃນການປະສົມປະ ສານ-ວຽກງານ ເສດຖະກິດແຫ່ງຊາດ ໃນດ້ານຕ່າງໆ. ເພາະສະ-ນັ້ນ ເພິ່ນຈິ່ງຫັນມາສຸມໃສ່ແຕ່ວຽກງານໂອນເອົາໂຮງງານອຸດສາຫະກຳມາເປັນຂອງລັດ ແລະກຳກັບນຳແຕ່ການຈັດຕັ້ງ ຄຸ້ມຄອງອຸດສາຫະກຳດັ່ງກ່າວເທົ່ານັ້ນ.

ການສືບຕໍ່ວຽກງານໂອນເອົາອຸດສາຫະກຳ ແລະຂະແໜງເສດຖະກິດອື່ນໆອີກ ເຂົ້າມາເປັນຂອງລັດ ແລະເອົາເຂົ້າ ຢູ່ໃນການຄວບຄຸມຂອງລັດນັ້ນ ໄດ້ປະຕິບັດໄປຢ່າງກວ້າງຂວາງ, ດັ່ງນັ້ນມັນຈິ່ງຮຽກຮ້ອງໃຫ້ມີການຈັດຕັ້ງ ຄຸ້ມຄອງບັນດາ ຂະແໜງດັ່ງກ່າວ. ບັນດາກະຊວງຕ່າງໆ ເຊິ່ງເພິ່ນຖືວ່າ ເປັນອົງການຄຸ້ມຄອງເສດຖະກິດ ແບບເອກະລາດນັ້ນໄດ້ຮັບປະກັນການຈັດຕັ້ງການຜະລິດ ຢູ່ໃນຂອບເຂດຂະແໜງຂອງຕົນ.

ເມື່ອຕົກມາເຖິງທ້າຍສົງຄາມກາງເມືອງນັ້ນຂອບເຂດການເຄື່ອນໄຫວເສດຖະກິດ ຂອງສະພາເສດຖະກິດແຫ່ງຊາດ ສູງສຸດ ໄດ້ລຸດແຄບເຂົ້າຫລາຍທີ່ສຸດ. ໜ້າທີ່ຮັບຜິດຊອບໃນວຽກງານປຸງແຕ່ງວັດຖຸດິບກະສິກຳ ກໍເອົາອອກຈາກການຄຸ້ມ ຄອງຂອງສະພາເສດຖະກິດແຫ່ງຊາດດັ່ງກ່າວ, ແລະກົມຂົນສົ່ງທາງນ້ຳ ກໍໄດ້ຖືກແຍກຕົວອອກໄປຈັດຕັ້ງຢູ່ຕ່າງຫາກ.

ນອກຈາກນັ້ນ ໃນເດືອນເມສາຂອງປີ ໑໙໒໐ ເນື່ອງຈາກວ່າ ສະພາບການທະຫານໄດ້ມີການປ່ຽນແປງນັ້ນ, ສະພາປ້ອງກັນຊາດ ຂອງກຳມະກອນແລະຊາວນາ ໄດ້ຖືກປະກອບ ຂຶ້ນ-

ໃໝ່ແລະປ່ຽນຊື່ເປັນສະພາແຮງງານແລະປ້ອງກັນຊາດ (ສ. ຣ.ປ.) ເຊິ່ງພາຍຫລັງຕໍ່ມາ ສະພາດັ່ງກ່າວໄດ້ກາຍເປັນ ອົງການຈັດວາງແຜນການ ສູນກາງຂອງປະເທດໂຊວຽດ. ວັນທີ ໒໒ ກຸມພາ ປີ ໑໙໒໑ ຄະນະກຳມະການແຜນຜັງ ແຫ່ງຊາດ ໄດ້ຖືກປະກອບຂຶ້ນ ແລະກໍໄດ້ດຳເນີນການຈັດຕັ້ງ ວາງ ແຜນ ໄລຍະຍາວໃນດ້ານເສດຖະກິດ ແຫ່ງຊາດທັງໝົດ.

ດັ່ງນັ້ນ ເມື່ອຮອດທ້າຍປີ ໑໙໒໐ ສະພາເສດຖະກິດແຫ່ງ-ຊາດສູງສຸດ ກໍໄດ້ຫັນມາສຸມໃສ່ແຕ່ໜ້າທີ່ອັນເປັນຕົ້ນຕໍຂອງຕົນ ຄືວຽກງານຈັດຕັ້ງຄຸ້ມຄອງອຸດສາຫະກຳ. ຈຳນວນໂຮງ ຈັກ ໂຮງງານ ທີ່ໂອນມາເປັນຂອງລັດ ໄດ້ຂະຫຍາຍຂຶ້ນ ຈາກຈຳ ນວນ ໕໑໗ ແຫ່ງໃນປີ ໑໙໑໘, ແລະເຖິງປີ ໑໙໒໐ ຈຳ ນວນໄດ້ເພີ່ມຂຶ້ນເຖິງ ໔,໕ ພັນແຫ່ງ. ສະພາເສດຖະກິດແຫ່ງ ຊາດສູງສຸດ ໄດ້ປະຕິບັດໜ້າທີ່ຂອງຕົນ ໃນຫລາຍດ້ານເຊັ່ນ: ດ້ານທີໜຶ່ງແມ່ນການຊີ້ນຳນຳພາທົ່ວໄປໃນຂົງເຂດວຽກ ງານ ອຸດສາຫະກຳຂອງລັດ ແລະອຸດສາຫະກຳຫັດຖະກຳ; ດ້ານທີ ສອງ ແມ່ນຄຸ້ມຄອງໂດຍກົງບັນດາໂຮງຈັກໂຮງງານທີ່ມີຄວາມ ສຳຄັນອັນດັບຊາດ ແລະດ້ານທີສາມ ແມ່ນໄດ້ຈັດວາງ ການ ຄວບຄຸມອຸດສາຫະກຳທັງໝົດ.

ເພິ່ນໄດ້ຈັດຕັ້ງສະພາເສດຖະກິດແຫ່ງຊາດປະຈຳສາທາລະ ນະລັດຂຶ້ນ ໃນສາທາລະນະລັດ ສະຫະພາບຕ່າງໆເຊັ່ນ ອູກະ ລາອີນາ, ເບໂລລູເຊຍ ເຊິ່ງເອີ້ນຊື່ວ່າ ສະພາເສດຖະກິດ ແຫ່ງຊາດ.

ການທັນປຽນສະພາເສດຖະກິດແຫ່ງຊາດສູງສຸດ ຈາກເມື່ອກ່ອນເປັນອົງການຄຸ້ມຄອງວຽກງານເສດຖະກິດທົ່ວໄປມາເປັນກະຊວງຊຸດສາຫະກຳນັ້ນມັນໄດ້ສົ່ງຜົນກະທົບໃສ່ການປ່ຽນແປງໂຄງປະກອບການຈັດຕັ້ງ ຂອງມັນອີກດ້ວຍ. ຕາມມະຕິທີ່ອອກໃນວັນທີ ໘ ທັນວາ ປີ ໑໙໑໗ ເປັນຕົ້ນມາອົງການນຳພາສູງສຸດຂອງ ສະພາເສດຖະກິດແຫ່ງຊາດສູງສຸດ ແມ່ນກອງປະຊຸມສາມັນ. ໃນກອງປະຊຸມດັ່ງກ່າວ ມີບັນດາຜູ້ແທນ ຈາກອົງການຈັດຕັ້ງໂຊວຽດ, ອົງການຄຸ້ມຄອງເສດຖະກິດ, ອົງການ ກຳມະບານ ແລະ ສະຫະກອນເຂົ້າຮ່ວມ.

ຫລັງຈາກນັ້ນ ເພື່ອບົ່ງແຈ້ງເຖິງໜ້າທີ່ ສະພາເສດຖະກິດແຫ່ງຊາດສູງສຸດ ເພິ່ນໄດ້ສ້າງຕັ້ງຄະນະປະທານຂຶ້ນແທນກອງປະຊຸມສາມັນ ເພື່ອຈຸດປະສົງຊີ້ນຳພາການເຄື່ອນໄຫວ ວຽກງານປະຈຳວັນ ຂອງສະພາເສດຖະກິດແຫ່ງຊາດສູງສຸດ.

ການປັບປຸງການຈັດຕັ້ງພະແນກຂອງ ສະພາເສດຖະ ກິດແຫ່ງຊາດສູງສຸດ ຂຶ້ນອີກໃໝ່ນັ້ນ ໄດ້ດຳເນີນໄປຕາມທິດທາງສອງຢ່າງຄື: ທິດທາງອັນທີໜຶ່ງ ແມ່ນໄດ້ສ່ອງແສງເຖິງການວິວັດຂອງ ສະພາເສດຖະກິດແຫ່ງຊາດສູງສຸດ ຈາກການເປັນອົງການເສດຖະກິດທົ່ວໄປຫັນມາເປັນກະຊວງ ຊຸດສາຫະກຳ; ເພິ່ນໄດ້ຍຸບເລີກບັນດາພະແນກຂອງ ສະພາເສດຖະກິດ ແຫ່ງຊາດສູງສຸດ ທີ່ບໍ່ມີການພົວພັນເຖິງວຽກງານຊຸດສາຫະກຳເຊັ່ນພະແນກກະສິກຳ ແລະການຊົມໃຊ້, ພະແນກເສດຖະກິດແຫ່ງຊາດ ແລະທະນາຄານ, ພະແນກການຄ້າ. ມາຮອດທ້າຍ ປີ

໑໙໑໘ ເພິ່ນໄດ້ປັບປຸງກົງຈັກຄຸ້ມຄອງເສດຖະກິດ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ເພື່ອຊີ້ນຳນຳພາ ສະເພາະແຕ່ອຸດສາຫະກຳເທົ່ານັ້ນ.

ສ່ວນທິດທາງອັນທີສອງນັ້ນ ແມ່ນໄດ້ສ່ອງແສງເຖິງການຂະຫຍາຍໜ້າທີ່ຂອງ ສະພາເສດຖະກິດແຫ່ງຊາດສູງສຸດໃນດ້ານການຈັດຕັ້ງແລະຄຸ້ມຄອງອຸດສາຫະກຳ. ເພື່ອກຳນົດ ລະບຽບຂອງຂະແໜງອຸດສາຫະກຳ ແຕ່ລະຂະແໜງນັ້ນເພິ່ນໄດ້ສ້າງຕັ້ງພະແນກຮັບຜິດຊອບຂຶ້ນ. ໃນປີ ໑໙໒໐ ກົງຈັກສູນ ກາງຂອງສະພາເສດຖະກິດແຫ່ງຊາດສູງສຸດ ປະກອບດ້ວຍ ໔໗ພະແນກດ້ວຍກັນ ໃນນັ້ນມີ ໑໕ ພະແນກຮັບຜິດຊອບ ແລະ ມີ ໑໘ ພະແນກຄວບຄຸມການຜະລິດ.

ພ້ອມດຽວກັນນັ້ນ ກໍມີຂະບວນເຕົ້າໂຮມບັນດາພະແນກ ທີ່ມີລັກສະນະຄ້າຍຄຽງກັນນັ້ນເຂົ້າກັນ ເຊັ່ນພະແນກແຮ່ເຫລັກ , ພະແນກຫລອມເຫລັກ, ພະແນກປຸງແຕ່ງເຫັລກ ແລະ ຜະລິດກົນຈັກນັ້ນ ໄດ້ຖືກຈັບຊ້ອນເຂົ້າເປັນພະແນກໂລຫະ; ໂດຍອີງໃສ່ລັກສະນະຄ້າຍຄືກັນ ຂອງພະແນກວັດຖຸ, ພະແນກລຳລຽງແລະອິນສິ່ງນັ້ນ ເພິ່ນໄດ້ຈັດຕັ້ງໃຫ້ເປັນພະແນກວັດຖຸ-ອິນສິ່ງ.

ນອກຈາກນັ້ນ ໃນໂຄງປະກອບກົງຈັກຄຸ້ມຄອງ ເສດຖະກິດສູນກາງ ເພິ່ນໄດ້ຈັດຕັ້ງ ກົມໃຫຍ່ຕ່າງໆ. ບັນດາກົມເຫລົ່ານີ້ເປັນອົງການທີ່ລົງເລິກທາງດ້ານວິຊາການ ເຊິ່ງຄວບຄຸມ ອຸດສາຫະກຳຂອງ ສະພາເສດຖະກິດແຫ່ງຊາດສູງສຸດ ເຊັ່ນ:ກົມຕຳແຜ່ນ, ກົມນ້ຳຕານ, ກົມຖ່ານຫີນ, ກົມຊຸດຄົ້ນໄມ້ ແລະ

ອື່ນໆອີກ.

ບັນດາກົມໃຫຍ່ທີ່ຖືກກໍ່ສ້າງຂຶ້ນນີ້ ຕ້ອງຮັບປະກັນການສະມຸດບັນຊີ ວັດຖຸສິ່ງຂອງທີ່ມີຄຸນຄ່າ ແລະກວດກາການແຈກຢາຍວັດຖຸດັ່ງກ່າວ, ກະກຽມເງື່ອນໄຂເພື່ອຈະໂອນເອົາໂຮງຈັກໂຮງງານ ຂອງນາຍທຶນມາເປັນຂອງລັດ, ຈັດວາງໃຫ້ຖືກ ຕ້ອງວຽກງານເຄື່ອນໄຫວເສດຖະກິດ ຢູ່ໃນຂອບເຂດຂະແໜງອຸດສາຫະກຳຂອງໃຜມັນ.

ບັນດາກົມໃຫຍ່ດັ່ງກ່າວ ເປັນອົງການກຳນົດການເຄື່ອນ - ໄຫວທາງດ້ານເສດຖະກິດ ສະເພາະຂະແໜງ ອຸດສາຫະກຳອັນໃດອັນໜຶ່ງເທົ່ານັ້ນ. ໃນຂັ້ນຕົ້ນໄດ້ມີຜູ້ຕາງໜ້າຂອງນາຍທຶນເຂົ້າຮ່ວມ ໃນອົງການຄຸ້ມຄອງຂອງບັນດາ ກົມໃຫຍ່ດັ່ງກ່າວ. ໃນໂອກາດທີ່ນາຍທຶນໄດ້ເຂົ້າຮ່ວມ ໃນອົງການນຳດັ່ງກ່າວນັ້ນ ມັນໄດ້ຢັ້ງຢືນເຖິງຫລາຍເຫດຜົນດັ່ງນີ້: ອັນທີໜຶ່ງແມ່ນຍ້ອນພາກສ່ວນລັດວິຊາການຍັງຕົກຢູ່ໃນພາວະອ່ອນເພຍ, ໂຮງຈັກໂຮງງານອັນຫລວງຫລາຍ ຍັງຢູ່ໃນກຳມືຂອງ ນາຍທຶນ, ແລະອັນທີສອງ, ແມ່ນບາງກົມໃຫຍ່ທີ່ໄດ້ດຳລົງຄົງຕົວມາແລ້ວ ແຕ່ໃນສະໄໝກ່ອນການປະຕິວັດເດືອນຕຸລາ ເຊິ່ງກົມດັ່ງກ່າວ ໄດ້ເປັນເຄື່ອງມືຄຸ້ມຄອງອຸດສາຫະກຳຂອງພວກນາຍທຶນເຊິ່ງບັນຫາໃຈກາງແມ່ນແນໃສ່ປັບປຸງກົງຈັກຂອງກົມ ໃຫຍ່ດັ່ງກ່າວໃຫ້ເໝາະ ເພື່ອແກ້ໄຂບັນຫາການຈັດຕັ້ງ ຄຸ້ມຄອງເສດຖະກິດຂອງລັດໂຊວຽດ. ແຕ່ວ່າການດຶງເອົາບັນດາຜູ້ຕາງໜ້າຂອງນາຍທຶນມາເຂົ້າຢູ່ ໃນກົມໃຫຍ່ນັ້ນບໍ່ໄດ້ໝາຍເຖິງ

ຄວາມພະຍາຍາມຂອງອຳນາດໂຊວຽດເພື່ອຫວັງສ້າງ ຄວາມລົງລອຍ ກັບຈີນຊັ້ນນາຍທຶນຄືນແຕ່ຢ່າງໃດ, ແຕ່ຫາກມັນ ແມ່ນຮູບການຕໍ່ສູ້ຊົນຊັ້ນແບບຫນຶ່ງ ຂອງຈີນຊັ້ນກຳມາຊີບໃນຂົງເຂດເສດຖະກິດ. ໃນດ້ານນະໂຍບາຍເສດຖະກິດເພື່ອເຮັດໃຫ້ກົມໃຫຍ່ ສືບຕໍ່ປະຕິບັດວຽກງານຂອງຕົນ ຖືກັບທິດທາງຂອງຊົນຊັ້ນກຳມາຊີບນັ້ນ, ອົງການຊັ້ນຳຂອງມັນຕ້ອງມີຜູ້ຕາງ ຫນ້າຂອງສະພາເສດຖະກິດແຫ່ງຊາດສູງສຸດ ແລະອົງການ ກຳມະບານ ເຂົ້າຢູ່ໃນອົງການນຳຂອງກົມດັ່ງກ່າວ ບໍ່ນ້ອຍກ່ວາສອງສ່ວນສາມ. ພາຍໃຕ້ຮູບການຮ່ວມມືດັ່ງກ່າວການກວດກາຂອງລັດ ຕໍ່ບັນດາຂະແຫນງການຜະລິດທັງຫມົດ ຈຶ່ງໄດ້ຖືກຮັບປະ-ກັນ. ນອກຈາກນັ້ນ ກຳມະກອນຍັງໄດ້ຮ່ຳຮຽນເອົາວຽກງານຄຸ້ມຄອງການຜະລິດ ນຳບັນດານັກວິຊາການຂອງນາຍທຶນອີກ. ຕໍ່ບັນຫານີ້ ວ.ອີ.ເລນິນ ໄດ້ຂຽນໄວ້ວ່າ "ຫນ້າທີ່ການຈັດຕັ້ງຂອງພວກເຮົາ ມັນແມ່ນ ການເລືອກເຟັ້ນເອົາ ຜູ້ຊັ້ນຳນຳພາ ແລະຜູ້ຈັດຕັ້ງມາຈາກບັນດາຫມູ່ມະຫາຊົນ". (ວ.ອີ.ເລນິນ, ປະມວນບົດນິພົນ ສະບັບສົມບູນ, ເຫລັ້ມທີ ໓໖,ຫນ້າ໔໗໖.) ແຕ່ວ່າການຮ່ວມມືແນວນີ້ ມັນເປັນໄປໄດ້ແຕ່ໃນສະພາບການ-ການຂະຫຍາຍຕົວ ຂອງການປະຕິວັດ ໃນເງື່ອນໄຂທີ່ມີສັນຕິ-ພາບເທົ່ານັ້ນ. ໃນຄາວທີ່ເກີດມີສົງຄາມກາງເມືອງ ແລະ ມີການກໍ່ວິນາສະກຳຂອງພວກນາຍທຶນຂຶ້ນ ຢ່າງຮຸນແຮງນັ້ນ ມັນຈຶ່ງບໍ່ອຳນວຍແກ່ການປະກອບຄະນະຜູ້ຊົງຄຸນນະວຸດທິເຂົ້າຢູ່ໃນກົມໃຫຍ່, ນອກຈາກນັ້ນ ເນື່ອງຈາກມີການໂອນເອົາໂຮງຈັກ

ໂຮງງານຂອງນາຍທຶນເຂົ້າມາເປັນຂອງລັດນັ້ນ, ສະພາລັດຖະມົນຕີ ໄດ້ອອກຂໍ້ດຳລັດ ສະບັບວັນທີ ໒໘ ມິຖຸນາ໑໙໑໘ ໄດ້ປ່ຽນແປງສິດທິທາງກົດຫມາຍຂອງເຈົ້າຂອງເດີມ. ຫມາຍຄວາມວ່າພື້ນຖານທາງດ້ານກົດຫມາຍໃນການເຂົ້າຮ່ວມຂອງຜູ້ຕາງຫນ້ານາຍທຶນ ຢູ່ໃນອົງການນຳຂອງ ກົມໃຫຍ່ ນັ້ນ ໄດ້ຖືກລົບລ້າງຖິ້ມ. ດ້ວຍເຫດນັ້ນ ເມື່ອຕົກມາເຖິງລະດູຮ້ອນຂອງປີ ໑໙໑໘ ອົງການນຳຂອງ ກົມໃຫຍ່ ຈຶ່ງໄດ້ປະກອບຂຶ້ນ ຕາມເງື່ອນໄຂດັ່ງນີ້: ມີຜູ້ຕາງຫນ້າຈຳນວນຫນຶ່ງສ່ວນສາມມາຈາກສະພາເສດຖະກິດແຫ່ງຊາດສູງສຸດ, ຫນຶ່ງສ່ວນສາມຈາກຜູ້ແທນອົງການກຳມະບານທີ່ກ່ຽວຂ້ອງ ແລະອີກຫນຶ່ງສ່ວນສາມ ມາຈາກນັກວິຊາການ. ໃນກາງທ້າຍປີ ໑໙໑໘ ໄດ້ມີການປ່ຽນ-ແປງກົງຈັກສູນກາງ ອົງການສູນກາງແຫ່ງ ສະພາເສດຖະກິດແຫ່ງຊາດສູງສຸດຄືນອີກ.

ພາກສ່ວນແລະອະນຸພະແນກຕ່າງໆ ຂອງພະແນກການ ຜະລິດຂອງ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ຖືກຍຸບ ເລີກໄປ. ໃນກໍລະນີເມື່ອອະແຫນງອຸດສາຫະກຳໃດຫນຶ່ງ ຖືກໂອນເອົາຢ່າງຄົບຖ້ວນ (ເຊັ່ນ ອຸດສາຫະກຳຜະລິດຢາງ) ຫລືຖືກໂອນເອົາໃນສ່ວນຫລວງຫລາຍ (ເຊັ່ນອຸດສາຫະກຳຕໍ່າແຜ່ນ) ນັ້ນ ບັນດາພາກສ່ວນອະນຸພະແນກ ແລະກະໂຕບັນດາພະແນກການຜະລິດເຫຼົ່ານັ້ນ ກໍຫມົດສິດດຳລົງຄົງຕົວ ແບບກຸ້ມຕົນເອງເຫມືອນກັນ.

ໃນເວລານັ້ນ ເພິ່ນໄດ້ບົ່ງຢ່າງຈະແຈ້ງ ພາລະຫນ້າທີ່ຂອງ

ກົມໃຫຍ່ໃນວຽກງານຈັດຕັ້ງແລະຄຸ້ມຄອງອຸດສາຫະກຳ. ພາລະໜ້າທີ່ຂອງກົມດັ່ງກ່າວ ແມ່ນກຳກັບວຽກງານຈັດຕັ້ງ ລຳລຽງວັດຖຸເຕັກນິກ ແລະການລົງທຶນ, ຄວບຄຸມການແຈກຢາຍການສົ່ງວັດຖຸລະຫວ່າງບັນດາໂຮງຈັກໂຮງງານຕ່າງໆອະນຸມັດແຜນການຜະລິດ ຂອງບັນດາໂຮງຈັກໂຮງງານຂອງລັດ; ໄດ້ຮັບສິດຢ່າງກວ້າງຂວາງ ໃນວຽກງານບໍລິຫານ. ກົມໃຫຍ່ເຊິ່ງເປັນອົງການອະແໜງຄຸ້ມຄອງ ວິຊາການສູນກາງ ໄດ້ມີບົດບາດສຳຄັນ ໃນວຽກງານຈັດຕັ້ງອຸດສາຫະກຳ, ໃນວຽກງານປູກລະດົມຄວາມສາມາດຂອງການຜະລິດ, ໃນວຽກງານຕໍ່ສູ້ຕ້ານກັບການກໍ່ວິນາສະກຳຂອງສັດຕູ.

ສົງຄາມກາງເມືອງ ແລະການຮຸກຮານຂອງຕ່າງດ້າວ ໄດ້ເລັ່ງລັດການຈັດຕັ້ງກົມໃຫຍ່ອື່ນໃຫ້ສຳເລັດ ແລະໄດ້ສ້າງອິດທິພົນອັນສຳຄັນ ໃນການຈັດຕັ້ງລະບົບຄຸ້ມຄອງອຸດສາຫະກຳແຫ່ງຊາດ. ເຫັນມີຄວາມຈຳເປັນທີ່ສຸດ ທີ່ຕ້ອງສູມໃສ່ເຮັດໃຫ້ວຽກຄຸ້ມຄອງຊີວິດ ທາງດ້ານເສດຖະກິດຂອງປະເທດໄປຕາມແບບຄຸ້ມຄອງລວມສູນ. ເງື່ອນໄຂເສດຖະກິດສັງຄົມ ຂອງສະໄໝສົງຄາມກາງເມືອງ ແລະການຮຸກຮານຂອງທະຫານຕ່າງດ້າວໄດ້ບັງໃຫ້ຈຳຕ້ອງເລືອກເອົາເສັ້ນທາງເສັ້ນນີ້, ແຕ່ເວົ້າລວມໝາຍຄວາມວ່າ ມັນມີຄວາມຈຳເປັນທີ່ຕ້ອງສູມທຸກກຳລັງ ໃສ່ເພື່ອປົກປັກຮັກສາສາທາລະນະລັດໂຊວຽດທີ່ຍັງໜຸ່ມນ້ອຍຢູ່ນັ້ນໄວ້ ໃນການຕໍ່ສູ້ຕ້ານຢັນກັບພວກຝັນປະຕິວັດ ແລະກັບພວກຮຸກຮານຕ່າງດ້າວ. ການສູມໃສ່ການໂຮມເອົາວຽກງານເສດຖະ

ກິດເຂົ້າມາລວມສູນຢ່າງເປັນຂະບວນນັ້ນໃນຕົວມັນໄດ້ນຳໄປສູ່ ເຮັດໃຫ້ການເຕົ້າໂຮມທາງຕັ້ງນັ້ນໃຫຍ່ໂຕມະໂຫຖານ, ການ ພົວພັນທາງດ້ານເສດຖະກິດຖືກຕັດແຍກອອກຈາກກັນແລະມີແຕ່ ທາງຂັ້ນເທິງເທົ່ານັ້ນທີ່ພົວພັນກັບສະພາເສດຖະກິດແຫ່ງ ຊາດ ສູງສຸດໄດ້. ທຸກວຽກງານ ການ ຈັດ ຕັ້ງ ການ ຜະ ລິດ ທັງໝົດ ຂອງບັນດາໂຮງຈັກໂຮງງານ ແມ່ນຈະຕ້ອງ ໄດ້ຮັບ ຄຳສັ່ງ ຈາກອົງການຄຸ້ມຄອງເສດຖະກິດສູນກາງເທົ່ານັ້ນ. ແຕ່ ໃນດ້ານພາກປະຕິບັດຕົວຈິງ ການປະຕິບັດວຽກງານແບບນັ້ນ ກໍ່ມີຈຸດອ່ອນຂອງມັນ, ຄືມັນໄດ້ກົດຫນ່ວງທ່ວງດຶງການກຳເນີດ ຂອງການລິເລີ່ມທາງດ້ານເສດຖະກິດ ຢູ່ຕາມທ້ອງຖິ່ນ ຕ່າງໆ ມັນເຮັດໃຫ້ໂຮງຈັກໂຮງງານທັງຫລາຍ ບໍ່ມີສິດຫມູນໃຊ້ຊັບພະ ຍາກອນ ໃນທ້ອງຖິ່ນຂອງຕົນ ອັນເປັນເຫດໃຫ້ໂຮງຈັກ ໂຮງ ງານ ຕົກຢູ່ໃນທ່າໂດດດ່ຽວ. ສະນັ້ນ ເມື່ອຕົກມາເຖິງ ທ້າຍ ສົງຄາມກາງເມືອງ ເພິ່ນໄດ້ສຸມໃສ່ຢ່າງເປັນຂະບວນເຮັດໃຫ້ ອົງການເສດຖະກິດທ້ອງຖິ່ນມີບົດບາດ ແລະມີຄວາມຫມາຍຍິ່ງ ຂຶ້ນໂດຍຈຳກັດບາງຂອບເຂດຫນ້າທີ່ລວມສູນໃນວຽກງານການ ເຄື່ອນໄຫວຂອງກົມໃຫຍ່ຕ່າງໆ. ໃນມະຕິຂອງຕົນທີ່ມີຫົວຂໍ້ວ່າ "ກ່ຽວກັບຫນ້າທີ່ສະເພາະຫນ້າ ໃນການສ້າງເສດຖະກິດ" ນັ້ນ ກອງປະຊຸມໃຫຍ່ຂອງພັກ ຄັ້ງທີIX(ປີ ໑໙໒໐) ໄດ້ເນັ້ນຫນັກ ວ່າ ຫນ້າທີ່ຕົ້ນຕໍຂອງວຽກງານຈັດຕັ້ງ ໃນດ້ານອຸດສາຫະ ກຳ ນັ້ນ ແມ່ນນອນຢູ່ໃນບ່ອນທີ່ວ່າ "ຕ້ອງຮັກສາແລະຂະຫຍາຍ - ຫນ້າທີ່ຄຸ້ມຄອງ ແບບລວມສູນ ທາງຕັ້ງຕາມສາຍການ ຈັດຕັ້ງ

ຂອງກົມໃຫຍ່. ພ້ອມທັງສົມທົບມັນ ກັບການບໍລິຊາ ໃນທາງ
ຂວາງຕາມສາຍເສດຖະກິດຂອງເຂດຕ່າງໆ,ເຊິ່ງບັນດາໂຮງ
ຈັກໂຮງງານ ຂອງຂະແໜງອຸດສາຫະກຳ ແລະຂະແໜງ -
ເສດຖະກິດ ທີ່ມີຄວາມໝາຍແຕກຕ່າງກັນນັ້ນ ຫາກມີຄວາມ
ຈຳເປັນວັດຖຸດິບ, ພາຫະນະຂົນສົ່ງ, ກຳລັງແຮງງານ ແລະ
ອື່ນໆ ຈາກບ່ອນດຽວກັນ ("ມະຕິຂອງພັກ ແລະລັດຖະ ບານ
ກ່ຽວກັບບັນຫາເສດຖະກິດ", ເຫລັ້ມທີ ໑, ນິດສະກູ,ສຳນັກ
ພິມຈຳໜ່າຍການເມືອງ, ໜ້າ ໑໖໕.)

ດັ່ງນັ້ນໃນເງື່ອນໄຂທີ່ມີສົງຄາມທາງເມືອງແລະມີການແຊກ
ແຊງຂອງຕ່າງດ້າວ, ການພັງທະລາຍຂອງເສດຖະກິດ ແລະ
ການຂາດເຂີນສິນຄ້າ ຢ່າງໜັກໜ່ວງນັ້ນ ມັນຮຽກຮ້ອງ ໃຫ້
ປະຕິບັດ ວຽກງານຄຸ້ມຄອງເສດຖະກິດ ອຸດສາຫະກຳ ແບບ
ລວມສູນ ຢ່າງເຂັ້ມງວດ. ເຖິງຢ່າງໃດກໍຕາມ ການປະຕິບັດ
ການລວມສູນດັ່ງກ່າວ ມັນແມ່ນຖືກຕ້ອງທີ່ສຸດ; ມັນອຳ ນວຍ
ຄວາມສະດວກ ໃຫ້ແກ່ສາທາລະນະລັດໂຊວຽດ ແບ່ງປັນວັດຖຸ
ຈັບພະຍາກອນຢ່າງຖືກຕ້ອງ ກັບສິດຜົນປະໂຫຍດ ຂອງລັດທັງ
ມວນ.

ເພື່ອຮັບປະກັນວຽກງານການຜະລິດ ປະຈຳວັນຂອງຕົນໃນ
ພາກປະຕິບັດຕົວຈິງ ກົມໃຫຍ່ຈຳຕ້ອງຈັດຕັ້ງກົງຈັກຄຸ້ມຄອງສຳ
ລອງຂຶ້ນ. ໃນກໍລະນີທີ່ໜຶ່ງນີ້ ມັນສະແດງເຖິງລັກສະນະການ
ເຄື່ອນໄຫວຂອງກົມໃຫຍ່, ເຊັ່ນ: ກົມໃຫຍ່ອຸດສາຫະກຳໜັງ
ມີໜ້າທີ່ຄຸ້ມຄອງອຸດສາຫະກຳ ແລະທັງຄວບຄຸມການປຸງ ແຕ່ງ

ວັດຖຸດິບນຳອີກ ຈຶ່ງຕ້ອງການໃຫ້ມີສາຂາຄວບຄຸມການປຸງແຕ່ງ
ດັ່ງກ່າວ. ໃນກໍລະນີອື່ນນັ້ນ ເມື່ອປາກົດມີສາຂາຂຶ້ນ ມັນກໍສະ
ແດງເຖິງຂອບເຂດຂອງການເຄື່ອນໄຫວ, ຕົວຢ່າງວ່າ: ໂຮງ
ງານອຸດສາຫະກຳຕ່ຳແຜ່ນ ທີ່ໂອນມາເປັນຂອງລັດ ນັບມື້ນັບ
ເພີ່ມທະວີຈຳນວນຂຶ້ນ ແຕ່ກົມໃຫຍ່ບໍ່ສາມາດຄຸ້ມຄອງ ທຸກຂະ
ແໜງໂຮງງານດັ່ງກ່າວ ໃຫ້ທົ່ວເຖິງໄດ້, ດັ່ງນັ້ນເພິ່ນຈຶ່ງຈັດ
ຕັ້ງວິສາຫະກິດເຂດ ແລະສະຫະໂຮງງານຂຶ້ນ.

ໃນຂະແໜງອຸດສາຫະກຳນ້ຳມັນເຊື້ອເພີງ ກົງຈັກຄຸ້ມຄອງ
ເສດຖະກິດທ້ອງຖິ່ນຂອງຂະແໜງ ໄດ້ຖືກແຕ່ງຕັ້ງຂຶ້ນ ປະຈຳ
ກະຊວງປະຊາຊົນ ທີ່ມີອຳນາດເຕັມໃນຂະແໜງຂອງຕົນ; ແຕ່
ວ່າກະຊວງປະຊາຊົນເທົ່ານັ້ນໄດ້ຮັບຜົນດີ ແລະ ມີຄວາມສັກສິດ
ພຽງແຕ່ໃນໄລຍະເວລາເຊິ່ງບັນຫາຕົ້ນຕໍຂອງເວລານັ້ນ ໄດ້
ແກ່ ການໂອນເອົາຊັບຂອງນາຍທຶນ ມາເປັນ ຂອງ ລັດ
ແລະ ດຳເນີນ ການຕໍ່ສູ້ ຕ້ານການທຳລາຍ ມ້າງເພ ຂອງ
ສັດຕູ. ແຕ່ວ່າເມື່ອຄວາມຈຳເປັນເກີດຂຶ້ນ ທີ່ຈະຈັດຕັ້ງ ການ
ຄຸ້ມຄອງ ແລະແຈກຢາຍຜະລິດຕະພັນ ຂອງສາຂາສະເພາະ-
ນັ້ນ ກະຊວງເຂດແມ່ນບໍ່ພຽງພໍກັບຄວາມຕ້ອງການ. ດັ່ງນັ້ນ
ເພື່ອຕອບສະໜອງກັບຄວາມຕ້ອງການດັ່ງກ່າວ, ຢູ່ເກືອບທຸກໆ
ຕົວເມືອງໃຫຍ່ຂອງປະເທດເຮົາ ເພິ່ນໄດ້ສ້າງຕັ້ງຄະນະ ກຳ
ມະການອຸດສາຫະກຳ ແລະການຄ້ານ້ຳມັນເຊື້ອເພີງ ປະຈຳ
ເຂດຂຶ້ນ.

ລະບົບກົງຈັກທ້ອງຖິ່ນຂອງກົມໃຫຍ່ ໃນຂະແໜງອຸດສາຫະ

ກຳຕຳແຜ່ນ, ອຸດສາຫະກຳນ້ຳຕານແລະອຸດສາຫະກຳຢາຄູດໄດ້ຮັບການຂະຫຍາຍຕົວຢ່າງກ້ວາງຂວາງ. ໂຄງຮ່າງການຈັດຕັ້ງກົງຈັກໃນເຂດຊານເມືອງ ຂອງແຕ່ລະຂະແໜງອຸດສາຫະກຳຕ່າງໆນັ້ນມັນມີລັກສະນະພິເສດຂອງມັນ, ຕົວຢ່າງໃນອຸດສາຫະກຳຟອກໜັງ, ການກຳນົດການຜະລິດ ແມ່ນໜ້າທີ່ຂອງຄະນະກຳມະການ ຂະແໜງການອຸດສາຫະກຳຂອງແຂວງ ແລະເຂດ. ຄະນະກຳມະການປະຈຳເຂດເຫລົ່ານັ້ນ ມີໜ້າທີ່ກຳກັບການປຸງແຕ່ງ ແລະການແຈກຢາຍວັດຖຸດິບ ຕາມແຜນການ - ຂອງກົມໃຫຍ່, ກວດກາການເຄື່ອນໄຫວຂອງວຽກງານ ການຜະລິດຂອງບັນດາໂຮງງານ ແລະກວດກາສາງຂອງບັນ ດາໂຮງງານດັ່ງກ່າວ, ແຈກຢາຍຜະລິດຂະພັນ, ກຳນົດຄຸນນະພາບວັດຖຸດິບ ແລະວາງລາຄາ. ການຄວບຄຸມຂອງຄະນະກຳມະການດັ່ງກ່າວ ໄດ້ປະຕິບັດໄປ ຢ່າງປະສົມປະສານກັນດີ.

ໃນອຸດສາຫະກຳຕຳແຜ່ນນັ້ນ ສະພາເສດຖະກິດຂອງແຂວງແລະຊານເມືອງ ໄດ້ຕັ້ງພະແນກພາກສ່ວນ ແລະກຳມະ ການເຂດຂອງຕົນຂຶ້ນ. ຮູບການຈັດຕັ້ງດັ່ງກ່າວ ກໍໄດ້ນຳປະຕິບັດຢູ່ໃນຂະແໜງອຸດສາຫະກຳນ້ຳຕານ, ຢາຄູດ ແລະອື່ນໆ ເຊັ່ນດຽວກັນ.

ສະນັ້ນໃນໄລຍະ ແຕ່ປີ ໑໙໑໘ ຫາປີ ໑໙໒໐ ເພິ່ນໄດ້ປະກອບກົງຈັກສາຂາເສດຖະກິດຂອງກົມໃຫຍ່ຂຶ້ນ ຢູ່ໃນລະບົບກົງຈັກສູນກາງ ຂອງສະພາເສດຖະກິດແຫ່ງຊາດສູງສຸດ.

ບົດບາດຂອງສະພາເສດຖະກິດທ້ອງຖິ່ນໃນວຽກງານຄຸ້ມ ຄອງຊຸດສາຫະກຳ

ການສ້າງຕັ້ງສະພາເສດຖະກິດແຫ່ງຊາດສູງສຸດແລະການປະກອບກົງຈັກເສດຖະກິດສູນກາງຂອງມັນຂຶ້ນນັ້ນ ມັນຍັງບໍ່ທັນແກ້ໄຂ ບັນຫາການຈັດຕັ້ງຄຸ້ມຄອງເສດຖະກິດແຫ່ງຊາດໄດ້ເທື່ອ. ຈຳເປັນຕ້ອງຈັດຕັ້ງອົງການເສດຖະກິດທ້ອງຖິ່ນ ຕາມສາຂາເຊິ່ງການເຄື່ອນໄຫວຂອງມັນ ຈະໄດ້ກວມໄປໝົດທຸກຂົງເຂດເສດຖະກິດຂອງປະເທດ. ນອກຈາກພະແນກຂອງກົມໃຫຍ່ ທີ່ຂຶ້ນກັບກົງຈັກເສດຖະກິດ ຂອງສະພາເສດຖະກິດສູງສຸດ ແລ້ວຍັງມີສະພາເສດຖະກິດທ້ອງຖິ່ນ ແລະພະແນກເສດຖະກິດຂອງສະພາໂຊວຽດທ້ອງຖິ່ນ ຂອງບັນດາຜູ້ແທນກຳມະກອນ, ທະຫານ ແລະຊາວນາອີກດ້ວຍ.

ເນື່ອງຈາກວ່າ ໃນເວລານັ້ນ ເງື່ອນໄຂທາງດ້ານ ການເມືອງແລະການເສດຖະກິດຍັງສັບສົນ, ກົງຈັກທ້ອງຖິ່ນຂອງກົມໃຫຍ່ ບາງຄັ້ງບໍ່ສາມາດແກ້ໄຂບັນຫາການຈັດຕັ້ງແລະຄຸ້ມຄອງເສດຖະກິດທ້ອງຖິ່ນໄດ້, ຍ້ອນວ່າການເຄື່ອນໄຫວດ້ານເສດຖະກິດຂອງມັນຍັງດຳເນີນໄປໃນຂອບເຂດການປົກຄອງ ຂອງແຂວງ, ເມືອງແລະອື່ນໆ ຂອງລະບອບເກົ່າ. ສະນັ້ນໃນໄລຍະແຕ່ເດືອນຕຸລາ ໑໙໑໗ ຫາຕົ້ນປີ໑໙໘໑ ເພິ່ນຈຶ່ງຈັດຕັ້ງສະພາເສດຖະກິດແຫ່ງຊາດທ້ອງຖິ່ນຂຶ້ນ ທີ່ມີບົດບາດສຳຄັນ ໃນການຈັດຕັ້ງການຄຸ້ມຄອງຊຸດສາຫະກຳໂຊວຽດ.

ສະພາເສດຖະກິດແຫ່ງຊາດທ້ອງຖິ່ນ ແລະພະແນກເສດຖະກິດ ຂອງສະພາໂຊວຽດປະຈຳທ້ອງຖິ່ນ ໄດ້ມີການແຕກຕ່າງ-ກັນຫລາຍທີ່ສຸດ ໃນດ້ານລັກສະນະການເຄື່ອນໄຫວ,ໜ້າທີ່,ວິທີການແລະໂຄງຮ່າງການຈັດຕັ້ງ ກັບອົງການທ້ອງຖິ່ນຂອງກົມໃຫຍ່, ໃນພາກປະຕິບັດຕົວຈິງ ສະພາເສດຖະກິດແຫ່ງ ຊາດເປັນອົງການຈັດຕັ້ງຮອບດ້ານ, ແຕ່ອົງການທ້ອງຖິ່ນ ຂອງກົມໃຫຍ່ ມີໜ້າທີ່ຮັບຜິດຊອບຂະແໜງວິຊາການເທົ່ານັ້ນ. ເພິ່ນໄດ້ສ້າງຕັ້ງອົງການເສດຖະກິດທ້ອງຖິ່ນຂຶ້ນ ເປັນສອງຮູບການຈັດຕັ້ງດັ່ງນີ້: ກົມໃຫຍ່ ແລະສະພາເສດຖະກິດແຫ່ງຊາດທ້ອງຖິ່ນ,ການທີ່ຈັດຕັ້ງຂຶ້ນເປັນສອງຮູບການນັ້ນກໍເພື່ອແນໃສ່ເງື່ອນໄຂອັນຈຳເປັນ ໃນການຂະຫຍາຍຂະແໜງອຸດສາຫະກຳ ອັນໃດໜຶ່ງໃຫ້ຕິດກັບຜົນປະໂຫຍດ ຂອງເສດຖະກິດທ້ອງຖິ່ນ.ແຕ່ວ່າ ສ່ວນການຈັດຕັ້ງອຸດສາຫະກຳລັດທົ່ວໄປ ບັນດາກົມໃຫຍ່ແລະກົງຈັກທ້ອງຖິ່ນຂອງມັນ ຈຶ່ງຖືວ່າມີບົດບາດອັນດັບໜຶ່ງ.

ໃນສອງສາມປີທຳອິດຂອງການດຳລົງຄົງຕົວຂອງລັດຊຸນຊຸ້ນກຳມາຊີບ, ການລິເລີ່ມອັນກ້ວາງຂວາງ ຂອງມະຫາຊົນ ອັນຫລວງຫລາຍ ໄດ້ສ້າງຕັ້ງຫລາຍຮູບການຈັດຕັ້ງການຄຸ້ມ ຄອງຂຶ້ນ.ຢູ່ທ້ອງຖິ່ນຕ່າງໆ ອົງການກວດກາຂອງກຳມະກອນ ກໍໄດ້ເຕີບໃຫຍ່ເຂັ້ມແຂງຂຶ້ນ, ຢູ່ປະຈຳສະພາຜູ້ແທນກຳມະ ກອນ, ທະຫານແລະຊາວນານັ້ນ, ເພິ່ນໄດ້ຈັດຕັ້ງພະແນກເສດຖະກິດສ້າງຕັ້ງ ສະພາເສດຖະກິດ ແຫ່ງຊາດຂຶ້ນ ຢູ່ແຂວງ, ເມືອງແລະໃນຕົວເມືອງຕ່າງໆອີກ. ເຖິງວັນທີ ໑ ກໍລະກົດປີ໑໙໑໙

ຢູ່ທົ່ວປະເທດສະພາເສດຖະກິດແຫ່ງຊາດທ້ອງຖິ່ນ ໄດ້ສ້າງຕັ້ງຂຶ້ນ ມີຈຳນວນເຖິງ ໑໑໔ ແຫ່ງ. ວົງການກຳມະບານ ໄດ້ມີບົດບາດອັນສຳຄັນ, ຍ້ອນໄດ້ສ້າງຕັ້ງພະແນກເສດຖະກິດຂຶ້ນຢູ່ປະຈຳຄະນະກຳມະການທ້ອງຖິ່ນຂອງຕົນ.

ໜ້າທີ່ອັນຕົ້ນຕໍຂອງສະພາເສດຖະກິດແຫ່ງຊາດສູງສຸດແມ່ນໂຮມເອົາຮູບການຄຸ້ມຄອງເສດຖະກິດແຫ່ງຊາດທັງໝົດ ນັ້ນເຂົ້າກັນ. ແຕ່ວ່າໃນເບື້ອງຕົ້ນ ເພິ່ນໄດ້ພົບເຫັນຢູ່ໃນໂຄງປະກອບສະພາເສດຖະກິດແຫ່ງຊາດທ້ອງຖິ່ນບາງພະແນກເຊິ່ງບໍ່ມີການພົວພັນຫຍັງໂດຍກົງກັບຕົນເຊັ່ນ: ພະແນກເຄຫະສະຖານ-ແລະທີ່ດິນຫຼືພະແນກໄປສະນີ. ດັ່ງນັ້ນເພື່ອໃຫ້ສອດຄ່ອງກັບໂຄງປະກອບຂອງກົງຈັກສູນກາງ ສະພາເສດຖະກິດແຫ່ງຊາດ ສູງສຸດ ເພິ່ນຈຶ່ງຈຳຕ້ອງໂຮມເອົາໂຄງປະກອບການຈັດຕັ້ງ ຂອງສະພາເສດຖະກິດແຫ່ງຊາດທ້ອງຖິ່ນ ເຂົ້າເປັນອັນດຽວກັນ.

ບັນຫາທີ່ຂາດແຄນທີ່ສຸດ ແມ່ນບັນຫາພະນັກງານເຊິ່ງໃນສະພາເສດຖະກິດແຫ່ງຊາດທ້ອງຖິ່ນ ບາງແຫ່ງເພິ່ນບໍ່ສາມາດບັນຈຸພະນັກງານໃສ່ບ່ອນວ່າງໃຫ້ເຕັມໄດ້. ນອກຈາກນັ້ນ ພະນັກງານຂອງລັດ ບາງຄົນ ໃນສະພາເສດຖະກິດທ້ອງຖິ່ນຕ່າງໆ ກໍຍັງເຂົ້າໃຈບໍ່ຖືກຕ້ອງ ຕໍ່ໜ້າທີ່ການເມືອງ ແລະເສດຖະກິດໃນລະບອບ ສັງຄົມນິຍົມ, ຕໍ່ສິດແລະໜ້າທີ່ ຂອງສະພາເສດຖະກິດທ້ອງຖິ່ນ. ເຊັ່ນໃນເດືອນ ຕຸລາ ໑໙໑໘ ຄະນະ ປະທານສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ລົບລ້າງ ດຳລັດຂອງສະພາ ເສດຖະກິດ "ພາກເໜືອ" ກ່ຽວກັບສິດພິເສດທີ່

ອະນຸຍາດໃຫ້ຮັບເອົາວັດຖຸແລະອຸປະກອນທີ່ມີຄຸນຄ່າອື່ນໆ ຈາກບັນດາໂຮງງານຂອງເຂດຂອງຕົນນັ້ນ, ການປະຕິບັດແນວນັ້ນສະແດງອອກເຖິງການຮຽກເອົາສິດ ເອກະລາດອັນສົມບູນຂອງສະພາເສດຖະກິດ "ພາກເໜືອ" ຈາກອົງການສູນກາງຂອງສະພາເສດຖະກິດແຫ່ງຊາດສູງສຸດ ທີ່ເຫັນວ່າ ພຶດຕິກຳດັ່ງກ່າວນັ້ນຂັດກັບຜົນປະໂຫຍດສ່ວນລວມ ທາງດ້ານເສດຖະກິດແຫ່ງຊາດທັງມວນ.

ການຮັກສາເຂດປົກຄອງຂອງປະເທດລັດເຊຍ ຢູ່ຕາມອະນຸແຂວງ ແລະຢູ່ເມືອງແບບເກົ່າໄວ້ນັ້ນ ພາໃຫ້ເກີດຄວາມຫຍຸ້ງຍາກຢູ່ໃນບາງອັນ ໃນການປະສົມປະສານວຽກງານລະຫວ່າງກົງຈັກເສດຖະກິດສູນກາງ ແລະກົງຈັກເສດຖະກິດ ທ້ອງຖິ່ນຂອງສະພາເສດຖະກິດແຫ່ງຊາດສູງສຸດ ເພາະເຂດປົກ ຄອງດັ່ງກ່າວ ບໍ່ເຫມາະກັບຜົນປະໂຫຍດ ຂອງການຂະຫຍາຍເສດຖະກິດແຫ່ງຊາດ. ດັ່ງນັ້ນເມື່ອຕົກມາເຖິງເດືອນພະຈິກ໑໙໑໘ ໃນກອງປະຊຸມຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ພິຈາລະນາບັນຫາລົບລ້າງເຂດປົກຄອງເກົ່າຖິ້ມ ແລະສ້າງຕັ້ງອັນໃຫມ່ຂຶ້ນ ເຊິ່ງສ່ວນໃຫຍ່ແມ່ນອີງໃສ່ພື້ນຖານ ເສດຖະກິດຕົວຈິງ.

ກອງປະຊຸມໃຫຍ່ສະພາໂຊວຽດທົ່ວລັດເຊຍ ຄັ້ງທີVIIທີ່ຈັດຂຶ້ນໃນເດືອນທັນວາ ໑໙໑໙ ໄດ້ມອບໃຫ້ຄະນະບໍລິຫານ ສູນກາງຂອງທົ່ວລັດເຊຍ ທັງຫມົດສ້າງຮູບຮ່າງເຂດປົກຄອງໃຫມ່ຂອງປະເທດອັນ ແລະປະກາດນຳໃຊ້ຮູບຮ່າງເຂດ ປົກຄອງ

ໃຫມ່ດັ່ງກ່າວ.

ການຈັດຕັ້ງຂອງການເສດຖະກິດທ້ອງຖິ່ນໄດ້ຈັດຕັ້ງຂຶ້ນໃນສະພາບການທີ່ເສດຖະກິດຊຸດໂຊມ ແລະໃນເງື່ອນໄຂທີ່ມີການຕໍ່ສູ້ຈີນຈຸ້ນທີ່ຂໍ້ຂັດຂາດທີ່ສຸດ. ຕົວແທນຂອງພວກນາຍທຶນແລະນາຍທຶນນ້ອຍໄດ້ສຸມຫົວເຈັດພຸກວິທີທາງເພື່ອກີດນັ້ນການສ້າງຕັ້ງລະບົບຄຸ້ມຄອງເສດຖະກິດໃຫມ່ແຫ່ງຊາດຂຶ້ນ.ນາຍທຶນແລະນັກທິດສະດີຂອງເຂົາກໍສຸມໃສ່ກໍ່ຄວາມຫຍຸ້ງຍາກເພີ່ມຂຶ້ນເຊີ່ງ ແມ່ນການພົວພັນກັບການຈັດຕັ້ງ ລະບົບຄຸ້ມຄອງແບບລວມສູນຂອງເສດຖະກິດ ສັງຄົມນິຍົມ. ພວກເຂົາໄດ້ຢັ້ງຢືນວ່າການລິເລີ່ມແບບກຳມະສິດເອກະເທດແມ່ນເສັ້ນທາງເສັ້ນດຽວເທົ່ານັ້ນ ທີ່ຈະສາມາດຊ່ວຍເອົາປະເທດຊາດໃຫ້ພົ້ນອອກຈາກຄວາມຫຍຸ້ງຍາກ ທີ່ແກ້ໄຂບໍ່ຕົກທາງດ້ານເສດຖະກິດນັ້ນໄດ້.ພວກເມນເຊວິກ ແລະສະຫາຈີບ ອະນາທິປະໄຕ ໄດ້ປະກາດຕ້ານກັບການຈັດຕັ້ງ ລະບົບຄຸ້ມຄອງເສດຖະກິດແບບລວມສູນນີ້, ພວກເຂົາໄດ້ເອົາຄະນະກຳມະການຄຸ້ມຄອງໂຮງງານ ແລະ ສະມາຄົມການຜະລິດມາຕ້ານກັບ ລະບົບຄຸ້ມຄອງເສດຖະກິດແຫ່ງ ຊາດແບບລວມສູນ. ຄວາມຈິງແມ່ນພວກເຂົາແນໃສ່ ສ້າງຄວາມແບ່ງແຍກ ໃນຫມູ່ຈີນຈຸ້ນກຳມະກອນ ແລະຍິ່ງໄປກວ່ານັ້ນເຂົາແນໃສ່ທຳລາຍພື້ນຖານສັງຄົມນິຍົມ ຂອງລັດຈີນຈຸ້ນກຳມາຈີບ. ພວກກູລັກ (ຊາວນາຮັ່ງມີ) ກໍໄດ້ໂງຂຶ້ນມາຕ້ານກັບ ສະພາເສດຖະກິດແຫ່ງຊາດ ເຊັ່ນດຽວກັນ.

ໂດຍອີງໃສ່ທິດສະດີຂອງ ວ.ອີ.ເລນິນ ກ່ຽວກັບລັດທິລວມ

ສູນປະຊາທິປະໄຕ, ລັດໂຊວຽດໄດ້ສືບຕໍ່ທິດທາງ ໃນການຂະຫຍາຍ ແລະການເຮັດໃຫ້ແໜ້ນໜາ ລະບົບອົງການຄຸ້ມຄອງເສດຖະກິດສັງຄົມນິຍົມຂອງທ້ອງຖິ່ນ. ໃນເງື່ອນໄຂ ທີ່ສັບສົນໃນໄລຍະປີ ໑໙໗໖-໑໙໘໐ ນັ້ນ ທິດທາງ ໄດ້ວາງພື້ນຖານອັນໜັ້ນຄົງ ໃຫ້ແກ່ລະບົບຄຸ້ມຄອງ ເສດຖະກິດສັງຄົມນິຍົມ.

ຈາກການລິເລີ່ມຂອງຄະນະປະທານ ສະພາເສດຖະ ກິດແຫ່ງຊາດສູງສຸດນັ້ນ ເພິ່ນໄດ້ຈັດຕັ້ງສະພາເສດຖະກິດ ແຫ່ງຊາດທ້ອງຖິ່ນຂຶ້ນ ທີ່ເປັນຂອດພົວພັນການຈັດຕັ້ງ ໃນກົງຈັກຄຸ້ມຄອງເສດຖະກິດໂຊວຽດ, ຖ້າຫາກຂາດການໃຊ້ ການຈັດຕັ້ງດັ່ງກ່າວ ໃນຕົວຈິງແລ້ວເຫັນວ່າ ບໍ່ອາດສາມາດຟື້ນຟູ ເສດຖະກິດແຫ່ງຊາດ ທີ່ລົ້ມລະລາຍໄປນັ້ນຄືນໄດ້. ເພິ່ນເອີ້ນສະພາເສດຖະກິດແຫ່ງຊາດທ້ອງຖິ່ນ ແມ່ນປະເພດສະພາເສດຖະກິດຂັ້ນແຂວງ, ອະນຸແຂວງ, ເຂດ, ແລະໃນຈຳພວກພະແນກເສດຖະກິດປະຈຳ ຄະນະກຳມະການບໍລິຫານ ສະພາໂຊວຽດຜູ້ແທນກຳມະກອນ, ທະຫານ, ແລະຊາວນາຢູ່ໃນເມືອງຕາແສງ, ເຂດຕ່າງໆ (ໃນເຂດຂອງຕົວເມືອງໃຫຍ່).

ສະພາເສດຖະກິດແຫ່ງຊາດທ້ອງຖິ່ນ ອັນທຳອິດ ທີ່ຕັ້ງ ຂຶ້ນກ່ອນໝູ່ນັ້ນ ແມ່ນສະພາເສດຖະກິດຂອງແຂວງ. ອີງໃສ່ດຳລັດກ່ຽວກັບສະພາເສດຖະກິດເຂດ, ແຂວງ ແລະທ້ອງຖິ່ນ ທີ່ໄດ້ລົງມະຕິຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ໃນວັນທີ ໘໙ ທັນວາ ໑໙໗໕ ນັ້ນ ໄດ້ຖືວ່າ ສະພາເສດຖະກິດແຫ່ງຊາດຂັ້ນແຂວງ ເປັນອົງ

ການຄຸ້ມຄອງເສດຖະກິດທ້ອງຖິ່ນທີ່ສ້າງຕັ້ງຂື້ນປະຈຳສະພາໂຊ ວຽດຜູ້ແທນກຳມະກອນ, ທະຫານ, ຊາວນາຂອງແຂວງໂດຍ ມີຈຸດໝາຍຈັດຕັ້ງ ແລະວາງລະບຽບການຄຸ້ມຄອງ ວຽກງານ ເສດຖະກິດທັງໝົດ ຂອງທຸກເຂດອຸດສາຫະກຳ, ເພື່ອໃຫ້ສອດ ຄ່ອງກັບຜົນປະໂຫຍດທັງມວນຂອງລັດ ແລະທ້ອງຖິ່ນແລະ ຢູ່ ພາຍໃຕ້ການກວດກາຂອງສະພາໂຊວຽດນັ້ນ, ໝາຍຄວາມວ່າ ສະພາເສດຖະກິດແຫ່ງຊາດຂັ້ນແຂວງ ໄດ້ຂື້ນກັບສອງອົງການ ເຊັ່ນ: ອົງການອຳນາດປົກຄອງໂຊວຽດທ້ອງຖິ່ນ ແລະກົງຈັກ ຄຸ້ມຄອງເສດຖະກິດສູນກາງ ຂອງສະພາເສດຖະກິດແຫ່ງຊາດ ສູງສຸດ.

ຕາມດຳລັດດັ່ງກ່າວມາເທິງນັ້ນ ອົງການນຳສະພາເສດຖະ ກິດແຫ່ງຊາດຂັ້ນແຂວງ ແມ່ນສະພາຄະນະປະຈຳ, ທີ່ຖືກເລືອກ ຕັ້ງຂຶ້ນໃນກອງປະຊຸມຮ່ວມກັນຂອງຄະນະກຳມະການຄຸ້ມ ຄອງ ໂຮງຈັກໂຮງງານ ແລະທີ່ດິນ, ຜູ້ຕາງໜ້າສະພາໂຊວຽດປະ ຈຳແຂວງ ຂອງບັນດາກຳມະກອນ, ທະຫານ, ແລະຊາວນາ ແລະພະນັກງານຂອງກົງຈັກຄຸ້ມຄອງໂຮງຈັກໂຮງງານໃນດ້ານ ເຕັກນິກ, ການປົກຄອງແລະການຄ້າ.

ຈຳນວນສະມາຊິກຂອງສະພາຄະນະປະຈຳ ແລະ ຄະນະຜູ້ ຕາງໜ້າ ຈາກອົງການຈັດຕັ້ງຕ່າງໆ ໄດ້ຖືກແຕ່ງຕັ້ງຈາກ ສະພາໂຊວຽດ ຜູ້ແທນກຳມະກອນ, ທະຫານ ແລະຊາວນາ, ເຊິ່ງປະກອບຂື້ນປະຈຳຢູ່ສະພາເສດຖະກິດຂັ້ນແຂວງນັ້ນ. ໃນ ຂອບເຂດດິນແດນໃດໜຶ່ງນັ້ນ ສະພາເສດຖະກິດແຫ່ງຊາດຂັ້ນ

ແຂວງເຮັດໜ້າທີ່ເປັນອົງການນຳ ທີ່ຈັດວາງລະບຽບການຄຸ້ມຄອງຊີວິດເສດຖະກິດ ໃນຂົງເຂດທັງໝົດ. ສະນັ້ນ ການປະກອບເຂົ້າໃນສະພາເສດຖະກິດແຫ່ງຊາດຂັ້ນແຂວງນີ້ໄດ້ ມີບັນດາຜູ້ຕາງໜ້າ ຂອງສະຖາບັນເສດຖະກິດອື່ນໆອີກ ທີ່ປະຕິບັດສິດເລືອກຕັ້ງແບບເສລີ. ການປະຕິບັດດັ່ງກ່າວເຮັດໃຫ້ບັນດາການຈັດຕັ້ງກຳມະກອນມີອິດທິພົນຕໍ່ຊີວິດຄຸ້ມຄອງເສດຖະກິດໃນຂົງເຂດຂອງຕົນ ເຂັ້ມແຂງຂຶ້ນ.

ສະພາເສດຖະກິດແຫ່ງຊາດຂັ້ນແຂວງ ຕ້ອງໄດ້ຈັດວາງຄວາມຕ້ອງການ ແລະກຳນົດການນຳໃຊ້ ໃນຕົວຈິງວັດຖຸດິບ, ບັນດານ້ຳມັນເຊື້ອເພີງ, ສິນຄ້າເຄິ່ງ ສຳເລັດຮູບແລະສິນຄ້າສຳເລັດຮູບ, ກຳລັງແຮງງານ,ພາຫະນະຂົນສົ່ງແລະອື່ນໆໃຫ້ເປັນປະໂຫຍດ; ຮັບປະກັນແຮງງານ, ນ້ຳມັນເຊື້ອເພີງ,ວັດຖຸດິບ, ວັດຖຸກໍ່ສ້າງ ອຸປະກອນເຄື່ອງຜະລິດ ໃຫ້ແກ່ໂຮງ ຈັກໂຮງງານ; ແຈກຢາຍການສົ່ງວັດຖຸອຸປະກອນ; ຈັດວາງວຽກງານຂົນສົ່ງ; ໃຊ້ມາດຕາການໃນການນຳໃຊ້ແຮງງານ ຂອງເຂດໃຫ້ສົມບູນ; ເຕົ້າໂຮມ,ນຳສົ່ງແລະຈັດວາງການເຄື່ອນ-ໄຫວ ຂອງທຸກອົງການກວດກາແຮງງານຂັ້ນລຸ່ມ. ໃນຂອບເຂດແຂວງຂອງຕົນ ສະພາເສດຖະກິດຂັ້ນແຂວງ ເປັນອົງການຄຸ້ມຄອງ ທຸກອຸດສາຫະກຳ ທີ່ໂອນມາເປັນຂອງລັດ.

ພາລະໜ້າທີ່ຂອງສະພາເສດຖະກິດແຫ່ງຊາດຂັ້ນແຂວງໄດ້ບົ່ງບອກໂຄງຮ່າງການຈັດຕັ້ງຂອງມັນອອກໄວ້ແລ້ວ,ໂດຍອີງໃສ່ຈຸດພິເສດແລະໂຄງປະກອບເສດຖະກິດຂອງແຂວງ, ເພິ່ນໄດ້

ສ້າງຕັ້ງຂະແໜງການຜະລິດຂຶ້ນເຊັ່ນ: ຂະແໜງເສດຖະກິດລັດ ແລະທະນາຄານ, ນ້ຳມັນເຊື້ອເພີງ, ການປຸງແຕ່ງເຫລັກ ແລະໄມ້, ການຜະລິດເຄມີ, ວຽກງານການຂົນສົ່ງ ແລະ ກໍ່ສ້າງ, ກະສິກຳ, ສະບຽງອາຫານ, ບໍລິໂພກ ແລະ ອື່ນໆ. ເພິ່ນໄດ້ແບ່ງແຕ່ລະຂະແໜງອອກເປັນສີ່ພະແນກ ບໍລິຫານ ເຊັ່ນ: ພະແນກການຈັດຕັ້ງການຜະລິດ ແລະການລົງທຶນ;ພະແນກຈັດຫາສະບຽງແລະຈຳໜ່າຍ; ພະແນກແຮງງານ; ພະແນກສະຖິຕິ. ເພື່ອການປະສານງານໃນການເຄື່ອນໄຫວວຽກງານ ຂອງບັນດາພະແນກເຫລົ່ານັ້ນ ເພິ່ນໄດ້ຈັດຕັ້ງ ກອງປະຊຸມ ລະຫວ່າງຂະແໜງຂຶ້ນ (ໃນບັນຫາການຈັດຕັ້ງ ການຜະລິດ, ບັນຫາການຈັດຫາສະບຽງ, ແລະຈຳໜ່າຍ, ບັນຫາແຮງງານ ແລະສະຖິຕິ). ເພິ່ນໄດ້ຕັ້ງຄະນະບໍລິຫານງານອັນໜຶ່ງຂຶ້ນ ທີ່ເປັນອົງການເຄື່ອນໄຫວ ເປັນປະຈຳຂອງກອງປະຊຸມດັ່ງກ່າວ. ວຽກງານຂອງຂະແໜງການຜະລິດ, ຂອງພະແນກບໍລິຫານ ໄດ້ຮັບການຊີ້ນຳ ຈາກຄະນະກຳມະການ ບໍລິຫານ ແລະຄະນະປະທານ ຂອງສະພາເສດຖະກິດ ແຫ່ງຊາດຂັ້ນແຂວງ ທີ່ຖືກເລືອກຕັ້ງຂຶ້ນ ໂດຍກອງປະຊຸມສະໄໝສາມັນຂອງສະພາເສດຖະກິດ ແຫ່ງຊາດຂັ້ນແຂວງ.

ສະພາເສດຖະກິດ ແຫ່ງຊາດ ຂັ້ນແຂວງ ມີສິດ ອັນກ້ວາງຂວາງ. ຂໍ້ຕົກລົງຕ່າງໆ ຂອງສະພາເສດຖະກິດແຫ່ງຊາດຂັ້ນແຂວງນີ້ ຈະຕ້ອງໄດ້ຖືກນຳປະຕິບັດຢູ່ໃນສະຖາບັນ ທ້ອງຖິ່ນ ແລະໂຮງຈັກໂຮງງານທຸກບ່ອນ ໂດຍບໍ່ມີການຍົກເວັ້ນໄດ້. ມີ

ແຕ່ສະພາເສດຖະກິດແຫ່ງຊາດສູງສຸດ ທີ່ມີສິດລົບລ້າງບັນດາຂໍ້ຕົກລົງຂອງສະພາເສດຖະກິດແຫ່ງຊາດຂັ້ນແຂວງດັ່ງກ່າວໄດ້.

ແຕ່ວ່າບັນດາສະພາເສດຖະກິດແຫ່ງຊາດຂັ້ນແຂວງ ທີ່ຖືວ່າເປັນເຂດຍ່ອຍເອກະລາດ ຂອງກົງຈັກເສດຖະກິດທ້ອງຖິ່ນ - ຂອງສະພາເສດຖະກິດແຫ່ງຊາດສູງສຸດນັ້ນ ໄດ້ດຳລົງຄົງຕົວຢູ່ມາບໍ່ໄດ້ດົນເທົ່າໃດ. ເມື່ອທ້າຍປີ ໑໙໑໗ ສະພາເສດຖະກິດແຫ່ງຊາດຂັ້ນແຂວງດັ່ງກ່າວ ກໍໄດ້ຖືກຍຸບຕົວຍ້ອນຫລາຍ ເຫດຜົນດັ່ງນີ້: ຄືດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ ຄືດຽວກັບ ສະພາເສດຖະກິດແຫ່ງຊາດຂັ້ນແຂວງທີ່ ຂຶ້ນກັບສະພາເສດຖະກິດ-ແຫ່ງຊາດ ທ້ອງຖິ່ນ ຍັງມີສະພາ ເສດຖະກິດ ແຫ່ງຊາດ ຂັ້ນອະນຸແຂວງ,ເມືອງແລະເຂດອີກ. ສະພາເສດຖະກິດແຫ່ງຊາດຂັ້ນອະນຸແຂວງ ໄດ້ກັບກາຍເປັນກົງຈັກຊານເມືອງຂອງສະພາເສດຖະກິດແຫ່ງຊາດຂັ້ນແຂວງ. ໃນໄລຍະເວລາອັນສັ້ນ ສັ້ນເທົ່ານັ້ນສະພາເສດຖະກິດແຫ່ງຊາດຂັ້ນອະນຸແຂວງເຫລົ່ານີ້ໄດ້ປັບປຸງການຈັດຕັ້ງຂອງຕົນໃຫ້ເຂັ້ມແຂງຂຶ້ນ ແລະເລີ່ມເຮັດໃຫ້ມີການກຸ້ມຕົນເອງໃນວຽກງານ ເສດຖະກິດຢ່າງໄວວາ. ໃນເງື່ອນໄຂທີ່ຂາດເຂີນເຊື້ອເພີງ, ວັດຖຸດິບແລະໃນໄລຍະທີ່ປະຕິບັດລວມສູນຢ່າງເຄັ່ງຄັດນັ້ນການຈຳຫນ່າຍວັດຖຸດິບແລະວັດຖຸສິ່ງຂອງ ທີ່ມີຄຸນຄ່າອື່ນໆ ແມ່ນຫນ້າທີ່ຂອງກົງຈັກສູນກາງສະພາເສດຖະກິດແຫ່ງຊາດສູງສຸດຜູ້ດຽວ ແລະລະບົບການລົງທຶນແລະການຈຳຫນ່າຍໃບສັ່ງຕ່າງໆ ກໍໄດ້ປະຕິບັດ ແບບລວມສູນໃນທຳນອງດຽວກັນແນວນັ້ນ ສະພາເສດຖະກິດແຫ່ງຊາດ ຂັ້ນ

ອະນຸແຂວງແລະກົງຈັກຄຸ້ມຄອງເສດຖະກິດສູນກາງຂອງສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ມີການພົວພັນກັນໂດຍກົງໂລດໂດຍບໍ່ໄດ້ຜ່ານສະພາເສດຖະກິດແຫ່ງຊາດຂັ້ນແຂວງ. ໃນສະພາບການດັ່ງກ່າວນັ້ນ ສະພາເສດຖະກິດແຫ່ງຊາດ ຂັ້ນແຂວງໄດ້ຕົກຢູ່ໃນຖານະລະຫວ່າງກາງ ສະພາເສດຖະກິດແຫ່ງຊາດຂັ້ນອະນຸແຂວງ ແລະກົງຈັກຄຸ້ມຄອງເສດຖະກິດສູນກາງ ຂອງສະພາເສດຖະກິດແຫ່ງຊາດສູງສຸດ. ດ້ວຍເງື່ອນໄຂດັ່ງກ່າວຈຶ່ງພາໃຫ້ເກີດມີແນວຄິດອາດຍາສິດ ແລະມີແນວຄິດລໍຄຽຄຳສັ່ງທີກົດໜ່ວງການແກ້ໄຂ ບັນຫາເສດຖະກິດອັນຮີບດ່ວນຕ່າງໆ.

ເຖິງແມ່ນສະພາເສດຖະກິດແຫ່ງຊາດຂັ້ນແຂວງ ໄດ້ຖືກຍຸບຕົວໄປແລ້ວກໍ່ຕາມ ແຕ່ຄວາມຈຳເປັນໃນການດຳເນີນ ງານຂອງຫ້ອງຕ່າງໆຂອງແຂວງນັ້ນ ໃນໂຄງຮ່າງການ ຄຸ້ມຄອງການຜະລິດຍັງສືບຕໍ່ດຳລົງຄົງຕົວຢູ່. ສະນັ້ນມັນຈຳເປັນຕ້ອງ-ຊອກຫາຮູບໃດໜຶ່ງ ໃນການພົວພັນ ລະຫວ່າງລະບົບຄຸ້ມຄອງແບບລວມສູນ ແລະການລິເລີ່ມຂອງທ້ອງຖິ່ນ. ເພື່ອຕອບສະໜອງວຽກງານດັ່ງກ່າວ ເພິ່ນຈຶ່ງສ້າງຕັ້ງຄະນະກຳມະ ການຄຸ້ມຄອງການຜະລິດ ແລະຄະນະອຸດສາຫະກຳແຂວງຂຶ້ນ ຢູ່ໃນສະພາເສດຖະກິດແຫ່ງຊາດສູງສຸດ.

ໃນເດືອນພະຈິກ ປີ ໑໙໑໙ ເພິ່ນໄດ້ຈັດຕັ້ງ ຄະນະກຳມະການຄຸ້ມຄອງການຜະລິດ "ອູລານ -ຊູບລີ" ຢູ່ໃນສະພາເສດ-ຖະກິດແຫ່ງຊາດສູງສຸດ ຂຶ້ນເປັນເທື່ອທຳອິດ. ປະຈຳຄະນະກຳມະການດັ່ງກ່າວ ເພິ່ນໄດ້ຈັດຕັ້ງອົງການຄຸ້ມຄອງ ຂະແໜງວິ

ຊາການອື່ນເຊັ່ນ: ຄະນະຊຸດສາຫະກຳເຄມີ; ຄະນະດັ່ງກ່າວນີ້ ມີໜ້າທີ່ແກ້ໄຂທຸກບັນຫາ ທີ່ພົວພັນກັບການຈັດຕັ້ງ ແລະຄຸ້ມຄອງບັນດາໂຮງງານເຄມີ ທີ່ຢູ່ໃນອົງເຂດດັ່ງກ່າວນັ້ນ. ໂດຍອີງໃສ່ສະພາບຕົວຈິງກອງປະຊຸມໃຫຍ່ຂອງພັກ ຄັ້ງທີ IX ໃນປີ ໑໙໘໐ ໄດ້ວາງມະຕິອອກວ່າ : "ສຳລັບເຂດທີ່ກ້ວາງໃຫຍ່ທີ່ຫ່າງໄກຈາກສູນກາງແລະມີເງື່ອນໄຂເສດຖະກິດພິເສດ ນັ້ນ, ກອງປະຊຸມໃຫຍ່ເຫັນດີ ມີຄວາມຈຳເປັນໃຫ້ຈັດຕັ້ງ ... ອົງການເສດຖະກິດຂັ້ນແຂວງ ທີ່ມີຄວາມສາມາດຮອບດ້ານອັນ... ບັນດາຄະນະແຂວງດັ່ງກ່າວ ... ຈະຕ້ອງມີອຳນາດ ອັນກ້ວາງຂວາງຢູ່ໃນແຂວງຂອງຕົນ ເພື່ອຊີ້ນຳຢ່າງໃກ້ຊິດ ຊີວິດເສດຖະກິດຂອງທ້ອງຖິ່ນ, ພ້ອມກັບຄວບຄຸມການເຕົ້າໂຮມໃຫ້ເປັນສະພາເສດຖະກິດແຫ່ງຊາດ ອະນຸແຂວງ ແລະ ກໍຄືບັນດາອົງການຄຸ້ມຄອງເຂດຕ່າງໆ, ປະຕິບັດທຸກການປ່ຽນແປງທີ່ຈຳເປັນ ໂດຍອີງໃສ່ແຜນການທີ່ ກົມສູນກາງ ໄດ້ອະນຸມັດໄວ້ແລ້ວນັ້ນ, ມີສິດຍົກຍ້າຍວັດຖຸດິບແລະແຮງງານໄດ້".("ການຕົກລົງຂອງພັກ ແລະລັດຖະບານ ໃນບັນຫາເສດຖະກິດ",ເຫລັ້ມທີ ໑, ໜ້າ ໑໖໕-໑໖໖).

ເຖິງລະດູບານໃໝ່ຂອງປີ ໑໙໘໐ ໂດຍອີງໃສ່ຂໍ້ ຕົກລົງຂອງກອງປະຊຸມໃຫຍ່ພັກ ຄັ້ງທີ IX ນັ້ນ ຢູ່ສະພາເສດຖະກິດ-ແຫ່ງຊາດສູງສຸດ ເພິ່ນໄດ້ຈັດຕັ້ງຂະແໜງຊີບີລີຂຶ້ນ ເຊິ່ງຮຽກວ່າ: "ຄະນະຊີບີລີ ຂອງສະພາເສດຖະກິດແຫ່ງຊາດສູງສຸດ", ອົງການໃໝ່ນີ້ ໄດ້ມີສິດທິໃນທຳນອງດຽວກັນກັບ ຄະນະປະ

ທານສະພາເສດຖະກິດແຫ່ງຊາດສູງສຸດ ເພື່ອແກ້ໄຂທຸກບັນຫາກ່ຽວກັບການຈັດຕັ້ງ ແລະການຄຸ້ມຄອງເສດຖະກິດ ຢູ່ໃນເຂດຊົບົລົ ໂດຍອີງໃສ່ດຳລັດທົ່ວໄປ ຂອງສະພາເສດຖະກິດ ແຫ່ງຊາດສູງສຸດ. ຕາມຂໍ້ດຳລັດ, ຄະນະອົງການດັ່ງກ່າວແມ່ນອົງການບໍລິຫານ ຂອງຄະນະປະທານສະພາເສດຖະກິດແຫ່ງຊາດສູງສຸດ ແລະໄດ້ນຳໃຊ້ສິດຂອງສະພານີ້ ເພື່ອແກ້ໄຂທຸກບັນຫາກ່ຽວກັບຊີວິດເສດຖະກິດ ຢູ່ໃນອົງເຂດທີ່ກ່ຽວຂ້ອງຂອງຕົນ.

ນອກຈາກສຳນັກງານສະພາແລ້ວ**ຄະນະບໍລິຫານດັ່ງກ່າວກໍ່ບໍ່ໄດ້ມີອົງການຄຸ້ມຄອງຂອງຕົນອັນໃດອີກ.** ການເຄື່ອນໄຫວຂອງຄະນະບໍລິຫານດັ່ງກ່າວ ໄດ້ປະຕິບັດໂດຍຜ່ານອົງການ ຈັດຕັ້ງຂອງອົງການບັນດາກົມສູນກາງ ແລະກົມໃຫຍ່ຂອງທ້ອງຖິ່ນ . ການຂະຫຍາຍຕົວໃນວຽກງານເສດຖະກິດ ແລະການ ປ່ຽນແປງຂອງສະພາເສດຖະກິດແຫ່ງຊາດສູງສຸດ ໃນອົງການຄຸ້ມຄອງ ແລະໃນການກຳນົດລະບຽບ ຊຸດສາທະກຳນັ້ນມັນກໍໄດ້-ສົ່ງຜົນສະທ້ອນ ເຖິງວຽກງານຂອງຄະນະບໍລິຫານງານ ເສດຖະກິດຂອງແຂວງ. ສະນັ້ນໃບດຳລັດທີ່ໄດ້ພິມອອກໃນປີ໑໙໘໐ ໄດ້ລະບຸໄວ້ວ່າ: ຄະນະບໍລິຫານງານແຂວງຂອງສະພາເສດຖະກິດແຫ່ງຊາດສູງສຸດ ເປັນອົງການຄຸ້ມຄອງຊຸດສາທະກຳ. ສິດໜ້າທີ່ແລະໂຄງຮ່າງການຈັດຕັ້ງ ຂອງຄະນະບໍລິຫານງານດັ່ງກ່າວ ແມ່ນອັ້ນກັບສິດໜ້າທີ່ ແລະໂຄງຮ່າງຂອງອົງການ ສູນກາງຂອງສະພາເສດຖະກິດແຫ່ງຊາດສູງສຸດ.ເພື່ອແກ້ໄຂວຽກງານປະຈຳວັນ ຂອງຄະນະບໍລິຫານງານຄຸ້ມຄອງຊຸດສາທະ

ກຳນັ້ນເພິ່ນໄດ້ສ້າງກົງຈັກຄຸ້ມຄອງຂອງຕົນເອງຂຶ້ນ. ຕາມຫລັກການແລ້ວ ຄະນະບໍລິຫານງານຄຸ້ມຄອງອຸດສາຫະກຳດັ່ງກ່າວມີສິດ ບັນຊາຫລາຍສະພາເສດຖະກິດ ແຫ່ງຊາດປະຈຳທ້ອງຖິ່ນ.

ອົງການທ້ອງຖິ່ນຂອງກົມໃຫຍ່ ແລະພະແນກ ການຜະລິດຂອງສະພາເສດຖະກິດແຫ່ງຊາດສູງສຸດປະຕິບັດໜ້າທີ່ເໝືອນພະແນກ ແລະ ຂະແໜງ ຂອງຄະນະບໍລິຫານງານອຸດສາຫະກຳແຂວງ.

ເພື່ອປະສົມປະສານວຽກງານ ແລະເພື່ອກຳນົດການເຄື່ອນໄຫວ ວຽກງານເສດຖະກິດ ຂອງສະພາເສດຖະກິດແຫ່ງຊາດປະຈຳທ້ອງຖິ່ນນັ້ນ ຢູ່ໃນຄະນະບໍລິຫານງານອຸດສາຫະກຳເພິ່ນໄດ້ຈັດຕັ້ງຄະນະກຳມະການບໍລິຫານ ຂອງຂະແໜງຕ່າງໆຂຶ້ນເຊັ່ນ: ຄະນະກຳມະການຄຸ້ມຄອງການຜະລິດ, ຄະນະກຳມະການການເງິນ ແລະງົບປະມານ, ຄະນະກຳມະການ ຈຳໜ່າຍແຮງງານ ແລະຄະນກຳມະການວາງລາຄາ. ຄະນະກຳມະການຄຸ້ມຄອງການຜະລິດ ຄົ້ນຄ້ວາຄວາມສາມາດ ໃນການຜະລິດ ຂອງໂຮງງານອຸດສາຫະກຳຕ່າງໆ, ວາງແຜນ ການຜະລິດຂອງແຕ່ລະໂຮງງານ, ຂອງສະພາເສດຖະກິດ ແລະຂອງຫ້ອງການຄຸ້ມຄອງອຸດສາຫະກຳທັງມວນ. ໂດຍອີງໃສ່ເອກະສານ ຂອງຄະນະກຳມະການຄຸ້ມຄອງການຜະລິດນັ້ນຄະນະກຳມະການການເງິນ ຈຶ່ງປະຕິບັດການແບ່ງປັນພາຫະນະດ້ານການເງິນທີ່ຈຳເປັນ. ຄະນະກຳມະການຈຳໜ່າຍ ແຮງງານກຳກັບບັນຫາແຈກຢາຍແຮງງານ ແລະບັນຫາດ້ານຊີວິດການ-

ເປັນຢູ່ຂອງກຳມະກອນ, ທີ່ຮັບໃຊ້ວຽກງານຢູ່ໃນໂຮງຈັກໂຮງງານຂອງລັດ. ສ່ວນການແກ້ໄຂບັນຫາສະບຽງອາຫານ ນັ້ນແມ່ນໜ້າທີ່ຂອງກະຊວງປະຊາຊົນ ວ່າການສະບຽງ ອາຫານຂອງເຂດດັ່ງກ່າວນັ້ນ. ຄະນະກຳມະການວາງລາຄາມີໜ້າທີ່ພິເສດຂອງມັນ.ລາຄາຜະລິດຕະພັນອຸດສາຫະກຳ ແມ່ນໜ້າທີ່ຂອງສະພາເສດຖະກິດແຫ່ງຊາດສູງສຸດວາງອອກ, ສະນັ້ນວຽກງານ ຂອງຄະນະກຳມະການລາຄາ ຂອງຄະນະບໍລິຫານງານການຄຸ້ມຄອງອຸດສາຫະກຳຈຶ່ງມີແຕ່ການຄິດໄລ່ລາຄາ, ເກັບກຳຂໍ້ມູນຂອງລາຄາຕົ້ນທຶນແລະອື່ນໆເທົ່ານັ້ນ. ນອກຈາກຄະນະກຳມະການດັ່ງກ່າວຂ້າງເທິງນີ້ແລ້ວ ຢູ່ໃນຄະນະບໍລິຫານງານອຸດສາຫະກຳແຂວງ ຍັງມີພະແນກບໍລິຫານອີກເຊັ່ນ: ພະແນກປົກ-ຄອງ, ພະແນກກວດກາ ແລະອົບຮົມ, ພະແນກການເງິນ - ແລະຄິດໄລ່. ດັ່ງນັ້ນ ທ້າຍສົງຄາມກາງເມືອງຄະນະບໍລິຫານງານອຸດສາຫະກຳ ຈຶ່ງເປັນຄະນະບໍລິຫານງານ ທີ່ສຳຄັນທີ່ສຸດໃນໂຄງຮ່າງການຈັດຕັ້ງຄຸ້ມຄອງອຸດສາຫະກຳ.

ໃນຂະບວນການປະກອບກົງຈັກຄຸ້ມຄອງເສດຖະກິດທ້ອງຖິ່ນນັ້ນໃນທ້າຍເດືອນພະຈິກປີ ໑໙໑໗ ນອກຈາກມີການຈັດຕັ້ງສະພາເສດຖະກິດແຫ່ງຊາດຂຶ້ນແຊຸຂອງແລ້ວ, ເພິ່ນໄດ້ເລີ່ມຈັດ ຕັ້ງອົງການຄຸ້ມຄອງເສດຖະກິດທີ່ຢູ່ໃນອະນຸແຂວງຂຶ້ນເປັນຫຼາຍຮູບແຕກຕ່າງກັນ. ອົງການດັ່ງກ່າວແມ່ນພະແນກຄຸ້ມຄອງເສດຖະກິດທີ່ຂຶ້ນກັບໜ່ວຍບໍລິຫານອະນຸແຂວງ ຂອງສະພາໂຊວຽດຜູ້ແທນຂອງກຳມະກອນ, ທະຫານແລະຊາວນາ. ຢູ່ໃນບາງ ອະນຸ

ແຂວງນັ້ນ ສະພາກວດກາຂອງກຳມະກອນ ປະຈຳອະນຸແຂວງ ໄດ້ເຮັດໜ້າທີ່ເປັນອົງການຄຸ້ມຄອງເສດຖະກິດຕົ້ນຕໍ. ຮູບການຕ່າງໆ ຂອງການຄຸ້ມຄອງນັ້ນ ມັນສະແດງເຖິງລັກສະນະ ພິເສດຂອງໄລຍະຕົ້ນ ຂອງການປະກອບກົງຈັກຄຸ້ມຄອງເສດຖະກິດ ຂອງສາທາລະນະລັດໂຊວຽດ. ໃນເວລາທີ່ເພີ່ມ ປັບປຸງການຈັດຕັ້ງ ຂອງສະພາເສດຖະກິດແຫ່ງຊາດສູງສຸດນັ້ນ ພະແນກຄຸ້ມຄອງເສດຖະກິດປະຈຳຄະນະກຳມະການ ບໍລິຫານອະນຸແຂວງ, ສະພາກວດກາຂອງກຳມະກອນ ຢູ່ອະນຸແຂວງ ແລະອົງການເສດຖະກິດອື່ນໆ ຂອງອະນຸແຂວງ ກໍໄດ້ຖືກຊຸບຊ້ອນເຂົ້າຢູ່ໃນສະພາເສດຖະກິດແຫ່ງຊາດປະຈຳອະນຸແຂວງ.

ຢູ່ໃນດຳລັດກ່ຽວກັບສະພາເສດຖະກິດແຫ່ງຊາດປະຈຳອະນຸແຂວງ ທີ່ໄດ້ຕົກລົງໃນທ້າຍປີ ໑໙໑໘ ນັ້ນ ໄດ້ບົ່ງໄວ້ວ່າ ສະພາຄຸ້ມຄອງເສດຖະກິດດັ່ງກ່າວ ເປັນອົງການບໍລິຫານຂອງສະພາເສດຖະກິດແຫ່ງຊາດສູງສຸດ ແລະມີໜ້າທີ່ກຳນົດ ແລະຈັດຕັ້ງຄຸ້ມຄອງເສດຖະກິດແຫ່ງຊາດຂອງອະນຸແຂວງໂດຍສອຍໃຊ້ດຳລັດ ແລະມະຕິທົ່ວໄປຂອງສະພາເສດຖະກິດ ແຫ່ງຊາດສູງສຸດ ແລະກອງປະຊຸມໃຫຍ່ ຂອງສະພາເສດຖະກິດ ແຫ່ງຊາດປະຈຳທ້ອງຖິ່ນ ຂອງລັດເຊຽທັງໝົດ.

ສະພາເສດຖະກິດແຫ່ງຊາດຂອງອະນຸແຂວງ ມີສິດສະເໜີບັນຫາການໂອນເອົາໂຮງຈັກໂຮງງານມາເປັນຂອງລັດ, ການເກນຊຸບ ແລະການຍຶດວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ, ສິນຄ້າສຳເລັດຮູບ, ແລະເຄື່ອງມືຮັບໃຊ້ການຜະລິດ ທີ່ມີຄວາມ

ໝາຍສະເພາະທ້ອງຖິ່ນ. ຕາມຄຳສັ່ງຂອງສະພາເສດຖະກິດແຫ່ງຊາດສູງສຸດນັ້ນ ສະພາເສດຖະກິດແຫ່ງຊາດ ຂອງອະນຸແຂວງ ມີໜ້າທີ່ວາງແຜນການຜະລິດ ໃຫ້ແກ່ບັນດາໂຮງງານທີ່ຂຶ້ນກັບຕົນ ແລະຊີ້ນຳການເຄື່ອນໄຫວ ວຽກງານຂອງບັນດາໂຮງຈັກໂຮງງານດັ່ງກ່າວ.

ກອງປະຊຸມສະໄຫມສາມັນ ເປັນອົງການນຳສູງສຸດຂອງສະພາເສດຖະກິດແຫ່ງຊາດ ຂອງອະນຸແຂວງ,ກອງປະຊຸມສາມັນດັ່ງກ່າວ ປະກອບດ້ວຍຜູ້ແທນປະຊາຊົນ ຜູ້ອອກແຮງງານຂອງສະພາໂຊວຽດປະຈຳອະນຸແຂວງ ແລະຕົວເມືອງ, ຂອງຜູ້ - ຕາງໜ້າ ອົງການກຳມະບານທ້ອງຖິ່ນ, ພະແນກຄຸ້ມຄອງ - ການຜະລິດ ຂອງສະພາເສດຖະກິດແຫ່ງຊາດ ປະຈຳອະນຸແຂວງ, ໂຮງງານຂະໜາດໃຫຍ່ ທີ່ຖືກໂອນມາເປັນຂອງລັດແລ້ວຫຼືວິສາຫະກິດ,ທີ່ຕັ້ງຢູ່ໃນອະນຸແຂວງນັ້ນ.ຄະນະປະທານມີໜ້າທີ່ເປັນອົງການບໍລິຫານຂອງກອງປະຊຸມສະໄຫມສາມັນ.

ເຖິງປີ ໑໙໑໙ ສະພາເສດຖະກິດແຫ່ງຊາດຂັ້ນອະນຸແຂວງໄດ້ກາຍເປັນອົງການຄຸ້ມຄອງເສດຖະກິດສູນກາງ ຢູ່ໃນຂອບເຂດອະນຸແຂວງຂອງຕົນ ແລະມີໜ້າທີ່ກວດກາທັງໂຮງ ຈັກໂຮງງານຂອງລັດ ແລະຂອງເອກະຊົນອີກດ້ວຍ.

ກອງປະຊຸມໃຫຍ່ຂອງສະພາເສດຖະກິດແຫ່ງຊາດ ຂອງລັດເຊຍທັງໝົດ

ກອງປະຊຸມໃຫຍ່ຂອງສະພາເສດຖະກິດແຫ່ງຊາດ ຂອງລັດ

ເຊຽທັງໝົດ ມີບົດບາດສຳຄັນ ໃນວຽກງານສ້າງຕັ້ງ ລະບົບ ຄຸ້ມຄອງເສດຖະກິດແຫ່ງຊາດ ສັງຄົມນິຍົມ. ການຮຽກປະຊຸມ ໃຫຍ່ ແລະວຽກງານຂອງກອງປະຊຸມດັ່ງກ່າວໄດ້ວາງໄວ້ລ່ວງ ໜ້າແລ້ວ ບັນດາທິດທາງການຈັດຕັ້ງ ການກໍ່ສ້າງເສດຖະກິດ ຢູ່ໃນປະເທດໂຊວຽດ, ໂດຍສະເພາະ ແມ່ນໃນສະໄໝກອງ ປະຊຸມໃນປີ ໑໙໑໘. ກອງປະຊຸມຄັ້ງທຳອິດໄດ້ຈັດຂຶ້ນ ຢູ່ນະ ຄອນຫລວງມົດສະກູ ເມື່ອວັນທີ ໒໖ ພຶດສະພາ ປີ ໑໙໑໘.

ໃນປີ ໑໙໑໘ ເພິ່ນໄດ້ຈັດຕັ້ງກອງປະຊຸມໃຫຍ່ຂຶ້ນ ສອງຄັ້ງ ແລະແຕ່ປີ ໑໙໑໙ ເປັນຕົ້ນມາ ກອງປະຊຸມໃຫຍ່ໄດ້ໄຂຂຶ້ນ ປີ ລະເທື່ອ. ກອງປະຊຸມຄັ້ງສຸດທ້າຍ ແມ່ນຄັ້ງທີ IV ທີ່ໄດ້ໄຂຂຶ້ນ ໃນເດືອນພຶດສະພາ ປີ ໑໙໒໑. ການຮຽກປະຊຸມໃຫຍ່ ສອງ ຄັ້ງ ໃນປີ ໑໙໑໘ ນັ້ນ ມັນສະແດງເຖິງໄລຍະການກໍ່ ສ້າງ ການຈັດຕັ້ງເສດຖະກິດ ຢ່າງຫ້າວຫັນ ໃນປະຫວັດສາດ ຂອງ ຊົນຊັ້ນກຳມາຊີບ, ເຊິ່ງຖືວ່າເປັນຂະບວນຈັດຕັ້ງ ລະບົບການ ຄຸ້ມຄອງເສດຖະກິດແຫ່ງຊາດ ແບບໃໝ່ທີ່ສຳຄັນ. ໃນສະພາບ ເວລານັ້ນ ໜ້າທີ່ຕົ້ນຕໍຂອງກອງປະຊຸມໃຫຍ່ ແມ່ນອີງໃສ່ຫລັກ ການ ປະຊາທິປະໄຕ ຢ່າງກວ້າງຂວາງ ເພື່ອກໍ່ສ້າງຫຼັກການ ລວມຂອງວຽກງານ ຄຸ້ມຄອງການຜະລິດສັງຄົມນິຍົມແລະອອກ ແບບຮ່າງການຈັດຕັ້ງຂອງມັນພ້ອມ, ບົ່ງທິດທາງພື້ນຖານການ ເຄື່ອນໄຫວ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ແລະອົງ ການທ້ອງຖິ່ນຂອງສະພາດັ່ງກ່າວ. ເຂົ້າຮ່ວມໃນ ກອງປະຊຸມ

ນັ້ນມີຜູ້ຕາງໜ້າຈາກອົງການສູນກາງໂຊວຽດແລະອົງການຄຸ້ມຄອງເສດຖະກິດເຊັ່ນ: ຄະນະບໍລິຫານງານສູນກາງ ຂອງລັດເຊຍທັງໝົດ, ສະພາເສດຖະກິດແຫ່ງຊາດສູງສຸດ, ກະຊວງປະຊາຊົນຕ່າງໆ, ຜູ້ແທນຈາກສະພາເສດຖະກິດທ້ອງຖິ່ນຕ່າງຕ່າງ, ຜູ້ແທນສະຫະພັນກຳມະບານ, ຜູ້ແທນຈາກກົມຄຸ້ມຄອງສະຫະກອນສູນກາງ ແລະຜູ້ແທນຈາກບັນດາໂຮງຈັກໂຮງງານໃຫຍ່ ຫລືສະຫະພັນຂອງມັນ.

ໃນກອງປະຊຸມໃຫຍ່ລັດເຊຍທັງໝົດ ຄັ້ງທີ I ມີຜູ້ ແທນເຂົ້າຮ່ວມເຖິງ ໔໕໔ ຄົນ ເຊິ່ງໃນນັ້ນມີ ໑໐໔ ຜູ້ແທນທີ່ມີສິດອອກສຽງ. ບັນດາຜູ້ແທນດັ່ງກ່າວ ມາຈາກ ໓໘ ອະນຸແຂວງຂອງລັດເຊຍໂຊວຽດ. ໃນກອງປະຊຸມໃຫຍ່ຄັ້ງທີສອງທີ່ຈັດຂຶ້ນໃນເດືອນທັນວາ ປີ ໑໙໑໘ ມີຜູ້ແທນເຂົ້າຮ່ວມ ໔໑໖ ຄົນເຊິ່ງໃນນັ້ນມີ ໑໑໔ ຄົນມີສິດອອກສຽງ. ການລຸດຜ່ອນ ຈຳນວນຜູ້ແທນໃນກອງປະຊຸມຄັ້ງທີສອງນັ້ນ ມັນສະແດງເຖິງ ໄລຍະການເປີດກອງປະຊຸມນັ້ນ ແມ່ນໄລຍະສັບສົນ ໃນປະຫວັດ-ສາດ ຂອງລັດຊົນຊັ້ນກຳມາຊີບ ເຊິ່ງເວລານັ້ນ ອຳນາດລັດໂຊວຽດ ດຳລົງຄົງຕົວຢູ່ພຽງເຂດໃຈກາງ ຂອງປະເທດເທົ່ານັ້ນ. ດິນແດນສ່ວນໃຫຍ່ຖືກພວກທະຫານຂາວ ແລະ ພວກຮຸກຮານຍຶດຄອງໝົດ. ພາຍຫລັງມາ ເມື່ອກອງທັບແດງໄດ້ ປົດປ່ອຍເອົາດິນແດນຄືນມາແລ້ວ ເພິ່ນກໍໄດ້ຟື້ນຟູ ສະພາເສດຖະກິດແຫ່ງຊາດຄືນ, ຈັດຕັ້ງອົງການຄຸ້ມຄອງເສດຖະກິດ ແຫ່ງຊາດຂຶ້ນ. ດັ່ງນັ້ນ ໃນກອງປະຊຸມໃຫຍ່ ສະພາເສດຖະ ກິດ

ແຫ່ງຊາດ ຄັ້ງທີ III ທີ່ໄດ້ຈັດຂຶ້ນໃນເດືອນມັງກອນປີ ໑໙໘໐ ນັ້ນ ມີຜູ້ແທນເຂົ້າຮ່ວມເຖິງ ໕໐໔ ຄົນ ເຊິ່ງໃນນັ້ນ ມີຜູ້ແທນ ຈຳນວນ ໘໔໙ ມີສິດອອກສຽງ.ຍ້ອນການປະກອບສ່ວນ ຢ່າງ ຫ້າວຫັນ ຂອງຜູ້ແທນອົງການຄຸ້ມຄອງເສດຖະກິດທ້ອງຖິ່ນ ໃນ ກອງປະຊຸມໃຫຍ່ ຄັ້ງທີIIIນັ້ນ, ເພິ່ນຈຶ່ງມີໂອກາດ ສຶກສາ ຢ່າງເລິກເຊິ່ງ ບົດຮຽນທີ່ໄດ້ສະສົມມາແລ້ວ ແລະເອົາໃຈໃສ່ ຕໍ່ລັກສະນະພິເສດ ຂອງການຂະຫຍາຍຕົວ ຂອງເສດຖະກິດ ຂອງແຕ່ລະຂົງເຂດພາຍໃນປະເທດໄດ້.ກອງປະຊຸມໃຫຍ່ຂອງ ສະພາຄັ້ງ IV ໃນເດືອນພຶດສະພາ ປີ ໑໙໘໑ ໄດ້ເປັນ ກອງປະຊຸມ ທີ່ເປີດກ້ວາງທີ່ສຸດ, ຊຶ່ງມີຜູ້ແທນເຂົ້າຮ່ວມ ເຖິງ ໕໙໓ ຄົນ, ໃນຈຳນວນດັ່ງກ່າວນັ້ນ ມີ ໔໕໐ ຄົນທີ່ມີສິດອອກ ສຽງໄດ້.

ຈາກກອງປະຊຸມໃຫຍ່ເທື່ອທີຫນຶ່ງ ໄປຫາກອງປະຊຸມໃຫຍ່- ອີກເທື່ອໃຫມ່ ກໍໄດ້ມີການປ່ຽນແປງ ລັກສະນະຂອງການເປັນ **ຕົວແທນ ເຂົ້າຮ່ວມ**ໃນກອງປະຊຸມດັ່ງກ່າວນັ້ນ.ຖ້າຫາກວ່າໃນ ກອງປະຊຸມສະພາຄັ້ງທີ I ນັ້ນ ບັນດາຜູ້ແທນສ່ວນຫລວງຫຼາຍ ທີ່ເຂົ້າຮ່ວມ ໄດ້ແກ່ຜູ້ແທນທີ່ມາຈາກ ສະພາເສດຖະກິດ ແຫ່ງ ຊາດສູງສຸດ ແລະອົງການທ້ອງຖິ່ນຂອງສະພາດັ່ງກ່າວ,ແຕ່ໃນ ກອງປະຊຸມເທື່ອຕໍ່ໄປນັ້ນ ໄດ້ເປີດກ້ວາງ**ແກ່ການເຂົ້າຮ່ວມ**ດັ່ງ ກ່າວ. ໃນໄລຍະລະຫວ່າງ ກອງປະຊຸມສະພາຄັ້ງທີ I ແລະ ຄັ້ງທີ II ນັ້ນ ໃນວຽກງານຄຸ້ມຄອງເສດຖະກິດໂຊວຽດ ໄດ້ມີ ການປ່ຽນແປງ ຢ່າງຫລວງຫລາຍຄື: ເພິ່ນໄດ້ຈັດຕັ້ງ ກົງຈັກ

ສູນກາງ ຂອງສະພາເສດຖະກິດແຫ່ງຊາດສູງສຸດແລະອົງການເສດຖະກິດທ້ອງຖິ່ນຂອງມັນຂຶ້ນ, ກົມໃຫຍ່, ກົມສູນກາງແລະອື່ນໆ ກໍໄດ້ປາກົດຂຶ້ນ.

ການປ່ຽນແປງທັງຫມົດດັ່ງກ່າວ ໄດ້ສົ່ງຜົນສະທ້ອນ ແກ່ກົດລະບຽບສະບັບໃຫມ່ ກ່ຽວກັບສະພາເສດຖະກິດແຫ່ງຊາດ ສູງສຸດ, ທີ່ເພິ່ນໄດ້ຮັບຮອງເອົາຢູ່ໃນກອງປະຊຸມ ສະພາເສດຖະກິດແຫ່ງຊາດສູງສຸດ ຄັ້ງທີ II ນັ້ນ. ໃນກົດລະບຽບ ດັ່ງກ່າວເພິ່ນໄດ້ເວົ້າເຖິງສິດໃນການອອກສຽງ ຂອງຜູ້ແທນທີ່ຈະເຂົ້າຮ່ວມ ໃນກອງປະຊຸມໃຫຍ່ສະພາ ໃນຄັ້ງຕໍ່ໄປນັ້ນ ຊຶ່ງໄດ້ແກ່ຜູ້ແທນ ຂອງພະແນກການຜະລິດ ຂອງສະພາເສດຖະກິດ ແຫ່ງຊາດສູງສຸດ, ສະພາເສດຖະກິດແຫ່ງຊາດປະຈຳທ້ອງຖິ່ນ,ພະແນກເສດຖະກິດ ຂອງສະພາໂຊວຽດທ້ອງຖິ່ນ, ກົມໃຫຍ່ຄຸ້ມຄອງໂຮງຈັກໂຮງງານ ທີ່ໂອນມາເປັນຂອງລັດແລ້ວ, ສະມາຄົມສະຫະກອນກະເສດ, ບໍລິໂພກແລະການຜະລິດຂອງລັດລັດເຊຍທັງຫມົດ. ແຕ່ເຖິງຢ່າງໃດກໍດີ ຫລັງຈາກ ກອງປະຊຸມໃຫຍ່ສະພາ ຄັ້ງທີ II ແລ້ວ ສະພາບເສດຖະກິດ ທີ່ປ່ຽນແປງນັ້ນ ໄດ້ນຳການປ່ຽນແປງບາງສິ່ງບາງຢ່າງໃນການປະກອບຜູ້ຕາງຫນ້າເຂົ້າຮ່ວມ ໃນກອງປະຊຸມໃຫຍ່ນັ້ນພວກເຮົາໄດ້ເວົ້າຢູ່ຂ້າງເທິງນັ້ນແລ້ວວ່າ: ສະພາເສດຖະກິດແຫ່ງຊາດ ສູງສຸດໄດ້ປ່ຽນຈາກການເປັນອົງການຄຸ້ມຄອງເສດຖະກິດທົ່ວໆໄປມາເປັນກະຊວງປະຊາຊົນວ່າການອຸດສາຫະກຳ,ຊຶ່ງຫນ້າທີ່ ຂອງມັນຮັດແຄບເຂົ້າ, ມີການປ່ຽນແປງລັກສະນະການພົວພັນຂອງ

ສະພາເສດຖະກິດແຫ່ງຊາດສູງສຸດ ກັບອົງການຄຸ້ມຄອງເສດຖະກິດອື່ນໆ, ສະຫະກອນບໍລິໂພກ ແລະສະຫະກອນກະເສດກໍໄດ້ແຍກອອກຈາກການຄຸ້ມຄອງ ຂອງສະພາເສດຖະກິດ ແຫ່ງຊາດສູງສຸດ, ສະພາເສດຖະກິດແຫ່ງຊາດປະຈຳເມືອງ ແລະໂດຍສະເພາະ ສະພາເສດຖະກິດແຫ່ງຊາດປະຈຳຕາແສງໄດ້ປ່ຽນເປັນອົງການເສດຖະກິດເທດສະບານ. ໃນກອງປະຊຸມໃຫຍ່ ສະພາເສດຖະກິດຄັ້ງທີIIIນັ້ນ ໄດ້ມີຜູ້ແທນຈາກບັນດາໂຮງງານອຸດສາຫະກຳທີ່ສຳຄັນ ເຂົ້າຮ່ວມເປັນຈຳນວນຫລວງຫລາຍ. ໃນບັນດາຜູ້ແທນຈຳນວນ ໔໕໙ ຄົນທີ່ມີສິດອອກສຽງນັ້ນ ມີຜູ້ແທນຈາກກຸ່ມຮວມຫມູ່ຂອງໂຮງຈັກໂຮງງານ ຈຳນວນເຖິງ ໓໙ ຄົນ. ອົງການກຳມະບານ ໄດ້ມີອິດທິພົນອັນ ໃຫຍ່ຫລວງ ຕໍ່ວຽກງານຂອງກອງປະຊຸມໃຫຍ່ສະພາດັ່ງກ່າວ. ບັນດາຜູ້ຕາງຫນ້າຂອງສະຖາບັນ ຫລືການຈັດຕັ້ງທີ່ມີຄວາມສົນໃຈນັ້ນ ກໍສາມາດເຂົ້າຮ່ວມ ໃຫ້ຄວາມຄິດເຫັນໃນວຽກງານຂອງກອງປະຊຸມສະພາດັ່ງກ່າວໄດ້ ແຕ່ຫາກບໍ່ມີສິດອອກສຽງ ໃນການລົງມະຕິໃດໆ. ດັ່ງນັ້ນ ໃນຈຳນວນຜູ້ແທນທີ່ເຂົ້າຮ່ວມໃນກອງປະຊຸມສະພາດັ່ງກ່າວ ໄດ້ມີຜູ້ແທນຈາກບັນດາກະຊວງປະຊາຊົນຕ່າງໆ, ສະພາໂຊວຽດບໍລິຫານທ້ອງຖິ່ນແລະຄະນະກຳມະການຊ່ວຍເຫລືອຜູ້ທຸກຍາກອຶກ ເຂົ້າຮ່ວມນຳດ້ວຍ.

ແຕ່ປີ ໑໙໑໘ ເຖິງປີ ໑໙໑໙ ນັ້ນ ໃນວຽກງານຂອງກອງປະຊຸມໃຫຍ່ ສະພາເສດຖະກິດແຫ່ງຊາດຂອງລັດລັດເຊຍ ທັງຫມົດ ໄດ້ມີການປ່ຽນແປງ. ຖ້າຫາກວ່າ ກອງປະຊຸມໃຫຍ່ສະ

ພາຄັ້ງທີ I ແລະຄັ້ງທີ II ຢາກຢັ້ງຢືນຕົນເອງວ່າຕົນເປັນອົງການເສດຖະກິດສູງສຸດ, ທີ່ບົ່ງທິດທາງພື້ນຖານ ຂອງນະໂຍບາຍເສດຖະກິດລັດ ທັງມວນອອກນັ້ນ, ແຕ່ກອງປະຊຸມ ໃຫຍ່ສະພາຄັ້ງຕໍ່ໄປນັ້ນ ໄດ້ກາຍເປັນລັກສະນະ ໃຫ້ຄວາມຄິດເຫັນເທົ່ານັ້ນ. ມະຕິຂອງກອງປະຊຸມໃຫຍ່ດັ່ງກ່າວ, ຕາມຫຼັກການແລ້ວ, ສອດຄ່ອງກັບແຕ່ໃນລະບົບຂອງສະພາເສດຖະກິດແຫ່ງຊາດສູງສຸດເທົ່ານັ້ນ. ມະຕິເຫລົ່ານັ້ນ ບໍ່ໄດ້ມີອຳນາດ ບັນຊາກະຊວງປະຊາຊົນອື່ນໆ ໄດ້ແຕ່ຢ່າງໃດ.

ກອງປະຊຸມໃຫຍ່ສະພາເສດຖະກິດຄັ້ງທີ I ນັ້ນ ໄດ້ປາກົດຂຶ້ນ ທັດຈາກການເຈັນສັນຍາສັນຕິພາບຢູ່ບະເລັດນັ້ນໂລດ.ສະພາບຂອງສາທາລະນະລັດໂຊວຽດ ໄດ້ເຂັ້ມແຂງຂຶ້ນ,ທີ່ໄດ້ອຳນວຍຄວາມສະດວກ ອັນແທດເໝາະ ໃນການເລີ່ມເຂົ້າ ສູ່ການປະຕິບັດ ແຜນການກໍ່ສ້າງສັງຄົມນິຍົມ,ທີ່ແມ່ນທ່ານ ວ.ອິ.ເລນິນ ເປັນຜູ້ວາງອອກ ຢູ່ໃນພົນງານຂອງເພິ່ນ ກ່ຽວກັບ "ໜ້າທີ່ສະເພາະໜ້າຂອງອຳນາດໂຊວຽດ" ແລະໃນເອກະສານອື່ນໆອີກ. ດັ່ງນັ້ນ ໃນກອງປະຊຸມໃຫຍ່ສະພາເສດຖະກິດຄັ້ງທີ I ເພິ່ນໄດ້ພິຈາລະນາ ບາງບັນຫາສຳຄັນ ດັ່ງບັນຫາການຈັດຕັ້ງ ການຈັດວາງແຜນການເສດຖະກິດ, ການໂອນເອົາຊັບສິນບັດຂອງນາຍທຶນ ມາເປັນຂອງລັດແລະການຈັດຕັ້ງຄຸ້ມຄອງອຸດສາຫະກຳລັດ. ໃນກໍລະນີນີ້ ກອງປະຊຸມໃຫຍ່ບໍ່ໄດ້ເອົາໃຈໃສ່ຕໍ່ການວາງໂຄງຮ່າງຄຸ້ມຄອງລະອຽດເທົ່າກັບການກຳນົດທິດທາງພື້ນຖານ ຂອງນະໂຍບາຍເສດຖະກິດ ຂອງລັດ

ຊົນຊັ້ນກຳມາຊີບ. ຕໍ່ບັນດາຜູ້ແທນ ທີ່ເຂົ້າຮ່ວມໃນກອງປະຊຸມໃຫຍ່ນັ້ນ ເພິ່ນໄດ້ມອບໜ້າທີ່ໃຫ້ຮ່າງໂຄງການອັນກວ້າງຂວາງອອກ, ເຊິ່ງໂດຍອີງໃສ່ພື້ນຖານຂອງໂຄງການດັ່ງກ່າວ ສະພາເສດຖະກິດແຫ່ງຊາດສູງສຸດ ຈຶ່ງຈະສາມາດກາຍເປັນອົງການຄຸ້ມຄອງເສດຖະກິດແຫ່ງຊາດທັງໝົດໄດ້. ສະນັ້ນ ເພິ່ນຈຶ່ງໄດ້ນຳພິຈາລະນາບັນຫາທີ່ມີລັກສະນະເສດຖະກິດທົ່ວໄປເປັນສ່ວນໃຫຍ່, ຊຶ່ງມັນໄດ້ຢັ້ງຢືນໃຫ້ເຫັນ ຈາກມະຕິຂອງກອງປະຊຸມ-ໃຫຍ່ ກ່ຽວກັບ: "ຖານະເສດຖະກິດ ແລະນະໂຍບາຍ ເສດຖະກິດ", "ທັດສະນະພື້ນຖານຂອງນະໂຍບາຍການເງິນ " ແລະ "ບັນຫາການແລກປ່ຽນສິນຄ້າ". ເພື່ອໃຫ້ສອດຄ່ອງກັບການໂອນເອົາອຸດສາຫະກຳ ມາເປັນຂອງລັດນັ້ນ ບັນຫາການຮ່າງຫລັກການຄຸ້ມຄອງໂຮງຈັກໂຮງງານລັດ ຈຶ່ງປາກົດຂຶ້ນ . ໃນຂະນະທີ່ເພິ່ນແນໃສ່ແກ້ໄຂບັນຫາດັ່ງກ່າວ, ກອງປະຊຸມໃຫຍ່ສະພາໄດ້ຮ່າງແລະຮັບຮອງເອົາມະຕິກ່ຽວກັບ ການຄຸ້ມ ຄອງໂຮງງານອຸດສາຫະກຳ ທີ່ໂອນມາເປັນຂອງລັດນັ້ນ. ເນື່ອງຈາກ ເພິ່ນໄດ້ຈັດຕັ້ງກົງຈັກສູນກາງ ຂອງສະພາເສດຖະກິດ-ແຫ່ງຊາດສູງສຸດ, ສະພາເສດຖະກິດແຫ່ງຊາດປະຈຳແຂວງ, ປະຈຳເມືອງແລະປະຈຳທ້ອງຖິ່ນອື່ນໆຂຶ້ນນັ້ນ, ກອງປະຊຸມໃຫຍ່ຂອງສະພາເສດຖະກິດໄດ້ພິຈາລະນາກົດລະບຽບທາງດ້ານກົດໝາຍຂອງສາຂາແຕ່ລະອັນ ຂອງລະບົບດັ່ງກ່າວແລະຮັບຮອງເອົາມະຕິກ່ຽວກັບລະບຽບ ສະພາເສດຖະກິດທ້ອງຖິ່ນ.

ໃນສະພາບສົງຄາມກາງເມືອງເກີດຂຶ້ນ ແລະສະພາບການ

ການເມືອງພາຍໃນປະເທດຊຸ້ນອ້ຽວຢູ່ນັ້ນ ກອງປະຊຸມໃຫຍ່ສະພາເສດຖະກິດຄັ້ງທີສອງ ໄດ້ເອົາໃຈໃສ່ຕໍ່ບາງບັນຫາທີ່ຮັບປະກັນ ຄວາມເຂັ້ມແຂງຂອງໄຊຊະນະ ຂອງການປະຕິວັດເດືອນຕຸລາ, ຊຶ່ງໂດຍສະເພາະ ແມ່ນບັນຫາການຈຸ່ດຕັ້ງ ຄຸ້ມຄອງການຜະລິດ ແບບລວມຫມູ່ຂອງປະຊາຊົນ. ເພິ່ນໄດ້ພິຈາລະນາບັນຫາການຈັດຕັ້ງສະມາຄົມ (ບໍລິສັດ,ກຸ່ມອຸດສາຫະກຳ,ການຈັດຕັ້ງກວດກາອຸດສາຫະກຳ ຂອງກຳມະກອນແລະລັດ).ກອງປະຊຸມໃຫຍ່ຮັບຮອງເອົາມະຕິ ກ່ຽວກັບການຄຸ້ມຄອງສະມາຄົມຫມວດສຳຄັນ ຂອງບັນດາໂຮງຈັກໂຮງງານລັດທີ່ຂຶ້ນກັບສະພາເສດຖະກິດແຫ່ງຊາດສູງສຸດ ໂດຍກົງແລະມະຕິໃຫມ່ ກ່ຽວກັບສະພາເສດຖະກິດແຫ່ງຊາດປະຈຳແຂວງ.

ສົງຄາມກາງເມືອງແລະການຮຸກຮານຕ່າງປະເທດໄດ້ເຮັດໃຫ້ເສດຖະກິດຂອງປະເທດ ຖືກທຳລາຍຢ່າງຫລວງຫລາຍ , ສະນັ້ນ ຫນ້າທີ່ຕົ້ນຕໍອັນຫນຶ່ງ ຂອງສະໄຫມນັ້ນ ແມ່ນການຟື້ນຟູອຸດສາຫະກຳ. ບັນຫາດັ່ງກ່າວນີ້ ເປັນບັນຫາທີ່ເພິ່ນເອົາໃຈ-ໃສ່ເປັນພິເສດ ໃນກອງປະຊຸມໃຫຍ່ ສະພາເສດຖະກິດ ຄັ້ງທີ III ນັ້ນ. ກອງປະຊຸມໃຫຍ່ສະພາ ໄດ້ສຸມຄວາມພະຍາຍາມໃສ່ບັນຫາການຈັດຕັ້ງກໍ່ສ້າງ ແລະການຍົກກຸກຳລັງການ ຜະລິດຂອງອຸດສາຫະກຳຂຶ້ນ ໃນອະນາຄົດ. ເພິ່ນໄດ້ຮັບຮອງ ເອົາມະຕິ "ກ່ຽວກັບການຄຸ້ມຄອງຊີວິດເສດຖະກິດ", ຊຶ່ງໃນມະຕິດັ່ງກ່າວນັ້ນ ເພິ່ນໄດ້ເວົ້າເຖິງການລວມສູນການຄຸ້ມຄອງການຜະລິດຮວມຫມູ່ ທີ່ເປັນພື້ນຖານຕົ້ນຕໍ ແລະເງື່ອນໄຂຂອງການ

ກໍ່ສ້າງສັງຄົມນິຍົມ. ໃນມະຕິດັ່ງກ່າວ ເພິ່ນໄດ້ເນັ້ນຫນັກເຖິງຄວາມຈຳເປັນ ໃນການຈັດຕັ້ງສະຫະບໍລິສັດ ແລະການລວມ-ສູນ ການຊຸ້ມຄອງອຸດສາຫະກຳຂຶ້ນ ໃນອະນາຄົດ. ຈຸດສຳຄັນອີກອັນຫນຶ່ງ ໃນວຽກງານຂອງກອງປະຊຸມໃຫຍ່ສະພານັ້ນ ໄດ້ແກ້ບັນຫາການຂະຫຍາຍອຸດສາຫະກຳ ຫັດຖະກຳແລະການຈັດຕັ້ງຊຸ້ມຄອງ ອຸດສາຫະກຳຂະແຫນງດັ່ງກ່າວ.

ກອງປະຊຸມໃຫຍ່ສະພາເສດຖະກິດ ຄັ້ງທີ IV ໄດ້ເປີດຂຶ້ນໃນປີ ໑໙໘໑ ໃນໄລຍະຂ້າມຜ່ານເຂົ້າສູ່ນະໂຍບາຍ ເສດຖະກິດໃຫມ່. ໃນເວລານັ້ນ ເພິ່ນໄດ້ວາງບັນຫາອອກເທື່ອໃຫມ່-ອີກ ກ່ຽວກັບຫລັກການການຈັດຕັ້ງພາລາທິການ ວັດຖຸປະກອນແລະວັດຖຸດິບ ແກ່ໂຮງຈັກໂຮງງານ, ເພິ່ນໄດ້ເນັ້ນຫນັກເຖິງຄວາມຈຳເປັນ ຍົກເລີກຈາກການລວມສູນ ອັນເຄັ່ງຄັດຕໍ່ການແກ້ໄຂບັນຫາດັ່ງກ່າວ ແລະຍົກບົດບາດສະພາເສດຖະກິດແຫ່ງຊາດປະຈຳທ້ອງຖິ່ນຂຶ້ນ ໃນການຈັດຫາວັດຖຸດິບແລະອື່ນໆນັ້ນ. ການສຶກສາການເຄື່ອນໄຫວ ຂອງກອງປະຊຸມໃຫຍ່ສະພາເສດຖະກິດ ທີ່ວລັດລັດເຊຍ ໄດ້ສະແດງໃຫ້ເຫັນວ່າ ຫຼາຍບັນຫາ ທີ່ເພິ່ນນຳມາພິຈາລະນາ ມັນສະແດງເຖິງຊີວິດຕົວຈິງ.

ທ່ານວ.ອີ.ເລນິນໄດ້ມີບົດບາດອັນໃຫຍ່ຫລວງຕໍ່ການຈັດຕັ້ງວຽກງານຂອງກອງປະຊຸມໃຫຍ່ສະພາເສດຖະກິດ ທີ່ວລັດລັດເຊຍ. ໃນກອງປະຊຸມໃຫຍ່ສະພາເສດຖະກິດຄັ້ງທີI,II,III ນັ້ນ ເພິ່ນໄດ້ກ່າວຄຳປາໄສ, ໄດ້ສົນທົບໃນວຽກງານ ຂອງ-ກຳມາທິການ ຂອງກອງປະຊຸມໃຫຍ່ຄັ້ງທີ I ໃນການຖົກຖຽງ

ຮ່າງມະຕິ ກ່ຽວກັບການຄຸ້ມຄອງໂຮງຈັກໂຮງງານ ທີ່ໂອນມາ
ເປັນຂອງລັດນັ້ນ.

ກອງປະຊຸມໃຫຍ່ສະພາເສດຖະກິດ ທົ່ວລັດລັດເຊຍໄດ້ມີບົດ
ບາດອັນສຳຄັນ ໃນບາດກ້າວຂອງການສ້າງລະບົບການ ຄຸ້ມ
ຄອງເສດຖະກິດແຫ່ງຊາດ ແບບສັງຄົມນິຍົມ. ກອງປະຊຸມໃຫຍ່
ທຸກຄັ້ງ ທີເປີດຂຶ້ນ , ແຕ່ລະຄັ້ງມຸ່ນຫມາຍເຖິງ ການສິ້ນສຸດ
ຂອງໄລຍະໜຶ່ງ ແລະແມ່ນການເລີ່ມຕົ້ນ ຂອງໄລຍະວິວັດທະ
ນາການ ຂອງລະບົບຄຸ້ມຄອງໃນຂັ້ນຕໍ່ໄປ. ໃນກອງປະຊຸມໃຫຍ່
ດັ່ງກ່າວ ເພິ່ນໄດ້ລາຍງານການເຄື່ອນໄຫວ ຂອງສະພາເສດ
ຖະກິດແຫ່ງຊາດ, ເພິ່ນໄດ້ສັງເກດຂໍ້ບົກພ່ອງ ແລະແຕ່ງແຜນ
ການ ສຳຫລັບໄລຍະຖັດໄປນັ້ນ. ລາຍການຂອງກອງປະຊຸມ-
ໃຫຍ່ສະພາເສດຖະກິດແຫ່ງຊາດທົ່ວລັດລັດເຊຍ ໄດ້ສະແດງ
ເຖິງການວິວັດທະນາການ ຂອງການເຄື່ອນໄຫວ ສະພາເສດ
ຖະກິດແຫ່ງຊາດ. ຈາກການສ້າງໂຄງການເສດຖະກິດທົ່ວໄປ
ໃນການຂະຫຍາຍເສດຖະກິດຂອງປະເທດນັ້ນ ເຖິງທ້າຍຂອງ
ການເຄື່ອນໄຫວຂອງຕົນ ສະພາເສດຖະກິດແຫ່ງຊາດໄດ້ກ້າວ
ເຂົ້າສູ່ການແກ້ໄຂບັນຫາການຈັດຕັ້ງ ຍຸດສາທະກຳ.

ການຄຸ້ມຄອງອຸດສາຫະກຳລັດ

ໃນໄລຍະ ແຕ່ປີ ໑໙໑໗ ຫາປີ ໑໙໔໑

ການໂອນເອົາຊັບສົມບັດຂອງນາຍທຶນມາເປັນຂອງລັດ- ແມ່ນພື້ນຖານຂອງການກໍ່ສ້າງຂະແໜງອຸດສາຫະກຳລັດ

ການໂອນເອົາຊັບສົມບັດຂອງບັນດານາຍທຶນແລະເຈົ້າທີ່ດິນມາເປັນຂອງລັດນັ້ນ ໄດ້ດຳເນີນໄປໃນທ່າມກາງເງື່ອນໄຂທີ່ມີການຕໍ່ສູ້ຊົນຊັ້ນອັນດຸເດືອດ. ນະໂຍບາຍຂອງລັດໂຊວຽດ ໃນການໂອນຊັບສົມບັດມາເປັນຂອງລັດນັ້ນແມ່ນແນໃສ່ນຳໃຊ້ ທຶນຮອນທີ່ອາດຂົນຂວາຍມາໄດ້ ຈາກເງື້ອມມືຂອງພວກນາຍທຶນ ເຊັ່ນຊັບພະຍາກອນເປັນວັດຖຸ, ທຶນເງິນຕາແລະວັດຖຸທີ່ມີລາຄາອື່ນໆອີກດ້ວຍ. ລັກສະນະທາດແທ້ຂອງຊົນຊັ້ນໃນການໂອນເອົາຊັບສິນ ມາເປັນຂອງລັດນັ້ນ ແມ່ນແນໃສ່ເຮັດໃຫ້ພື້ນຖານເສດຖະກິດ ຂອງພະເດັດການກຳມາຊີບ ໄດ້ຮັບການປັບປຸງ ໃຫ້ໝັ້ນຄົງຂຶ້ນ. ຜົນສຳເລັດຂອງການໂອນເອົາຊັບສິນ ມາເປັນຂອງລັດນັ້ນ ລັດຊົນຊັ້ນກຳມາຊີບຖືວ່າ ເປັນການປະຕິບັດ ລັດຖະບັນຍັດ ດ້ານການເມືອງ ແລະກໍ່ຄືທາງດ້ານເສດຖະກິດ . ພວກສັດຕູພາຍໃນຂອງອຳນາດໂຊວຽດ ແລະ"ນັກຊ່ຽວຊານ" ນາຍທຶນຕ່າງດ້າວ ດ້ານວຽກງານລັດເຊຍ ໄດ້ປະກາດ ວ່າ

ການສ້າງສະພາບການຊຸມຊ້ອນຂຶ້ນຢູ່ພາຍໃນປະເທດ ໂດຍສະເພາະ ໃນໄລຍະເກີດມີສົງຄາມກາງເມືອງ ແລະມີການແຊກແຊງຂອງຕ່າງດ້າວນັ້ນ ຈະເຮັດໃຫ້ລັດຊົນຊັ້ນກຳມາຊີບ ຈຳຕ້ອງດຳເນີນການໂອນເອົາ ພາຫະນະການຜະລິດພື້ນຖານມາເປັນຂອງລັດ, ຊຶ່ງຕາມແນວຄິດຂອງເຂົາແລ້ວ ເຂົາເຂົ້າໃຈວ່າ ການໂອນຊັບສິນຂອງນາຍທຶນ ແລະເຈົ້າທີ່ດິນ ມາເປັນຂອງລັດນັ້ນ ບໍ່ແມ່ນເງື່ອນໄຂອັນຈຳເປັນ ໃນການກໍ່ສ້າງ ສັງຄົມໃຫມ່ ສັງຄົມນິຍົມ ແຕ່ຢ່າງໃດ ເປັນແຕ່ພຽງຜະລິດຕະພັນສຳຮອງທີ່ເກີດຂຶ້ນ ຈາກການປະຕິວັດເທົ່ານັ້ນ. ການຢືນຢັນຂອງພວກເຂົານັ້ນ ມັນກົງກັນຂ້າມກັບທິດສະດີ ມາກ-ເລນິນກ່ຽວກັບການປະຕິວັດ ສັງຄົມນິຍົມ. ທ່ານ ວ.ອີ.ເລນິນ ໄດ້ເວົ້າແລ້ວເວົ້າອີກ ກ່ຽວກັບບັນຫານີ້ວ່າ: "ການລົບລ້າງກຳມະສິດສ່ວນຕົວ ຕໍ່ດິນດອນ, ໂຮງຈັກໂຮງງານ, ທະນາຄານ , ທາງລົດໄຟ ແລະອື່ນໆ ແລ້ວເຮັດໃຫ້ກຳມະສິດດັ່ງກ່າວ ເປັນຂອງປວງຊົນນັ້ນ ແມ່ນເງື່ອນໄຂອັນຈຳເປັນ ໃນການລົ້ມເລີກການຄອບງຳຂອງພວກນາຍທຶນ. ທ່ານໄດ້ຂຽນວ່າ: ຖ້າເຮົາຫາກຢາກເຮັດໃຫ້ການຈັດວຽກງານເສດຖະກິດໃຫ້ເປັນ ລະບຽບສຳເລັດຜົນນັ້ນ ມັນຮຽກຮ້ອງໃຫ້ປະຕິບັດການໂອນເອົາທະນາຄານ ແລະສະມາຄົມບໍລິສັດຕ່າງໆ ມາເປັນຂອງລັດໄປພ້ອມໆກັນ", (ວ.ອີ.ເລນິນ.ປະມວນບົດນິພົນ ສະບັບສົມບູນ, ເຫລັ້ມທີ ໓໔,ຫນ້າ ໑໖໘).

ສະນັ້ນ ສິ່ງຫນຶ່ງໃນບັນດາບັນຫາສຳຄັນ ຂອງທິດສະດີແລະ

ພາກປະຕິບັດຕົວຈິງ ຂອງການປະຕິວັດສັງຄົມນິຍົມ, ແມ່ນເລີ່ມຈາກມີການໂຕ້ຖຽງທາງດ້ານທິດສະດີ ຢ່າງຂັ້ນອຂາດ ເຊິ່ງຈາກນັ້ນ ກໍກ້າວໄປຫາການຕໍ່ສູ້ ທາງດ້ານການເມືອງ ຢ່າງເປີດເຜີຍ. ການໂຕ້ຖຽງກ່ຽວກັບລັກສະນະ ການໂອນຈຸບສິນມາເປັນຂອງລັດ ແບບສັງຄົມນິຍົມ ໄດ້ກຳເນີດຂຶ້ນ ໃນກາງປີ ໑໙໑໘ ແລະອີກບັ້ນໜຶ່ງເພີ່ນໄດ້ສຸມໃສ່ການພິຈາລະນາບັນຫາສຳຄັນທາງດ້ານການເມືອງແລະເສດຖະກິດໃໝ່. ເປັນຕົ້ນ ລ. ຕະໂລຊະກີ ຖືວ່າ ການໂອນເອົາຈຸບສິນ ມາເປັນຂອງລັດນັ້ນ ແມ່ນການກະທຳອັນໜຶ່ງ ທີ່ບໍ່ແມ່ນກິດເກນທາງດ້ານເສດຖະກິດ ຫາກແມ່ນຄວາມຕ້ອງການອັນຈຳເປັນ ທາງດ້ານການເມືອງເທົ່ານັ້ນ. ລ. ກາເມເນັບ ຜູ້ນຳຜູ້ໜຶ່ງຂອງ ຝ່າຍຄ້ານໃນພັກໄດ້ສະໜັບສະໜູນ ແນວຄິດດັ່ງກ່າວ ຊຶ່ງໃນກອງ ປະຊຸມໃຫຍ່ ສະພາໂຊວຽດທົ່ວລັດເຊຍ ຄັ້ງທີ IX ນັ້ນ, ໄດ້ຢັ້ງຢືນວ່າ ໃນພື້ນຖານຂອງການໂອນເອົາຈຸບສິນ ມາເປັນຂອງ ລັດຂອງພວກເຮົາ ແມ່ນເຫດຜົນທາງດ້ານການເມືອງເທົ່ານັ້ນ , ສ່ວນເຫດຜົນຂອງເສດຖະກິດແທ້ນັ້ນ ມັນຢູ່ເບື້ອງຫລັງ. ການທີ່ພວກນິຍົມ ຕະໂລຊະກີ ແລະພວກລັດຄ້ານອື່ນໆ ໄດ້ປະກາດຕົວຕ້ານ ກັບການໂອນເອົາຈຸບສິນ ມາເປັນຂອງລັດນັ້ນໃນຕົວຈິງ ກໍແມ່ນການຕ້ານກັບ ແນວທາງກໍ່ສ້າງເສດຖະກິດ ສັງຄົມນິຍົມ.

ທັດສະນະຂອງ ຕະໂລຊະກີ ແລະ ລ. ກາເມເນັບ ໄດ້ຮັບສະໜັບສະໜູນ ຢ່າງເຕັມປ່ຽມ ຈາກ "ຜູ້ຊ່ຽວຊານທາງດ້ານ

ລັດໂຊວຽດ" ຂອງພວກນາຍທຶນເຊິ່ງໃນປະຈຸບັນນີ້ເອົາຍັງສືບຕໍ່ຢັ້ງຢືນວ່າ, ການໂອນເອົາພາຫະນະການຜະລິດພື້ນຖານ ຢູ່ປະເທດລັດເຊຍ ມາເປັນຂອງລັດນັ້ນ ນຳໄປປະຕິບັດຢ່າງບັງເອີນ, ໂດຍສະເພາະ ແມ່ນການກະທຳແບບປາບປາມ ເທົ່ານັ້ນ ທີ່ມັນແມ່ນການຮັບໃຊ້ເຫດຜົນ ການເມືອງເທົ່າ ນັ້ນ . ການຕ້ານກັບລັກສະນະ ການເມືອງແລະເສດຖະກິດ ໃນວຽກງານໂອນເອົາຊັບສິນ ມາເປັນຂອງລັດນັ້ນ - ແມ່ນການຕັດແຍກ ດ້ານການເມືອງ ແລະເສດຖະກິດ ໃນວຽກງານ ໂອນຊັບສິນ ມາເປັນຂອງລັດ ອອກຈາກກັນ,ມັນສະແດງເຖິງການບໍ່ເຂົ້າໃຈ ເຖິງເນື້ອໃນຂອງເຫດການທີ່ເກີດຂຶ້ນຢູ່ໃນປະເທດເຮົາ ແລະແມ່ນການພິກປັ້ນເນື້ອໃນ ຂອງການໂອນຊັບສິນມາເປັນຂອງລັດ ແບບສັງຄົມນິຍົມ ຢ່າງມີ ຈາຕະນາ ແລະ ຕັ້ງແກ້ງ.

ຫລັງຈາກໄຊຊະນະ ຂອງມະຫາປະຕິວັດ ສັງຄົມນິຍົມ - ເດືອນຕຸລາ ການສືບຕໍ່ເຮັດການປະຕິວັດ ຂອງຊົນຊັ້ນ ກຳມາຊີບນັ້ນ ແມ່ນທິດທາງເຮັດໃຫ້ ທ່າທີຂອງພະເດັດການ ກຳມາຊີບ ໃນດ້ານເສດຖະກິດ ແລະສັງຄົມ ເຂັ້ມແຂງຍິ່ງຂຶ້ນ.ເພື່ອຢາກເຮັດໄດ້ແນວນັ້ນ ກ່ອນອື່ນຫມົດ ມັນຈຳຕ້ອງລົບລ້າງ ກຳມະສິດສ່ວນຕົວ ແລະສ້າງຕັ້ງກຳມະສິດ ລວມຫມູ່ຂຶ້ນ.

ຄວາມຮຽກຮ້ອງອັນຈຳເປັນ ຂອງການໂອນຊັບສິນ ຂອງນາຍທຶນ ມາເປັນຂອງລັດນັ້ນ ມັນເກີດມາຈາກຄວາມ ຕ້ອງການ ຢ່າງນອກຕົວ ໃນການຂະຫຍາຍການຜະລິດ ຂະຫນາດ

ໃຫຍ່, ຮຽກຮ້ອງໃຫ້ມີການວາງແຜນ ແລະການຈັດໃຫ້ເປັນລະບຽບແບບລວມສູນ. ການປະຕິວັດ ສັງຄົມນິຍົມ ໄດ້ແກ້ໄຂ ຂໍ້ຂັດແຍ້ງພື້ນຖານ ຂອງສັງຄົມນາຍທຶນ - ຄືລະຫວ່າງ ລັກສະນະການຜະລິດ ແບບລວມໝູ່ ແລະຮູບການກອບໂກຍແບບເອກະຊົນ. ສະນັ້ນ ການປະຕິວັດ ຂອງຊົນຊັ້ນກຳມາຊີບ ແລະການເຮັດໃຫ້ພາຫະນະ ການຜະລິດເປັນຂອງລວມໝູ່ ແບບສັງຄົມນິຍົມຈຶ່ງເປັນເງື່ອນໄຂອັນຕົ້ນຕໍທີ່ເໝາະສົມ ຕໍ່ຄວາມຕ້ອງການ ທາງດ້ານເສດຖະກິດ.

ການໂອນເອົາໂຮງຈັກໂຮງງານ ມາເປັນຂອງລັດນັ້ນແມ່ນພາຫະນະ ອັນເຂັ້ມງວດ ທີ່ສຸດ ທີ່ຕັດຂາດກັບການກໍ່ວິນາດທາງເສດຖະກິດ ຈາກຝ່າຍນາຍທຶນ ແລະເປັນການຊຸກຍູ້ການຂະຫຍາຍການຜະລິດ ເພື່ອສິດຜົນປະໂຫຍດ ຂອງຊົນຊັ້ນ ຜູ້ອອກແຮງງານ. ການໂອນເອົາໂຮງຈັກໂຮງງານ ມາເປັນຂອງລັດນັ້ນ ມັນມີການພົວພັນ ຢ່າງສະໜິດແໜ້ນ ກັບການໂອນເອົາທະນາຄານ, ດິນດອນຕອນຫຍ້າ, ແລະວັດຖຸ ອື່ນໆອີກທີ່ເປັນຊັບສິນສ່ວນຕົວນັ້ນ ມາເປັນຂອງລັດ, ເພາະວ່າຖ້າຫາກບໍ່ສາມາດ ປະຕິບັດມາດຕາການຄືບຊຸດດັ່ງກ່າວໄດ້ລັດຊົນຊັ້ນກຳມາຊີບ ກໍຈະບໍ່ສາມາດຮັບປະກັນ ການກວດກາ ດ້ານເສດຖະກິດໄດ້.

ຄວາມສຳຄັນຂອງການຕີລາຄາອັນຖືກຕ້ອງ ໃນການໂອນເອົາຊັບສິນນາຍທຶນ ມາເປັນຂອງລັດນັ້ນ, ລັດຊົນຊັ້ນກຳມາຊີບ ໄດ້ເອົາໃຈໃສ່ທີ່ສຸດ ຕໍ່ບັນຫາການຈັດຕັ້ງຂອງມັນ ເຊັ່ນບໍ່

ແມ່ນ ພຽງແຕ່ປາກຍາດເອົາຈຸ້ນສິນນາຍທຶນ ມາເປັນຂອງລັດ ອອກຈາກເງື່ອນມືຂອງນາຍທຶນເທົ່ານັ້ນແຕ່ຍັງຕ້ອງຈັດຕັ້ງການ ຜະລິດຮັບໃຊ້ສັງຄົມ ໂດຍເຮັດໃຫ້ເປັນແຜນການລັດທົ່ວໝົດ ການເປັນລະບົບເອກະພາບ; ການກຳນົດເວລາໂອນເອົາ ຈຸ້ນສິນມາເປັນຂອງລັດນັ້ນມັນມີຄວາມໝາຍສຳຄັນ. ບັນຫານັ້ນ ວາງອອກວ່າມັນຈະຕ້ອງປະຕິບັດການໂອນເອົາຈຸ້ນສິນມາເປັນ ຂອງລັດໃນກຳນົດເວລາອັນສັ້ນໆໃຫ້ສຳເລັດ. ເພາະທຸກ ການ ຈຸກຈ່າໃນບັນຫານີ້ມັນຈະສັບຊ້ອນຜົນຮ້າຍທາງດ້ານເສດຖະກິດ ໄວ້. ຈັງຫວະຂອງການໂອນຈຸ້ນສິນມາເປັນຂອງລັດນັ້ນຈະຕ້ອງ ສອດຄ່ອງກັບລະດັບຂອງວຽກງານການຈັດຕັ້ງ. ເພາະວ່າໄລ ຍະທີ່ຜ່ານມາລະຫວ່າງດຳລັດກົດໝາຍໃນຂົງເຂດ ການໂອນ ຈຸ້ນສິນມາເປັນຂອງລັດ ແລະຄວາມສາມາດໃນການກະ ກຽມ ການຈັດຕັ້ງນັ້ນ ອາດນຳໄປສູ່ການບໍ່ເຊື່ອຖືແນວຄິດທີ່ເຮັດໃຫ້ ຈຸ້ນສິນຂອງນາຍທຶນ ມາເປັນຂອງລັດໄດ້. ດ້ວຍເຫດນັ້ນ ໃນ ລະດູໃບໄມ້ປົ່ງ ຂອງປີ ໑໙໑໘ ເມື່ອເພິ່ນເຫັນວ່າ ມີການຈຸກ ຈ່າ ໃນວຽກງານດັ່ງກ່າວນັ້ນ ທ່ານ ວ. ອີ. ເລນິນ ໄດ້ ຂຽນໄວ້ວ່າ, ໃນຂົງເຂດການກໍ່ສ້າງເສດຖະກິດ ສັງຄົມນິຍົມ ນັ້ນ "ວຽກງານໃນການຈັດຕັ້ງ ການຂຶ້ນທະບຽນ ແລະການ - ກວດກາ ຈົນຈຸ້ນກ້ຳມາຈຶ່ງຂອງພວກເຮົາ ... ຍັງຫຼ້າຫຼັງ ວຽກງານຂອງພວກກອບໂກຍຍັງຢູ່. ຖ້າຫາກ ພວກເຮົາຫາກ ສຸມທຸກເຫື່ອແຮງຂອງພວກເຮົາ ໃນເວລານີ້ ໃສ່ວຽກ ງານ ການຈັດຕັ້ງ ການຂຶ້ນທະບຽນ ແລະການກວດການັ້ນ ພວກ

ເຮົາຈະຮັບໄຊຊະນະໃນທຸກຂັ້ນ ໃນການຕ້ານກັບພວກ ນາຍທຶນຂອງພວກເຮົາ".(ວ.ອີ.ເລນິນ.ປະມວນບົດນິພົນ ສະບັບສົມບູນ, ເຫລັ້ມທີ ໓໕, ໜ້າ ໑໗໗).

ໃນ ໔-໕ ເດືອນທຳອິດ ຫລັງຈາກມະຫາປະຕິວັດ ສັງຄົມນິຍົມ ເດືອນຕຸລາ ສຳເລັດລົງແລ້ວ ການໂອນເອົາຊັບສິນມາເປັນຂອງລັດ ແມ່ນໄດ້ດຳເນີນໄປ ໃນສະເພາະບັນດາ ໂຮງຈັກໂຮງງານ ອຸດສາຫະກຳໜັກ ຜູກຂາດທີ່ຢູ່ໃນກຳມື ຂອງນາຍທຶນ ຊຶ່ງໃນເວລານັ້ນ ພວກນາຍທຶນດັງກ່າວ ກຳລັງກະກຽມ ຈະເຮັດການກໍ່ວິນາສະກຳ ທາງດ້ານເສດຖະກິດຢ່າງເປີດເຜີຍ. ເລີ່ມແຕ່ລະດູບານໃໝ່ ຂອງປີ ໑໙໑໘ ເປັນຕົ້ນມາ ການໂອນເອົາຊັບສິນມາເປັນຂອງລັດນັ້ນໄດ້ດຳເນີນໄປບໍ່ພຽງແຕ່ ຢູ່ບາງໂຮງຈັກໂຮງງານເທົ່ານັ້ນ ແຕ່ມັນກໍໄດ້ ດຳເນີນໄປ ຢູ່ໃນໝູ່ໂຮງຈັກໂຮງງານ ແລະຂະແໜງການ ຜະລິດອີກດ້ວຍ.

ໃນເວລານັ້ນ ເພິ່ນໄດ້ວາງບັນຫາອອກວ່າໝວດໂຮງງານຊະນິດໃດ ຫລືຂະແໜງການຜະລິດຊະນິດໃດ,ທີ່ຈຳເປັນຕ້ອງໂອນມາເປັນຂອງລັດ, ກ່ຽວກັບບັນຫານີ້ ເພິ່ນໄດ້ອີງໃສ່ - ຄວາມສຳຄັນສອງຢ່າງຄື: ຄວາມສຳຄັນຂອງໂຮງງານ ທີ່ຖືກໂອນມາເປັນຂອງລັດ ຫລືຂະແໜງອຸດສາຫະກຳເພື່ອຈະເອົາມາເປັນຂອງລັດ ແລະລະດັບຂອງການກະກຽມ ເພື່ອຈະເຮັດໃຫ້ເປັນຂອງສ່ວນລວມ.ສະນັ້ນໃນເບື້ອງຕົ້ນກ່ອນອື່ນໝົດເພິ່ນຈຶ່ງໂອນເອົາບັນດາຂະແໜງອຸດສາຫະກຳ ເຊັ່ນ: ຂະແໜງ

ໂລຫະກຳ, ອຸດສາຫະກຳປຸງແຕ່ງໂລຫະ, ອຸດສາຫະກຳກົນຈັກ, ອຸດສາຫະກຳເຄມີ, ອຸດສາຫະກຳນ້ຳມັນເຊື້ອເພິງ, ອຸດສາຫະກຳຕ່ຳແຜ່ນ. ນອກຈາກຂະແໜງອຸດສາຫະກຳ ທີ່ກ່າວຂ້າງເທິງນີ້ແລ້ວ ເພິ່ນຍັງໄດ້ໂອນເອົາບາງໂຮງງານ ທີ່ຖືວ່າເປັນໂຮງງານທີ່ສຳຄັນ ຊະນິດດຽວ ຫລືທີ່ເຫັນວ່າ ມີຄຸນຄ່າພິເສດສະເພາະລັດ.

ກ່ອນການປະຕິວັດ ເດືອນຕຸລາ ກໍມີຫລາຍຂະແໜງອຸດສາຫະກຳ ທີ່ມີເງື່ອນໄຂອັນຈຳເປັນ ທາງດ້ານວັດຖຸ, ເພື່ອຈະເຮັດການຜະລິດ ຮັບໃຊ້ສ່ວນລວມໄດ້ ເຊັ່ນ: ອຸດສາຫະກຳ-ນ້ຳມັນເຊື້ອເພິງ ອຸດສາຫະກຳນ້ຳຕານ, ອຸດສາຫະກຳ ກົນຈັກ, ອຸດສາຫະກຳຢາງ ແລະອື່ນໆອີກດ້ວຍ. ໃນບັນດາຂະແໜງອຸດສາຫະກຳດັ່ງກ່າວ ໄດ້ຖືກຈັດຕັ້ງການຜູກຂາດ ຂະໜາດໃຫຍ່ ທີ່ມີກົງຈັກຄຸ້ມຄອງຈັດຫາ ແລະຈຳໜ່າຍ ອັນແໜ້ນໜາຢູ່ແລ້ວ. ນອກຈາກນັ້ນອີກ, ເພື່ອສ້າງເງື່ອນໄຂອັນເໝາະສົມໃນການໂອນເອົາບັນດາຂະແໜງອຸດສາຫະກຳມາເປັນຂອງລັດນັ້ນ, ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ໃຊ້ວິທີການເຕົ້າໂຮມ ໂຮງຈັກໂຮງງານເຂົ້າກັນ ລ່ວງໜ້າກ່ອນແລ້ວ.

ໂດຍອີງໃສ່ທ່າທີດັ່ງກ່າວ ສະພາເສດຖະກິດແຫ່ງຊາດ ສູງສຸດ ໄດ້ມີການເຈລະຈາ ກັບນາຍທຶນໃຫຍ່ ເຊັ່ນ ເມເຊລະສະກີ ແລະກັບບັນດາຜູ້ຕາງໜ້າກຸ່ມການເງິນ ຂອງສະຕາເຄເຢັບ ກ່ຽວກັບການຈັດຕັ້ງ ສະຫະອຸດສາຫະກຳ ຜະລິດກົນຈັກ

ແລະໂລຫະ ໂດຍມີການສົມທົບກັບທຶນເອກະຊົນ. ອົງຕາມການຢັ້ງຢືນຂອງ ວ.ປ. ມີລູຕິນ ການທີ່ສະພາເສດຖະກິດແຫ່ງ - ຊາດສູງສຸດ ໄດ້ສຶກສາແຜນການ ຂອງເມເຊລະສະກີ້ນແມ່ນຊ່ອງທາງອັນໜຶ່ງທໍ່ມັນເພື່ອຊຸ້ມຊູກໍ່ສ້າງສະຫະອຸດສາຫະກຳຜະລິດກົນຈັກ ແລະໂລຫະ ຊຶ່ງພາຍຫລັງມາມັນໄດ້ອຳນວຍຄວາມສະດວກ ໃຫ້ແກ່ການໂອນເອົາ ທຸກໂຮງຈັກໂຮງງານ ຂອງຂະແໜງອຸດສາຫະກຳດັ່ງກ່າວ ມາເປັນຂອງລັດ.

ລັກສະນະສຳຄັນ ຈຳນວນໜຶ່ງ ໃນການແກ້ໄຂບັນຫາການໂອນເອົາຊັບສິນຂອງນາຍທຶນມາເປັນຂອງລັດນັ້ນມັນແມ່ນການຈັດຂະບວນການເຮັດໃຫ້ເປັນຂອງສ່ວນລວມ ໃນບັນດາພາຫະນະຕົ້ນຕໍ ຂອງການຜະລິດ. ໃນທ້າຍປີ ໑໙໑໗ ແລະ ຕົ້ນປີ ໑໙໑໘ ນັ້ນ ການໂອນໂຮງຈັກໂຮງງານ ຂອງພວກນາຍທຶນ-ມາເປັນຂອງລັດນັ້ນ ແມ່ນອົງການສູນກາງ ແລະ ທັງອົງການປົກຄອງ ແລະອົງການເສດຖະກິດທ້ອງຖິ່ນ ເປັນຜູ້ຮັບຜິດຊອບ. ນອກຈາກສະພາ ລັດຖະມົນຕີປະຊາຊົນ ແຫ່ງສະຫະພັນສາທາລະນະລັດ ສັງຄົມນິຍົມໂຊວຽດລັດເຊຍ ແລະສະພາ ເສດຖະກິດແຫ່ງຊາດສູງສຸດ ທີ່ມີສິດທາງດ້ານກົດໝາຍ ໃນການ ດຳເນີນ ເຮັດໃຫ້ຊັບສິນຂອງນາຍທຶນ ເປັນຂອງສ່ວນລວມ ແລ້ວນັ້ນ ກໍຍັງມີບັນດາສະພາໂຊວຽດທ້ອງຖິ່ນ ຄື: ສະພາໂຊວຽດເຂດ ແລະສະພາໂຊວຽດອະນຸແຂວງ, ສະພາເສດຖະກິດ - ແຫ່ງຊາດພາກ, ແຂວງແລະເມືອງ ແລະຮອດບາງກອງປະຊຸມໃຫຍ່ ຂອງຄະນະກຳມະການຊ່ວຍເຫລືອ ຜູ້ທຸກຍາກຂອງອະນຸ

ແຂວງກໍມີຫນ້າທີ່ປະຕິບັດໄດ້ເຊັ່ນດຽວກັນ. ຢູ່ບາງພາກສ່ວນໄກຂອງປະເທດ (ເຊັ່ນ: ຊູລານ, ອາຊີພາກກາງ) ອົງການໂຊວຽດສູນກາງ ແລະທ້ອງຖິ່ນກໍໄດ້ມີບົດບາດອັນໃຫຍ່ຫລວງ ໃນວຽກງານດັ່ງກ່າວ. ຄະນະປະທານຂອງສະພາ ເສດຖະ ກິດແຫ່ງຊາດສູງສຸດ ໄດ້ຫ້າມຢ່າງເດັດຂາດ ຕໍ່ການກະທຳ ໂດຍລຳພັງຂອງຕົນໃນວຽກງານໂອນເອົາຊັບສິນມາເປັນຂອງລັດຢູ່ທ້ອງຖິ່ນນັ້ນ, ກໍເນື່ອງຈາກວ່າ ສ່ວນມາກບັນດາອົງການທ້ອງຖິ່ນ ບໍ່ໄດ້ຄຳນຶງເຖິງຄວາມຮັບຜິດຊອບຂອງຕົນ ໃນເວລາປະຕິບັດວຽກງານໂອນຊັບສິນດັ່ງກ່າວເຊັ່ນ: ຕໍ່ບັນດາ ໂຮງງານທີ່ໂອນມາເປັນຂອງລັດແລ້ວ ມັນຮຽກຮ້ອງໃຫ້ຮັບປະກັນ ວັດຖຸດິບ ນ້ຳມັນເຊື້ອເພີງ, ກຳລັງແຮງງານ ພາຫະນະດ້ານການເງິນ, ຮັບປະກັນການສົ່ງຈ່ອງເປັນຕົ້ນ ຊຶ່ງຢູ່ທ້ອງຖິ່ນ ບັນຫາດັ່ງກ່າວ ບໍ່ສາມາດແກ້ໄຂ ດ້ວຍຕົນເອງໄດ້. ເວລານັ້ນອົງການທ້ອງຖິ່ນ ກໍຮ້ອງຂໍຄວາມຊ່ວຍເຫລືອ ຈາກອົງການ ເສດຖະກິດສູນກາງ, ແຕ່ວ່າ ໃນໄລຍະຫົວລ້ຽວຫົວຕໍ່ນັ້ນ ສະພາເສດຖະກິດແຫ່ງຊາດສູງສຸດ ກໍບໍ່ມີພາຫະນະພຽງພໍ ເພື່ອຕອບສະຫນອງກັບ ຄວາມຮຽກຮ້ອງຕ້ອງການ ທັງຫມົດໄດ້.

ສະນັ້ນ ນອກຈາກການຕົກລົງ ຂອງສພາເສດຖະກິດແຫ່ງຊາດສູງສຸດແລ້ວ ກົມກອງຫລືສະຖາບັນໃດຫນຶ່ງ ບໍ່ມີສິດ ປະຕິບັດວຽກງານ ໂອນເອົາໂຮງຈັກໂຮງງານ ຂອງນາຍທຶນ ມາເປັນຂອງລັດ ຢ່າງເດັດຂາດ. ບັນດາກົມກອງຫລືສະຖາບັນດັ່ງກ່າວ ມີສິດພຽງແຕ່ ສະເຫນີຄຳເຫັນ ກ່ຽວກັບຄວາມຈຳເປັນ

ໃນການໂອນຈັບສິນຕໍ່ສະພາລັດຖະນິນຕິປະຊາຊົນແລະຕໍ່ສະພາ ເສດຖະກິດແຫ່ງຊາດສູງສຸດເທົ່ານັ້ນ.

ການຕໍ່ສູ້ຂອງສະພາເສດຖະກິດແຫ່ງຊາດສູງສຸດ ເພື່ອເຮັດໃຫ້ມີການປະຕິບັດຫລັກການ ທາງດ້ານກົດໝາຍຢ່າງເຄັ່ງຄັດໃນວຽກງານໂອນຈັບສິນນັ້ນ ເຮັດໃຫ້ຂະບວນການໂອນຈັບສິນມີແຜນການ; ເພິ່ນໄດ້ສຶກສອນໃຫ້ພະນັກງານ ໃນກົງຈັກເສດຖະກິດໂຊວຽດ ຮູ້ນັບຖື ລະບຽບກົດໝາຍ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງລັດ.

ການໂອນເອົາໂຮງຈັກໂຮງງານ ຂອງພວກນາຍທຶນ ມາເປັນຂອງລັດນັ້ນ ໄດ້ນຳມາປະຕິບັດ ໂດຍມີການກະກຽມຢ່າງຮອບດ້ານ. ມີແຕ່ໃນບາງກໍລະນີພິເສດເທົ່ານັ້ນ,ການໂອນຈັບສິນດັ່ງກ່າວ ໄດ້ປະຕິບັດແບບກະທັນຫັນເຈັ່ນ, ໃນກໍລະນີການໂຕນໜີຂອງເຈົ້າຂອງໂຮງງານ, ການກໍ່ວິນາດສະກຳຢ່າງເປີດເຜີຍຂອງເຂົາ, ການພົວພັນກັບການປອງຮ້າຍຕ້ານກັບການປະຕິວັດ, ແບບຕໍ່ສູ້ປະກອບອາວຸດ ຕ້ານກັບອຳນາດໂຊວຽດ ແລະໃນກໍລະນີ ກິດຈະການຂອງໂຮງງານ ຕົກຢູ່ໃນສະພາບໄພພິບັດ, ແຕ່ຢ່າງໃດກໍຕາມ ເວົ້າລວມການໂອນຈັບສິນ ມາເປັນຂອງລັດນັ້ນ ແມ່ນມີລັກສະນະການຈັດຕັ້ງ ແລະມີແຜນການຄັກແນ່.

ຕາມທຳມະດາແລ້ວ ສະພາເສດຖະກິດແຫ່ງຊາດສູງສຸດ - ເປັນຜູ້ກຳກັບກະກຽມ ການໂອນເອົາຈັບສິນນັ້ນ ໂດຍໃຊ້ສາມທິດທາງດັ່ງນີ້:

-ທິດທາງທີໜຶ່ງ: ສຶກສາທ່າທີຂອງໝວດ ປະສານງານກຳມະກອນຂອງໂຮງງານ ຕໍ່ວຽກງານໂອນເອົາໂຮງງານ ມາເປັນຂອງລັດນັ້ນ ເພື່ອປຸກລະດົມທຸກກຳລັງ ໃສ່ການແກ້ໄຂບັນຫາດັ່ງກ່າວ ໃຫ້ໄດ້ຮັບຜົນດີ;

-ທິດທາງທີສອງ: ສຶກສາຄົ້ນຄ້ວາສະພາບເຕັກນິກແລະການເງິນ ຂອງໂຮງງານ ຢ່າງລະອຽດ;

-ທິດທາງທີສາມ: ຈັດຕັ້ງອົງການຄຸ້ມຄອງໂຮງງານ ຂຶ້ນໃໝ່, ທີ່ສາມາດສືບຕໍ່ວຽກງານ ແທນຄະນະບໍລິຫານ ເກົ່າຂອງໂຮງງານດັ່ງກ່າວ ທີ່ມາເປັນຂອງລັດ.

ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ປະຕິບັດ ການກະກຽມ ແລະການໂອນເອົາໂຮງງານມາເປັນຂອງລັດນັ້ນໂດຍມີການພົວພັນ ຢ່າງໃກ້ຊິດ ກັບອົງການກຳມະບານ ແລະໝວດປະສານງານກຳມະກອນ ຂອງໂຮງງານດັ່ງກ່າວ ຄື ເພິ່ນໄດ້ຈັດຕັ້ງກອງປະຊຸມພິເສດຂຶ້ນ ແລະປຶກສາຫາລື ກັບຄະນະ ຜູ້ຕາງໜ້າຂອງໂຮງງານ ທີ່ພວມໂອນເອົານັ້ນ, ຈັດຕັ້ງຊຸມນຸມກຳມະກອນ.

ຕໍ່ບັນດາຜູ້ຕາງໜ້າຂອງໂຮງງານ ຜະລິດໂລຫະ ທີ່ເຂົ້າຮ່ວມໃນກອງປະຊຸມຂອງຕົນ ທ່ານ ວ.ອີ. ເລນິນ ໄດ້ສົ່ງຈົດໝາຍພິເສດໄປໃຫ້ກອງປະຊຸມ ໃນວັນທີ ໑໗ ພຶດສະພາ-໑໙໑໘, ຊຶ່ງໃນຈົດໝາຍດັ່ງກ່າວນັ້ນ ເພິ່ນໄດ້ສະໜັບ ສະໜູນ ຈິດໃຈການໂອນເອົາອຸດສາຫະກຳ ຜະລິດເຫລັກ ຂະໜາດໃຫຍ່ ໃຫ້ແລ້ວໄວ ແລະກໍໄດ້ຢ້ຳອີກວ່າ: ແນວຄິດດັ່ງ

ກ່າວນີ້ ຈະໄດ້ຮັບການສະໜັບສະໜູນ ຢ່າງເຕັມປ່ຽມໃນສະ
ພາລັດຖະນິຕິປະຊາຊົນ" ຖ້າແມ່ນວ່າກອງປະຊຸມ ຫາກສຸມທຸກ
ເຫື່ອແຮງຂອງຕົນ ເຮັດໃຫ້ການຈັດຕັ້ງ ວຽກງານ ເປັນ
ແຜນການ, ເຮັດໃຫ້ມີການຈັດຕັ້ງວຽກງານ ແບບສະຫງ່າຜ່າ
ເຜີຍ ແລະຍົກສູງສະມັດທະພາບຂອງການຜະລິດຂອງເຂົາຂຶ້ນ
ໄດ້". (ວ.ອີ. ເລນິນ.ປະມວນບົດນິພົນ ສະບັບ ສົມບູນ,
ເຫລັ້ມທີ ໓໖, ໜ້າ ໓໔໗.) ເນື້ອໃນສຳຄັນຂອງຈົດໝາຍ
ຂອງທ່ານ ວ.ອີ. ເລນິນ ແມ່ນເນັ້ນໃສ່: ເຮັດໃຫ້ມີການພົວ
ພັນ ແບບມິດສະຫາຍ, ມີການຊ່ວຍເຫລືອເຊິ່ງກັນແລະກັນ ,
ແລະການຮ່ວມໄມ້ຮ່ວມມື ຢູ່ໃນບັນດາໂຮງງານຂອງລັດ,-ໃຫ້
ບັນດາກຳມະກອນ ຂອງໂຮງຈັກໂຮງງານ ທີ່ມີການຈັດ ຕັ້ງ
ການຜະລິດ ອັນສູງຢູ່ແລ້ວນັ້ນ ຫລືຜູ້ທີ່ມີຄວາມຊຳນິຊຳນານໃນ
ວຽກງານ ບັນຊາການຜະລິດ ຂະໜາດໃຫຍ່ກ່ອນໝູ່ນັ້ນ ຊຸບ
ຊ້ອນລົງໄປສູ່ບັນດາໂຮງງານ ທີ່ການຈັດຕັ້ງແຮງງານຍັງຢູ່ໃນ
ລະດັບອັນຕ່ຳກ່ວານັ້ນ. (ວ.ອີ. ເລນິນ, ປະມວນບົດນິພົນ-
ສະບັບສົມບູນ, ເຫຼັ້ມທີ ໓໖ ໜ້າ ໓໔໗-໓໔໘.)ຄຳສະເໜີ
ຂອງ ທ່ານ ວ. ອີ. ເລນິນ ນັ້ນ ກໍໄດ້ຮັບຮອງເອົາ ຢູ່ໃນ
ກອງປະຊຸມດັ່ງກ່າວ. ໃນມະຕິຂອງກອງປະຊຸມດັ່ງກ່າວບັນດາ
ຜູ້ແທນ ໄດ້ຜັດປ່ຽນກັນອອກຄຳເຫັນ ຕໍ່ບັນຫາການໂອນເອົາ-
ໂຮງຈັກໂຮງງານ ມາເປັນຂອງລັດໃຫ້ໄວ ແລະ ຈັດຕັ້ງການ
ຄຸ້ມຄອງບັນດາໂຮງງານດັ່ງກ່າວ ແບບສົມທົບກັນ ໂດຍເຂົາ
ເອງ.

ການປະຕິບັດຄຳແນະນຳ ຂອງທ່ານເລນິນ ໃຫ້ເປັນຈິງນັ້ນ ມັນສະແດງອອກຢູ່ບ່ອນວ່າ ຫລັງຈາກນັ້ນມາ ປະມານ ຫນຶ່ງ ເດືອນ ເພິ່ນໄດ້ສຳເລັດການໂອນເອົາ ກຸ່ມໂຮງງານ ຜະລິດ ກົນຈັກ ຂອງເຂດ ໂຊມໂມໂວ-ໂກໂລມນາ. ໂດຍອີງໃສ່ພື້ນ ຖານ ຂອງກຸ່ມໂຮງງານດັ່ງກ່າວ ເພິ່ນໄດ້ຈັດຕັ້ງ ສະຫະໂຮງ ງານ ຜະລິດກົນຈັກ "ໂຊມໂມໂວ-ໂກໂລມນາ" ຂຶ້ນ.

ແຕ່ວ່າ ຄວາມໝາຍຂອງຈົດໝາຍ ຂອງທ່ານເລນິນ ໄດ້ ແຜ່ຂະຫຍາຍອອກກາຍຂອບເຂດ ຂອງຂະແໜງອຸດສາຫະກຳ ອັນດຽວ ນັ້ນໄປອີກ. ແນວຄິດດັ່ງກ່າວ ໄດ້ກາຍເປັນ ພື້ນ ຖານ ໃນພາກປະຕິບັດຕົວຈິງ ໃຫ້ແກ່ສະພາເສດຖະກິດ ແຫ່ງ ຊາດສູງສຸດ ໃນວຽກງານໂອນອຸດສາຫະກຳ ມາເປັນຂອງລັດ.

ໃນໄລຍະການໂອນເອົາຊັບສິນ ຂອງພວກນາຍທຶນມາເປັນ ຂອງລັດນັ້ນ ມີການຍຶດຊັບສິນ, ການເກັບເກນຊັບ, ການກັກ ຊັບ. ລັດຖະບານໂຊວຽດ ໄດ້ອອກຂໍ້ດຳລັດພິເສດ ກ່ຽວກັບ ການຍຸບເລີກສິດສືບທອດມໍລະດົກ ຊັບສິນເອກະຊົນ, ປະກາດ ວ່າ ຊັບສິນທີ່ເຈົ້າຂອງໄດ້ໂຕນຫນີນັ້ນ ເປັນກຳມະສິດຂອງ ລັດ .

ໃນບັນດາມາດຕາການທີ່ກ່າວມາຂ້າງບົນນັ້ນການຍຶດຊັບມາ ເປັນຂອງລັດມີຄວາມໝາຍພິເສດທີ່ສຸດ,ມາດຕາການດັ່ງກ່າວ ແມ່ນການຍາດຊັບສິນອອກຈາກກຳມືຂອງນາຍທຶນມາຮັບໃຊ້ລັດ ໂຊວຽດ ໂດຍການບັງຄັບ ແລະບໍ່ຈຳເປັນຕ້ອງສົ່ງຄືນ ອີກ . ການຍຶດຊັບສິນຍັງເປັນການທຳລາຍຖານະທາງດ້ານ ເສດຖະ

ກິດຂອງພວກນາຍທຶນລັດເຊຍ ແລະຈຳກັດຄວາມອາດສາມາດ ຂອງພວກນາຍທຶນ ບໍ່ໃຫ້ເຂົາຊ່ວຍພວກຕ້ານການປະຕິວັດທາງດ້ານວັດຖຸອຸປະກອນ. ນອກຈາກນັ້ນ ການຍຶດຊັບສິນຍັງໄດ້ຍົກເວັ້ນ ແກ່ຊົນຊັ້ນກຳມະກອນ ແລະແກ່ຊາວນາຜູ້ອອກແຮງງານຈ່າຍທົດແທນຊັບສິນຂອງນາຍທຶນທີ່ຖືກໂອນມາເປັນຂອງລັດນັ້ນ. ໃນໄລຍະສອງ-ສາມເດືອນທຳອິດ ຫລັງຈາກມະຫາ ປະຕິວັດສັງຄົມນິຍົມ ເດືອນຕຸລາ ລັດຖະບານໂຊວຽດ ໄດ້ນຳໃຊ້ມາດຕາການດັ່ງກ່າວ ຢ່າງມີຜົນດີທີ່ສຸດ. ສາຍເຫດຕົ້ນຕໍຂອງການຍຶດຊັບສິນມີດັ່ງນີ້: ການປະຕິເສດຂອງເຈົ້າຂອງໂຮງງານເກົ່າທີ່ບໍ່ຍອມຮັບຮູ້ດຳລັດກ່ຽວກັບການນຳໃຊ້ ການກວດກາກຳມະກອນ; ບໍ່ຢາກສືບຕໍ່ການຜະລິດ; ສ້າງການຂັດແຍ້ງກັບບັນດາກຳມະກອນ; ການໂຕນໜີ ຂອງເຈົ້າຂອງໂຮງງານ.

ການເກັບເກນກໍໄດ້ນຳປະຕິບັດ ຢ່າງກວ້າງຂວາງ ເຊັ່ນດຽວກັນ. ມາດຕາການອັນນີ້ມັນແຕກຕ່າງກັບການຍຶດຊັບສິນຢູ່ບ່ອນວ່າ ເພິ່ນສະເໜີຈ່າຍທົດແທນ ໃຫ້ແກ່ຊັບສິນ ທີ່ຖືກໂອນມາເປັນຂອງລັດນັ້ນ. ການເກັບເກນນີ້ ໄດ້ນຳໃຊ້ໃນກໍລະນີ-ເວລາທີ່ຈຳເປັນ ຢາກຈຳໜ່າຍວັດຖຸດິບ, ເຊື້ອເພີງ, ວັດຖຸເຄື່ອງ ສຳເລັດຮູບ ແລະບັນດາວັດຖຸ ທີ່ມີມູນຄ່າອື່ນໆອີກໃຫ້ແກ່ລະຫວ່າງໂຮງງານເອກະຊົນ ທີ່ມີການກວດກາຈາກຝ່າຍລັດຫຼືລະຫວ່າງໂຮງຈັກໂຮງງານລັດກັບເອກະຊົນ. ມາດຕາການອັນນີ້ກໍໄດ້ນຳໃຊ້ ເພື່ອກຳຈັດການລັກໂລບວັດຖຸດິບແລະຜະລິດຕະພັນອີກ. ການເກັບເກນຊັບສິນກໍໄດ້ໃຊ້ໃນເງື່ອນໄຂທີ່ມີຄວາມ

ຈຳເປັນ ທີ່ຈຳຕ້ອງຈັດວາງໂຮງງານອຸດສາຫະກຳ ໃຫ້ຖືກສະຖານທີ່ ທີ່ເໝາະສົມເຊັ່ນ: ໃນກໍລະນີເພິ່ນຢາກຍົກຍ້າຍໂຮງງານອຸດສາຫະກຳ ອອກຈາກແຂວງນີ້ ໄປສູ່ແຂວງໃໝ່. ໃນກໍລະນີນີ້ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ປະຕິບັດມາດຕາການ ເກັບເກນເອົາໂຮງງານດັ່ງກ່າວ ແລ້ວກໍຈຶ່ງປະຕິບັດການຍົກຍ້າຍໂຮງງານດັ່ງກ່າວ ໄປທ້ອນຕາມທີ່ເໝາະສົມ . ໃນກໍລະນີໃດກໍຕາມ ການເກັບເກນຊັບນີ້ ແມ່ນຖືກນຳປະຕິບັດໂດຍເຫດຜົນອັນຈຳເປັນ ທາງດ້ານເສດຖະກິດ.

ຂໍ້ດຳລັດຂອງຄະນະກຳມະການ ບໍລິຫານສູນກາງ ທົ່ວລັດເຊຍ ສະບັບລົງວັນທີ ໘ ທັນວາ ໑໙໑໗ ແມ່ນໄດ້ມອບສິດໃຫ້ແກ່ ສະພາເສດຖະກິດແຫ່ງຊາດສູງສຸດປະຕິບັດການຍຶດຊັບສິນແລະການເກັບເກນຊັບສິນ. ໃນເວລາເບື້ອງຕົ້ນຂອງການດຳລົງຄົງຕົວຂອງລັດຈົນຊຸ້ນກຳມາຊີບນັ້ນ, ນອກຈາກ ສະພາເສດຖະກິດແຫ່ງຊາດສູງສຸດທີ່ມີສິດປະຕິບັດການຍຶດຊັບສິນແລະການເກັບເກນຊັບສິນນັ້ນແລ້ວກໍຍັງມີຄະນະກຳມະການພິເສດທົ່ວລັດເຊຍ ຂອງການຕໍ່ສູ້ ກັບພວກຕ້ານການປະຕິວັດ;ກະຊວງ ປະຊາຊົນ ວ່າການສະບຽງອາຫານ; ສານປະຕິວັດ ແລະ ຕຸລາການ. ທີ່ພົວພັນກັບບັນຫານີ້, ການເກັບເກນຊັບ ແມ່ນໜ້າທີ່ສະເພາະຂອງສະພາເສດຖະກິດແຫ່ງຊາດສູງສຸດແລະກະຊວງສະບຽງອາຫານເທົ່ານັ້ນ.

ບັນດາອົງການທ້ອງຖິ່ນ ແລະກ່ອນອື່ນໝົດ ກໍແມ່ນ ທຸກສະພາເສດຖະກິດແຫ່ງຊາດຂັ້ນແຂວງ ແລະອະນຸແຂວງກໍມີສິດປະ

ຕິບັດການຍຶດແລະການເກັບເກນບັນດາວັດຖຸສິ່ງຂອງທີ່ມີຄຸນຄ່າ ຢູ່ໃນທ້ອງຖິ່ນຂອງຕົນ ເຊັ່ນດຽວກັນ. ແຕ່ບັນດາອົງການ ທ້ອງຖິ່ນດັ່ງກ່າວ ຕ້ອງແຈ້ງການເຄື່ອນໄຫວຂອງຕົນ ກ່ຽວກັບບັນຫານີ້ ໃຫ້ແກ່ພະແນກເສດຖະກິດແຫ່ງຊາດສູງສຸດ ທີ່ກ່ຽວຂ້ອງຊາບ. ການເຄື່ອນໄຫວຂອງທ້ອງຖິ່ນນັ້ນ ຈະຕ້ອງຫລີກເວັ້ນບໍ່ໃຫ້ຂັດກັບ ມາດຕາການລວມຂອງລັດໃນວຽກງານການຈັດຕັ້ງການຜະລິດ, ການຈັດຫາແລະການຈຳໜ່າຍຜະລິດຕະພັນ.

ຢູ່ໃນສະພາເສດຖະກິດແຫ່ງຊາດສູງສຸດ ແລະສະພາ ເສດຖະກິດແຫ່ງຊາດປະຈຳທ້ອງຖິ່ນເພິ່ນໄດ້ຈັດຕັ້ງພະແນກແລະຄະນະບໍລິຫານງານພິເສດຂຶ້ນເພື່ອກຳກັບສະເພາະວຽກງານການເກັບເກນແລະການປະຕິບັດລາຄາຊັບສິນ ທີ່ເກັບເກນມານັ້ນ. ຂໍ້ດຳລັດຂອງສະພາລັດຖະມົນຕີປະຊາຊົນ ສະບັບລົງວັນທີ ໑໖ ເມສາ ໑໙໒໐ ໄດ້ມີບົດບາດອັນສຳຄັນ ທີ່ເຮັດໃຫ້ການປະຕິບັດການເກັບເກນຊັບສິນ ໃຊ້ວິທີການອັນດຽວກັນ. ທຸກເຫດການຂອງການເກັບເກນຊັບຫລືການຍຶດຊັບສິນນັ້ນໄດ້ເຮັດເປັນລັດຖະບັນຍັດ ເຊິ່ງບົ່ງແຈ້ງເຖິງເຫດຜົນຂອງການກະທຳດັ່ງກ່າວ. ຊັບສົມບັດທີ່ເກັບເກນມານັ້ນ ໄດ້ຕີເປັນລາຄາຕາຍຕົວ. ຖ້າຫາກວ່າ ເຈົ້າຂອງຊັບສົມບັດດັ່ງກ່າວບໍ່ເຫັນພ້ອມກັບການປະຕີລາຄາ ຊັບສົມບັດດັ່ງກ່າວນັ້ນ ເພິ່ນກໍໄດ້ຈັດຕັ້ງ ຄະນະກຳມະການພິເສດຂຶ້ນ ທີ່ປະກອບດ້ວຍຜູ້ຕາງໜ້າ ອົງການຄວບຄຸມການເກັບເກນຊັບສິນ, ພະນັກງານຄະນະກຳມະການກວດກາຂອງກຳມະກອນ - ຊາວນາ, ແລະນັກວິຊາການ ຜູ້

ທີ່ໄດ້ຖືກແຕ່ງຕັ້ງ ໂດຍອີງການອຳນາດລັດທ້ອງຖິ່ນ.

ການກັກໂຮງຈັກໂຮງງານໄວ້ ກໍເປັນມາດຕາການກະກຽມ ສຳຄັນ ເພື່ອໂອນເອົາຊັບສົມບັດຂອງນາຍທຶນ ມາເປັນຂອງ ລັດ. ທັດສະນະທາງດ້ານກົດຫມາຍນັ້ນ ການກັກຊັບ – ແມ່ນ ການຈຳກັດຫລືການເກີດຫ້າມຊົ່ວຄາວ ບໍ່ໃຫ້ເຈົ້າຂອງ ຊັບສົມ ບັດ ມີສິດຕໍ່ຊັບສົມບັດຂອງເຂົາ ໂດຍມີລັດຖະບັດຍັດ ທີ່ກ່ຽວ ຂ້ອງເປັນພື້ນຖານ. ໃນກໍລະນີນີ້ ເຈົ້າຂອງຊັບສົມບັດ ຍັງຮັກ ສາກຳມະສິດ ພຽງໄວ້ຕໍ່ຊັບສົມບັດດັ່ງກ່າວ, ສ່ວນລັດນັ້ນ ໄດ້ ກຳຂອດການຄຸ້ມຄອງໂຮງງານແລະຈັດຕັ້ງຄະນະບໍລິຫານ ລັດ ຂຶ້ນ ຫລືປະຕິບັດກວດກາຕໍ່ການເຄື່ອນໄຫວ ຂອງຄະນະ ບໍລິ ຫານເກົ່າ ໂດຍຜ່ານຜູ້ຕາງຫນ້າຂອງຕົນ ທີ່ມີອຳນາດ ເຕັມ ເຂົ້າຮ່ວມຢູ່ໃນນັ້ນ. ເຫດຜົນທີ່ຮູ້ກັນທົ່ວໄປທີ່ໃຊ້ໃນການກັກຊັບ ນັ້ນ ມີດັ່ງນີ້: ການກໍ່ວິນາສະກຳ ໂດຍບັນດາເຈົ້າຂອງ ຊັບ ເກົ່າ; ການທີ່ເຈົ້າຂອງຊັບເກົ່າ ຂາດຄວາມສາມາດ ບັນຊາ ການຜະລິດ ໃນເງື່ອນໄຂເສດຖະກິດອັນໃຫມ່; ການໂຕນຫນີ ຂອງເຈົ້າຂອງ; ເປັນຫຸ້ນສິນໂຮງງານຕໍ່ລັດ; ການຜະລິດຜະ ລິດຕະພັນ ຊະນິດດຽວທີ່ສຳຄັນ; ການຂັດແຍ້ງລະຫວ່າງການ ປົກຄອງເກົ່າ ກັບກຳມະກອນ ທີ່ອາດມີຜົນສະທ້ອນ ຕໍ່ສະພາບ ການຜະລິດ.

ແຕ່ທຳອິດນັ້ນ ມີແຕ່ຄະນະປະທານ ຂອງສະພາເສດຖະກິດ ແຫ່ງຊາດສູງສຸດເທົ່ານັ້ນ ທີ່ມີສິດນຳໃຊ້ການກັກຊັບ. ຫລັງຈາກ ກອງປະຊຸມໃຫຍ່ ຂອງສະພາເສດຖະກິດແຫ່ງຊາດທົ່ວລັດເຊຍ

ຂັ້ວທີ I ເພິ່ນໄດ້ມອບສິດດັງກ່າວ ໃຫ້ແກ່ອົງການອຳນາດລັດທ້ອງຖິ່ນອີກ ແລະຕັ້ງແຕ່ເດືອນມິນາ ໑໙໑໘ ເປັນຕົ້ນມາການກັກຈຸບ ແມ່ນຫນ້າຂອງກົມໃຫຍ່ ຂອງສະພາເສດຖະກິດ ແຫ່ງຊາດສູງສຸດ.

ພວກນາຍທຶນແລະຜູ້ສະຫນັບສະຫນູນຂອງເຂົາ ໄດ້ກໍ່ການ-ຕ້ານການໂອນຈຸບສົມບັດ ມາເປັນຂອງລັດ ຢ່າງມີການປະທັດປະທານກັນ. ພວກນາຍທຶນລັດເຊຍ ແມ່ນບໍ່ຢາກຄິດເຖິງການຮ່ວມໄມ້ຮ່ວມມືກັບອຳນາດໂຊວຽດເພາະວ່າພວກເຂົາຫວັງວ່າຈະໂຄ່ນລົ້ມອຳນາດໂຊວຽດ. ພຶດຕິກຳນີ້ ແມ່ນທ່າການເມືອງຕົ້ນຕໍ ຂອງພວກນາຍທຶນ. ເຈົ້າຂອງໂຮງຈັກໂຮງງານ ປະຕິເສດຕໍ່ຂໍ້ດຳລັດ ຂອງອຳນາດໂຊວຽດ ກ່ຽວກັບການໂອນໂຮງຈັກໂຮງງານ ມາເປັນຂອງລັດ, ບໍ່ຍອມຢູ່ໃຕ້ການບັນຊາຂອງອົງການກວດກາກຳມະກອນ ແລະສະພາເສດຖະກິດແຫ່ງຊາດປະຈຳທ້ອງຖິ່ນ, ຕັ້ງຫນ້າລຸດຜ່ອນການຜະລິດລົງ, ປິດໂຮງງານ, ສົ່ງທຶນຮອນຂອງເຂົາໄປນອກປະເທດ ຫລືໄປເຂດໃດທີ່ມີຂະບວນການຕ້ານກັບການປະຕິວັດ. ແຕ່ວ່າ ສະພາບການການເມືອງ ພາຍໃນປະເທດ ແມ່ນນັບມື້ນັບມີທ່າດຸ່ນດ່ຽງຂຶ້ນ. ອຳນາດໂຊວຽດໄດ້ເຂັ້ມແຂງຂຶ້ນຢູ່ສູນກາງ ແລະກໍດີຢູ່ ທ້ອງຖິ່ນ. ພວກນາຍທຶນບໍ່ມີກຳລັງແຮງໃດ ເພື່ອຈະຕ້ານກັບ ມາດຕາການ ຂອງລັດຖະບານໂຊວຽດໄດ້ ໃນບັນຫາການ ໂອນເອົາໂຮງຈັກໂຮງງານ ມາເປັນຂອງລັດນັ້ນ, ພວກນາຍທຶນລັດເຊຍ ຈຶ່ງຫັນມາໂຄສະນາຕົວະຍົວະແລະນາບຂູ່ຂົ່ມຂູ່ກຳມະ-

ກອນ, ເອົາແນໃສ່ນ້າງການໂອນຈັບສິນ ມາເປັນຂອງລັດດັ່ງ ກ່າວ.

ແມ່ນວ່າທ່າມກາງ ສະພາບການທາງດ້ານການເມືອງແລະ ເສດຖະກິດຫຍຸ້ງຍາກ ແລະການຕໍ່ຕ້ານຢ່າງອ້ຽວຂອດ ຂອງ ພວກນາຍທຶນ ແລະພວກສະໜັບສະໜູນ ທາງດ້ານຈີນ ຈັ້ນ ຂອງເອົາພຽງໃດກໍຕາມສະພາເສດຖະກິດແຫ່ງຊາດສູງສຸດໄດ້ ປະຕິບັດການໂອນເອົາອຸດສາຫະກຳມາເປັນຂອງລັດໄດ້ ດ້ວຍ ຜົນສຳເລັດ ອັນງອກງາມທີ່ສຸດ. ເຖິງວັນທີ ໑ ເດືອນພະຈິກ ໑໙໔໐ ໃນຈຳນວນໂຮງງານ ຜິ໙໐໗ ແຫ່ງ ທີ່ຂຶ້ນທະບຽນໃນ ສະພາເສດຖະກິດແຫ່ງຊາດສູງສຸດນັ້ນ ມີຈຳນວນ ໔໕໔໗– ໂຮງງານ ໄດ້ຖືກມອບມາເປັນຂອງລັດ. ສະຫລຸບແລ້ວ ເຫັນ ວ່າ ບັນດາຈຳນວນໂຮງງານ ທີ່ເຂົ້າຢູ່ໃນກຳມືຂອງລັດມີເຖິງ ໖໕,໗% ຈຶ່ງແມ່ນບັນດາໂຮງງານອຸດສາຫະກຳ ທີ່ສຳຄັນທັງ ນັ້ນ. ໃນບັນດາໂຮງງານດັ່ງກ່າວມີກຳມະກອນເຖິງ ໘໘%. ບັນ ດາໂຮງຈັກ ແລະໂຮງງານຂະໜາດໃຫຍ່ທັງໝົດໄດ້ກັບມາຢູ່ ໃນກຳມືຂອງລັດແລ້ວ. ຖ້າເບິ່ງຕາມແຕ່ລະຂະແໜງອຸດສາຫະ ກຳບັນດາໂຮງງານທີ່ໂອນມາເປັນຂອງລັດນັ້ນໄດ້ມີອັດຕາສ່ວນ ສູງສົມຄວນເຊັ່ນໃນຂະແໜງການພິມໄດ້ໂອນມາເປັນຂອງລັດ ເຖິງ໑໐໐%ແລ້ວ, ສ່ວນຂະແໜງອຸດສາຫະກຳບໍ່ແຮ່ແລະ ການ ຂຸດຄົ້ນບໍ່ແຮ່ກໍເຖິງ໙໕,໕%ແລະອຸດສາຫະກຳເຄມີກໍເຖິງ໙໘,໕%

ໃນທ່າມກາງການໂອນເອົາຈັບສິນຂອງພວກນາຍທຶນ ມາ ເປັນຂອງລັດນັ້ນ ລັດຖະບານໂຊວຽດ ໄດ້ໃຊ້ມາດຕາ ການ

ອັນເດັດຂາດ ເພື່ອລຶບລ້າງການຜູກຂາດທາງດ້ານເສດຖະກິດ ອອກຈາກກອງທຶນຕ່າງດ້າວ. ໃນທ້າຍສະຕະວັດທີ XIX ພົນສະຫ້ອນຈາກການເມືອງ ຂອງພວກລັດຖະບານພະເຈົ້າຊາ ນັ້ນກອງທຶນຕ່າງດ້າວ ໄດ້ຄວບຄຸມຂອດສຳຄັນ ໃນເສດຖະ ກິດຂອງປະເທດລັດເຊຍ. ກ່ອນສົງຄາມໂລກຄັ້ງທີໜຶ່ງ ທຶນຫຸ້ນສ່ວນໃນອຸດສາຫະກຳ ຕົກເປັນຂອງຕ່າງດ້າວ ປະມານ ໕໐% ແລະຢູ່ໃນບາງຂະແໜງເຊັ່ນ: ອຸດສາຫະກຳເຕັກນິກ ໄຟຟ້າ ອຸດສາຫະກຳພະລັງງານໄຟຟ້າແລະອຸດສາຫະກຳຂົນສົ່ງ ດ້ວຍໄຟຟ້າ - ໘໔,໗% ຂອງທຶນຫຸ້ນສ່ວນທັງໝົດ ເປັນຂອງຕ່າງດ້າວ. ຫລັງຈາກມະຫາປະຕິວັດ ສັງຄົມນິຍົມ ເດືອນຕຸລາສຳເລັດລົງແລ້ວ ທຶນຕ່າງດ້າວ ໄດ້ຢູ່ໃນວົງເຄື່ອນໄຫວຂອງລະ-ບຽບຕຸລາການໂຊວຽດ. ການປະຕິບັດການກວດກາ ຂອງກຳມະກອນ,ການເກືອດຫ້າມການຕົກລົງເປັນໜັງສື, ຮັບຮູ້ເປັນທາງການ ແລະຈ່າຍເປີເຊັນ ແລະດອກເບັ້ຍຕາມເອກະສານດັ່ງກ່າວ ແລະການໃຊ້ວິທີການອື່ນໆ ຂອງລັດກຳມາຊີບຈຶ່ງສາມາດຄວບຄຸມການເຄື່ອນໄຫວ ຂອງກອງທຶນ ຕ່າງດ້າວໄດ້. ຍ້ອນປະຕິບັດມາດຕາການດັ່ງກ່າວ ການຮົ່ວໄຫລທຶນອອກ ສູ່ຕ່າງປະເທດ ຈຶ່ງຖືກຢຸດຕິລົງ.

ເນື່ອງຈາກມາດຕາການດັ່ງກ່າວ ມັນແຕະຕ້ອງເຖິງຜົນປະໂຫຍດ ຂອງພວກນາຍທຶນນັ້ນ, ລັດຖະບານຫລາຍປະເທດໄດ້ຊອກຫລາຍວິທີການ ເພື່ອບີບສາທາລະນະລັດໂຊວຽດ ໃນບັນຫາທີ່ກ່ຽວກັບຊັບສົມບັດຂອງຕ່າງດ້າວ. ໃນທ້າຍປີ ໑໙໑໗

ຫາຕົ້ນປີ ໑໙໑໘ ໃນເວລາການເຈລະຈາ ຂອງຜູ້ແທນລັດຖະບານໂຊວຽດ ກັບຜູ້ຕາງຫນ້າການບັນຊາຂອງເຢຍລະມັນ ນັ້ນຫນຶ່ງໃນບັນຫາສຳຄັນ ທີ່ຍົກຂຶ້ນແມ່ນບັນຫາກ່ຽວກັບ ການໂອນຊັບສົມບັດທີ່ເປັນກຳມະສິດຂອງຊາດຕ່າງດ້າວ.ກ່ຽວກັບບັນຫາດັ່ງກ່າວ ໄດ້ມີການແລກປ່ຽນດ້ວຍຈົດຫມາຍ ທາງການທູດ - ຫລາຍທີ່ສຸດ ລະຫວ່າງທູດຕ່າງດ້າວ ກັບກະຊວງປະຊາຊົນວ່າການຕ່າງປະເທດແລະຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ; ເມື່ອຕົກມາເຖິງເດືອນກຸມພາ ໑໙໑໘ ຫົວຫນ້າຂອງບັນດາການທູດ ຢູ່ນະຄອນເປຕະໂລກະລາດ ໄດ້ສະແດງຈົດຫມາຍບັນທຶກປະທວງຂອງເຂົາຕໍ່ ກະຊວງປະຊາຊົນ ວ່າການຕ່າງປະເທດ, ກ່ຽວກັບບັນຫາການຕົກລົງ ຂອງລັດຖະບານໂຊວຽດ ທີ່ຈະລົບລ້າງຫນີ້ສິນ ຂອງລັດຖະບານ ພະເຈົ້າຊາ ແລະລັດຖະບານຊົ່ວຄາວ ແລະກ່ຽວກັບການໂອນເອົາຊັບສົມບັດ ຂອງພວກນາຍທຶນ ມາເປັນຂອງລັດນັ້ນ.ໃນຈົດຫມາຍດັ່ງກ່າວ ໄດ້ເນັ້ນວ່າ ທູດແລະທູຕານຸທູດ ທີ່ຖືກແຕ່ງຕັ້ງປະຈຳຢູ່ນະຄອນ ເປຕະໂລກະລາດ ມີສິດສຶກສາທຸກຂໍດຳລັດ,ບັນຫາຍຶດຊັບສົມບັດ, ລົບລ້າງຫນີ້ສິນຂອງປະເທດ ແລະອື່ນໆ, ທັງນີ້ກໍຍັອມວ່າ ມາດຕາການດັ່ງກ່າວ ມັນແຕະຕ້ອງເຖິງຜົນປະ-ໂຫຍດ ຂອງສັນຊາດຕ່າງດ້າວນັ້ນ ຖືວ່າເປັນດຳລັດທີ່ຍັງ ບໍ່ມີກຳລັງ. ຫລັງຈາກນັ້ນ ພວກເຂົາກໍໄດ້ປະກາດຕົວຂຶ້ນວ່າ ລັດຖະບານຂອງເຂົາ ຈະຮັກສາສິດຂອງເຂົາໄວ້ຕະຫລອດ ເວລາ, ເພື່ອຮຽກຮ້ອງເອົາຄ່າເສຽຫາຍທຸກຢ່າງ ທີ່ພົວພັນເຖິງ

ການອອກຂໍ້ດຳລັດຂອງອຳນາດໂຊວຽດນັ້ນຄືນໃນເວລາອັນນັ້ນ-ເຂົາຖືວ່າເໝາະສົມ.

ເນື່ອງຈາກລັດຖະບານໂຊວຽດໄດ້ອອກຂໍ້ດຳລັດ ກ່ຽວກັບການໂອນອຸດສາຫະກຳນ້ຳມັນ ມາເປັນຂອງລັດ ສະບັບລົງວັນທີ ໘ ກໍລະກົດ ໑໙໑໘ ນັ້ນ ການທູດເອີລົບຈຳນວນໜຶ່ງ ໄດ້ພາກັນດຳເນີນການຕ້ານດຳລັດດັ່ງກ່າວ. ພວກເຂົາໄດ້ ປະກາດຂຶ້ນວ່າ, ຂໍ້ດຳລັດໄດ້ນຳຜົນເສຍຫາຍອັນໃຫຍ່ຫລວງ ແກ່ບັນດາຫຸ້ນສ່ວນຕ່າງປະເທດ, ສະນັ້ນ ລັດຖະບານຂອງ ປະເທດເຂົາ ຈຶ່ງສະຫງວນສິດຂອງເຂົາໄວ້ ເພື່ອຮຽກຮ້ອງ ໃຫ້ຈ່າຍຄ່າເສຍຫາຍດັ່ງກ່າວ. ໃນເວລາເຈລະຈາຢູ່ ບະເລັດ-ລິຕົບ ຕອນນັ້ນ ທ່າທີຂອງເຢຍລະມັນ ກໍຢືນຢັນເຊັ່ນດຽວກັນ. ໃນທ່າມກາງເຈລະຈາດັ່ງກ່າວ ຜູ້ແທນເຢຍລະມັນໄດ້ສະເໜີເຍື້ອນການໂອນຊັບສິນ ທີ່ເປັນຂອງສັນຊາດເຢຍລະມັນ ອອກໄປ; ເມື່ອລັດຖະບານໂຊວຽດປະຕິເສດຕໍ່ການຮ້ອງຂໍດັ່ງກ່າວ, ເວລານັ້ນທູດເຢຍລະມັນ ກໍໄດ້ຂຽນຈົດໝາຍຄັດຄ້ານ ຕໍ່ກະຊວງປະຊາຊົນ ວ່າການຕ່າງປະເທດ. ໂດຍສວຍໃຊ້ສະພາບການ ດ້ານເສດຖະກິດ, ດ້ານທະຫານ ແລະດ້ານການເມືອງສັບສົນ ຂອງສາທາລະນະລັດໂຊວຽດນັ້ນ ໃນວັນທີ ໒໗ເດືອນສິງຫາ ປີ ໑໙໑໘ ເຂົາໄດ້ບັງຄັບໃຫ້ປະຊາຊົນໂຊວຽດ ຕ້ອງຍອມຮັບເຊັນສັນຍາ ທີ່ພົວພັນເຖິງການຕົກລົງ ສັນຕິພາບຢູ່ນັ້ນເພີ່ມອີກ. ການຕົກລົງດັ່ງກ່າວ ແມ່ນພົວພັນເຖິງການທົດແທນຄ່າເສຍຫາຍ ແກ່ສັນຊາດເຢຍລະມັນ ທີ່ຖືກແຕະຕ້ອງ ໃນເວ

ລາໂອນຊັບສົມບັດມາເປັນຂອງລັດນັ້ນ. ເຖິງວັນທີ ໒໑ ເດືອນ ມີນາ ປີ ໑໙໔໐ ປະເທດໂຊວຽດລັດເຊຍ ຈຳຕ້ອງຈ່າຍເງິນຈຳນວນ ໖ ຕື້ມາກໃຫ້ຫມົດ ແກ່ປະເທດເຢຍລະມັນ, ເງິນຈຳນວນນີ້ ລື່ນລາຄາອັນແທ້ຈິງ ຂອງຊັບສົມບັດເຢຍລະມັນທີ່ຢູ່ໃນລັດເຊຍຫລາຍເທື່ອ. ການສຳປະທານຊົ່ວຄາວຕໍ່ປະເທດເຢຍລະມັນນັ້ນ ເປັນສິ່ງຈຳເປັນຂອງລັດຖະບານໂຊວຽດ ເພື່ອຫາໄລຍະສັນຕິພາບ ແລະເພື່ອມີເວລາຕໍ່ສູ້ຮັກສາ ລັດສັງຄົມນິຍົມໄວ້. ແຕ່ພາຍຫລັງຕໍ່ມາ ລັດຖະບານໂຊວຽດໄດ້ບັງຄັບໃຫ້ລັດຖະບານເຢຍລະມັນ ຕ້ອງຮັບຮູ້ວ່າ ຫຼັກນະຕິກ່ຽວກັບການໂອນຊັບສົມບັດນັ້ນ ໄດ້ນຳປະຕິບັດສະເຫມີພາບ ຕໍ່ຊັບສິນຕ່າງ ປະເທດ, ຊຶ່ງໃນຈຳນວນນັ້ນ ກໍມີຊັບສົມບັດຂອງເຢຍລະມັນ ນຳດ້ວຍ.

ເຖິງຢ່າງໃດກໍຕາມ, ຫລັງຈາກສັນຍາດັ່ງກ່າວເທິງນັ້ນໄດ້ຖືກປະຕິບັດສຳເລັດແລ້ວ ກົງສູນໃຫຍ່ເຢຍລະມັນ ໄດ້ປະກາດຕ້ານກັບການໂອນບໍລິສັດຕ່າງໆ ຫລືສາຂາຂອງມັນທີ່ມີກອງທຶນເຢຍລະມັນນັ້ນ ມາເປັນຂອງລັດຕັ້ງຫລາຍເທື່ອ, ເຖິງວ່າໃນຕົວຈິງ ສາຂາດັ່ງກ່າວເປັນຊັບສົມບັດ ຂອງຄົນລັດເຊຍກໍຕາມ, ຫມາຍຄວາມວ່າ ລັດຖະບານເຢຍລະມັນໄດ້ສວຍໃຊ້ສັນຍາໂຊວຽດ - ເຢຍລະມັນ ສະບັບລົງວັນທີ ໒໗ ສິງຫາ ປີ ໑໙໑໘ ເພື່ອຂະຫຍາຍສິດຂອງມັນຕໍ່ພົນລະເມືອງລັດເຊຍແຕ່ເປັນຊາວເຢຍລະມັນ. ເຂົາໄດ້ຕີຄວາມຫມາຍສັນຍາບະເລັດຕາມໃຈມັກຂອງເຂົາຄືຄົນໃດທີ່ມີນາມສະກຸນເຢຍລະມັນເຂົາຖືໄດ້ວ່າຄົນຜູ້

ນັ້ນ ແມ່ນໄດ້ຢູ່ໃຕ້ການຄຸ້ມຄອງ ຂອງລັດຖະບານເຢຍລະມັນຊຶ່ງເອົາໄດ້ອອກໜັງສືຢັ້ງຢືນໃຫ້. ເມື່ອມາເຖິງວັນທີ ສອງເດືອນພະຈິກ ໑໙໑໗ ນັ້ນ ຄະນະປະທານຂອງ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ປະກາດວ່າ ໜັງສືຢັ້ງຢືນດັ່ງກ່າວ ບໍ່ມີຄວາມໝາຍທາງດ້ານກົດໝາຍແຕ່ຢ່າງໃດ, ສະນັ້ນໜັງສືຢັ້ງຢືນດັ່ງກ່າວ ຈຶ່ງບໍ່ສາມາດເປັນສິ່ງກີດຂວາງການໂອນຊັບສິນ ມາເປັນຂອງລັດນັ້ນໄດ້.

ໃນເດືອນພະຈິກ ໑໙໑໗ ຫລັງຈາກການປະຕິວັດເດືອນພະຈິກ ໄດ້ໂຄ່ນລົ້ມລະບອບໄກເຊີເຢຍລະມັນແລ້ວ ລັດຖະບານໂຊວຽດ ໄດ້ລົບລ້າງສັນຍາສັນຕິພາບຢູ່ບະເລັດ ແລະເຮັດໃຫ້ການທູດເຢຍລະມັນ ເສຍພື້ນຖານທາງດ້ານກົດໝາຍ ທີ່ຖືວ່າເປັນພື້ນຖານເພື່ອແຊກແຊງເຂົ້າໃນ ວຽກງານພາຍໃນ ປະເທດຂອງລັດໂຊວຽດ. ຢູ່ໃນສະພາບສັບສົນດັ່ງກ່າວກໍໄດ້ມີປະເທດ ທີ່ເອີ້ນຕົນວ່າ ເປັນກາງນັ້ນ ຊຶ່ງໃນນັ້ນ ມີປະເທດສະວີເດນ, ນໍລະເວ ແລະແດນມາກ ທີ່ມີການເຄື່ອນໄຫວແຮງສົມຄວນ ເພື່ອປ້ອງກັນ "ສິດຂອງກຳມະສິດ" ຊັບສົມບັດ ຂອງຕ່າງດ້າວ. ເຖິງວ່າຍັງມີຫລາຍປະເທດທຶນນິຍົມທີ່ບໍ່ມີການພົວພັນ ທາງການທູດກັບລັດເຊຍກໍຕາມ ໄດ້ສົ່ງຈົດໝາຍປະທ້ວງມາເຖິງສະພາເສດຖະກິດແຫ່ງຊາດສູງສຸດ ແລະອົງການຂອງມັນເພື່ອປົກປັກຮັກສາຊັບສິນຂອງຊາດຕ່າງດ້າວ. ຜູ້ຕ່າງ ໜ້າຂອງສະພາກາຊາດແດນມາກ ກໍໄດ້ຮ່ວມໃນຂະບວນ ປະທ້ວງດັ່ງກ່າວ ຢ່າງດື້ດ້ານ. ພ້ອມໆກັນນັ້ນ ບັນດາສະຖານທູດຕ່າງ

ປະເທດ ພະຍາຍາມຂັດຂວາງຕໍ່ການໂອນຈັບສົມບັດຂອງນາຍ ທຶນດັ່ງກ່າວ ແລະເຂົາໄດ້ບີບຜູ້ນຳບາງຄົນ ທີ່ມີໜ້າທີ່ຮັບ ຜິດ ຊອບ ຢູ່ສະພາເສດຖະກິດແຫ່ງຊາດສູງສຸດ ອີກດ້ວຍ. ແຕ່ວ່າ ຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ໂດຍຮ່ວມ ມືກັບ ພະແນກເສດຖະກິດຕຸລາການ ຂອງກະຊວງປະຊາຊົນ-ວ່າການຕ່າງປະເທດ ໄດ້ສືບຕໍ່ປ້ອງກັນສິດຜົນປະໂຫຍດ ຂອງ ລັດຊົນຊັ້ນກຳມາຊີບໄວ້.

ທ່າທີຂອງສະພາເສດຖະກິດແຫ່ງຊາດສູງສຸດໃນບັນຫາກ່ຽວ ກັບການໂອນເອົາຈັບສົມບັດຂອງຕ່າງດ້າວ ມາເປັນຂອງ ລັດ ນັ້ນ ໄດ້ອີງໃສ່ຫລັກການດັ່ງຕໍ່ໄປນີ້:

– ລັກສະນະຂອງການປະຕິວັດ ສັງຄົມນິຍົມ ມັນຮຽກຮ້ອງ ໃຫ້ນຳເອົາທຸກຈັບສົມບັດ ເອກະເທດເຂົ້າມາໃນກຳມືຂອງສັງ ຄົມທັງໝົດ, ໂດຍບໍ່ຈຳແນກ ວ່າເປັນຂອງສັນຊາດ ໃດທັງ ນັ້ນ;

– ການເຮັດໃຫ້ເປັນສົມບັດລວມໝູ່ນັ້ນ ໄດ້ດຳເນີນໄປຢ່າງ ເຄັ່ງຄັດ ຖືກຕ້ອງຕໍ່ກົດໝາຍຕຸລາການ ຂອງສະຫະພັນສາທາ ລະນະລັດ ສັງຄົມນິຍົມໂຊວຽດລັດເຊຍ ແລະຕໍ່ໜ້າທີ່ ສາກົນ ຂອງລັດຖະບານໂຊວຽດ;

– ການໂອນເອົາຈັບສິນຂອງນາຍທຶນມາເປັນຂອງລັດນັ້ນໄດ້ ປະຕິບັດ ແບບບໍ່ມີການໃຊ້ທົດແທນຄືນ ແຕ່ຢ່າງໃດ *;

---

* ການຕົກລົງຂອງລັດຖະບານໂຊວຽດໃນບັນຫາການທົດແທນ

– ກ່ອນການປະຕິບັດ ການໂອນຊັບສິນຂອງນາຍທຶນນັ້ນ ອົງການເສດຖະກິດໂຊວຽດ ທີ່ກ່ຽວຂ້ອງໄດ້ຄວບຄຸມ ການເຄື່ອນໄຫວກອງທຶນຕ່າງປະເທດ ຢ່າງບໍ່ລົດລະ.

ຂໍ້ກຳນົດທາງດ້ານຕຸລາການໂຊວຽດ ໄດ້ຖືກນຳປະຕິບັດ ຕໍ່ນາຍທຶນຕ່າງປະເທດ ໂດຍມາດຕາການສະເຫມີພາບ, ແລະນະໂຍບາຍຂອງ ສະພາເສດຖະກິດແຫ່ງຊາດສູງສຸດ ໃນບັນຫາໂອນຊັບສິນ ຂອງນາຍທຶນຕ່າງປະເທດ ມາເປັນຂອງ ລັດນັ້ນ ບໍ່ໄດ້ມີການລະເບີດຕໍ່ກົດຫມາຍສາກົນ ແລະກົດຫມາຍພົນລະເຮືອນ ແຕ່ຢ່າງໃດ. ເພື່ອອະທິບາຍຕໍ່ເນື້ອໃນຂອງນະໂຍບາຍດັ່ງກ່າວນັ້ນ ພະແນກຕຸລາການ ຂອງກະຊວງ ປະຊາຊົນວ່າການຕ່າງປະເທດ ໄດ້ຢັ້ງຢືນວ່າ ກົດຫມາຍສາກົນຈະບໍ່ກີດຂວາງຕໍ່ການໂອນຊັບສົມບັດ ຄົງທີ່ຂອງຕ່າງດ້າວແຕ່ຢ່າງໃດ, ເພາະວ່າ ການໂອນຊັບສົມບັດດັ່ງກ່າວ ໄດ້ນຳປະຕິບັດ ຖືກຕ້ອງ ກັບກົດຫມາຍຕຸລາການ ຂອງພາຍໃນປະເທດ ທີ່ຊັບສົມບັດດັ່ງກ່າວຕັ້ງຢູ່. ເພື່ອຕັດຂາດການບຽດສີຕໍ່ກົດຫມາຍຂອງລັດໂຊວຽດນັ້ນ ຂະແຫນງເສດຖະກິດຕຸລາການ ຂອງກະຊວງປະ

ຄ່າເສັຽຫາຍແກ່ສັນຊາດເຢຍລະມັນ ຕໍ່ຊັບສິນທີ່ໂອນ ມາເປັນຂອງລັດນັ້ນ ບໍ່ແມ່ນໃສ່ຢາກແກ້ໄຂບັນຫາດັ່ງກ່າວ, ແຕ່ແມ່ນເພື່ອແກ້ໄຂສະພາບສັບສົນ ທາງດ້ານການເມືອງແລະການທະຫານຢູ່ໃນປະເທດຂອງຕົນ ໃນປີ ໑໙໑໘ ນັ້ນ.

ຊາຊິນ ວ່າການຕ່າງປະເທດ ໃນວັນທີ ໒໗ ທັນວາປີ ໑໙໑໘ ນັ້ນ ໄດ້ແຕ່ງຈົດໝາຍວຽນເຖິງ ສະພາເສດຖະກິດແຫ່ງຊາດສູງສຸດ ເພື່ອອະທິບາຍ "ກ່ຽວກັບສິດແລະໜ້າທີ່ ຂອງຊາວຕ່າງດ້າວ" ເຊິ່ງໃນນັ້ນ ໄດ້ບົ່ງຂອບເຂດຢ່າງຈະແຈ້ງ ວ່າ, ກົດໝາຍຕຸລາການໂຊວຽດ ກ່ຽວກັບບັນຫາການໂອນໂຮງຈັກໂຮງງານ ຊັບສິນຂອງໂບດສິນ ຈະບໍ່ໄດ້ຖືກທົບແທນຄືນ ແກ່ເຈົ້າຂອງຊັບສິນບັດເກົ່ານັ້ນ, ໃນນັ້ນກໍຖືກນຳປະຕິບັດ ຕໍ່ຕ່າງດ້າວ ໂດຍມາດຕາການສະເໝີພາບ ເຊັ່ນດຽວກັນ.

ໃນຈຳນວນໂຮງຈັກໂຮງງານ ທີ່ເປັນຂອງຕ່າງດ້າວ ມີຈຳນວນເຖິງ ໘໐໐ ໂຮງງານ ແລະຫ້ອງການເຕັກນິກ ໄດ້ໃຊ້ເຂົ້າໃນການຜະລິດ ຜະລິດຕະພັນ ສິ່ງທີ່ຈຳເປັນທີ່ສຸດໃນວຽກງານຟື້ນຟູເສດຖະກິດ ແລະໃນວຽກງານປ້ອງກັນ ປະເທດ . ໂດຍປະຕິບັດຂໍ້ດຳລັດຂອງ ສະພາເສດຖະກິດແຫ່ງຊາດສູງສຸດສະບັບລົງວັນທີ ໑໙ ທັນວາ ໑໙໑໗, ໂຮງຈັກໂຮງງານ ດັ່ງກ່າວ ໄດ້ຖືກນຳຂຶ້ນທະບຽນ ແລະຕົກຢູ່ໃຕ້ການຄວບຄຸມ ຂອງຄະນະກຳມະການກວດກາກຳມະກອນ ທີ່ໄດ້ຈັດຕັ້ງຂຶ້ນໂດຍສະເພາະວຽກງານດັ່ງກ່າວ, ແລະຫລັງຈາກດຳເນີນ ການກວດສຳຫລວດລະອຽດແລ້ວ ບັນດາໂຮງງານດັ່ງກ່າວກໍໄດ້ຖືກໂອນມາເປັນຊັບສິນບັດ ຂອງສາທາລະນະລັດໂຊວຽດ.

ເພື່ອກວດກາສິນຄ້າສຳຮອງນັ້ນ ໂດຍອີງໃສ່ມະຕິ ຂອງຄະນະປະທານສະພາເສດຖະກິດແຫ່ງຊາດສູງສຸດ ລົງວັນທີ ໒໘-ຕຸລາ ປີ ໑໙໑໘ ເພິ່ນໄດ້ຂຶ້ນທະບຽນ ບັນດາສາງສິນຄ້າຕ່າງ

ຕ່າງ. ເພື່ອຄວບຄຸມການຍົກຍ້າຍສິນຄ້າທີ່ມີລາຄາໃຫ້ເໝາະ ສົມນັ້ນ ສະພາເສດຖະກິດແຫ່ງຊາດສູງສຸດໄດ້ຍົກຍ້າຍເອົາສິນ ຄ້າຕ່າງປະເທດເຂົ້າໄວ້ໃນສາງຂອງຕົນ. ໃນກໍລະນີ ດັ່ງກ່າວ ສິດເຈົ້າຂອງສິນຄ້າ ບໍ່ໄດ້ຖືກປ່ຽນແປງແຕ່ຢ່າງໃດ ແຕ່ວ່າສິນ ຄ້າດັ່ງກ່າວ ໄດ້ຖືກຄວບຄຸມ ໂດຍອົງການເສດຖະກິດໂຊວຽດ ທີ່ກ່ຽວຂ້ອງ. ນາຍທຶນຕ່າງປະເທດ ໄດ້ສະແດງຄວາມບໍ່ພໍໃຈ ຂອງຕົນ ຕໍ່ມາດຕາການຂອງ ສະພາເສດຖະກິດແຫ່ງຊາດສູງ ສຸດດັ່ງກ່າວ ແລະມີບັນດາສະຖານທູດໄດ້ຕ້ານກັບການປະຕິບັດ ມາດຕາການດັ່ງກ່າວນັ້ນ.

ແຕ່ເຖິງແມ່ນວ່າ ພວກນາຍທຶນລັດເຊຍ ແລະນາຍທຶນຕ່າງ ດ້າວ ພ້ອມທັງພວກສຳພັນທະມິດຈຸ້ນຈ້ານຂອງເຂົາ ຈະທຳການ ຕ້ານຄືນ ຢ່າງບ່ອງບ້າກໍຕາມ ລັດໂຊວຽດໄດ້ດຳເນີນ ການ ໂອນຊັບສິນບັດຂອງພວກນາຍທຶນໄດ້ ຕາມແຜນການ. ເຖິງຕົ້ນ ປີ ໑໙໒໑, ເພິ່ນໄດ້ໂອນເອົາບັນດາໂຮງຈັກໂຮງງານ ມາ ເປັນຊັບສົມບັດຂອງລັດ ໄດ້ຫລາຍກ່ວາຈຳນວນ ໔.໙໐໐- ແຫ່ງ.

<u>ການຈັດຕັ້ງຄຸ້ມຄອງ</u>
<u>ໂຮງຈັກໂຮງງານ ທີ່ຖືກໂອນມາ</u>
<u>ເປັນຂອງລັດ</u>

ໃນບົດນິພົນຂອງທ່ານ ວ.ອິ.ເລນິນ ທີ່ເອົ້າເຖິງ "ໜ້າທີ່

ສະເພາະໜ້າຂອງອຳນາດໂຊວຽດ" ນັ້ນ ເພິ່ນໄດ້ລະບຸໄວ້-ວ່າ: ຫລັງຈາກການຍຶດອຳນາດມາໄດ້ແລ້ວ ໜ້າທີ່ຕົ້ນຕໍຂອງຊົນຊັ້ນກຳມາຊີບ ແມ່ນ "ວຽກງານແບບເອົາຈິງເອົາຈັງ ຫລືແບບທີ່ມີຫົວຄິດປະດິດສ້າງ ໃນການປັບປຸງຕາໜ່າງ ອັນຫຍຸ້ງຍາກສັບສົນແລະເລິກເຊິ່ງ ມີການພົວພັນກັບການຈັດຕັ້ງໃໝ່, ທີ່ເຮັດໃຫ້ການຜະລິດ ແລະການແຈກຢາຍຜະລິດຕະພັນ ແບບເປັນແຜນການ, ເຊິ່ງມີຄວາມອັນຈຳເປັນຕໍ່ການດຳລົງຊີວິດ-ຂອງຜູ້ຄົນຕັ້ງຫລາຍໆສິບລ້ານ". (ວ.ອີ.ເລນິນ. ປະມວນບົດນິພົນ ສະບັບສົມບູນ, ເຫລັ້ມທີ ໓໖, ໜ້າ ໑໗໑.)ໃນພາກປະຕິບັດຕົວຈິງ ພ້ອມດຽວກັບການໂອນ ຊັບສົມບັດຂອງພວກນາຍທຶນ ມາເປັນຂອງລັດນັ້ນ ເພິ່ນໄດ້ເລີ່ມ ຈັດຕັ້ງອົງການຄຸ້ມຄອງ ດ້ານການຜະລິດໃໝ່ ຂອງສັງຄົມ ອັນແນ່ນອນ ແລະຕາມຫລັກການແລ້ວ ແມ່ນມັນສະແດງອອກເຖິງວິທີການຊີ້ນຳແບບໃໝ່ ທີ່ໄດ້ເຕີບໃຫຍ່ຂະຫຍາຍຕົວ.

ການສ້າງຕັ້ງ ພະເດັດການກຳມາຊີບ ແລະການຍຶດ - ເອົາພາຫະນະການຜະລິດຕົ້ນຕໍ ໃນຂະແໜງອຸດສາຫະກຳນຳໄປສູ່ການປ່ຽນແປງ ແບບເຖິງກົກເຖິງເຫງົ້າ ແຫ່ງລັກສະນະການພົວພັນ ລະຫວ່າງກົງຈັກຄຸ້ມຄອງ ກັບອົງການລວມ ໝູ່ຂອງຊາວຜູ້ອອກແຮງງານ. ກ່ອນການປະຕິວັດ ເດືອນ ຕຸລານັ້ນ ທຸກການເຄື່ອນໄຫວ ຂອງອົງການບໍລິຫານໂຮງຈັກ ໂຮງງານ ຂອງພວກນາຍທຶນ ມັນລ້ວນແຕ່ແນໃສ່ເພື່ອຫາກຳໄລອັນ

ມະຫາສານ, ຊຶ່ງກຳໄລດັ່ງກ່າວນັ້ນແມ່ນຜູ້ຮັບເຫມົາເປັນຜູ້ກອບໂກຍເອົາໄປທັງຫມົດ. ສະນັ້ນການພົວພັນກັນລະຫວ່າງກົງຈັກບໍລິຫານກັບກຳມະກອນຈຶ່ງເຮັດໃຫ້ມີລັກສະນະປໍລະປັກຕໍ່ກັນ. ຫຼັງຈາກໄຊຊະນະຂອງການປະຕິວັດສຳເລັດແລ້ວຄວາມກຽດ ຊັງຂອງກຳມະກອນຕໍ່ອົງການບໍລິຫານຂອງໂຮງຈັກໂຮງງານເກົາ ແລະຄວາມບໍ່ໄວ້ເນື້ອເຊື່ອໃຈ ຕໍ່ການເຄື່ອນໄຫວຂອງອົງການບໍລິຫານດັ່ງກ່າວ ຈຶ່ງລະເບີດຂຶ້ນ ຢ່າງເປີດເຜີຍທີ່ສຸດ.

ພາຍຫລັງການໂອນເອົາຊັບສິນ ຂອງພວກນາຍທຶນມາເປັນຂອງລັດແລ້ວ ອົງການບໍລິຫານໃຫມ່ ກໍໄດ້ຮັບຈັດຕັ້ງຂຶ້ນຊຶ່ງໃນນັ້ນ ໄດ້ມີຜູ້ຕາງຫນ້າ ຂອງການຈັດຕັ້ງກຳມະກອນ (ກຳມະບານ, ຄະນະກຳມະການໂຮງງານ ແລະອື່ນໆ...) ເຂົ້າຮ່ວມຢ່າງກວ້າງຂວາງ. ການເປັນປໍລະປັກໃນການພົວພັນລະຫວ່າງກົງຈັກບໍລິຫານ ຂອງໂຮງຈັກໂຮງງານ ກັບຊາວຜູ້ອອກແຮງງານ ຈຶ່ງໄດ້ຖືກລົບລ້າງ. ໃນທີ່ສຸດ ເມື່ອຊັບສິນບັດ ທັງມວນຂອງພວກນາຍທຶນ ຫາກໄດ້ຖືກໂອນມາເປັນຂອງລັດຢ່າງສິ້ນເຊີງແລ້ວ ຂະບວນການປໍລະປັກດັ່ງກ່າວ ກໍໄດ້ຍຸຕິລົງຢ່າງສິ້ນເຊີງ.

ເນື່ອງຈາກຂາດການຊີ້ແຈງ ຢ່າງລະອຽດຈາກອົງການປົກຄອງໂຊວຽດ ແລະອົງການຄຸ້ມຄອງເສດຖະກິດຂັ້ນສູງພ້ອມທັງກັບການຂາດບົດຮຽນ ອັນຈຳເປັນນັ້ນ ຢູ່ຕາມທ້ອງຖິ່ນ ຕ່າງໆຈຶ່ງເກີດມີວິທີການແກ້ໄຂ ບັນຫາແຕກຕ່າງກັນຂຶ້ນ. ໃນບາງກໍລະນີ ບັນດາໂຮງຈັກໂຮງງານ ທີ່ ຖືກໂອນມາເປັນຂອງລັດ-

ນັ້ນ ໄດ້ຖືກມອບໃຫ້ຢູ່ພາຍໃຕ້ການຄຸ້ມຄອງຂອງຄະນະກຳມະທິການໂຮງຈັກໂຮງງານ, ກຳມະທິການໜ່ວຍກຳມະກອນແລະອົງການບໍລິຫານຂອງກຳມະກອນ ທີ່ໄດ້ຈັດຕັ້ງຂຶ້ນນັ້ນ ໂລດ . ການສ້າງຕັ້ງອົງການຄຸ້ມຄອງຂອງກຳມະກອນນັ້ນ ເພິ່ນໄດ້ອີງໃສ່ເງື່ອນໄຂສອງຢ່າງ: ອັນທີໜຶ່ງ ການຈັດຕັ້ງລວມໝູ່ຂອງກຳມະກອນ ຈະຕ້ອງຍິນຍອມຮັບເອົາ ຄວາມຮັບຜິດຊອບ ທັງໝົດ ໃນວຽກການບໍລິຫານໂຮງຈັກໂຮງງານ ແລະອັນທີສອງການເລືອກຕັ້ງອົງການບໍລິຫານນັ້ນ ຈະຕ້ອງໃຫ້ມີຊາວຜູ້ອອກ-ແຮງງານ ຂອງໂຮງຈັກໂຮງງານ ທີ່ກ່ຽວຂ້ອງເຂົ້າຮ່ວມຫຼາຍກ່ວາເຄິ່ງ.

ຕາມທຳມະດາແລ້ວ ໃນເບື້ອງຕົ້ນ ອົງການບໍລິຫານ ຊົ່ວຄາວ ຈະຕ້ອງຖືກຈັດຕັ້ງຂຶ້ນ ໂດຍແມ່ນຄະນະກຳມະການກວດກາ ຂອງກຳມະກອນ, ອົງການບໍລິຫານຂອງກຳມະກອນ,ຄະນະກຳມະການໂຮງຈັກໂຮງງານ ແລະອົງການຈັດຕັ້ງ ກຳມະບານເປັນພື້ນຖານ. ຖ້າຫາກວ່າ ໃນເວລາເພິ່ນໂອນເອົາ - ໂຮງຈັກໂຮງງານ ມາເປັນຂອງລັດນັ້ນ ຫາກມີອົງການບໍລິ - ຫານ ຂອງກຳມະກອນເຄື່ອນໄຫວມາແລ້ວ,ໃນກໍລະນີນີ້ ເພິ່ນກໍຖືວ່າ ອົງການດັ່ງກ່າວເປັນອົງການບໍລິຫານຊົ່ວຄາວ ຂອງໂຮງຈັກໂຮງງານນັ້ນໂລດ ແລະອົງການບໍລິຫານນັ້ນ ມີໜ້າທີ່ປົກຄອງໂຮງຈັກໂຮງງານດັ່ງກ່າວ ໄປຈົນກ່ວາຈະມີການ ຈັດຕັ້ງ ອົງການບໍລິຫານລັດຂຶ້ນແທນ. ສະພາເສດຖະກິດ ແຫ່ງຊາດສູງສຸດ ແລະສະພາສູນກາງແຫ່ງສະຫະພັນກຳມະບານທົ່ວ

ສະຫະພາບ ໄດ້ພະຍາຍາມເຮັດໃຫ້ສະມາຊິກຂອງອົງການບໍລິຫານຊົ່ວຄາວດັ່ງກ່າວໄດ້ຮັບເລືອກຕັ້ງຂຶ້ນຈາກສະມາຊິກ ອົງການກຳມະບານຂອງຊາວກຳມະກອນ.

ການຈັດຕັ້ງອົງການບໍລິຫານ ຂອງລັດຂຶ້ນນັ້ນ ໄດ້ອີງໃສ່ ຂໍ້ກຳນົດຊົ່ວຄາວ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ສະບັບລົງວັນທີ ໓ ມີນາ ປີ ໑໙໑໘ ແລະຕໍ່ໄປກໍອີງໃສ່ ມະຕິຄຳລັດ ກ່ຽວກັບຫລັກການຄຸ້ມຄອງ ບັນດາໂຮງຈັກໂຮງງານ ຊຶ່ງໂອນມາເປັນຂອງລັດ ທີ່ຖືກຮັບຮອງເອົາ ຢູ່ໃນກອງປະ ຊຸມໃຫຍ່ຂອງສະພາເສດຖະກິດແຫ່ງຊາດທົ່ວລັດລັດເຊຍຄັ້ງທີ I. ໂດຍແມ່ນຂໍ້ດຳລັດດັ່ງກ່າວນັ້ນເປັນບ່ອນອີງ ແກ່ການປະ ກອບອົງການບໍລິຫານຂຶ້ນ ຢູ່ໃນໂຮງຈັກໂຮງງານ ແລະບໍ່ແຮ່ ທຸກໆບ່ອນ ທີ່ໂອນມາເປັນຂອງລັດ. ອົງປະກອບໃນຈຳນວນ ສອງສ່ວນສາມ ຂອງຄະນະອຳນວຍການໂຮງງານນັ້ນແມ່ນຖືກແຕ່ງຕັ້ງຂຶ້ນ ໂດຍສະພາເສດຖະກິດແຫ່ງຊາດສູງສຸດ (ໃນກໍລະນີຫາກວ່າ ໂຮງຈັກໂຮງງານດັ່ງກ່າວ ຂຶ້ນໂດຍກົງ ກັບອົງການປົກຄອງສູນກາງ) ຫລືໂດຍສະພາເສດຖະກິດແຫ່ງຊາດປະຈຳເຂດທີ່ກ່ຽວຂ້ອງ ແລະຫນຶ່ງສ່ວນສາມ ຂອງຄະນະບໍລິຫານນັ້ນແມ່ນຫນ່ວຍກຳມະບານ ຂອງຊາວກຳມະກອນ ທີ່ສັງກັດ ຢູ່ໃນໂຮງຈັກໂຮງງານດັ່ງກ່າວນັ້ນ ເລືອກຂຶ້ນເອງ. ຂໍ້ດຳລັດ ດັ່ງກ່າວ ໄດ້ບົ່ງໄວ້ຈະແຈ້ງ ກ່ຽວກັບການປະກອບພະນັກງານ ວິຊາສະເພາະເຕັກນິກ ແລະການຄ້າ ເຂົ້າໃນຄະນະບໍລິ ຫານຂອງໂຮງຈັກໂຮງງານ ຢ່າງນ້ອຍບໍ່ໃຫ້ລຸດຈຳນວນ ຫນຶ່ງສ່ວນ

ສາມ .

ໃນບັນດາໂຮງງານທີ່ຖືກກັກໄວ້ແລະໃນໂຮງງານລັດ (ແຕ່ໃນສະໄຫມເກົ່າ) ນັ້ນ, ຕາມຫລັກການແລ້ວເພິ່ນໄດ້ຈັດຕັ້ງຄະນະບໍລິຫານຂອງລັດຂຶ້ນໂລດ. ເພື່ອຄຸ້ມຄອງບັນດາ ໂຮງງານລັດ (ແຕ່ໃນສະໄຫມເກົ່າ) ຢູ່ເຂດອູລານນັ້ນ ເພິ່ນໄດ້ປະກອບສະພາທຸລະກິດຂຶ້ນ ຊຶ່ງສະພາດັ່ງກ່າວ ເປັນອົງການ ບໍລິຫານກຳມະກອນແບບໃຫມ່ທີ່ເປັນຮູບການອັນຫນຶ່ງຂອງການບໍລິຫານກຳມະກອນ.

ແຕ່ເຖິງຢ່າງໃດກໍດີ ເນື່ອງຈາກບໍ່ເຂົ້າໃຈເລິກເຊິ່ງ ເນື້ອໃນຂອງການໂອນໂຮງຈັກໂຮງງານ ມາເປັນຂອງລັດແບບສັງຄົມນິຍົມນັ້ນ ການມອບການບໍລິຫານ ໃສ່ມືຂອງຫນ່ວຍລວມຫມູ່ກຳມະກອນ ຢູ່ໃນບາງໂຮງຈັກໂຮງງານນັ້ນ ໄດ້ປາກົດມີການເຂົ້າໃຈກັນວ່າ ແມ່ນການມອບສິດໃຫ້ຫມູ່ໃຊ້ຊັບສົມບັດ ແລະຜະລິດຕະພັນທັງຫມົດ ຂອງໂຮງຈັກໂຮງງານດັ່ງກ່າວ ຢ່າງເສລີ. ດ້ວຍມີປາກົດການດັ່ງກ່າວ ຢູ່ໃນໂຮງງານບາງ ແຫ່ງກຳມະກອນໄດ້ແຈກຢາຍຜະລິດຕະພັນຂອງໂຮງງານຂອງຕົນ-ໃຫ້ກັນ (ເຊັ່ນ ແພແຕັນ, ນ້ຳຕານ, ສະບູ, ຢາດູດ). ການກະທຳແນວນັ້ນ ແມ່ນໄດ້ຖືກຊຸກຍູ້ ຈາກເຈົ້າຂອງໂຮງຈັກໂຮງງານເກົ່າ ແລະບຸກຄົນທີ່ຕ້ານອຳນາດໂຊວຽດ ຊຶ່ງຄວາມຫວັງຂອງເຂົາ ມີຢູ່ບ່ອນວ່າ ຢາກກໍ່ໃຫ້ເກີດມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ ອັນຮ້າຍແຮງຂຶ້ນ ແລະເອົາແນໃສ່ ປັ່ນໃຫ້ຊາວກຳມະກອນລຸກຮື້ຂຶ້ນ ຕ້ານກັບອຳນາດໂຊວຽດ. ບາງກໍລະ

ນິຫນ່ວຍລວມຫມູ່ຂອງບາງໂຮງງານ ຮອດບໍ່ຍອມປະຕິບັດຕາມ ຄຳສັ່ງຂອງສະພາເສດຖະກິດແຫ່ງຊາດສູງສຸດ ແລະ ອົງການ ທ້ອງຖິ່ນ ຂອງສະພາດັ່ງກ່າວອີກຊ້ຳ.

ບັນດາເຈົ້າຂອງແລະຄະນະປົກຄອງ ຂອງບາງ ໂຮງຈັກ ໂຮງງານ ມີການລະເມີດອັນຮ້າຍແຮງທີ່ສຸດ ຄືໂດຍສະເພາະ ພວກເຂົາໄດ້ຍິນດີຕົກລົງ ຮັບປະຕິບັດທຸກລະບຽບການຂອງລັດ ຖະບານໂຊວຽດ ແຕ່ໃນພາກປະຕິບັດຕົວຈິງ ເຂົາພັດສວຍໃຊ້ ທຸກໂອກາດເພື່ອທຳລາຍການປະຕິບັດລະບຽບການດັ່ງກ່າວ.ຕໍ່ ບັນດາໂຮງງານເຫລົ່ານີ້ ລັດຖະບານໂຊວຽດໄດ້ແຕ່ງຕັ້ງ ຄະ ນະກຳມາທິການສະເພາະ ຫລືຈັດຕັ້ງກຳມາທິການພິເສດຂຶ້ນ. ດັ່ງນັ້ນ ຈຶ່ງເກີດມີການສ້າງຕັ້ງສະຖາບັນຄຸ້ມຄອງພິເສດຂຶ້ນ.

ໃນຕົ້ນປີ ໑໙໑໘ ສະຖາບັນຄຸ້ມຄອງພິເສດ ໄດ້ມີ ການ- ເຄື່ອນໄຫວດີທີ່ສຸດ. ແຕ່ໃນເມື່ອບັນດາໂຮງຈັກໂຮງງານ ອັນ ຈຳນວນຫລວງຫລາຍ ໄດ້ເຂົ້າຢູ່ໃນກຳມືຂອງລັດຫມົດ ແລ້ວ ການເຄື່ອນໄຫວຂອງສະຖາບັນພິເສດນີ້ ກໍລົດນ້ອຍລົງ ຢ່າງ ປະຈັກຕາ.

ສະຖາບັນພິເສດ ໄດ້ມີບົດບາດອັນສຳຄັນ ໃນການຈັດຕັ້ງ- ຊູດສາທະກຳໂຊວຽດ ຊຶ່ງມັນໄດ້ສະແດງໃຫ້ເຫັນ ຢູ່ໃນມະຕິ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ກ່ຽວກັບສະຖາບັນ- ຄຸ້ມຄອງພິເສດຢູ່ໂຮງງານ ທີ່ເມືອງ ໂຊລະໂມໂວ ,ທີ່ເພິ່ນ ໄດ້ຮັບຮອງເອົາຈາກກອງປະຊຸມ ຄະນະປະທານ ສະພາເສດ ຖະກິດແຫ່ງຊາດສູງສຸດ ໃນວັນທີ ໔໐ ພຶດສະພາ ປີ ໑໙໑໘

ນັ້ນ. ຜູ້ຕາງຫນ້າພິເສດທີ່ຖືກແຕ່ງຕັ້ງຂຶ້ນໂດຍສະພາເສດຖະກິດແຫ່ງຊາດສູງສຸດ ມີຫນ້າທີ່ກວດກາ ບັນດາໂຮງຈັກໂຮງງານທີ່ໂຊລະໂມໂວ, ຊຸກຍູ້ການຍົກລະດັບ ປະສິດທິພາບ ຂອງການຜະລິດໃຫ້ສູງຂຶ້ນ, ຊຸກຍູ້ການລຳລຽງວັດຖຸ ອຸປະກອນ ອັນຈຳເປັນ ເພື່ອຮັບໃຊ້ໂຮງງານ. ຜູ້ຕາງຫນ້າພິເສດ ມີບົດບາດເປັນຜູ້ໄກ່ເກັ່ຍແກ້ໄຂທຸກບັນຫາຂັດແຍ້ງທີ່ເກີດຂຶ້ນແລະມີສິດໄລ່ທຸກຄົນ ທີ່ຝືນຕໍ່ກົດລະບຽບຂອງເຂົາ ອອກຈາກໂຮງງານໄດ້. ເພິ່ນໄດ້ຈັດຕັ້ງອົງການສຳຮອງທີ່ຈຳເປັນຂຶ້ນ ອ້ອມຂ້າງຜູ້ຕາງຫນ້າພິເສດ ເພື່ອແກ້ໄຂບັນຫາການຈັດຕັ້ງ ວຽກງານການຜະລິດ. ໃນບັນດາອົງການດັ່ງກ່າວມີ: ສະພາຈັດຫາວັດຖຸ ອຸປະກອນ ແລະເງິນທຶນ, ສະພາກຳກັບບັນຫາການປັບປຸງ ດ້ານເຕັກນິກຂອງໂຮງງານ, ການຍົກລະດັບປະສິດທິພາບໃນການຜະລິດ, ການສ້າງຕັ້ງລະບຽບວິໄນ ອັນຈຳເປັນ,ການກຳນົດອັດຕາແຮງງານ ແລະການເບີກຈ່າຍຄ່າແຮງງານ, ການຍົກລະດັບສະມັດຕະພາບຂອງກຳມະກອນ ແລະການແຕ່ງຕັ້ງ ກົດລະບຽບໃນໂຮງງານ, ຄະນະກຳມະການຂາອອກແລະສະພາອື່ນໆອີກ ທີ່ເຫັນວ່າ ມີຄວາມຈຳເປັນ ເພື່ອແກ້ໄຂບັນຫາ ສະເພາະທີ່ເກີດຂຶ້ນ.

ບາງຄັ້ງການແຕ່ງຕັ້ງຜູ້ຕາງຫນ້າ ຫລືກຳມາທິການ ພິເສດຂຶ້ນນັ້ນ ແມ່ນເພື່ອປະຕິບັດການກັກໂຮງງານໃດໂຮງງານຫນຶ່ງໄວ້, ສະເພາະເທົ່ານັ້ນ. ການແຕ່ງຕັ້ງແບບນີ້ ໄດ້ຖືກປະຕິບັດຂຶ້ນ ໃນຫລາຍກໍລະນີ ເຊັ່ນ ເມື່ອໂຮງງານໃດຫນຶ່ງ ທີ່ຈະ

ໂອນເອົາມາເປັນຂອງລັດນັ້ນ ຫາກຢູ່ຫ່າງໄກຈາກສູນກາງປົກຄອງ ແລະສູນກາງເສດຖະກິດແຫ່ງຊາດ. ດ້ວຍເຫດຜົນ ດັ່ງກ່າວ ເຊັ່ນ ໃນວັນທີ ໒໔ ພຶດສະພາ ປີ ໑໙໑໘ ຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ແຕ່ງຕັ້ງຜູ້ຕາງ-ໜ້າພິເສດ ເພື່ອຄຸ້ມຄອງອຸດສາຫະກຳບໍ່ແຮ່ ຂອງການ ຫຸ້ນສ່ວນ ເຂດກີລະກີເຊຍ, ອຸດສາຫະກຳຫຸ້ນສ່ວນບໍ່ແຮ່ "ອິເດີ" ແລະອຸດສາຫະກຳບໍ່ແຮ່ຢູ່ເຂດພາກໃຕ້ ອູລານ. ແລະໃນກໍລະນີມີຄວາມຈຳເປັນ ສຳຫລວດກວດກາບັນດາໂຮງງານຫລືກວດສະພາບເງິນຂອງໂຮງງານນັ້ນ ເພິ່ນກໍໄດ້ປະຕິບັດໃນທຳນອງດຽວກັນນັ້ນ ເຊັ່ນ ຄືເພິ່ນປະຕິບັດການກວດກາຕໍ່ໂຮງງານອຸດສາຫະກຳ ທີ່ ມານເຊບໂວ . ໃນບາງກໍລະນີ ກໍບໍ່ແມ່ນ ແຕ່ສະພາເສດຖະກິດແຫ່ງຊາດສູງສຸດ ເປັນຜູ້ແຕ່ງຕັ້ງຜູ້ຕາງໜ້າພິເສດ ນັ້ນ ແຕ່ແມ່ນໜ່ວຍລວມໝູ່ຂອງກຳມະກອນ ແລະລັດຖະກອນຂອງໂຮງງານນັ້ນ ເລືອກເອົາເອງແລ້ວຫລັງຈາກນັ້ນ ສະພາເສດຖະກິດແຫ່ງຊາດສູງສຸດກໍອອກສັດຕະຍາບັນຮັບຮູ້.ຂໍຍົກຕົວຢ່າງ ໃນຄຳສັ່ງຂອງສະພາເສດຖະກິດແຫ່ງຊາດປະຈຳແຂວງ ກາລູກາ ສະບັບລົງວັນທີ ໒໓ ກຸມພາປີ ໑໙໑໘ກ່ຽວກັບຫລັກການໂອນເອົາໂຮງງານອຸດສາຫະກຳ ຫລໍ່ເຫລັກ ກ້າ "ມີແຊກາ" ມາເປັນຂອງລັດນັ້ນ ໄດ້ບົ່ງໄວ້ວ່າ: "ຄະນະອຳນວຍການໂຮງງານທີ່ປະຕິບັດໜ້າທີ່ ເພື່ອຜົນປະໂຫຍດ ຂອງຊາດນັ້ນ ປະກອບດ້ວຍ: ຜູ້ຕາງໜ້າພິເສດ,ຜູ້ຊ່ວຍດ້ານການຄ້າ ແລະຜູ້ຊ່ວຍດ້ານບໍລິຫານ ທີ່ມີສິດລົງນາມໃນ ເອກະສານ

ການຄ້າ, ຂໍ້ຜູກມັດເງິນຕາ, ໃບບິນ, ຮັບຄຳສັ່ງ, ຮັບເງິນ ແລະ ດຳເນີນທຸລະກິດທີ່ຈຳເປັນ ແລະທັງເຮັດສັນຍາຊື້ຂາຍ ອີກ ດ້ວຍ". ບຸກຄົນເຫຼົ່ານີ້ ແມ່ນບັນດາກຳມະກອນ ແລະ ລັດຖະກອນ ຂອງໂຮງງານນັ້ນເລືອກເອົາເອງ. ບາງຄັ້ງຢູ່ສຳນັກລັດຖະມູນຕີປະຊາຊົນເພິນກໍໄດ້ປະກອບສະພາຜູ້ຕາງໜ້າ ກຳມະກອນຂອງໂຮງງານ, ຂອງຜູ້ຕາງໜ້າຈາກອົງການກຳມະບານ ແລະຈາກສະພາອຳນາດການປົກຄອງທ້ອງຖິ່ນ, ສະພາເສດຖະກິດ ແລະອົງການຈັດຕັ້ງອື່ນໆ ທີ່ເຫັນຈຳເປັນເຂົ້ານຳອີກດ້ວຍ.

ກ່ຽວກັບສິດແລະໜ້າທີ່ຂອງລັດຖະມູນຕີປະຊາຊົນພິເສດນັ້ນ ເພິນບໍ່ໄດ້ບົ່ງໄວ້ສະເພາະໃນລັດຖະບັນຍັດ. ຂອບເຂດສິດແລະໜ້າທີ່ດັ່ງກ່າວນັ້ນມັນຂຶ້ນກັບສະພາບຕົວຈິງ ຢູ່ໃນໂຮງງານໃດໂຮງງານໜຶ່ງທີ່ ເພິນບໍ່ສາມາດກຳນົດບົດບາດຂອງລັດຖະມູນຕີປະຊາຊົນໄວ້ໃນການປະຕິບັດໜ້າທີ່ຕົວຈິງໃນໄລຍະຈັດ ຕັ້ງລະບົບຄຸ້ມຄອງໃໝ່ຂອງອຸດສາຫະກຳສັງຄົມນິຍົມ. ແຕ່ເຖິງຢ່າງໃດກໍຕາມເພິນໄດ້ຍົກບາງກໍລະນີບົກພ່ອງ ໃນການເຄື່ອນໄຫວວຽກງານຂອງບັນດາລັດຖະມູນຕີປະຊາຊົນດັ່ງກ່າວ ຂຶ້ນເຊັ່ນ: ໃນເວລາປະຕິບັດວຽກງານຕົວຈິງລັດຖະມູນຕີປະຊາຊົນພິເສດໄດ້ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນຕໍ່ໜ້າພວກເຂົາ ລວມທັງບັນຫາເສດຖະກິດໂດຍວິທີແບບທະຫານຊຶ່ງວິທີດັ່ງກ່າວນັ້ນແມ່ນພວກນິຍົມຕະໂລຊະກີເປັນຜູ້ປັ້ນແຕ່ງຂຶ້ນແລ້ວພວກເຂົາໄດ້ນຳສະເໜີໃຫ້ພັກປະຕິບັດການຈັດຕັ້ງເສດຖະກິດແບບທີ່ ເຂົາຄິດນັ້ນຢ່າງຕັ້ງໃຈ. ແຕ່ວ່າພັກໂບນເຊວິກຊຶ່ງແມ່ນທ່ານ ວ.ອີ.

ເລນິນເປັນຫົວໜ້ານັ້ນໄດ້ປະຕິເສດຄຳສະເໜີຂອງພວກເຂົາ, ທັງນີ້ກໍ່ເນື່ອງຈາກວ່າແນວຄິດດັ່ງກ່າວມັນກົງກັນຂ້າມກັບທິດສະດີ ຂອງ ມາກ-ເລນິນ ໃນວຽກງານກໍ່ສ້າງສັງຄົມນິຍົມ. ວິທີຊີ້ນຳເສດຖະກິດແບບທະຫານອາດນຳໃຊ້ໄດ້ ແລະປະຕິບັດໄດ້ໃນໄລຍະຫົວລ້ຽວຫົວຕໍ່ ເທົ່ານັ້ນ, ໝາຍຄວາມວ່າໃຊ້ໄດ້ແຕ່ໃນວາລະສົງຄາມ ຊຶ່ງໃນເວລາດັ່ງກ່າວ ເພິ່ນໄດ້ສູມ ທຸກກຳລັງແລະວັດຖຸ ໃສ່ຈຸດດຽວ ຄື ປະກອບອາວຸດ ເພື່ອປ້ອງກັນ-ອາທິປະໄຕຂອງປະເທດ, ແຕ່ໃນເງື່ອນໄຂສັນຕິພາບແນວຄິດໃຊ້ວິທີຊີ້ນຳເສດຖະກິດແບບທະຫານນັ້ນ ມັນແມ່ນວິທີ ທີ່ກົງກັນຂ້າມກັບຫລັກການຄຸ້ມຄອງ ສັງຄົມນິຍົມ ແລະກ່ອນອື່ນໝົດ ກໍ່ແມ່ນກົງກັນຂ້າມ ກັບຫລັກການລວມສູນ ປະຊາທິປະໄຕ ຂອງເລນິນ. ພວກເຮົາຮັບຮູ້ນຳກັນແລ້ວວ່າ ໃນໄລຍະ ໔-໕ ປີທຳອິດ ແຫ່ງການດຳລົງຄົງຕົວ ຂອງລັດກຳມາຊີບນັ້ນ ໂດຍສະເພາະແລ້ວ ໃນສະພາບເສດຖະກິດຫຍຸ້ງຍາກແລະສະພາບການເມືອງພາຍໃນປະເທດສັບສົນ ມີສົງຄາມກາງເມືອງ ລະເບີດຢູ່ນັ້ນການແຕ່ງຕັ້ງລັດຖະມູນຕີປະຊາຊົນພິເສດຂຶ້ນມັນເປັນວິທີການອັນຈຳເປັນທີ່ສຸດ. ທີ່ຈິງແລ້ວວິທີດັ່ງກ່າວມັນແມ່ນ ການກະທຳໂຕ້ຕອບຂອງຊົນຊັ້ນກຳມາຊີບຕໍ່ການຕໍ່ສູ້ອັນດຸເດືອດ ໃນເວລາທີ່ພວມປະຕິບັດ ການໂອນຊັບສົມບັດຂອງນາຍທຶນ ມາເປັນຂອງລັດ ຊຶ່ງວິທີນີ້ ກໍ່ແມ່ນວິທີການທີ່ລັດຖະບານ ໂຊວຽດນຳມາໃຊ້ໃນພາກປະຕິບັດຕົວຈິງ ເພື່ອແກ້ໄຂບັນຫາການ ພັງທະລາຍ ດ້ານເສດຖະກິດ ແລະການຈັດຕັ້ງເສດຖະກິດສັງຄົມ

ນິຍົມໃໝ່.

ເລີ່ມຕັ້ງແຕ່ເຫື່ອທຳອິດຂອງການສະຖາປະນາອຳນາດໂຊວຽດ ພູ້ນມາ ບັນຫາກ່ຽວກັບລະບົບການຄຸ້ມຄອງ ເປັນເອກະ ພາບ ຂອງບັນດາຊຸດສາຫະກຳ ທີ່ໂອນມາເປັນຂອງລັດນັ້ນ ເພິ່ນໄດ້ ຍົກຂຶ້ນມາ ພິເຄາະຖົກຖຽງກັນ ຢ່າງກ້ວາງຂວາງທີ່ສຸດ ບໍ່ວ່າ ທັງຢູ່ສູນກາງ ແລະກໍຄືຢູ່ໃນທ້ອງຖິ່ນ.

ໃນວັນທີ ໗ ຫາວັນທີ ໑໖ ມັງກອນ ຂອງປີ ໑໙໑໘ ເພິ່ນ ໄດ້ເປີດກອງປະຊຸມຜູ້ຕາງໜ້າໂຮງງານ ທີ່ໂອນມາເປັນຂອງ ລັດແລະໂຮງງານທີ່ເປັນຂອງລັດໃນລະບອບເກົ່າຢູ່ເຂດອູລານ ແລະກອງປະຊຸມດັ່ງກ່າວ ໄດ້ສະແດງບົດບາດອັນສຳຄັນ ໃນ ວຽກງານຈັດຕັ້ງຊຸດສາຫະກຳ ແລະໃນວຽກງານການກໍ່ ສ້າງ ໂຄງຮ່າງຄຸ້ມຄອງ ບັນດາໂຮງຈັກໂຮງງານຂອງລັດ. ເພິ່ນໄດ້ ລົງມະຕິຮັບຮອງເອົາ "ຂໍ້ດຳລັດຊົ່ວຄາວ ກ່ຽວກັບການຈັດຕັ້ງ ຄຸ້ມຄອງ ໂຮງຈັກໂຮງງານ ທີ່ໂອນມາເປັນຂອງລັດ". ເພິ່ນ ໄດ້ຕັ້ງສະພາຜູ້ຕາງໜ້າພິເສດຂຶ້ນ ທີ່ເປັນອົງການຄຸ້ມຄອງສູງ ສຸດ ຂອງໂຮງຈັກໂຮງງານ ຊຶ່ງປະກອບດ້ວຍສະມາຊິກ ຈຳ ນວນແຕ່ ໔໐ ຫາ ໕໐ ຄົນ. ຈຳນວນດັ່ງກ່າວນັ້ນ ມັນຂຶ້ນກັບ ຂະໜາດການຜະລິດ ຂອງໂຮງຈັກໂຮງງານ. ອົງການບໍລິ ຫານໂຮງງານ ປະກອບດ້ວຍຄະນະກຳມະການໂຮງງານ ທີ່ມີ ຈຳນວນ ແຕ່ ໓ ຫາ ໑໕ ຄົນ ຊຶ່ງໃນນັ້ນ ບັນດາສະມາຊິກ- ຈຳນວນ ສອງສ່ວນສາມ ແມ່ນໄດ້ຮັບເລືອກຕັ້ງຂຶ້ນ ຈາກອົງ ການກຳມະບານ ຂອງກຳມະກອນ. ຂັ້ນຕໍ່ໄປ ຂອງໂຄງ

ຮ່າງຊຸມລອງແມ່ນສະພາຜູ້ຕາງໜ້າພິເສດຂອງຜູ້ຕາງໜ້າບັນ
ດາໂຮງຈັກໂຮງງານ ທົ່ວໝົດຂອງເຂດ, ທີ່ປະກອບດ້ວຍສະ
ມາຊິກໃນຈຳນວນ ແຕ່ ໔໕ ຫາ ໕໐ ຄົນ. ເພິ່ນໄດ້ສ້າງຕັ້ງ
ຫ້ອງການບໍລິຫານ ແລະກຳມະການກວດກາ ຂອງເຂດຂຶ້ນອີກ
ເພື່ອຊີ້ນຳນຳພາວຽກງານປະຈຳວັນ ດ້ານອຸດສາຫະກຳ. ສະ
ພາຜູ້ຕາງໜ້າພິເສດຂອງແຂວງ ປະກອບດ້ວຍຜູ້ຕາງ ໜ້າ-
ຂອງໂຮງຈັກໂຮງງານ ໃນແຂວງນັ້ນ ເປັນອົງການທີ່ບົ່ງຂໍກຳ
ນົດ ແລະກວດກາຂັ້ນສູງສຸດ ທີ່ມີສະມາຊິກຈຳນວນ ແຕ່ ໗໕
ຫາ ໑໐໐ ຄົນ. ວຽກງານບໍລິຫານປະຈຳວັນຂອງແຂວງແມ່ນ
ຫ້ອງການບໍລິຫານແຂວງ ຮັບຜິດຊອບ.

ໂຄງຮ່າງຊຸມລອງໂຮງຈັກໂຮງງານ ທີ່ສະເໜີໂດຍ ກອງ
ປະຊຸມຂອງຜູ້ຕາງໜ້າໂຮງງານນັ້ນ ໄດ້ສະແດງເຖິງສະພາບ
ການທີ່ເກີດຂຶ້ນໃນວຽກງານ ຢູ່ອຸດສາຫະກຳ ເຂດອູລານທີ່ໄດ້
ແບ່ງເປັນເຂດ ຂຸດຄົ້ນບໍ່ແຮ່ມາແລ້ວ. ໃນເຂດອູລານນີ້ ເພິ່ນ
ບໍ່ສາມາດນຳປະຕິບັດ ແບບລັກສະນະທົ່ວໄປໄດ້ ຍ້ອນວ່າ ອົງ
ການຊຸມລອງທີ່ມີຢູ່ແລ້ວນັ້ນ ມັນເປັນອົງການທີ່ເໝາະສົມ ກັບ
ຈຸດພິເສດຂອງທ້ອງຖິ່ນຢູ່ແລ້ວ ແຕ່ວ່າ ໂຄງຮ່າງນີ້ມີຫລັກການ
ອັນດີ ຄື: ການເລືອກຕັ້ງແຕ່ຂັ້ນລຸ່ມຈົນຮອດຂັ້ນເທິງ ແລະໄດ້
ເປັນບ່ອນ ທີ່ມີອິດທິພົນຂອງຊາວກຳມະກອນ ໃນບັນດາ ໂຮງ
ຈັກໂຮງງານດັ່ງກ່າວແລ້ວ.

ດັ່ງນັ້ນ ເພິ່ນຈຶ່ງໄດ້ນຳບັນຫາດັ່ງກ່າວຂ້າງບົນນີ້ ຂຶ້ນພິຈາ
ລະນາ ຢູ່ໃນກອງປະຊຸມສະພາໂຊວຽດ ຜູ້ແທນກຳມະກອນ -

ແລະທະຫານເຂດອູລານຄັ້ງທີIIIທີ່ໄດ້ຈັດຂຶ້ນໃນວັນທີ ໒໔ - ຫາ ໒໖ ມັງກອນ ປີ ໑໙໑໘. ໃນມະຕິ "ກ່ຽວກັບບັນຫາຄຸ້ມຄອງອຸດສາຫະກຳອູລານ" ນັ້ນ ເພິ່ນໄດ້ຂີ່ງໄວ້ວ່າບັນດາໂຮງຈັກໂຮງງານ ທີ່ຖືກໂອນມາເປັນຂອງລັດ ແລະ ໂຮງຈັກໂຮງງານທີ່ໄດ້ເປັນຂອງລັດ ແຕ່ໃນລະບອບເກົ່ານັ້ນ ຈະຕ້ອງໂຮມເຂົ້າເປັນ ສະຫະວິສາຫະກິດ ແຂວງອູລານ. ການຄຸ້ມຄອງໂຮງງານໜຶ່ງ ໂຮງງານດຽວນັ້ນ ເປັນພາລະໜ້າທີ່ຂອງສະພາຫຼູລະກິດ ທີ່ປະກອບດ້ວຍຈຳນວນສະມາຊິກ ແຕ່ ໗ ຫາ-໑໘ ຄົນ, ຈຳນວນຂອງຄະນະດັ່ງກ່າວນັ້ນ ມັນຂຶ້ນກັບ ຂະໜາດ ແລະລັກສະນະຂອງການຜະລິດ ອຸດສາຫະກຳ ດັ່ງກ່າວ. ສະພາຫຼູລະກິດ ປະກອບດ້ວຍພະແນກການເງິນ ແລະສະມຸດບັນຊີ,ພະແນກເຕັກນິກວິຊາການແລະປົດປ່ອຍທະຫານ, ພະແນກຈັດຫາແລະຈຳໜ່າຍ, ພະແນກຄຸ້ມຄອງແຮງງານ . ສະພາຫຼູລະກິດດັ່ງກ່າວ ຄຸ້ມຄອງໂຮງງານຂອງຕົນບົນພື້ນຖານແຜນການຂະຫຍາຍ ການຜະລິດຂອງແຂວງ.

ເນື່ອງຈາກອຸດສາຫະກຳ ຢູ່ເຂດອູລານນັ້ນ ໄດ້ແບ່ງເປັນເຂດການບໍລິຫານ ຂອງການຜະລິດແຕ່ລະເຂດນັ້ນ ແມ່ນກອງປະຊຸມ ທີ່ເພິ່ນໄດ້ຈັດຕັ້ງຂຶ້ນ ແຕ່ລະໄລຍະນັ້ນ ເປັນຜູ້ຕັດສິນ. ໃນກອງປະຊຸມດັ່ງກ່າວ ເພິ່ນໄດ້ເລືອກຄະນະກຳມະການ ບໍລິຫານປະຈຳເຂດຂຶ້ນ, ຊຶ່ງຄະນະດັ່ງກ່າວ ປະກອບດ້ວຍສະມາຊິກ ຈຳນວນ ໗ ຄົນ. ການເລືອກຕັ້ງບັນດາຜູ້ແທນທີ່ໄປຮ່ວມໃນກອງປະຊຸມ ແລະການເລືອກຕັ້ງສະມາຊິກ ຄະນະກຳມະ

ການບໍລິຫານນັ້ນ ເພິ່ນໄດ້ອີງໃສ່ຫລັກການອັນດຽວກັນກັບຫລັກການເລືອກຕັ້ງ ສະມາຊິກສະພາທຸລະກິດຂອງໂຮງງານ. ໃນກອງປະຊຸມ ແລະໃນກອງປະຊຸມຄັ້ງສະໄຫມສາມັນຂອງຄະນະກຳມະການບໍລິຫານນັ້ນ ເພິ່ນໄດ້ມີການແກ້ໄຂບັນຫາຫຼັກການ, ລົງມະຕິຮັບຮອງເອົາຄຳແນະນຳ ແລະເອກະສານຊີ້ນຳອື່ນໆ. ຫ້ອງການບໍລິຫານເຂດ ແມ່ນຢູ່ໃຕ້ການຊີ້ນຳ ຂອງສຳນັກອ້າ-ຫລວງຄຸ້ມຄອງການຜະລິດ ຊຶ່ງສຳນັກດັ່ງກ່າວ ເປັນສ່ວນປະກອບ ຂອງສະພາເສດຖະກິດແຫ່ງຊາດປະຈຳແຂວງ.

ແຕ່ເຖິງວ່າໂຄງຮ່າງຄຸ້ມຄອງດັ່ງກ່າວຂ້າງເທິງນີ້ ຈະດຳເນີນໄປ ຢ່າງມີຜົນດີປານໃດກໍຕາມ ມັນເປັນພຽງຄວາມ ສຳຄັນ ຂອງຫ້ອງທຶນເທົ່ານັ້ນ ເພາະວ່າ ຮູບການຄຸ້ມຄອງ ດັ່ງກ່າວ ມັນເຫມາະສົມສະເພາະແຕ່ອົງປະກອບ ຂອງອຸດສາຫະກຳອູລານເທົ່ານັ້ນ.

ສະຫະພັນກຳມະບານ ອຸດສາຫະກຳເຫລັກກ້າ ກໍໄດ້ທຸ່ມເທເຫື່ອແຮງໃສ່ບໍ່ຫນ້ອຍ ໃນການວາງຮ່າງການຄຸ້ມຄອງ ຂອງຕົນ. ໃນເດືອນກູມພາ ປີ ໑໙໑໘ ເພິ່ນໄດ້ເປີດກອງປະຊຸມຜູ້ຕາງຫນ້າຄະນະກຳມະການໂຮງຈັກໂຮງງານ ແລະສະຫະພັນກຳມະບານທົ່ວລັດເຊຍ ທີ່ເຂົ້າຮ່ວມການບໍລິຫານໂຮງຈັກໂຮງງານອື່ນ ເພື່ອສຶກສາບັນຫາການຄຸ້ມຄອງໂຮງຈັກໂຮງງານ, ຊຶ່ງເພິ່ນໄດ້ລົງມະຕິຮັບຮອງເອົາ "ກົດລະບຽບ ຂອງການຈັດຕັ້ງ ຫ້ອງການຄົ້ນຄ້ວາບັນຫາການຄຸ້ມຄອງໂຮງຈັກໂຮງງານ". ຫນ້າທີ່ຂອງຫ້ອງການດັ່ງກ່າວ ແມ່ນຄົ້ນຄ້ວາຮູບການຈັດຕັ້ງຄຸ້ມ

ຄອງເອກະພາບ ບັນດາໂຮງຈັກໂຮງງານອຸດສາຫະກຳໃນທົ່ວປະເທດ, ວາງຂໍ້ກຳນົດ ກ່ຽວກັບການວາງອັດຕາອອກແຮງ-ງານ ແລະເງິນເດືອນ, ກຳນົດລະບຽບການກ່ຽວກັບການພົວພັນລະຫວ່າງ ອົງການກວດກາ ກັບກົງຈັກຄຸ້ມຄອງ ຢູ່ໃນໂຮງຈັກໂຮງງານຕ່າງໆ.

ສະຫລຸບແລ້ວເຫັນວ່າ ຫ້ອງການດັ່ງກ່າວເປັນບ່ອນຄົ້ນຄວ້າບັນຫາຫລັກການກ່ຽວກັບການຈັດຕັ້ງ ແລະການຄຸ້ມຄອງ ເວົ້າລວມ. ແຕ່ຢ່າງໃດກໍຕາມ ເພິ່ນເຫັນໄດ້ວ່າແມ່ນການສະແດງອອກເຖິງຄວາມພະຍາຍາມ ເພື່ອຈະແກ້ໄຂບັນຫາ ກ່ຽວກັບການຈັດຄຸ້ມຄອງໂຮງຈັກໂຮງງານ ໃນຂະແໜງອຸດສາຫະກຳອັນໜຶ່ງອັນດຽວເທົ່ານັ້ນ. ສ່ວນບັນຫາການຈັດຕັ້ງລະບົບການຄຸ້ມຄອງອຸດສາຫະກຳ ລວມທັງໝົດນັ້ນ ກໍຍັງບໍ່ທັນແກ້ໄຂ ໄດ້ເທື່ອ. ສະນັ້ນ ເພິ່ນຈຶ່ງຮຽກຮ້ອງໃຫ້ສູນກາງແລະ ທ້ອງຖິ່ນພ້ອມກັນສຸມທຸກຄວາມພະຍາຍາມຂອງຕົນ ເພື່ອແກ້ໄຂ ບັນຫາດັ່ງກ່າວ.

ການສຶກສາຄົ້ນຄ້ວາ ໃນຂະແໜງການຈັດຕັ້ງຄຸ້ມຄອງ ອຸດສາຫະກຳ ໃນໄລຍະນັ້ນ ໄດ້ສະແດງອອກ ໃນສອງທ່າ ອຽງດັ່ງນີ້: ອັນທີໜຶ່ງ ແມ່ນການຈັດຕັ້ງລະບົບຄຸ້ມຄອງ ລວມສູນຢ່າງເຂັ້ມງວດແລະອັນທີສອງໄດ້ແກ່ອົງປະກອບຈັດຕັ້ງຄຸ້ມຄອງແບບສະຫະບານກຳມະກອນ. ຄຳເຫັນອັນແຕກຕ່າງກັນໃນການຊອກຫາການແກ້ໄຂບັນຫາຄຸ້ມຄອງໂຮງຈັກໂຮງງານທີ່ໂອນມາເປັນຂອງລັດນັ້ນ ມັນປາກົດຂຶ້ນຈະແຈ້ງທີ່ສຸດ ຢູ່ໃນກອງປະຊຸມ

ໃຫຍ່ ສະພາເສດຖະກິດແຫ່ງຊາດທົ່ວລັດເຊຍ ຄັ້ງທີ I ນັ້ນ. ທ່ານ ກ.ດ.ໄວແບກ ທີ່ເປັນສະມາຊິກຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ແລະເປັນຜູ້ທີ່ມີບົດບາດ ໃນຂະບວນການອົງການກຳມະບານ ຢູ່ລັດເຊຍ ໄດ້ຂຶ້ນກ່າວຄຳເຫັນໃນນາມຂອງສະພາເສດຖະກິດແຫ່ງຊາດສູງສຸດວ່າ: "ຂໍເວົ້າເປັນເທື່ອທຳອິດ ແລະເທື່ອສຸດທ້າຍວ່າ ພວກເຮົາບໍ່ແມ່ນ ສະຫະບານກຳມະກອນ, ພວກເຮົາຮັບຮູ້ນຳກັນແລ້ວວ່າ ບັນດາໂຮງຈັກໂຮງງານທັງຫມົດ ແມ່ນຊັບສົມບັດຂອງລັດ,ສະນັ້ນບັນດາກຳມະກອນ ໃນໂຮງຈັກໂຮງງານເຫລົ່ານີ້ ບໍ່ມີສິດຈະຮຽກຮ້ອງຕາມໃຈມັກ ພໍໃຜພໍມັນ ເພື່ອຄຸ້ມຄອງໂຮງຈັກໂຮງ ງານໂດຍຕົນເອງ, ຖ້າພວກເຮົາຫາກປະຕິບັດ ຕາມໃຈມັກ ແນວນັ້ນ ກໍຫມາຍຄວາມວ່າ ພວກເຮົາບໍ່ເຫັນຜົນປະໂຫຍດ ລວມຂອງຊາດແຕ່ຢ່າງໃດ." ຄະນະປະທານ ສະພາເສດຖະກິດ-ແຫ່ງຊາດສູງສຸດ ໄດ້ໃຊ້ມາດຕາການ ຢ່າງເຄັ່ງຄັດຕໍ່ການຄຸ້ມຄອງ ແບບອົງການຄຸ້ມຄອງເສດຖະກິດຂັ້ນລຸ່ມ ຕ້ອງຢູ່ໃຕ້ການບັງຄັບບັນຊາ ຂອງອົງການຂັ້ນເທິງ. ເນື່ອງຈາກວ່າ ຄະນະບໍລິຫານຂອງໂຮງຈັກໂຮງງານໃດຫນຶ່ງນັ້ນ ເປັນພຽງ ສາຂາຂັ້ນຕ່ຳ ຂອງລະບົບຄຸ້ມຄອງເທົ່ານັ້ນ ທຸກວຽກງານເຄື່ອນໄຫວຂອງຕົນ ຈະຕ້ອງຢູ່ພາຍໃຕ້ການບັນຊາຂອງອົງການ ຂັ້ນເທິງສະເຫມີ ແລະຕົນກໍມີຫນ້າທີ່ຮັບຜິດຊອບ ຕໍ່ອົງການ ຂັ້ນເທິງສະເຫມີ.

ຄວາມປາຖະຫນາຂອງຄະນະປະທານ ສະພາເສດຖະກິດ-

ແຫ່ງຊາດສູງສຸດ ທີ່ແນໃສ່ຈັດຕັ້ງແລະປັບປຸງລະບົບຄຸ້ມຄອງອຸດ
ສາຫະກຳແບບລວມສູນ ໃຫ້ແຂງແຮງນັ້ນ ໄດ້ປະເຊີນກັບການ
ຂັດຂວາງ ຂອງບັນດາ "ນັກກອມມູນິດຝ່າຍຊ້າຍ" ຢ່າງໃຫຍ່,
ທີ່ປ້ອງກັນແນວຄິດຄຸ້ມຄອງ ແບບສະຫະບານກຳມະກອນ.ພວກ
ເຂົາໄດ້ສະເຫນີຕໍ່ສະພາ ສອງວິທີຄຸ້ມຄອງດັ່ງນີ້: ວິທີທີຫນຶ່ງ
ການຄຸ້ມຄອງໂຮງຈັກໂຮງງານ ເປັນຫນ້າທີ່ຂອງຫນ່ວຍ ລວມ
ສູນ ຂອງຊາວກຳມະກອນ; ວິທີທີສອງ ຕາມແນວຄິດ ຂອງ
ພວກເຂົາ ໃນວຽກງານປະສົມປະສານ ລະຫວ່າງ ຫນ່ວຍບໍລິ
ຫານ ແລະອົງການຈັດຕັ້ງຂັ້ນເທິງນັ້ນ ແມ່ນມີຢູ່ບ່ອນວ່າ ອົງ
ການຂັ້ນເທິງ ມີພຽງຫນ້າທີ່ຮັບປະກັນວັດຖຸດິບ, ເຊື້ອເພີງ ,
ເງິນຕາແລະການລົງທຶນ ແກ່ໂຮງຈັກໂຮງງານ. ຕໍ່ບັນຫານີ້
ຫນ້າທີ່ການພົວພັນຂອງອົງການຈັດຕັ້ງຂັ້ນເທິງ ຕໍ່ບັນດາ ໂຮງ
ງານອຸດສາຫະກຳ ມີການຈຳກັດ. ແຕ່ວ່າ ຂໍ້ສະເຫນີດັ່ງກ່າວ
ບໍ່ໄດ້ຮັບການສະຫນັບສະຫນູນ ຈາກບັນດາຜູ້ແທນຂອງກອງປະ
ຊຸມ.

ກອງປະຊຸມໄດ້ມີມະຕິຮັບຮອງເອົາດຳລັດ ຂອງພວກຝ່າຍທີ່
ສະເຫນີ ໃຫ້ມີການຄຸ້ມຄອງອຸດສາຫະກຳ ແບບລວມສູນ.ການ
ແຕ່ງຂໍ້ດຳລັດສະບັບຖາວອນນັ້ນ ມີທ່ານ ວ.ອີ.ເລນິນ ໄດ້
ເຂົ້າປະສານສົມທົບ ໂດຍຕົນເອງ. ເພື່ອໃຫ້ສອດຄ່ອງກັບ ຂໍ້
ດຳລັດດັ່ງກ່າວ ຢູ່ທຸກໂຮງຈັກໂຮງງານ ແລະອຸດສາຫະກຳຂຸດ
ຄົ້ນບໍ່ແຮ່ ກໍໄດ້ຈັດຕັ້ງຄະນະບໍລິຫານຂອງຕົນຂຶ້ນ.ເພິ່ນໄດ້ອອກ
ຂໍ້ກຳນົດ ກ່ຽວກັບການປະກອບ ຄະນະບໍລິຫານ ໂຮງຈັກໂຮງ

ງານດັ່ງນີ້: ຈຳນວນສອງສ່ວນສາມ ໃນຄະນະບໍລິຫານດັ່ງ - ກ່າວ ແມ່ນແຕ່ງຕັ້ງຂຶ້ນ ໂດຍສະພາເສດຖະກິດ ແຫ່ງຊາດສູງສຸດ ຫລືສະພາເສດຖະກິດແຫ່ງຊາດປະຈຳແຂວງ ແລະສະມາຊິກຫນຶ່ງາ**ສ່ວນສາມ** ແມ່ນບັນດາຊາວກຳມະກອນ ໃນໂຮງຈັກໂຮງງານເລືອກເອົາເອງ, ຊຶ່ງຜູ້ທີ່ຮັບເລືອກຕັ້ງນັ້ນ ຈະຕ້ອງແມ່ນສະມາຊິກ ຂອງອົງການກຳມະບານ. ໃນຂໍ້ດຳລັດດັ່ງກ່າວໄດ້ບົ່ງໄວ້ວ່າ ສະພາເສດຖະກິດແຫ່ງຊາດສູງສຸດ ຫລືສະພາເສດຖະກິດແຫ່ງຊາດປະຈຳແຂວງ ອາດອະນຸຍາດ ໃຫ້ສະຫະພັນກຳມະບານທົ່ວລັດເຊຍ **ຫລືແຂວງ**ທີ່ມີສິດສົ່ງຕົວແທນ ຂອງຕົນ ເຂົ້າຢູ່ໃນຄະນະບໍລິຫານໂຮງຈັກໂຮງງານດັ່ງກ່າວ ໃນຈຳນວນ ເຄິ່ງຫນຶ່ງຂອງຜູ້ສະຫມັກທັງຫມົດ.

ການປະຕິບັດແນວນີ້ ແມ່ນຮັບປະກັນໃຫ້ພະນັກງານ,ກຳມະກອນ ວິຊາສະເພາະຜູ້ຊຳນິຊຳນານ ເຂົ້າຮ່ວມໃນວຽກ ງານຄຸ້ມຄອງການຜະລິດ. ສຳລັບວິສາຫະກິດໃດ ທີ່ມີການ ໂຮມຫລາຍໂຮງຈັກໂຮງງານເຂົ້າມາຢູ່ນຳຕົນນັ້ນ ເພິ່ນໄດ້ຕັ້ງເປັນສອງອົງການຄຸ້ມຄອງໂຮງງານຂຶ້ນ. ນອກຈາກນັ້ນ ໃນແຕ່ລະຫນ່ວຍການຜະລິດຂອງໃຜມັນ ເພິ່ນກໍຕັ້ງຄະນະບໍລິຫານ ຂອງເຂົາອີກ ຊຶ່ງຄະນະດັ່ງກ່າວ ແມ່ນຂຶ້ນໂດຍກົງກັບກົມໃຫຍ່ຂອງສະຫະວິສາຫະກິດທັງຫມົດ. ສະມາຊິກຄະນະບໍລິຫານໂຮງງານແລະກົມໃຫຍ່ຈະໄດ້ຮັບການເລືອກຕັ້ງໃຫມ່ໃນກຳນົດຜົນເດືອນ. ຕາມຂໍ້ດຳລັດນັ້ນ ພວກເຂົາມີຫນ້າທີ່ວາງແຜນການ ຂະຫຍາຍການຜະລິດ, ການລຳລຽງ, ຂະຫຍາຍແລະປັບປຸງອຸປະກອນ

ການຜະລິດຂອງໂຮງງານ, ຄາດຄະເນດ້ານການເງິນ, ເກັບກຳຂໍ້ມູນ ເພື່ອຄິດໄລ່ລາຄາຕົ້ນທຶນຜະລິດຕະພັນ ແລະ ອັດຕາຄ່າແຮງງານ, ວາງລະບຽບວິໄນພາຍໃນໂຮງງານ, ແຕ່ງຕັ້ງຫົວໜ້າພະແນກເຕັກນິກ ແລະການຄ້າ ແລະກວດກາ ການເຄື່ອນໄຫວຂອງເຂົາ, ເອົາໃຈໃສ່ຕໍ່ຊີວິດການເປັນຢູ່ຂອງບັນດາກຳມະກອນ ແລະຂ້າລັດຖະການ ໃນໂຮງຈັກໂຮງງານ - ຂອງຕົນ. ແຜນການ, ລາຍການຄາດຄະເນການເງິນ ແລະການລາຍງານ ກ່ຽວກັບການເຄື່ອນໄຫວ ຂອງວຽກງານ ບໍລິຫານຂອງຕົນ ຈະຕ້ອງນຳສົ່ງໃຫ້ແກ່ ສະພາເສດຖະກິດ ແຫ່ງຊາດສູງສຸດ ຫລືສະພາເສດຖະກິດແຫ່ງຊາດປະຈຳແຂວງ ສຸດແລ້ວແຕ່ໂຮງງານຂອງຕົນ ຫາກຂຶ້ນນຳຜູ້ໃດ.

ໃນກໍລະນີໂຮງງານຫາກມີລັກສະນະປະສົມ, ເວລານັ້ນໜ້າທີ່ຂອງກົມໃຫຍ່ ອາດແຕກຕ່າງກໍເປັນໄດ້. ຈຸດສູນຂອງແຫ່ງການບັນຊາຂອງໂຮງງານດັ່ງກ່າວຈະຕົກຢູ່ນຳຄະນະ ບໍລິຫານແຕ່ລະໜ່ວຍຂອງການຜະລິດ. ໃນກໍລະນີມີກົມໃຫຍ່ ຈະກຳກັບນຳແຕ່ວຽກລວມທີ່ສະແດງຜົນງານຂອງແຕ່ລະໂຮງງານ, ໂຮງສ້ອມແປງແລະໜ່ວຍຜະລິດອື່ນໆອີກ, ດຳເນີນການຊີ້ນຳ ການເຄື່ອນໄຫວຂອງມັນ. ຄະນະຄຸ້ມຄອງໂຮງງານ ແລະ ກົມໃຫຍ່ຂອງບັນດາໂຮງງານປະສົມນັ້ນໂດຍອີງຕາມໂຄງຮ່າງການຈັດຕັ້ງຄຸ້ມຄອງອຸດສາຫະກຳທີ່ໂອນມາເປັນຂອງລັດທີ່ຮັບຮອງເອົາຢູ່ໃນກອງປະຊຸມສະພາເສດຖະກິດແຫ່ງຊາດທັງໝົດ ທີ່ລັດ-ເຊຍ ຄັ້ງທີ III ແມ່ນຂຶ້ນກັບກົມຄຸ້ມຄອງໂຮງຈັກໂຮງງານ ທີ່

ໂອນມາເປັນຂອງລັດຂອງແຂວງ, ຊຶ່ງກົມນີ້ ແມ່ນສ່ວນປະກອບຂອງສະພາເສດຖະກິດແຫ່ງຊາດປະຈຳແຂວງ. ຄະນະກົມຈຸ້ມຄອງຂອງແຂວງນັ້ນ ໄດ້ຮັບການເລືອກຕັ້ງ ຈາກຜູ້ຕາງ ໜ້າໃນກອງປະຊຸມຂອງຜູ້ແທນອົງການຈຸ້ມຄອງໂຮງຈັກ ໂຮງງານແລະອົງການກຳມະບານຂອງແຂວງ. ການປະກອບຂອງຄະນະບໍລິຫານ ແມ່ນອະນຸມັດຈາກຄະນະປະທານ ສະພາເສດຖະກິດແຫ່ງຊາດປະຈຳແຂວງ. ປະກອບຢູ່ ໃນຄະນະ ບໍລິຫານແຂວງດັ່ງກ່າວນັ້ນ ມີຜູ້ຕາງໜ້າຈາກສະພາເສດຖະກິດ ແຫ່ງຊາດສູງສຸດ ຈຳນວນໜຶ່ງຄົນ ແລະຈາກສະຫະພັນກຳມະບານແຂວງໜຶ່ງຄົນ ເຂົ້າຮ່ວມຢູ່ດ້ວຍ. ກົມບໍລິຫານແຂວງ ມີໜ້າທີ່ຊຸນຳຄະນະບໍລິຫານ ຂອງໂຮງຈັກໂຮງງານ. ໂດຍອີງໃສ່ພື້ນຖານຂອງການຄາດຄະເນດ້ານການເງິນ ແລະແຜນການ ຂະຫຍາຍການຜະລິດ ຂອງບັນດາໂຮງຈັກໂຮງງານ ຕ່າງໆນັ້ນເພິ່ນໄດ້ປະກອບການຄາດຄະເນທາງດ້ານການເງິນແລະແຜນການຂະຫຍາຍການຜະລິດຂອງແຂວງ, ຮັດບັນຊີຜະລິດຕະພັນ ທີ່ຜະລິດອອກ, ອອກໃບສັ່ງຊື້, ແຈກຢາຍສິນຄ້າຕາມຄຳສັ່ງຂອງອົງການເສດຖະກິດສູນກາງ, ຮັບປະກັນ ອຸປະກອນການຜະລິດ ໃຫ້ແກ່ບັນດາໂຮງງານ ທີ່ຢູ່ພາຍໃຕ້ການ ບັນຊາຂອງຕົນ, ຕົກລົງການປະກອບຄະນະບໍລິຫານ ໂຮງຈັກ ໂຮງງານ. ກົມຈຸ້ມຄອງແຂວງ ມີສິດແຕ່ງຕັ້ງຜູ້ຕາງໜ້າ ຂອງຕົນເຂົ້າຮ່ວມຢູ່ໃນຄະນະບໍລິຫານໂຮງຈັກໂຮງງານ ທີ່ອົນກັບ ຕົນແລະພ້ອມທັງມີສິດຢຸດປະຕິບັດ ທຸກມາດຕາການຂອງເຂົາໄດ້.

ເພິ່ນໄດ້ຈັດຕັ້ງກົມຄຸ້ມຄອງຂະແໜງອຸດສາຫະກຳທີ່ໂອນມາເປັນຂອງລັດຂຶ້ນຢູ່ສູນກາງ ເພື່ອຊີ້ນຳນຳພາບັນດາກົມຂອງແຂວງ. ການປະກອບກົມດັ່ງກ່າວນີ້ ເພິ່ນໄດ້ຄັດເລືອກ ເອົາສະມາຊິກທີ່ຢູ່ໃນກອງປະຊຸມທົ່ວລັດລັດເຊຍ, ຊຶ່ງໃນກອງປະຊຸມດັ່ງກ່າວ ມີຜູ້ຕາງໜ້າຂອງຄະນະບໍລິຫານໂຮງຈັກ ໂຮງງານ ແລະຜູ້ຕາງໜ້າສະຫະພັນ ອົງການກຳມະບານທົ່ວລັດລັດເຊຍ ເຂົ້າຮ່ວມນຳ. ກົມຄຸ້ມຄອງແຂວງມີໜ້າທີ່ສົ່ງຜູ້ແທນຂອງຕົນຈຳນວນໜຶ່ງຄົນ ເຂົ້າປະກອບຢູ່ກົມຄຸ້ມຄອງສູນກາງ. ສຳລັບໜ້າທີ່ຂອງກົມສູນກາງນັ້ນ ກໍມີລັກສະນະອັນດຽວກັນກັບ ກົມຂອງແຂວງ ແຕ່ມາດຕາສ່ວນຂອງມັນ ຫາກຢູ່ໃນລະດັບສູງກ່ວາ - ເຊັ່ນ ກົມສູນກາງດຳເນີນການຊີ້ນຳບັນດາໂຮງຈັກ ໂຮງງານທີ່ໂອນມາເປັນຂອງລັດ ໃນຂອບເຂດຂອງທົ່ວລັດລັດເຊຍ. ນອກຈາກນັ້ນ ກົມສູນກາງຍັງມີໜ້າທີ່ແກ້ໄຂບັນຫາ, ທີ່ກົມຂອງແຂວງບໍ່ສາມາດແກ້ຕົກໄດ້ ເຊັ່ນ: ຍັນຫາການຊັບຊ້ອນຄະນະຄຸ້ມຄອງໂຮງຈັກໂຮງງານ ໃນກໍລະນີຫາກເຂົ້າຮ່ວມກັບ ໂຮງງານດັ່ງກ່າວ ມີໜ່ວຍການຜະລິດ ທີ່ຕັ້ງຢູ່ໃນແຂວງອື່ນໆເຂົ້າຮ່ວມນຳອີກ, ບັນຫາການປະກອບສະຫະວິສາຫະກິດ ລະຫວ່າງແຂວງ ແລະອື່ນໆ.

ສະພາເສດຖະກິດແຫ່ງຊາດສູງສຸດເປັນອົງການຄຸ້ມຄອງສູງສຸດຂອງໂຮງຈັກໂຮງງານທີ່ຖືກໂອນມາເປັນຂອງລັດ ທີ່ປະກອບດ້ວຍຫລາຍພະແນກທົ່ວໄປ ແລະ ພະແນກການຜະລິດ, ຊຶ່ງນຳພາບັນດາກົມຄຸ້ມຄອງສູນກາງ ໂຮງຈັກໂຮງງານທີ່ໂອນ

ມາເປັນຂອງລັດ. ໃນກໍລະນີຖ້າຫາກຂະແຫນງອຸດສາຫະກຳ ຫລື ໂຮງຈັກໂຮງງານໃດ ຕົກຢູ່ພາຍໃຕ້ການຊີ້ນຳຂອງສະພາເສດຖະກິດແຫ່ງຊາດສູງສຸດ ໂດຍກົງນັ້ນ ຫນ້າທີ່ຄຸ້ມຄອງ ຂອງກົມແຂວງຫມົດແລ້ວ. ກົມສູນກາງຈຶ່ງມີສິດຮັບຫນ້າທີ່ດັ່ງກ່າວ ແທນ ແລະສະພາເສດຖະກິດແຫ່ງຊາດສູງສຸດ ມີຫນ້າທີ່ຄືກັບ ກົມສູນກາງ.

ດັ່ງນັ້ນ, ໃນທ່າມກາງທີ່ເພິ່ນດຳເນີນການໂອນເອົາບັນດາໂຮງງານ ອຸດສາຫະກຳມາເປັນຂອງລັດນັ້ນ, ທ່ານ ວ.ອີ. ເລນິນ ແລະບັນດາພະນັກງານຊັ້ນນຳ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ຈຶ່ງໄດ້ລົງມາສົມທົບໂດຍກົງໃນການຮ່າງລະບົບຄຸ້ມຄອງ ບັນດາໂຮງຈັກໂຮງງານ ອຸດສາຫະກຳທີ່ຖືກໂອນມາເປັນຂອງລັດດັ່ງກ່າວ. ຂໍ້ດຳລັດກ່ຽວກັບການຄຸ້ມຄອງໂຮງຈັກໂຮງງານ ທີ່ໂອນມາເປັນຂອງລັດ ທີ່ເພິ່ນໄດ້ຮັບຮອງເອົາຢູ່ໃນກອງປະຊຸມສະພາເສດຖະກິດແຫ່ງຊາດທົວລັດລັດເຊຍຄັ້ງທີຫນຶ່ງນັ້ນ ມັນສະແດງເຖິງການປັບປຸງພື້ນຖານ ການຄຸ້ມຄອງອຸດສາຫະກຳໃນຂັ້ນຕໍ່ໄປ. ບັນດາຫລັກການພື້ນຖານ ຕ່າງໆ ເຊັ່ນ ຫລັກການລວມສູນ ປະຊາທິປະໄຕ, ການສົມທົບ ຂອງການຄຸ້ມຄອງ ທາງຕັ້ງກັບລະບົບອົງການຄຸ້ມຄອງ ເສດຖະກິດທ້ອງຖິ່ນ, ການປະສານຂອງຫນ້າທີ່ແຜນການ ແລະ ການປົກຄອງ ຢູ່ໃນສາຂາຄຸ້ມຄອງທຸກອັນ, ສາຍການພົວພັນ ອັນສະຫນິດແຫນ້ນຂອງການຈັດຕັ້ງ ລະຫວ່າງ ບັນດາອົງການ ຊີ້ນຳວຽກງານ ເສດຖະກິດແຕ່ລະຂັ້ນນັ້ນ ກາຍເປັນຈຸດເລີ່ມ ຕົ້ນ

ຂອງທຸກກິດຫມາຍໃນຂັ້ນຕໍ່ໄປ ໃນຂະແຫນງດັ່ງກ່າວ. ລະບົບການຄຸ້ມຄອງອຸດສາຫະກຳລັດອັນນີ້ ມີການປັບປຸງແຕ່ເລັກນ້ອຍໄດ້ນຳໃຊ້ໄປຈົນເຖິງການເລີ່ມຕົ້ນ ປະຕິບັດນະໂຍບາຍ ເສດຖະກິດແບບໃຫມ່.

ບັນຫາສຳຄັນບັນຫາຫນຶ່ງຂອງວຽກງານຄຸ້ມຄອງ ທີ່ເພິ່ນໄດ້ນຳຂຶ້ນສຶກສາກັນ ຢູ່ພາຍໃນພັກ ໄດ້ແກ່ບັນຫາການເຮັດວຽກເປັນຄະນະ ແລະບຸກຄົນຮັບຜິດຊອບ, ທີ່ເພິ່ນນຳປະຕິບັດ ໃນສາຂາໂຄງຮ່າງຈັດຕັ້ງຄຸ້ມຄອງ ອຸດສາຫະກຳທຸກໆຂັ້ນ ຢ່າງເປັນເອກະພາບ (ເຊັ່ນ ໃນໂຮງຈັກໂຮງງານ, ສະຫະບໍລິສັດ, ກົມໃຫຍ່ແລະອື່ນໆ).

ໃນເບື້ອງຕົ້ນ ຮູບການຄຸ້ມຄອງອັນສຳຄັນ ໄດ້ແກ່ການຄຸ້ມຄອງ ແບບເປັນຄະນະ. ຄະນະດັ່ງກ່າວປະກອບຂຶ້ນ ດ້ວຍຜູ້ແທນ ຈາກອົງການຄຸ້ມຄອງເສດຖະກິດແລະອົງການກຳມະ - ບານຕ່າງໆ. ເນື່ອງຈາກວ່າຂະແຫນງອຸດສາຫະກຳຂະແຫນງໃດຂະແຫນງຫນຶ່ງ ມັນກໍມີ ການປະສົມປະສານກັນ ຢ່າງ ສະຫນິດແຫນ້ນ, ສະນັ້ນ ອົງການຄຸ້ມຄອງທັງຫລາຍ ຈຶ່ງປະກອບດ້ວຍຫລາຍຄະນະ. ໃນຫນ່ວຍຄຸ້ມຄອງແບບເປັນຄະນະນັ້ນ ມີຜູ້ຕາງຫນ້າຈາກກົມໃຫຍ່, ກົມສູນກາງ, ອົງການກຳມະບານ, ແລະຄະນະກຳມະການໂຮງຈັກໂຮງງານຕ່າງໆເຂົ້າຮ່ວມ. ໃນໄລຍະເບື້ອງຕົ້ນ ການຄຸ້ມຄອງອຸດສາຫະກຳ ສັງຄົມນິຍົມ ຈັດຕັ້ງແບບການຄຸ້ມຄອງເປັນຄະນະນັ້ນ ມັນເຫມາະສົມທີ່ ສຸດ . ຫນ່ວຍຄຸ້ມຄອງເປັນຄະນະດັ່ງກ່າວ ໄດ້ມີບົດບາດສຳຄັນທີ່ສຸດຕໍ່

ການດູດດຶງເອົາບັນດາກຳມະກອນ ເຂົ້າຮ່ວມໃນວຽກງານຄຸ້ມຄອງໂຮງຈັກໂຮງງານນັ້ນ, ຊຶ່ງໂດຍສະເພາະ ເພື່ອທົດແທນບ່ອນວ່າງຂອງຄະນະຊີ້ນຳໃຫມ່ ທີ່ຂາດບົດຮຽນ ແລະຄວາມຮູ້ດ້ານວິຊາສະເພາະ.

ແຕ່ເມື່ອຕົກມາເຖິງທ້າຍປີ ໑໙໑໘ ຮູບການຄຸ້ມຄອງ ແບບເປັນຄະນະນັ້ນ ກໍເກີດມີຈຸດອ່ອນຫລາຍດ້ານເຊັ່ນ: ຂາດພະນັກງານຜູ້ຮັບຜິດຊອບ, ປ່ຽນຈາກການຊີ້ນຳແບບວ່ອງໄວທັນການໄປເຮັດການແກ້ໄຂບັນຫາແບບປຶກສາຫາລື ອັນຍືດຍາວ ແລະອື່ນໆອີກ. ທ່ານ ວ.ອີ.ເລນິນ ໄດ້ເວົ້າຢູ່ໃນກອງປະຊຸມໃຫຍ່ສະພາເສດຖະກິດແຫ່ງຊາດທົ່ວລັດເຊຍຄັ້ງທີIIວ່າ"...ວຽກງານບໍລິຫານ ສ່ວນຫນຶ່ງ ຂອງພວກເຮົາ, ໄດ້ ແກ້ໄຂ ແບບເປັນຄະນະ, ແຕ່ບາງຄັ້ງຄາວ ການໃຊ້ວິທີດັ່ງກ່າວ ໄດ້ເຮັດໃຫ້ວຽກງານບໍລິຫານຊັກຊ້າ...", ດ້ວຍເຫດນັ້ນ ທ່ານ ວ.ອີ.ເລນິນ ໄດ້ຍ້ຳວ່າ "... ການປ່ຽນ ຈາກການບໍລິຫານແບບເປັນຄະນະ ໄປຫາການຮັບຜິດຊອບໂດຍບຸກຄົນນັ້ນ ເປັນບັນຫາອັນຮີບດ່ວນໃນເວລານີ້ ..." (ວ.ອີ.ເລນິນ , ປະມວນບົດນິພົນ ສະບັບສົມບູນ, ເຫລັ້ມທີ ໓໗, ຫນ້າ ໓໙໗.)

ຫລັງຈາກກອງປະຊຸມໃຫຍ່ ສະພາເສດຖະກິດແຫ່ງຊາດທົ່ວລັດເຊຍ ຄັ້ງທີ II ເພິ່ນໄດ້ປັບປຸງລະບົບການຄຸ້ມຄອງໂຮງຈັກໂຮງງານ ແລະສະຫະບໍລິສັດ ໂດຍໃຊ້ວິທີການລົດຈຳນວນສະມາຊິກຄະນະລົງ ເຊັ່ນ: ຄະນະບໍລິຫານໂຮງຈັກໂຮງງານ -ຕ້ອງປະກອບດ້ວຍພຽງ ໓ ຫາ໕ ຄົນ, ສ່ວນຄະນະ ບໍລິຫານ

ຂອງກຸ່ມໂຮງງານ ຕ້ອງປະກອບດ້ວຍ ໕ ຫາ ໙ ຄົນແລະຄະນະບໍລິຫານສູນກາງ ແຕ່ ໗ ຫາ ໑໑ ຄົນ.

ກອງປະຊຸມໃຫຍ່ຂອງພັກຄັ້ງທີ IX ໄດ້ມີບົດບາດສຳຄັນ ໃນການປັບປຸງຫລັກການຄຸ້ມຄອງ. ໃນມະຕິຂອງກອງປະຊຸມໃຫຍ່ຂອງພັກ ເພິ່ນໄດ້ບົ່ງໄວ້ວ່າ: "ໜ້າທີ່ຕົ້ນຕໍ ຂອງການຈັດຕັ້ງຄຸ້ມຄອງ ໄດ້ແກ່ການຈັດຕັ້ງການຊີ້ນຳ ທີ່ມີຄວາມສາມາດ , ເຂັ້ມແຂງ ແລະຂະຫຍັນຫ້າວຫັນ, ໂດຍບໍ່ຈຳແນກວ່າ ມັນຈະຢູ່ໃນໂຮງງານ ອຸດສາຫະກຳອັນໃດໜຶ່ງ ຫລືທັງໝົດຂອງຂະແໜງອຸດສາຫະກຳ." ("ມະຕິຂອງພັກ ແລະ ລັດຖະບານກ່ຽວກັບບັນຫາເສດຖະກິດ (ໃນໄລຍະປີ ໑໙໑໗ - ໑໙໖໗) ເຫລັ້ມທີ I, ຈຳໜ່າຍຢູ່ມົດສະກູ ໃນປີ ໑໙໖໗, ໜ້າ໑໖໖).

ກອງປະຊຸມໃຫຍ່ຂອງພັກ ໄດ້ຮັບຮູ້ເຖິງຄວາມຈຳເປັນ ໃນການແຕ່ງຕັ້ງການຄຸ້ມຄອງ ແບບບຸກຄົນຮັບຜິດຊອບ ຢູ່ໃນໂຮງສ້ອມແປງ ແລະຕາມພະແນກການຜະລິດ. ເພື່ອກ້າວເຂົ້າສູ່ປະຕິບັດ ການຄຸ້ມຄອງແບບບຸກຄົນຮັບຜິດຊອບຢູ່ຕາມໂຮງຈັກໂຮງງານນັ້ນ ເພິ່ນໄດ້ດຳເນີນການລຶດຜ່ອນຈຳນວນສະມາຊິກ ຄະນະຮັບຜິດຊອບ ລົງເທື່ອລະກ້າວ. ໃນເວລາເພິ່ນນຳເອົາບັນຫາການພົວພັນ ໃນວຽກການຈັດຕັ້ງຄຸ້ມຄອງ ແບບບັນຊາເປັນຄະນະ ແລະແບບບຸກຄົນຮັບຜິດຊອບ ມາສຶກສານັ້ນ ກອງປະຊຸມໃຫຍ່ພັກ ຄັ້ງທີ IX ໄດ້ຢັ້ງຢືນວ່າ ການເຮັດໃຫ້ ຫລັກການຮັບຜິດຊອບ ອັນຈະແຈ້ງຕໍ່ໜ້າທີ່ວຽກງານ ຂອງບຸກຄົນ ເປັນຈິງນັ້ນ ແມ່ນເງື່ອນໄຂອັນຈຳເປັນ ຂອງການປັບປຸງການ ຈັດ

ຕັ້ງເສດຖະກິດແຫ່ງຊາດ. "ການຊີ້ນຳ ແບບເປັນຄະນະ ຈະຕ້ອງຖືກທົດແທນ ໂດຍການຊີ້ນຳ ແບບບຸກຄົນຮັບຜິດຊອບ ໃນວຽກງານບໍລິຫານ ເພາະການຊີ້ນຳແບບເປັນຄະນະນັ້ນ ມັນເປັນພຽງການທາບທາມພິຈາລະນາເທົ່ານັ້ນ.ລະດັບຄວາມສຳຄັນ ຂອງການຈັດຕັ້ງແຕ່ລະຂັ້ນນັ້ນ ມັນຂຶ້ນກັບຂອບເຂດ ຂອງວຽກງານ, ໜ້າທີ່ແລະຄວາມຮັບຜິດຊອບ". (ມະຕິຂອງພັກແລະລັດຖະບານເຊັ່ນດຽວກັນ ໜ້າ ໑໖໗).

ໃນເວລາທີ່ເພິ່ນຄົ້ນຄ້ວາ ບັນຫາການຈັດຕັ້ງຄຸ້ມຄອງອຸດສາຫະກຳ ແລະການຍົກລະດັບ ຂອງກຳລັງການຜະລິດນັ້ນລັດຊົນຊັ້ນກຳມາຊີບ ໄປປະເຊີນໜ້າກັບບັນຫາ ຫຍຸ້ງຍາກສັບສົນອັນໃຫຍ່ຫລວງ ຕໍ່ບັນຫາການໝູນໃຊ້ ບັນດານັກຊ່ຽວຊານ ເກົ່າແກ່ນັ້ນ. ເນື່ອງຈາກວ່າ ໃນໄລຍະທຳອິດຫລັງຈາກໄຊຊະນະຂອງການປະຕິວັດເດືອນຕຸລານັ້ນມີພວກນັກຊ່ຽວຊານ ຂອງນາຍທຶນ ໄດ້ກໍ່ວິນາສະກຳ ຕ້ານກັບອຳນາດໂຊວຽດ ຈຶ່ງເຮັດໃຫ້ເກີດການບໍ່ໄວ້ເນື້ອເຊື່ອໃຈ ຂອງຊົນຊັ້ນກຳມະກອນ ຕໍ່ບັນດາພະນັກງານ ເຕັກນິກ ແລະການຄ້າ. ການບໍ່ໄວ້ເນື້ອເຊື່ອໃຈດັ່ງກ່າວ ກໍຖືກສະໜັບສະໜູນ ຈາກບັນດາພວກ "ກອມມູນິດອຽງຊ້າຍ", "ກຸ່ມກຳມະກອນຄັດຄ້ານ" ແລະກຸ່ມຈໍລະຈັດອະນາທິປະໄຕຕ່າງໆອີກ.ດ້ວຍເຫດການດັ່ງກ່າວໃນບາງໂຮງຈັກໂຮງງານ ບັນດານັກຊ່ຽວຊານເກົ່າ ໄດ້ຖືກຂັບໄລ່ອອກ ຈາກໜ້າທີ່ ແລະມັນກໍໄດ້ສົ່ງຜົນສະທ້ອນບໍ່ດີ ຕໍ່ຂະບວນການຈັດຕັ້ງການຜະລິດ. ກ່ຽວກັບບັນຫານີ້ ທ່ານ ວ.ອີ.ເລນິນ ໄດ້ເນັ້ນ

ຫນັກຢູ່ເລື້ອຍໆ ເຖິງຄວາມຈຳເປັນນຳໃຊ້ບັນດານັກຊ່ຽວຊານນາຍທຶນ ເຂົ້າໃນຜົນປະໂຫຍດ ຂອງການກໍ່ສ້າງສັງຄົມນິຍົມ. ທ່ານເລນິນ ໄດ້ຂຽນໃນບົດຄວາມ "ຫນ້າທີ່ສະເພາະຫນ້າຂອງອຳນາດໂຊວຽດ" ວ່າ: "ຂາດການຊີ້ນຳຂອງບັນດາ ຊ່ຽວຊານ ໃນຂະແຫນງຕ່າງໆເຊັ່ນ: ດ້ານຄວາມຮູ້, ດ້ານວິຊາຊູດສາທະກຳ, ດ້ານຄວາມຊຳນິຊຳນານນັ້ນ ພວກເຮົາ ແມ່ນບໍ່ມີຫົນທາງຈະກ້າວໄປຫາ ສັງຄົມນິຍົມໄດ້, ເພາະວ່າ ລະບອບສັງຄົມນິຍົມ ມັນຮຽກຮ້ອງຄວາມຕື່ນຕົວ ຢ່າງບໍ່ຢຸດຢັ້ງຂອງມະຫາຊົນ ໃນການຍົກລະດັບ ປະສິດທິພາບ ຂອງການຜະລິດ - ໂດຍສົມທົບກັບລະບອບທຶນນິຍົມ ແລະບົນພື້ນຖານທີ່ລະບອບທຶນນິຍົມກ້າວມາເຖິງ". (ວ.ອີ.ເລນິນ, ປະມວນບົດນິພົນ ສະບັບສົມບູນ, ເຫລັ້ມທີ ໓໖, ຫນ້າ ໑໗໘.)

ໃນກອງປະຊຸມສະພາເສດຖະກິດແຫ່ງຊາດທົ່ວລັດເຊຍ ຄັ້ງທີ II ນັ້ນ ທ່ານ ວ.ອີ.ເລນິນ ໄດ້ຢ້ຳພິເສດໄວ້ວ່າ ພວກເຮົາມີຄວາມຈຳເປັນ "... ເພື່ອດູດດຶງເອົາບັນດານັກຊ່ຽວຊານ ... ພວກສະຫະກອນນາຍທຶນ ທີ່ຊຳນິຊຳນານໃນວຽກງານ ... ເຖິງເວລາແລ້ວ ທີ່ພວກເຮົາຄວນປະຕິເສດ ຕໍ່ຄວາມບາດຫມາງອັນເກົ່ານັ້ນຖິ້ມ ແລ້ວຮຽກຮ້ອງເອົານັກຊ່ຽວຊານທີ່ຕ້ອງການ ເຂົ້າມາຮັບໃຊ້ວຽກງານຂອງພວກເຮົາ... ການວາງຕົວຄືແນວນັ້ນ ຈະເປັນບໍ່ເກີດແຫ່ງຜົນສຳເລັດ ຂອງພວກເຮົາ." (ວ.ອີ.ເລນິນ, ປະມວນບົດນິພົນ ສະບັບສົມບູນ, ເຫລັ້ມທີ ໓໗ ຫນ້າ ໔໐໐).

ໃນຂໍ້ດຳລັດ ກ່ຽວກັບການຄຸ້ມຄອງສະຫະບໍລິສັດໃຫຍ່, ໂຮງຈັກໂຮງງານ ທີ່ໂອນມາເປັນຂອງລັດ ເຊິ່ງເພິ່ນໄດ້ລົງມະ ຕິຮັບຮອງເອົາຢູ່ໃນກອງປະຊຸມໃຫຍ່ ສະພາເສດຖະກິດ ແຫ່ງຊາດທົ່ວລັດເຊຍ ຄັ້ງທີII ນັ້ນ ໄດ້ບົ່ງໄວ້ວ່າ ການປະກອບຄະນະບໍລິຫານສູນກາງ ຂອງສະຫະບໍລິສັດການຜະລິດຈະຕ້ອງມີນັກວິຊາການ ຜູ້ທີ່ມີຄວາມສາມາດ ທາງດ້ານວິຊາອຸດສາຫະກຳ ແລະທາງດ້ານການຄ້າ ເຂົ້າຮ່ວມນຳ ຢ່າງນ້ອຍບໍ່ໃຫ້ລຸດຈຳນວນ ໒ ຄົນ. ໃນໂຄງການຂອງພັກກອມມູນິດ ລັດເຊຍ (ໂບນເຊວິກ), ທີ່ໄດ້ຜ່ານໂດຍກອງປະຊຸມໃຫຍ່ພັກ ຄັ້ງທີ VIIIໄດ້ບົ່ງໄວ້ວ່າ "ມີຄວາມຈຳເປັນຕ້ອງສ້າງບັນຍາ ກາດແບບສະຫາຍຮ່ວມງານ ຕໍ່ບັນດານັກຊ່ຽວຊານຂອງນາຍທຶນ , ຄຽງບ່າຄຽງໄລ່ກັບໝູ່ກຳມະກອນ ໂດຍການນຳພາຂອງກອມມູນິດ ຜູ້ທີ່ຕື່ນຕົວ, ເຮົາຮັດໄດ້ແນວນີ້ ມັນຈະສ້າງ ຄວາມເຂົ້າອົກເຂົ້າໃຈ ຊຶ່ງກັນແລະກັນ ແລະກໍເພື່ອເສື່ອມການອອກແຮງງານ ທາງດ້ານມັນສະໝອງ ແລະເຫື່ອແຮງຂອງບັນດາພາລະກອນ ທີ່ໄດ້ຖືກແບ່ງແຍກ ໂດຍນາຍທຶນມານັ້ນ."

ໃນເວລາດຽວກັນນັ້ນ ເພິ່ນກໍໄດ້ວາງມາດຕາການ ຕົວຈິງເພື່ອກໍ່ສ້າງຄະນະນຳພາ ໂຮງງານອຸດສາຫະກຳໃນໝູ່ກຳມະກອນ ຜູ້ທີ່ມີຄວາມຕື່ນຕົວ ທາງດ້ານຊົນຊັ້ນ. ໃນວັນທີ ໘-ເດືອນກຸມພາ ປີ ໑໙໒໐ ຢູ່ທີ່ຫໍວາງສະແດງອຸດສາຫະກຳຂອງສະພາເສດຖະກິດແຫ່ງຊາດສູງສຸດ ເພິ່ນໄດ້ມີພິທີເປີດການ - ສອນ ການຄຸ້ມຄອງໂຮງຈັກໂຮງງານອຸດສາຫະກຳ ໃຫ້ແກ່ບັນ

ດາກຳມະກອນ ຂອງໂຮງງານໃຫຍ່ໆຕັ້ງ ໘໐ ແຫ່ງຢ່າງເປັນທາງການ. ການເປີດການຮ່ຳຮຽນແກ່ກຳມະກອນ ດັ່ງກ່າວ ເພິ່ນຖືວ່າ ເປັນເທື່ອທຳອິດຢູ່ໃນໂລກ. ("ມະຕິຂອງ ພັກແລະລັດຖະບານ ກ່ຽວກັບບັນຫາເສດຖະກິດ" ເຫລັ້ມທີ I , ໜ້າ ໑໓໔.) ການລິເລີ່ມຂອງສະພາເສດຖະກິດແຫ່ງຊາດ-ສູງສຸດ ດັ່ງກ່າວນັ້ນ ໄດ້ສະໜັບສະໜູນ ໂດຍກອງປະຊຸມ - ໃຫຍ່ພັກກອມມູນິດລັດເຊຍ (ໂບນເຊວິກ) ຄັ້ງທີ IX . ໃນມະຕິຂອງກອງປະຊຸມນີ້, ເພິ່ນໄດ້ບົ່ງໄວ້ວ່າ: " ຕ້ອງຈັດຕັ້ງການຮ່ຳຮຽນ ການຄຸ້ມຄອງຊຸດສາຫະກຳ ໃນໂຮງງານ ໃຫຍ່ຜະລິດຈຳເພາະ ຫລືໃນກຸ່ມໂຮງຈັກໂຮງງານ ເພື່ອບັນດາກຳມະກອນ ຜູ້ທີ່ມີຄວາມຮູ້ ຕ້ອງພະຍາຍາມຕາມຄວາມ ສາມາດຄຽງຄູ່ກັນໄປກັບການປະກອບວຽກງານ. ມັນແມ່ນການ ຮ່ຳຮຽນ ກ່ຽວກັບພາກສ່ວນຄຸ້ມຄອງ ທີໄດ້ຖອດຖອນບົດຮຽນ ມາແລ້ວ ໃນໂຮງຈັກໂຮງງານ. ພາຍຫລັງສຳເລັດການຮ່ຳຮຽນແລ້ວ ກຳມະກອນໄດ້ຮັບແຕ່ງຕັ້ງ ເປັນຮອງຫົວໜ້າຂະແໜງການຜະລິດ ບ່ອນໃດບ່ອນໜຶ່ງ ຫລືຮອງຜູ້ອຳນວຍການໂຮງ-ງານ". ("ມະຕິຂອງພັກແລະລັດຖະບານ ກ່ຽວກັບ ບັນຫາເສດຖະກິດ",ເຫລັ້ມທີ I , ໜ້າ ໑໓໗.)

ເມື່ອມີການໂອນເອົາໂຮງຈັກໂຮງງານ ມາເປັນຂອງລັດ-ບັນຫາການກວດກາ ຂອງກຳມະກອນໄດ້ເກີດຂຶ້ນ ໃນໂຮງຈັກໂຮງງານ. ໃນເງື່ອນໄຂເສດຖະກິດເອກະເທດ ເມື່ອໂຮງງານໃດ ໂຮງງານໜຶ່ງ ໄດ້ກາຍເປັນສະໜາມແຫ່ງການຕໍ່ສູ້

ຢ່າງຂ້ຽວຂາດ ທາງດ້ານຊິນຊຸ້ນນັ້ນ ການກວດກາຂອງກຳມະກອນ ໄດ້ກາຍເປັນພາຫະນະປະຕິວັດ ອັນກ້າແກ່ນ ຢູ່ໃນກຳມື ຂອງຊາວກຳມາຊີບ ໃນການຕໍ່ສູ້ຕ້ານກັບພວກນາຍທຶນ.

ການຫັນປ່ຽນໂຮງງານອຸດສາຫະກຳ ມາເປັນກຳມາສິດ - ຂອງລັດນັ້ນ ເພິ່ນໄດ້ເປີດໃຫ້ຜູ້ຕາງໜ້າຂອງໜ່ວຍ ກຳມະກອນ ແລະກຳມະບານ ເຂົ້າຮ່ວມໃນວຽກງານຄຸ້ມຄອງອຸດສາຫະກຳ ທີ່ໂອນມານັ້ນ ຢ່າງກວ້າງຂວາງ. ດັ່ງນັ້ນ, ພື້ນຖານ ຊິນຊຸ້ນໃນວຽກງານກວດກາ ຂອງກຳມະກອນ ແລະ ການຄຸ້ມຄອງການຜະລິດ ຈຶ່ງເປັນຂອງຮ່ວມໝູ່. ການປໍລະປັກ ລະຫວ່າງ ຄະນະອຳນວຍການໂຮງງານ ກັບອົງການກວດກາ - ຂອງກຳມະກອນ ທີ່ມີມາແຕ່ກ່ອນນັ້ນ ຈຶ່ງກາຍເປັນການພົວພັນແຫ່ງຄວາມສະມັກຄີຊິນຊຸ້ນ. ໃນເວລາດຽວກັນນັ້ນ ກໍເກີດມີ-ບັນຫາ ການແບ່ງວຽກງານໃນໜ້າທີ່ຄຸ້ມຄອງ ແລະກວດກາ. ຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ແລະ ອົງການກຳມະບານສູນກາງ ໄດ້ແຕ່ງໂຄງການຂອງການແບ່ງ - ຂອບເຂດໜ້າທີ່ດັ່ງກ່າວອອກ ຊຶ່ງໂຄງການທີ່ແຕ່ງໂດຍ ອົງການສູນກາງກຳມະບານນັ້ນ ເໝາະສົມກັບຕົວຈິງກວ່າໃນນັ້ນ ໄດ້ແກ່ການແບ່ງຂອບເຂດ ໜ້າທີ່ກວດກາແລະໜ້າທີ່ຄຸ້ມຄອງ ຈະແຈ້ງທີ່ສຸດ. ໜ້າທີ່ຄຸ້ມຄອງການຜະລິດ ເປັນຂອງອົງການເສດຖະກິດ ຂອງລັດໂຊວຽດ ທີ່ກ່ຽວຂ້ອງ, ແຕ່ໜ້າທີ່ກວດກາ ເປັນຂອງອົງການທີ່ແຕ່ງຕັ້ງຂຶ້ນ ໃນສາຍຂອງອົງການ ກຳມະບານ. ໃນພາກປະຕິບັດຕົວຈິງນັ້ນ ເພິ່ນມອບສິດໃນການ

ແຕ່ງຕັ້ງ ອົງການກວດກາຂອງກໍາມະກອນທັງໝົດ ໃຫ້ແກ່ອົງການສູນກາງກໍາມະບານ. ອະແໜງອັນຕໍ່າຂອງລະບົບ ກວດກາດັ່ງກ່າວ ແມ່ນຄະນະກໍາມະການກວດກາເສດຖະກິດທີ່ເພິ່ນໄດ້ຈັດຕັ້ງຂຶ້ນ ຢູ່ທຸກໆໂຮງຈັກໂຮງງານ.

ໃນເວລາສຶກສາບັນຫາກວດກາ ຢູ່ໃນກອງປະຊຸມໃຫຍ່ ສະພາເສດຖະກິດແຫ່ງຊາດທົ່ວລັດລັດເຊຍຄັ້ງທີ II ນັ້ນ ເພິ່ນໄດ້ເວົ້າວ່າ ການກວດກາຂອງກໍາມະກອນ ແມ່ນສະແດງເຖິງ - ການກະກຽມມະຫາຊົນທົ່ວໄປ ເພື່ອເຂົ້າປະກອບສ່ວນໃນວຽກງານຄຸ້ມຄອງ ຂອງການຈັດຕັ້ງການຜະລິດ. ໃນມະຕິຂອງກອງປະຊຸມດັ່ງກ່າວ ເພິ່ນໄດ້ຂຽນໄວ້ວ່າ: "ການແກ້ໄຂ ບັນຫາການຈັດຕັ້ງກວດກາ ຂອງກໍາມະກອນ ອັນທີ່ຖືກຕ້ອງນັ້ນ ແມ່ນການມອບສິດກວດກາດັ່ງກ່າວ ໃສ່ກໍາມືຂອງອົງການ ກໍາມະບານ. ອົງການກວດກາລັດໃນປະຈຸບັນນີ້ ຈະຕ້ອງຖືກສັບປ່ຽນເທື່ອລະກ້າວ ໃຫ້ແກ່ອົງການກວດກາຂອງກໍາມະກອນ ເຊັ່ນໜ້າທີ່ກວດກາຂອງກົມໃຫຍ່, ກົມສູນກາງ ແລະພະແນກສະ-ພາເສດຖະກິດແຫ່ງຊາດສູງສຸດ ຈະຕ້ອງຍົກໃຫ້ແກ່ສະຫະພັນ-ກໍາມະບານ ທີ່ກ່ຽວຂ້ອງ".

ບັນຫາການເງິນແລະການສົມເຊື່ອຂອງອຸດສາຫະກໍາລັດ

ໃນໂຄງການກໍ່ສ້າງ ສັງຄົມນິຍົມ ແລະ ການກໍ່ຕັ້ງເສດຖະກິດ ສັງຄົມນິຍົມນັ້ນ ມີມາດຕາການເປັນພິເສດໄດ້ແກ່ມາດຕາ

ການທີ່ເພິ່ນແນໃສ່ເຮັດໃຫ້ລະບົບການເງິນ,ການສິນເຊື່ອແລະ ທຸກໆການລົງທຶນ ຮັບໃຊ້ການກໍ່ສ້າງດັ່ງກ່າວ.

ບົດຮຽນຜ່ານມາ ໄດ້ຊີ້ໃຫ້ເຫັນວ່າ ເຫດຜົນອັນໜຶ່ງ ໃນການປະລາໄຊ ຢູ່ກອມມູນປາລີ ແມ່ນການແກ່ຍາວ ແລະການແກ້ໄຂບັນຫາການເງິນບໍ່ແທດເໝາະກັບສະພາບຕົວຈິງ. ຄະນະນຳພາກອມມູນປາລີ ບໍ່ໄດ້ດຳເນີນມາດຕາການຕົວຈິງເພື່ອໂອນເອົາທະນາຄານຝະລັ່ງ ໃຫ້ເຂົ້າມາຢູ່ໃຕ້ການຊຸ້ມຄອງ - ຂອງລັດຖະບານກຳມະກອນ ຊຶ່ງ ກ.ມາກ ໄດ້ເວົ້າວ່າ: "ບັນຫາດັ່ງກ່າວນີ້ ກໍ່ແມ່ນຜິດພາດອັນໃຫຍ່ຫລວງ ທາງດ້ານການ-ເມືອງເຊັ່ນດຽວກັນ".(ກ.ມາກ ແລະ ຟ.ອັງແກນ. ພົນງານເລືອກເຟັ້ນ, ເຫລັ້ມທີ ໔໔,ໜ້າ ໑໙໗.) ທ່ານ ວ.ອີ.ເລນິນ ກໍໄດ້ໃຫ້ທັດສະນະ ອັນສຳຄັນຂອງເພິ່ນ ໃນການຖອດ - ຖອນບົດຮຽນ ຈາກກອມມູນປາລີ ຊຶ່ງໃນບົດຮຽນຂອງເພິ່ນ - ກ່ຽວກັບ "ບັນຫາການລຸລົ່ງກັນໂດຍດີ" ນັ້ນ ເພິ່ນໄດ້ຂຽນວ່າພວກໂບນເຊວິກ "ໄດ້ຖອດຖອນບົດຮຽນ ບາງສິ່ງ ບາງຢ່າງ ນັບແຕ່ປີ ໑໘໗໑ ເປັນຕົ້ນມາ, ພວກເຂົາຈະບໍ່ປະໃຫ້ ທະນາຄານຫລຸດມືຂອງພວກເຂົາໄປໄດ້." (ວ.ອີ.ເລນິນ.ປະມວນບົດນິພົນ ສະບັບສົມບູນ,ເຫລັ້ມທີ ໘,ໜ້າ ໑໘໗.)

ໃນທັນໃດນັ້ນ ຫລັງຈາກການປະຕິວັດເດືອນຕຸລາ ສຳເລັດລົງແລ້ວ ເພິ່ນກໍໄດ້ອອກດຳລັດ ກ່ຽວກັບການໂອນເອົາທະນາຄານລັດ ແລະເອກະຊົນ ມາເປັນຂອງລັດໂລດ,ເພິ່ນໄດ້ເລີ່ມຈັດຕັ້ງລະບົບການເງິນ ທີ່ຕອບສະໜອງກັບສິດຜົນ ປະໂຫຍດ

ຂອງລັດຈີນຊຸ້ນກຳມາຊີບແລະພ້ອມທັງຈັດຕັ້ງການເງິນແລະສິນເຊື່ອ ບັນດາໂຮງຈັກໂຮງງານອຸດສາຫະກຳທີ່ໂອນມາເປັນ - ຂອງລັດດ້ວຍ. ການແກ້ໄຂບັນຫາດັ່ງກ່າວ ເພິ່ນໄດ້ປະຕິບັດ- ສອງແງ່ພ້ອມໆກັນຄື: ປະກອບໂຄງຮ່າງການຈັດຕັ້ງ ອົງການ ການເງິນ ຂອງອຸດສາຫະກຳ ແລະຮ່າງແບບ ວິທີການ ລົງທຶນ .

ວຽກງານດັ່ງກ່າວ ໄດ້ດຳເນີນໄປໃນທ່າມກາງທີ່ເງື່ອນໄຂເສດຖະກິດພວມຕົກຢູ່ໃນຄາວຫຍຸ້ງຍາກສັບສົນ. ພວກນາຍທຶນໄດ້ພະຍາຍາມ ຫາຊ່ອງທາງທຸກຢ່າງ ເພື່ອຮັກສາກ້ອນທຶນ - ຂອງເຂົາໄວ້ ເຂົາໄດ້ໃຊ້ຮູບການຫລອກລວງຕິດຫນີ້ສິນ.ພວກເຂົາຫວັງວ່າ ລັດກຳມາຊີບຈະໃຊ້ຫນີ້ສິນ ລວມທັງຫນີ້ສິນ ເອກະຊົນ ແລະໂດຍວິທີການດັ່ງກ່າວ ພວກເຂົາກໍຈະໄດ້ຮັບ ຄ່າຊົດເຊີຍ ສຳລັບ ການໂອນເອົາກຳມະສິດຂອງພວກເຂົາ ມາເປັນຂອງລັດນັ້ນ. ຜ່ານຂະບວນສ້າງຫນີ້ສິນປອມແປງ ມັນໄດ້ເຮັດໃຫ້ການໃຊ້ຫນີ້ສິນຂອງລັດເພີ່ມຂຶ້ນ.ເຖິງທ້າຍປີ ໑໙໖໗ ສະເພາະແຕ່ໂຮງງານເຂດອູລານ ທະນາຄານມີຫນີ້ສິນ ທີ່ຈະຕ້ອງຊຳລະຈຳນວນເຖິງ ໙໙ ລ້ານ ໘໔໐ ພັນຮູບ,ຊຶ່ງໃນນັ້ນຫນີ້ສິນ ໘໙ ລ້ານຮູບ ຕົກເປັນສ່ວນຂອງພວກເອກະຊົນ ໑໕ ຄົນ. ການສະສາງຫນີ້ສິນນັ້ນ ໄດ້ປະຕິບັດ ໂດຍວິທີ ຜິດກົດຫມາຍ. ເງິນຫຸ້ນສ່ວນນັ້ນ ໄດ້ຈັດສົ່ງໃຫ້ແກ່ເຈົ້າຂອງຫຸ້ນ,ຊຶ່ງໃນນັ້ນຈຳນວນນຸ້ມ ມີຊາວຕ່າງປະເທດ ຕັ້ງຫລວງຫລາຍກ່າຍກອງ. ບັນຫາດັ່ງກ່າວໄດ້ນຳຜົນສະທ້ອນ ຕີໃສ່ເປົ້າ ຫມາຍ

ທາງດ້ານການເມືອງຮ້າຍແຮງໄປກ່ວານັ້ນ ບັນດາປະເທດຈັກກະພັດ ໂດຍສະເພາະແມ່ນ "ຫ້ອງການບັນຫາລັດເຊຍ" ໄດ້ຫັນຄວາມສົນໃຈໄປສູ່ບັນຫານີ້. ໂດຍຊຸ້ມກັນເງິນຕາ ຕ່າງປະເທດ ມາໄວ້ໃນກຳມືຂອງເຂົາ ອັນທີ່ເຮັດໃຫ້ລັດກຳມາຊີບຕົກຢູ່ໃນສະພາບອັດຕະຄັດ.

ຄະນະກຳມາທິການກວດກາ ຂອງກຳມະກອນ ໄດ້ປະຕິບັດມາດຕາການປົກປ້ອງສິດຜົນປະໂຫຍດຂອງລັດ, ແຕ່ວ່າ ພວກເຂົາຍັງບໍ່ທັນສາມາດຈັດຕັ້ງການກວດກາ ດ້ານການເງິນດ້ວຍຕົນເອງເທື່ອ. ເພື່ອແກ້ໄຂບັນຫາການເງິນ ແລະເພື່ອປົກປັກຮັກສາຜົນປະໂຫຍດຂອງລັດ ມັນໄດ້ມີການປະກາດ ໃຊ້ດຳລັດຕ່າງໆ ອັນໄດ້ກຳຈັດການສ້າງໜີ້ສິນປອມແປງຂຶ້ນ.ມັນໄດ້ອຳນວຍຂໍສະດວກ ໃຫ້ແກ່ການຕໍ່ສູ້ຕ້ານກັບຄວາມໂລເລ ແລະແກ້ໄຂບັນຫາການເງິນ ກ່ຽວກັບການໂອນກຳມະສິດມາເປັນຂອງລັດ ໃຫ້ເບົາບາງລົງ. (ຕາມດຳລັດຂອງລັດຖະບານ "ວ່າດ້ວຍການປຸດການຈ່າຍທົດແທນ ເຈັ້ຍທະນາຄານ ແລະ ໜີ້ສິນ", ໃນນັ້ນຫ້າມທຸກທຸລະກິດ ທີ່ບໍ່ມີການຮັບປະກັນ, "ວ່າດ້ວຍການຈົດທະບຽນຫຸ້ນສ່ວນ, ໃບບົງແລະເອກະສານ ທີ່ມີມູນຄ່າອື່ນອື່ນ", ໃນນັ້ນແມ່ນການຈຸດທະບຽນຫຸ້ນສ່ວນ ຂອງປະຊາຊົນຂອງສະຫະພັນລັດເຊຍ ແລະຂອງພວກຕ່າງດ້າວ; ດຳລັດຂອງຄະນະກຳມະການບໍລິຫານງານສູນກາງ ລົງວັນທີ ໒໐ ເດືອນພຶດສະພາ ປີ ໑໙໑໘, ໃນນັ້ນມີການຫ້າມການມອບຊັບສົມບັດທີ່ມີມູນຄ່າເກີນ ໑໐ ພັນຮູບ; ດຳລັດລັດຖະບານສະບັບລົງວັນ

ທີ ໒໘ ມິຖຸນາ ໑໙໑໘ "ເລື່ອງການຂຶ້ນທະບຽນ ບໍລິສັດການຄ້າ ແລະອຸດສາຫະກຳ ໃນກຳນົດ ໓ ເດືອນ" ຊຶ່ງແຈ້ງກົດວິທີ ຂຶ້ນທະບຽນ. ຄວາມຮັບຜິດຊອບຂອງເຈົ້າຊັບເກົ່າ ແລະໃໝ່ ຕໍ່ຄວາມປອດໄພ ໄດ້ຖືກກຳນົດອອກ.)

ໄລຍະສຳຄັນຂອງການກະກຽມການໂອນເອົາໂຮງຈັກໂຮງງານ ຂອງພວກນາຍທຶນມາເປັນຂອງລັດ ແມ່ນການຮຽບຮຽງບັນຊີລວມແບບຂ້າມຜ່ານ. ເຈົ້າຂອງໂຮງງານເກົ່າຊອກຊ່ອງທາງ ບິດບ້ຽວບັນຊີເດີມ. ມະຕິຂອງຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ລົງທີ ໑໖ ເດືອນພະຈິກປີ໑໙໑໘ ບັງຄັບຄະນະອຳນວຍການໂຮງງານ ດຳເນີນການຕິດໄລ່ ລາຄາຂອງກຳມະສິດໃໝ່ທັງໝົດ ແລະບັນທຶກຈຳນວນເງິນທີ່ຕິດໄລ່ ໄດ້ຕາມຕົວຈິງ ໃນຄະນະທີ່ຮຽບຮຽງບັນຊີຮວມ ເຂົ້າໃນລາຍງານບັນຊີລວມ.

ໃນລະຫວ່າງການໂອນອຸດສາຫະກຳ ມາເປັນຂອງລັດ ນັ້ນລັດໄດ້ໃຫ້ການຊ່ວຍເຫຼືອທາງດ້ານການເງິນອັນຈຳເປັນ ແກ່ໂຮງຈັກໂຮງງານ ເພື່ອຮັບປະກັນການສືບຕໍ່ການຜະລິດແບບບໍ່ຂາດ. ອີງຕາມມະຕິຂອງສະພາເສດຖະກິດແຫ່ງຊາດ ສູງສຸດ ແລະກະຊວງວ່າການກວດກາລັດ ເພິ່ນໄດ້ອະນຸມັດເງິນ ລ່ວງໜ້າ ຕາມງົບປະມານທີ່ຄາດຄະເນໄວ້ ໃຫ້ແກ່ບັນດາໂຮງຈັກໂຮງງານດັ່ງກ່າວ. ເພື່ອຮັບໃຊ້ຈຸດປະສົງດັ່ງກ່າວ ສະເພາະແຕ່ປີ ໑໙໑໘ ນັ້ນ ລັດໄດ້ຈ່າຍເງິນຈຳນວນ ໓໐໐ ລ້ານຮູບ.

ດ້ວຍການມີກຳມະສິດເປັນຂອງສ່ວນຮວມນັ້ນ ຈຶ່ງອຳນວຍ

ໃຫ້ແກ່ຊ່ອງທາງຕົວຈິງ ເພື່ອຮວບຮວມເອົາທຸກພາຫະນະການເງິນ ຂອງບັນດາໂຮງຈັກໂຮງງານ ເຂົ້າຢູ່ໃນ "ຄັງລວມ" ຂອງລັດໂຊວຽດໄດ້. ມັນໄດ້ອຳນວຍຄວາມສະດວກ ແກ່ການບັນຊາຈັບສິນດ້ານການເງິນ, ແກ່ການແບ່ງຈ່າຍຢ່າງຖືກຕ້ອງລະຫວ່າງຂະແຫນງອຸດສາຫະກຳກັບໂຮງງານສະເພາະອັນໃດອັນຫນຶ່ງ, ແກ່ການກວດກາການນຳໃຊ້ພາຫະນະການເງິນໄດ້ຢ່າງເຕັມເມັດເຕັມຫນ່ວຍ.

ການແກ້ໄຂການຈັດຕັ້ງ "ຄັງລວມ" ຂອງລັດຂຶ້ນນັ້ນໄດ້ອຳນວຍຄວາມສະດວກ ແກ່ການໂອນເອົາບັນດາສະຖາບັນ ແລະໂຮງຈັກໂຮງງານຕ່າງໆ ຂອງສາທາລະນະລັດມາເຂົ້າໃນງົບປະມານການເງິນອັນດຽວກັນ. ໃນເມື່ອການສະສາງ ການເງິນ ຫາກເຮັດເປັນລາຍຫລັກອັກສອນ (ຄຳສັ່ງ),ການກວດກາການຜະລິດ ແລະການແຈກຢາຍຜະລິດຕະພັນ ກໍປະຕິບັດຢ່າງລະອຽດ, ໂຮງງານກໍບໍ່ມີຊ່ອງທາງ ທີ່ສະສົມເງິນສົດໄວ້ໃນຄັງຂອງເຂົາໄດ້ ແລະເຂົາກໍບໍ່ສາມາດນຳໃຊ້ຜະລິດຕະພັນສຳເລັດຮູບ ເປັນທຶນຫມູນວຽນຂອງເຂົາໄດ້.

ການເຕົ້າໂຮມເອົາພາຫະນະດ້ານການເງິນຂອງໂຮງຈັກໂຮງງານ ທີ່ໂອນມາເປັນຂອງລັດ "ຄັງລວມ" ຂອງລັດໂຊວຽດ ມັນຮຽກຮ້ອງໃຫ້ມີການເງິນທຶນ ແລະການສິນເຊື່ອຂອງໂຮງຈັກໂຮງງານແບບລວມສູນ. ໃນກອງປະຊຸມໃຫຍ່ ຂອງຜູ້ແທນພະແນກການເງິນ ຂອງສະພາໂຊວຽດທົ່ວລັດ ລັດເຊຍທັງຫມົດ ຄັ້ງທີ I ໃນວັນທີ ໑໘ ພຶດສະພາ ປີ ໑໙໑໘,ທ່ານ

ວ.ອີ.ເລນິນ ໄດ້ຢ້ຳວ່າ: "ພວກເຮົາມີຄວາມຈຳເປັນ ໃຫ້ມີການລວມສູນດ້ານການເງິນ, ມີຄວາມຈຳເປັນໃຫ້ມີການລວມສູນກຳລັງຂອງພວກເຮົາ; ຖ້າພວກເຮົາຫາກບໍ່ສາມາດ ດຳເນີນຫລັກການອັນນີ້ເຂົ້າໃນຊີວິດຕົວຈິງໄດ້ພວກເຮົາກໍຈະບໍ່ສາມາດສຳເລັດການປະຕິຮູບດ້ານເສດຖະກິດໄດ້." (ວ.ອີ.ເລນິນ.ປະມວນບົດນິພົນສະບັບສົມບູນ, ເຫຼັ້ມທີ ໓໖, ຫນ້າ ໓໕໑).

ໃນໄລຍະທ້າຍປີ ໑໙໑໗ ແລະເຖິງກາງປີ ໑໙໑໘ ເພິ່ນໄດ້ອະນຸມັດແກ່ບັນດາໂຮງຈັກໂຮງງານເອກະເທດ ແລະພ້ອມທັງໂຮງຈັກໂຮງງານ ທີ່ໂອນມາເປັນຂອງລັດແລ້ວນັ້ນ ໄດ້ດຳເນີນວຽກງານໂດຍອີງໃສ່ການກູ້ຢືມ ຈາກທະນາຄານ, ການຈ່າຍລ່ວງຫນ້າຕາມໃບສັ່ງ, ແລະການຈ່າຍພຽງສ່ວນ ດຽວໂດຍອີງໃສ່ເງິນທຶນຫມູນວຽນຂອງຕົນເອງ. ການຂາດບໍ່ເກີດແຫ່ງການລົງທຶນທີ່ສະຫມ່ຳສະເຫມີນັ້ນ ມັນໄດ້ນຳອຸດສາຫະກຳໄປສູ່ສະພາບຫນັກຫນ່ວງ ເຊັ່ນມີໂຮງຈັກໂຮງງານຈຳນວນຕັ້ງຫລວງຫລາຍຕົກຢູ່ໃນທ່າຫຼົ້ມຈົມ. ຮ້າຍແຮງໄປກວ່ານັ້ນອີກແມ່ນຄວາມຕ້ອງການຂອງໂຮງຈັກໂຮງງານ ດ້ານພາຫະນະ ການເງິນ ແຮງນັບມື້ນັບເພີ່ມທະວີຂຶ້ນ ເຊັ່ນ: ຄວາມຈຳເປັນຕ້ອງຮັບປ່ຽນອຸປະກອນການຜະລິດອັນເກົ່າອອກ, ສະສາງຫນີ້ສິນດ້ານເງິນເດືອນ, ລາຄາວັດຖຸດິບ ແລະເຊື້ອເພີງ ກໍຖີບສູງຂຶ້ນ. ການຂາດເຂີນຊັບພະຍາກອນ ທີ່ເປັນຂອງຕົນເອງ,ລັກສະນະການສິນເຊື່ອ ບໍ່ສະຫມ່ຳສະເຫມີ, ການຂາດຕະຫລາດ ແລະພຶດຕິການອື່ນໆອີກ ເຮັດໃຫ້ບັນດາໂຮງຈັກໂຮງງານຂາດ

ສະມັດຖະພາບໃນການແກ້ໄຂບັນຫາການເງິນດ້ວຍກຳລັງແຮງຂອງຕົນເອງ. ການກໍ່ວິນາດສະກຳຂອງພວກນາຍທຶນ ແຮງເຮັດໃຫ້ສະພາບສະລັບຊັບຊ້ອນເຂົ້າອີກ.

ໃນເງື່ອນໄຂດັງກ່າວ ລັດໄດ້ອອກລະບຽບການເງິນ ໃໝ່ເຂັ້ມ ລະບົບຄາດຄະເນລາຍຈ່າຍ. ພ້ອມກັບການຂະຫຍາຍຫຼັກການພື້ນຖານ ກ່ຽວກັບການຄາດຄະເນການເງິນນັ້ນ ເພິ່ນກໍໄດ້ວາງລະບຽບການ ການຢັ້ງຢືນການຄາດຄະເນ, ແລະການຈັດຕັ້ງການກວດກາ ການນຳໃຊ້ຈຳນວນເງິນ ທີ່ເພິ່ນອະນຸມັດໃຫ້ນັ້ນ.

ກອງປະຊຸມວິສາມັນ ຂອງສະພາເສດຖະກິດແຫ່ງຊາດ ສູງສຸດ ໄດ້ຕົກລົງໃຫ້ບັນດາໂຮງຈັກໂຮງງານນຳສະເໜີ ການຄາດຄະເນ ຢ່າງລະອຽດ ກ່ຽວກັບລາຍຮັບແລະລາຍຈ່າຍ - ຂອງຕົນ ຕໍ່ພະແນກການຜະລິດທີ່ກ່ຽວຂ້ອງຫລືກົມໃຫຍ່ຂອງສະພາເສດຖະກິດແຫ່ງຊາດສູງສຸດ ທຸກໆ ໓ ເດືອນ. ເພິ່ນໄດ້ອະນຸຍາດໃຫ້ແກ່ໂຮງຈັກໂຮງງານ ປ່ຽນແປງການນຳໃຊ້ ສິນເຊື່ອໃນຂອບເຂດການຄາດຄະເນຂອງຕົນວາງອອກແລະມີສິດຮັບລາຍຈ່າຍບັງເອີນ ໃນຈຳນວນເງິນບໍ່ໃຫ້ສູງກ່ວາ ໑໐% ຂອງເງິນທຶນໃນແຜນການທັງໝົດ. ກອງປະຊຸມ ວິສາມັນ-ຂອງສະພາເສດຖະກິດແຫ່ງຊາດສູງສຸດ, ໂດຍອີງໃສ່ບົດຮຽນບາງອັນ ຂອງການຄາດຄະເນການເງິນ ຂອງບັນດາໂຮງ-ງານຢູ່ ເປຕະໂລກະລາດແລະອູລານ, ໄດ້ແຕ່ງຫລັກການລວມກ່ຽວກັບການຄາດຄະເນການລົງທຶນອອກ.

ຕໍ່ຈາກນັ້ນມາ,ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ອະນຸມັດໃຊ້ການອອກເງິນລ່ວງໜ້າ ໃນຂອບເຂດການຄາດຄະເນທີ່ຈະມີຕໍ່ໄປນັ້ນ ໃຫ້ແກ່ບັນດາໂຮງຈັກໂຮງງານ ທີ່ຖືກໂອນມາເປັນຂອງລັດ ແລະບັນດາໂຮງຈັກໂຮງງານ ທີ່ຍຶດກັກໄວ້ນັ້ນ. ເພິ່ນຍັງໄດ້ກຳນົດເງິນອອກລ່ວງໜ້າໃຫ້ ບໍ່ໃຫ້ຫລາຍກ່ວາຈຳນວນເງິນຄາດຄະເນໄວ້ຂອງສອງເດືອນ.ຄວາມຕ້ອງການທຶນລ່ວງໜ້າ ຂອງໂຮງຈັກໂຮງງານນັ້ນ ຈະຕ້ອງສຶກສາໂດຍຄະນະກຳມາທິການດ້ານການເງິນ ຂອງສະພາເສດຖະກິດ ແຫ່ງຊາດສູງສຸດ. ເພື່ອປະຕິບັດລະບົບດັ່ງກ່າວ ລັດຖະບານໄດ້ອະນຸມັດງົບປະມານພິເສດ ຈຳນວນ ໒໐໐ ລ້ານຣູບໃຫ້ແກ່ສະພາເສດຖະກິດແຫ່ງຊາດສູງສຸດ. ຄະນະປະທານສະພາ ເສດຖະກິດແຫ່ງຊາດສູງສຸດ ເປັນຜູ້ອະນຸມັດຈ່າຍເງິນອອກຈາກງົບປະມານພິເສດດັ່ງກ່າວໄດ້ ກໍ່ຕໍ່ເມື່ອຄວາມຕ້ອງການ ຂອງບັນດາໂຮງຈັກໂຮງງານນັ້ນ, ຫາກຍ້ອນເຫດຜົນໃດເຫດຜົນໜຶ່ງ,ບໍ່ສາມາດເບີກຈ່າຍເງິນທີ່ຕົນຄາດຄະເນໄວ້ນັ້ນ ຈາກຄະນະກຳມາທິການການເງິນ ຂອງສະພາເສດຖະກິດແຫ່ງຊາດສູງສຸດ.

ເພື່ອປັບປຸງລະບຽບການເງິນໃຫ້ດີຂຶ້ນນັ້ນ ສະພາລັດຖະມົນຕີປະຊາຊົນ ໃນວັນທີ ໒໔ ເດືອນພຶດສະພາ ປີ ໑໙໑໙ ນັ້ນ ໄດ້ອອກດຳລັດ "ວ່າດ້ວຍລະບຽບການຄາດຄະເນ", ຊຶ່ງໃນນັ້ນ ເພິ່ນຢ້ຳໄວ້ວ່າ ສິນເຊື່ອນັ້ນຈະນຳອອກໃຊ້ໄດ້ ສະເພາະແຕ່ຈຸດປະສົງອັນຈຳເປັນເທົ່ານັ້ນ. ຄະນະປະທານສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ວາງທິດທາງໃຫ້ແກ່ລະບຽບ ການ

ຈັບຈ່າຍເງິນ ຂອງໂຮງຈັກໂຮງງານ ຢ່າງເຄັ່ງຄັດ.

ສະພາເສດຖະກິດແຫ່ງຊາດສູງສຸດ ທັງເປັນອົງການ ອະນຸມັດສິນເຊື່ອ ແລະກໍທັງເປັນອົງການກວດກາການນຳໃຊ້ ຈຳນວນເງິນດັ່ງກ່າວ, ຊຶ່ງເພິ່ນໄດ້ອອກດຳລັດກ່ຽວກັບລະບຽບການອະນຸມັດສິນເຊື່ອ ສະບັບລົງວັນທີ ໑໑ ພຶດສະພາ ປີ ໑໙໗໘, ເພິ່ນວາງກຳນົດໄວ້ໜຶ່ງເດືອນ ເພື່ອຮັບເອົາ ສິນເຊື່ອດັ່ງກ່າວໄດ້. ຖ້າຫາກສິນເຊື່ອດັ່ງກ່າວ ບໍ່ໄດ້ຖືກຖອນ - ອອກໄປໃຊ້ ເພິ່ນກໍໂຈະໄວ້ເຖິງກາງທ້າຍປີ. ເຮັດໄດ້ແນວນີ້ ມັນຈຶ່ງສາມາດຈັດຕັ້ງລະບຽບຂອງການເງິນໄດ້.

ການລົງທຶນແບບນີ້ງົບປະມານນີ້ ໄດ້ມີບົດບາດອັນໃຫຍ່ຫຼວງຕໍ່ວຽກງານການຈັດຕັ້ງ ການລົງທຶນຊຸດສາກະກຳ ໃນເວລາເກີດສົງຄາມກາງເມືອງ ແລະສົງຄາມຮຸກຮານແບບຈັກກະພັດ.

ພ້ອມດຽວກັບການຮ່າງລະບຽບການເງິນ ແລະສິນ ເຊື່ອໃໝ່ ແກ່ຊຸດສາທະກຳລັດ ເພິ່ນກໍໄດ້ຈັດຕັ້ງກົງຈັກ ການເງິນຂອງຊຸດສາທະກຳລັດຂຶ້ນ ຢູ່ທີ່ສະພາເສດຖະກິດແຫ່ງຊາດ ສູງສຸດ.

ໃນເດືອນມີນາ ຫາເດືອນເມສາ ປີ ໑໙໑໘ ພາຍໃນພະແນກການເງິນ ແລະການຄິດໄລ່ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ເພິ່ນໄດ້ຈັດຕັ້ງຄະນະກຳມາທິການຄາດຄະເນງົບປະມານ ແລະບັນຫາເງິນລ່ວງໜ້າຂຶ້ນ. ຄະນະກຳມາທິການຄາດຄະເນງົບປະມານ ມີໜ້າທີ່ຈັດຕັ້ງການເງິນ ຂອງບັນດາໂຮງຈັກໂຮງງານ, ສຳນັກງານອົງການ ຂອງລະບົບ ສະພາ

ເສດຖະກິດແຫ່ງຊາດສູງສຸດ, ສຶກສາບັນຫາການຄາດຄະເນງົບປະມານຂອງພະແນກ ແລະກົມໃຫຍ່ຂອງສະພາ ເສດຖະກິດແຫ່ງຊາດສູງສຸດ ແລະອົງການເສດຖະກິດທ້ອງຖິ່ນ ທີ່ຂຶ້ນກັບຕົນ. ຄະນະກຳມາທິການ ກ່ຽວກັບບັນຫາເງິນລ່ວງໜ້າຂອງສະພາເສດຖະກິດແຫ່ງຊາດສູງສຸດ ມີໜ້າທີ່ສຶກສາຄົ້ນຄວ້າຄຳຮ້ອງຂໍ ເພື່ອອະນຸມັດເງິນລ່ວງໜ້າແລະການກູ້ຢືມໃຫ້ແກ່ໂຮງຈັກໂຮງງານ ທີ່ຖືກໂອນມາເປັນຂອງລັດ, ເກັບກຳເອກະສານອັນຈຳເປັນ ເພື່ອແກ້ໄຂບັນຫາຕ່າງໆ ຈາກບັນດາສຳນັກງານແລະການຈັດຕັ້ງທຸກບ່ອນທີ່ກ່ຽວຂ້ອງ ແລ້ວນຳສົ່ງເອກະ ສານດັ່ງກ່າວ ໃຫ້ແກ່ຄະນະປະທານ ສະພາເສດຖະກິດແຫ່ງ ຊາດສູງສຸດ ຄະນະກຳມາທິການ ການຄາດຄະເນງົບປະມານແລະໃນຄະນະກຳມາການຄິດໄລ່ແລະກູ້ຢືມ.

ເພື່ອແກ້ໄຂບັນຫາປະຈຳວັນ ເພິ່ນໄດ້ຈັດຕັ້ງອະນຸພະ ແນກສຳຮອງ ແລະໜ່ວຍການເງິນຂຶ້ນ ຢູ່ກົມໃຫຍ່ ແລະ ກຳມາທິການ ສະພາເສດຖະກິດແຫ່ງຊາດສູງສຸດ. ເພິ່ນຍັງໄດ້ຈັດຕັ້ງພະແນກການເງິນຂຶ້ນ ຢູ່ຕາມແຂວງ, ອະນຸແຂວງ ແລະຢູ່ສະພາເສດຖະກິດແຫ່ງຊາດສູງສຸດເມືອງອື່ນ.

ເພື່ອສະດວກແກ່ການເຄື່ອນໄຫວວຽກງານ ຂອງທຸກສາຂາອົງການການເງິນ ຂອງຊູດສາທະກຳລັດນັ້ນ ໃນເດືອນສິງຫາ ປີ ໑໙໑໘ ເພິ່ນໄດ້ຈັດຕັ້ງພະແນກເສດຖະກິດການເງິນ ຂອງສະພາເສດຖະກິດແຫ່ງຊາດສູງສຸດຂຶ້ນ ຊຶ່ງພະແນກເສດຖະກິດການເງິນນີ້ ມີໜ້າທີ່ສຶກສາຄົ້ນຄວ້າເບື້ອງຕົ້ນບັນຫາຫລັກການ

ນະໂຍບາຍເສດຖະກິດການເງິນ ຂອງສະພາເສດຖະກິດແຫ່ງ
ຊາດສູງສຸດ, ຄົ້ນຄ້ວາການຄາດຄະເນງົບປະມານ ຂອງທຸກ
ພາກສ່ວນ ຂອງສະພາເສດຖະກິດແຫ່ງຊາດສູງສຸດ,ສຶກສາຂົ້ນ
ຕົ້ນບາງບັນຫາສະເພາະ ທີ່ພົວພັນເຖິງການຈັດຕັ້ງການ ເງິນ
ແລະການສິນເຊື່ອ ດ້ານຊຸດສາຫະກຳ ຕາມພາກປະຕິບັດ ຕົວ
ຈິງ, ເຮັດລາຍງານລວມ ກ່ຽວກັບການເຄື່ອນໄຫວດ້ານເສດ
ຖະກິດການເງິນ ຂອງສະພາເສດຖະກິດແຫ່ງຊາດ ສູງສຸດ.
ການຊົ້ນາໍນໍາພາພະແນກເສດຖະກິດການເງິນຂອງສະພາເສດ
ຖະກິດແຫ່ງຊາດສູງສຸດ ໄດ້ດຳເນີນຕາມແບບຊົ້ນາໍເປັນຄະນະ.
ທຸກໂຄງຮ່າງຂອງອົງການການເງິນຊຸດສາຫະກຳ ທີ່ຈັດຕັ້ງຂຶ້ນ
ນັ້ນ ໄດ້ຂຶ້ນໂດຍກົງກັບຄະນະປະທານ ສະພາເສດຖະກິດແຫ່ງ
ຊາດສູງສຸດ ທີ່ຕັດສິນທຸກບັນຫາການເງິນຊຸດສາຫະກຳ.

ດັ່ງນັ້ນ ໃນເວລາດຽວກັນກັບມີຂະບວນການຈັດຕັ້ງອົງການ
ຄຸ້ມຄອງຊຸດສາຫະກຳ ເພີ່ມຈຶ່ງປະກອບກົງຈັກການເງິນອັນຈຳ
ເປັນຂຶ້ນພ້ອມໆກັນ. ການຈັດຕັ້ງອົງການຄຸ້ມຄອງຊຸດສາຫະກຳ
ແລະການປະກອບກົງຈັກຮັບຜິດຊອບການເງິນໃຫມ່ນັ້ນມັນຮຽກ
ຮ້ອງໃຫ້ມີການຈັດຕັ້ງ ສາຍການພົວພັນດ້ານການເງິນຂຶ້ນ ລະ
ຫວ່າງ ບັນດາໂຮງຈັກໂຮງງານ ກັບບັນດາອົງການ ເສດຖະ
ກິດອື່ນໆ. ການໃຊ້ຮູບການການຊຳລະດ້ານການເງິນ ແບບ
ເກົ່ານັ້ນ ເຊັ່ນ: ການຈ່າຍເປັນເງິນສົດ,ການແລກປ່ຽນແບບ
ເປັນແຊກ, ຊຳລະໂດຍຫນັງສືສັ່ງຈ່າຍນັ້ນ ມັນ ບໍ່ຕອບສະ
ຫນອງກັບກົດລະບຽບອັນຈຳເປັນ ໃນການຈັດຕັ້ງ ເສດຖະກິດ

ການເງິນຂອງສາທາລະນະລັດຊຶ່ງໃນພາກປະຕິບັດຕົວຈິງຂາດການກວດກາ.

ມາດຕາສ່ວນຂອງການໂອນເອົາໂຮງຈັກໂຮງງານມາເປັນຂອງລັດນັ້ນ ໄດ້ຂະຫຍາຍອອກໄປຢ່າງກ້ວາງຂວາງ ມັນຈຶ່ງຮຽກຮ້ອງ ໃຫ້ມີຮູບການຄິດໄລ່ທາງດ້ານການເງິນທີ່ສອດຄ່ອງກັບໂສມໜ້າໃໝ່ຂອງເສດຖະກິດນັ້ນ. ຮູບການອັນທີ່ເໝາະສົມນັ້ນ ແມ່ນການຊຳລະກັນ ໂດຍບໍ່ໃຊ້ເງິນສົດ. ໃນຂໍ້ດຳລັດຂອງສະພາເສດຖະກິດແຫ່ງຊາດສູງສຸດ ສະບັບລົງວັນທີ ໑໐ ສິງຫາ ປີ ໑໙໑໘ "ວ່າດ້ວຍລະບຽບການຄິດໄລ່ ລະຫວ່າງໂຮງຈັກໂຮງງານ ທີ່ໂອນມາເປັນຂອງລັດ ກັບສຳນັກງານອົງການໂຊວຽດຕ່າງໆ" ຊຶ່ງໃນນັ້ນໄດ້ບົ່ງໄວ້ວ່າ ການຄິດໄລ່ລະຫວ່າງ ສະຖາບັນ ແລະອົງການຈັດຕັ້ງໂຊວຽດທຸກໆແຫ່ງ ໃນການຈ່າຍຄ່າການຜະລິດ ແລະຄ່າຜະລິດຕະພັນນັ້ນ ຈະຕ້ອງຊຳລະກັນ ດ້ວຍໜັງສືສັ່ງຈ່າຍ ໂດຍປາສະຈາກເງິນ ສົດ . ການຈ່າຍເປັນເງິນສົດນັ້ນ ແຕ່ລະລາຍການບໍ່ໃຫ້ກາຍຈຳນວນເງິນ ໕ ພັນຮູບ. ໃນກາງປີ ໑໙໑໙ ລະບົບການຄິດໄລ່ ທີ່ບໍ່ໃຊ້ເງິນສົດນັ້ນ ໄດ້ເປັນວິທີນຳໜ້າ.

ພ້ອມກັນກັບການຈັດຕັ້ງການເງິນ ແລະການສິນເຊື່ອອຸດສາຫະກຳຂັ້ນນັ້ນ ເພິ່ນກໍໄດ້ແກ້ໄຂບັນຫາການເກັບພາສີ ໄປດ້ວຍກັນ. ລັດຊົນຊັ້ນກຳມາຊີບທີ່ເປັນເຈົ້າຂອງ ຂອງພາຫະນະ - ການຜະລິດທັງໝົດ ຈະຕ້ອງລວບລວມເອົາຜະລິດຕະພັນສ່ວນເພີ່ມ ເຂົ້າຢູ່ໃນກຳມືຂອງຕົນ, ຊຶ່ງຜະລິດຕະພັນດັ່ງກ່າວ ກໍ

ແມ່ນຜະລິດອອກຈາກບັນດາໂຮງຈັກໂຮງງານ ທີ່ໂອນມາເປັນຂອງລັດນັ້ນເອງ.

ໃນເບື້ອງຕົ້ນ ອົງການອຳນາດລັດທ້ອງຖິ່ນໄດ້ດຳເນີນການເກັບພາສີ ຢ່າງເປັນປະຈຳ, ບາດດຽວແລະພິເສດ ຕາມລຳພັງຕົນເອງ. ການເກັບພາສີດັ່ງກ່າວ ໄດ້ປະຕິບັດທັງໂຮງຈັກໂຮງງານ ທີ່ໂອນມາເປັນຂອງລັດແລ້ວ ແລະກໍທັງ ໂຮງຈັກໂຮງານ ທີ່ຍັງບໍ່ທັນໄດ້ໂອນນັ້ນອີກ. ໃນເວລານັ້ນ ການເກັບພາສີອາກອນດັ່ງກ່າວ ໄດ້ນຳໃຊ້ກັນຢ່າງກ້ວາງຂວາງ, ໃນວັນທີ ๗ ເດືອນກໍລະກົດ ປີ ໑໙໑໘ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ອອກຄຳສັ່ງເກືອດຫ້າມ ການເກັບພາສີອາກອນ ພິເສດນຳໂຮງຈັກໂຮງງານ ທີ່ໂອນມາເປັນຂອງລັດແລ້ວນັ້ນ . ຕົກມາເຖິງທ້າຍປີ ໑໙໑໙ ເພິ່ນໄດ້ປະຕິບັດການເກັບ ພາສີແບບລວມສູນ ໂດຍຜ່ານລະບົບລາຄາ,ດັ່ງນັ້ນ ການປະຕິບັດໃນຕົວຈິງ ທີ່ໄດ້ເຮັດມາແລ້ວຄື: ໄດ້ເຮັດໄປຕາມ ລຳພັງໃຈຂອງກົມໃຫຍ່ນັ້ນ ຈຶ່ງໄດ້ຖືກລົບລ້າງ ໃນເດືອນ ກຸມພາ ປີ ໑໙໒໐ .

ໃນສະພາບການສົງຄາມກາງເມືອງ ແລະສົງຄາມຮຸກຮານນັ້ນ ລັດຈີນຈຸ້ມກຳມາຊີບ ໄດ້ປະຕິບັດການລວມສູນ ຢ່າງເຄັ່ງຄັດ ໃນການແຈກຢາຍວັດຖຸອຸປະກອນ. ແຕ່ເມື່ອມີການ ຈຳໜ່າຍໃບທະນະບັດອອກ ຢ່າງຫລວງຫລາຍກ່າຍກອງແນວນັ້ນ ການວາງແຜນການຈໍລະຈອນເງິນຕາ ຈຶ່ງເປັນພຽງຮູບ ການເທົ່ານັ້ນ. ເນື້ອໃນຂອງການວາງແຜນເງິນຕາ ກໍແມ່ນການ–

ແຈກຢາຍຈັບພະຍາກອນ ທີ່ມີຄຸນຄ່າ ຈຶ່ງເພີ່ນຄິດໄລ່ເປັນເງິນຕາ. ການປະຕິບັດດັ່ງກ່າວ ມັນສ່ອງແສງໃຫ້ເຫັນ ຮູບການວາງແຜນ ພາຍໃນຂະແໜງ ທີ່ເປັນສ່ວນລວມແລ້ວ. ແຜນຜັງການຜະລິດ ແລະການໝູນວຽນຂອງສິນຄ້າ ໃນຕົວຈິງໄດ້ຖືກແທນໂດຍການແຈກຢາຍ ຜະລິດຕະພັນ. ສະນັ້ນ ການໝູນວຽນສິນຄ້າຢູ່ທ້ອງຕະຫລາດ ຈຶ່ງບໍ່ເອົາເຂົ້າເປັນ ແຜນການ. ແຜນການການແຈກຢາຍຈັບພະຍາກອນ ດ້ານວັດຖຸອຸປະກອນບໍ່ໄດ້ມີການພົວພັນ ກັບການເງິນຂອງໂຮງຈັກໂຮງງານ, ສະຫະບໍລິສັດ ຫລືຂະແໜງອຸດສາຫະກຳ ອັນໃດໝົດ.

ການຄາດຄະເນລາຍຈ່າຍອັນຈຳເປັນ ຂອງແຕ່ລະໂຮງຈັກໂຮງງານ ຫລືສະຫະບໍລິສັດ ມັນສະແດງອອກຢູ່ແຜນການການຜະລິດ ໂດຍມີການຄິດໄລ່ ຢ່າງລະອຽດ ລາຍການ ການຜະລິດ ຂອງແຕ່ລະສ່ວນ. ການເງິນຂອງໂຮງງານອຸດສາຫະກຳໄດ້ດຳເນີນ "ຕາມແຜນການ" ການຜະລິດ, ທີ່ບໍ່ມີການພົວພັນກັບການສຳເລັດແຜນການນີ້ ໃນຕົວຈິງແຕ່ຢ່າງໃດ.

ສະຫລຸບແລ້ວເຫັນວ່າ ລະບົບການລົງທຶນຂອງໂຮງຈັກໂຮງງານ ໄດ້ດຳເນີນໄປ ໂດຍບໍ່ຄິດໄລ່ເຖິງຜົນຕົວຈິງ. ທັງນີ້ ມັນສະແດງອອກເຖິງ ລັກສະນະພິເສດຂອງເງື່ອນໄຂເສດຖະກິດໃນຍຸກສະໄໝນັ້ນ ຈຶ່ງພາຍຫລັງຕໍ່ມາ ມັນຮຽກຮ້ອງໃຫ້ມີການປັບປຸງ. ຜະລິດຕະພັນທີ່ຜະລິດອອກທຸກຊະນິດທີ່ສົ່ງເຂົ້າ ໃນກອງທຶນລັດນັ້ນ ຈະຕ້ອງຄິດໄລ່ລາຄາລວມ ຈາກສະມຸດບັນຊີຂອງຜູ້ຜະລິດແລ້ວ ສົ່ງໃຫ້ສະມຸດບັນຊີຂອງຜູ້ນຳໃຊ້. ການປະຕິ

ບັດດັ່ງກ່າວແມ່ນໄດ້ວາງອອກ ໂດຍເງື່ອນໄຂພິເສດໃນຍຸກສະໄໝນັ້ນ ແລະກໍເປັນຜົນສຳເລັດໃນການພົວພັນ ອັນກ້ວາງຂວາງ ທາງດ້ານເສດຖະກິດ ແບບມີການແຈກຢາຍ ໂດຍພະລິດຕະພັນຕົວຈິງ. ຂອບເຂດໃນການໃຊ້ເງິນສົດນັ້ນ ໃນຕົວຈິງພຽງແຕ່ໄດ້ປະຕິບັດ ໂດຍມີຂອບເຂດຈຳກັດ ຢູ່ທ້ອງຕະຫລາດເອກະເທດເທົ່ານັ້ນ.

ການຂ້າມຜ່ານໄປສູ່ການປະຕິບັດ ນະໂຍບາຍເສດຖະກິດ–ໃໝ່ ແລະການຂະຫຍາຍຕົວດ້ານການຄ້າອັນກ້ວາງຂວາງນັ້ນ ສະພາບຮຽກຮ້ອງໃຫ້ນຳໃຊ້ລະບົບການເງິນ ແລະສິນເຊື່ອ ຢ່າງກ້ວາງຂວາງ, ໝາຍຄວາມວ່າ ສະພາບຮຽກຮ້ອງໃຫ້ມີການປັບປຸງລະບົບການເງິນ ແລະສິນເຊື່ອ ໃນອຸດສາຫະກຳ ຂອງລັດ. ແຕ່ວ່າ ການຫັນປ່ຽນດັ່ງກ່າວ ໄດ້ອີງໃສ່ບົດຮຽນ ການຈັດຕັ້ງ ການພົວພັນດ້ານການເງິນ ລະຫວ່າງລະບົບອຸດສາຫະກຳ ແລະຂະແໜງເສດຖະກິດອື່ນໆ, ແລະການພົວພັນ ຢູ່ທັງພາຍໃນ ກະໂຕອຸດສາຫະກຳນັ້ນເອງ ໃນໄລຍະ ໔ ປີເບື້ອງຕົ້ນ ຂອງການດຳລົງຄົງຕົວຂອງລັດໂຊວຽດ.

ການຈັດຕັ້ງຈໍລະຈອນແຈກຢາຍວັດຖຸ ປະກອນເຕັກນິກ

ບັນຫາສຳຄັນ ໃນການຈັດຕັ້ງຄຸ້ມຄອງບັນດາໂຮງຈັກ ໂຮງງານ ທີ່ໂອນມາເປັນຂອງລັດແລ້ວນັ້ນ ແມ່ນໃຫ້ມີ ການຮັບປະກັນ ເຊື້ອເພີງ,ວັດຖຸດິບ,ວັດຖຸອຸປະກອນສຳລອງ, ກົນຈັກ,

ເຄື່ອງມືແລະອື່ນໆ ແກ່ບັນດາໂຮງຈັກໂຮງງານດັ່ງກ່າວ. ການເກົ່າແກ່ຊຸດໂຊມຂອງອຸປະກອນ, ການຫລຸດຜ່ອນຈຳນວນ ກຳມະກອນ ໃນການຂຸດຄົ້ນບໍ່ແຮ່, ປະສິດທິພາບຂອງການຜະລິດຕົກຕ່ຳ, ຄວາມສາມາດໃນການຂົນສົ່ງທາງດ້ານລົດໄຟ ລົດລົງໃນລະດັບອັນຕ່ຳ ແລະເງື່ອນໄຂດ້ານອື່ນໆອີກທັງໝົດເຫຼົ່ານີ້ ໄດ້ສ້າງຄວາມຫຍຸ້ງຍາກໃຫ້ແກ່ການຈັດຕັ້ງຈໍລະຈອນວັດຖຸອຸປະກອນເຕັກນິກ ແກ່ໂຮງຈັກໂຮງງານອຸດສາຫະກຳ. ນອກຈາກນັ້ນ ບັນຫາການຈໍລະຈອນແຈກຢາຍ ຖືວ່າເປັນສະໜາມຕໍ່ສູ້ຊົນຊັ້ນ ອັນດຸເດືອດ. ເຈົ້າຂອງເກົ່າຂອງບັນດາ ໂຮງຈັກໂຮງງານ, ຊ່ຽວຊານຂອງນາຍທຶນໄດ້ຊອກທຸກຊ່ອງທາງເພື່ອເຮັດໃຫ້ບັນດາໂຮງຈັກໂຮງງານ ຂາດວັດຖຸດິບ ແລະເຊື້ອ - ເພີງ, ທຳລາຍເຄື່ອງຈັກເຄື່ອງລາງ ແລະເຄື່ອງມືຕ່າງໆ.

ຕົກມາເຖິງປີ ໑໙໑໘ ຫາ ໑໙໒໐ ເພິ່ນໄດ້ປະຕິບັດ ທິດທາງການລວມສູນ ການຈຳໜ່າຍວັດຖຸອຸປະກອນ ເຕັກນິກ . ເລີ່ມແຕ່ກາງປີ ໑໙໑໘ ຈົນເຖິງທ້າຍສົງຄາມກາງເມືອງແລະສົງຄາມຮຸກຮານຂອງຕ່າງດ້າວນັ້ນ ການຈຳໜ່າຍວັດຖຸ ອຸປະກອນເຕັກນິກໄດ້ຖືກເອົາເຂົ້າລວມສູນທັງໝົດ ແລະ ແມ່ນຜະແນກການຜະລິດ, ກົມໃຫຍ່ແລະກົມສູນກາງ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ເປັນຜູ້ຮັບຜິດຊອບຕໍ່ຜູ້ດຽວ. ໃນສະພາບຂາດແຄນວັດຖຸດິບ ແລະເຊື້ອເພີງ ຢ່າງໜັກນັ້ນເພິ່ນໄດ້ຫັນໃຊ້ການແຈກຢາຍ ຊັບພະຍາກອນຍັງເຫລືອຢູ່ແບບລວມສູນຢ່າງເຄັ່ງຄັດທີ່ສຸດ ແລະກໍແມ່ນວິທີດຽວເທົ່ານັ້ນທີ່ເພິ່ນສາມາດ

ຕອບສະໜອງ ກັບຄວາມຕ້ອງການຂອງກອງທັບໄດ້, ແລະກໍສ້າງເງື່ອນໄຂອັນເໝາະສົມ ແກ່ບັນດາໂຮງຈັກໂຮງງານອຸດສາຫະກຳທັງຫລາຍ ເພື່ອໃຫ້ດຳເນີນການຜະລິດຂອງຕົນ ໄດ້ຕາມປົກກະຕິ.

ເພິ່ນໄດ້ຈັດຕັ້ງລະບົບຈຳໜ່າຍ ວັດຖຸອຸປະກອນເຕັກນິກອຸດສາຫະກຳດັ່ງນີ້: ອົງການຈຳໜ່າຍໄດ້ປະກອບຂຶ້ນຢູ່ຕາມສະຫະບໍລິສັດອຸດສາຫະກຳໃຫຍ່ໆນັ້ນ ເຊັ່ນສະຫະໂຮງງານເຄື່ອງຈັກລັດ, ຢູ່ພະແນກການຜະລິດແລະກົມໃຫຍ່ຂອງສະພາເສດຖະກິດແຫ່ງຊາດສູງສຸດ, ສ່ວນອົງການຈຳໜ່າຍແກ່ທ້ອງຖິ່ນ ກໍໄດ້ປະກອບຂຶ້ນ ຢູ່ສະພາເສດຖະກິດທ້ອງຖິ່ນ ແລະຫ້ອງການ ປະຈຳແຂວງ ຂອງສະພາເສດຖະກິດແຫ່ງຊາດສູງສຸດ. ພະແນກການຜະລິດ, ກົມໃຫຍ່ແລະສະຫະບໍລິສັດ ມີໜ້າທີ່ຈັດຕັ້ງການ ຈຳໜ່າຍ ວັດຖຸອຸປະກອນເຕັກນິກ ໃນຂອບເຂດຂະແໜງອຸດສາຫະກຳຂອງຕົນ. ສະພາເສດຖະກິດແຫ່ງຊາດປະຈຳ ທ້ອງຖິ່ນ ມີໜ້າທີ່ຮັບປະກັນ ໃຫ້ແກ່ບັນດາໂຮງຈັກໂຮງງານ ອຸດສາຫະກຳທັງໝົດ ທີ່ຕັ້ງຢູ່ໃນຂອບເຂດເສດຖະກິດຂອງຕົນໃນວັດຖຸທີ່ຈຳເປັນທັງໝົດ, ເຖິງແມ່ນວ່າ ຂະແໜງອຸດສາຫະກຳ ຫລືການຜະລິດດັ່ງກ່າວ ຈະບໍ່ຂຶ້ນກັບຕົນກໍຕາມ. ໝາຍຄວາມວ່າ ໃນເງື່ອນໄຂທີ່ໜຶ່ງ ເພິ່ນໄດ້ຈັດຕັ້ງອົງການຈຳໜ່າຍເປັນຂະແໜງວິຊາສະເພາະ, ແລະໃນເງື່ອນໄຂທີ່ສອງ ເພິ່ນໄດ້ຈັດຕັ້ງອົງການຈຳໜ່າຍ ທີ່ມີລັກສະນະລວມ. ມັນເຮັດໃຫ້ມີຂີດໝາຍ ອັນສຳຄັນໃນໂຄງຮ່າງການຈັດຕັ້ງ ແລະໃນວຽກງານ

ຕົວຈິງຂອງກົງຈັກຈຳໜ່າຍ ທຸກພາກສ່ວນ.

ການສ້າງຕັ້ງສອງລະບົບ ຈຳໜ່າຍວັດຖຸອຸປະກອນເຕັກນິກ ຄຽງຄູ່ກັນໄປນັ້ນ ມັນຮຽກຮ້ອງໃຫ້ມີກົມສູນກາງບ່ອນໜຶ່ງ ທີ່ເປັນບ່ອນປະສານງານ. ໃນໂຄງຮ່າງຂອງສະພາເສດຖະກິດແຫ່ງຊາດສູງສຸດນັ້ນ ມີແຕ່ຄະນະກຳມະທິການຄະນະດຽວທີ່ປະຕິບັດໜ້າທີ່ດັ່ງກ່າວ ສ່ວນໃດສ່ວນໜຶ່ງ, ເພາະຄະນະກຳມາທິການນັ້ນ ມີໜ້າທີ່ເປັນພຽງອົງການວາງແຜນຈຳໜ່າຍເທົ່າ-ນັ້ນ. ພະແນກການຜະລິດ ຂອງສະພາເສດຖະກິດແຫ່ງຊາດ-ສູງສຸດ, ກົມໃຫຍ່, ສະພາເສດຖະກິດເມືອງແລະແຂວງມີສິດແກ້ໄຂໂດຍກົງ ບັນຫາຈຳໜ່າຍວັດຖຸອຸປະກອນ ໃນຂອບເຂດຈັບພະຍາກອນ ທີ່ເປັນກຳມະສິດຂອງຕົນ ຖ້າຫາກການແກ້ໄຂບັນຫາດັ່ງກ່າວບໍ່ກາຍຂອບເຂດ ຂະແໜງອຸດສາຫະກຳ ຂອງຕົນ ຫລືບໍ່ອອກນອກອົງເຂດເສດຖະກິດ ທີ່ຕົນ ຮັບຜິດຊອບ. ເມື່ອກົມໃຫຍ່ ຫລືສະພາເສດຖະກິດມີຄວາມຈຳເປັນຢາກຂ້າມຂອບເຂດທີ່ຕົນມີສິດນັ້ນ ເພິ່ນຈຶ່ງເຫັນວ່າ ສິດແລະຂອບເຂດ-ດັ່ງກ່າວຄັບແຄບ ມີລັກສະນະທ້ອງຖິ່ນເກີນໄປໂພດ ຈຶ່ງມັນໄດ້ສ້າງຄວາມຫຍຸ້ງຍາກໃນການປະຕິບັດ ນະໂຍບາຍອັນໜຶ່ງອັນດຽວກັນ ຢູ່ໃນຂອບເຂດການຈຳໜ່າຍ ວັດຖຸອຸປະກອນເຕັກ-ນິກ ແລະນຳຄວາມຫຍຸ້ງຍາກມາສູ່ການຮັບປະກັນ ວັດຖຸດິບ , ເຊື້ອເພີງແລະວັດຖຸອຸປະກອນຕ່າງໆໃຫ້ແກ່ບັນດາໂຮງຈັກໂຮງງານ ອຸດສາຫະກຳອື່ນໆ. ສະນັ້ນ ເລີ່ມແຕ່ວັນທີ ໕ ກັນຍາ ໑໙໘໐ ເປັນຕົ້ນມາ ຄະນະປະທານສະພາເສດຖະກິດ ແຫ່ງ

ຊາດສູງສຸດ ຈຶ່ງໄດ້ຕົກລົງໃຫ້ສະພາຈໍລະຈອນແຈກຢາຍ ຂອງ ສະພາເສດຖະກິດແຫ່ງຊາດ ເຮັດຫນ້າທີ່ເປັນກົມສູນກາງ ປະສານງານ. ສະພາຈໍລະຈອນແຈກຢາຍນີ້ ມີຫນ້າທີ່ ຈຳຫນ່າຍ ວັດຖຸດິບ, ເຊື້ອເພີງ, ວັດຖຸອຸປະກອນ ໃຫ້ແກ່ທຸກໆຂະແຫນງ ອຸດສາຫະກຳ ແລະດຳເນີນການແຈກຢາຍ ເຮັດຫນ້າທີ່ ການ ປະສານງານ. ສະພາຈໍລະຈອນແຈກຢາຍ ປະກອຍດ້ວຍຄະ-ນະຈຳນວນ ໑໕ ຄົນ ທີ່ແມ່ນຜູ້ແທນຈາກກົມກອງຕ່າງໆ,ສ່ວນ ການດຳເນີນວຽກງານບໍລິຫານ ປະຈຳວັນຂອງສະພານັ້ນເພິ່ນ ໄດ້ແຕ່ງຕັ້ງຫ້ອງການອັນຫນຶ່ງຂຶ້ນ ທີ່ປະກອບດ້ວຍຄະນະຈຳນວນ ໔ ຄົນ.

ໃນການເຄື່ອນໄຫວວຽກງານຕົວຈິງຂອງຕົນນັ້ນ ສະພາຈໍ-ລະຈອນແຈກຢາຍ ໄດ້ອີງໃສ່ພະແນກຈຳຫນ່າຍແລະແບ່ງປັນທີ່ ເພິ່ນຕັ້ງຂຶ້ນຢູ່ຫ້ອງການອຸດສາຫະກຳແຂວງ ຂອງສະພາເສດ-ຖະກິດແຫ່ງຊາດສູງສຸດ ແລະຂອງສະພາເສດຖະກິດແຂວງນັ້ນ. ພະແນກຈຳຫນ່າຍແລະແບ່ງປັນຂອງແຂວງ ມີຫນ້າທີ່ຈັດຕັ້ງຈຳ ຫນ່າຍວັດຖຸອຸປະກອນເຕັກນິກ ຢູ່ໃນຂົງເຂດເຄື່ອນໄຫວ ຂອງ ຫ້ອງການອຸດສາຫະກຳແຂວງຂອງສະພາເສດຖະກິດແຫ່ງຊາດ ສູງສຸດ.ພະແນກດັ່ງກ່າວໄດ້ຂຶ້ນບັນຊີຊັບສົມບັດໃນເຂດຂອງຕົນ ເຊັ່ນ: ພັດສະດຸ, ຜະລິດຕະພັນ ອຸດສາຫະກຳ ທີ່ສຳເລັດຮູບ, ເຄື່ອງກົນຈັກຂອງໂຮງງານ ແລະດຳເນີນການກວດກາ ການ ເຄື່ອນຍ້າຍ ເຄື່ອງຂອງດັ່ງກ່າວ ໃນຂອບເຂດຂອງຂົງເຂດທີ່ ຕົນຮັບຜິດຊອບ, ເຮັດບັນຊີຄວາມຕ້ອງການ ວັດຖຸ ອຸປະກອນ

ຂອງໂຮງຈັກໂຮງງານ ທີ່ຂຶ້ນກັບຫ້ອງການອຸດສາຫະກຳແຂວງ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ໃນດ້ານວັດຖຸດິບ,ວັດຖຸອຸປະກອນ, ເຄື່ອງຈັກຈາະຈຸ່ມ, ຂຶ້ນແຜນແຈກຢາຍ ໃຫ້ສອດຄ່ອງກັບໂຄງການການຜະລິດ ຂອງໂຮງງານອຸດສາຫະກຳ, ສຶກສາແລະອະນຸມັດ ແຜນການຂໍວັດຖຸດິບແລະອຸປະກອນຂອງໂຮງຈັກໂຮງງານ, ກວດກາການນຳໃຊ້ທຶນ ຮັບໃຊ້ການແຈກຢາຍທີ່ແບ່ງປັນໃຫ້, ປະກອບແຜນຈຳໜ່າຍ ແລະ ແຈກຢາຍຂອງແຂວງ. ຫລັງຈາກແຜນການດັ່ງກ່າວ ຫາກຖືກຮັບຮອງເອົາ ຢູ່ຫ້ອງການອຸດສາຫະກຳແຂວງ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ເພິ່ນກໍໄດ້ສົ່ງຂຶ້ນໃຫ້ສະພາ ພະລາທິການ ແລະຈຳໜ່າຍຂອງສະພາເສດຖະກິດແຫ່ງຊາດສູງສຸດ. ພະແນກພະລາທິການ ແລະຈຳໜ່າຍອຸດສາຫະກຳແຂວງ ປະກອບດ້ວຍຜູ້ແທນ ຈາກຄະນະກຳມາທິການ ການຜະລິດ ຂອງແຂວງ ແລະສ່ວນຄະນະນຳພາຄະນະກຳມາທິການການຜະລິດຂອງແຂວງນັ້ນ ປະກອບດ້ວຍຜູ້ຕາງໜ້າ ທີ່ມີອຳນາດ ເຕັມຂອງພະແນກພະລາທິການ ແລະຈຳໜ່າຍອຸດສາຫະກຳແຂວງ.

ເພື່ອຈັດຕັ້ງພະລາທິການ ວັດຖຸເຕັກນິກ,ເພິ່ນໄດ້ຈັດຕັ້ງພະແນກພະລາທິການຂຶ້ນ ຢູ່ພາຍໃນສະພາເສດຖະກິດອະນຸແຂວງທີ່ປະກອບດ້ວຍຜູ້ຕາງໜ້າ ຂອງບັນດາໂຮງຈັກໂຮງງານ ທີ່ມີລັກສະນະທ້ອງຖິ່ນ ແລະສາທາລະນະລັດທີ່ຕັ້ງຢູ່ໃນອະນຸແຂວງດັ່ງກ່າວ.

ໃນຕົ້ນປີ ໑໙໘໑ ເພິ່ນໄດ້ປັບປຸງລະບົບພະລາທິການ ວັດຖຸ

ເຕັກນິກແບບວິຊາສະເພາະໃນແຕ່ລະຂະແຫນ່ງການ.ການຈຳຫນ່າຍສິ່ງຂອງຮັບໃຊ້ສ່ວນຕົວ ໄດ້ກາຍເປັນຫນ້າທີ່ ຂອງກະຊວງປະຊາຊົນວ່າການເຄື່ອງບໍລິໂພກ, ສ່ວນການ ຈຳຫນ່າຍສິ່ງຂອງຮັບໃຊ້ອຸດສາຫະກຳນັ້ນ ແມ່ນສະພາພະລາທິການແລະຈຳຫນ່າຍຂອງສະພາເສດຖະກິດແຫ່ງຊາດສູງສຸດ. ຄະນະກຳມາທິການ ແຜນການລວມຂອງສະພາແຮງງານ ແລະປ້ອງກັນຊາດ ໄດ້ມີການປະສານສົມທົບ ໃນການເຄື່ອນໄຫວຂອງ ກະຊວງດັ່ງກ່າວ ແລະສະພາພະລາທິການແລະຈຳຫນ່າຍ.ສະພາພະລາທິການແລະຈຳຫນ່າຍ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ກາຍເປັນພະແນກພະລາທິການ ຂອງສະພາເສດ-ຖະກິດແຫ່ງຊາດສູງສຸດ.

ເພື່ອຮັບປະກັນການຈັດຕັ້ງ ພະລາທິການ ວັດຖຸເຕັກນິກແກ່ອຸດສາຫະກຳ ໃນເງື່ອນໄຂສົງຄາມກາງເມືອງເກີດຂຶ້ນ ແລະການຮຸກຮານຂອງຕ່າງດ້າວ ທີ່ຫນັກຫນ່ວງຢູ່ນັ້ນ , ເພິ່ນໄດ້ດຳເນີນການສຳຫລວດ ແລະການກວດກາ ຢ່າງເຄັ່ງຄັດ. ເພື່ອປະຕິບັດຕາມການຊີ້ນຳ ກ່ຽວກັບບົດບາດການສຳຫລວດ ການກວດກາ ໃນການກໍ່ສ້າງສັງຄົມນິຍົມນັ້ນ, ເລີ່ມຕັ້ງແຕ່ມື້ທຳອິດຂອງການສະຖາປະນາ ຂອງລະບອບໃຫມ່ ອົງການພະລາທິ-ການ ຂອງສະພາເສດຖະກິດແຫ່ງຊາດສູງສຸດໄດ້ດຳເນີນວຽກງານອັນໃຫຍ່ຫລວງໃນການຈັດຕັ້ງຂຶ້ນສຳຫລວດໂລຫະ, ວັດຖຸຮັບໃຊ້ອຸດສາຫະກຳເບົາ, ວັດຖຸເຄື່ອງປ່າຂອງດົງ ແລະອື່ນໆອີກ.

ເພິ່ນໄດ້ດຳເນີນການຕໍ່ສູ້ ຕ້ານການເກັບເກນແລະການອິດ ວັດຖຸດິບ ເຊື້ອເພີງ ໂດຍລຳພັງຂອງສະພາໂຊວຽດ ແລະສະພາເສດຖະກິດປະຈຳທ້ອງຖິ່ນ ຢ່າງເດັດຂາດ.ໃນເວລາດຽວກັນນັ້ນ ສະພາເສດຖະກິດແຫ່ງຊາດສູງສຸດ ກໍໄດ້ດຳເນີນການກວດກາ ຢ່າງເຄັ່ງຄັດ ເພື່ອບໍ່ໃຫ້ວັດຖຸດິບ ແລະ ອຸປະກອນຕ່າງໆ ຕົກສູ່ກຳມືຂອງນາຍທຶນ ເອກະຊົນໂດຍສະເພາະເພື່ອບໍ່ໃຫ້ສົ່ງຂອງດັ່ງກ່າວເລັດລອດໄປຕ່າງປະເທດໄດ້.ເພື່ອຮັບ-ປະກັນວຽກງານດັ່ງກ່າວເພິ່ນໄດ້ຈັດຕັ້ງກົງຈັກກວດກາຂຶ້ນແລະປະກາດໃຊ້ຄຳສັ່ງພິເສດ ອີກຈຳນວນໜຶ່ງ.

ເພື່ອປະຕິບັດການສຳຫລວດ ແລະການຈຳໜ່າຍ ວັດຖຸດິບ ແລະເຊື້ອໄຟແບບລວມສູນ, ອຸປະກອນຮັບໃຊ້ໂຮງຈັກ ໂຮງງານ ຢ່າງເຄັ່ງຄັດນັ້ນ ສະພາເສດຖະກິດແຫ່ງຊາດສູງສຸດໄດ້ນຳເອົາລະບົບສາງທັງໝົດ ເຂົ້າມາຢູ່ພາຍໃຕ້ການຄວບຄຸມ-ຂອງຕົນ. ເພື່ອປະສົມປະສານວຽກງານດັ່ງກ່າວ, ໃນເດືອນກຸມພາ ປີ ໑໙໑໙ ເພິ່ນໄດ້ຈັດຕັ້ງພະແນກວັດຖຸຂົນສົ່ງຂຶ້ນຢູ່ໃນໂຄງຮ່າງກົງຈັກເສດຖະກິດ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ແລະຢູ່ໃນສະພາເສດຖະກິດແຫ່ງຊາດສູງສຸດປະຈຳອະນຸແຂວງ ເພິ່ນກໍໄດ້ຈັດຕັ້ງພະແນກວັດຖຸຂົນສົ່ງທ້ອງຖິ່ນຂຶ້ນ.ພະແນກດັ່ງກ່າວ ມີໜ້າທີ່ຈັດຕັ້ງລະບົບສາງທັງໝົດ,ການຂົນສົ່ງສິນຄ້າ ແລະອື່ນໆອີກ.

ການຈັດຕັ້ງພະລາທິການ ວັດຖຸເຕັກນິກຂຶ້ນ ໄດ້ມີການພົວພັນ ຢ່າງໃກ້ຊິດ ກັບການຈັດຫາວັດຖຸດິບ.ການບົກແຫ້ງ ວັດຖຸ

ສຳລອງຢູ່ໃນສາງແລະການລຶດຜ່ອນຢ່າງກະທັນຫັນ ຂອງການ
ຂຸດຄົ້ນວັດຖຸດິບ ໄດ້ເກີດມີບັນຫາຂາດແຄນວັດຖຸດິບ ຢ່າງຮ້າຍ
ແຮງຂຶ້ນ.

ເວລານັ້ນ ຄະນະກຳມະການໂຮງຈັກໂຮງງານ ໄດ້ໃຊ້ສິດ
ພິເສດຂອງຕົນ ດຳເນີນການຂົນຂວາຍວັດຖຸດິບເອົາເອງ.ແຕ່
ວ່າ ດຳເນີນການຂົນຂວາຍວັດຖຸດິບ ໂດຍຕົນເອງນັ້ນ ມັນຜິດ
ຕໍ່ນະໂຍບາຍຂອງລັດຖະບານໂຊວຽດ ໃນບັນຫາການລວມສູນ
ຄຸ້ມຄອງອຸດສາຫະກຳ. ໜ້າທີ່ຕົ້ນຕໍຂອງສະພາ ເສດຖະກິດ
ແຫ່ງຊາດສູງສຸດ ແນໃສ່ຈັດຕັ້ງກົງຈັກຂົນຂວາຍວັດຖຸດິບ ຕາມ
ຂະແໜງວິຊາການ ແລະແຕ່ງຕັ້ງໜ້າທີ່ອຽກງານ ແກ່ກົງຈັກ
ດັ່ງກ່າວ. ໃນພາກປະຕິບັດຕົວຈິງ ການແກ້ໄຂບັນຫານີ້ ດຳ
ເນີນໄປພາຍໃຕ້ເງື່ອນໄຂ ໄພເງິນເຟີ້ເປັນປະຈຳຢູ່ພາຍໃຕ້ມີ
ການກໍ່ວິນາສະກຳ ຂອງພວກຂົນຂວາຍເອກະເທດແລະການ
ປ່ຽນແປງ ອັນກະທັນຫັນ ຂອງສະພາບການທະຫານ. ນອກ
ຈາກນັ້ນ ພະນັກງານໃນກົງຈັກຂົນຂວາຍສະພາ ເສດຖະກິດ
ແຫ່ງຊາດ ບໍ່ມີບົດຮຽນພຽງພໍໃນອຽກງານດັ່ງກ່າວ.ດັ່ງນັ້ນໃນ
ເບື້ອງຕົ້ນ ສະພາເສດຖະກິດແຫ່ງຊາດສູງສຸດ ຈຶ່ງໄດ້ໝູນໃຊ້
ບໍລິສັດເອກະເທດ ຈຳນວນໜຶ່ງ.

ເປັນທີ່ຮູ້ກັນແລ້ວວ່າ, ໃນວັນທີ ໗ ກໍລະກົດ ປີ
໑໙໑໘ ລະຫວ່າງກົມສູນກາງອຸດສາຫະກຳຕໍ່າແຜ່ນແລະບໍລິສັດ
"ຂົນສັດລັດເຊຍ" ໄດ້ມີການເຊັນສັນຍາກັນ. ເພື່ອໃຫ້ກິດຈະ
ການ ອຸດສາຫະກຳດຳເນີນໄປໄດ້ນັ້ນ ສະພາເສດຖະກິດແຫ່ງ

ຊາດສູງສຸດ ໄດ້ອະນຸມັດສິນເຊື່ອກ້ອນຫນຶ່ງທີ່ມີຈຳນວນປະມານ ໓໐໐ ລ້ານຣູບ ໃຫ້ແກ່ບໍລິສັດອິນສັດລັດເຊຍ. ບັນດາບໍລິສັດເອກະເທດ ໄດ້ແຊກເຂົ້າໃນການເຈລະຈາຕ່າງໆ: ສາກຫນ້າຂອງພວກເຂົາ ເຂົາໄດ້ສະແດງນ້ຳໃຈ ຢາກຮັບໃຊ້ຊຸດສາທະກຳແຫ່ງຊາດແຕ່ການປະຕິບັດຕົວຈິງ ຢູ່ສາກຫລັງຂອງ ເຂົາ ພວກເຂົາຊອກຊ່ອງທາງ ເພື່ອເຊັນສັນຍາຜູກມັດ ລັດຖະບານໂຊວຽດ ເພື່ອຍາດເອົາສິດຜົນປະໂຫຍດ ແກ່ພວກເຂົາ ເທົ່ານັ້ນ. ພວກເຂົາໃຊ້ເລ້ຫລ່ຽມເພື່ອລົງທຶນ ໃນການຂົນຂວາຍ-ວັດຖຸດິບກະເສດນັ້ນ ພວກເຂົາໄດ້ໂອນເງິນຈຳນວນຫນຶ່ງ ໄປບໍລິເວນແຫ່ງຫນຶ່ງຂອງປະເທດ ທີ່ຢູ່ໃຕ້ການຄວບຄຸມຂອງພວກປະຕິການ ເຊັ່ນ: ໃນເດືອນກຸມພາ ປີ ໑໙໑໙ ບໍລິສັດ "ອົນສັດລັດເຊຍ" ໄດ້ໂອນເງິນຈຳນວນ ໔ ລ້ານ ໓ ແສນຣູບໄປເຂດຄວບຄຸມຂອງກອງທັບຂາວຢູ່ນັ້ນ, ແຕ່ສ່ວນຈຳນວນເງິນທີ່ໄດ້ໂອນໄປເຂດຄວບຄຸມຂອງອຳນາດໂຊວຽດ ມີພຽງ ໑ແສນ ໕໐ ພັນຣູບເທົ່ານັ້ນ. ດ້ວຍເຫດດັ່ງກ່າວນັ້ນ ເລີ່ມແຕ່ກາງ ປີ ໑໙໑໙ ເປັນຕົ້ນມາ ລັດຖະບານໂຊວຽດຈຶ່ງໄດ້ປະຕິເສດການຮ່ວມມືກັບບໍລິສັດເອກະເທດ ແລະກໍຫັນໄປດຳເນີນ ການໂອນເອົາບໍລິສັດດັ່ງກ່າວ ມາເປັນຂອງລັດໃນທັນທີ.

ດັ່ງນັ້ນ ສະພາເສດຖະກິດແຫ່ງຊາດສູງສຸດ ຈຶ່ງໄດ້ຈັດຕັ້ງກົງຈັກຂົນຂວາຍວັດຖຸດິບ ທີ່ເປັນອົງຄະຂອງຕົນເອງຂຶ້ນນັ້ນ , ເພື່ອເຮັດໃຫ້ກົງຈັກນີ້ ຕັ້ງຢູ່ໃນບ່ອນທີ່ໃກ້ກັບບໍ່ວັດຖຸດິບກະເສດ ເທົ່າທີ່ສາມາດເຮັດໄດ້.

ເພິ່ນໄດ້ໃຊ້ສະຫະກອນປະກອບສິນຄ້າແລະບໍລິໂພກເປັນກົງຈັກອົນຂວາຍວັດຖຸດິບ. ກົງຈັກດັ່ງກ່າວ ອົນຂວາຍວັດຖຸດິບກະເສດ ມາໄດ້ເຖິງ ໘໐%. ການອົນຂວາຍອົນສັດທັງໝົດ ໄດ້ຂົນໂດຍກົງກັບສະຫະບໍລິສັດບໍລິໂພກສູນກາງ.

ການຈັດຕັ້ງອົນຂວາຍວັດຖຸດິບກະເສດ ຂອງລັດແລະຜະລິດຕະພັນເຄື່ອງປ່າຂອງດົງແລະອື່ນໆນັ້ນ ໄດ້ມີຄວາມໝາຍສຳຄັນ ໃນພາກປະຕິບັດຕົວຈິງ, ຊຶ່ງມັນໄດ້ເຮັດໃຫ້ອຸດສາຫະກຳລັດ ໄດ້ລຸດພົ້ນອອກຈາກນາຍທຶນເອກະເທດ ເທື່ອລະ ກ້າວ ແລະຍຸດຕິການຄ້າເຖື່ອນ. ໃນພາກປະຕິບັດຕົວຈິງພາຍໃນປະເທດ ເພິ່ນໄດ້ປະຕິບັດການຄ້າເອກສິດເປັນຂອງລັດ ຊຶ່ງການປະຕິບັດດັ່ງກ່າວ ໄດ້ອຳນວຍຄວາມສະດວກ ໃນການຮວບ - ຮວມເອົາວັດຖຸດິບ ເຂົ້າຢູ່ໃນກຳມືຂອງອົງການອົນຂວາຍວັດຖຸດິບຂອງລັດ ແລະແບ່ງປັນຕາມແຜນການ ລະຫວ່າງສາຂາອຸດສາຫະກຳ ແຕ່ລະຂະແໜງການ.

ຮູບການສຳຄັນ ໃນການຈັດຕັ້ງອົນຂວາຍວັດຖຸດິບ ກະເສດຂອງລັດນັ້ນ ມັນແມ່ນການດຳເນີນນະໂຍບາຍ ລາຄາຕາຍຕົວ. ໃນເດືອນສິງຫາ ປີ ໑໙໑໘ ເພິ່ນໄດ້ວາງລາຄາຕາຍຕົວຂອງປ່ານບໍ່,ໜັງແລະເມັດພັນທີ່ມີທາດນ້ຳມັນອອກ.ແຕ່ເນື່ອງຈາກວ່າ ໃນເງື່ອນໄຂທີ່ເງິນເຟີ້ເປັນເນື່ອງນິດນັ້ນ ການປະຕິບັດນະໂຍບາຍລາຄາຕາຍຕົວນັ້ນ ຈຶ່ງບໍ່ສາມາດຊຸກຍູ້ການຈັດຫາ-ວັດຖຸດິບດັ່ງກ່າວໄດ້. ສະນັ້ນ ການຈັດວັດຖຸດິບກະເສດຈຶ່ງໄດ້ດຳເນີນໄປ ບົນພື້ນຖານການແລກປ່ຽນສິນຄ້າຕໍ່ສິນຄ້າ.ສະພາ

ເສດຖະກິດແຫ່ງຊາດສູງສຸດ ມີການສົມທົບກັນກັບ ກະຊວງປະຊາຊົນວ່າການບໍລິໂພກ ໄດ້ແບ່ງປັນກ້ອນທຶນຮັບໃຊ້ການແລກ-ປ່ຽນສິນຄ້າດັ່ງກ່າວ; ແຕ່ວ່າ ໃນເມື່ອມີສົງຄາມກາງເມືອງ-ເກີດຂຶ້ນ, ຄວາມສາມາດທາງດ້ານວັດຖຸຂອງລັດຖືກຈຳກັດ,ກົງຈັກຈັດຫາຂອງລັດ ກໍຍັງບໍ່ທັນໄດ້ຂະຫຍາຍຕົວ ແລະ ເຫດຜົນອື່ນໆອີກນັ້ນ ກໍບໍ່ອຳນວຍຄວາມສະດວກ ໃນການດຳເນີນການຈັດຫາວັດຖຸດິບ ດ້ວຍວິທີການແລກປ່ຽນສິນຄ້າຕໍ່ສິນຄ້ານັ້ນໄດ້. ສະນັ້ນ ເລີ່ມແຕ່ປີ ໑໙໑໙ ມາ ການຈັດຫາວັດຖຸດິບໄດ້ນຳປະຕິບັດ ໂດຍວິທີເກັບເກນ. ໃນດຳລັດຂອງຄະນະກຳມະການບໍລິຫານສູນກາງທົ່ວລັດລັດເຊຍ "ກ່ຽວກັບການຈັດຫາວັດຖຸດິບ" ນັ້ນ ທີ່ເພິ່ນໄດ້ມີມະຕິຮັບຮອງເອົາໃນຕົ້ນປີ ໑໙໒໐ ໄດ້ບົ່ງໄວ້ວ່າ: ການຈັດຫາວັດຖຸດິບ ໃຫ້ປະຕິບັດ ໂດຍໃຊ້ລາຄາຕາຍ-ຕົວ ແລະດ້ວຍວິທີເກັບເກນ, ຊຶ່ງວິທີການດັ່ງກ່າວນີ້ ແມ່ນນຳໃຊ້ໄດ້ ກັບການຈັດຫາວັດຖຸດິບ ທຸກໆຊະນິດ. ເພື່ອຊຸກຍູ້ການຈັດຫາວັດຖຸດິບ ໃຫ້ກວ້າງຂວາງອອກນັ້ນ ເພິ່ນໄດ້ໃຊ້ການໃຫ້ບຳເນັດ, ທີ່ເປັນທັງສິ່ງຂອງແລະທັງເປັນເງິນ.

ບັນຫາສຳຄັນໃນການຈັດຕັ້ງ ພະລາທິການ ວັດຖຸເຕັກນິກ ແມ່ນການນຳໃຊ້ຫລັກການໃໝ່ ໃນການແຈກຢາຍວັດຖຸດິບ , ເຊື້ອເພີງ, ວັດຖຸອຸປະກອນ ຮັບໃຊ້ໂຮງຈັກໂຮງງານ, ການລົບລ້າງກຳມະສິດເອກະເທດ ແລະການສະຖາປະນາ ກຳມະສິດຂອງສັງຄົມ ຕໍ່ພາຫະນະການຜະລິດນັ້ນ ມັນໄດ້ສ້າງເງື່ອນໄຂອັນຈຳເປັນ ຕໍ່ການຈັດຕັ້ງການແຈກຢາຍຊັບພະຍາກອນວັດ

ຖຸອຸປະກອນ ຢ່າງມີແຜນການ.

ເນື້ອໃນຂອງແຜນການຄັ້ງທຳອິດໂດຍພື້ນຖານແລ້ວແມ່ນແນ ໃສ່ການວາງວິທີດຳເນີນການກຳນົດວັດຖຸດິບ ແລະເຊື້ອເພີງ; ວາງຂໍ້ກຳນົດອະນຸມັດຄຳຮ້ອງຂໍ; ບົນຫລັກການຂອງການພົວ-ພັນລະອຽດ ລະຫວ່າງອົງການພະລາທິການ ແລະອົງການບໍລິໂພກ. ແຜນການດັ່ງກ່າວ ໄດ້ວາງອອກໃນທຸກໆ ໓ ເດືອນ, ແລະເພິ່ນໄດ້ຕົກລົງຮັບຮອງເອົາຢູ່ໃນສະພາ ແລະກອງປະຊຸມ ຂອງຜູ້ແທນອົງການບໍລິໂພກ.

ເງື່ອນໄຂອັນຈຳເປັນຂອງການອະນຸມັດ ແຜນການພະລາທິການ ແລະຂອງການຮັບເງິນທຶນ ທີ່ເໝາະສົມນັ້ນ ເປັນໂຄງການຂອງການຜະລິດ. ນອກຈາກເງື່ອນໄຂດັ່ງກ່າວນັ້ນ ແລ້ວ ຂະແໜງອຸດສາຫະກຳ ຫລືໂຮງງານອັນໃດອັນໜຶ່ງກໍ່ນັບວ່າ-ເປັນສິ່ງສຳຄັນ. ໃນຈຳພວກໂຮງງານທີ່ມີຄວາມສຳຄັນ ສະເພາະ ໄດ້ແກ່ໂຮງຈັກໂຮງງານ ຮັບໃຊ້ການປ້ອງກັນຊາດ , ລຳລຽງຂົນສົ່ງທາງລົດໄຟ ຫລືພະລາທິການນ້ຳ ແລະແສງສະຫວ່າງໃຫ້ແກ່ຕົວເມືອງ ແລະບັນດາໂຮງຈັກໂຮງງານນຳໜ້າອີກຈຳນວນໜຶ່ງ. ໃນປີ ໑໙໔໐ ສະພາເສດຖະກິດແຫ່ງຊາດສູງສຸດກໍໄດ້ຖືວ່າບັນດາອຸດສາຫະກຳເປຕະໂລກະລາດ, ມົດສະກູ ແລະອີວາໂນໂວ-ໂວຊະເນເຊນເປັນກຸ່ມໂຮງງານຂອງຈຳພວກພະລາທິການພິເສດ ເຊັ່ນດຽວກັນ. ບາງເທື່ອການ ດຳເນີນກິດຈະການ ຂອງໂຮງຈັກໂຮງງານ ມັກຂຶ້ນກັບຄວາມສາມາດ ຂອງຄະນະໂຮງຈັກໂຮງງານ ໃນການຫາກຸ່ມຕົນເອງ-

ທາງດ້ານເຊື້ອເພີງ ແລະວັດຖຸດິບຢູ່ເລື້ອຍໆ.

ອຸດສາຫະກຳຫລັກ ເປັນອຸດສາຫະກຳທີ່ມີຄວາມສຳຄັນຍິ່ງຂອງເສດຖະກິດຂອງລັດຊຶນຊຸ້ນກຳມາຈີບ ທີ່ຫນຸ່ມນ້ອຍ.ສະນັ້ນ ເລີ່ມຈາກມື້ທຳອິດຂອງການດຳລົງຄົງຕົວ ຂອງລັດຊຶນຊຸນກຳ-ມາຈີບ, ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ເອົາໃຈ ໃສ່ເປັນພິເສດ ໃນວຽກງານການຈັດຕັ້ງພະລາທິການໂລຫະ. ໃນ ໔–໕ ເດືອນທຳອິດ ຫລັງຈາກມະຫາປະຕິວັດ ສັງຄົມນິຍົມເດືອນຕຸລາ ສຳເລັດລົງແລ້ວ, ເວລານັ້ນ ຢູ່ໃນກົງຈັກ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ເພິ່ນຍັງບໍ່ທັນໄດ້ແຕ່ງຕັ້ງ-ຕາຫນ່າງ ການຈັດຕັ້ງພະລາທິການໂລຫະ ທີ່ເປັນຂອງ ຕົນເອງເທື່ອ, ເພິ່ນໄດ້ໃຊ້ກົງຈັກຂອງກົມໃຫຍ່ ກ່ຽວກັບວຽກງານສຳຫລວດແລະຈຳຫນ່າຍໂລຫະ ທີ່ເອີ້ນວ່າ "ຮາແມດສໂກ " ແລະເພິ່ນກໍໄດ້ໃຊ້ສະຫະບໍລິສັດເກົ່າ ຊື່ວ່າ "ປະໂລດາເມັດ" ແລະ "ກະໂຣວະເລັຍ". ເພື່ອປະຕິບັດ ວຽກງານ ດັ່ງກ່າວເພິ່ນໄດ້ຕັ້ງກຳມະສິດຜູກຂາດຂອງລັດດ້ານໂລຫະຂຶ້ນອີກ.ເພື່ອເຮັດໃຫ້ການແຈກຢາຍໂລຫະ ຢູ່ພາຍໃຕ້ການຄວບຄຸມຂອງລັດນັ້ນ, ໃນວັນທີ ໒໗ ເດືອນກໍລະກົດ ປີ ໑໙໑໘ ເພິ່ນໄດ້ຈັດຕັ້ງພະແນກຍ່ອຍຂຶ້ນ ເພື່ອກຳກັບການສຳຫລວດການຈຳຫນ່າຍແລະການຂາຍແຮ່ຫນັກແລະໂລຫະຊຶ່ງເພິ່ນໄດ້ຮຽກກັນວ່າ"ປະໂລດາເມັດ". ຢູ່ໃນພະແນກຍ່ອຍ "ປະໂລດາເມັດ"ດັ່ງກ່າວນີ້ ເພິ່ນໄດ້ອະນຸມັດສິດທຸກຢ່າງ ທີ່ພົວພັນເຖິງການ ຈັດຕັ້ງພະລາທິການໂລຫະໃຫ້. ເພື່ອປະຕິບັດຫນ້າທີ່ດັ່ງກ່າວນັ້ນເພິ່ນໄດ້

ຈັດຕັ້ງກົງຈັກຫ້ອງຖຸນຂອງມັນຂຶ້ນອີກ. ກົງຈັກຫ້ອງຖຸນດັ່ງກ່າວ ໄດ້ແກ່ຄະນະກຳມາທິການ, ພະແນກທີ່ກຳກັບການສຳ ຫລວດ ການສາງ ຫລືການຈຳໜ່າຍໂລຫະ.

ບັນດາເຂດຊູດສາຫະກຳຂະຫຍາຍຕົວ ໄດ້ຖືກແຍກອອກ - ເປັນອີງເຂດພະລາທິການ ໂລຫະເອກະລາດ. ໂດຍອີງໃສ່ເງື່ອນໄຂພິເສດແຕ່ລະຫ້ອງຖຸນ ເພິ່ນໄດ້ຈັດຕັ້ງກົມຄຸ້ມຄອງ ໂລ ຫະເມືອງ ຫລືບໍລິສັດທີ່ມໜ້າທີ່ຄຸ້ມຄອງ ສາງຊູປະກອນ ໂລຫະ ຂອງໂຮງຈັກໂຮງງານ ທີ່ໂອນມາເປັນຂອງລັດທັງໝົດ ຢູ່ພາຍ ໃນເຂດທີ່ຕົນຮັບຜິດຊອບ. ດຳລັດຂອງສະພາເສດຖະກິດ ແຫ່ງ ຊາດສູງສຸດ ສະບັບລົງວັນທີ ໑໙ ພະຈິກ ປີ ໑໙໑໘ ນັ້ນ ໄດ້ມີ ບົດບາດສຳຄັນ ໃນການຈັດຕັ້ງພະລາທິການໂລຫະ. ໃນດຳລັດ ດັ່ງກ່າວ ເພິ່ນໄດ້ບົ່ງໄວ້ວ່າ ໂລຫະແລະສິ່ງຂອງ ທີ່ເປັນໂລຫະ ທັງໝົດ ທີ່ຢູ່ໃນສາງຕ່າງໆ ໄດ້ກາຍເປັນກຳມະສິດຂອງສາທາ ລະນະລັດໂຊວຽດ. ໂດຍອີງໃສ່ດຳລັດດັ່ງກ່າວ ບໍລິສັດ ". ປະ ໂລດາເມັດ" ໄດ້ລົງຄວບຄຸມສາງຈຳນວນຫລວງຫລາຍແລະໄດ້ ຂຶ້ນບັນຊີເຄື່ອງເຫລັກສຳລອງທັງໝົດ ໗໐% ຫາ ໘໐%. ຜ່ານ ການປະຕິບັດມາດຕາການດັ່ງກ່າວ ບໍລິສັດ "ປະໂລດາເມັດ " ໃນຕົວຈິງໄດ້ກາຍເປັນຜູ້ຈຳໜ່າຍໂລຫະ ແລະສິ່ງຂອງທີ່ເປັນ- ໂລຫະ ຢູ່ພາຍໃນປະເທດແຕ່ຜູ້ດຽວ. ໃນເວລາດຽວກັນນັ້ນ ກໍ ປະຕິບັດບາດກ້າວທຳອິດ ທີ່ເພິ່ນໃຊ້ວິທີຈຳໜ່າຍໂລຫະເຮັດໃຫ້ ເປັນແຜນການ.

ໃນໄລຍະທຳອິດ ບໍລິສັດ "ປະໂລດາເມັດ" ໄດ້ຈຳ ໜ່າຍ

ເຫລັກຕາມລະບົບໃບອະນຸຍາດ, ແຕ່ມາເຖິງລະດູໃບໄມ້ຫລົ່ນປີ ໑໙໗໘ ການຈຳໜ່າຍເຫລັກດັ່ງກ່າວ ກໍໄດ້ດຳເນີນໄປຕາມ-ແຜນການ. ໃນເດືອນພະຈິກ ໑໙໗໘ ຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ອະນຸມັດແຜນການ ພະລາທິການໂລຫະ ເທື່ອທຳອິດທີ່ເພິ່ນໄດ້ວາງອອກໃນໄລຍະ ສາມເດືອນ. ສ່ວນແຜນການເທື່ອທີສອງນັ້ນ ເພິ່ນໄດ້ອະນຸມັດ ໃນວັນທີ ໑໕ ກຸມພາ ປີ ໑໙໗໙. ໃນໄລຍະຕໍ່ມາ ເພິ່ນໄດ້ຂຶ້ນ-ແຜນແບ່ງອອກເປັນສອງໄລຍະ: ໄລຍະໜຶ່ງແຕ່ເດືອນເມສາຫາເດືອນມິຖຸນາ ແລະໄລຍະສອງ ແຕ່ເດືອນກໍລະກົດ ຫາເດືອນທັນວາ. ຂໍ້ມູນເບື້ອງຕົ້ນ ທີ່ໃຊ້ໃນການວາງແຜນພະລາທິການໂລຫະນັ້ນ ມັນແມ່ນໃບຄຳຮ້ອງຄວາມຕ້ອງການໂລຫະທີ່ປະກອບຂຶ້ນ ຈາກໂຄງການການຜະລິດ ຂອງສະພາເສດຖະກິດແຫ່ງຊາດປະຈຳແຂວງ. ສະພາເສດຖະກິດແຫ່ງຊາດສູງ-ສຸດໄດ້ນຳໃຊ້ມາດຕະຖານໂລຫະຢ່າງເຄັ່ງຄັດ. ເຫລັກ ແລະອຸປະກອນ ທາດເຫລັກທີ່ເພິ່ນຈ່າຍອອກນັ້ນ ໄດ້ຄິດໄລ່ເປັນລາ-ຄາຕາຍຕົວ.

ເຖິງແມ່ນວ່າບໍລິສັດ "ປະໂລດາເມັດ" ຫາກເປັນໃຈກາງແຈກຢາຍໂລຫະກໍຕາມ ຕົກມາເຖິງກາງປີ ໑໙໗໙ ເພິ່ນກໍໄດ້ຍົກລະດັບ ສະພາເສດຖະກິດແຫ່ງຊາດປະຈຳທ້ອງຖິ່ນໃນວຽກງານຈັດຕັ້ງ ພະລາທິການໂລຫະຂຶ້ນ, ກໍເນື່ອງຈາກວ່າ ພາຍຫລັງການດຳເນີນການໂອນໂຮງຈັກໂຮງງານມາເປັນຂອງລັດຈຳນວນໂຮງຈັກໂຮງງານທີ່ເປັນຂອງລັດ ກໍໄດ້ມີຈຳນວນເພີ່ມ

ຂຶ້ນແລະຂະໜາດກິດຈະການພະລາທິການກໍຂະຫຍາຍຕົວອອກຢ່າງກວ້າງຂວາງ. ໃນເງື່ອນໄຂດັ່ງກ່າວບໍລິສັດ "ປະໂລດາ-ເມັດ" ຈຶ່ງບໍ່ສາມາດເຮັດຫຼ້ອນໜ້າທີ່ຂອງຕົນໄດ້ ຕະຫລອດເຖິງທ້າຍປີ ໑໙໑໙ ສະພາເສດຖະກິດແຫ່ງຊາດປະຈຳ ທ້ອງຖິ່ນ ໄດ້ຈຳໜ່າຍໂລຫະເຖິງ ໖໐%. ບໍລິສັດ "ປະໂລດາ-ເມັດ" ໄດ້ພຽງແຕ່ສຸມໃສ່ການເຄື່ອນໄຫວຂອງຕົນດ້ານພະລາທິການ ໃນໂຮງຈັກໂຮງງານ ແລະສະຫະບໍລິສັດ ຂະໜາດໃຫຍ່ເທົ່ານັ້ນ.

ການຂະຫຍາຍການເຄື່ອນໄຫວ ຂອງສະພາເສດຖະ ກິດແຫ່ງຊາດປະຈຳທ້ອງຖິ່ນ ອອກຢ່າງກວ້າງຂວາງນັ້ນ ໃນຕົ້ນປີ ໑໙໒໐ ຢູ່ໃນສະພາພະລາທິການ ແລະຈຳໜ່າຍ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ເພິ່ນຈຳຕ້ອງໄດ້ຈັດຕັ້ງຄະນະກຳມາທິການລະຫວ່າງກົມຈຳໜ່າຍໂລຫະຂຶ້ນ. ຄະນະ ກຳມາທິການລະຫວ່າງກົມນີ້ໄດ້ຈັດວາງສາຍການພົວພັນ ດ້ານເສດຖະກິດລະຫວ່າງສະພາເສດຖະກິດແຫ່ງຊາດປະຈຳທ້ອງຖິ່ນແລະບໍລິສັດ"ປະໂລດາເມັດ"ໃນບັນຫາພະລາທິການໂລຫະ.

ພາຍຫລັງການປະຕິວັດເດືອນຕຸລາ ສຳເລັດລົງແລ້ວນັ້ນບັນຫາຂາດແຄນເຊື້ອເພີງ ເປັນບັນຫາຕົ້ນຕໍບັນຫາໜຶ່ງ. ລັດຖະບານໂຊວຽດ ໄດ້ແກ້ໄຂບັນຫາດັ່ງກ່າວ ໂດຍວິທີຕ່າງໆດັ່ງນີ້: ວິທີທີໜຶ່ງ ໄດ້ແກ່ການສຳຫລວດຂອງຈຳນວນເຊື້ອເພີງ ທີ່ມີຢູ່ທົ່ວໝົດນັ້ນ; ວິທີທີສອງ ເອົາໃຈໃສ່ບັນຫາເພີ່ມທະວີການຂຸດຄົ້ນ ແລະການຜະລິດເຊື້ອເພີງໃຫ້ຫລາຍຂຶ້ນ; ວິທີທີສາມການ

ຈຳໜ່າຍເຊື້ອເພີງ ທີ່ມີຢູ່ນັ້ນ ໃຫ້ຖືກຕ້ອງຕາມລະບົບ ກຳນົດ
ຢ່າງເຄັ່ງຄັດ.

ເພື່ອແກ້ໄຂບັນຫາທັງໝົດເຫລົ່ານີ້ ເພິ່ນໄດ້ຈັດຕັ້ງພະແນກ
ເຊື້ອເພີງຂຶ້ນ ຢູ່ໃນໂຄງຮ່າງກົງຈັກເສດຖະກິດ ຂອງສະພາ-
ເສດຖະກິດແຫ່ງຊາດສູງສຸດ ແລະໃນເວລາດຽວກັນນັ້ນ ເພິ່ນ
ກໍໄດ້ຈັດຕັ້ງກົມວິຊາສະເພາະຂຶ້ນອີກຈຳນວນໜຶ່ງ ເຊັ່ນ: ກົມ
ຖ່ານຫີນ, ກົມນ້ຳມັນ, ກົມປ່າໄມ້ ແລະອື່ນໆອີກ, ຊຶ່ງກົມດັ່ງ
ກ່າວ ເຮັດໜ້າທີ່ເປັນອົງການຈັດຕັ້ງການຜະລິດ ແຕ່ລະຂະ
ແໜງວິຊາການ.

ໃນເວລາທີ່ຂົງເຂດບໍ່ຂຸດຄົ້ນນ້ຳມັນ ແລະຖ່ານຫີນ ທີ່ສຳຄັນ
ໄດ້ສູນເສຍໄປຊົ່ວຄາວ ໃນໄລຍະນັ້ນ ເຊື້ອເພີງທີ່ເພິ່ນ ໄດ້
ຈາກຫາດໄມ້ນັ້ນ ໄດ້ກາຍມີບົດບາດອັນສຳຄັນຍິ່ງ. ໃນດຳລັດ
ຂອງສະພາລັດຖະມົນຕີປະຊາຊົນ ສະບັບລົງວັນທີ ໑໙ ເດືອນ
ກໍລະກົດ ປີ ໑໙໑໘ ເພິ່ນໄດ້ແຕ່ງຕັ້ງກົມປ່າໄມ້ເປັນ " ອົງ
ການສູງສຸດ 'ເພື່ອຈັດວາງແລະຈັດຕັ້ງຊຸດສາຫະກຳປ່າໄມ້ແລະ
ຊຸດສາຫະກຳຂຸດຄົ້ນປ່າໄມ້ ຢູ່ໃນຂົງເຂດສາທາລະນະລັດ ສະ
ຫະພັນລັດເຊຍ". ເພື່ອເພີ່ມທະວີການຂຸດຄົ້ນເຊື້ອເພີງ ເພິ່ນ
ໄດ້ນຳໃຊ້ມາດຕາການພິເສດ ເຊັ່ນ: ເພິ່ນໄດ້ຈັດຕັ້ງ "ຫ້ອງ
ການເບີສານ" ຂຶ້ນ, ຊຶ່ງພະນັກງານໃນກົງຈັກຂອງຫ້ອງການ
ດັ່ງກ່າວ ໄດ້ຖືກປົດປ່ອຍອອກຈາກວຽກງານ ປ້ອງກັນຊາດ .
ເພິ່ນໄດ້ສົ່ງກອງທະຫານ ເຂົ້າໄປປະຈຳຢູ່ບໍລິເວນ ຂຸດຄົ້ນປ່າ
ໄມ້ດັ່ງກ່າວ ເພື່ອຮັບປະກັນການຮັກສາຟືນ ແລະ ເຄື່ອງປ່າ

ຂອງດົງ. ກອງທະຫານດັ່ງກ່າວ ໄດ້ຢູ່ ພາຍໃຕ້ການບັນຊາ ຂອງ "ຫ້ອງການເບີສາມ" ໂດຍກົງ ພວກເຂົາໄດ້ດຳເນີນ-ວຽກງານ ຢ່າງຫ້າວຫັນ ຕ້ານກັບຜູ້ທີ່ຊຸກເຊື່ອງ ເຊື້ອເພີງສຳຮອງ ແລະເຄື່ອງປ່າຂອງດົງເພື່ອຫນີອົງການຈຳຫນ່າຍ ອຳນາດໂຊວຽດ. ພວກເຂົາທັງໄດ້ກຳຈັດທຸກປະກົດການ ທີ່ມີລັກສະນະ ຕ້ານກັບອຳນາດໂຊວຽດອີກດ້ວຍ.

ໃນຄຳສັ່ງຂອງຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ບົ່ງແຈ້ງໄວ້ວ່າ: "ໃນເມື່ອອົງການປ່າໄມ້ ແຂວງຫາກຂາດຄວາມສາມາດ ໃນການຈັດຫາປ່າໄມ້ ດ້ວຍຕົນເອງແລ້ວ ປ່າໄມ້ທັງຫມົດນັ້ນ ຈະຕ້ອງມອບໃຫ້ແກ່ກຳມະກອນ ອົງການທາງລົດໄຟ, ໂຮງງານອຸດສາຫະກຳ, ສະຫະກອນ ຫລືຈະເປັນອົງການໃດອົງການຫນຶ່ງ ທີ່ມີຄວາມສາມາດ ເພື່ອຂຸດຄົ້ນປ່າໄມ້ດັ່ງກ່າວ ໃຫ້ເປັນປະໂຫຍດໄດ້. ພະນັກງານຈັດຫາ-ປ່າໄມ້ ທຸກໆຄົນບໍ່ວ່າຈະເປັນພະນັກງານ ຂອງກົມໃດກໍຕາມ-ຈະຕ້ອງຢູ່ໃຕ້ການກວດກາ ຂອງກົງຈັກຫ້ອງການເບີສາມຫ້ອງຖິ່ນ ທີ່ກ່ຽວຂ້ອງນັ້ນ".

ເຖິງແມ່ນວ່າ ເພິ່ນໄດ້ວາງມາດຕາການທຸກຢ່າງ ອອກກໍຕາມ, ແຕ່ລັດຖະບານໂຊວຽດ ກໍບໍ່ສາມາດກຳຈັດການຂາດ-ແຄນດ້ານເຊື້ອເພີງໄດ້, ສະນັ້ນ ບັນຫາເຊື້ອເພີງຈຶ່ງຕົກເປັນບັນຫາຮ້າຍແຮງທີ່ສຸດ. ເນື່ອງຈາກອັນນັ້ນ ເພິ່ນຈຶ່ງໄດ້ເອົາ-ໃຈໃສ່ບັນຫາລວມສູນ ໃນການຄຸ້ມຄອງ ແລະຈັດວາງອຸດສາ-ຫະກຳເຊື້ອເພີງ. ໃນເດືອນທັນວາ ປີ ໑໙໑໘ ຄະນະປະ

ທານສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ມີມະຕິຕົກລົງລວມສູນ ການຈຳໜ່າຍເຊື້ອເພີງ ເຂົ້າຢູ່ໃນການຄຸ້ມຄອງຂອງອົງການດຽວເທົ່ານັ້ນ ທີ່ເພິ່ນເອີ້ນວ່າ ກົມເຊື້ອເພີງ. ໃນເວລາດຽວກັນນັ້ນ ເພິ່ນກໍໄດ້ຈັດຕັ້ງ ພະແນກເຊື້ອເພີງຂອງ ແຂວງຂຶ້ນ, ຊຶ່ງໃນພະແນກດັ່ງກ່າວ ເພິ່ນກໍໄດ້ຈັດຕັ້ງພາກສ່ວນ ບໍລິຫານແລະສາຂາທີ່ເຫັນຈຳເປັນ ຮັບໃຊ້ວຽກງານດັ່ງກ່າວຂຶ້ນ.

ເນື່ອງຈາກມີການຈັດຕັ້ງກົມເຊື້ອເພີງຂຶ້ນຢ່າງກ້ວາງຂວາງນັ້ນ ຂະແໜງຂອງກົມດັ່ງກ່າວ ຈຶ່ງໄດ້ຫັນໄປກຳກັບແຕ່ບັນຫາພື້ນຖານ ຂອງວຽກງານຈັດຕັ້ງຄຸ້ມຄອງການຜະລິດ ເປັນສ່ວນໃຫຍ່, ສ່ວນສິດຂອງເຂົາ ໃນວຽກງານຈຳໜ່າຍ ເຊື້ອເພີງນັ້ນ ໄດ້ຖືກຈຳກັດລົງ. ໃນລະດູບານໃໝ່ ຂອງປີ ໑໙໑໙ ເພິ່ນໄດ້ຈັດຕັ້ງຄະນະກຳມາທິການພິເສດຂຶ້ນ ຢູ່ພາຍໃນສະພາເສດຖະກິດແຫ່ງຊາດສູງສຸດ ເພື່ອກຳກັບບັນຫາເຊື້ອເພີງໂດຍສະເພາະ. ບັນຫາເຊື້ອເພີງນີ້ ຍາມໃດກໍເປັນບັນຫາທີ່ ລັດຖະບານໂຊວຽດ ໄດ້ເອົາໃຈໃສ່ເປັນພິເສດ.

ບັນຫາສຳຄັນອີກບັນຫາໜຶ່ງ ຂອງລັດໂຊວຽດ ທີ່ຍັງໜຸ່ມນ້ອຍຢູ່ນັ້ນ ແມ່ນບັນຫາພະລາທິການ ອຸປະກອນທີ່ຈຳເປັນ ແກ່ອຸດສາຫະກຳ. ລັດຊົນຊັ້ນກຳມາຊີບ ໄດ້ສືບທອດມໍລະດົກຈາກລັດລັດເຊຍຂອງພະເຈົ້າຊາ ທີ່ເປັນເສດຖະກິດກະແຈກກະຈາຍ ແລະອຸດສາຫະກຳກົນຈັກ ທີ່ບໍ່ຂະຫຍາຍຕົວປານໃດ. ນອກຈາກນັ້ນ ໃນປີເກີດສົງຄາມໂລກຄັ້ງທີໜຶ່ງ ການສົ່ງເອົາອຸປະກອນກົນຈັກເຂົ້າປະເທດໄດ້ລຸດລົງ ຢ່າງຮ້າຍແຮງ ແລະຫລັງຈາກ

ການປະຕິວັດເດືອນຕຸລາສຳເລັດລົງນັ້ນກິດຈະການດັ່ງກ່າວພັດ
ຢຸດສະງັກອີກຊ້ຳ. ການກໍ່ວິນາສະກຳ ທີ່ກໍ່ຂຶ້ນ ໂດຍເຈົ້າຂອງ
ໂຮງຈັກໂຮງງານເກົ່າ ແລະການກະທຳແບບປ່າເຖື່ອນ ຂອງ
ພວກທະຫານຂາວ ໄດ້ທຳລາຍມ້າງເພຈັກເຈາະຊ່ຽມ,ກົນຈັກ
ແລະອຸປະກອນອື່ນໆອີກດ້ວຍ.

ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ດຳເນີນ ວຽກງານ
ອັນມະຫາສານທີ່ສຸດ ໃນການກໍ່ສ້າງອຸປະກອນສຳລອງ ອັນຈຳ
ເປັນ ເຖິງແມ່ນວ່າ ຈະເປັນທຶນຮອນອັນນ້ອຍໆກໍຕາມ. ວຽກ
ງານດັ່ງກ່າວແມ່ນ: ອັນທີໜຶ່ງ, ບັນດາກົນຈັກການຊ່າງແລະ
ເຄື່ອງຈັກຕ່າງໆ ທີ່ຮັກສາໄວ້ແຕ່ກ່ອນ ສະໄໝການປະຕິວັດ-
ນັ້ນ ເພິ່ນໄດ້ມອບໃຫ້ແກ່ສະພາເສດຖະກິດແຫ່ງຊາດສູງສຸດ .
ອັນທີສອງ ເພິ່ນໄດ້ສືບຄົ້ນເອົາອຸປະກອນຕ່າງໆທີ່ເພິ່ນໄດ້ ຍົກ
ຍ້າຍໄປ ຕັ້ງແຕ່ສະໄໝສົງຄາມໂລກຄັ້ງທີໜຶ່ງນັ້ນ ສົ່ງກັບຄືນ
ໂຮງງານເດີມ; ອັນທີສາມ ເນື່ອງຈາກການຂາດແຄນ ວັດຖຸ
ແລະເຊື້ອເພີງ ເພິ່ນໄດ້ຢຸດການຜະລິດ**ຂອງພາກສ່ວນໃດພາກ**
ສ່ວນໜຶ່ງຂອງໂຮງງານ ຊຶ່ງເພິ່ນໄດ້ນຳໃຊ້ອຸປະກອນດັ່ງກ່າວ
ມາເປັນອຸປະກອນສຳລອງ; ແລະສຸດທ້າຍແມ່ນ ເພິ່ນໄດ້ອົນຸ
ຂວາຍເອົາອຸປະກອນການຊ່າງ ແລະເຄື່ອງຈັກຈຳນວນໜຶ່ງທີ່
ຍັງຢູ່ໃນກຳມືຂອງພວກນາຍທຶນ ເອກະເທດມາໄດ້.

ໃນປີ ໑໙໑໘ ເພິ່ນໄດ້ຂຶ້ນທະບຽນອຸດສາຫະກຳ ຊຶ່ງຫລັງ
ຈາກນັ້ນ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ຮັບລາຍງານ
ອັນສຳຄັນ ກ່ຽວກັບອຸ**ປະກອນ** ທີ່ມີທັງໝົດ ຢູ່ໃນເວລານັ້ນ.

ໃນປີທຳອິດຂອງການດຳລົງຄົງຕົວລັດໂຊວຽດນັ້ນ ການຮັບປະກັນອຸປະກອນການຜະລິດ ອັນຈຳເປັນແກ່ໂຮງງານ ອຸດສາຫະກຳ ເພິ່ນໄດ້ດຳເນີນການຈຳໜ່າຍ ແລະ ການສືບຕໍ່ຈຳໜ່າຍບັນດາອຸປະກອນທີ່ມີຢູ່ນັ້ນອີກ, ວິທີການດັ່ງກ່າວເພິ່ນຖືວ່າເປັນວິທີການອັນສຳຄັນ. ການຍົກຍ້າຍອຸປະກອນອອກຈາກຂົງເຂດສົງຄາມນັ້ນ ກໍມີບົດບາດສຳຄັນ ໃນການແກ້ໄຂບັນຫາດັ່ງກ່າວ. ຄະນະກຳມາທິການຄຸ້ມຄອງການຜະລິດຂອງສະພາ - ເສດຖະກິດແຫ່ງຊາດສູງສຸດ ໄດ້ວາງແຜນການພິເສດກ່ຽວກັບບັນຫາຈຳໜ່າຍອຸປະກອນດັ່ງກ່າວ ການແຈກຢາຍ ອຸປະກອນດັ່ງກ່າວ, ກ່ອນອື່ນໝົດ ແມ່ນໄດ້ມອບໃຫ້ແກ່ "ໂຮງຮຽນ ທີ່ນຳໜ້າ".

ແຕ່ເຖິງຢ່າງໃດກໍຕາມ ການໃຊ້ມາດຕາການດັ່ງກ່າວ ກໍບໍ່ສາມາດແກ້ໄຂບັນຫາ ພະລາທິການອຸປະກອນການຜະລິດ ໃຫ້ແກ່ໂຮງງານອຸດສາຫະກຳ ຢ່າງພຽງພໍໄດ້.

ແຕ່ເຖິງຢ່າງໃດກໍຕາມ ມາດຕາການທີ່ເພິ່ນນຳໃຊ້ດັ່ງກ່າວກໍໄດ້ຊ່ວຍຄ້ຳຊູ ການຈັດຕັ້ງວຽກງານອຸດສາຫະກຳ ໄດ້ໃນລະດັບໃດລະດັບໜຶ່ງ ໃນເງື່ອນໄຂຂາດແຄນສາຫັດ ແລະ ຫຍຸ້ງຍາກສັບສົນ ໃນເວລາເກີດສົງຄາມກາງເມືອງແລະມີການຮຸກຮານຕ່າງດ້າວຢູ່ນັ້ນ.

ສະພາບຂຸດໂຊມຂອງທະໜົນຫົນທາງ ແລະຄວາມສາມາດການຂົນສົ່ງທາງລົດໄຟ ທີ່ຕົກຢູ່ໃນລະດັບຕ່ຳນັ້ນໄດ້ສ້າງຄວາມຫຍຸ້ງຍາກໃຫ້ແກ່ການຈັດຕັ້ງພະລາທິການ ວັດຖຸເຕັກນິກ.ການ

ຂົນສົ່ງທາງນ້ຳກໍຖືກທຳລາຍແລະເຊື້ອເພີງກໍບໍ່ຮັບປະກັນ ຢ່າງພຽງພໍ. ແລະສ່ວນການຂົນສົ່ງທາງລົດນັ້ນ ກໍຂາດເຂີນເຊັ່ນ: ວັດຖຸດິບແລະເຊື້ອເພີງ ທີ່ເພິ່ນຈັດຫາມາໄດ້ແລ້ວນັ້ນ ກໍບໍ່ສາມາດຂົນໄປໄດ້ ຕາມຄວາມຕ້ອງການ.

ສະພາເສດຖະກິດແຫ່ງຊາດສູງສຸດ ກໍໄດ້ເອົາໃຈໃສ່ຕໍ່ບັນ-ຫາການຈັດຕັ້ງຂົນສົ່ງເຊັ່ນ ເພິ່ນໄດ້ຈັດຕັ້ງສ້ອມແປງ ຕູ້ລົດໄຟແລະທາງລົດໄຟ ຜະລິດຫົວລົດໄຟແລະຕູ້ໃຫມ່ອອກ. ບັນດາໂຮງງານທີ່ສຳເລັດການຜະລິດ ຕາມຄຳສັ່ງຂອງກະຊວງປະ-ຊາຊົນ ວ່າການຄົມມະນາຄົມ ເພິ່ນໄດ້ຈັດໃຫ້ເປັນປະເພດນຳຫນ້າ.

ໂດຍອີງໃສ່ສະພາບຫນັກຫນ່ວງຂອງການຂົນສົ່ງ ແລະ ບົດບາດອັນສຳຄັນ ຂອງການຈັດຕັ້ງເສດຖະກິດ, ລັດຖະບານໂຊວຽດ ໄດ້ດຳເນີນການລວມສູນການຄຸ້ມຄອງແລະການຈັດວາງລະບົບການຂົນສົ່ງທັງຫມົດໃນລະດັບສູງທີ່ສຸດ. ໃນໂຄງການຂອງສະພາເສດຖະກິດແຫ່ງຊາດສູງສຸດນັ້ນ ເພິ່ນໄດ້ຈັດຕັ້ງອົງການພິເສດອັນ ທີ່ມີຫນ້າທີ່ກຳກັບສະເພາະ ແຕ່ບັນຫາຂົນ ສົ່ງເທົ່ານັ້ນ. ໃນທີ່ສຸດບັນດາສິນຄ້າຈຳນວນຫລວງຫລາຍກໍໄດ້ຖືກຈຳຫນ່າຍອອກຈາກ ນະຄອນຫລວງມົດສະກູ ດ້ວຍຄຳສັ່ງຂອງກົມໃຫຍ່.

ໃນເດືອນກຸມພາ ໑໙໒໐ ຄະນະປະທານສະພາເສດຖະກິດແຫ່ງຊາດສູງສຸດໄດ້ມີມະຕິຕົກລົງແຕ່ງຕັ້ງກົມຄຸ້ມຄອງໂຮງງານຂົນສົ່ງຂອງລັດ ທີ່ຢູ່ໃນຖານະການຄຸ້ມຄອງແບບກົມໃຫຍ່ເອກະ

ລາດ ເພື່ອຄຸ້ມຄອງບັນຫາຄົມມະນາຄົມຂົນສົ່ງ. ກົມດັ່ງກ່າວໄດ້ມີຕາໜ່າງສາຂາຫ້ອງຖິ່ນ ຢ່າງຫລວງຫລາຍ. ນອກຈາກນັ້ນ ເພິ່ນຍັງໄດ້ຈັດຕັ້ງຫ້ອງການບັນຊາພິເສດອີກຫລາຍແຫ່ງ.

ໃນໄລຍະສົງຄາມກາງເມືອງເກີດຢູ່ນັ້ນ ການຂົນສົ່ງ ທາງລົດໄຟ ໄດ້ຢູ່ໃຕ້ການຄຸ້ມຄອງ ຂອງກະຊວງ ປະຊາຊົນ ວ່າການຄົມມະນາຄົມຂົນສົ່ງ ແຕ່ສ່ວນການຂົນສົ່ງທາງລົດ ແລະລໍາລຽງນັ້ນ ແມ່ນໜ້າທີ່ຂອງ ສະພາເສດຖະກິດ ແຫ່ງຊາດສູງສຸດ ເປັນຜູ້ຮັບຜິດຊອບ. ເພື່ອປະສົມປະສານທຸກພາກສ່ວນ ທີ່ຈັດຕັ້ງການຂົນສົ່ງນັ້ນໃນລະດູບານໃໝ່ຂອງປີ ໑໙໑໙ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ສະເໜີໃຫ້ເປີດກອງ ປະຊຸມເປັນປະຈໍາ ກ່ຽວກັບການຂົນສົ່ງທາງລົດໄຟ ຊຶ່ງໃນກອງປະຊຸມດັ່ງກ່າວໄດ້ມີຜູ້ແທນຈາກສະພາກອງທັບປະຕິວັດຂອງສາທາລະນະລັດ, ຈາກສະພາເສດຖະກິດແຫ່ງຊາດສູງສຸດ, ຈາກກະຊວງປະຊາຊົນວ່າການຄົມມະນາຄົມຂົນສົ່ງ ແລະຈາກກະຊວງປະຊາຊົນວ່າການບໍລິໂພກ. ໃນກອງປະຊຸມດັ່ງກ່າວ ເພິ່ນໄດ້ສຶກສາບັນຫານະໂຍບາຍຂົນສົ່ງ, ເພິ່ນໄດ້ໃຫ້ຄໍາຊີ້ແຈງ ກ່ຽວກັບບັນຫາຂັ້ນແຜນການຂົນສົ່ງ, ການຊີ້ນໍາຄະນະກະມາທິການພິເສດ ກ່ຽວກັບບັນຫາສ້ອມແປງຫົວແລະຕູ້ລົດໄຟ. ໃນເວລາດຽວກັນນັ້ນ ເພິ່ນກໍໄດ້ຈັດຕັ້ງຄະນະກໍາມາທິການສູນກາງກ່ຽວກັບການຈັດຕັ້ງການຂົນສົ່ງທາງນໍ້າ.

ເພື່ອຈັດຕັ້ງການຂົນສົ່ງ ແລະການຊີ້ນໍາທຸກລະບົບ ທາງລົດນັ້ນ ເພິ່ນໄດ້ຈັດຕັ້ງພະແນກຄຸ້ມຄອງລົດສູນກາງຂຶ້ນຢູ່ໃນລະບົບ

ສະພາເສດຖະກິດແຫ່ງຊາດສູງສຸດ ແລະອົງການຍ່ອຍທ້ອງຖິ່ນ ກໍໄດ້ຈັດຕັ້ງຂຶ້ນ ປູສະພາເສດຖະກິດແຫ່ງຊາດປະຈຳ ແຂວງ. ພະແນກດັ່ງກ່າວ ໄດ້ຮັບວັດຖຸປະກອນທີ່ຈຳເປັນ ຮັບໄຊ້ ວຽກງານຂອງຕົນຈາກງົບປະມານ ທີ່ເພິ່ນອະນຸມັດ. ເພິ່ນໄດ້ຍົກເວັ້ນເປັນພິເສດ ສະເພາະນະຄອນຫລວງມົດສະກູຊຶ່ງການພະລາທິການ ລະບົບຂົນສົ່ງທາງລົດ ໂດຍນ້ຳມັນເຊື້ອເພີງ ແລະນ້ຳມັນເຄື່ອງນັ້ນ ແມ່ນສະພາໂຊວຽດກຳແພງນະຄອນຫລວງ-ມົດສະກູ ເປັນຜູ້ຮັບຜິດຊອບເອົາເອງ.

ດ້ວຍສະພາບການດັ່ງກ່າວ ໃນປີທີ່ມີສົງຄາມກາງເມືອງ ແລະການຮຸກຮານຕ່າງປະເທດ ໄດ້ລະເບີດຂຶ້ນນັ້ນ, ເພິ່ນໄດ້ປະຕິບັດການຮ່ວມສູນລະບົບຄຸ້ມຄອງ ແລະການຈັດວາງພະລາທິການວັດຖຸເຕັກນິກ ຢ່າງເຄັ່ງຄັດ. ພ້ອມດຽວກັນນັ້ນເພິ່ນໄດ້ວາງມາດຕາການ ອັນແທດເໝາະອອກ ຕໍ່ການຍົກຖານະບົດບາດ ຂອງອົງການເສດຖະກິດທ້ອງຖິ່ນ ໃນການແກ້ໄຂບັນຫາພະລາທິການ ວັດຖຸເຕັກນິກດັ່ງກ່າວ.ໃນທ້າຍປີ ໑໙໒໐ ກອງປະຊຸມໃຫຍ່ສະພາໂຊວຽດຂອງລັດລັດເຊຍທັງໝົດ ຄັ້ງທີVIII ໄດ້ຮັບຮອງເອົາມະຕິກ່ຽວກັບການຈັດຕັ້ງເງິນທຶນພະລາທິການວັດຖຸເຕັກນິກ ໃຫ້ແກ່ສະພາເສດຖະກິດແຫ່ງຊາດປະຈຳ ທ້ອງຖິ່ນ.ໃນມະຕິດັ່ງກ່າວ ເພິ່ນໄດ້ເຫັນຄວາມຈຳເປັນອະນຸມັດໃຫ້ສະພາເສດຖະກິດແຫ່ງຊາດປະຈຳແຂວງ ໄດ້ມີໂອກາດໃຊ້ຫົວຄິດປະດິດສ້າງແລະການລິເລີ່ມຂອງຕົນທີ່ມີລະດັບສູງຢູ່ນັ້ນເພື່ອໃຫ້ກຸ້ມຕົວເອງ ໃນການຂະຫຍາຍອຸດສາຫະກຳ ເພື່ອແນໃສ່

ຈູດພ່ອນລະບົບພະນັກງານສືບຊາແລະຫລີກເວັ້ນການຢຸດສະງັກ ຂອງວຽກງານພະລາທິການ ໂຮງງານອຸດສາຫະກຳ ແລະສະຖາບັນຕ່າງໆ.

ໃນໄລຍະຕໍ່ໄປ ໂດຍສະເພາະໃນໄລຍະດຳເນີນ ນະໂຍບາຍເສດຖະກິດໃໝ່ນັ້ນ, ອົງການເສດຖະກິດທ້ອງຖິ່ນໄດ້ຮັບຄວາມເປັນເອກະລາດ ຢ່າງກ້ວາງຂວາງ ໃນວຽກງານຮັບ-ປະກັນວັດຖຸດິບ, ວັດຖຸປະກອນທີ່ຈຳເປັນ ໃຫ້ແກ່ໂຮງຈັກໂຮງງານຂອງຕົນ.

ການຂ້າມຜ່ານໄປສູ່ນະໂຍບາຍເສດຖະກິດໃໝ່ແລະ ການປ່ຽນແປງລະບົບຈຸ້ມຄອງອຸດສາຫະກຳລັດ ໃນສະໄໝແຕ່ປີ ໑໙໒໑ ຫາປີ ໑໙໓໐

ການປ່ຽນແປງໂຄງຮ່າງ ການຈັດຕັ້ງຈຸ້ມຄອງອຸດສາຫະກຳ

ຫລັງຈາກສົງຄາມກາງເມືອງໄດ້ສິ້ນສຸດລົງແລ້ວ ລັດຊົນຊັ້ນກຳມາຊີບ ໄດ້ມີເງື່ອນໄຂຕົວຈິງເພື່ອ ກ້າວເຂົ້າສູ່ການກໍ່ສ້າງເສດຖະກິດໃນສັນຕິພາບ. ສີ່ປີແຫ່ງສົງຄາມນັ້ນໄດ້ນຳການເສຍຫາຍດ້ານວັດຖຸ ຢ່າງຫລວງຫລາຍ ແລະຕັດຂາດ ສາຍພົວພັນດ້ານເສດຖະກິດໃນທຸກຂົງເຂດ ຢ່າງໜັກໜ່ວງ. ໃນປີ ໑໙໒໑ ບໍລິມາດຂອງຜະລິດຕະພັນທັງໝົດ ຂອງອຸດສາຫະກຳທຸກຂະແໜງ ມີພຽງແຕ່ ໓໑% ຂອງການຜະລິດໃນປີ ໑໙໑໓. ສ່ວນການຜະລິດຂອງອຸດສາຫະກຳໜັກນັ້ນ ໄດ້ພຽງແຕ່ ໒໑%ເທົ່ານັ້ນ, ການຂົນທຸກສິນຄ້າ ໂດຍທາງລົດໄຟນັ້ນ ໄດ້ ໒໒% , ການຜະລິດກະສິກຳທັງໝົດໄດ້ພຽງແຕ່໖໐%, ການຂຸດຄົ້ນຖ່ານຫີນ ໄດ້ລົດຜ່ອນລົງ ຈາກ ໒໙ ລ້ານ ໒ ແສນ ເຖິງ ໘ລ້ານ ໗ ແສນໂຕນ, ໝາຍຄວາມວ່າ ລົດລົງເຖິງ ໓,໓ ເທົ່າ ; ການ ຫລອມເຫລັກ ກໍໄດ້ຫລຸດຈາກ ໔ ລ້ານ ໒ ແສນ ລົງເຖິງ ໑໙໐ ພັນໂຕນ, ໝາຍຄວາມວ່າ ລົດລົງເກືອບ ເຖິງ

໔໓ ເທົ່າ; ການຂຸດຄົ້ນນ້ຳມັນ ກໍໄດ້ລຸດລົງຈາກ ໑໐ ລ້ານ ໓ ແສນ ເຖິງ ໓ ລ້ານ ໘ ແສນໂຕນ, ໝາຍຄວາມວ່າລຸດລົງ ຫລາຍກ່ວາ ໔,໖ ເທົ່າ. ("ເສດຖະກິດແຫ່ງຊາດ ຂອງ - ສ.ສ.ສ.ຊ., ໑໙໔໔-໑໙໗໔" ມິດສະກູ, ການພິມຈຳໜ່າຍຂອງ "ສະຖິຕິ", ປີ ໑໙໗໔, ໜ້າ ໕໐; "ປະຫວັດສາດ ພັກກອມມູນິດ ສະຫະພາບໂຊວຽດ", ເຫຼັ້ມທີ ໕, ເຫຼັ້ມ I , ການພິມຈຳໜ່າຍ ນະໂຍບາຍການເມືອງ,ປີ ໑໙໗໐, ໜ້າ ໑໑.)

ຖ້າປຽບໃສ່ວ່າ ປີ ໑໙໑໓ ຊຸດສາຫະກຳຂອງປະເທດ ລັດເຊຍ ມີເຄື່ອງຈັກຈຸ່ຽມເຫລັກ ໑໘໐໐ ເຄື່ອງ, ເມື່ອຕົກມາເຖິງປີ ໑໙໔໑ ນັ້ນ ໃນສະພາບຕົວຈິງ ເຄື່ອງຈັກດັ່ງກ່າວ ທີ່ຍັງເຫລືອ ກໍຢູ່ໃນສະພາບເປ່ເພໝົດແລ້ວ. ຈຳນວນໂຮງຈັກໂຮງງານສ່ວນຫລາຍກໍໄດ້ຖືກເປ່ເພ ຫລືໃຊ້ການບໍ່ໄດ້. ຈຳນວນກຳມະກອນ ກໍໄດ້ລຸດຜ່ອນລົງເຖິງ ໔ ເທົ່າ. ສ່ວນມາກພວກເຂົາຈຳເປັນຕ້ອງໄດ້ລົງສູ່ວຽກງານ ການຈ້າງແບບຫັດຖະກຳ ຫລືຫາວຽກງານຕາມມີຕາມເກີດ. ໃນສຸນທອນພົດຂອງທ່ານ ວ.ອີ.ເລນິນ ໃນກອງປະຊຸມພັກ ຄັ້ງທີ X , ເພິ່ນໄດ້ເວົ້າວ່າ: "ປະເທດລັດເຊຍ ລຸດພົ້ນອອກຈາກສົງຄາມໄດ້ຕົກຢູ່ໃນສະພາບທີ່ຄ້າຍຄື ສະພາບຄົນຜູ້ໜຶ່ງທີ່ຖືກທຸບຕີຈົນເກືອບສົບລົມຫາຍໃຈຢູ່ນັ້ນ: ເປັນໄລຍະເຈັດປີ ທີ່ເຂົາທໍລະມານ - ແລະມາເຖິງເວລານີ້, ພໍແຕ່ເຫນັງຕີງໄປໄດ້ ບົນໄມ້ເທົ້າ - ແຂນເທົ່ານັ້ນ ກໍສາທຸແລ້ວ ! ສະພາບຄືແນວນີ້ທີ່ພວກເຮົາຕົກ

ຢູ່ໃນປະຈຸບັນ." (ວ.ອີ.ເລນິນ.ປະມວນບົດນິພົນສະບັບສົມ-ບູນ,ເຫລັ້ມທີ ໔໓, ຫນ້າ ໓໘.)

ເພິ່ນໄດ້ວາງຫນ້າທີ່ອອກ ຕໍ່ລັດໂຊວຽດວ່າ: ເຮັດແນວໃດເພື່ອໃຫ້ວຽກງານການຟື້ນຟູເສດຖະກິດ ທີ່ຊຸດໂຊມຢູ່ດີແນວ ນີ້ໃຫ້ສຳເລັດໄວ ເທົ່າທີ່ຈະໄວໄດ້ ແລ້ວກ້າວເຂົ້າສູ່ ວຽກງານການກໍ່ສ້າງສັງຄົມນິຍົມ.

ເມື່ອຕົກເຂົ້າສູ່ໄລຍະການກໍ່ສ້າງສັງຄົມນິຍົມ ໃນຍາມສັນຕິພາບນີ້ ເພິ່ນເຫັນຄວາມຈຳເປັນ ຕ້ອງມີການປຽ່ນແປງ ສາຍພົວພັນດ້ານເສດຖະກິດ ລະຫວ່າງອຸດສາຫະກຳຂະຫນາດໃຫຍ່ແບບສັງຄົມນິຍົມ ກັບການຜະລິດຂະຫນາດນ້ອຍເອກະເທດກະແຈກກະຈາຍ ຕາມຊົນນະບົດນັ້ນ ເພື່ອເຮັດໃຫ້ການພົວພັນດັ່ງກ່າວ ສອດຄ່ອງກັບຫນ້າທີ່ດ້ານເສດຖະກິດໃນການກໍ່ສ້າງ ສັງຄົມນິຍົມ ຢູ່ໃນຍຸກນັ້ນ.

ດ້ວຍເຫດນັ້ນໃນມະຕິກອງປະຊຸມໃຫຍ່ຂອງພັກລັ້ງທີ X ເພິ່ນຈຶ່ງໄດ້ຮັບຮອງເອົາບົດລາຍງານຂອງທ່ານ ວ.ອີ.ເລນິນທີ່ໄດ້ບົ່ງໄວ້ວ່າ: "ເພື່ອຮັບປະກັນການດຳເນີນເສດຖະກິດ ໃຫ້ໄປຖືກຕ້ອງແລະຄ່ອງແຄ້ວນັ້ນ ແມ່ນອີງໃສ່ຫລັກການ ທີ່ອະນຸຍາດໃຫ້ພວກເຈົ້າທີ່ດິນ ຄຸ້ມຄອງຊັບພະຍາກອນຂອງເຂົາ ຢ່າງເສລີ, ເພື່ອເຮັດໃຫ້ເສດຖະກິດຂອງຊາວນາແຂງແຮງແລະເພື່ອຍົກສະມັດຕະພາບ ການຜະລິດຂອງເຂົາຂຶ້ນ, ແລະ ເພື່ອແນໃສ່ວາງລະບຽບເກັບພາສີ ຈາກເຈົ້າທີ່ດິນດັ່ງກ່າວໃຫ້ເຫມາະສົມກັບວິທີການ ການຈັດຫາຂອງລັດ ດ້ານເຄື່ອງບໍລິໂພກ,ວັດ

ຖຸດິບແລະເຟືອງອີກດ້ວຍ ມັນຈຳເປັນຕ້ອງເອົາພາສີກະສິກຳ-ແທນການເກັບເກນທີ່ເປັນວິທີຈັດຫາຂອງລັດແຕ່ສະໄໝກ່ອນ". ("ພັກກອມມູນິດ ສະຫະພາບໂຊວຽດ ໃນດຳລັດ ແລະມະຕິ-ຂອງກອງປະຊຸມໃຫຍ່ແລະກອງປະຊຸມຂອງຄະນະກຳມະການ-ສູນກາງ", ເຫຼັ້ມທີ ໒, ປີ ໑໙໗໐, ໜ້າ ໒໕໖.)"ລັກ-ສະນະສຳຄັນອັນອື່ນອີກ ຂອງນະໂຍບາຍເສດຖະກິດໃໝ່ໄດ້-ແກ່ການອະນຸມັດ ໃຫ້ແກ່ຊາວນາດຳເນີນການຄ້າໄດ້ໃນເມື່ອເຂົາຫາກໄດ້ເສຍຄ່າອາກອນ ໃຫ້ແກ່ອົງການການຄ້າທ້ອງຖິ່ນຂອງເຂົາແລ້ວ". (ໃນເຫຼັ້ມດຽວກັນນີ້, ໜ້າ ໒໕໗.)ທິດທາງດັ່ງກ່າວ ມັນແມ່ນຮູບການຂອງສະຫະພັນ ຂອງຊົນຊັ້ນກຳມະກອນ ກັບຊາວນາ, ຊຶ່ງຮູບການນີ້ ໄດ້ຮັບປະກັນ ຄວາມເຂັ້ມແຂງ ຂອງຜະເດັດການກຳມາຊີບ, ການຟື້ນຟູ ກະສິກຳ ແລະອຸດສາຫະກຳຂະໜາດໃຫຍ່ໄດ້.

ພ້ອມດຽວກັນນັ້ນ ເພິ່ນໄດ້ປະຕິບັດການປ່ຽນແປງຮາກຖານຂອງລະບົບ ແລະວິທີຄຸ້ມຄອງ ທີ່ໃຊ້ກັນຢູ່ໃນເວລານັ້ນໃນດ້ານອຸດສາຫະກຳ. ໂດຍການຫັນໄປສູ່ນະໂຍບາຍເສດຖະກິດໃໝ່ນັ້ນ ເພິ່ນໄດ້ນຳໃຊ້ວິທີເສດຖະກິດ ໃນການຈັດວາງການຜະ-ລິດອຸດສາຫະກຳ ໂດຍພື້ນຖານການນຳໃຊ້ປະເພດສິນຄ້າແລະເງິນຕາ (ເງິນ,ລາຄາ,ສິນເຊື່ອ, ກຳໄລ ແລະອື່ນໆ...) ທີ່ຖືວ່າເປັນບົດບາດອັນສຳຄັນ.

ເພິ່ນໄດ້ປະຕິບັດການຄຸ້ມຄອງເປັນເຈົ້າຕົນເອງ ທາງດ້ານເສດຖະກິດຂອງໂຮງງານລັດ ແລະກຸ່ມອຸດສາຫະກຳຂອງເຂົາ.

ກົງຈັກເສດຖະກິດຈຶ່ງກາຍເປັນອັນທີ່ເໝາະສົມນິມນວນກ່ວາ.
ການຫັນປ່ຽນແນວນີ້ ມັນຮຽກຮ້ອງໃຫ້ມີການຈັດວາງໂຄງຮ່າງ
ການຈັດຕັ້ງ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ແລະອົງ
ການເສດຖະກິດແຫ່ງຊາດ ຂອງມັນປະຈຳທ້ອງຖິ່ນ ຄືນໃໝ່
ອີກ. ໃນຂະນະທີ່ເພິ່ນໄດ້ຈັດຕັ້ງກຸ່ມຊຸດສາຫະກຳການຜະລິດ-
ແລະການຈັດຫາ,ການຂາຍຂົ້ນນັ້ນ(ເຊັ່ນ ສະຫະບໍລິສັດ ແລະ
ສະມາຄົມສະຫະບໍລິສັດ), ໂຮງງານຊຸດສາຫະກຳ ຂະແໜງ
ດຽວ ໄດ້ຖືກມອບໃຫ້ຢູ່ໃນຄວາມຄຸ້ມຄອງ ຂອງສະພາເສດຖະ
ກິດແຫ່ງຊາດປະຈຳທ້ອງຖິ່ນ. ແຕ່ວ່າ ເມື່ອມີການ ປ່ຽນແປງ
ເງື່ອນໄຂເສດຖະກິດນັ້ນ ເພິ່ນກໍ່ບໍ່ໄດ້ປ່ຽນແປງໜ້າທີ່ຕົ້ນຕໍ ທີ່
ເພິ່ນໄດ້ວາງອອກ ຕໍ່ສະພາເສດຖະກິດແຫ່ງຊາດສູງສຸດນັ້ນແຕ່
ຢ່າງໃດ. ສະພາເສດຖະກິດແຫ່ງຊາດສູງສຸດຍັງສືບຕໍ່ເປັນອົງ
ການສູນກາງ ຄຸ້ມຄອງຊຸດສາຫະກຳດັ່ງເດີມ. ໃນໂຄງຮ່າງ
ການຈັດຕັ້ງ ຂອງສະພາເສດຖະກິດແຫ່ງຊາດສູງສຸດນັ້ນ ເພິ່ນ
ໄດ້ຕັດພາກສ່ວນ ທີ່ບໍ່ມີການພົວພັນໂດຍກົງໃນການຄຸ້ມຄອງຊຸດ
ສາຫະກຳນັ້ນອອກ, ເຊັ່ນ ຄະນະກຳມະການການຄ້າ ພາຍ
ນອກ, ຄະນະກຳມະການກາງຈັດສັນທີ່ດິນ ແລະອື່ນໆອີກ...
ຫລັກການກໍ່ສ້າງການຜະລິດ ເປັນຂະແໜງການຂອງກົງຈັກ-
ສູນກາງ ຂອງສະພາເສດຖະກິດແຫ່ງຊາດສູງສຸດນັ້ນ ໄດ້ປ່ຽນ
ໃຫ້ມີພຽງແຕ່ໜ້າທີ່ດຽວ, ທີ່ເອົາໃຈໃສ່ແຕ່ບົດບາດການວາງ
ແຜນຊຸດສາຫະກຳ; ໜ້າທີ່ຮັບຜິດຊອບການຈັດຫາ ແລະການ
ຄ້າຂາຍນັ້ນ ໄດ້ຍົກໃຫ້ແກ່ອົງການພິເສດ.ກົງຈັກສູນກາງຂອງ

ສະພາເສດຖະກິດແຫ່ງຊາດສູງສຸດ ປະກອບດ້ວຍພະແນກແລະ ກົມທີ່ມີໜ້າທີ່ຮັບຜິດຊອບອັນດຽວ, ກົມໃຫຍ່, ຄະນະກຳມາທິການ ແລະອື່ນໆ. ກົມຄຸ້ມຄອງຊຸດສາທະກຳເສດຖະກິດ ສູນກາງ, ກົມຄຸ້ມຄອງການເງິນ ແລະສິນເຊື່ອສູນກາງ,ກົມລວມສູນພະລາທິການ ແລະອົງການວາງແຜນແຕ່ລະຂະແໜງການ (ເຊັ່ນ: ອົງການວາງແຜນຊຸດສາທະກຳ, ອົງການວາງແຜນເຊື້ອເພີງແລະອື່ນໆ...) ໄດ້ຖືກຈັດຕັ້ງຂຶ້ນ. ບັນຫາທີ່ສຳຄັນທີ່ສຸດ ໄດ້ຖືກຍົກຂຶ້ນ ພິຈາລະນາ ໃນສະພາເສດຖະກິດແລະຊຸດສາທະກຳ ຂອງສະພາເສດຖະກິດແຫ່ງຊາດສູງສຸດ.

ໃນເດືອນທັນວາ ປີ ໑໙໒໒ ໃນກອງປະຊຸມໃຫຍ່ສະພາໂຊວຽດ ທົ່ວລັດລັດເຊຍ ຄັ້ງທີໜຶ່ງນັ້ນ ເພິ່ນໄດ້ສ້າງຕັ້ງ ສະຫະພາບ ສາທາລະນະລັດ ສັງຄົມນິຍົມໂຊວຽດ (ສ.ສ.ສ.ຊ.) ຂຶ້ນ ຊຶ່ງປະກອບດ້ວຍ ສະຫະພາບ ສາທາລະນະລັດ ຕ່າງໆທີ່ມີສິດເທົ່າທຽມກັນ. ສະນັ້ນ ໃນເວລານີ້ ສະພາເສດຖະກິດ-ແຫ່ງຊາດສູງສຸດ ຂອງສະຫະພັນ ສາທາລະນະລັດ ສັງຄົມນິ-ຍົມໂຊວຽດລັດເຊຍ ຈຶ່ງບໍ່ສາມາດເຮັດໜ້າທີ່ເປັນອົງການຄຸ້ມຄອງສູງສຸດ ຂອງຊຸດສາທະກຳໄດ້. ຊຸດສາທະກຳທັງໝົດໄດ້ຖືກແບ່ງປັນໃຫ້ເປັນຂອງສູນກາງ, ເປັນຂອງສາທາລະນະລັດ ແລະເປັນຂອງທ້ອງຖິ່ນ. ມັນຮຽກຮ້ອງໃຫ້ຈັດຕັ້ງອົງການຄຸ້ມ-ຄອງຊຸດສາທະກຳສູນກາງ ແລະສາທາລະນະລັດ ທີ່ສອດຄ່ອງຂຶ້ນ. ນອກຈາກນັ້ນ ເພື່ອດຳເນີນນະໂຍບາຍເສດຖະກິດແລະເຕັກນິກ ເປັນອັນໜຶ່ງອັນດຽວກັນນັ້ນ ໃນຊຸດສາທະກຳ ທັງ

ໝົດ ມັນຮຽກຮ້ອງໃຫ້ມີສູນກາງປະສານງານຂອງມັນ, ຊຶ່ງເພິ່ນຮຽກວ່າ ສະພາເສດຖະກິດແຫ່ງຊາດສູງສຸດ ຂອງສະຫະພາບ ສາທາລະນະລັດ ສັງຄົມນິຍົມໂຊວຽດ.

ເພິ່ນໄດ້ບົ່ງສິດແລະໜ້າທີ່ ຂອງສະພາເສດຖະກິດ ແຫ່ງຊາດສູງສຸດ ຂອງສະຫະພາບ ສາທາລະນະລັດ ສັງຄົມນິຍົມໂຊວຽດ ອອກຢູ່ໃນດຳລັດຂອງຄະນະກຳມະການ ບໍລິຫານສູນກາງ ຂອງສ.ສ.ສ.ຊ. "ກ່ຽວກັບສະພາເສດຖະກິດ ແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ." ສະບັບລົງວັນທີ ໑໒ ພະຈິກ ໑໙໒໓. ໃນດຳລັດດັ່ງກ່າວ ເພິ່ນໄດ້ເວົ້າວ່າ, ສະພາ-ເສດຖະກິດແຫ່ງຊາດສູງສຸດ ຂອງສ.ສ.ສ.ຊ. ມີໜ້າທີ່ ຈັດວາງການຊີ້ນຳ ແລະຄຸ້ມຄອງອຸດສາຫະກຳ.ໜ້າທີ່ຈັດວາງນັ້ນແມ່ນດຳເນີນໄປໂດຍມີການພົວພັນ ກັບອຸດສາຫະກຳ ທັງໝົດ (ເຊັ່ນ: ອຸດສາຫະກຳສູນກາງ, ອຸດສາຫະກຳສາທາລະນະ-ລັດ, ອຸດສາຫະກຳທ້ອງຖິ່ນ, ອຸດສາຫະກຳລັດ,ອຸດສາຫະກຳຂອງສະຫະກອນ ແລະຂອງເອກະຊົນ);ການຊີ້ນຳນຳພາລວມນັ້ນ ໄດ້ປະຕິບັດຕໍ່ການພົວພັນ ກັບອຸດສາຫະກຳຂອງສາທາລະນະລັດ ແລະຂອງທ້ອງຖິ່ນ; ສ່ວນໜ້າທີ່ຄຸ້ມຄອງໂດຍກົງ ນັ້ນໄດ້ແກ່ການພົວພັນ ກັບພາກສ່ວນອຸດສາຫະກຳ ທີ່ຢູ່ພາຍໃຕ້ອົງການສູນກາງຂອງລັດ. ສະພາເສດຖະກິດແຫ່ງຊາດ ສູງສຸດຂອງ ສ.ສ.ສ.ຊ. ທັງເປັນອົງການຈັດວາງແລະ ວາງແຜນອຸດສາຫະກຳ, ໄດ້ເຜີຍແຜ່ບົດແນະນຳ, ອອກດຳລັດ, ປະກອບແຜນການການຜະລິດລວມ ແລະສ້າງງົບປະມານ ອຸດສາ

ຫະກຳທັງໝົດແລະເປັນຜູ້ນຳສະເໜີເອກະສານດັ່ງກ່າວເພື່ອຮັບການອະນຸມັດ ຢູ່ໃນຄະນະກຳມະການ ແຜນຜັງແຫ່ງຊາດ.

ພາລະແລະໜ້າທີ່ຂອງ ສະພາເສດຖະກິດແຫ່ງຊາດສູງສຸດຂອງ ສ.ສ.ສ.ຊ. ໄດ້ສະແດງອອກຢູ່ໃນໂຄງຮ່າງ ການຈັດຕັ້ງຂອງມັນ, ຊຶ່ງໃນພື້ນຖານຂອງມັນ ມັນໄດ້ມີການແຕກຕ່າງກັນກັບໂຄງຮ່າງ ຂອງສະພາເສດຖະກິດແຫ່ງຊາດສູງສຸດຂອງສະຫະພັນ ສາທາລະນະລັດ ສັງຄົມນິຍົມໂຊວຽດລັດເຊຍ. ໃນສະພາເສດຖະກິດແຫ່ງຊາດສູງສຸດ ຂອງສະຫະພາບທັງໝົດ-ໄດ້ສ້າງຕັ້ງກົມໃຫຍ່ຄຸ້ມຄອງເສດຖະກິດ, ທີ່ມີໜ້າທີ່ຊີ້ນຳລວມແລະຈັດວາງອຸດສາຫະກຳ, ແລະສ້າງຕັ້ງກົມສູນກາງຄຸ້ມຄອງອຸດສາຫະກຳລັດ, ທີ່ເປັນກົງຈັກຄຸ້ມຄອງໂດຍກົງບັນດາສະຖາບັນອຸດສາຫະກຳ ແລະການຄ້າ ແລະໂຮງງານຂອງສູນກາງ.

ໃນໜ້າທີ່ຂອງກົມໃຫຍ່ ຄຸ້ມຄອງເສດຖະກິດນັ້ນ ຍັງມີການວາງບັນຫານະໂຍບາຍລວມ ຂອງອຸດສາຫະກຳ, ການຈັດຕັ້ງການຜະລິດແລະການຂາຍ, ການລົງທຶນ, ສະມຸດບັນຊີແລະການລາຍງານ, ການກະກຽມຮ່າງແຜນການໃນດ້ານອຸດສາຫະກຳ, ຕິດຕາມການຂະຫຍາຍຕົວ ຂອງອຸດສາຫະກຳລັດ (ຍົກເວັ້ນບັນດາອຸດສາຫະກຳ ທີ່ຂຶ້ນກັບກົມສູນກາງ ຄຸ້ມຄອງອຸດສາຫະ-ກຳລັດ), ໂຮງງານສະຫະກອນເອກະເທດ, ຊີ້ນຳລວມອຸດສາຫະກຳສາທາລະນະລັດ;ຂຶ້ນແຜນການການຜະລິດອັນດຽວ(ແຜນໃນອະນາຄົດ ແລະແຜນປະຈຳວັນ), ງົບປະມານ ອຸດສາຫະກຳ ສ.ສ.ສ.ຊ. ແລະຕິດຕາມການປະຕິບັດແຜນການທີ່ອະນຸ

ມັດອອກແລ້ວ; ແກ້ໄຂບັນຫາກ່ຽວກັບການສ້າງຕັ້ງແລະສະຖານທີ່ຕັ້ງຂອງໂຮງຈັກໂຮງງານ ແລະກຸ່ມອຸດສາຫະກຳໃໝ່, ການຈັດຕັ້ງສະຖິຕິອຸດສາຫະກຳ ແລະອື່ນໆ. ກົງຈັກຂອງກົມ ໃຫຍ່ຄຸ້ມຄອງເສດຖະກິດ ປະກອບດ້ວຍພະແນກ ທີ່ມີໜ້າທີ່ ດຽວ ແລະພະແນກຂະແໜງການເຊັ່ນ: ພະແນກວາງແຜນ ອຸດສາຫະກຳ, ພະແນກວາງແຜນການກໍ່ສ້າງ, ພະແນກ ການວາງແຜນເຊື້ອເພີງ ແລະອື່ນໆ.

ໜ້າທີ່ຂອງກົມສູນກາງ ຂອງອຸດສາຫະກຳລັດນັ້ນມີຄື: ການຄຸ້ມຄອງສະຫະບໍລິສັດ, ວິສາຫະກິດອຸດສາຫະກຳແລະການຄ້າທີ່ມີຄວາມໝາຍທົ່ວສະຫະພາບ, ການປະຕິບັດມະຕິ ຂອງຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ. ໃນການໄຂຫລືການອັດ ວິສາຫະກິດຕ່າງໆ. ເພິ່ນໄດ້ດຳເນີນການຈັດວາງ ແລະການກວດກາການເຄື່ອນໄຫວການຜະລິດ ແລະເສດຖະກິດຂອງອຸດສາຫະກຳ, ການຄ້າແລະການສຳປະທານຂອງວິສາຫະກິດ. ເພື່ອໃຫ້ສຳເລັດໜ້າທີ່ດັ່ງກ່າວເພິ່ນໄດ້ຈັດຕັ້ງພະແນກປະຈຳຂະແໜງ ແລະພະແນກ ປະຈຳການທີ່ກົງກັນນັ້ນຂຶ້ນ. ອົງການບໍລິຫານທີ່ສຳຄັນນັ້ນໄດ້ແກ່ຄະນະຕົວໜ້າ. ມັນໄດ້ດຳເນີນການຈັດວາງການເຄື່ອນໄຫວ ເສດຖະກິດ ຂອງສະຫະບໍລິສັດທົ່ວສະຫະພາບ. ທຸກໆຂະແໜງ ອຸດສາຫະກຳ ໄດ້ມີຕົວໜ້າຂະແໜງເປັນຜູ້ຮັບຜິດຊອບ ຊຶ່ງຢູ່ຕ້ອງການບັນຊາຂອງຕົວໜ້ານັ້ນ ມີຄະນະອຳນວຍການທີ່ຊີ້ນຳໝວດສະຫະບໍລິສັດຕ່າງໆ, ທີ່ຈັດເຂົ້າຢູ່ໃນພື້ນຖານລັກສະນະ

ການຜະລິດ. ສ່ວນຫົວໜ້າເປັນຜູ້ຊີ້ນຳ ໝວດດັ່ງ ກ່າວ ໄດ້ເປັນ ຜູ້ຮັບຜິດຊອບ ໃນດ້ານ ການຈັດຕັ້ງ ການ ຜະລິດທັງໝົດ ຢູ່ໃນບັນດາສະຫະບໍລິສັດເຫລົ່ານັ້ນ. ເພິ່ນໄດ້ຮຽກ ກຸ່ມຂອງບັນດາຫົວໜ້າຂະແໜງອຸດສາຫະກຳນັ້ນ ເປັນຄະນະ ຫົວໜ້າ. ຄະນະຫົວໜ້າດັ່ງກ່າວ ໄດ້ມີກົງຈັກສູນກາງ ແລະ ທ້ອງຖິ່ນ.

ໃນຂະນະທີ່ເພິ່ນໄດ້ດຳເນີນ ການຟື້ນຟູເສດຖະກິດ ແຫ່ງ ຊາດນັ້ນ ບັນຫາທາງດ້ານເສດຖະກິດໄດ້ເກີດຂຶ້ນ,ຊຶ່ງການແກ້ ໄຂບັນຫາດັ່ງກ່າວ ມັນຮຽກຮ້ອງໃຫ້ມີການຈັດຕັ້ງ ຂະແໜງ ໃໝ່ຂຶ້ນໃນກົງຈັກເສດຖະກິດດັ່ງກ່າວ. ເຊັ່ນການຂາດແຄນວັດ ຖຸດິບກະເສດ, ການດຳເນີນການຟື້ນຟູ ແລະການ ຂະຫຍາຍ ອຸດສາຫະກຳພາຍຂ້າງໜ້າໃຫ້ສຳເລັດ. ສະນັ້ນ ດັ່ງດຽວກັນ ກັບຄະນະກຳມະການໃຫຍ່ ອຸດສາຫະກຳຝ້າຍ,ທີ່ຂຶ້ນກັບຄະນະ ປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ. ຊ. ນັ້ນ ໃນເດືອນມິຖຸນາ ປີ ໑໙໒໔ ເພິ່ນໄດ້ຈັດຕັ້ງກອງປະ ຊຸມປະຈຳ ກ່ຽວກັບວັດຖຸດິບ ອຸດສາຫະກຳຂຶ້ນ ຢູ່ທີ່ກົມໃຫຍ່- ເສດຖະກິດ.

ການສຳເລັດຂອງການຟື້ນຟູເສດຖະກິດແຫ່ງຊາດແລະການ ກ້າວເຂົ້າສູ່ການສ້າງລັດ ໃຫ້ເປັນອຸດສາຫະກຳນັ້ນ ມັນຮຽກ ຮ້ອງໃຫ້ມີການສູນແລະການປຸກລະດົມກຳລັງ ແລະ ຊັບພະຍາ ກອນທັງໝົດ ເຂົ້າໃນການຂະຫຍາຍອຸດສາຫະກຳ. ເພື່ອຮັບ ໃຊ້ທິດທາງດັ່ງກ່າວນັ້ນ ໃນເດືອນມີນາຂອງປີ ໑໙໒໕ ເພິ່ນ

ໄດ້ຈັດຕັ້ງກອງປະຊຸມພິເສດ ກ່ຽວກັບການຟື້ນຟູ ແລະການຂະຫຍາຍກອງທຶນພື້ນຖານ ຂອງອຸດສາຫະກຳລັດ. ຫນ້າທີ່ຕົ້ນຕໍຂອງກອງປະຊຸມດັ່ງກ່າວ ໄດ້ແກ່ການສຶກສາສະພາບ ເຕັກນິກ ແລະເສດຖະກິດ ຂອງອຸດສາຫະກຳ ແລະການສ້າງແຜນການໄລຍະຍາວ. ເພື່ອປະສົມປະສານການງົບປະມານ ແກ່ອຸດສາຫະກຳສະຫະພາບ ແລະສາທາລະນະລັດນັ້ນ ຢູ່ໃນຄະນະກຳມາທິການ ວາງແຜນອຸດສາຫະກຳ ເພິ່ນໄດ້ຈັດຕັ້ງກອງປະຊຸມປະຈຳ ກ່ຽວກັບງົບປະມານ, ຄະນະກຳມາທິການ ວາງແຜນສິນເຊືອອຸດສາຫະກຳກັບອານຸກຳມາທິການຕາມຂະແຫນງການຂຶ້ນ. ເພື່ອຍົກປະສິດທິພາບຂອງການອອກແຮງງານແລະ ຍົກຄຸນນະພາບຂອງຜະລິດຕະພັນໃຫ້ສູງຂຶ້ນນັ້ນເພິ່ນໄດ້ຈັດຕັ້ງກອງປະຊຸມພິເສດ ກ່ຽວກັບຄຸນນະພາບ ແລະກອງປະຊຸມ ກ່ຽວກັບບັນຫາປະສິດທິພາບຂອງແຮງງານຂຶ້ນ ແລະອື່ນໆອີກ.

ໃນວັນທີ ໒໐ ເດືອນເມສາ ປີ ໑໙໒໕ ປະທານ ສະພາເສດຖະກິດແຫ່ງຊາດສູງສຸດໂຊວຽດໄດ້ແກ່ ຟ.ເອ.ດະເຊີລະຊິນສະກີ ໃນໃບລາຍງານຂອງເພິ່ນ, ເພິ່ນໄດ້ຂຽນໃນນາມສະພາລັດຖະມົນຕີປະຊາຊົນໄວ້ວ່າ: ພ້ອມດຽວກັບບັນຫາຄຸ້ມຄອງແລະການເຮັດໃຫ້ວຽກງານຂອງໂຮງຈັກໂຮງງານ ທີ່ເຄື່ອນໄຫວຢູ່ໃນເວລານັ້ນ ໃຫ້ດີຂຶ້ນ ໄດ້ມີບັນຫາການຈັດຕັ້ງ ໂຮງງານອຸດສາຫະກຳຂຶ້ນໃຫມ່, ເພື່ອໃຫ້ສອດຄ່ອງກັບແຜນ ການແລະການຟື້ນຟູ ໂຮງງານອຸດສາຫະກຳ ທີ່ດຳເນີນວຽກງານຢູ່ນັ້ນ, ເພື່ອຈຸດປະສົງເຮັດໃຫ້ບັນດາໂຮງງານ ອຸດສາຫະກຳດັ່ງ

ກ່າວມີຄວາມສາມາດຮັບໃຊ້ພື້ນຖານການປ່ຽນແປງປະເທດໃຫ້ເປັນປະເທດສັງຄົມນິຍົມ. ເພື່ອຮັບປະກັນທິດທາງດັ່ງ ກ່າວເພິ່ນເຫັນມີຄວາມຈຳເປັນສ້າງແຜນການອຸດສາຫະກຳ ໃນໄລຍະຍາວນານຂຶ້ນ.

ດ້ວຍເຫດດັ່ງກ່າວ, ໂດຍອີງໃສ່ພື້ນຖານ ຂອງຄະນະກຳມາທິການ ວາງແຜນອຸດສາຫະກຳ ແລະກອງປະຊຸມ ພິເສດກ່ຽວກັບການຟື້ນຟູ ແລະການຂະຫຍາຍກອງທຶນ ພື້ນຖານຂອງອຸດສາຫະກຳລັດນັ້ນ ເພິ່ນໄດ້ຈັດຕັ້ງອົງການວາງແຜນຂຶ້ນຢູ່ໃນສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ.,ເພື່ອດຳເນີນການວາງແຜນອຸດສາຫະກຳ. ເພິ່ນໄດ້ລົບລ້າງກົມຄຸ້ມຄອງອຸດສາຫະກຳລັດແລະຄະນະຫົວໜ້າ,ສະພາອຸດສາຫະກຳແລະເສດຖະກິດ ແລະບັນດາສາຂາອື່ນໆອີກ. ເພື່ອວາງແຜນການ ແລະເພື່ອການຊີ້ນຳໃຫ້ຄ່ອງແຄ້ວແຕ່ລະຂະແໜງ ການນັ້ນ ເພິ່ນໄດ້ຈັດຕັ້ງກົມຄຸ້ມຄອງໃຫຍ່ຂຶ້ນ. ຄຽງຄູ່ກັບກົມທີ່ເພິ່ນໄດ້ຈັດຕັ້ງຂຶ້ນແລ້ວນັ້ນ (ເຊັ່ນ ກົມຄຸ້ມຄອງໃຫຍ່ກ່ຽວກັບເຫລັກ, ກົມຄຸ້ມຄອງໃຫຍ່ກ່ຽວກັບໄຟຟ້າ ແລະອື່ນໆ) ເພິ່ນໄດ້ຈັດຕັ້ງກົມຄຸ້ມຄອງໃຫຍ່ຕ່ຳແຜ່ນ, ກົມຄຸ້ມຄອງໃຫຍ່ເຄມີແລະອື່ນໆຂຶ້ນອີກ

ກົມໃຫຍ່ໃໝ່ນັ້ນ ໄດ້ດຳເນີນການຊີ້ນຳຂະແໜງອຸດສາຫະກຳທັງໝົດໂດຍກົງ. ໃນໂຄງຮ່າງຂອງກົງຈັກ ເສດຖະກິດແຫ່ງຊາດ ຂອງສະພາເສດຖະກິດແຫ່ງຊາດສູງສຸດນັ້ນເພິ່ນໄດ້ປະກອບອົງການຄຸ້ມຄອງ ຂະແໜງອຸດສາຫະກຳໃໝ່ຂຶ້ນ.

ການດັດແປງກົງຈັກສູນກາງ ຂອງສະພາເສດຖະກິດ ແຫ່ງ

ຊາດສູງສຸດ ໃຫມ່ນັ້ນ ໄດ້ນຳໄປສູ່ການປ່ຽນແປງຢູ່ໃນການຈັດ
ຕັ້ງໂຄງຮ່າງ ຂອງສະພາເສດຖະກິດແຫ່ງຊາດສູງສຸດຂອງສາ
ທາລະນະລັດ ສະຫະພາບ. ກົງຈັກດັ່ງກ່າວໄດ້ສ້າງຂຶ້ນ ໂດຍ
ສອດຄ່ອງກັບໂຄງຮ່າງ ຂອງສະພາເສດຖະກິດແຫ່ງຊາດ ສູງ
ສຸດ ສະຫະພາບ ສາທາລະນະລັດ ສັງຄົມນິຍົມໂຊວຽດ ແລະ
ອີງໃສ່ຈຸດພິເສດຂອງແຕ່ລະ ສາທາລະນະລັດ.

ຫນ້າທີ່ຕົ້ນຕໍ ຂອງສະພາເສດຖະກິດແຫ່ງຊາດສາທາລະນະ
ລັດນັ້ນ ໄດ້ແກ່ການຈັດຕັ້ງຄຸ້ມຄອງໂຮງຈັກໂຮງງານທີ່ມີຄວາມ
ຫມາຍ ສາທາລະນະລັດ. ສະພາເສດຖະກິດແຫ່ງຊາດ ລົງ
ຄວາມເຫັນຂອງຕົນຕໍ່ແຜນການ ແລະງົບປະມານ ສຳລັບໂຮງ
ຈັກໂຮງງານທີ່ມີຄວາມຫມາຍ ສະຫະພາບທັງຫມົດ, ທີ່ຕັ້ງຢູ່
ພາຍໃນຂອບເຂດ ຂອງສາທາລະນະລັດ, ຕິດຕາມການເຄື່ອນ
ໄຫວ ຂອງຂຸດສາຫະກຳສະຫະກອນ ແລະເອກະເທດ, ຂຶ້ນ
ແຜນການການຜະລິດ ແລະງົບປະມານ ແກ່ຂຸດສາຫະກຳ ສາ
ທາລະນະລັດ, ບໍລິຫານການລົງທຶນແລະສິນເຊື່ອ ຂອງຂຸດສາ
ຫະກຳ ສາທາລະນະລັດ, ສຶກສາບັນຫາກ່ຽວກັບການອະນຸມັດ
ໃຫ້ສຳປະທານແລະໃຫ້ເຊົ່າໂຮງງານຂຸດສາຫະກຳ ສາທາລະ
ນະລັດ, ຮ່າງລັດຖະບັນຍັດຂຸດສາຫະກຳ, ຈ່ຳຫນ່າຍການຊີ້-
ນຳ, ລະບຽບການແລະດຳລັດ ພ້ອມກັບດຳເນີນການກວດກາ
ຕໍ່ການປະຕິບັດ ເອກະສານດັ່ງກ່າວນັ້ນ. ໃນຂອບເຂດສິດອຳ
ນາດຂອງຕົນ ທີ່ຮັບຜິດຊອບນັ້ນ ສະພາເສດຖະກິດແຫ່ງ ຊາດ
ມີສິດຮຽກເປີດປະຊຸມສະພາ ແລະກອງປະຊຸມໃຫຍ່ກ່ຽວກັບບັນ

ທາຊູດສາທະກຳ ແລະ ການຄ້າໄດ້.

ການຈັດຕັ້ງສະຫະບໍລິສັດ

ໃນທ້າຍປີ ໑໙໒໐ ເພິ່ນມີທ່າອຽງໄປສູ່ການເຮັດໃຫ້ ການຣວມກຸ່ມການຜະລິດແໜ້ນໜາຂຶ້ນ, ຊຶ່ງການຣວມກຸ່ມດັ່ງກ່າວໄດ້ຈັດຕັ້ງຂຶ້ນ ໃນປີເກີດສົງຄາມກາງເມືອງແລະການຮຸກຮານຂອງຕ່າງດ້າວຢູ່. ກ່ອນອື່ນໝົດ ກໍແມ່ນໄດ້ແກ່ການຈັດຕັ້ງສະຫະບໍລິສັດ.

ໃນສະພາບການກໍ່ສ້າງເສດຖະກິດ ສັງຄົມນິຍົມຢູ່ໃນເວລານັ້ນ ສະຫະບໍລິສັດໄດ້ເປັນສາຂາ ຢູ່ລະຫວ່າງກາງ ໃນລະບົບຄຸ້ມຄອງລວມສູນ ຂອງຊູດສາທະກຳລັດ. ສະຫະບໍລິສັດໄດ້ຮຸບໂຮມເອົາບັນດາໂຮງຈັກໂຮງງານ ຈຳນວນຫລວງຫລາຍ ທີ່ມີລະບົບການຜະລິດຄ້າຍຄືກັນ ຫລືຄືບຊຸດມາເຂົ້າກັນ.ລັກສະນະພິເສດຂອງສະຫະບໍລິສັດນັ້ນ ແມ່ນ: ອົງການໜຶ່ງທີ່ມີສິດທາງດ້ານກົດໝາຍ; ການກຸ້ມຕົນເອງທາງດ້ານເສດຖະກິດ ໃນຂອບເຂດແຜນການທີ່ວາງອອກ ໂດຍສອດຄ່ອງກັບ ລັດຖະບັນຍັດໃນເວລານັ້ນ; ເອກະພາບໃນດ້ານໂຄງການການຜະລິດ, ໃນດ້ານການບໍລິຫານ, ໃນດ້ານການຊີ້ນຳເຕັກນິກ, ໃນດ້ານການລົງທຶນ ແລະໃນດ້ານ ພະລາທິການ ວັດຖຸເຕັກນິກ. ຮູບການການຈັດຕັ້ງຂອງສະຫະບໍລິສັດ ບໍ່ໄດ້ດຳເນີນໄປ ຢ່າງຕາຍຕົວ. ຮູບການດັ່ງກ່າວໄດ້ຂະຫຍາຍຕົວຂຶ້ນ,ມີການປັບປຸງ

ດື່ອນ, ມີການປັບຕົວໃຫ້ຖືກກັບສະພາບທີ່ປ່ຽນແປງ, ໄດ້ນຳເອົາລັກສະນະພິເສດໃຫມ່ ເຂົ້າມາເລື້ອຍໆ.

ທ່ານ ວ.ອີ.ເລນິນ ໄດ້ເນັ້ນຫນັກໃນຫລາຍຄັ້ງຫລາຍຫົນ, ເຖິງພື້ນຖານອັນແທ້ຈິງ ແລະອັນຫນຶ່ງອັນດຽວ ເພື່ອກໍ່ສ້າງສັງຄົມນິຍົມນັ້ນ ແມ່ນອຸດສາຫະກຳຂະຫນາດໃຫຍ່.ຖ້າຫາກບໍ່ມີອຸດສາຫະກຳຂະຫນາດໃຫຍ່ແລ້ວ ເວົ້າລວມມັນກໍ່ບໍ່ຕ້ອງກ່າວເຖິງສັງຄົມນິຍົມໄດ້. ການຈັດໃຫ້ເປັນກຸ່ມການຜະລິດ (ສະຫະບໍລິສັດ) ນີ້ ມັນຕອບສະຫນອງຕໍ່ຫນ້າທີ່ ທີ່ເພິ່ນວາງອອກ ຢູ່ໃນແຜນການ ການກໍ່ສ້າງສັງຄົມນິຍົມ ຂອງເລນິນ.ພາກສ່ວນສຳຄັນຂອງແຜນການດັ່ງກ່າວມີຄື: ການດຳເນີນການສ້າງລັດໃຫ້ເປັນລັດອຸດສາຫະກຳ ແບບສັງຄົມນິຍົມ ແລະ ການກໍ່ສ້າງພື້ນຖານວັດຖຸເຕັກນິກ ຂອງສັງຄົມນິຍົມ. ການຈັດຕັ້ງສະຫະບໍລິສັດ ແມ່ນຮູບການສະເພາະ ໃນການສັງລວມຂອງການຍົກລະດັບການຜະລິດ ສັງຄົມນິຍົມຂຶ້ນ.

ການສຶກສາພາກປະຕິບັດ ດ້ານເສດຖະກິດ ໃນໄລຍະສອງສາມປີທຳອິດ ຂອງນະໂຍບາຍເສດຖະກິດໃຫມ່ນັ້ນ ໄດ້ຢັ້ງຢືນໃຫ້ເຫັນວ່າ ບັນດາໂຮງຈັກໂຮງງານລັດທັງຫມົດ,ການເຄື່ອນໄຫວດ້ານການຜະລິດ ແລະດ້ານເສດຖະກິດທີ່ມີຢູ່ກ່ອນຫນ້ານັ້ນ ໄດ້ອີງໃສ່ພື້ນຖານ ງົບປະມານດ້ານການເງິນແລະການພະລາທິການລັດ ໃນປະຈຸບັນນີ້ ຕ້ອງໃຊ້ຫລັກການເພິ່ງຕົນເອງ-ກຸ້ມຕົນເອງ.

ການດຳເນີນໄປຕາມທິດທາງການກຸ້ມຕົນເອງ ແລະການມີ

ກຳໄລຂອງໂຮງຈັກໂຮງງານ, ສະຖາບັນທັງໝົດ, ທີ່ພວກເພິ່ນໄດ້ເຮັດໃຫ້ກາຍເປັນອົງການທີ່ຂຶ້ນກັບຕົນເອງ ທາງດ້ານເສດຖະກິດ ໃນເງື່ອນໄຂທີ່ເສດຖະກິດມີຫລາຍປະເພດ, ການເສລີ ທາງດ້ານການຄ້າ, ການນຳໃຊ້ຢ່າງກ້ວາງຂວາງການພົວພັນດ້ານສິນຄ້າ ແລະເງິນຕາ. ການໝູນໃຊ້ການພົວພັນ ເສດຖະກິດ ໂດຍກົງກັບກອງທຶນເອກະເທດນັ້ນ ມັນໄດ້ມີຄວາມໝາຍ ວ່າ ການກຸ້ມຕົນເອງທາງດ້ານເສດຖະກິດ, ໂດຍສະເພາະໃນຂັ້ນເລີ່ມຕົ້ນນັ້ນ, ເພິ່ນກໍໃຊ້ເປັນບັນຊີການຄ້າ. ການດຳເນີນງານ ຂອງບັນດາໂຮງຈັກໂຮງງານລັດ ໃນເງື່ອນໄຂ ທີ່ເພິ່ນໃຊ້ການກຸ້ມຕົນເອງ ທາງດ້ານເສດຖະກິດຢູ່ນັ້ນ ນອກຕົວແລ້ວມັນອາດສາມາດນຳໄປສູ່ການຮື້ຟື້ນວິທີເສດຖະກິດ ແບບນາຍທຶນ. ແຕ່ໃນເງື່ອນໄຂທີ່ກຳມະສິດ ຕໍ່ອຸປະກອນການ ຜະລິດເປັນຂອງສັງຄົມ ແລະໃນສະພາບທີ່ອຳນາດການເມືອງ ຢູ່ໃນກຳມືຂອງຊົນຊັ້ນກຳມະກອນນັ້ນ ລັດມີຄວາມສາມາດ ຢ່າງກ້ວາງຂວາງເພື່ອຍັບຍັ້ງ, ຈຳກັດແລະໃນທີ່ສຸດ ລົບລ້າງຢ່າງສິ້ນເຊີງ ການຟື້ນຄືນຂອງວິທີເສດຖະກິດແບບທຶນນິຍົມນັ້ນໄດ້.

ເພິ່ນໄດ້ຈັດຕັ້ງໂຮງຈັກໂຮງງານຂະໜາດໃຫຍ່ ທີ່ມີລະດັບເຕັກນິກທັນສະໄໝ, ມີການຈັດຕັ້ງທີ່ມີປະສິດທິພາບແລະທ່ຽງເໝາະສົມນັ້ນ ໃຫ້ເປັນສະຫະຊູດສາຫະກຳ. ເພິ່ນໄດ້ມອບບັນດາໂຮງຈັກໂຮງງານ ພ້ອມດ້ວຍອຸປະກອນການຜະລິດ, ວັດຖຸ, ວັດຖຸດິບທັງໝົດ ໃຫ້ແກ່ສະຫະບໍລິສັດ. ເພື່ອໃຫ້ວຽກງານການລວມກຸ່ມໂຮງງານດັ່ງກ່າວ ໄດ້ຮັບຄວາມສະດວກສະບາຍນັ້ນ,

ລັດໄດ້ຂົນຂວາຍກ້ອນທຶນກ້ອນໃດກ້ອນໜຶ່ງໃຫ້ແກ່ກຸ່ມໂຮງງານດັ່ງກ່າວ. ໃນການຊອກເອົາຊັບພະຍາກອນທີ່ຫາຍາກມາປ້ອນກຸ່ມໂຮງງານນັ້ນ ເພິ່ນໄດ້ສະຫງວນສິດໃນການຈັດຫາດ້ວຍຕົນຂອງບັນດາວັດຖຸດິບ, ເຊື້ອເພີງຢູ່ຕະຫລາດພາຍໃນປະເທດ, ແລະໃນບາງກໍລະນີ ຢູ່ຕະຫລາດນອກປະເທດ ໂດຍໄດ້ຮັບອະນຸຍາດຈາກ ສະພາເສດຖະກິດແຫ່ງຊາດສູງສຸດ.

ວ.ອີ.ເລນິນ, ໃນບົດນິພົນຂອງເພິ່ນ, ເພິ່ນໄດ້ສະແດງ-ແນວຄິດຂອງເພິ່ນອອກ ຕັ້ງຫລາຍໆຄັ້ງ ກ່ຽວກັບຄວາມ ຈຳເປັນນຳໃຊ້ບົດຮຽນ ຂອງບັນດາປະເທດທີ່ຈະເລີນກ້າວ ໜ້າກວ່າ, ໂດຍສະເພາະໃນຂົງເຂດການຈັດຕັ້ງ ແລະ ການຄຸ້ມຄອງເສດຖະກິດແຫ່ງຊາດ. "ພວກເຮົາຕ້ອງການຜູ້ຈັດຕັ້ງຜູ້ດີເດັ່ນ ໃນວຽກງານທະນາຄານ ແລະໂຮມກຸ່ມໂຮງຈັກ ໂຮງງານ... ພວກເຮົາຕ້ອງການ... ນັກວິສະວະກອນ,ນັກກະເສດ, ພະນັກງານເຕັກນິກ, ນັກຊ່ຽວຊານ ດ້ານວິທະຍາສາດ ... ສ່ວນຮູບການຂອງວຽກງານການຈັດຕັ້ງນັ້ນ ພວກເຮົາຈະບໍ່ຄົ້ນຄິດມັນ, ແຕ່ພວກເຮົາຈະຖ່າຍທອດເອົາ ຈາກພວກນາຍທຶນ ທີ່ມີສຳເລັດຮູບໄວ້ນັ້ນ ເຊັ່ນ ທະນາຄານ, ສະມາຄົມສະຫະບໍລິສັດ, ໂຮງງານທີ່ດີເດັ່ນ". (ວ.ອີ. ເລນິນ. ປະມວນບົດນິພົນ ຄົບຊຸດ, ເຫລັ້ມທີ ໓໔,ໜ້າ ໓໑໑-໓໑໘.)

ແຕ່ເຖິງຢ່າງໃດກໍຕາມ ໃຫ້ພິເຄາະເບິ່ງວ່າ ໃນໄລຍະຕົ້ນຂອງການກໍ່ສ້າງສັງຄົມນິຍົມ ເຫດຜົນຂອງການນຳໃຊ້ຮູບການ

ການຈັດຕັ້ງແລະເສດຖະກິດແບບນາຍທຶນນັ້ນ, ເພິ່ນຍັງບໍ່ທັນພິສູດເຖິງເນື້ອໃນທາງດ້ານເສດຖະກິດ ຂອງຮູບການ ດັ່ງກ່າວຈັກເທື່ອ. ກ່ອນອື່ນຫມົດ ແມ່ນຮູບການດັ່ງກ່າວ ມັນພົວພັນກັບລັກສະນະຂອງກຳມະສິດ ຕໍ່ພາຫະນະການຜະລິດ.

ເພື່ອໃຫ້ປະຕິບັດຫລ້ອນແຜນການນັ້ນ ເພິ່ນໄດ້ສະຫງວນສິດໃຫ້ແກ່ບັນດາກຸ່ມໂຮງງານ (ສະຫະບໍລິສັດ) ໃຊ້ຈ່າຍໂດຍເສລີ ຊັບພະຍາກອນທີ່ຫາມາໄດ້ ໂດຍໃຊ້ບາງສ່ວນ ຂອງຜະລິດຕະພັນຂອງຕົນ ເພື່ອແລກປ່ຽນເອົາວັດຖຸດິບ, ເຊື້ອເພີງ,ວັດຖຸປະກອນທີ່ຂາດເຂີນ, ຊື້ເຄື່ອງຈັກພາຫະນະ,ວັດຖຸຈາກລາຍໄດ້ຂອງຕົນແລະທັງໂດຍເງິນສົດ,ໃຊ້ຈ່າຍເງິນໃນ ຈຳນວນ ໑໐% ຂອງງົບປະມານເງິນເດືອນ ເພື່ອເປັນກຳລັງໃຈ ແກ່ຫນ່ວຍໂຮງງານ ແລະຕົກລົງຫາສັນຍາ.

ໃນການຈັດຕັ້ງສະຫະບໍລິສັດນັ້ນ ເພິ່ນໄດ້ໃຊ້ຫລັກການ ດັ່ງລຸ່ມນີ້ ເພື່ອຊຸມນຳເຂັ້ນ: ອັນທີຫນຶ່ງ, ຣົບໂຮມເອົາໂຮງງານທີ່ມີລະດັບຄ້າຍຄືກັນ ເພື່ອແນໃສ່ລວມສູນການຜະລິດ ເຂົ້າໃນໂຮງງານ ທີ່ມີອຸປະກອນຫລາຍກ່ວາ; ອັນທີສອງ, ຣົບໂຮມເອົາໂຮງງານທີ່ຢູ່ໃກ້ກັນເຂົ້າ ເພື່ອສະດວກໃນການຣົບປະກັນດ້ານວັດຖຸດິບ,ເຊື້ອເພີງແລະອື່ນໆແກ່ໂຮງງານດັ່ງກ່າວ; ອັນທີສາມ, ຣົບໂຮມເອົາໂຮງຈັກໂຮງງານ ຕາມຫລັກການ ທີ່ເຮັດໃຫ້ໂຮງງານ ເປັນໂຮງງານຄົບຊຸດ.ກົດເກນອັນສຳຄັນ-ໃນການຈັດຕັ້ງສະຫະບໍລິສັດນີ້ ແມ່ນລະດັບຄວາມສຳຄັນ ຂອງຜະລິດຕະພັນ ແຕ່ລະໂຮງງານ ຫລືແຕ່ລະຂະແຫນງອຸດສາຫະ

ກຳ ເພື່ອຟື້ນຟູເສດຖະກິດແຫ່ງຊາດ.

ໃນໄລຍະປີ ໑໙໔໑ ຫາ ໑໙໔໘ ເພິ່ນໄດ້ຈັດວາງການຈັດຕັ້ງສະຫະບໍລິສັດຂຶ້ນ. ການເຄື່ອນໄຫວເສດຖະກິດຂອງບັນດາສະຫະບໍລິສັດ ແມ່ນອີງໃສ່ຫລັກການບັນຊີການຄ້າ. ຈຸດປະສົງຕົ້ນຕໍ ຂອງການຈັດຕັ້ງສະຫະບໍລິສັດ ແມ່ນການຟື້ນຟູ ແລະຂະຫຍາຍອຸດສາຫະກຳ, ຍົກປະສິດທິພາບຂອງແຮງງານ, ຈັດຕັ້ງພະລາທິການໃຫ້ແທດເຫມາະ. ຫລັກການສຳຄັນຂອງ ການເຄື່ອນໄຫວເສດຖະກິດ ຂອງສະຫະບໍລິສັດ ແມ່ນຄວາມ ສາມາດກຸ້ມຕົນເອງໄດ້ ແລະບໍ່ໃຫ້ມີການຫລຸບທຶນ.

ສະຫະບໍລິສັດໄດ້ມີການບໍລິຫານ ຢ່າງເປັນເອກະລາດ ໃນດ້ານດຳເນີນງານ. ເພິ່ນໄດ້ອະນຸມັດ ໃຫ້ແກ່ຄະນະບໍລິຫານ-ສະຫະບໍລິສັດດັ່ງກ່າວ ຈັບສົມບັດທຸກຢ່າງ ແລະຜະລິດຕະພັນທີ່ເປັນຂອງໂຮງງານ ຂອງສະຫະບໍລິສັດ, ມີສິດໃຊ້ເງິນທຶນຫມູນວຽນແລະເງິນທຶນອື່ນໆອີກ. ສະຫະບໍລິສັດ ກຸ້ມຕົນເອງດ້ານສະບຽງອາຫານ, ວັດຖຸດິບ, ເຊື້ອເພີງແລະວັດຖຸອື່ນໆໂດຍໃຊ້ລາຍໄດ້ທີ່ຕົນໄດ້ຮັບມາຈາກ ການຂາຍຜະລິດຕະພັນ ຂອງຕົນນັ້ນ. ເຂົາໄດ້ຂາຍຜະລິດຕະພັນຂອງເຂົາດ້ວຍເງິນສົດ ຫລືເງິນສິນເຊື່ອ ແລະດຳເນີນການແລກປ່ຽນສິນຄ້າ. ສະຫະບໍລິສັດມີສິດຮັບວັດຖຸດິບ, ວັດຖຸປະກອນຕ່າງໆ ທັງຈາກລັດ ແລະທັງຈາກເອກະຊົນ ໂດຍຮູບການທາງສັນຍາຢ່າງເສລີ, ດຳເນີນການຊື້ ແລະການຈັດຫາວັດຖຸສິ່ງຂອງທີ່ຈຳເປັນໄດ້. ສະຫະບໍລິສັດ "ເຫລັກກ້າພາກໃຕ້", ເປັນກຸ່ມການຜະລິດທີ່ໃຫຍ່ໂຕ (ມີກຳ

ມະກອນ ຈຳນວນ ມີ໕ ພັນຄົນ), ຕາມກົດລະບຽບຂອງຕົນ-ເຂົາມີສິດພົວພັນການຄ້າຢູ່ຕ່າງປະເທດ. ຄວາມເປັນເອກະ-ລາດອັນກວ້າງຂວາງຂອງສະຫະບໍລິສັດນັ້ນ ຍັງແຜ່ ຂະຫຍາຍກວ້າງອອກໄປຮອດບັນຫາການນຳໃຊ້ເງິນສິນເຊື່ອ ອີກດ້ວຍ. ເຂົາມີສິດຮັບເງິນສິນເຊື່ອຈາກສະຖາບັນ ທີ່ອອກເງິນສິນເຊື່ອທຸກແຫ່ງ,ທີ່ຕັ້ງຢູ່ໃນດິນແດນສາທາລະນະລັດ. ໃນກໍລະນີ ພິເສດເຂົາມີຮອດສິດຮັບສິນເຊື່ອຈາກຕ່າງປະເທດໄດ້, ໂດຍແມ່ນຄະນະປະທານສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ຕົກລົງເຫັນດີ.ສິດແບບດຽວກັນນີ້ເພິ່ນກໍໄດ້ອະນຸມັດໃຫ້ແກ່ສະຫະບໍລິສັດຫຼອມເຫຼັກຜະລິດແກດ,ສະຫະບໍລິສັດຜະລິດເຫຼັກລວດແລະສະຫະບໍລິສັດຜະລິດຕະປູກຽວຂອງລັດເຊຍພາກກາງອີກດ້ວຍ. ສະຫະບໍລິສັດເຫຼົ່ານີ້ ມີຄວາມສາມາດຮັບໃບສັ່ງຈ່າຍ ຈາກລັດ, ສະຫະກອນ, ອົງການສະຫະຊີບ ແລະຈາກເອກະຊົນ-ອີກໂດຍໃຊ້ສັນຍາແບບເສລີ.ບັນດາສະຫະບໍລິສັດໃຫຍ່ນີ້ ໄດ້ຂາຍຜະລິດຕະພັນຂອງຕົນໃຫ້ແກ່ລັດ ດ້ວຍລາຄາທີ່ຫມັ້ນຄົງ.

ກົດລະບຽບຂອງບໍລິສັດ ໄດ້ບົ່ງແຈ້ງເຖິງບໍລິມາດ ຂອງຜະລິດຕະພັນ, ທີ່ຕ້ອງຂາຍໃຫ້ແກ່ລັດນັ້ນ. ກົດລະບຽບຂອງບາງບໍລິສັດ ໄດ້ເປີດຊ່ອງທາງໃຫ້ແກ່ລະບົບການຄຸ້ມຄອງທີ່ເຫມາະສົມຕາມເງື່ອນໄຂຕ່າງໆໄດ້. ໃນກໍລະນີເມື່ອລັດຫາກ ຈັດຫາວັດຖຸສິ່ງຂອງທີ່ຈຳເປັນ ຮັບໃຊ້ການຜະລິດທັງຫມົດ ໃຫ້ແກ່ສະຫະບໍລິສັດໄດ້ນັ້ນ, ໃນກໍລະນີດັ່ງກ່າວ ຜະລິດຕະພັນ ທັງຫມົດຂອງສະຫະບໍລິສັດ ຈະຕ້ອງຂາຍສົ່ງໃຫ້ແກ່ລັດຕາມລາຄາທີ່ຕົກ

ລົງກັນໄວ້ນັ້ນ. ແຕ່ຖ້າຫາກວ່າ ລັດບໍ່ສາມາດຮັບປະກັນວັດຖຸສິ່ງຂອງ ສິ່ງໃດສິ່ງໜຶ່ງ ແກ່ສະຫະບໍລິສັດ, ໃນກໍລະນີນັ້ນສະຫະບໍລິສັດມີສິດຂາຍຜະລິດຕະພັນຂອງຕົນອອກທ້ອງຕະຫລາດໄດ້ . ໃນທີ່ສຸດຖ້າຫາກວ່າ ລັດບໍ່ສາມາດຮັບປະກັນການຈັດຫາວັດຖຸ-ສິ່ງຂອງເຫລົ່ານັ້ນແຕ່ຢ່າງໃດ ສະຫະບໍລິສັດມີສິດເຕັມຕົວເພື່ອນຳໃຊ້ຜະລິດຕະພັນຂອງຕົນ ຕາມທີ່ຕົນເຫັນວ່າ ເໝາະສົມ. ແຕ່ເຖິງຢ່າງໃດກໍຕາມ ໃນກໍລະນີດັ່ງກ່າວບໍລິສັດຈຳຕ້ອງຂາຍຜະລິດຕະພັນຂອງຕົນໃຫ້ລັດ ຢ່າງນ້ອຍບໍ່ໃຫ້ລຸດ ໑໕%. ພາກປະຕິບັດດັ່ງກ່າວນີ້ ໄດ້ຮັບປະກັນໃຫ້ແກ່ສະຫະບໍລິສັດ ສິດຂາຍຜະລິດຕະພັນຂອງຕົນ ຢ່າງເສລີ. ແຕ່ເຖິງຢ່າງໃດກໍ ຕາມຄວາມເສລີ ດັ່ງກ່າວ ໄດ້ເປັນ ພຽງແຕ່ ອະນຸໂລມເທົ່ານັ້ນ, ເພາະວ່າ ເຂົາຕ້ອງປະຕິບັດ ຕາມແຜນການ ທີ່ອົງການຈັດຕັ້ງ ຂັ້ນສູງ ວາງໄວ້ນັ້ນ. ພ້ອມກັບ ໂຄງການດັ່ງກ່າວເພິ່ນ ໄດ້ຄາດຄະເນ ງົບປະມານ ດ້ານການເງິນ ແລະວັດຖຸສິ່ງຂອງທີ່ເພິ່ນໄດ້ຄິດໄລ່ ຄວາມຕ້ອງການຂອງສະຫະບໍລິ ສັດດ້ານອຸປະກອນ, ວັດຖຸສິ່ງຂອງເຊື້ອເພີງ, ເງິນຕາ, ເພິ່ນໄດ້ກະລາຄາຕົ້ນທຶນ ຂອງຜະລິດຕະພັນ ແບບພາງໆໄວ້ແລະພ້ອມທັງຄິດໄລ່ກຳໄລອີກດ້ວຍ. ເຖິງແມ່ນວ່າ ບັນດາສະຫະບໍລິສັດໄດ້ມີສິດເອົາຜະລິດຕະພັນຂອງຕົນ ຂາຍອອກທ້ອງຕະຫລາດກໍຕາມ, ການພະລາທິການຂອງສະຫະບໍລິສັດ ແມ່ນດຳເນີນຜ່ານອົງການຂອງລັດ. ດັ່ງນັ້ນ ຜະລິດຕະພັນດັ່ງກ່າວບໍ່ໄດ້ຂາຍໃນລາຄາຕາມທ້ອງຕະຫລາດ, ແຕ່ເພິ່ນຂາຍໃນລາຄາ ທີ່ລັດບົ່ງ

ໄວ້ໃນແຜນການ.ສະຫະບໍລິສັດໄດ້ຮັບເງິນກູ້ຢືມແລະເງິນລ່ວງໜ້າ ໂດຍແຈ້ງໃບສັ່ງຊື້. ການຈັດຕັ້ງຄຸ້ມຄອງສະຫະບໍລິ ສັດໄດ້ແກ່ຄະນະອຳນວຍການ ຂອງສະຫະບໍລິສັດ ທີ່ເພິ່ນໄດ້ຄັດເລືອກຂຶ້ນ ໃນໄລຍະແຕ່ໜຶ່ງປີຫາສາມປີ.

ການຂ້າມຜ່ານໄປສູ່ນະໂຍບາຍ ເສດຖະກິດ ໃໝ່ ແລະ ການຈັດຕັ້ງສະຫະບໍລິສັດ ມັນຮຽກຮ້ອງໃຫ້ມີການ ປ່ຽນແປງໂຄງຮ່າງການຄຸ້ມຄອງອຸດສາຫະກຳ. ດັ່ງທີ່ເຮົາຮູ້ກັນແລ້ວວ່າເພິ່ນໄດ້ປ່ຽນຊື່ຂອງຄະນະກຳມະການໃຫຍ່ ມາເປັນກົມໃຫຍ່ທີ່ດຳເນີນນະໂຍບາຍເສດຖະກິດ, ການເງິນແລະເຕັກນິກ ໃນຂອບເຂດຂະແໜງອຸດສາຫະກຳຂອງຕົນ. ສ່ວນການຄຸ້ມຄອງການຜະລິດໂດຍກົງ ແລະການຊື້ນຳອຸດສາຫະກຳນັ້ນ ເພິ່ນໄດ້ມອບໃຫ້ແກ່ສະຫະບໍລິສັດ. ຄຽງຂ້າງກັບການກຸ້ມຕົນເອງ ນັ້ນສະຫະບໍລິສັດ ໄດ້ຮັບການລົງທຶນ ຈາກອົງການຄຸ້ມຄອງ ຂະແໜງ, ຊຶ່ງສະຫະບໍລິສັດ ຈຳຕ້ອງຮັບຜິດຊອບແລະລາຍງານອົງການຄຸ້ມຄອງຂະແໜງດັ່ງກ່າວ. ດັ່ງນັ້ນ,ຮູບການຄຸ້ມຄອງການຜະລິດ ແບບເປັນສະຫະບໍລິສັດນັ້ນ ຈຶ່ງກາຍມີບົດບາດອັນສຳຄັນ ໃນໂຄງຮ່າງການຈັດຕັ້ງ ຄຸ້ມຄອງ ອຸດສາຫະກຳ. ຄວາມຫຍຸ້ງຍາກໃນການຈັດຕັ້ງຂອງການຊື້ຂາຍ ແລະ ພະລາທິການອຸດສາຫະກຳ ຂອງສະຫະບໍລິສັດນັ້ນໄດ້ວາງບັນຫາອອກວ່າ ຈະເຮັດແນວໃດດີ ເພື່ອຈະເຮັດໃຫ້ຕະຫລາດ ເປັນສິ່ງທີ່ນຳຜົນປະໂຫຍດ ໃຫ້ແກ່ໜ້າທີ່ກໍ່ສ້າງສັງຄົມນິຍົມ ແລະ ເພື່ອນຳໄປສູ່ທາດແທ້ຂອງການຈັດວາງ ໃນລະບົບການ ພະລາທິ

ການແລະການຊື້ຂາຍ.ສະຫລຸບແລ້ວເຫັນວ່າພົນປະໂຫຍດຂອງ ອຸດສາຫະກຳ ແລະເສດຖະກິດແຫ່ງຊາດທັງຫມົດນັ້ນຕ້ອງການ ໃຫ້ມີການຈັດຕັ້ງກຸ່ມການຄ້າ ສະເພາະຂະແຫນງ ອຸດສາຫະ-ກຳ,ທີ່ສາມາດນຳໄປສູ່ຫາດແທ້ແຫ່ງຫຼັກການເຮັດໃຫ້ເປັນແຜນ ການ ໃນການແລກປ່ຽນ. ການຈັດຕັ້ງດັ່ງກ່າວນັ້ນ ໄດ້ແກ່ສະ ມາຄົມສະຫະບໍລິສັດ. (ການເຄື່ອນໄຫວການຈັດຕັ້ງ ເສດຖະ ກິດ ຢ່າງລະອຽດ ຂອງສະມາຄົມສະຫະບໍລິສັດນັ້ນໄດ້ກ່າວໄວ້ ຢູ່ໃນພາກທີ IV ຂອງປຶ້ມຫົວນີ້.)

ໃນພື້ນຖານຂອງຮູບການການຈັດຕັ້ງຄຸ້ມຄອງ ອຸດສາຫະກຳ ໃຫມ່ນັ້ນ ເພິ່ນໄດ້ແນນໃສ່ແນວຄິດທີ່ວ່າ ໃນການຮັກສາ ຄວາມ ເປັນເອກະລາດ ຂອງສະຫະບໍລິສັດໄວ້ນັ້ນ ລັດຈະມີບົດບາດຊີ້ ນຳ ໃນການຈັດວາງສາຍພົວພັນການຄ້າ ລະຫວ່າງສະຫະບໍລິ ສັດ ກັບອິດທິພົນຂອງການຈັດຕັ້ງຕະຫລາດ ໃຫ້ມີຂອບເຂດອັນ ກ້ວາງຂວາງທີ່ສຸດ.

ການກຳເນີດຮູບການຄຸ້ມຄອງອຸດສາຫະກຳໃຫມ່ຂຶ້ນມາ ນັ້ນ ໄດ້ເຮັດໃຫ້ບັນຫາຈັດວາງ ແລະການຈັດລະບຽບສາຍການພົວ ພັນ ລະຫວ່າງ ບັນດາສະຫະບໍລິສັດ ກັບອົງການເສດຖະ ກິດ ອື່ນໆ (ເຊັ່ນ: ກົມໃຫຍ່, ສະພາເສດຖະກິດແຫ່ງຊາດສູງສຸດ, ສະມາຄົມສະຫະບໍລິສັດ, ທະນາຄານ ແລະອື່ນໆ ...) ເກີດ ຂຶ້ນອີກ, ໄດ້ດຳເນີນການຍົກສູງ ການເຕົ້າໂຮມການ ຜະລິດ ຕໍ່ໄປ .

ໃນເດືອນເມສາ ໑໙໔໙ ຄະນະກຳມະການ ບໍລິຫານສູນ

ກາງທົ່ວລັດລັດເຊຍແລະສະພາລັດຖະມົນຕີປະຊາຊົນສະຫະພັນສາທາລະນະລັດ ສັງຄົມນິຍົມໂຊວຽດລັດເຊຍ ໄດ້ອອກດຳລັດ "ກ່ຽວກັບວິສາຫະກິດ ອຸດສາຫະກຳລັດ ທີ່ນຳໃຊ້ຫລັກການຄິດໄລ່ບັນຊີການຄ້າ (ສະຫະບໍລິສັດ)", ຊຶ່ງໄດ້ບົ່ງໄວ້ວ່າ ສະຫະບໍລິສັດ ແມ່ນວິສາຫະກິດອຸດສາຫະກຳລັດ, ຊຶ່ງລັດໄດ້ຮັບປະກັນ ຄວາມເປັນເອກະລາດ ໃນດ້ານກິດຈະການ ການຜະລິດທີ່ນຳໃຊ້ຫລັກການການຄິດໄລ່ບັນຊີການຄ້າ ທີ່ມີກຳໄລ, ຊຶ່ງກິດຈະການດັ່ງກ່າວ ສອດຄ່ອງກັບກົດລະບຽບທີ່ເພິ່ນອະນຸມັດນັ້ນ. ເພິ່ນຖືວ່າ ສະຫະບໍລິສັດ ເປັນວິສາຫະກິດອັນດຽວເທົ່ານັ້ນ ທີ່ປະກອບດ້ວຍຫນ່ວຍການຜະລິດ ຫລາຍໆຫນ່ວຍເຂົ້າກັນ. ໃນດຳລັດເພິ່ນໄດ້ກຳນົດສິດເສລີພາບ ອັນກ້ວາງຂວາງແກ່ສະຫະບໍລິສັດ ໃນການຜະລິດ ແລະການຂາຍຜະລິດຕະພັນ ຂອງຕົນຕາມລາຄາທ້ອງຕະຫລາດ ບົນສັນຍາທີ່ເຊັນກັນກັບຜູ້ຊື້. "ການຂາຍແບບມີໃບສັ່ງ" ຜະລິດຕະພັນຂອງສະຫະບໍລິສັດນັ້ນ ເພິ່ນບໍ່ຖືວ່າ ມີຄວາມຈຳເປັນ, ແຕ່ຫາກວ່າ ຜະລິດຕະພັນທີ່ຜະລິດອອກນັ້ນ ຕ້ອງໃຫ້ມີລາຄາທີ່ຕ່ຳກວ່າລາຄາຢູ່ທ້ອງຕະຫລາດສົມໃສ່ກັບກຳໄລສະເລັ່ຽ,ໃຫ້ສອດຄ່ອງກັບສັນຍາທີ່ເຊັນກັບອົງການຂອງລັດ ຢ່າງແນ່ນອນ. ໃນກໍລະນີມີການລະເມີດສັນຍາ ນັ້ນສະຫະບໍລິສັດ ມີສິດປະຕິເສດສັນຍາດັ່ງກ່າວ.

ໃນດຳລັດດັ່ງກ່າວ ມີການຜູກມັດສະຫະບໍລິສັດ ຈຳຕ້ອງໃຫ້ໂອກາດແກ່ອົງການຂອງລັດ ແລະສະຫະກອນ, ໄດ້ມີໂອກາດນຳເອົາການປ່ຽນແປງອັນສຳຄັນ ກ່ຽວກັບສິດນຳໃຊ້ເງິນທຶນທີ່

ກຳນົດໄວ້ໃນກົດລະບຽບ, ກຳນົດຂອບເຂດຂອງທຶນຄົງທີ່ ແລະ ທຶນຫມູນວຽນຂອງສະຫະບໍລິສັດ. ລັດບໍ່ອະນຸຍາດໃຫ້ສະຫະບໍລິສັດ ໃຊ້ທຶນຄົງທີ່ຂອງຕົນ ເຂົ້າໃນການຫມູນວຽນຂອງ ຕະຫລາດ. ໃນກໍລະນີມີການໃຊ້ທົດແທນຫນີ້ສິນ ຂອງສະຫະບໍລິ-ສັດນັ້ນ ຄູ່ສັນຍາຂອງສະຫະບໍລິສັດ ມີສິດພຽງແຕ່ຄິດໄລ່ ຕໍ່ທຶນຫມູນວຽນເທົ່ານັ້ນ, ແລະໃນກໍລະນີພິເສດເທົ່ານັ້ນ, ເມື່ອຫາກມີມະຕິຂອງ ສະພາເສດຖະກິດແຫ່ງຊາດສູງສຸດ, ສະຫະບໍລິສັດຈຶ່ງສາມາດໃຊ້ທຶນຄົງທີ່ຂອງເຂົາ ເຂົ້າໃນການໃຊ້ຫນີ້ສິນ ດັ່ງກ່າວ. ເພິ່ນຍຶດຖືການຄຸ້ມຄອງ ຂອງສະຫະບໍລິສັດ ແບບເປັນຄະນະອຳນວຍການ ແລະຄະນະກຳມາທິການກວດກາບັນຊີ , ແລະແຕ່ຢ່າງໃດກໍດີ ການຄຸ້ມຄອງດັ່ງກ່າວ ກໍຄ່ອຍໆກ້າວໄປສູ່ການຄຸ້ມຄອງແບບລະບົບຫົວຫນ້າ ເທື່ອລະກ້າວ.

ໃນດຳລັດສະບັບວັນທີ ໑໗ ກໍລະກົດ ໑໙໒໓ ນັ້ນ ເພິ່ນໄດ້ແບ່ງຂອບເຂດຫນ້າທີ່ ລະຫວ່າງອົງການສູນກາງ ກັບອົງການທ້ອງຖິ່ນ ໃນການພົວພັນກັບສະຫະບໍລິສັດ ທີ່ມີຄວາມ ຫມາຍທ້ອງຖິ່ນ. ສະພາເສດຖະກິດແຫ່ງຊາດສູງສຸດໄດ້ແບ່ງສິດຫນ້າທີ່ ການຄຸ້ມຄອງສະຫະບໍລິສັດທ້ອງຖິ່ນດັ່ງກ່າວຂອງຕົນຈຳນວນຫນຶ່ງ ໃຫ້ແກ່ອົງການທ້ອງຖິ່ນ ແລະຮັກສາສິດຫນ້າທີ່ຊີ້ນຳລວມ ແລະ ກວດກາໄວ້.

ຖ້າສົມທຽບໃສ່ສະຫະບໍລິສັດສູນກາງແລ້ວ ເພິ່ນຈຳແນກໄດ້ວ່າ ສະຫະບໍລິສັດທ້ອງຖິ່ນ ບໍ່ມີຄວາມເປັນເອກະລາດ ອັນກ້ວາງຂວາງເທົ່າກັບ ສະຫະບໍລິສັດສູນກາງ. ການຄຸ້ມຄອງດັ່ງ

ກ່າວ ກໍໄດ້ໃຊ້ແບບກະທັດລັດທີ່ສຸດເຊັ່ນ: ການດຳເນີນການບໍລິຫານແບບລະບົບຫົວໜ້າ; ຄະນະກຳມາທິການກວດສອບບັນຊີກໍໄດ້ແຕ່ງຕັ້ງຂຶ້ນ ເພື່ອປະຕິບັດໜ້າທີ່ ກັບທຸກໆສະຫະບໍລິສັດຢູ່ໃນແຂວງ; ການລົງທຶນ ແມ່ນໄດ້ຂຶ້ນກັບງົບປະມານ ຂອງທ້ອງຖິ່ນ ແລະສ່ວນກຳໄລຂອງສະຫະບໍລິສັດດັ່ງກ່າວນັ້ນ ກໍຈຳຕ້ອງຖອກເຂົ້າໄວ້ໃນຄັງ ຂອງງົບປະມານທ້ອງຖິ່ນ.

ໃນເວລາທີ່ມີການສ້າງຕັ້ງ ສະຫະພາບ ສາທາລະນະລັດ-ສັງຄົມນິຍົມໂຊວຽດ ແລະມີການຈັດຕັ້ງ ສະພາເສດຖະກິດ - ແຫ່ງຊາດສູງສຸດ ຢູ່ຕາມສາທາລະນະລັດ ສະຫະພາບແລະລັດປົກຄອງຕົນເອງນັ້ນ ກົດລະບຽບການຈັດຕັ້ງສະຫະບໍລິສັດ ໄດ້ມີການປ່ຽນແປງ. ສະຫະບໍລິສັດຕ່າງໆ ໄດ້ແຍກອອກເປັນສະຫະບໍລິສັດສະຫະພາບ, ສະຫະບໍລິສັດ ສາທາລະນະລັດ ແລະສະຫະບໍລິສັດທ້ອງຖິ່ນ. ສະຫະບໍລິສັດທີ່ຂຶ້ນກັບ ສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ. ໄດ້ແກ່ສະຫະບໍລິສັດອຸດສາຫະກຳໜັກ (ເຊັ່ນ ອຸດສາຫະກຳຖ່ານຫີນ, ອຸດສາຫະກຳນ້ຳມັນເຊື້ອເພີງ, ອຸດສາຫະກຳໂລຫະ ແລະອື່ນໆ...). ສ່ວນສະຫະບໍລິສັດ ທີ່ຂຶ້ນກັບສາທາລະນະລັດນັ້ນ ໄດ້ແກ່ສະຫະບໍລິສັດອຸດສາຫະກຳເບົາ ແລະອຸດສາຫະກຳສະບຽງອາຫານ-(ເຊັ່ນ: ອຸດສາຫະກຳໜັງ, ອຸດສາຫະກຳຢາດູດ,ອຸດສາຫະກຳສະບຽງອາຫານ ແລະອື່ນໆ...), ອົງການທ້ອງຖິ່ນ ໄດ້ສຸມຄວາມພະຍາຍາມຂອງຕົນ ຕໍ່ການຈັດຕັ້ງຄຸ້ມຄອງ ແລະບໍລິຫານວິສາຫະກິດ ອຸດສາຫະກຳທ້ອງຖິ່ນ.

ເມື່ອເຖິງຕົ້ນປີ ໑໙໒໔ ສະຫະບໍລິສັດຈຳນວນຫລວງຫລາຍໄດ້ມີກົດລະບຽບການຂອງຕົນ. ສະຫະບໍລິສັດດັ່ງກ່າວ ໄດ້ດຳເນີນກິດຈະການຂອງຕົນ ເປັນໜ່ວຍເອກະລາດ ທີ່ຊອບດ້ວຍກົດໝາຍ.

ສະຫະບໍລິສັດໃນໄລຍະການດັດສ້າງ ອຸດສາຫະກຳ

ໂດຍອີງໃສ່ພື້ນຖານການເຕົ້າໂຮມການຜະລິດແລະການສືບຕໍ່ການຂະຫຍາຍ ບໍລິມາດວຽກງານ ຂອງວິສາຫະກິດນັ້ນ ຜະລິດຕະພັນທີ່ຜະລິດອອກ ໂດຍສະຫະບໍລິສັດໄດ້ເພີ່ມຂຶ້ນ. ໃນໄລຍະດັ່ງກ່າວ ເພິ່ນບໍ່ພຽງແຕ່ໄດ້ຟື້ນຟູອຸດສາຫະກຳເທົ່ານັ້ນ ແຕ່ຫາກຍັງໄດ້ກໍ່ສ້າງໂຮງຈັກໂຮງງານໃໝ່ຂຶ້ນອີກ.

ໃນດ້ານການວາງແຜນນັ້ນ ເພິ່ນໄດ້ກ້າວເຂົ້າສູ່ ການຂຶ້ນແຜນກໍ່ສ້າງອຸດສາຫະກຳລວມ, ຊຶ່ງໃນນັ້ນ ກວມລວມທັງໂຄງການເຕັກນິກ, ໂຄງການເສດຖະກິດ ແລະ ໂຄງການການເງິນ. ເຖິງວ່າຈະເຂົ້າສູ່ທ້າຍໄລຍະຂອງການຟື້ນຟູແລ້ວ ກໍຕາມ ແຕ່ບັນຫາການຂາດແຄນຂອງສິນຄ້າ ກໍຍັງບໍ່ທັນແກ້ໄຂໄດ້, ແຕ່ວ່າ ເພິ່ນບໍ່ອາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຕະຫລາດ ໂດຍການເພີ່ມແຕ່ບໍລິມາດຂອງສິນຄ້າຂຶ້ນຕໍ່ໄປອີກບໍ່ໄດ້ເທົ່ານັ້ນ, ແຕ່ມັນຍັງຮຽກຮ້ອງໃຫ້ມີ ຄຸນນະພາບອັນແນ່ນອນຂອງສິນຄ້າ, ການເລືອກຊະນິດສິນຄ້າ ແລະໃຫ້ມີລາຄາທີ່ເໝາະສົມອີກດ້ວຍ.

ການຂ້າມຜ່ານໄປສູ່ ການດັດສ້າງຊຸດສາຫະກຳນັ້ນ ມັນມີຄວາມຈຳເປັນ ຕ້ອງມີແຜນການໄລຍະຍາວ ໃນການກໍ່ສ້າງແລະດັດແປງບັນດາໂຮງຈັກໂຮງງານເກົ່າແກ່ນັ້ນ. ໃນວຽກງານການຄຸ້ມຄອງນັ້ນ ມັນໝາຍເຖິງການເນັ້ນໜັກ ໃສ່ໜ້າທີ່ວາງແຜນແລະຈັດວາງຊຸດສາຫະກຳ ແລະບົດບາດ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ. ໃນການພົວພັນກັບຊຸດສາຫະກຳທັງໝົດ, ຈັດວາງການເຄື່ອນໄຫວ ທີ່ເໝາະສົມໃນຂົງເຂດການຄຸ້ມຄອງສະຫະບໍລິສັດ ທີ່ເປັນຂອງສະຫະພາບທັງມວນ, ຂອງສາທາລະນະລັດ ແລະ ຂອງທ້ອງຖິ່ນ. ເນື່ອງຈາກມີປັດໄຈຫລາຍຢ່າງທີ່ເກີດຂຶ້ນແຕ່ປີ ໑໙໘໓ ຫາ ປີ ໑໙໘໕ ນັ້ນ ການລວມສູນໜ້າທີ່ບໍລິຫານ ໃນຂົງເຂດວຽກງານຄຸ້ມຄອງນັ້ນ ມັນໄດ້ກາຍເປັນລະບົບທີ່ບໍ່ຈຳເປັນ.

ການພະລາທິການ ແລະການຊື້ຂາຍຜະລິດຕະພັນຂອງໂຮງຈັກໂຮງງານ ໄດ້ມີການລວມສູນຢ່າງເຄັ່ງຄັດ. ເພິ່ນໄດ້ລວມສູນການສັ່ງຈອງການຜະລິດ ເຂົ້າກຳມືຂອງສະຫະບໍລິສັດ ແຕ່ຜູ້ດຽວ, ຊຶ່ງການຕິດຕໍ່ທາງດ້ານຈົດໝາຍ ແລະການສະໝຸດ-ບັນຊີ ໃນວຽກງານດັ່ງກ່າວ ລະຫວ່າງສະຫະບໍລິສັດແລະວິສາຫະກິດຕ່າງໆ ຈຶ່ງໄດ້ເຮັດໃຫ້ການສັ່ງຈອງດັ່ງກ່າວ ຊັກຊ້າໄປ ແລະໄດ້ເຮັດໃຫ້ອັດຕາການໝູນວຽນ ຂອງທຶນໝູນວຽນ ລົດນ້ອຍຖອຍລົງ.

ໃນສະພາບທີ່ເພິ່ນນຳໃຊ້ວິທີການຈັດວາງ ຕະຫລາດຊຸດສາຫະກຳ ຢ່າງກວ້າງຂວາງຢູ່ນັ້ນ, ໂດຍສະເພາະທີ່ເພິ່ນນຳໃຊ້

ລະບົບສະມາຄົມສະຫະບໍລິສັດນັ້ນ, ຫນ້າທີ່ຕົ້ນຕໍແມ່ນການປະສົມປະສານ ໃຫ້ຖືກກັບສະພາບຕົວຈິງ ວິທີຊີ້ນຳການຄຸ້ມຄອງ ກັບວິທີການຈັດວາງຕະຫລາດ. ການປະຕິບັດ ຄຳຮຽກຮ້ອງຕ້ອງການດັ່ງກ່າວນັ້ນ ໄດ້ເຮັດໃຫ້ຜົນປະໂຫຍດຂອງຫນ່ວຍຮວມຫມູ່ (ສະຫະບໍລິສັດ ຫລືວິສາຫະກິດ) ສູງຂຶ້ນໃນການດຳເນີນວຽກງານຂອງຕົນ, ທີ່ນຳເອົາຄວາມເປັນເອກະລາດ ອັນແນ່ນອນຂອງວິສາຫະກິດ ແລະເຮັດໃຫ້ສາຍການພົວພັນ ຊຸດສາຫະກຳກັບກົງຈັກການຄ້າດີຂຶ້ນ.

ການເຮັດໃຫ້ສາຍພົວພັນ ລະຫວ່າງສະຫະບໍລິສັດຕ່າງໆກັບວິສາຫະກິດ, ແລະກໍ່ເຊັ່ນດຽວກັນ ລະຫວ່າງສະຫະບໍລິສັດກັບສະມາຄົມສະຫະບໍລິສັດ ແລະກົມໃຫຍ່ເປັນປົກກະຕິນັ້ນ ມັນມີຄວາມຫມາຍອັນຍິ່ງໃຫຍ່ທີ່ສຸດ ຕໍ່ການປັບປຸງວິທີການຄຸ້ມຄອງ. ບັນດາຄະນະນຳພາສະຫະບໍລິສັດຕ່າງໆ ໄດ້ຮຽກຮ້ອງເອົາສິດການຄຸ້ມຄອງ ຊຸດສາຫະກຳ ຢ່າງກ້ວາງຂວາງ ແລະໄດ້ຕ້ານກັບການຊຸ້ມຊູແບບແປະໆບາງໆ ຈາກກົມໃຫຍ່ ແລະ ອົງການເສດຖະກິດ ຂັ້ນສູງອື່ນໆ. ເພື່ອແກ້ໄຂບັນຫາດັ່ງກ່າວເພິ່ນໄດ້ນຳໃຊ້ມາດຕະການເດັດຂາດ, ຊຶ່ງໄດ້ແກ່ການ ປ່ຽນແປງໂຄງຮ່າງການຈັດຕັ້ງ ຂອງສະຫະບໍລິສັດ. ດ້ວຍການແກ້ໄຂດັ່ງກ່າວ ການກໍ່ສ້າງຊຸດສາຫະກຳໃຫມ່ ກໍໄດ້ລິເລີ່ມຂຶ້ນແລະເພິ່ນໄດ້ດຳເນີນວຽກງານປົວແປງເສດຖະກິດຂະຫນາດໃຫຍ່ ຫລືໂດຍວິທີການຕໍ່ເນື່ອງໄປດັ່ງກ່າວ ເພິ່ນກໍໄດ້ໃຫ້ສິດ ແກ່ສະຫະບໍລິສັດ ຈັດຕັ້ງກອງກໍ່ສ້າງ ຂອງຕົນເອງຂຶ້ນໄດ້.

ໜ້າທີ່ໃໝ່ຂອງອຸດສາຫະກຳ (ເຊັ່ນ: ການດັດສ້າງເສດຖະກິດ, ການຍົກຄຸນນະພາບຂອງຜະລິດຕະພັນໃຫ້ດີຂຶ້ນ, ການລຶດລາຄາຕົ້ນທຶນ ຂອງຜະລິດຕະພັນ) ໄດ້ຮຽກຮ້ອງໃຫ້ມີການປ່ຽນແປງອັນສຳຄັນ ຂອງສາຍການພົວພັນ ລະຫວ່າງອົງການຄຸ້ມຄອງ ກັບຂະແໜງແຕກຕ່າງກັນ (ເຊັ່ນ: ສະຫະບໍລິສັດ, ວິສາຫະກິດ). ລະບົບຄຸ້ມຄອງໃນສະພາບໃໝ່ນັ້ນຕ້ອງໄດ້ຮັບປະກັນ ໃຫ້ແກ່ຂະແໜງອຸດສາຫະກຳດັ່ງກ່າວໄດ້ຊົມໃຊ້ຫົວຄິດປະດິດສ້າງຂອງຕົນ. ການພົວພັນລະຫວ່າງ ຂະແໜງອຸດສາຫະກຳທັງໝົດ ຕ້ອງສ້າງບົນພື້ນຖານ ຄວາມໄວ້ເນື້ອເຊື່ອໃຈແລະຄວາມຮັບຜິດຊອບແລະການຈຳກັດຂອບເຂດອຳນາດຢ່າງເດັດຂາດ.

ເມື່ອເພິ່ນໄດ້ຊີ້ແຈງທິດທາງການແກ້ໄຂ ບັນຫາດັ່ງກ່າວນັ້ນແລ້ວ ກອງປະຊຸມສະໄໝສາມັນ ຄັ້ງທີໜຶ່ງຂອງສະພາ ເສດຖະກິດແຫ່ງຊາດສູງສຸດ ສ.ສ.ສ.ຊ. ໄດ້ຍ້ຳໄວ້ວ່າ ໃນເມື່ອຍັງຮັກສາອົງການເອກະລາດທາງດ້ານກົດໝາຍນັ້ນ ສະຫະບໍລິສັດ ຕ້ອງແບ່ງອຳນາດພິເສດຂອງຕົນບາງສ່ວນ ໃຫ້ແກ່ວິສາຫະກິດ. ສິດພິເສດເຫລົ່ານັ້ນ ຕ້ອງຈັດວາງດ້ວຍການເຊັນສັນຍາ ແລະການເຮັດໃບສັ່ງການຜະລິດ. ໃນເອກະສານດັ່ງກ່າວເພິ່ນໄດ້ບົ່ງແຈ້ງເຖິງວຽກງານການຜະລິດ, ກຳນົດສິດຂອງສອງກ້ຳສອງຝ່າຍ ໃນອົງເຂດການພົວພັນ ດ້ານການເງິນ.

ການຈັດສາຍການພົວພັນ ລະຫວ່າງສະຫະບໍລິສັດກັບສາຂາຂອງລະບົບສະພາເສດຖະກິດແຫ່ງຊາດສູງສຸດອື່ນໆ ໃຫ້ເຂົ້າ

ແກບເຂົ້າເກຍກັນນັ້ນມັນໄດ້ເຮັດໃຫ້ເກີດມີຄວາມຈຳເປັນຕ້ອງປັບປຸງການພົວພັນການຜະລິດ ແລະເສດຖະກິດໃຫ້ດີຂຶ້ນ. ໃນເອກະສານຂອງກອງປະຊຸມສາມັນ ຂອງສະພາເສດຖະກິດ - ແຫ່ງຊາດສູງສຸດ ຄັ້ງທຳອິດ ເພິ່ນໄດ້ຢ້ຳໄວ້ວ່າ ສະຫະບໍລິສັດຍັງເປັນສາຂາພື້ນຖານ ຂອງລະບົບຄຸ້ມຄອງອຸດສາຫະກຳ ຢູ່. ສະພາເສດຖະກິດແຫ່ງຊາດສູງສຸດ ດຳເນີນການຊີ້ນຳສະຫະບໍລິສັດ ໃນການເຮັດແຜນການ ແລະໃນການບໍລິຫານ,ທີ່ໄດ້ສະແດງອອກຢູ່ໃນການຂຶ້ນແຜນ,ການອະນຸມັດແຜນການແລະການກວດກາ ການປະຕິບັດແຜນການ, ການຕີລາຄາວຽກງານ - ຂອງສະຫະບໍລິສັດໂດຍອີງໃສ່ໃບລາຍງານປະຈຳປີມາເປັນພື້ນຖານ, ການຕິດຕາມວຽກງານຂອງສະຫະບໍລິສັດ ແລະສຶກສາສະມຸດບັນຊີບໍລິຫານ ຂອງສະຫະບໍລິສັດ. ການຊີ້ນຳວຽກງານຂອງສະຫະບໍລິສັດນັ້ນ ໄດ້ແກ່ການຈັດວາງຊັບສິນຕົ້ນທຶນຂອງສະຫະບໍລິສັດ, ແຕ່ງຕັ້ງຄະນະອຳນວຍການ ຂອງສະຫະບໍລິສັດ, ໝາຍຄວາມວ່າ ໄດ້ແກ່ການຊີ້ນຳລວມ. ສ່ວນການເຂົ້າ ໄປຫຍຸ້ງກ່ຽວ ໃນວຽກງານການຈັດຕັ້ງໂດຍກົງຂອງສະຫະບໍລິສັດນັ້ນ ເປັນສິ່ງທີ່ຈຳເປັນ ກໍ່ຕໍ່ເມື່ອໃນກໍລະນີ ທີ່ສະຫະບໍລິສັດ- ໃຊ້ການເຄື່ອນໄຫວຂອງຕົນນັ້ນ ໄປແຕະຕ້ອງເຖິງ ຜົນປະໂຫຍດຂອງລັດ (ຕົວຢ່າງ: ສະຫະບໍລິສັດໄດ້ມີທ່າອ່ຽງແກ້ໄຂຄວາມຫຍຸ້ງຍາກດ້ານການເງິນຂອງຕົນ ໂດຍອີງໃສ່ການຂາຍຊັບສິນຕົ້ນທຶນ ຫລືຂາຍຜະລິດຕະພັນ ໃຫ້ແກ່ນາຍທຶນເອກະເທດໃນລາຄາທີ່ມີກຳໄລສູງ ທີ່ສ້າງຄວາມເສຍຫາຍ ໃຫ້ແກ່ຜົນປະ

ໂຫຍດຂອງລັດ).

ໃນໄລຍະນັ້ນ ເພິ່ນຖືວ່າ ສະຫະບໍລິສັດແມ່ນວິສາຫະກິດຊຸດ ສາຫະກຳລັດທີ່ຈັດຕັ້ງຂຶ້ນ ບົນພື້ນຖານຂອງກົດລະບຽບການຈັດ ຕັ້ງພິເສດ, ໃນຖານະທີ່ເປັນຫນ່ວຍເສດຖະກິດ ເອກະລາດ ໂດຍສິດຂອງນຸກຄົນ ທີ່ຮັບຮູ້ດ້ວຍກົດຫມາຍ, ທີ່ຕັ້ງຢູ່ໃນສະຖາ ບັນບ່ອນຫນຶ່ງ ແລະທີ່ເຄື່ອນໄຫວໃນຫລັກການການຄິດໄລ່ການ ຄ້າ ທີ່ສອດຄ່ອງກັບແຜນການທີ່ວາງອອກ ໂດຍການໃຊ້ ທຶນ ສ່ວນຫນຶ່ງ ທີ່ແຍກອອກບໍ່ໄດ້.

ອີກຂໍ້ຫນຶ່ງໃນການກຳນົດຫນ້າທີ່ ຂອງສະຫະບໍລິສັດນັ້ນແມ່ນ ນຳເອົາຫລັກການຄິດໄລ່ການຄ້າ ເຂົ້າຢູ່ໃນແຜນການ.ສິດໃນ ການຈັດຕັ້ງສະຫະບໍລິສັດ ໄດ້ແກ່ບັນດາອົງການຂອງສະພາ - ເສດຖະກິດແຫ່ງຊາດສູງສຸດ ສ.ສ.ສ.ຊ.,ສະຫະພາບສາທາ ລະນະລັດ ແລະອົງການທ້ອງຖິ່ນຂອງຕົນ.

ເພິ່ນໄດ້ເລີ່ມລົງມືປະຕິບັດ ການຍົກເລີກການລວມສູນ ບັນ ດາຫນ້າທີ່ບໍລິຫານເທື່ອລະກ້າວ. ແຕ່ກ່ອນນັ້ນ ການນຳສິ່ງ ເຄື່ອງມື, ການມ້າງຫລືການຂາຍອຸປະກອນອັນເກົ່າແກ່,ການ ຂາຍຊັບສົມບັດທີ່ບໍ່ຕ້ອງການນັ້ນ ຕ້ອງໄດ້ຮັບອະນຸຍາດເປັນລຳ ດັບ ຈາກສະພາເສດຖະກິດແຫ່ງຊາດສູງສຸດ ຫລືຄະນະກຳມາ ທິການແຮງງານ ແລະປ້ອງກັນຊາດ; ແຕ່ໃນກົດລະບຽບໃຫມ່ ນີ້ ເພິ່ນສາມາດແກ້ໄຂບັນຫາດັ່ງກ່າວນີ້ ພາຍໃນສະຫະບໍລິສັດ ເອງ. ຖ້າຫາກວ່າ, ດ້ວຍເຫດຜົນອັນໃດອັນຫນຶ່ງ ໃນໄລຍະ ການເລີ່ມຕົ້ນຂອງປີນັ້ນ, ແຜນການການຜະລິດແລະການເງິນ

ອຸດສາຫະກຳຍັງບໍ່ໄດ້ຮັບອະນຸມັດກໍດີ, ໃນກໍລະນີດັ່ງກ່າວ ເພິ່ນກໍໄດ້ອະນຸຍາດໃຫ້ສະຫະບໍລິສັດ ດຳເນີນວຽກງານ ຕາມໂຄງການທີ່ວາງໄວ້ແລ້ວນັ້ນ ຈົນກ່ວາແຜນການດັ່ງກ່າວ ຈະໄດ້ຮັບການອະນຸມັດ.

ເພິ່ນໄດ້ມີການປ່ຽນແປງອັນໃຫຍ່ຫລວງ ໃນຂອບເຂດການຈັດຕັ້ງການເງິນ ຂອງສະຫະບໍລິສັດ. ການຕັດລາຍໄດ້ ເພື່ອເພີ່ມໃສ່ກອງທຶນ ຈັດຕັ້ງຂອງສະຫະບໍລິສັດນັ້ນ ເພິ່ນບໍ່ໄດ້ເອົາມາຈາກຈຳນວນກຳໄລທັງຫມົດ, ແຕ່ເພິ່ນໄດ້ຫັກຈາກກຳໄລທີ່ເສດເຫລືອ ຫລັງຈາກການເສຍຄ່າພາສີລາຍໄດ້ ໂດຍສອດຄ່ອງກັບເງື່ອນໄຂທ້ອງຖິ່ນແລ້ວນັ້ນ, ຊຶ່ງເພິ່ນໄດ້ປະຕິບັດກັນດັ່ງນີ້: ໑໐% ຂອງລາຍໄດ້ ຈະຕ້ອງຖອກເຂົ້າທະນາຄານສິນເຊື່ອ ໄລຍະຍາວ, ໔໕%- ຫັກໄວ້ເປັນທຶນພິເສດສຳລັບການຂະຫຍາຍໂຮງງານ ແລະອີກ ໔໐%- ສຳລັບ ເພີ່ມໃສ່ທຶນສຳລອງ. ການຫັກລາຍໄດ້ໄວ້ເປັນທຶນສຳລອງນັ້ນ ແມ່ນເພິ່ນແນໃສ່ທົດແທນຄ່າເສຍຫາຍ ຂອງສະຫະບໍລິສັດ ທີ່ອາດເກີດຂຶ້ນພາຍໃນປີດຽວນັ້ນ (ຈຳນວນດັ່ງກ່າວ ບໍ່ເປັນຈຳນວນ ຕາຍຕົວ).

ການວາງຫລັກການຄຸ້ມຄອງການຜະລິດ ຂອງວິສາຫະກິດທີ່ເປັນພາກສ່ວນ ຂອງສະຫະບໍລິສັດນັ້ນ ໄດ້ມີຄວາມຫມາຍ ອັນສຳຄັນຍິ່ງ. ສິດແລະອຳນາດຂອງຫົວຫນ້າ ສະຫະບໍລິສັດ ໄດ້ບົ່ງໄວ້ໃນໃບມອບຫມາຍ ແລະໃບສັ່ງຜະລິດ. ໃນເອກະສານດັ່ງກ່າວ ເພິ່ນໄດ້ກຳນົດບໍລິມາດ ແລະຂອບເຂດໄລຍະເວລາ

ການປະຕິບັດຫລ້ອນຫນ້າທີ່ດັ່ງກ່າວໂດຍໃຫ້ສອດຄ່ອງກັບແຜນ-ການຜະລິດ ແລະແຜນການເງິນປະຈໍາປີ ຂອງສະຫະບໍລິສັດແລະວິສາຫະກິດ. ກໍາໄລສ່ວນຫນຶ່ງທີ່ເປັນເງິນຄາດເຄື່ອນລະຫວ່າງການລາຍງານ ແລະການປະເມີນກໍາໄລໄວ້ແຕ່ກ່ອນນັ້ນເພິ່ນໄດ້ມອບໃຫ້ແກ່ຜູ້ອໍານວຍການວິສາຫະກິດ ເພື່ອນໍາໃຊ້ໃນຂອບເຂດອໍານາດ ທີ່ຄະນະບໍລິຫານຂອງສະຫະບໍລິສັດໄດ້ມອບໃຫ້ແກ່ຜູ້ອໍານວຍການວິສາຫະກິດນັ້ນ (ເຊັ່ນ ການເປີດບັນຊີຝາກເງິນ ຢູ່ທະນາຄານ, ສິດໃນການຮັບເອົາເງິນຊຸດຫນູນ, ການເຮັດສັນຍາແລະອື່ນໆ.). ທຸກການພົວພັນ ດ້ານບໍລິຫານຂອງສະຫະບໍລິສັດ ກັບຄະນະບໍລິຫານໂຮງງານ ໄດ້ຕັ້ງຂຶ້ນບົນພື້ນຖານຂອງແຜນການປະຈໍາປີ.

ເພິ່ນໄດ້ນໍາໃຊ້ຫລັກການກຸ້ມຕົນເອງ ດ້ານເສດຖະກິດເປັນບາດກ້າວທໍາອິດ. ມັນໄດ້ມີຫລັກການທີ່ເພິ່ນເອີ້ນກັນວ່າ "ຮູບການສື່ສານ" ຂອງຫລັກການກຸ້ມຕົນເອງ ດ້ານເສດຖະກິດ . ຄະນະບໍລິຫານສະຫະບໍລິສັດ ໄດ້ຕັ້ງສາຍພົວພັນໂດຍກົງ ລະຫວ່າງລາຄາຜະລິດຕະພັນ ທີ່ໄດ້ສົ່ງອອກຈາກໂຮງງານ ແລ້ວກັບເງິນທຶນທີ່ໄດ້ມອບໃຫ້ໂຮງງານ. ເງິນທຶນດັ່ງກ່າວ ບໍ່ແມ່ນໃຊ້ ສໍາລັບຈັບຈ່າຍໃນການຈັດຫາ ແຕ່ເພິ່ນໄດ້ໃຊ້ສໍາລັບການຈ່າຍຄ່າຜະລິດຕະພັນ ທີ່ເພິ່ນຫາກໍຂົນອອກຈາກໂຮງງານນັ້ນ. ເພິ່ນຊໍາລະບັນຊີກັນ ໂດຍລາຄາທີ່ຄິດໄລ່ໄວ້ແລ້ວນັ້ນ, ຊຶ່ງລາຄາດັ່ງກ່າວ ແມ່ນອີງໃສ່ລາຄາຕົ້ນທຶນທີ່ກະໄວ້ນັ້ນໂດຍການຫັກຄ່າຫລູ້ຍຫ້ຽນອອກ. ເພິ່ນໄດ້ມອບກໍາໄລແລະຄ່າຫລູ້ຍຫ້ຽນ ທີ່

ເພີ່ມກະໄວ້ໃນແຜນການນັ້ນ ໃຫ້ແກ່ສະຫະບໍລິສັດ,ແລ້ວສະຫະບໍລິສັດ ໄດ້ແຍກທຶນທີ່ຕ້ອງການ ສຳລັບການກໍ່ສ້າງໃຫຍ່ໃຫ້ແກ່ວິສາຫະກິດ ແລະພ້ອມທັງອະນຸມັດສິນເຊື່ອໃຫ້ເຂົາອີກດ້ວຍ . ພາຍຫລັງຕໍ່ມາ ການພົວພັນດ້ານຫລັກການກຸ້ມຕົນເອງ ດ້ານເສດຖະກິດນັ້ນ ກໍໄດ້ຖືກປັບປຸງເຊັ່ນ: ໂຮງງານໄດ້ຂາຍ ຜະລິດຕະພັນຂອງຕົນ ຕາມລາຄາຂາຍທີ່ອະນຸມັດ,ສ່ວນເງິນທີ່ໄດ້ຮັບຈາກການຂາຍຜະລິດຕະພັນດັ່ງກ່າວ ກໍໄດ້ຖອກເຂົ້າໃນບັນຊີຝາກເງິນຂອງໂຮງງານຢູ່ທະນາຄານ,ສະຫະບໍລິສັດໄດ້ເຮັດສັນຍາກ່ຽວກັບການພະລາທິການ,ສ່ວນໂຮງງານ ໄດ້ດຳເນີນກິດຈະການພະລາທິການໃນຂອບເຂດສັນຍາດັ່ງກ່າວ ແລະຊຳລະບັນຊີກັບສະມາຄົມສະຫະບໍລິສັດຢ່າງເປັນເອກະລາດ.

ພ້ອມກັບການຂະຫຍາຍຂອບເຂດ ການປະຕິບັດຫລັກການ-ກຸ້ມຕົນເອງ ທາງດ້ານເສດຖະກິດນັ້ນ, ສະຫະບໍລິສັດໄດ້ແຈກຢາຍເງິນທຶນຄົງທີ່ ແລະເງິນທຶນຫມູນວຽນ ໃຫ້ແກ່ບັນດາໂຮງງານ ຂອງຕົນ.

ໃນພາກປະຕິບັດຕົວຈິງ ໃນການຫັນໂຮງງານເຂົ້າໃນຫລັກການກຸ້ມຕົນເອງ ທາງດ້ານເສດຖະກິດນັ້ນ ເພິ່ນກໍໄດ້ນຳໃຊ້ຢູ່ໃນຊຸດສາຫະກຳຂະຫນາດໃຫຍ່ ເຊັ່ນ ສະຫະບໍລິສັດຫຼອມເຫຼັກອູລານ ທີ່ເປັນສະຫະບໍລິສັດຂະຫນາດໃຫຍ່ທີ່ສຸດ.ແຕ່ເຖິງຢ່າງໃດກໍດີ ການນຳໃຊ້ດັ່ງກ່າວ ກໍມີຈຸດພິເສດຂອງມັນ.ສະຫະບໍລິສັດລົງທຶນໃຫ້ແກ່ບັນດາໂຮງງານຂອງຕົນທີ່ສອດຄ່ອງກັບ ການຜະລິດສິນຄ້າ ສົ່ງອອກຈາກໂຮງງານເທົ່ານັ້ນ,ເພາະວ່າການ

ເພີ່ມເຕີມທຶນໜູນວຽນນັ້ນແມ່ນເພິ່ນໄດ້ເຮັດເປັນ "ແຜນການ" ຂອງປີຕໍ່ໜ້າ, ແຕ່ວ່າການປະຕິບັດດັ່ງກ່າວນັ້ນ ໄດ້ເຮັດໃຫ້ຫລັກການພື້ນຖານຂອງການກຸ້ມຕົນເອງ ດ້ານເສດຖະກິດ ຈຳນວນໜຶ່ງຄາດເຄື່ອນໄປເຊັ່ນ: ການຊຳລະໜີ້ສິນດ້ວຍ ຕົນເອງ.

ການຂ້າມຜ່ານໄປສູ່ຫລັກການກຸ້ມຕົນເອງ ດ້ານເສດຖະກິດນັ້ນ ບໍ່ໄດ້ໝາຍເຖິງພຽງແຕ່ການປ່ຽນແປງໃນວິທີການ ບໍລິຫານເສດຖະກິດເທົ່ານັ້ນ, ແຕ່ຫາກວ່າ ວິສາຫະກິດຈະຕ້ອງ-ໄດ້ຮັບສິດຄຸ້ມຄອງເສດຖະກິດ ທີ່ເໝາະສົມເຊັ່ນດຽວກັນ. ແຕ່ເຖິງຢ່າງໃດກໍດີ ກົດລະບຽບການຈັດຕັ້ງ ສະບັບລົງວັນທີ ໔໘ ເດືອນມິຖຸນາ ປີ ໑໙໘໗ ນັ້ນ ໄດ້ຮັບຮູ້ແຕ່ສະຫະບໍລິສັດ ເທົ່ານັ້ນ ທີ່ເປັນຕົວແທນທີ່ຖືກຕ້ອງຕາມກົດໝາຍ. ໃນພາກປະຕິບັດນັ້ນ ໝາຍເຖິງວ່າ ການນຳໃຊ້ບັນດາໂຮງຈັກໂຮງງານເຂົ້າໃນຫລັກການກຸ້ມຕົນເອງ ດ້ານເສດຖະກິດນັ້ນ ບໍ່ໄດ້ນຳການປ່ຽນແປງທ່າທາງພື້ນຖານ ຂອງໂຮງຈັກໂຮງງານໃນເງິນທຶນໜູນວຽນທັງໝົດຂອງຊາດ. ການນຳໂຮງຈັກໂຮງງານເຂົ້າໃນຫລັກການກຸ້ມຕົນເອງ ດ້ານເສດຖະກິດນັ້ນມັນໄດ້ສົ່ງຜົນສະທ້ອນ ໃສ່ສາຍ ພົວພັນດ້ານເສດຖະກິດຂອງຕົນ ກັບສະຫະບໍລິສັດແລະໃສ່ການຈັດຕັ້ງການເຄື່ອນໄຫວພາຍໃນ ຂອງຕົນດ້ານການຜະລິດ, ພະລາທິການ ການຊື້ຂາຍ ແລະດ້ານການເງິນ, ແຕ່ບໍ່ໄດ້ມີຜົນສະທ້ອນ ຕໍ່ສາຍການພົວພັນດ້ານກົດໝາຍ ກັບບັນດາອົງການອື່ນໆ ທີ່ມາໂຮມຢູ່ໃນ ທຶນໜູນວຽນ

ຂອງຊາດ ແຕ່ຢ່າງໃດເລີຍ.

ວິສາຫະກິດໄດ້ຮັບສິດດັ່ງກ່າວໃນໄລຍະການປັບປຸງການຈັດຕັ້ງຄຸ້ມຄອງອຸດສາຫະກຳ ໃນຂັ້ນຕໍ່ໄປເທົ່ານັ້ນ, ໃນເມື່ອເພິ່ນໄດ້ອອກມະຕິຂອງສູນກາງພັກກອມມູນິດ ທົ່ວສະຫະພາບ(ໂບນເຊວິກ) ສະບັບລົງວັນທີ ໕ ທັນວາ ປີ ໑໙໔໙. ໃນມະຕິດັ່ງກ່າວນັ້ນ ສະຫະບໍລິສັດຍັງເປັນອົງການຊີ້ນຳ ວິສາຫະກິດຢູ່. ແຕ່ວ່າ ໃນໜ້າທີ່ຂອງສະຫະບໍລິສັດນັ້ນ ກໍໄດ້ມີການປ່ຽນແປງບໍ່ນ້ອຍ. ສະຫະບໍລິສັດ ມີໜ້າທີ່ຕ້ອງສຸມຄວາມພະຍາຍາມຂອງຕົນ ໃສ່ບັນດາການຊີ້ນຳດ້ານເຕັກນິກ,ການຈັດວາງການປັບປຸງການຜະລິດ ແລະການດັດສ້າງ. ສິດຂອງເຂົາກ່ຽວກັບການຈັດເສດຖະກິດ ໃຫ້ເປັນເອກະລາດນັ້ນ ໄດ້ຖືກຈຳກັດ. ສິດຂອງສະຫະບໍລິສັດ ສ່ວນໜຶ່ງໄດ້ມອບໃຫ້ແກ່ວິສາຫະກິດ ທີ່ກຸ້ມຕົນເອງ ດ້ານເສດຖະກິດນັ້ນ ແລະອີກສ່ວນໜຶ່ງ ແມ່ນໄດ້ມອບໃຫ້ແກ່ກຸ່ມຂະແໜງອຸດສາຫະກຳ ທີ່ເພິ່ນຈັດຕັ້ງຂຶ້ນ ແລ້ວນັ້ນ. ໜ້າທີ່ຊື້ຂາຍແລະພະລາທິການ ຂອງສະຫະບໍລິສັດກໍໄດ້ຖືກແຍກອອກ. ວິວັດທະນາການ ຂອງສະຫະ ບໍລິສັດ ໄດ້ພົວພັນຢ່າງໃກ້ສິດ ກັບການປ່ຽນແປງທັງໝົດດ້ານຄຸນນະພາບກໍຄືດ້ານປະລິມານທີ່ເກີດຂຶ້ນ ໃນດ້ານອຸດສາຫະກຳ ຂອງທ້າຍທົດສະວັດທີສອງ.

ໃນການຈັດຕັ້ງວາງແຜນການ ໄດ້ມີການປ່ຽນແປງ ຢ່າງໃຫຍ່ຫລວງ. ຖ້າຫາກວ່າ ໃນປີ ໑໙໔໕ ຫາປີ ໑໙໔໖ ເພິ່ນໄດ້ກຳກັບການວາງແຜນການການຜະລິດ, ການຊື້ຂາຍ,ການ

ເງິນ, ແຮງງານ, ລາຄາຕົ້ນທຶນ, ການກໍ່ສ້າງ, ແຕ່ເມື່ອເຖິງຕົ້ນທົດສະວັດທີສາມ ເພິ່ນໄດ້ວາງແຜນມາດຕະການ ການປັບປຸງການຜະລິດ, ວຽກງານຄົ້ນຄ້ວາວິທະຍາສາດ ແລະອື່ນໆອີກ.

ເນື່ອງຈາກມີການຫັນປ່ຽນໄປສູ່ການກຸ້ມຕົນເອງ ດ້ານເສດຖະກິດນັ້ນ ວິສາຫະກິດ ຈຶ່ງກາຍເປັນອົງການຮັບຜິດຊອບ ໃນການປະຕິບັດຫລ້ອນແຜນການ. ຫນ້າທີຂອງສະຫະບໍລິສັດເພື່ອຫຍຸ່ງກ່ຽວກັບກິດຈະການ ວິສາຫະກິດນັ້ນ ໄດ້ຖືກຈຳກັດ. ເພິ່ນໄດ້ເລີ່ມເຕົ້າໂຮມວິສາຫະກິດ ຂອງສະຫະບໍລິສັດ ຕາມຂະແຫນງວິຊາການເຂົ້າກັນ. ໃນສະຫະບໍລິສັດເພິ່ນໄດ້ຈັດຕັ້ງໃຫ້ເປັນ ໕ ພາກສ່ວນໃຫຍ່ດັ່ງນີ້: ວາງແຜນການຜະລິດ, ຈັດວາງການປັບປຸງການຜະລິດ ແລະການດັດສ້າງ, ແຮງງານແລະພະນັກງານ, ແລະຫມວດເອກະລາດຕ່າງຫາກຊຶ່ງມີຫນ້າທີ ກວດກາວຽກງານບໍລິຫານ, ການຈັດວາງການຄຸ້ມຄອງໃຫ້ເຫມາະ, ການບໍລິຫານ ແລະຕຸລາການ. ໃນຕົວຈິງ ສະຫະບໍລິສັດ ໄດ້ກາຍເປັນຂອດລະຫວ່າງກາງ ຂອງກຸ່ມອຸດສາຫະກຳກັບວິສາຫະກິດ. ສະຫະບໍລິສັດ ທີໄດ້ເປັນຮູບການຈັດຕັ້ງ ຄຸ້ມຄອງອຸດສາຫະກຳນັ້ນ ກໍໄດ້ສູນເສຍບົດບາດຂອງຕົນໄປ ແລະຜ່ານໄປອີກໄລຍະຫນຶ່ງ ສະຫະບໍລິສັດດັ່ງກ່າວ ກໍຖືກລົບລ້າງເລີຍ .

ເຖິງແມ່ນວ່າ ສະຫະບໍລິສັດ ຈະມີຂໍ້ບົກພ່ອງຫລາຍປານໃດກໍຕາມ ແຕ່ສະຫະບໍລິສັດ ກໍໄດ້ຕອບສະຫນອງຈຸດປະສົງ ແລະພາລະຫນ້າທີ່ ຂອງນະໂຍບາຍເສດຖະກິດໃຫມ່ໄດ້ໃນຮູບການ

ຈັດຕັ້ງຄຸ້ມຄອງອຸດສາຫະກຳ. ທຶນຫມູນວຽນຂອງສະຫະບໍລິສັດບໍ່ໄດ້ກະແຈກກະຈາຍ ແລະໄດ້ນຳໃຊ້ຢ່າງລວມສູນເພື່ອຄວາມ-ຕ້ອງການຂອງວິສາຫະກິດ ຂອງສະຫະບໍລິສັດທຸກໆຫນ່ວຍ. ໃນລະບົບດັ່ງກ່າວ ໂດຍສະເພາະໃນໄລຍະ ທີ່ສະພາບການດ້ານເສດຖະກິດຫຍຸ້ງຍາກ ໃນບັນດາປີເລີ່ມຕົ້ນ ຂອງນະໂຍບາຍເສດຖະກິດໃຫມ່ນັ້ນ ໄດ້ມີຜົນງານດີທີ່ສຸດ. ກ່ອນອື່ນຫມົດ ໃນການຈັບຈ່າຍກ່ຽວກັບການຄ້າ ເພິ່ນໄດ້ມີການປະຢັດ ຫລາຍທີ່ສຸດ. ຖ້າຫາກວ່າ ໃນກໍລະນີທີ່ມີໂຮງຈັກໂຮງງານຂະຫນາດ-ນ້ອຍຈຳນວນຕັ້ງ ໔,໕ ຫາ ໓ ພັນ ໄດ້ເດີນຕາມກິດຈະການແບບເອກະລາດ ແທນຕົວຂອງສະຫະບໍລິສັດນັ້ນ, ເວລານັ້ນຄວາມຫຍຸ້ງຍາກກໍເກີດມີເພີ່ມເຕີມອີກ ໃນການຈັດຕັ້ງ ອຸດສາຫະກຳ ຢ່າງແນ່ນອນ. ພ້ອມດຽວກັນກັບ ການຟື້ນຟູອຸດສາຫະກຳ ແລະການຂະຫຍາຍຂະຫນາດການຜະລິດ ກໍໄດ້ມີການຂະຫຍາຍເງື່ອນໄຂເສດຖະກິດ, ມີການຍົກຖານະບົດບາດ ແລະຄວາມຫມາຍແຕ່ລະວິສາຫະກິດຂຶ້ນສູງ. ບັນຫາກ່ຽວກັບການຂະຫຍາຍ ຄວາມເປັນເອກະລາດ ດ້ານການບໍລິຫານ ແລະດ້ານເສດຖະກິດຂອງຕົນ ຈຶ່ງຈະເກີດມີຂຶ້ນ.

ການຂ້າມຜ່ານຈາກການຟື້ນຟູເສດຖະກິດໄປສູ່ການດັດສ້າງນັ້ນ ມັນຮຽກຮ້ອງໃຫ້ມີການຂະຫຍາຍ ຄວາມເປັນເອກະລາດຂອງວິສາຫະກິດດ້ານບໍລິຫານ ແລະດ້ານເສດຖະກິດ. ເພື່ອຍົກລະດັບການວາງແຜນການຜະລິດ, ການຂຶ້ນແຜນການ ດ້ານການຜະລິດ ແລະດ້ານການເງິນ, ຂຶ້ນແຜນການລາຄາຕົ້ນທຶນ

ຂອງຜະລິດຕະພັນ. ທັງນີ້ແມ່ນເພື່ອແນໃສ່ການຂະຫຍາຍ ສິດ ແລະຍົກສູງຄວາມຮັບຜິດຊອບຂອງວິສາຫະກິດ ໃນວຽກງານ-ການເຄື່ອນໄຫວ ດ້ານເສດຖະກິດຂອງຕົນ.ສະນັ້ນ ວຽກງານ ໃຈກາງທັງຫມົດ ກໍ່ຮວກັບການດັດສ້າງຊຸດສາຫະກຳຈິ່ງຕົກໄປ ສູ່ຫນ່ວຍການຜະລິດພື້ນຖານ ເຊັ່ນ ບັນດາໂຮງຈັກ ໂຮງງານ ເປັນຕົ້ນ.

ເພິ່ນໄດ້ມອບຈຸບຸສົມບັດ ຂອງວິສາຫະກິດ ໃຫ້ແກ່ຜູ້ອຳນວຍ ການວິສາຫະກິດ ທີ່ມີສິດແຕ່ງຕັ້ງ ແລະປົດບັນດາພະນັກງານ-ປົກຄອງແລະເຕັກນິກ ອອກຈາກຫນ້າທີ່ ໂດຍບໍ່ຕ້ອງຂໍຄຳເຫັນ ຈາກຂັ້ນເທິງ, ແນ່ນອນ, ກໍຕ້ອງນັບຖືລະບຽບ ລັດຖະບັນຍັດ ຂອງໂຊວຽດ, ເຂົາສາມາດດຳເນີນມາດຕະການ ຕໍ່ການຈັດ ການຜະລິດ ໃຫ້ເຫມາະສົມກັບສະພາບ,ເຖິງແມ່ນວ່າ ເພິ່ນບໍ່ ໄດ້ວາງໄວ້ໃນແຜນການການຜະລິດ ແລະການເງິນກໍຕາມ , ແຕ່ວ່າການປະຕິບັດດັ່ງກ່າວ ຫາກບໍ່ສິ້ນເປືອງພາຫານະ ດ້ານ ເງິນຕາ ແລະວັດຖຸປະກອນ ອັນຫລວງຫລາຍ. ແຕ່ຜູ້ອຳນວຍ ການ ຈຳຕ້ອງໄດ້ເຮັດລາຍງານ ມາດຕະການດັ່ງກ່າວ ຕໍ່ຄະ ນະບໍລິຫານ ຂອງສະຫະບໍລິສັດ. ເພິ່ນຍັງອະນຸຍາດໃຫ້ແກ່ ຜູ້ ອຳນວຍການ ດຳເນີນການສ້ອມແປງຂະຫນາດກາງ, ຂະ ຫນາດນ້ອຍແລະປະຈຳວັນ ອຸປະກອນຕ່າງໆ ຢ່າງເອກະລາດ ແລະຕິດຕັ້ງເຄື່ອງອຸປະກອນຂະຫນາດນ້ອຍ. ແຕ່ຢ່າງໃດກໍ ດີ ສ່ວນແຜນການການກໍ່ສ້າງໃຫມ່, ການສ້ອມແປງຂະຫນາດ -ໃຫຍ່ (ການຍົກເຄື່ອງຈັກໃຫມ່), ການຕິດຕັ້ງອຸປະກອນໃຫມ່

ຂອງໂຮງງານນັ້ນຜູ້ອຳນວຍການສາມາດດຳເນີນວຽກງານດັ່ງກ່າວໄດ້ ມີແຕ່ໂດຍພາຍໃຕ້ການກວດກາ ຂອງຄະນະບໍລິຫານຂອງສະຫະບໍລິສັດເທົ່ານັ້ນ.

ການຮ່າງການສົມດູນ ແລະການຄຳນວນ ຢູ່ວິສາຫະກິດນັ້ນໄດ້ນຳເອົາວິທີແກ້ໄຂບັນຫາດັ່ງກ່າວ ໄປສູ່ການຄິດໄລ່ລາຄາຕົ້ນທຶນການຜະລິດ ຜະລິດຕະພັນ, ທີ່ອຳນວຍໂອກາດເພື່ອກຳນົດ ຜົນຂອງການເຄື່ອນໄຫວເສດຖະກິດ. ວິສາຫະກິດໄດ້ຮັບສິດ ເພື່ອນຳໃຊ້ກຳໄລກ້ອນໜຶ່ງ ທີ່ຕົນໄດ້ຮັບນັ້ນຕາມຊອບໃຈຂອງຕົນ. ກຳໄລດັ່ງກ່າວ ໄດ້ແກ່ຄວາມແຕກຕ່າງລະ ຫວ່າງລາຄາຕົ້ນທຶນຂອງການຜະລິດ ທີ່ເພິ່ນຄາດຄະເນໄວ້ກ່ອນ ນັ້ນກັບລາຄາຕົ້ນທຶນຕົວຈິງ ທີ່ເພິ່ນໄດ້ຄິດໄລ່ຈາກພື້ນຖານ ຂອງການຄຳນວນດັ່ງກ່າວ. ຈຳນວນກຳໄລ, ທີ່ເພິ່ນມອບໃຫ້ແກ່ຜູ້ອຳນວຍການວິສາຫະກິດນັ້ນ ໄດ້ວາງອອກໂດຍຄະນະບໍລິຫານສະຫະບໍລິສັດ ຮ່ວມກັບຫົວໜ້າຂອງຕົນ ແລະ ຮັບຮອງເອົາຈາກສະພາແຮງງານ ແລະ ປ້ອງກັນຊາດ.

ອຳນາດບໍລິຫານ ຂອງຜູ້ອຳນວຍການວິສາຫະກິດນັ້ນໄດ້ກຳນົດໄວ້ ໃນໃບມອບໝາຍທີ່ອອກໃຫ້ ໂດຍຄະນະບໍລິຫານຂອງສະຫະບໍລິສັດ. ການຕົກລົງທຸກຢ່າງ, ທີ່ພົວພັນເຖິງການຄຸ້ມຄອງວິສາຫະກິດນັ້ນ, ຜູ້ອຳນວຍການໄດ້ນຳໄປປະຕິບັດ ໃນນາມ ເປັນຜູ້ຕາງໜ້າຂອງສະຫະບໍລິສັດ ແລະ ໃນຂອບເຂດທີ່ຄະນະບໍລິຫານສະຫະບໍລິສັດວາງອອກນັ້ນ.ຜູ້ອຳນວຍການ ມີສິດເປີດບັນຊີລາຍວັນ ຢູ່ອົງການສິນເຊື່ອ ໃນນາມຂອງສະຫະ

ບໍລິສັດ, ອອກໃບບິນແລກປ່ຽນ, ຮັບການກູ້ຢືມ ບົນພະລິດຕະພັນ ຂອງວິສາຫະກິດ, ດຳເນີນກິດຈະການດ້ານພະລາທິການວິສາຫະກິດ ແລະດ້ານການຊື້ຂາຍ ຜະລິດຕະພັນຂອງຕົນ.

ການເຄື່ອນໄຫວດ້ານການຜະລິດ ແລະ ດ້ານເສດຖະກິດຂອງສະຫະບໍລິສັດ

ການຂ້າມຜ່ານເຂົ້າສູ່ນະໂຍບາຍເສດຖະກິດໃຫມ່,ການນຳຫລັກການກຸ້ມຕົນເອງ ດ້ານເສດຖະກິດ, ການນຳໃຊ້ການພົວພັນດ້ານສິນຄ້າແລະການເງິນ ຢ່າງກວ້າງຂວາງ ໃນທຸກຂົງເຂດວຽກງານເສດຖະກິດນັ້ນ ມັນຮຽກຮ້ອງໃຫ້ມີວິທີການ ຄຸ້ມຄອງເສດຖະກິດແບບໃຫມ່ ເຊັ່ນດຽວກັນ.

ໃນຈົດຫມາຍຂອງ ທ່ານ ວ.ອີ.ເລນິນ ສະບັບຫນຶ່ງ ເພິ່ນໄດ້ບັນທຶກໄວ້ວ່າ: "... ເພິ່ນໄດ້ຈັດຕັ້ງບັນດາສະຫະບໍລິສັດແລະວິສາຫະກິດອື່ນ ໂດຍພື້ນຖານຂອງການກຸ້ມຕົນເອງ ດ້ານເສດຖະກິດນັ້ນ ແມ່ນແນໃສ່ເພື່ອໃຫ້ສະຫະບໍລິສັດແລະວິສາຫະກິດດັ່ງກ່າວ ຮັບຜິດຊອບໂດຍຕົນເອງ ... ເພື່ອບໍ່ໃຫ້ກິດຈະການ ວິສາຫະກິດ ຂອງຕົນຂາດທຶນ", ເພື່ອໃຫ້ສະຫະບໍລິສັດແລະວິສາຫະກິດ ມີຄວາມສາມາດ... "ຮັບຜິດຊອບຕໍ່ຜົນປະໂຫຍດທັງຫມົດ ຂອງຕົນເອງ ໂດຍວິທີການຄ້າຂາຍ" (ວ. ອີ.ເລນິນ. ປະມວນບົດນິພົນ ຄົບຊຸດ, ເຫລັ້ມທີ ໕໔ , ຫນ້າ ໑໕໐-໑໕໑.)

ເພື່ອປະຕິບັດທິດທາງດັ່ງກ່າວໄດ້ກ່ອນອື່ນໝົດມັນຮອັກຮ້ອງ ໃຫ້ມີການປຸ່ຽນແປງລະບົບການລົງທຶນ. ໃນບາດກ້າວທຳອິດໃນການນຳໃຊ້ລະບົບການລົງທຶນໃໝ່ນັ້ນ ໄດ້ແກ່ການຂ້າມໄປ ສູ່ການຊຳລະຄ່າຜະລິດຕະພັນ ອຸດສາຫະກຳທີ່ສົ່ງອອກນັ້ນ. ເຖິງຢ່າງນັ້ນກໍດີ ໃນເມື່ອເພິ່ນນຳໃຊ້ລະບົບດັ່ງກ່າວ ລັດໄດ້ສູນໃສ່ການຈັດວາງ ແລະການກວດກາບັນຊີການເງິນ ເຂົ້າມາໃນ-ກຳມືຂອງຕົນ. ເພິ່ນໄດ້ອອກດຳລັດກ່ຽວກັບການດຳເນີນງານຂອງທະນາຄານ, ໂດຍອີງໃສ່ດຳລັດດັ່ງກ່າວວິສາຫະກິດແລະສະຖາບັນຂອງລັດຕ່າງໆ ຈຳຕ້ອງຮັກສາພາຫະນະ ດ້ານການເງິນທັງໝົດຂອງຕົນ ໄວ້ຢູ່ທະນາຄານຂອງລັດ ແລະການຊຳລະລາຍຈ່າຍທັງໝົດ ກໍຕ້ອງດຳເນີນຜ່ານ ລະບົບທະນາຄານທັງນັ້ນ ຍົກເວັ້ນແຕ່ການເບີກເງິນເດືອນ.

ໃນຂະນະທີ່ເພິ່ນນາໃຊ້ຫລັກການກຸ້ມຕົນເອງ ເຂົ້າຢູ່ໃນສະຫະບໍລິສັດ ແລະວິສາຫະກິດ ເອກະລາດນັ້ນ ເພິ່ນໄດ້ຍົກເວັ້ນການເສຍພາສີ ທີ່ເປັນຜະລິດຕະພັນອີກ, ແລະພ້ອມດຽວກັນນັ້ນລັດກໍຍັງໄດ້ລົງທຶນ ໃຫ້ແກ່ການຂະຫຍາຍອຸດສາຫະກຳອີກດ້ວຍ. ສະຫະບໍລິສັດໄດ້ຮັບເງິນຈາກງົບປະມານຂອງລັດເພື່ອຈ່າຍຄ່າເງິນເດືອນ, ເພື່ອໃຊ້ໃນການເກັບຊື້ວັດຖຸປະກອນທີ່ຂາດເຂີນຢູ່ທ້ອງຕະຫລາດ.

ໃນຂະນະທີ່ການເຄື່ອນໄຫວ ຂອງສະຫະບໍລິສັດໂດຍອີງໃສ່ພື້ນຖານຂອງການກຸ້ມຕົນເອງ ດ້ານເສດຖະກິດ ໄດ້ແຂງແຮງຂຶ້ນ ແລະຂະຫຍາຍຕົວອອກ ຢ່າງກ້ວາງຂວາງ ເຖິງທ້າຍປີ

໑໙໘໔ ນັ້ນ ເພິ່ນໄດ້ສັງເກດເຫັນວ່າ ມີກ້ອນທຶນໃນບັນຊີລາຍວັນ ຂອງສະຫະບໍລິສັດເອກະລາດ ຢູ່ທະນາຄານລັດ. ການຍົກສູງປະສິດທິພາບຂອງການອອກແຮງງານ ແລະການລົດລາຄາຕົ້ນທຶນລົງນັ້ນ ໄດ້ເພີ່ມລາຍໄດ້ມາໃຫ້ແກ່ວິສາຫະກິດ, ແລະເງິນທີ່ເພີ່ມຫັກອອກ ຢູ່ທະນາຄານລັດນັ້ນກໍເພີ່ມຂຶ້ນ. ໃນສົກປີ ໑໙໘໑ ຫາປີ ໑໙໘໔ ພາກສ່ວນງົບປະມານລາຍຮັບ ຂອງລັດທີ່ມາຈາກອຸດສາຫະກຳ ໄດ້ມີເຖິງ ໑໘%, ແລະ ໃນສົກປີ ໑໙໘໔-໑໙໘໕ ຕົວເລກດັ່ງກ່າວໄດ້ເພີ່ມຂຶ້ນ ເຖິງ ໘໖%. ດັ່ງນັ້ນ ພວກເຮົາເຂົ້າໃຈນຳກັນແລ້ວວ່າ ລາຍຮັບຂອງລັດບໍ່ແມ່ນໄດ້ມາຈາກການຫັກກຳໄລ ຈາກວິສາຫະກິດກຸ້ມຕົນເອງ ເທົ່ານັ້ນ, ແຕ່ຫາກຍັງໄດ້ຈາກການເກັບພາສີອາກອນຈາກວິສາຫະກິດອື່ນໆອີກ; ຊຶ່ງລາຍຮັບດັ່ງກ່າວນັ້ນ ເພິ່ນເກັບມາໄດ້ ທັງເປັນສິນຄ້າ ແລະ ທັງເປັນເງິນສົດ.

ໃນສົກປີ ໑໙໘໔-໑໙໘໕ ນັ້ນ ການລົງທຶນໃຫ້ແກ່ສະຫະບໍລິສັດ ສ່ວນຫລາຍແມ່ນເອົາມາຈາກການເພີ່ມສິນເຊື່ອ ຂອງທະນາຄານ. ການລົງທຶນທີ່ເພິ່ນເອົາມາຈາກທາງງົບປະມານ - ຂອງລັດນັ້ນ ໄດ້ນັບມື້ນັບນ້ອຍລົງ. ຍັງມີທຶນອີກກ້ອນໜຶ່ງ ທີ່ແມ່ນສະຫະບໍລິສັດເອງ ໄດ້ນຳມາຈາກການໃຊ້ທົດແທນ ໜີ້ສິນ, ຈາກຮຸ້ນສ່ວນ ແລະຈາກການສົ່ງຂອງ ທີ່ສົ່ງຊຸ່ມອອກວຽກງານອຸດສາຫະກຳ ຊຶ່ງທຶນດັ່ງກ່າວ ເປັນຈຳນວນນ້ອຍທີ່ສຸດ.

ການຈັດຕັ້ງການຜະລິດ ເຮັດໃຫ້ເປັນແຜນການນັ້ນມັນແມ່ນບັນຫາອັນໜຶ່ງ ທີ່ສຳຄັນທີ່ສຸດ ໃນວຽກງານການເຄື່ອນ ໄຫວ

ຂອງສະຫະບໍລິສັດ ດ້ານການຜະລິດແລະດ້ານເສດຖະກິດ. ໃນມະຕິຂອງກອງປະຊຸມພັກກອມມູນິດ ທົ່ວສະຫະພາບ (ໂບນເຊວິກ) ຄັ້ງທີ XII ສະບັບເດືອນມັງກອນ ປີ ໑໙໔໔ ນັ້ນ ເພິ່ນໄດ້ຂຽນວ່າ: "ພັກຕ້ອງຮ່ຳຮຽນເອົາການປະສົມປະສານ ນຳພາກສ່ວນຕ່າງໆ ຂອງເສດຖະກິດລັດ ທັງລະຫວ່າງຕົນ ເອງແລະທັງກັບຕະຫລາດ. ໜ້າທີ່ດັ່ງກ່າວ ມັນມີຄວາມສະດວກສະບາຍຢູ່ບ່ອນວ່າ ພວກເຮົາ ... ໄດ້ສຳເລັດເງື່ອນໄຂພື້ນຖານລ່ວງໜ້າຂອງການຊີ້ນຳ ຢ່າງມີແຜນການ. ເງື່ອນໄຂລ່ວງໜ້າດັ່ງກ່າວນັ້ນ ... ປະກອບດ້ວຍເງິນຕາ ທຸ່ນທ່ຽງ, ການຈັດຕັ້ງສິນເຊື່ອ, ການສະສົມທຶນຮອນທາງດ້ານວັດຖຸ, ທີ່ອຳນວຍໃຫ້ມີຄວາມຄ່ອງແຄ້ວ, ຫລືໃນການຈັດຕັ້ງແມ່ນເຮັດໃຫ້ຮູບການການຈັດຕັ້ງເສດຖະກິດ ອັນແນ່ນອນ ໃຫ້ເຂັ້ມແຂງຂຶ້ນ (ສະຫະບໍລິສັດແລະອື່ນໆ)". ("ມະຕິຂອງພັກ ແລະ ລັດກ່ຽວກັບບັນຫາເສດຖະກິດ" ເຫລັ້ມທີ I , ໜ້າ ໓໙໘ .) ສະນັ້ນ ໃນຂະນະທີ່ມີການຟື້ນຟູຊຸດສາຫະກຳ ແລະສຳເລັດ - ການປະຕິຮູບເງິນຕາ ໃນປີ ໑໙໔໔ ຫາ ໑໙໔໔ ນັ້ນພື້ນຖານດ້ານວັດຖຸຂອງການຈັດຕັ້ງ ວາງແຜນການຜະລິດໄດ້ແຂງແຮງຂຶ້ນ. ເພິ່ນໄດ້ເຮັດໃຫ້ເປັນແຜນການບາງວຽກງານ ທີ່ໄດ້ແກ່ບໍລິມາດການຜະລິດ, ຈຳນວນກຳມະກອນ, ປະສິດທິພາບ - ຂອງການອອກແຮງງານ, ອັດຕາເງິນເດືອນ, ການສະສົມລາຄາຕົ້ນທຶນ, ລາຄາຜະລິດຕະພັນ. ແຕ່ວ່າ ໃນໄລຍະດັ່ງກ່າວນັ້ນ ໃນຕົວຈິງສະຫະບໍລິສັດ ບໍ່ໄດ້ເຂົ້າຮ່ວມສົມທົບ ວຽກງານ

ຂອງຕົນ ເຮັດໃຫ້ເປັນແຜນການແຕ່ຢ່າງໃດ. ເຖິງປີ ໑໙໘໕ ໂດຍຜ່ານລະບົບຂອງກົມໃຫຍ່ ຂອງສະພາເສດຖະກິດ ແຫ່ງຊາດສູງສຸດ ລັດໄດ້ບົ່ງແຜນການອັນແນ່ນອນບາງອັນອອກ ໃຫ້ແກ່ສະຫະບໍລິສັດ.

ໃນປີ ໑໙໘໕ ອົງການວາງແຜນໄດ້ເລີ່ມວາງເປົ້າ ໝາຍຂອງການຂະຫຍາຍຕົວ ດ້ານເສດຖະກິດແຫ່ງຊາດອອກ. ການກ້າວເຂົ້າສ້າງແຜນການເສດຖະກິດປະຈຳປີ ໃຫ້ເປັນແຜນອັນດຽວ ແທນການວາງແຜນແຕ່ລະຂະແໜງການ ແຕກຕ່າງກັນນັ້ນ ກົມໃຫຍ່ມີໜ້າທີ່ ເຮັດໃຫ້ໂຄງການການຜະລິດ ຂອງສະຫະບໍລິສັດ ເຂົ້າເປັນແຜນການ. ໂດຍອີງໃສ່ພື້ນຖານ ຂອງແຜນການດັ່ງກ່າວນັ້ນ ພະແນກການຜະລິດ ຂອງສະຫະບໍລິສັດໄດ້ຮ່າງໂຄງການການຜະລິດໄຕມາດ ຂອງວິສາຫະກິດ ຂອງຕົນອອກ. ໃນແຜນການດັ່ງກ່າວ ເພິ່ນໄດ້ກະວາງ ການຂະຫຍາຍການຜະລິດ, ລົງເລິກດ້ານການຊ່ຽວຊານ, ລົດລາຄາຕົ້ນທຶນ ຂອງຜະລິດຕະພັນໄວ້ດ້ວຍ. ວິສາຫະກິດໄດ້ຮັບຄຳສັ່ງທີ່ເປັນແຜນການ ເພື່ອຜະລິດຕະພັນ ຊະນິດໃດຊະນິດ ໜຶ່ງອອກ.

ສະຫະບໍລິສັດ, ໂດຍພາຍໃຕ້ກົດໝາຍ ຂອງສະພາເສດ-ຖະກິດແຫ່ງຊາດສູງສຸດ ສະຫະພາບ ສາທາລະນະລັດ ສັງຄົມນິຍົມໂຊວຽດ ແລ້ວໄດ້ເປັນຜູ້ສະເໜີແຜນການການ ຜະລິດ ແລະການເງິນຂອງວິສາຫະກິດ ອຸດສາຫະກຳພ້ອມດ້ວຍຄຳອະທິບາຍຫຍໍ້ໆ ໃຫ້ແກ່ອົງການຈັດຕັ້ງຂັ້ນສູງ (ເຊັ່ນ: ກົມໃຫຍ່,

ກົມສູນກາງ ແລະ ຄະນະຜູ້ອຳນວຍການ).

ບັນດາສະຫະບໍລິສັດ,ທີ່ຢູ່ໃນລະບົບ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ຂອງສາທາລະນະລັດ, ມີໜ້າທີ່ນຳສະເໜີເອກະສານຈະນິດດຽວກັນນັ້ນ ໃຫ້ແກ່ສະພາເສດຖະກິດ ແຫ່ງຊາດສູງສຸດ, ຄະນະກຳມາທິການ ແຜນພັງແຫ່ງຊາດແລະສະພາເສດຖະກິດ ສະຫະພາບ ສາທາລະນະລັດ.

ສ່ວນສະພາເສດຖະກິດແຫ່ງຊາດສູງສຸດສາທາລະນະລັດນັ້ນ ມີໜ້າທີ່ນຳສະເໜີແຜນການການຜະລິດລວມ ແລະແຜນການຂອງວຽກງານສຳຄັນ ຂອງແຕ່ລະຂະແໜງຊຸດສາຫະກຳແລະພ້ອມທັງສ່ວນແບ່ງຍ່ອຍຂອງແຜນການດັ່ງກ່າວ ຂອງຊຸດສາຫະກຳທ້ອງຖິ່ນ, ສາທາລະນະລັດ ແລະສະຫະພາບ. ກ່ຽວກັບແຜນການລວມນັ້ນ ເພິ່ນໄດ້ເອົາຄຳອະທິບາຍທີ່ກ່ຽວຂ້ອງກັບ-ແຜນດັ່ງກ່າວ ຄັດຕິດໄປພ້ອມ.

ກົມໃຫຍ່ ຫລືກົມສູນກາງ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ. ໄດ້ສຶກສາແລະໄດ້ດັດແກ້ ແຜນການການຜະລິດ ແລະການເງິນ ແລະແຜນການວຽກງານອັນສຳຄັນ ທຸກໆອັນ, ແລ້ວໄດ້ນຳສົ່ງແຜນການດັ່ງກ່າວໃຫ້ແກ່ກົມວາງແຜນການ, ຊຶ່ງເລີ່ມແຕ່ປີ ໑໙໔໗ ກົມດັ່ງກ່າວ ໄດ້ກາຍເປັນກົມວາງແຜນການເສດຖະກິດ ຂອງສະພາເສດຖະ ກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ..

ສະພາເສດຖະກິດແຫ່ງຊາດສູງສຸດ ສ.ສ.ສ.ຊ.ໄດ້ນຳສະເໜີແຜນການຊຸດສາຫະກຳລວມນັ້ນ ພ້ອມດ້ວຍສ່ວນແບ່ງຍ່ອຍ

ຂອງແຜນດັ່ງກ່າວໃນແຜນການຂອງຊຸດສາທະກຳສະຫະພາບ, ສາທາລະນະລັດແລະທ້ອງຖິ່ນ ໃຫ້ແກ່ສະພາແຮງງານແລະສະພາປ້ອງກັນຊາດ ຂອງຄະນະກຳມາທິການ ແຜນຜັງແຫ່ງຊາດ ສ.ສ.ສ.ຊ. ເພື່ອຂໍອະນຸມັດ. ການສະເໜີແຜນການການກໍ່ສ້າງອັນສຳຄັນ ແລະແຜນການກ່ຽວກັບແຕ່ລະຂະແໜງເອກະລາດນັ້ນ ກໍໄດ້ປະຕິບັດໄປ ໃນທຳນອງດຽວກັນນັ້ນ.ຫລັງຈາກເພິ່ນໄດ້ສຶກສາແຜນດັ່ງກ່າວຢູ່ໃນພະແນກການຜະລິດ ຂອງກົມສູນກາງ ວ່າການແຜນການແລ້ວ ເພິ່ນກໍໄດ້ສົ່ງແຜນການ ດັ່ງກ່າວກັບຄືນ ໃຫ້ແກ່ຄະນະປະທານ ສະພາເສດຖະກິດແຫ່ງ - ຊາດສູງສຸດ ເພື່ອອະນຸມັດ.

ດັ່ງກ່າວຂ້າງເທິງນີ້ ເພິ່ນໄດ້ສະແດງໃຫ້ເຫັນວ່າ ວິທີສ້າງແຜນການ ແລະອະນຸມັດແຜນການການຜະລິດ ຂອງສະຫະບໍລິສັດ ໃນກ່ອນໜ້າທີ່ເພິ່ນໄດ້ຮ່າງແຜນການຫ້າປີ ຄັ້ງທີໜຶ່ງ ນັ້ນ ແມ່ນເພິ່ນເຮັດແນວໃດ.

ເມື່ອເຖິງທ້າຍໄລຍະການຟື້ນຟູເສດຖະກິດນັ້ນ ໄດ້ເກີດມີຄວາມຈຳເປັນ ຢ່າງພາວະວິໄສ ໃນການປັບປຸງການວາງ - ແຜນການຊຸດສາທະກຳ ໃນອະນາຄົດ. ໃນມະຕິ ຂອງກອງປະຊຸມໃຫຍ່ຂອງພັກ ຄັ້ງທີ XII ເພິ່ນໄດ້ບັນທຶກໄວ້ວ່າ -"ຢູ່ທີ່ປະເທດລັດເຊຍໂຊວຽດ,ທີ່ມີພາຫະນະຊຸດສາທະກຳ ແລະອື່ນສິ່ງຕົ້ນຕໍ ໄດ້ເປັນກຳມະສິດຂອງລັດນັ້ນ,ລັດຈຳຕ້ອງເຂົ້າຫຍຸ້ງກ່ຽວ ໃນວຽກງານການເຄື່ອນໄຫວເສດຖະກິດ ຢ່າງຫ້າວຫັນເພື່ອເຮັດໃຫ້ວຽກງານດັ່ງກ່າວ ເປັນແຜນການ.ບົດຮຽນໄດ້ຊີ້

ໃຫ້ເຮົາເຫັນແຈ້ງແລ້ວວ່າ, ແຜນການເສດຖະກິດ ສັງຄົມນິຍົມຈະບໍ່ສາມາດສ້າງຂຶ້ນໄດ້ ໂດຍວິທີການຄິດໄວ້ລ່ວງໜ້າ, ໂດຍທາງທິດສະດີ ຫລືແບບອາດຍາສິດ. ໃນໄລຍະຕໍ່ໄປຂ້າງໜ້າອັນໃກ້ໆນີ້ ພວກເຮົາຈະເຫັນໄດ້ວ່າ ເພິ່ນບໍ່ອາດຈະກຳ ນົດໜ້າທີ່ໄດ້ ໂດຍກົດໝາຍອັນໃດໝົດ, ແຕ່ເພິ່ນສະເໜີໃຫ້ມີການດັດແປງແກ້ໄຂ ກົງຈັກຊຸ້ມຄອງເສດຖະກິດ, ວິທີການຂອງມັນ, ພາກປະຕິບັດຂອງມັນ ຕໍ່ອິດທິພົນ ແລະການພົວພັນຂອງຕະຫລາດ ຢ່າງເນື່ອງນິດ ແລະຍາວນານ." ("ມະຕິຂອງພັກແລະລັດຖະບານ ກ່ຽວກັບບັນຫາເສດຖະກິດ" ເຫລັ້ມທີ I, ໜ້າ ໓໔໘.)

ການປັບປຸງການວາງແຜນການ ໃຫ້ດີຂຶ້ນນັ້ນ ມັນຕ້ອງການໃຫ້ມີການຈັດວາງວຽກງານວາງແຜນໃຫ້ສົມເຫດສົມຜົນ. ສະນັ້ນ ສະພາເສດຖະກິດແຫ່ງຊາດສູງສຸດ ສ.ສ.ສ.ຊ. ໄດ້ວາງບັນຫາຕໍ່ລັດຖະບານ ກ່ຽວກັບການປ່ອຍຕົວເລກປະກັນການຂະຫຍາຍເສດຖະກິດໃຫ້ເປັນກົດຈະການພື້ນຖານຂອງການ ວາງແຜນການ. ເລີ່ມຈາກສົກປີ ໑໙໔໘-໔໙ ນັ້ນສະຫະບໍລິສັດ ຂຶ້ນແຜນການຂອງຕົນເອົາເອງແລະເຂົາໄດ້ນຳສະເໜີແຜນການດັ່ງກ່າວຕໍ່ອົງການຈັດຕັ້ງຂັ້ນເທິງເພື່ອກວດກາ. ການປະຕິບັດດັ່ງກ່າວໄດ້ເຮັດໃຫ້ວຽກງານວາງແຜນຂອງສະຫະບໍລິສັດມີລະບຽບແບບແຜນຂຶ້ນ.

ຂໍ້ຫຍຸ້ງຍາກລວມ ທາງດ້ານເສດຖະກິດ ໃນໄລຍະເວລາດັ່ງກ່າວນັ້ນ ຕໍ່ບັນດາສະຫະບໍລິສັດ ໄດ້ວາງບັນຫາຫລາຍອັນ,

ທີ່ພົວພັນເຖິງການຈັດຕັ້ງ ຈັດຫາວັດຖຸດິບ,ວັດຖຸອຸປະກອນແລະການຊື້ຂາຍຜະລິດຕະພັນ ທີ່ສຳເລັດຮູບ.

ເຖິງທ້າຍໄລຍະການຟື້ນຟູເສດຖະກິດໄລຍະທີ່ເພິ່ນຖືວ່າມັນດີເດັ່ນທີ່ສຸດ ໃນການຈັດຕັ້ງເຄື່ອນໄຫວ ພະລາທິການຂອງສະຫະບໍລິສັດນັ້ນ ໄດ້ແກ່ການນຳໃຊ້ສັນຍາແມ່.ຢູ່ພາຍໃນປະເທດເພິ່ນໄດ້ດຳເນີນທິດທາງ ຕັດກິດຈະການ ພະລາທິການ ອອກຈາກໜ້າທີ່ ຂອງສະຫະບໍລິສັດ ເທື່ອລະກ້າວ ແລະ ເພິ່ນໄດ້ມອບກິດຈະການດັ່ງກ່າວນັ້ນ ໃຫ້ແກ່ສະມາຄົມ ສະຫະບໍລິ ສັດແລະອົງການຈັດຫາ ຕາມຂະແໜງຊ່ຽວຊານອື່ນໆ. ການຍົກໜ້າພະລາທິການ ແລະຊື້ຂາຍ ອອກຈາກສະຫະບໍລິສັດນັ້ນມັນໄດ້ອຳນວຍຄວາມສະດວກ ໃຫ້ແກ່ສະຫະບໍລິສັດ ໄດ້ໃຊ້ຄວາມພະຍາຍາມ ອັນສຳຄັນຂອງຕົນ ເຂົ້າໃສ່ຕັ້ງແຕ່ບັນຫາການຜະລິດອັນດຽວເທົ່ານັ້ນ.

ລັກສະນະແຕກຕ່າງຂອງທ້າຍໄລຍະຟື້ນຟູເສດຖະກິດນັ້ນໄດ້ແກ່ບົດບາດຂະຫຍາຍຕົວ ຂອງສະມາຄົມສະຫະບໍລິສັດໃນການຮັບປະກັນ ວັດຖຸດິບ, ວັດຖຸປະກອນ, ແກ່ສະຫະບໍລິສັດ,ໃນການຊື້ຂາຍຜະລິດຕະພັນ ອຸດສາຫະກຳ.

ໃນໄລຍະຂ້າມຜ່ານເຂົ້າສູ່ ໄລຍະດັດສ້າງອຸດສາຫະກຳນັ້ນສະຫະບໍລິສັດ ໄດ້ດຳເນີນວຽກງານອັນໃຫຍ່ຫລວງໃນການຈັດວາງການຜະລິດ ໃຫ້ສົມເຫດສົມຜົນ. ສະນັ້ນ ໜ້າທີ່ໃຈ - ກາງຂອງສະຫະບໍລິສັດ ໄດ້ແກ່ການປຸກລະດົມ ເອົາພາຫະນະພາຍໃນຂອງຕົນ ໂດຍວິທີການເລັ່ງໃຫ້ທຶນໝູນວຽນ ໝູນໃຫ້

ໄດ້ຫລາຍຮອບ.

ໃນໄລຍະກ້າວເຂົ້າສູ່ການດັດສ້າງອຸດສາຫະກຳນັ້ນ ສະຫະບໍລິສັດ ໄດ້ດຳເນີນວຽກງານອັນສັບສົນ ໃນການຈັດໃຫ້ ເປັນຂະແໜງຊ່ຽວຊານ, ການຈັດໃຫ້ມີມາດຕະຖານແລະການສັງລວມການຜະລິດ. ໃນທ່າມກາງການສັງລວມ ແລະ ການຈັດໃຫ້ເປັນຂະແໜງຊ່ຽວຊານການຜະລິດນັ້ນ ຄວາມປະສົມປະສານ ລະຫວ່າງ ບັນດາຂະແໜງອຸດສາຫະກຳດ້ວຍກັນນັ້ນໄດ້ມີການຂະຫຍາຍອອກ, ເພິ່ນໄດ້ແກ້ໄຂສາຍການພົວພັນ ດ້ານເຕັກໂນໂລຢີ ລະຫວ່າງບັນດາວິສາຫະກິດ ເອກະລາດ ໃຫ້ລຸລ່ວງໄດ້. ການຍົກລະດັບການສັງລວມການຜະລິດ,ການຈັດໃຫ້ເປັນຂະແໜງຊ່ຽວຊານ ແລະການເຮັດໃຫ້ມີມາດຕະຖານ ນັ້ນໄດ້ສ້າງຄວາມສະດວກ ແກ່ການນຳເອົາການຜະລິດ ເປັນຈຳນວນມາກມາຍ ແລະຢ່າງກ້ວາງຂວາງໄດ້ ແລະເຮັດໃຫ້ການໝູນໃຊ້ທຶນຄົງທີ່ ແລະທຶນໝູນວຽນ ເຂົ້າໃນການຜະລິດຢ່າງໄດ້ຮັບຜົນກ່ວາ. ຕົວຢ່າງວ່າ ການປັບປຸງວຽກງານຫຼອມເຫຼັກໃຫ້ເປັນຊ່ຽວຊານ ໃນດ້ານຫລັກການເຕັກໂນໂລຢີຢູ່ໃນສະຫະບໍລິສັດ ວິສະວະກຳກໍ່ສ້າງລັດ ທີ່ມົດສະກູ , ການປະສົມປະສານ ແລະການເຮັດໃຫ້ເປັນການຜະລິດ ຂະໜາດໃຫຍ່ ນັ້ນໄດ້ສ້າງເງື່ອນໄຂສະດວກ ໃຫ້ແກ່ການນຳໃຊ້ອຸປະກອນທັນສະໄໝ ເຂົ້າສູ່ການຜະລິດ, ການຈັດແບ່ງແຮງງານໃຫ້ເພີ່ມຂຶ້ນເປັນການປັບປຸງການບໍລິຫານ ດ້ານເຕັກໂນໂລຢີໃຫ້ດີນັ້ນແລະການຍົກລະດັບການນຳໃຊ້ເນື້ອທີ່ເຂົ້າໃນການຜະລິດໃຫ້ໄດ້ຮັບ

ຜົນປະໂຫຍດອັນສູງ. ສະຫະບໍລິສັດ ໄດ້ປະຕິບັດວຽກງານອັນຫຍຸ້ງຍາກ ໃນການນຳເອົາຜົນສຳເລັດ ທາງ ວິທະຍາສາດຂອງປິຕຸພູມ ກໍຄືຂອງຕ່າງປະເທດ,ເພິ່ນໄດ້ດຳເນີນການຮ່ວມໄມ້ຮ່ວມມື ດ້ານເຕັກນິກ ກັບບໍລິສັດ ຕ່າງດ້າວ.

ດັ່ງນີ້, ທຸກການເຄື່ອນໄຫວດ້ານການຜະລິດແລະດ້ານເສດຖະກິດ ຂອງສະຫະບໍລິສັດໂຊວຽດ ແມ່ນຂຶ້ນຢູ່ກັບການ ຟື້ນຟູເສດຖະກິດແຫ່ງຊາດ, ການຂະຫຍາຍອຸດສາຫະກຳຂະໜາດໃຫຍ່, ການຍົກລະດັບການສັງລວມ ການຜະລິດຂອງ ສັງຄົມແລະໃນທີ່ສຸດ ກໍໄດ້ແກ່ໄຊຊະນະ ຂອງລະບົບສັງຄົມນິຍົມຢູ່ໃນໄລຍະອ້າມຜ່ານ. ພ້ອມດຽວກັນນັ້ນ ວິທີການດັ່ງກ່າວ ໃນຕົວມັນ ແມ່ນບາດກ້າວແບບພາກປະຕິບັດ ການຈັດຕັ້ງ ລະບົບຄຸ້ມຄອງອຸດສາຫະກຳ ສັງຄົມນິຍົມ.

ບົດບາດຂອງສະມາຄົມບໍລິສັດອຸດສາຫະກຳ

ໃນການຈັດຕັ້ງອຸດສາຫະກຳໂຊວຽດ

ການເກີດຂຶ້ນ ຂອງສະມາຄົມບໍລິສັດອຸດສາຫະກຳ

ນັບຕັ້ງແຕ່ມີການຫັນປ່ຽນ ເຂົ້າສູ່ນະໂຍບາຍ ເສດຖະກິດໃຫມ່, ອຸດສາຫະກຳໂຊວຽດ ໄດ້ປະເຊີນຫນ້າກັບຄວາມຫຍຸ້ງຍາກ ນາໆປະການ ບໍ່ວ່າທາງດ້ານການຈຳຫນ່າຍ ກໍ່ຄືການປ້ອນວັດຖຸແລະການເກັບຊື້ຕ່າງໆ. ການທີ່ເອົາສະຫະບໍລິສັດອຸດສາຫະກຳ ອອກຈາກການປ້ອນວັດຖຸຂອງລັດແລະຫັນປ່ຽນບໍລິສັດດັງກ່າວ ໃຫ້ກາຍເປັນບໍລິສັດ ວິສາຫະກິດທີ່ເປັນເຈົ້າຕົນເອງ ທາງດ້ານການເງິນນັ້ນ ໄດ້ເຮັດໃຫ້ການອຸດສາຫະກຳຂຶ້ນກັບທ້ອງຕະຫລາດ. ເພື່ອປັບປຸງແລະເສີມຂະຫຍາຍການພົວພັນ ລະຫວ່າງ ບໍລິສັດວິສາຫະກິດ ແລະຕະຫລາດນັ້ນຈຳເປັນຕ້ອງໃຫ້ມີເງິນທຶນຫມູນວຽນ.

ວິທີການອີກວິທີຫນຶ່ງ ທີ່ປະຕິບັດກັນຫລາຍກວ່າຫມູ່ເພື່ອເພີ່ມເງິນທຶນຫມູນວຽນນັ້ນ ແມ່ນເອົາສິນຄ້າແຮໄວ້ ອອກຂາຍໃນທ້ອງຕະຫລາດເສລີ. ບໍລິສັດອຸດສາຫະກຳ ເກືອບທຸກ ແຫ່ງຕ່າງກໍ່ມີຄວາມຮຽກຮ້ອງຕ້ອງການເງິນທຶນຫມູນວຽນ, ດ້ວຍ

ເຫດຜົນດັ່ງກ່າວການຈຳໜ່າຍສິນຄ້າແຮສາງຂອງລັດຈຶ່ງເປັນໄປ ໃນສະພາບຊ່ວງຊີງກັນ. ໃນສະພາບຕະຫລາດມີແຕ່ຢູ່ໃນພາກກາງເທົ່ານັ້ນ, ການຊ່ວງຊີງກັນທາງດ້ານສິນຄ້າ ໄດ້ພາໃຫ້ສິນຄ້າຕົກລາຄາ. ໃນບາງກໍລະນີ, ເພື່ອຊ່ວງຊີງເອົາເງິນທຶນຫມູນວຽນບໍລິສັດຊຸດສາຫະກຳຂອງລັດ ຈຶ່ງໄດ້ຈຳໜ່າຍສິນຄ້າ ຕົນພະລິດຕ່ຳກ່ວາລາຄາລົງທຶນ. ການດຳເນີນດັ່ງນີ້ ໄດ້ເຮັດໃຫ້ສິນຄ້າແຮສາງຂອງລັດ ບົກແຫ້ງລົງ,ຈົນຮອດວ່າ ບໍລິສັດຊຸດສາຫະກຳ ບໍ່ສາມາດສະສາງໜີ້ສິນຂອງຕົນຊ້ຳ.ສິ່ງດັ່ງກ່າວ ໄດ້ພາໃຫ້ທຶນຮອນຂອງລັດທາງດ້ານວັດຖຸ ບົກແຫ້ງລົງເປັນລຳດັບ.

ເພື່ອສະກັດກັ້ນຜົນສະທ້ອນບໍ່ດີ ຊຶ່ງເກີດມາຈາກນະໂຍບາຍເສດຖະກິດໃຫມ່, ມັນຮຽກຮ້ອງໃຫ້ມີການພົວພັນ ຢ່າງຈິງຈັງຈາກສະພາເສດຖະກິດແຫ່ງຊາດສູງສຸດ. ໃນທ້ອງເດືອນຕຸລາ ໑໙໔໑ ໄດ້ມີຄຳສັ່ງອອກ, ອີງຕາມດຳລັດສະພາລັດຖະມົນຕີປະຊາຊົນ ແລະອີງຕາມມະຕິຂອງສະພາແຮງງານ ແລະປ້ອງກັນຊາດ ວ່າດ້ວຍບັນດາມາດຕາການ ກ່ຽວກັບການຟື້ນຟູ ບໍລິສັດຊຸດສາຫະກຳ ຂະໜາດໃຫຍ່, ບໍລິສັດທີ່ຖຸກທັນປຽນ ມາເປັນບໍລິສັດວິສາຫະກິດ ທີ່ເປັນເຈົ້າຕົນເອງ ທາງດ້ານການເງິນ ມີສິດຂາຍສິນຄ້າອອກ ເພີ່ມກັບວັດຖຸທີ່ບໍ່ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຊຶ່ງລັດບໍ່ສາມາດຕອບສະໜອງຕາມແຜນການເຫລົ່ານັ້ນ. ແຕ່ເຖິງຢ່າງໃດກໍດີ ເພິ່ນໄດ້ມີການແນະນຳ ໃຫ້ໃຊ້ມາດຕາການດັ່ງກ່າວນ້ອຍລົງ ເທົ່າທີ່ຈະນ້ອຍ

ໄດ້ແລະທັງໃຫ້ເປັນໄປພາຍໃຕ້ຄວາມຮັບຜິດຊອບຂອງຜູ້ນຳພາ ບໍລິສັດອີກ. ຖ້າຢືນຢູ່ໃນຜົນປະໂຫຍດຂອງລັດແລ້ວເຫັນວ່າມາດຕາການດັ່ງກ່າວນີ້ ຖືກຕ້ອງທີ່ສຸດ, ເພາະມັນໄດ້ເຕືອນບໍ່ໃຫ້-ວັດຖຸມີຄຸນຄ່າ ບົກແຫ້ງລົງ. ໃນເວລາດຽວກັນນັ້ນ ຄຳສັ່ງດັ່ງກ່າວ ໄດ້ເຮັດໃຫ້ອຸດສາຫະກຳ ຕົກຢູ່ໃນສະພາບຫນັກຫນ່ວງທີ່ສຸດ, ເພາະມັນກີດຂວາງແຫລ່ງຂອງເງິນທຶນຫມູນວຽນ. ບັນຫາເງິນທຶນຫມູນວຽນ ກໍຍັງບໍ່ຖືກແກ້ໄຂຕາມເຄີຍ.

ອີກດ້ານຫນຶ່ງ ຍັງມີບັນຫາຈັດຕັ້ງວຽກການຈຳຫນ່າຍ ຂອງສະຫະບໍລິສັດອີກ, ໃນເມື່ອຕົກຢູ່ໃນສະພາບຮຽກຮ້ອງ ຕ້ອງການ ເງິນທຶນຫມູນວຽນຄືດັ່ງນັ້ນ ບັນດາສະຫະບໍລິສັດຈຳເປັນຕ້ອງເລັ່ງລັດຈຳຫນ່າຍສິນຄ້າ ທີ່ຜະລິດອອກ. ໃນໄລຍະທຳອິດກໍສາມາດຈຳຫນ່າຍສິນຄ້າໄດ້ສະດວກດີແທ້ ໃນທ້ອງຕະຫລາດສູນກາງ, ເພາະຕະຫລາດດັ່ງກ່າວ ຕັ້ງຢູ່ໃກ້ກັບພື້ນຖານການຜະລິດ, ມີຄວາມອາດສາມາດດີກ່ວາຕະຫລາດແຫ່ງອື່ນ ແລະກໍມີເງື່ອນໄຂດີກ່ວາ ທາງດ້ານລຳລຽງຂົນສົ່ງ. ແຕ່ໃນໄລຍະບໍ່ຍາວ ເຂດສູນກາງກໍຖືກຖ້ວມໄປດ້ວຍສິນຄ້າ ທີ່ສະຫະບໍລິສັດ-ຊ່ວງຊີງກັນຈຳຫນ່າຍ ແລະພາໃຫ້ຄວາມຮຽກຮ້ອງຕ້ອງການ-ນັ້ນ ລົດນ້ອຍລົງ ຊຶ່ງນຳໄປສູ່ການຕົກຕ່ຳຂອງລາຄາ. ເຖິງແມ່ນວ່າ ຈະຂາຍສິນຄ້າດ້ວຍລາຄາ ຖືກກໍຕາມ ແຕ່ການຈຳຫນ່າຍ ກໍຍັງຊັກຊ້າເຫມືອນເດີມ, ລາຄາຮັບເຫມົາສິນຄ້າ ກໍແພງຂຶ້ນ, ອັດຕາສ່ວນຄ່າໃຊ້ຈ່າຍ ຂອງສະຫະບໍລິສັດ ກໍເພີ່ມຂຶ້ນ. ທັງຫມົດທີ່ກ່າວມານັ້ນ ມີຜົນສະທ້ອນບໍ່ດີ ຕໍ່ລາຍໄດ້ຂອງ

ສະຫະບໍລິສັດ, ຫລາຍສະຫະບໍລິສັດ ກໍຂາດທຶນໄປຕາມໆກັນຫລືວ່າບໍ່ໄດ້ກຳໄລກໍມີ.

ສິນຄ້າໄດ້ລົ້ນເຫລືອຢູ່ໃນຕະຫລາດສູນກາງ, ແຕ່ໃນຕະຫຼາດທ້ອງຖິ່ນ ຈຶ່ງພັດຂາດສິນຄ້າ, ສະນັ້ນ ຈຳເປັນຕ້ອງໄດ້ຈັດຕັ້ງກົງຈັກຈຳໜ່າຍສິນຄ້າ ສະຫະບໍລິສັດຢູ່ໃນທ້ອງຖິ່ນ ໂດຍສະເພາະ, ແຕ່ວ່າສະຫະບໍລິສັດ ຈຶ່ງພັດບໍ່ສາມາດຂະຫຍາຍກິດ-ຈະການຈຳໜ່າຍຂອງຕົນ ຕາມທ້ອງຖິ່ນໄດ້ ເພາະວ່າ ບໍ່ມີເງິນທຶນໝູນວຽນທີ່ຈຳເປັນ. ລັດກໍຢາກໃຫ້ມີການແບ່ງປັນສິນ-ຄ້າສົມສ່ວນກັນ ລະຫວ່າງແຕ່ລະທ້ອງຖິ່ນ, ເຮັດໄດ້ຄືແນວນັ້ນຈຶ່ງຈະສາມາດຊຸກຍູ້ການຜະລິດ ກະສິກຳຂຶ້ນ, ເພື່ອສ້າງ ພື້ນຖານອັນຈຳເປັນ ທາງດ້ານວັດຖຸດິບ ໃຫ້ແກ່ອຸດສາຫະກຳແລະເພື່ອປັບປຸງອິດທິພົນ ສັງຄົມນິຍົມ ໃນຖິ່ນແຖວຊາວນາ ເຂດຊົນຊາດ.

ເວລາອອກສູ່ທ້ອງຕະຫລາດອັນກວ້າງຂວາງຄືແນວນັ້ນ ສະຫະບໍລິສັດ ໄດ້ປະເຊີນໜ້າກັບການຊ່ວງຊີງກັນອັນໜັກໜ່ວງກັບ ກອງທຶນເອກະຊົນ. ໃນການຊ່ວງຊີງ ດັ່ງກ່າວນີ້ ຖານະບົດບາດ ອຸດສາຫະກຳ ຂອງລັດໄດ້ຕົກຕ່ຳລົງ ຍ້ອນວ່າຂາດເງິນທຶນ ໝູນວຽນ, ຍ້ອນ ການຊ່ວງຊີງລະຫວ່າງ ບັນດາບໍລິສັດ, ຍ້ອນ ມີບົດຮຽນນ້ອຍ ໃນການເຮັດ ການຄ້າແລະຍ້ອນ ບໍ່ມີການແບ່ງໜ້າ ທີ່ການຄ້າກັນ ຢ່າງຈະແຈ້ງໃນທົ່ວປະເທດ. ຕົວຈິງ ກໍໝາຍຄວາມວ່າ ສະຫະບໍລິ ສັດເອກະລາດນັ້ນ ບໍ່ສາມາດ ຕໍ່ສູ້ກັບ ບໍລິສັດເອກະຊົນ ໄດ້ໃນ

ດ້ານການຄ້າ. ໃນເງື່ອນໄຂດັ່ງກ່າວ ການຈັດຕັ້ງຈຳໜ່າຍບໍ່ພຽງແຕ່ເປັນບັນຫາເສດຖະກິດເທົ່ານັ້ນ ແຕ່ກໍເປັນບັນຫາການເມືອງອັນສຳຄັນອີກດ້ວຍ.

ການແກ້ໄຂບັນຫາການຈຳໜ່າຍນີ້ ຄວນເອົາບັນຫາກ່ຽວ-ພັນກັບບັນຫາສຳຄັນຫລາຍບັນຫາ ທາງດ້ານການຜະລິດ,ການຄ້າແລະການຈັດຕັ້ງ ເຊັ່ນ ການຍົກປະສິດທິພາບແຮງງານ , ການຫລຸດຜ່ອນຄ່າສາຍຫຸ້ຍ,ການຍົກຄຸນນະພາບສິນຄ້າ, ການລົດຜ່ອນລາຍຈ່າຍສິນຄ້າ, ການບັບປຸງປະເພດສິນຄ້າ, ການແຍກວຽກການຄ້າສະຫະກໍລິສັດ ອອກຈາກໜ້າທີ່ ການຜະລິດແລະການຕໍ່ສູ້ຕ້ານການບໍ່ມີລະບຽບ ທາງດ້ານເສດຖະກິດ.

ການແກ້ໄຂບັນຫາດັ່ງກ່າວນີ້ ຂັ້ນຕົ້ນແມ່ນວ່າ ເລັ່ງລັດບັບປຸງບົດບາດ ກົມພະລາທິການສູນກາງ ໃຫ້ເປັນປົກກະຕິ ແລະຂະຫຍາຍການຄ້າ ແບບ ຊື້ຂາຍເປັນພັນທະບັດ. ໃນໄລຍະ ປີທຳອິດ ຂອງນະໂຍບາຍເສດຖະກິດໃໝ່ ກໍເຫັນວ່າ ການແກ້ໄຂດັ່ງກ່າວນີ້ ຖືກຕ້ອງເໝາະສົມດີ. ມັນໄດ້ຊຸກຍູ້ໃຫ້ອຸດສາ-ຫະກຳຂອງສະຫະກໍລິສັດນີ້ອອກສູ່ທ້ອງຕະຫລາດ, ແລະຊ່ວຍໃຫ້ມີການຂະຫຍາຍສາຍພົວພັນພາຍໃນຂອງອຸດສາຫະກຳ.

ໃນໄລຍະທ້າຍປີ ໑໙໒໑, ກົມພາລາທິການສູນກາງ ຂອງ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ ຈັດຕັ້ງພະແນກການຄ້າ ສູນກາງຂຶ້ນ. ຕາມຄຳສັ່ງ ຂອງຄະນະປະທານສະພາເສດຖະກິດ ແຫ່ງຊາດສູງສຸດ ສະບັບລົງວັນທີ ໑໒ ທັນວາ ໑໙໒໑ ນັ້ນ ພະແນກ ການຄ້າສູນກາງ ມີໜ້າທີ່ ສຳຫລວດ

ແລະກວດກາລະບົບຈໍລະຈອນສິນຄ້າທັງໝົດທີ່ມີຢູ່ໃນລະບົບສະພາເສດຖະກິດແຫ່ງຊາດສູງສຸດ.

ໃນໂຄງຮ່າງການຈັດຕັ້ງ ແລະວຽກງານຂອງພະແນກການຄ້າສູນກາງ, ຂະແໜງແລກປ່ຽນສິນຄ້າສູນກາງ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ມີບົດບາດສຳຄັນຍິ່ງ.ໜ້າທີ່ຕົ້ນຕໍຂອງຂະແໜງແລກປ່ຽນນັ້ນ ແມ່ນຊອກຮູ້ເກັບກຳຄວາມຮຽກ-ຮ້ອງຕ້ອງການ ແລະຂໍ້ສະເໜີຕ່າງໆ ຂອງວິສາຫະກິດລັດ , ແລະແມ່ນການຮັບໃຊ້ຄວາມຮຽກຮ້ອງຕ້ອງການຂອງມັນ ດ້ວຍສິນຄ້າທີ່ຂະຫໜງແລກປ່ຽນ ມີຢູ່ໃນການໝູນວຽນຂອງຕົນ . ພາຍໃນພະແນກແລກປ່ຽນ ຍັງໄດ້ຈັດຕັ້ງກຸ່ມນາຍໜ້າຂຶ້ນອີກ, ປະກອບຢູ່ໃນກຸ່ມດັງກ່າວນີ້ລ້ວນແລ້ວແຕ່ແມ່ນນັກວິຊາສະເພາະຜູ້ມີລະດັບສູງແລະກໍແມ່ນກຸ່ມນາຍໜ້າດັງກ່າວນີ້ທຳໜ້າທີ່ເກັບຊື້ໂດຍກົງ.

ການຈັດຕັ້ງຂະແໜງແລກປ່ຽນສິນຄ້າ ມີຄວາມສຳຄັນ ຍິ່ງໃນການປັບປຸງການຄ້າ ໃຫ້ເປັນປົກກະຕິ ແລະການຈຳໜ່າຍສິນຄ້າ ຂອງອຸດສາຫະກຳ ຢ່າງເປັນລະບຽບ.ເຖິງຢ່າງໃດກໍດີ ກໍບໍ່ສາມາດແກ້ໄຂບັນຫາຈຳໜ່າຍສິນຄ້າ ໄດ້ຢ່າງສົມບູນ. ກ່ອນອື່ນໝົດກໍຍ້ອນສະພາບເສດຖະກິດທີ່ຊຸດໂຊມຢູ່ແລ້ວ, ຂະແໜງແລກປຽນສິນຄ້າຈຶ່ງບໍ່ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການອຸດສາຫະກຳໄດ້ເຕັມສ່ວນ,ວັດຖຸດິບແລະພະລັງງານສ່ວນໜຶ່ງ ທີ່ຈຳເປັນໃນການຂະຫຍາຍອຸດສາຫະກຳ ຈຳເປັນຕ້ອງຊອກຫາທາງອື່ນອີກ.ດ້ານສອງ,ກໍຍ້ອນສະຫະບໍລິສັດ

ຂະໜາດນ້ອຍແລະບໍລິສັດເອກະລາດໄດ້ພົບກັບການຂາດເຂີນ
ທາງດ້ານການເງິນ ຖ້າຈະຜ່ານຂະແໜງແລກປ່ຽນສິນຄ້າ ,
ດ້ວຍເຫດນັ້ນ ບໍລິສັດດັ່ງກ່າວ ຈຶ່ງພາກັນຫັນໄປສວຍໃຊ້ທຶນເອ
ກະຊົນ, ຈາກນັ້ນໃນຕົວຈິງທຶນເອກະຊົນຍັງໃຊ້ການຊ່ວຍເຫລືອ
ຂອງຕົນບໍລິສັດຂອງລັດ ແລະສະຫະບໍລິສັດ ອຸດສາຫະກຳ.
ບາງສະຫະບໍລິສັດ ກໍຍັງຫັນ ໄປຮັບໃຊ້ ການຊ່ວຍເຫລືອຂອງ
ບໍລິສັດເອກະຊົນ, ສິ່ງດັ່ງກ່າວນີ້ ໄດ້ສ້າງຄວາມເສຍຫາຍໃຫ້
ລັດບໍ່ນ້ອຍ.

ກົມການຄ້າທົ່ວໄປກໍມີບົດບາດສຳຄັນ ໃນການປັບປຸງວຽກ-
ງານຈັດຫາ ແລະໃນການຈຳໜ່າຍສິນຄ້າ ໃຫ້ເປັນປົກກະຕິ.
ແຕ່ເຖິງຢ່າງໃດກໍດີ ໜ້າທີ່ຕົ້ນຕໍຂອງກົມການຄ້າທົ່ວໄປ ແລ້ວ
ແມ່ນຮັບປະກັນການຈັດຫາວັດຖຸດິບ ກໍຄືອຸປະກອນຕ່າງໆ ແລະ
ພາຫະນະປ້ອນບໍລິສັດອຸດສາຫະກຳ ແລະສະຫະບໍລິສັດ ອຸດສາ
ຫະກຳ. ແຕ່ວ່າ ໃນໄລຍະປີທຳອິດ ຂອງນະໂຍບາຍເສດຖະ
ກິດໃໝ່ນັ້ນ ການປ້ອນວັດຖຸໃຫ້ອຸດສາຫະກຳ ບໍ່ອາດສາມາດ-
ຈະຮັບປະກັນໄດ້ ຖ້າຫາກບໍ່ປະຕິບັດວຽກການເກັບຊື້ໄປພ້ອມໆ
ກັນ.

ໃນທີ່ສຸດບໍ່ວ່າຂະແໜງແລກປ່ຽນ ກໍຄືກົມການຄ້າ ທົ່ວໄປ
ຕ່າງກໍບໍ່ສາມາດແກ້ໄຂບັນຫາຈັດຫາ ແລະຈຳໜ່າຍສິນຄ້າໃຫ້
ບໍລິສັດ ອຸດສາຫະກຳໄດ້. ຍ້ອນແນວນັ້ນ ຈຶ່ງເກີດມີຄວາມຈຳ
ເປັນ ຕ້ອງຈັດຕັ້ງອົງການຈັດຫາ ແລະຈຳໜ່າຍສຳລັບອຸດສາ
ຫະກຳ ຊຶ່ງມີໜ້າທີ່ຈັດຫາ ແລະຈຳໜ່າຍພ້ອມກັນແລະກໍແມ່ນ

ອົງການທີ່ຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງການຜະລິດໄດ້ທັນເວລາ; ພ້ອມທັງໃຫ້ການຊຸ້ມຊູແກ່ສະຫະບໍລິສັດ-ຊູດສາຫະກຳ ຂະໜາດໃຫຍ່. ອົງການດັ່ງກ່າວນັ້ນ ເອີ້ນວ່າ ສະມາຄົມບໍລິສັດຊູດສາຫະກຳ. ການເກີດຂຶ້ນຂອງສະມາຄົມບໍລິສັດ ຊູດສາຫະກຳໄດ້ນັ້ນ ມັນແມ່ນໄລຍະທີ່ສຳຄັນໃນການຈັດຕັ້ງຄຸ້ມຄອງຊູດສາຫະກຳ ໃນໄລຍະເລີ່ມຕົ້ນ ຂອງນະໂຍບາຍເສດຖະກິດໃໝ່.

ສະຫະບໍລິສັດຕ່ຳແຜ່ນ ກໍໄດ້ກາຍເປັນສາຂາຂອງສະມາຄົມບໍລິສັດຊູດສາຫະກຳລັດ ຄືກັນ. ໃນທ້ອງເດືອນ ກຸມພາ ໑໙໒໒ໄດ້ມີການເປີດກອງປະຊຸມໃຫຍ່ຜູ້ຕາງໜ້າສະຫະສະມາຄົມຕ່ຳແຜ່ນ ແລະຄະນະກຳມະການວັດຖຸດິບຂຶ້ນເພື່ອຈຸດປະສົງຈັດຕັ້ງສະຫະພັນສະມາຄົມ ສະຫະບໍລິສັດຕ່ຳແຜ່ນ ທົ່ວລັດລັດເຊຍຂຶ້ນ. ສະຫະບໍລິສັດຕ່ຳແຜ່ນ, ຄະນະກຳມະການວັດຖຸດິບ ແລະໂຮງງານຕ່ຳແຜ່ນທັງໝົດ ທີ່ຖຶກຫັນປ່ຽນເປັນບໍລິສັດວິສາຫະກິດທັງໝົດ ຈຳເປັນຕ້ອງສັງກັດຢູ່ໃນອົງການ ດັ່ງກ່າວ . ໜ້າທີ່ຕົ້ນຕໍຂອງສະຫະພັນ ສະມາຄົມສະຫະບໍລິສັດຕ່ຳແຜນທົ່ວລັດລັດເຊຍມີດັ່ງນີ້: ແບ່ງປັນແຜນການຜະລິດຂອງລັດ, ແບ່ງປັນສິນເຊື່ອໃຫ້ແຕ່ລະບໍລິສັດ, ປະສົມປະສານກິດຈະການການຄ້າທັງໝົດ ແລະເຕົ້າໂຮມເອົາບໍລິສັດທັງໝົດ ໃຫ້ມາຢູ່ພາຍໃຕ້ການຄຸ້ມຄອງ ຂອງສະມາຄົມບໍລິສັດຊູດສາຫະກຳ, ວາງແຜນການລວມໃນການຈັດຫາ ແລະເກັບຊື້ວັດຖຸປ້ອນໂຮງງານ ຕາມຄາດໝາຍຂອງສະມາຄົມ ສະຫະບໍລິສັດຊູດສາຫະກຳ ;

ປະຕິບັດວຽກການຕ່າງໆທີ່ສະຫະສະມາຄົມສະມາຊິກ ມອບ-
ໝາຍໃຫ້.

ໃນໄລຍະຕົ້ນ ໄດ້ມີແຜນການສ້າງຕັ້ງສູນກາງເສດຖະກິດ ສາມແຫ່ງ ຊຶ່ງລວບລວມເອົາວຽກການການຄ້າ ແລະ ການ ປ້ອນວັດຖຸທັງໝົດ ຂອງຂະແໜງການຊູດສາຫະກຳ ຕ່ຳ ແຜ່ນ. ແລະຕໍ່ມາກໍໄດ້ຈັດຕັ້ງສູນກາງເສດຖະກິດ ຊູດສາຫະ ກຳຝ້າຍ, ແລນ ແລະ ປໍ (ຕໍ່ມາຊູດສະຫະກຳປ່ານແລະ - ໄໝ່ ກໍ່ຂຶ້ນກັບຊູດສາຫະກຳປໍ). ສູນກາງເສດຖະກິດເຫລົ່າ ນີ້ ກໍຈຳເປັນຕ້ອງໄດ້ຂຶ້ນກັບສະພາ (ຫລືວ່າຫ້ອງການ) ຊູດ ສາຫະກຳຕ່ຳແຜ່ນ. ເວົ້າແທ້ກໍໝາຍຄວາມວ່າ ແມ່ນການຈັດ ຕັ້ງສະຫະພັນສະມາຄົມ ສະຫະບໍລິສັດຊູດສາຫະກຳຕ່ຳແຜ່ນ. ໃນເວລາທີ່ມີການພິຈາລະນາບັນຫານີ້ ຄະນະຜູ້ແທນກອງປະ ຊຸມ ໄດ້ສະໜັບສະໜູນທິດທາງເອົາຊູດສາຫະກຳ ຕ່ຳແຜ່ນ ເຂົ້າສະມາຄົມ, ແລະກໍບໍ່ເຫັນດີເຫັນພ້ອມນຳທິດທາງຈັດຕັ້ງ ເປັນຫລາຍສະມາຄົມ ແລະທິດທາງຈັດຕັ້ງສະຫະພັນ ສະມາ ຄົມ. ກອງປະຊຸມເຫັນດີເຫັນພ້ອມ ໃຫ້ສ້າງສະມາຄົມ ດຽວ ໃນແຕ່ລະຂະແໜງ. ການເກີດຂຶ້ນຂອງສະມາຄົມ ຕ່ຳແຜ່ນ ທີ່ວລັດເຊຍ ເປັນດັ່ງນີ້ແລ. ກອງປະຊຸມບໍ່ເຫັນດີ ໃຫ້ບັງຄັບ ສະຫະບໍລິສັດຕ່ຳແຜ່ນ ແລະບໍລິສັດວິສາຫະກິດ ເຂົ້າສະມາ ຄົມ. ຕາມຮ່າງກົດລະບຽບຂອງສະມາຄົມ ທີ່ເອົາມາຜ່ານ ກອງປະຊຸມໄດ້ບົ່ງໄວ້ ກ່ຽວກັບການເຂົ້າເປັນສະມາຊິກ ສະ ມາຄົມ ດ້ວຍຄວາມສະໝັກໃຈ. ກອງປະຊຸມໄດ້ຮັບຮອງ -

ເອົາບັນດາມາດຕາການ ວ່າດ້ວຍການສ້າງຕົ້ນທຶນ ໃຫ້ສາມາຄືນ.

ສະມາຊິກສະມາຄົມບໍລິສັດ ຖືກອະນຸຍາດເຂົ້າຮ່ວມສະຫະຊຸດສາຫະກຳໄດ້ ໃນກໍລະນີທີ່ຕ້ອງການຮັບວັດຖຸດິບ ແລະນ້ຳມັນເຊື້ອໄຟ ຈາກທ້ອງຖິ່ນ ຫລືເພື່ອຈຳໜ່າຍສິນຄ້າ ໃນຕະຫລາດທ້ອງຖິ່ນ. ສາມາດຈັດຕັ້ງສະມາຄົມສະຫະບໍລິສັດ ຊຸດສາຫະກຳອື່ນ ໃນໄລຍະສັ້ນໆໄດ້ ກໍຍ້ອນມີການກະກຽມຢ່າງຄັກແນ່. ຕົກມາເຖິງເດືອນ ໓ ປີ ໑໙໒໒, ໄດ້ຈັດຕັ້ງສະ-ມາຄົມສະຫະບໍລິສັດອື່ນຕື່ມສອງໜ່ວຍ ຄືສະມາຄົມໄມ້ຂີດໄຟ ແລະສະມາຄົມເກືອ, ແລະເດືອນຕໍ່ມາ ສະມາຄົມຊຸດສາຫະກຳໜັງ, ຢາສູບ, ກົນຈັກກະເສດ ແລະອື່ນໆ ໄດ້ຈັດຕັ້ງ-ອື່ນຕື່ມ. ໃນໄລຍະ ໔ ເດືອນ ສະມາຄົມສິບເອັດໜ່ວຍໄດ້ຖືກຈັດຕັ້ງອື່ນ ໝາຍຄວາມວ່າ ໒/໓ ຂອງຈຳນວນສະມາ-ຄົມທັງໝົດ ໄດ້ເກີດອື່ນໃນໄລຍະຟື້ນຟູເສດຖະກິດ. ການທີ່ຂະບວນເຂົ້າສະມາຄົມ ຂອງບໍລິສັດຊຸດສາຫະກຳ ເປັນໄປຢ່າງວ່ອງໄວຄືແນວນັ້ນ ກໍເນື່ອງມາຈາກ ຄວາມຫຍຸ້ງຍາກ-ທາງດ້ານຈຳໜ່າຍສິນຄ້າ. ວິກິດການທາງດ້ານການຄ້າໃນລະດູບານໃໝ່ ປີ ໑໙໒໒ ນັ້ນ ໄດ້ເກີດມະຫາໄພພິບັດທາງດ້ານເສດຖະກິດ ຮ້າຍແຮງອື່ນກວ່າເກົ່າ.

ຂະບວນເຂົ້າສະມາຄົມເກີດໄວເທົ່າໃດແຮງບໍ່ມີຄວາມຫຍຸ້ງຍາກ, ການຮວມສູນການຜະລິດແຮງມີລະດັບສູງ, ສາຍການພົວພັນ ລະຫວ່າງຂະແໜງຊຸດສາຫະກຳ ກັບທ້ອງຕະຫລາດ

ກໍນັບມື້ນັບແຫນ້ນແຟ້ນ ແລະ ແຮງມີບັນຫາວັດຖຸດິບເທົ່ານັ້ນ.

ການຈັດຕັ້ງສະມາຄົມ ກໍມີຈຸດຫມາຍປາຍທາງລັກແມ່ ຂອງມັນ. ຫນ້າທີ່ຕົ້ນຕໍຂອງການຈັດຕັ້ງສະມາຄົມ ແມ່ນການຈັດຕັ້ງການຈຳຫນ່າຍຜະລິດຕະພັນ ຂອງອຸດສາຫະກຳລັດ. ຈຳເປັນຕ້ອງໄດ້ປັບປຸງສາຍພົວພັນກັບຕະຫລາດ ໃຫ້ເປັນປົກກະຕິ,ສະນັ້ນ ກົດລະບຽບຂອງສະມາຄົມ ຈຶ່ງໄດ້ເອົາໃຈໃສ່ພິເສດຕໍ່ກິດຈະການການຄ້າ ຂອງສະຫະບໍລິສັດອຸດສາຫະກຳ.

ທາງດ້ານການປ້ອນວັດຖຸດິບ,ສະມາຄົມມີຫນ້າທີ່ ຮັບປະກັນວັດຖຸດິບ ແລະພາຫະນະຕ່າງໆ ໃຫ້ແກ່ສະຫະບໍລິສັດທີ່ເປັນສະມາຊິກຂອງຕົນ.ນອກຈາກສະຫະບໍລິສັດທີ່ທຳຫນ້າທີ່ ຈຳຫນ່າຍເຊັ່ນສະມາຄົມສະຫະບໍລິສັດນ້ຳມັນ,ຖ່ານຫີນແລະໄມ້ສະມາຄົມອື່ນໆບໍ່ຫນ້ອຍກໍ່ຫລາຍແມ່ນຫວ່ງເຕັ້ນຊອກວັດຖຸດິບ; ສະມາຄົມສະຫະບໍລິສັດຢາສູບປະເພດດີ ແລະສະຫະບໍລິສັດຢາສູບ ປະ-ເພດບໍ່ດີ ແມ່ນຖືເອົາການເກັບຊື້ວັດຖຸດິບ ເປັນກິດຈະການ-ຕົ້ນຕໍ.

ໃນສະພາບຫຍຸ້ງຍາກທາງດ້ານການເງິນ ສະມາຄົມສະຫະບໍລິສັດໄດ້ມີຫນ້າທີ່ສຳຄັນໃນການແກ້ໄຂບັນຫາການເງິນໃຫ້ແກ່ສະຫະບໍລິສັດອຸດສາຫະກຳ ແລະບໍລິສັດວິສາຫະກິດ, ຫມາຍຄວາມວ່າ ສະມາຄົມໄດ້ຮັບສິດແບ່ງປັນທຶນກູ້ຢືມໃຫ້ແກ່ ບັນດາສະຫະບໍລິສັດທີ່ຂຶ້ນກັບຕົນ.

ຕາມລະບຽບການ, ບັນຫາມີລັກສະນະການຜະລິດ ແມ່ນນອກເຫນືອຈາກຫນ້າທີ່ຂອງສະມາຄົມສະຫະບໍລິສັດ ອຸດສາຫະ

ກຳ. ຮູບຮ່າງການຈັດຕັ້ງແຕ່ລະສະມາຄົມແມ່ນຂຶ້ນກັບລັກສະນະແລະຈຸດພິເສດຂອງກິດຈະການ ຂອງສະມາຄົມດັ່ງກ່າວ. ສະມາຄົມໃດທີ່ຖືກຈັດຕັ້ງຂຶ້ນ ບົນຫລັກການຄວາມສະຫມັກໃຈ ສະມາຄົມນັ້ນ ມີກົງຈັກສູນກາງສັບສົນກ່ວາ. ອົງການຂັ້ນສູງຂອງສະມາຄົມ ແມ່ນກອງປະຊຸມຂອງບັນດາຜູ້ຕາງຫນ້າທີ່ມີອຳນາດເຕັມ, ກອງປະຊຸມດັ່ງກ່າວວາງຫນ້າທີ່ຜະລິດ ໃຫ້ແຕ່ລະສະມາຊິກສະມາຄົມ, ກຳນົດທຶນພິເສດ, ທຶນສຳຮອງແລະສິດໃຊ້ທຶນດັ່ງກ່າວ, ຮັບຮອງເອົາງົບປະມານ ແລະໂຄງການ ດຳເນີນງານສະເພາະຫນ້າ ແລະຕະຫລອດຮອດຄຳລາຍງານ - ກ່ຽວກັບການປະຕິບັດທີ່ຜ່ານມາ; ຮັບຮອງເອົາຫລັກການ ວ່າດ້ວຍການສິນເຊື່ອ; ແບ່ງປັນກຳໄລ, ຮັບຮອງເອົາ ຄຳສັ່ງກ່ຽວກັບການບໍລິຫານສະມາຄົມ, ເລືອກຕັ້ງຄະນະບໍລິ ຫານ, ຄະນະກຳມາທິການກວດກາ ແລະຄະນະກຳມາທິການ ຕັດສິນກໍລະນີຂັດແຍ້ງ, ກອງປະຊຸມມີສິດຮັບແລະໄລ່ສະມາຊິກອອກ, ຮັບເອົາກົດລະບຽບຂອງຄະນະບໍລິຫານ ກ່ຽວກັບການຮັບສະມາຊິກໃຫມ່, ມີສິດແກ້ໄຂແລະດັດແປງກົດລະບຽບສະມາຄົມ.

ຄະນະບໍລິຫານສະມາຄົມ ມີຫນ້າທີ່ຕາງຫນ້າສະມາຄົມທາງດ້ານພາຍນອກ, ທາງດ້ານການຄ້າແລະອື່ນໆ, ມີສິດກູ້ຢືມເງິນຢູ່ທະນາຄານ, ແຈກຢາຍສິນຄ້າ ໃຫ້ສະມາຊິກ ຈຳຫນ່າຍ, ວາງລາຄາຂາຍ, ກຽມງົບປະມານ ແລະແຜນການດຳເນີນງານສະມາຄົມ, ຮັບສະມາຊິກໃຫມ່, ຮັບແລະໄລ່ກຳມະກອນແລະພະນັກງານອອກຈາກການ. ໂຄງຮ່າງກົງຈັກສູນກາງສະ

ມາຄົມແມ່ນຂຶ້ນກັບຈຸດປະສົງຂອງສະມາຄົມ.ຕົວຢ່າງ ຢູ່ໃນສະມາຄົມສະຫະບໍລິສັດຕ່ຳແຜ່ນ ນອກຈາກວຽກການ ຈຳຫນ່າຍ, ວຽກການປ້ອນວັດຖຸ ກໍມີບົດບາດສຳຄັນຄືກັນ. ຍ້ອນແນວນັ້ນຢູ່ໃນໂຄງຮ່າງກົງຈັກສູນກາງ ສະມາຄົມຕ່ຳແຜ່ນ ຈຶ່ງມີພະແນກການຄ້າ ແລະພະແນກປ້ອນວັດຖຸ.

ໂຄງຮ່າງບໍລິຫານສະມາຄົມ ທີ່ຖືກຈັດຕັ້ງຂຶ້ນບໍ່ຢູ່ບົນພື້ນຖານຄວາມສະຫມັກໃຈຂອງສະຫະບໍລິສັດ ຊ້ຳພັດມີລັກສະນະແຕກ–ຕ່າງ. ອົງການສູງສຸດຂອງສະມາຄົມດັ່ງກ່າວນີ້ ບໍ່ແມ່ນກອງປະຊຸມຜູ້ຕາງຫນ້າມີອຳນາດເຕັມ ແຕ່ແມ່ນກຸ່ມບໍລິຫານ ທີ່ຖືກແຕ່ງຕັ້ງ ໂດຍສະພາເສດຖະກິດແຫ່ງຊາດສູງສຸດ ຫຼືເວົ້າໄດ້–ວ່າ ແມ່ນຄະນະອຳນວຍການ. ຕົວຢ່າງ ຢູ່ໃນຄະນະບໍລິຫານສະມາຄົມບໍລິສັດນ້ຳມັນ ຈຶ່ງປະກອບດ້ວຍຄະນະຫ້າຄົນນັ້ນແມ່ນຖືກແຕ່ງຕັ້ງຈາກກົມການຄ້າທົ່ວໄປ. ສະມາຄົມບໍລິສັດ ນ້ຳມັນເຄື່ອນໄຫວວຽກງານຕາມຄຳສັ່ງຂອງຄະນະຮັບຜິດຊອບ ການຄ້າ ກົມການຄ້າທົ່ວໄປ ແລະຈຳເປັນຕ້ອງລາຍງານ ຕໍ່ຄະນະດັ່ງກ່າວ ແລະຕໍ່ຄະນະກຳມະການນ້ຳມັນ ເດືອນລະ ໑ ເທື່ອ.

ຍ້ອນໂຄງຮ່າງການຈັດຕັ້ງຂອງສະມາຄົມບໍລິສັດ ແທັນນດືຄແນວນັ້ນ ສະມາຄົມຈຶ່ງສາມາດແກ້ໄຂບັນຫາ ທີ່ອຸດສາຫະກຳ–ຜະເຊີນຫນ້າ.

ນອກຈາກສະມາຄົມບໍລິສັດ ອຸດສາຫະກຳແລ້ວຍັງໄດ້ຈັດຕັ້ງສະຫະບໍລິສັດສົມຍານິຍົມຂຶ້ນອີກ ສະຫະບໍລິສັດສົມຍານິຍົມແມ່ນຮູບການຈັດຕັ້ງອຸດສາຫະກຳລັດຮູບຫນຶ່ງ ຊຶ່ງອີງໃສ່ ຫລັກການ

ການເຂົ້າຮ່ວມໝູ່ແບບມີການຕົກລົງກັນ. ສະຫະບໍລິສັດສັນຍານິຍົມນີ້ ບໍ່ແມ່ນບໍລິສັດວິສາຫະກິດ ແລະບໍ່ມີກຳມະສິດ ເປັນຂອງຕົນເອງ. ສະຫະບໍລິສັດສັນຍານິຍົມ ມີໜ້າທີ່ບໍລິການ, ຕາມທຳມະດາສະຫະບໍລິສັດສັນຍານິຍົມທຳໜ້າທີ່ບໍລິການ ກ່ຽວກັບການຈຳໜ່າຍແລະການຈັດຫາ, ບາງເທື່ອກໍທຳໜ້າທີ່ການ-ເງິນ ແລະໃນກໍລະນີພິເສດທີ່ສຸດ ຈຶ່ງທຳໜ້າທີ່ ກ່ຽວພັນກັບ-ການຜະລິດຂອງບໍລິສັດ ທີ່ເປັນສະມາຊິກຂອງຕົນ.

ຈັດເຂົ້າໃນປະເພດອົງການຈັດຕັ້ງດຽວນີ້, ນອກຈາກສະຫະບໍລິສັດສັນຍານິຍົມດັ່ງກ່າວຍັງມີສະພາກອງປະຊຸມແຕ່ລະຂະ - ແໜງການ ຂອງອຸດສາຫະກຳອີກ. ໃນໄລຍະຟື້ນຟູເສດຖະ-ກິດ ເພິ່ນໄດ້ຈັດຕັ້ງອົງການດັ່ງກ່າວ ເຖິງ ໑໑ ອົງການ. ສະຫະບໍລິສັດສັນຍານິຍົມບາງອົງການ ແມ່ນຈັດຕັ້ງຂຶ້ນເພື່ອ ຈຸດໝາຍປາຍທາງອັນໃດອັນໜຶ່ງ ທີ່ບໍ່ກ້ວາງໄກປານໃດ ເຊັ່ນ ສະຫະບໍລິສັດສັນຍານິຍົມ ທີ່ທຳໜ້າທີ່ຮັບໃຊ້ການຈຳ ໜ່າຍ ແລະຈັດຫາ ຢູ່ໃນຂົງເຂດໃດຂົງເຂດໜຶ່ງເທົ່ານັ້ນ, ນອກຈາກນັ້ນ ຍັງມີສະຫະບໍລິສັດສັນຍານິຍົມ ທີ່ທຳໜ້າທີ່ ພຽງແຕ່ທາງດ້ານເຕັກນິກເທົ່ານັ້ນ.

ການທີ່ຮູບການຈັດຕັ້ງເສດຖະກິດແບບສະຫະບໍລິສັດສັນຍານິຍົມ ຖືກຂະຫຍາຍນັ້ນ ກໍເພາະວ່າ ຢູ່ໃນບາງຂະແໜງ ການອຸດສາຫະກຳ, ຮູບການແບບສະມາຄົມບໍລິສັດນັ້ນບໍ່ເໝາະສົມກັບຕົວຈິງ ຕົວຢ່າງ, ຢູ່ໃນຂະແໜງອຸດສາຫະກຳໄມ້ແລະອຸດສາຫະກຳເຄມີ ຊຶ່ງເງື່ອນໄຂການຜະລິດແຕກຕ່າງກັນ.

ສະຫະບໍລິສັດສົມຍານິຍົມກໍຕອບສະໜອງອຸດສາຫະກຳຂອງລັດໄດ້ ໃນຂັ້ນໃດຂັ້ນໜຶ່ງເທົ່ານັ້ນ ໃນການແກ້ໄຂບັນຫາ ຈຳໜ່າຍແລະຈັດຫາ. ອີກດ້ານໜຶ່ງ, ສະຫະສະມາຄົມສັນຍານິຍົມນີ້ ຍັງຊ່ວຍກະກຽມເອົາອຸດສາຫະກຳ ເຂົ້າສະມາຄົມ ບໍລິສັດອຸດສາຫະກຳອີກ.

ການສ້າງສາຍພົວພັນທາງດ້ານຈັດຕັ້ງ, ດ້ານເສດຖະກິດ ລະຫວ່າງ ສະມາຄົມບໍລິສັດອຸດສາຫະກຳ ແລະ ສະຫະບໍລິສັດ ອຸດສາຫະກຳ

ບັນຫາການສ້າງສາຍພົວພັນທາງດ້ານຈັດຕັ້ງແລະດ້ານເສດຖະກິດ ລະຫວ່າງສະມາຄົມບໍລິສັດ ອຸດສາຫະກຳ ແລະສະຫະບໍລິສັດອຸດສາຫະກຳ ເປັນວຽກງານໃຈກາງ ຂອງລະບົບການຄຸ້ມຄອງອຸດສາຫະກຳ ໃນໄລຍະນັ້ນ.

ສະມາຄົມບໍລິສັດອຸດສາຫະກຳ ໄດ້ທຳໜ້າທີ່ ຈຳໜ່າຍສິນຄ້າຜະລິດ ສ່ວນຫລວງຫລາຍ ຂອງສະຫະບໍລິສັດອຸດສາຫະກຳ (ບາງເທື່ອ ໗໕-໑໐໐%). ຍ້ອນແນວນັ້ນ ສະມາຄົມບໍລິສັດອຸດສາຫະກຳ ຈຶ່ງມີສິດໄປ ຫຍຸ້ງກ່ຽວ ໃນວຽກງານ ການຜະລິດ ແລະວຽກງານເສດຖະກິດ ຂອງສະຫະບໍລິສັດອຸດສາຫະກຳ . ເຖິງວ່າບໍ່ມີສິດໄປຫຍຸ້ງກ່ຽວວຽກການປົກຄອງ ຂອງສະຫະບໍລິສັດ ອຸດສາຫະກຳກໍຕາມ ສະມາຄົມບໍລິສັດອຸດສາຫະກຳ ກໍຍັງໃຊ້ອິດທິພົນຂອງຕົນ ຕໍ່ສະຫະດັ່ງກ່າວ ດ້ວຍວິທີເສດຖະກິດ .

ການຂະຫຍາຍຕົວຂອງຕະຫລາດໄດ້ສົ່ງຜົນສະທ້ອນຢ່າງກ້ວາງ ຂວາງ ຕໍ່ລັກສະນະແລະຮູບຮ່າງຂອງສາຍພົວພັນລະຫວ່າງສະມາຄົມບໍລິສັດອຸດສາຫະກຳແລະສະຫະບໍລິສັດອຸດສາຫະກຳ.

ສະມາຄົມບໍລິສັດອຸດສາຫະກຳ ແມ່ນຖືກຈັດຕັ້ງຂຶ້ນບົນຫລັກການສະໝັກໃຈ. ຄຽງຄູ່ກັບຈຸດດີ ຫລັກການສະໝັກໃຈ ກໍມີຈຸດອ່ອນຄືກັນ. ບາງເທືອສະມາຄົມບໍລິສັດອຸດສາຫະກຳຕັດສິນບັນຫາເສດຖະກິດ ທີ່ຍັງຄ້າງຄາ ຕາມຄວາມເຫັນຂອງ ຕົນເອງ, ແລະກໍລະນີທີ່ບັນດາສະຫະບໍລິສັດ ບໍ່ຮັບຮູ້ບົດບາດ ແກ້ໄຂຂອງສະມາຄົມ ກໍພາໃຫ້ສາຍການພົວພັນລະຫວ່າງ ສະມາຄົມ ແລະສະຫະບໍລິສັດ ບໍ່ເປັນໜ້າເພິ່ງພໍໃຈ.

ສະມາຄົມບໍລິສັດ ກ່າວຫາສະຫະບໍລິສັດວ່າເມົາແຕ່ນຳການຊ່ວງຊີງ, ບໍ່ສຳເລັດຄາດໝາຍທີ່ວາງໃຫ້, ແລະຫາລາຍໄດ້ເພີ່ມບົນຜົນປະໂຫຍດລວມ ຂອງສະມາຄົມ. ປະກົດການອັນຈະແຈ້ງ ທີ່ບອກໃຫ້ຮູ້ວ່າ ສະຫະບໍລິສຸດອຸດສາຫະກຳທຳການຊ່ວງຊີງກັບສະມາຄົມນັ້ນ ແມ່ນບັນຫາທີ່ສະຫະບໍລິສັດແຕ່ງຕັ້ງຜູ້ຕາງໜ້າຂອງຕົນພິເສດ ໄປປະຈຳຢູ່ເຂດຕະຫລາດ ຂອງສະມາຄົມ. ສະຫະບໍລິສັດອຸດສາຫະກຳ ຊ້ຳພັດກ່າວຟ້ອງສະມາຄົມຄືນວ່າ ຄຸ້ມຄອງຕະຫລາດທີ່ມີເງື່ອນໄຂດີ ໄດ້ສຳລັບແຕ່ ຕົນເອງ. ຈາກນັ້ນ ສະຫະບໍລິສັດ ຈຶ່ງທວງໃຫ້ແບ່ງເຂດ ຈຳໜ່າຍຄືນໃໝ່.

ສາຍພົວພັນທາງດ້ານການເງິນ ລະຫວ່າງ ສະຫະບໍລິສັດແລະສະມາຄົມ ບໍລິສັດ ກໍບໍ່ຄ່ອຍດີສະເໝີໄປ. ໃນບາງກໍລະນີ

ສະຫະບໍລິສັດ ກໍຊອກຫາວິທີລົບລ້າງສະມາຄົມບໍລິສັດຊຸດສາຫະ
ກຳ. ໂດຍອີງໃສ່ຜົນປະໂຫຍດສ່ວນຕົວ, ໃນເມື່ອເຫັນວ່າ ຢູ່
ໃນສະມາຄົມບໍ່ມີເງື່ອນໄຂດີ ສະຫະບໍລິສັດກໍເອົາຕົວອອກໂລດ.

ການຂັດແຍ້ງກັນລະຫວ່າງ ສະຫະບໍລິສັດແລະສະມາຄົມສະ
ຫະບໍລິສັດຊຸດສາຫະກຳ ໄດ້ບົ່ງບອກຢ່າງຈະແຈ້ງເຖິງຄວາມ-
ຈຳເປັນ ໃນການແກ້ໄຂບັນຫາພາຍໃນຕື່ມອີກ. ກົດລະບຽບ
ຂອງສະມາຄົມ ກໍບໍ່ມີປະສິດທິພາບພຽງພໍ ໃນການແກ້ໄຂການ
ພົວພັນນີ້ໄດ້. ສິດເສລີພາບໃນການເຂົ້າຮ່ວມສະມາຄົມ ຂອງ
ສະຫະບໍລິສັດເປັນບ່ອນອີງ ເພື່ອທວງໃຫ້ປະຕິບັດຕາມ ຫລັກ
ການເຂົ້າຮ່ວມສະມາຄົມ ດ້ວຍຄວາມສະໝັກໃຈ.ການແກ້ໄຂ
ບັນຫາພາຍໃນ ມີສອງວິທີ, ຄືການພົວພັນບົນພື້ນຖານການຕົກ
ລົງກັນ ແລະວິທີໃຊ້ຮູບການເສດຖະກິດ ເພື່ອແຊກຊຶມເຂົ້າກິດ
ຈະການ ຂອງສະຫະບໍລິສັດ. ວິທີການແກ້ໄຂການພົວພັນພາຍ
ໃນສະມາຄົມ ທີ່ສຳຄັນທີ່ສຸດວິທີໜຶ່ງ ແມ່ນການພົວພັນ ແບບມີ
ການຕົກລົງກັນກ່ອນ.

ການເກີດຂຶ້ນແລະຂະຫຍາຍຕົວ ການພົວພັນແບບມີການຕົກ
ລົງກັນກ່ອນ ລະຫວ່າງສະມາຄົມສະຫະບໍລິສັດ ຊຸດສາຫະກຳ
ແລະສະຫະບໍລິສັດຊຸດສາຫະກຳ ທີ່ເປັນສະມາຊິກນັ້ນ ມີສາຍ
ເຫດມາຈາກຫລັກການ ການເຂົ້າສະມາຄົມຂອງສະຫະບໍລິສັດ
ແລະບໍລິສັດເອກະລາດ ແບບສະໝັກໃຈ. ເຖິງແມ່ນວ່າຢູ່ໃນ
ກໍລະນີສະຫະບໍລິສັດ ຈຳເປັນຕ້ອງເຂົ້າສະມາຄົມກໍຕາມ,ການ
ພົວພັນລະຫວ່າງອົງການດັ່ງກ່າວ ກໍຕ້ອງເປັນໄປຕາມຫລັກ -

ການຕົກລົງກັນ.

ຮູບການພົວພັນແບບສັນຍາ ບໍ່ຄົງຕົວສະເໜີໄປ, ແລະປ່ຽນແປງໄປຕາມສະພາບຕົວຈິງ ຂອງແຕ່ລະຍຸກສະໄໝ. ສິ່ງທີ່ພາໃຫ້ເກີດການພົວພັນແບບສັນຍາ ແມ່ນສະພາບຕະຫລາດ ແລະເງື່ອນໄຂທາງດ້ານການຜະລິດ, ການຄ້າ, ການເງິນ ຂອງສະຫະບໍລິສັດຊຸດສາຫະກຳ, ສະພາບທາງດ້ານເສດຖະ ກິດຂອງສະມາຄົມສະຫະບໍລິສັດຊຸດສາຫະກຳ. ສະພາເສດຖະກິດແຫ່ງຊາດສູງສຸດ, ຄຳແນະນຳຂອງກອງປະຊຸມສະພາເສດຖະກິດ, ການຄ້າແລະອິນສີ່ງ ກໍຄືກອງປະຊຸມຂອງ ຊຸດສາຫະກຳຂະແໜງຕ່າງໆ ມີບົດບາດສຳຄັນ ຕໍ່ການດຳເນີນການພົວພັນແບບສັນຍາ. ອີງການດັ່ງກ່າວມາຂ້າງເທິງນີ້ ເປັນຜູ້ກຳນົດແນວທາງ ແລະລັກສະນະຂອງການພົວພັນແບບສັນຍາຢູ່ໃນຂະແໜງຊຸດສາຫະກຳ ໜີ່ງສະມາຄົມ ແລະການຕັດສິນ ບັນຫາການດຳເນີນການພົວພັນແບບມີສັນຍາ ຂອງສະມາຄົມ ແຕ່ລະບັນຫາ.

ໃນໄລຍະທຳອິດ ການພົວພັນລະຫວ່າງສະຫະບໍລິສັດຊຸດສາຫະກຳ ແລະສະມາຄົມສະຫະບໍລິສັດຊຸດສາຫະກຳແມ່ນເປັນໄປຕາມຫລັກການນະໂຍບາຍພິເສດ ຕໍ່ວຽກງານການຄ້າ. ສະຫະບໍລິສັດຊຸດສາຫະກຳ ຕົກລົງໂອນສິນຄ້າຈຳນວນໜຶ່ງ ຂອງຕົນໃຫ້ແກ່ສະມາຄົມສະຫະບໍລິສັດຊຸດສາຫະກຳ ດ້ວຍເງື່ອນໄຂທີ່ມີການວາງລາຄາຄັກແນ່ໄວ້ລ່ວງໜ້າ. ຢູ່ໃນເງື່ອນໄຂທີ່ ຂາດເຂີນ ວັດຖຸດິບໜູນວຽນຄືແນວນັ້ນ ລະບົບດັ່ງກ່າວ ມີຜົນດີໃຫ້

ທັງສະຫະບໍລິສັດ ແລະສະມາຄົມສະຫະບໍລິສັດເພາະວ່າສະມາຄົມສະຫະບໍລິສັດ ມີວັດຖຸດິບຫມູນວຽນ ຢູ່ໃນການຄຸ້ມຄອງຂອງຕົນ ຈຳນວນຫລວງຫລາຍ. ເຖິງຢ່າງໃດກໍດີໃນເມື່ອໃດຫາກລາຄາສິນຄ້າບໍ່ຫຸ້ນທ່ຽງ ສະຫະບໍລິສັດບໍ່ມີທ່າດີທີ່ຈະສົ່ງ ສິນຄ້າໃຫ້ສະມາຄົມ. ຖ້າສະຫະບໍລິສັດບໍ່ຍອມສົ່ງສິນຄ້າໃຫ້, ສະມາຄົມສະຫະບໍລິສັດ ກໍຕົກຢູ່ໃນສະພາບຫນັກຫນ່ວງເຕັມທີເພາະບໍ່ສາມາດສ້າງສິນຄ້າສຳຮອງ ໄດ້ຕາມຄາດຫມາຍ. ໃນໄລຍະທີ່ສະພາບຕະຫລາດມີຜົນດີແກ່ຕົນເອງ ສະມາຄົມສະຫະບໍລິສັດຊຸດສາຫະກຳ ຊ້ຳພັດບໍ່ມີສິນຄ້າ, ຖ້າມີກໍແມ່ນສິນຄ້າທີ່ຕະຫຼາດບໍ່ຕ້ອງການ, ອັນນີ້ໄດ້ເຮັດໃຫ້ການຫມູນວຽນຂອງສິນຄ້າ ຊຸກຊ້າ ແລະກ້ອນເງິນທຶນເຂົ້າຄັງ ຂອງສະມາຄົມຄືນກໍຊ້າ. ສະມາຄົມແຈກຢາຍວັດຖຸ ຢ່າງກ້ວາງຂວາງ ໃຫ້ແກ່ສະຫະບໍລິສັດແຕ່ຊ້ຳພັດເກັບລາຍໄດ້ເຂົ້າຄັງຄືນນ້ອຍ ຈຶ່ງພາໃຫ້ເກີດຜົນສະທ້ອນບໍ່ດີ. ຍ້ອນວ່າທຶນຫມູນວຽນ ບົກບາງລົງຄືແນວນັ້ນ ສະມາຄົມສະຫະບໍລິສັດ ຈຶ່ງຫັນມາຊອກວິທີທາງ ການພົວພັນໃຫມ່ກັບສະຫະບໍລິສັດຊຸດສາຫະກຳ. ຫມາຍຄວາມວ່າ, ທາງດ້ານຫນຶ່ງແມ່ນຊອກຮູບການການພົວພັນ ທີ່ເຮັດໃຫ້ກິດຈະການການຄ້າ ມີການສ່ຽງໄພນ້ອຍລົງ ແລະຫລີກເວັ້ນການຟຸມເຟືອຍວັດຖຸ, ແລະດ້ານສອງ ແມ່ນເຮັດແນວໃດ ບໍ່ໃຫ້ແຕະຕ້ອງສິດຜົນປະໂຫຍດ ຂອງສະຫະບໍລິສັດຊຸດສາຫະກຳ. ຮູບການດັ່ງກ່າວນັ້ນ ກໍຄືຈັດຕັ້ງຫລັກການໃຫ້ຄ່າຝາກຂາຍຂຶ້ນ.

ຜູ້ລິເລີ່ມແນວຄິດດັ່ງກ່າວນີ້ ແມ່ນສະມາຄົມສະຫະບໍລິສັດຕ່ຳ

ແຜ່ນນັ້ນເອງ ຊຶ່ງໄດ້ກະກຽມສັນຍາໃຫມ່ ກັບສະຫະບໍລິສັດໄວ້ ແລ້ວ ແຕ່ເດືອນພຶດສະພາ ໑໙໘໔ ພູມ. ອີງຕາມເນື້ອໃນສັນ ຍາແລ້ວ ແຕ່ລະສະຫະບໍລິສັດສະມາຊິກ ຈະຕ້ອງ ອະນຸມັດ ໑໕–໔໐% ສິນຄ້າທີ່ຕົນຜະລິດໃຫ້ສະມາຄົມ ເພື່ອເປັນຄ່າຝາກ ຂາຍ, ແຕ່ເຖິງປານນັ້ນກໍຕາມ ຍັງມີບາງສະຫະບໍລິສັດທີ່ເສຍ ຄ່າຝາກຂອດ ໗໐% ສິນຄ້າທີ່ຕົນຜະລິດ. ບາງກໍລະນີ ອັດຕາ ສ່ວນພົນຜະລິດ ທີ່ຈຳເປັນຕ້ອງໄດ້ໂອນໃຫ້ສະມາຄົມສະຫະບໍລິ ສັດ ບໍ່ໄດ້ຂຶ້ນກັບອັດຕາສ່ວນການຜະລິດສິນຄ້າ ແຕ່ຕ້ອງ ໂອນ ໃຫ້ຕາມຈຳນວນທີ່ຍັງໄວ້ໃນສັນຍາ. ສະຫະບໍລິສັດອຸດສາຫະກຳ ມອບສິນຄ້າໃຫ້ສະມາຄົມບໍລິສັດ ດ້ວຍລາຄາທ້ອງຕະຫຼາດ ກັບ ສາງໂຮງງານ. ສະຫະບໍລິສັດ ຕ້ອງໄດ້ຜ່ອນລາຄາ ສິນຄ້າ ໑໐% ໃຫ້ແກ່ສະມາຄົມ ເພື່ອເປັນການໃຊ້ຈ່າຍ ໃນການ ຈຳ ຫນ່າຍສິນຄ້າໃຫ້ແລະພ້ອມກັນກໍຈ່າຍທຳນຽມຝາກຂາຍໃຫ້ອີກ. ອັດຕາສ່ວນຄ່າທຳນຽມຝາກຂາຍ ບໍ່ຄົງຕົວສະເຫມີໄປ, ມັນຂຶ້ນ ກັບສະພາບຕະຫລາດ ແລະການຈຳຫນ່າຍສິນຄ້າໄວຫຼືຊ້າອີກ. ສະມາຄົມເອງກໍມີຈຸດປະສົງຢາກໃຫ້ມີລາຍຈ່າຍຄ່າ ເກັບມ້ຽນ ສິນຄ້າ ໃຫ້ນ້ອຍທີ່ສຸດ ເພື່ອຈະໄດ້ຄ່າທຳນຽມຝາກຂາຍສູງ . ຕາມສັນຍາທີ່ໄດ້ເຊັນກັບສະຫະບໍລິສັດ, ສະມາຄົມ ຕ້ອງລາຍ ງານສະພາບຈຳຫນ່າຍສິນຄ້າຝາກຂາຍ ໃຫ້ສະຫະບໍລິສັດຊາບ ແລະຈຳເປັນຕ້ອງຈ່າຍຄ່າສິນຄ້າທີ່ຝາກຂາຍ ໃຫ້ສະຫະບໍລິສັດ ທັນທີ ຫລັງຈາກຈຳຫນ່າຍສິນຄ້າແລ້ວ. ສະຫະບໍລິສັດ ມີສິດ ເລືອກຮູບການຈ່າຍສິນຄ້າທີ່ຝາກຂາຍ ຈາກສະມາຄົມ; ບາງ

ທີ່ກໍເປັນຮູບການແບບບໍ່ຈ່າຍເປັນເງິນສົດ ແລະແບບເງິນສົດ.

ຮູບການສັນຍາດັ່ງກ່າວນີ້ໄດ້ຂະຫຍາຍໄວທີ່ສຸດ ທົ່ວບໍລິສັດ-ອຸດສາຫະກຳ ທີ່ມີສະມາຄົມ. ການປະຕິບັດຮູບການໃຫ້ຄ່າທຳນຽມຝາກຂາຍນີ້ ແຕ່ລະບ່ອນກໍບໍ່ສະເຫມີພາບກັນ, ຂຶ້ນກັບຈຸດພິເສດຂອງການຜະລິດ ແລະຮູບການຈັດຕັ້ງ.

ຕົວຢ່າງ ສະມາຄົມສະຫະບໍລິສັດຜະລິດຫນັງ ໃຫ້ການກູ້ຢືມແກ່ສະຫະບໍລິສັດສະມາຊິກຂອງຕົນ ຢ່າງກ້ວາງຂວາງ. ສະມາຄົມດັ່ງກ່າວນີ້ ໄດ້ຈ່າຍເງິນລ່ວງຫນ້າເຖິງ 40% ຂອງລາຄາສິນຄ້າ ທີ່ສະຫະບໍລິສັດຈະເອົາມາຝາກຂາຍອີກດ້ວຍ. ໃນສະພາບທີ່ມີເງື່ອນໄຂ ໄດ້ຮັບການກູ້ຢືມລ່ວງຫນ້າຄືແນວນັ້ນ, ບັນດາສະມາຊິກສະມາຄົມ ກໍມີຜົນປະໂຫຍດທີ່ຈະເຊັນສັນຍາຝາກຂາຍກັບສະມາຄົມ. ໃນເມື່ອສະຫະບໍລິສັດ ມີຄວາມສົນໃຈ ຕໍ່ສັນຍາຝາກຂາຍຫລາຍຄືແນວນັ້ນສະມາຄົມກໍຍິ່ງໃຫ້ຄວາມ ສະດວກ ໃນການກູ້ຢືມດີຂຶ້ນອີກ.

ການຂ້າມຜ່ານຈາກລະບົບຂາຍເຫມົາຈ່າຍເງິນສົດໄປສູ່ລະບົບຝາກຂາຍ ແມ່ນບາດກ້າວອັນສຳຄັນໃນການຂະຫຍາຍ ຕົວຂອງລະບົບເຂົ້າຮ່ວມສະມາຄົມ ຂອງສະຫະບໍລິສັດ ອຸດສາຫະກຳ. ເວົ້າຮວມ ກໍແມ່ນຜົນສຳເລັດຂອງໄມ້ວັດເສຖະກິດ ໃນການຊຸກຍູ້ການຈຳຫນ່າຍສິນຄ້າອຸດສາຫະກຳ ຜ່ານສະມາຄົມ.

ແນວໃດກໍດີ, ຮູບການຝາກຂາຍນີ້ ກໍບໍ່ແມ່ນວິທີ ຈຳຫນ່າຍສິນຄ້າອຸດສາຫະກຳ ລະບົບສະມາຄົມວິທີດຽວ, ສະມາຄົມຍັງໃຊ້ຮູບການອື່ນໆອີກ ເຊັ່ນ ການຮັບຊື້ສິນຄ້າແບບ ເຫມົາ

ເລີຍແລະການແລກປ່ຽນສິນຄ້າຊະນິດໜຶ່ງກັບຊະນິດອື່ນໆອີກ; ຮູບການຈຳໜ່າຍຂອງແຕ່ລະບໍລິສັດ ຍັງມີອັນແຕກຕ່າງ ກັນອີກ. ອັນນີ້ກໍເນື່ອງມາຈາກການພົວພັນດ້ານການເງິນ ລະຫວ່າງສະມາຄົມ ແລະສະຫະບໍລິສັດ,ແລະອີກປະການໜຶ່ງ ກໍຍ້ອນວ່າ ສະຫະບໍລິສັດ ຢາກໄດ້ນະໂຍບາຍພິເສດຈາກສະມາຄົມ ທາງດ້ານວັດຖຸດິບ. ເວົ້າຮວມແລ້ວ ແມ່ນ ປີ ໑໙໔໔ ຕໍ່ ປີ ໑໙໔໙ ຮູບການແບບຝາກສິນຄ້າຂາຍນີ້ ໄດ້ນຳໜ້າທີ່ການອື່ນໆໝົດ ໃນການຈຳໜ່າຍສິນຄ້າ.

ເຖິງແນວໃດກໍດີ ຮູບການແບບຝາກຂາຍນີ້ກໍບໍ່ອາດສາມາດຈະເປັນຮູບການໜຶ່ງຮູບການດຽວໄດ້ ໃນການຈຳໜ່າຍສິນ-ຄ້າອຸດສາຫະກຳ, ຍັງມີຮູບການປະສົມອື່ນໆອີກ.ຈຸດອ່ອນຂອງລະບົບຝາກຂາຍນັ້ນ ແມ່ນມັນພາອີງການກວດກາ, ສຳພັນບໍລິສັດອຸດສາຫະກຳ ແລະສະພາເສດຖະກິດແຫ່ງຊາດສູງສຸດກວດກາການເຄື່ອນໄຫວໄດ້ຍາກ. ອີກປະການໜຶ່ງ, ຮູບການດັ່ງກ່າວນີ້ ຈຳກັດການພົວພັນລະຫວ່າງສະມາຄົມ ແລະສະຫະບໍລິສັດ ໃຫ້ມີຢູ່ແຕ່ໃນທ່າມກາງການຈຳໜ່າຍສິນຄ້າ ເທົ່ານັ້ນ . ການໝູນໃຊ້ໄມ້ວັດເສດຖະກິດບໍ່ເຖິງຖ່ອງ ຕໍ່ສະຫະບໍລິສັດນັ້ນໄດ້ພາໃຫ້ສະຫະບໍລິສັດເຫຼົ່ານີ້ ບໍ່ປະຕິບັດໜ້າທີ່ ການຜະລິດໄດ້ເຕັມສ່ວນ.

ສັນຍາຝາກຂາຍ, ສ່ວນໃຫຍ່ໄດ້ເວົ້າເຖິງປະລິມານຜົນຜະລິດເທົ່ານັ້ນ ແຕ່ບໍ່ໄດ້ກຳນົດຄຸນນະພາບສິນຄ້າ ຢ່າງຂາດຕົວ. ໃນໄລຍະທີ່ຕະຫລາດເສລີ ຍັງສ່ວຍໃຊ້ສະພາບຂາດສິນຄ້າ ,

ສະມາຄົມ ຈຶ່ງໄດ້ພະເຊີນໜ້າກັບຄວາມຫຍຸ້ງຍາກ. ໃນເມື່ອມີ
ການຟື້ນຟູເສດຖະກິດຂຶ້ນແດ່ ແລະຕະຫລາດກໍອຸດົມສົມບູນ ໄປ
ດ້ວຍສິນຄ້າແລ້ວ ບັນຫາຄຸນນະພາບກໍເກີດຂຶ້ນ. ໃນເວລານັ້ນ
ສັນຍາຝ່າຍຂາຍ ກໍເລີຍບໍ່ມີຜົນສັກສິດ ໃນການແກ້ໄຂບັນຫານີ້
ອີກ. ອຸດສາຫະກຳທີ່ເຂົ້າສະມາຄົມ ຈະສາມາດປັບປຸງຄຸນນະ
ພາບສິນຄ້າຜະລິດໄດ້ ກໍໃນເມື່ອມີການຣັບປະກັນມາດຕາຖານ
ວັດຖຸດິບ, ອຸປະກອນຕ່າງໆ ແລະວັດຖຸເຄື່ອງສຳເລັດຣູບ ທີຣັບ
ເອົາມາຜະລິດ. ເລື່ອງການຣັບປະກັນມາດຕາຖານວັດຖຸດິບ,
ອຸປະກອນ, ແລະວັດຖຸເຄື່ອງສຳເລັດຣູບນັ້ນ ແມ່ນຂຶ້ນກັບສະມາ
ຄົມ ຊຶ່ງເປັນອົງການທີ່ທຳໜ້າທີ່ຈັດຫາວັດຖຸດິບ, ທຳໜ້າທີ່
ຊ່ວຍການຜະລິດ, ພົວພັນກັບຕະຫລາດພາຍນອກແລະເປັນອົງ
ການທີ່ທຳສັນຍາການຄ້າ ກັບສະມາຄົມອື່ນໆ ກໍຄືສະຫະບໍລິສັດ
ອຸດສາຫະກຳ ຂະແໜງຕ່າງໆ. ເພື່ອຜົນປະໂຫຍດຣວມ ຈຳ
ເປັນທີ່ສຸດຕ້ອງໃຫ້ການເຄື່ອນໄຫວ ທາງດ້ານເສດຖະກິດຂອງ
ສະມາຄົມ ເປັນໄປໃນຣູບການສັນຍາ. ແຕ່ວ່າ ບັນຫາຄຸນນະ
ພາບ ຊ້ຳບໍ່ຖືກບົ່ງໄວ້ໃນສັນຍາຝ່າຍຂາຍ ກັບສະຫະບໍລິສັດອຸດ
ສາຫະກຳ.

ດ້ວຍເຫດຜົນດັ່ງກ່າວຂ້າງເທິງນັ້ນ ຈຶ່ງພາກັນຫັນປ່ຽນມາ
ໃຊ້ຣູບການສັນຍາຣວມ. ຄຳວ່າສັນຍາຣວມນີ້ຕ້ອງເຂົ້າໃຈວ່າ
ແມ່ນສັນຍາທີ່ກ່ຽວພັນກັບທຸກອົງການ ສະມາຊິກຂອງສະມາຄົມ
ແລະໃນເວລາດຽວກັນ ກໍແມ່ນສັນຍາທີ່ກ່ຽວພັນ ກັບແຕ່ລະສະ
ຫະບໍລິສັດອຸດສາຫະກຳ ໂດຍສະເພາະ, ຊຶ່ງຕາມສັນຍາ ດັ່ງ

ກ່າວນີ້ສະຫະບໍລິສັດຈະຕ້ອງໂອນຜົນຜະລິດຂອງຕົນທັງຫມົດໃຫ້ແກ່ສະມາຄົມ.

ແນວຄິດລິເລີ່ມສ້າງສັນຍາຮວມນີ້ ເກີດຂຶ້ນໃນໄລຍະ ລະດູຮ້ອນປີ ໑໙໘໕. ສະມາຄົມສະຫະບໍລິສັດ ເຮັດເຄືອງນຸ່ງ ໄດ້ສະເຫນີ ເຊັນສັນຍາຮວມຮັບເອົາຜົນຜະລິດທັງຫມົດ ຂອງສະຫະບໍລິສັດ ທີ່ເປັນສະມາຊິກຂອງຕົນໄປຈຳຫນ່າຍ.ຕາມຄວາມຈິງແລ້ວ, ເງື່ອນໄຂທາງດ້ານການເງິນ ບໍ່ອຳນວຍໃຫ້ສະມາຄົມ ຮັບເອົາຜົນຜະລິດທັງຫມົດ ຂອງສະຫະບໍລິສັດ ໄປຈຳຫນ່າຍໄດ້. ຕາມສັນຍາຮວມ, ຫມາຍຄວາມວ່າ ມອບສິດໃຫ້ສະມາຄົມຈຳຫນ່າຍ ຢ່າງນ້ອຍບໍ່ໃຫ້ຫລຸດ ໗໐% ຜົນຜະລິດທັງຫມົດ ຂອງສະຫະບໍລິສັດ. ຕາມເນື້ອໃນສັນຍາ,ສະຫະບໍລິສັດຕ້ອງສົ່ງສິນຄ້າໃຫ້ສະມາຄົມ ດ້ວຍລາຄາຕ່ຳສຸດ. ການວາງ-ລາຄາສິນຄ້າ ຕ້ອງອີງໃສ່ການຄິດໄລ່ສະເພາະຫມວດແລະປະເພດສິນຄ້າ, ຕ້ອງຄິດໄລ່ລາຄາແຜ່ນແພ, ເງິນເດືອນ ຂອງພະນັກງານ, ຄ່າຂົນສົ່ງ, ພາສີອຸດສາຫະກຳ ແລະສົມກັບອີກ ໑%. ຄ່າຂົນສົ່ງສິນຄ້າເທົ່າກັບ ໑໐໐-໑໑໕% ຂອງເງິນເດືອນແລ້ວ. ການຊຳລະຄ່າສິນຄ້າສຳເລັດຮູບ ຕ້ອງບໍ່ໃຫ້ຊ້າກ່ວາສາມເດືອນ, ເກີນກຳນົດດັ່ງກ່າວ ສະມາຄົມຕ້ອງຮັບຜິດຊອບ ຈ່າຍຄ່າສິນຄ້າ ທີ່ໄດ້ຮັບຈາກສະຫະບໍລິສັດເຕັມສ່ວນ , ຫລືບໍ່ດັ່ງນັ້ນ ກໍຕ້ອງຮັບຈ່າຍຄ່າສິນຄ້າສະເພາະ ທີ່ຕົນໄດ້ຮັບ, ພ້ອມກັນນັ້ນ ຈະຕ້ອງສົ່ງສິນຄ້າທີ່ຈຳຫນ່າຍ ບໍ່ໄດ້ຄືນໃຫ້ສະຫະບໍລິສັດ. ແຕ່ເຖິງຢ່າງໃດກໍດີ ຍ້ອນວ່າມີຄວາມຫຍຸ້ງຍາກທາງ

ດ້ານການເງິນແລະຍ້ອນຂາດເຂີນວັດຖຸໝູນວຽນການປະຕິຮູບລະບົບພົວພັນດັ່ງນີ້ ກໍບໍ່ໄດ້ຮັບຜົນຕາມເຄີຍ ສຳລັບສະມາຄົມ-ສະຫະບໍລິສັດ.

ສິ່ງທີ່ເປັນໜ້າສົນໃຈທີ່ສຸດ, ແມ່ນເລື່ອງຂອງສະມາຄົມສະຫະບໍລິສັດຈຳໜ່າຍເກືອ. ເດືອນເມສາ ໑໙໘໔ ສະມາຄົມຈຳໜ່າຍເກືອ ໄດ້ເຊັນສັນຍາກັບສະຫະບໍລິສັດ ດິນເຄືອບ ຊູກະລາອີນາ. ຕາມສັນຍາດັ່ງກ່າວ ສະມາຄົມຈຳໜ່າຍ ເກືອ ຮັບເອົາຜົນຜະລິດ ຂອງສະຫະບໍລິສັດໄປຈຳໜ່າຍ(ຖ້ວຍຈານ ດິນເຄືອບ, ເຄື່ອງປັ້ນດ້ວຍດິນຈີ່ ແລະແກ້ວ). ສັນຍາໄດ້ຂີ່ງໄວ້ ກ່ຽວກັບຮູບການຈຳໜ່າຍ ແລະການຊຳລະລາຄາ : - ໝາຍຄວາມວ່າ ໕໐% ຂອງລາຄາສິນຄ້າຕ້ອງຈ່າຍສົດ ແລະ ອີກ ໕໐% ຕ້ອງຈ່າຍຄ່າລາຄາຝາກຂາຍ. ສັນຍາຂີ່ງໄວ້ອີກວ່າ ໃນໄລຍະຫົກອາທິດ ສະມາຄົມຕ້ອງຈຳໜ່າຍສິນຄ້າ ທີ່ສົ່ງໃຫ້ສຳເລັດ. ສັນຍາຍັງຂີ່ງໄວ້ອີກ ກ່ຽວກັບປະເພດສິນຄ້າ ແລະ ເຂດຈຳໜ່າຍສິນຄ້າ. ຈຸດພິເສດສຳຄັນຂອງສັນຍາດັ່ງ ກ່າວ ແມ່ນການຍົກສູງສິດກວດກາ ແລະໄກ່ເກ່ຍຂອງສະມາຄົມ. ບັນດາຜູ້ກວດກາຂອງສະມາຄົມ ມີສິດຕິດຕາມການປະຕິບັດ ແຜນການຜະລິດຂອງໂຮງງານ, ມີສິດຕິດຕາມຄຸນນະພາບ ສິນຄ້າ ແລະການແຈກຢາຍສິນຄ້າໃນເຂດຕ່າງໆ.

ນອກຈາກຮູບການສັນຍາຮວມສອງແບບ ທີ່ກ່າວມາຂ້າງ - ເທິງ ຍັງມີຮູບການສັນຍາຮວມອື່ນໆອີກ.

ເວົ້າຮວມແລ້ວ ການປະຕິບັດຮູບການສັນຍາຮວມນີ້ ມີຂີດ

ບາດສຳຄັນໃນການຈັດຕັ້ງການຈຳໜ່າຍສິນຄ້າ ສຳລັບຊຸດສາຫະກຳ ທີ່ມີສະມາຄົມ. ມັນໄດ້ຊຸກຍູ້ມີແຜນການໃນການພົວພັນລະຫວ່າງ ສະມາຄົມແລະສະຫະບໍລິສັດ. ແລະສັນຍາຮວມ ນີ້ຍັງໄດ້ຊຸກຍູ້ເຮັດໃຫ້ການພົວພັນການຄ້າ ລະຫວ່າງ ສະມາຊິກສະມາຄົມ ເປັນໄປຕາມແຜນການ. ຮູບການຈຳໜ່າຍສິນຄ້າດັ່ງກ່າວ ຍັງມີຜົນດີໃຫ້ແກ່ສະຫະບໍລິສັດອີກດ້ວຍ. ສະມາຄົມແມ່ນອົງການຕົ້ນຕໍ ຫລືອົງການດຽວ ທີ່ທຳໜ້າທີ່ຈຳໜ່າຍສິນຄ້າ ໃຫ້ສະຫະບໍລິສັດ. ສະນັ້ນ ເວລາກຽມແຜນການຜະລິດກໍຕ້ອງໄດ້ອີງໃສ່ ຄວາມຮຽກຮ້ອງຕ້ອງການ ຂອງສະມາຄົມ ຄືກັນ. ໃນເວລາດຽວກັນ ສັນຍາຮວມຍັງໄດ້ປົດປ່ອຍວຽກການຈຳໜ່າຍສິນຄ້າຂອງຈາກໜ້າທີ່ຂອງສະຫະບໍລິສັດ. ສິ່ງໄດ້ກ່າວມານີ້ ໄດ້ອຳນວຍ ຄວາມສະດວກໃຫ້ສະຫະບໍລິສັດໄດ້ສຸມຄວາມພະຍາຍາມໃສ່ການຜະລິດ, ແລະກໍສາມາດລົບລ້າງກົງຈັກຮັບຜິດຊອບ ການຈຳໜ່າຍຂອງຕົນອີກ. ໃນເມື່ອຫລັກການວິສາຫະກິດ ແໜ້ນໜາດີແລ້ວ ລະບົບສັນຍາຮວມ ກໍມີຄວາມໝາຍສຳຄັນ ໃນການປັບປຸງຫລັກການສັນຍາ ໃນທ່າມກາງ-ສະຫະບໍລິສັດ ສະມາຊິກສະມາຄົມ.

ການຂ້າມຜ່ານໄປສູ່ລະບົບສັນຍາຮວມນີ້ ເປັນບາດກ້າວອັນສຳຄັນ ໃນການເສີມຂະຫຍາຍສາຍພົວພັນພາຍໃນ ລະຫວ່າງບໍລິສັດຊຸດສາຫະກຳ. ເຖິງແມ່ນສັນຍາຮວມ ໄດ້ຊຸກຍູ້ໃຫ້ການຜະລິດໃກ້ຊິດກັບຕະຫລາດກໍຕາມ ແຕ່ຄວາມຮຽກຮ້ອງ ຕ້ອງການຂອງຕະຫລາດແລະສິນຄ້າຜະລິດ ຍັງຫ່າງເຫີນກັນຢູ່. ອັນ

ນີ້ບໍ່ໄດ້ໝາຍເຖິງປະລິມານ ແຕ່ຫາກໝາຍເຖິງ ຄຸນນະພາບ
ຂອງສິນຄ້າ ແລະປະເພດສິນຄ້າ ຍັງບໍ່ສອດຄ່ອງກັບ ຄວາມ
ຮຽກຮ້ອງຕ້ອງການຂອງຕະຫລາດ. ຈະແກ້ໄຂບັນຫານີ້ໄດ້ກໍໃນ
ເມື່ອມີການກ້າວໄປສູ່ລະບົບ ແບບສັ່ງສິນຄ້າເທົ່ານັ້ນ.

ນັບຕັ້ງແຕ່ມີການຫັນປ່ຽນເຂົ້າສູ່ລະບົບ ແບບສັ່ງ ຂະບວນ
ການຜະລິດສິນຄ້າສະເພາະຂອງໂຮງຈັກໂຮງງານໄດ້ລົງເລິກ
ກ່ວາເກົ່າ.

ການຈັດຕັ້ງວຽກການຈຳໜ່າຍ ດ້ວຍວິທີສັ່ງກ່ອນລ່ວງໜ້າ
ນີ້, ດ້ານໜຶ່ງແມ່ນອີງໃສ່ຫລັກການ ແບ່ງປັນລວມສູນການສັ່ງ
ຜະລິດສິນຄ້າ ລະຫວ່າງສະຫະບໍລິສັດ ຢ່າງເຄັ່ງຄັດ, ດ້ານ
ສອງ ແມ່ນຊຸກຍູ້ໃຫ້ສາຂາສະມາຄົມ ສະຫະບໍລິສັດຕໍ່ແຜ່ນທົ່ວ
ລັດເຊຍໃນທ້ອງຖິ່ນຜະລິດສິນຄ້າປະເພດໃດປະເພດໜຶ່ງແລະ
ຮັບປະກັນໃຫ້ມີບໍລິມາດສິນຄ້າພຽງພໍ ຂາຍອອກສູ່ຕະຫລາດ .

ການຄົ້ນຄ້ວາແຜນການສັ່ງຜະລິດສິນຄ້າ ແມ່ນເລີ່ມຕົ້ນຢູ່ໃນແຕ່
ລະຂະແໜງ ສາຂາຂອງສະມາຄົມ. ແຕ່ລະຂະແໜງ ສາຂາ
ຂອງສະມາຄົມ ກໍເປີດປະຊຸມຂຶ້ນ, ເຂົ້າຮ່ວມໃນກອງປະຊຸມ-
ດັ່ງກ່າວ ຍັງມີຊ່ຽວຊານຂອງແຕ່ລະຂະແໜງການຄ້າແລະບັນ
ດາຜູ້ຕາງໜ້າອົງການການຄ້າທ້ອງຖິ່ນອີກດ້ວຍ. ກອງປະຊຸມໄດ້
ວາງຄຳແນະນຳຜະລິດ ຊຶ່ງໃນຕົວກໍເປັນພື້ນຖານຜ່ານການຜະ
ລິດ ແຕ່ລະໄຕມາດຂອງຂະແໜງອຸດສາຫະກຳ. ແຜນການສະ
ເໜີຜະລິດຂະແໜງດັ່ງກ່າວນັ້ນ ກໍໄປຜ່ານຄະນະຄົ້ນຄ້ວາປະ
ເພດສິນຄ້າ, ແລະກໍແມ່ນຄະນະດັ່ງກ່າວນີ້ເອງ ເປັນຜູ້ຮຽບ

ຮຽງແຜນການຜະລິດ ໃຫ້ບັນດາສະຫະບໍລິສັດອຸດສາຫະກຳທັງຫລາຍ. ໂດຍຄວາມເຫັນດີເຫັນພ້ອມ ຈາກບັນດາສະຫະ ບໍລິສັດ ຄະນະຮຽບຮຽງປະເພດສິນຄ້າ ຈຶ່ງກຳນົດປະເພດສິນຄ້າທີ່ຕ້ອງຜະລິດໃນໄລຍະ ແຕ່ລະໄຕມາດ, ຈາກນັ້ນ ສະມາຄົມສະຫະບໍລິສັດ ຈຶ່ງແບ່ງປັນແຜນການຜະລິດ ໃຫ້ແຕ່ລະສະຫະບໍລິສັດ, ແລະພ້ອມກັນນັ້ນ ກໍກຳນົດປະເພດແຜ່ນແພ, ຊະນິດ, ບໍລິມາດ, ເຂດຈຳໜ່າຍ ແລະກຳນົດການຜະລິດອີກດ້ວຍ.

ການພົວພັນບົນພື້ນຖານສັນຍາ ກໍມີບົດບາດສຳຄັນ ໃນການປັບປຸງສາຍພົວພັນ ພາຍໃນສະມາຄົມ ແຕ່ກໍຍັງບໍ່ທັນ ສາມາດແກ້ໄຂບັນຫາຂໍ້ຂັດແຍ້ງ ລະຫວ່າງສະຫະບໍລິສັດແລະສາມາຄົມໄດ້ ແລະເພື່ອແກ້ໄຂຂໍ້ຜິດພາດ ລະຫວ່າງສະມາຊິກສະມາຄົມກໍແຮງຍັງໄກ. ຄະນະບໍລິຫານສະມາຄົມ, ຄະນະກຳມາ ທິການກວດກາ ແລະສະພາຫລວງ ບັນດາຜູ້ຕາງໜ້າມີອຳນາດເຕັມ ຂອງສະມາຄົມ ມີສິດແລະໜ້າທີ່ແກ້ໄຂຂໍ້ຂັດແຍ້ງທີ່ເກີດຂຶ້ນ ລະຫວ່າງສະມາຊິກສະມາຄົມ. ຕາມບົດຮຽນທີ່ຜ່ານ ມາຍັງບໍ່ທັນມີກໍລະນີ ທີ່ສະຫະບໍລິສັດ ມີຄວາມຮັບຜິດຊອບ ຕໍ່ສານຖານລະເມີດກົດລະບຽບຂອງສະມາຄົມ ຈັກເທື່ອເລີຍ. ການທີ່ສະຫະບໍລິສັດເຂົ້າຮ່ວມສະມາຄົມ ດ້ວຍຄວາມສະໝັກໃຈ ນີ້ເອງ ທີ່ເຮັດໃຫ້ສະຫະບໍລິສັດ ບໍ່ມີຄວາມຮັບຜິດຊອບ ຕໍ່ສານ. ແຕ່ເຖິງປານນັ້ນກໍດີ ຍັງມີກໍລະນີທີ່ສະຫະບໍລິສັດ ເອົາຕົວອອກຈາກສະມາຄົມ ໃນເວລາບໍ່ພໍໃຈ ຕໍ່ບັນຫາໃດບັນຫາໜຶ່ງ. ໃນກໍລະນີດັ່ງກ່າວ ສະມາຄົມໄດ້ໃຊ້ຮູບການເສດຖະກິດໜີບ. ຫຼັງ

ຈາກເອົາຕົວອອກຈາກສະມາຄົມແລ້ວສະຫະກໍຕ້ອງໄດ້ພະເຊີນໜ້າກັບບັນຫາວັດຖຸດິບ, ເງິນທຶນສິນເຊື່ອ, ວັດຖຸໝູນວຽນອີກ.

ໃນບາງກໍລະນີພິເສດເທົ່ານັ້ນ ທີ່ສະມາຄົມຕັດສິນໃຈ ປົດປ່ອຍສະຫະບໍລິສັດ ລະເມີດກົດລະບຽບ ອອກຈາກອົງການຈັດຕັ້ງ. ອີງຕາມເນື້ອໃນກົດລະບຽບສະມາຄົມແລ້ວມີແຕ່ກອງປະຊຸມ ຂອງບັນດາຜູ້ຕາງໜ້າມີອຳນາດເຕັມເທົ່ານັ້ນຈຶ່ງມີສິດໄລ່ສະຫະບໍລິສັດ ອອກຈາກສະມາຄົມໄດ້. ແຕ່ວ່າເວລາເອົາຕົວອອກຈາກສະມາຄົມ ດ້ວຍໃຈສະໝັກ ກໍຄືກໍລະນີຖືກໄລ່ອອກສະຫະບໍລິສັດ ຈະບໍ່ສາມາດດຳເນີນກິດຈະການຂອງຕົນເອກະລາດໄດ້. ສະນັ້ນ ໃນເວລາບໍ່ພໍເທົ່າໃດ ສະຫະບໍລິສັດ ກໍ່ຫັນມາເຂົ້າສະມາຄົມອີກ ຖ້າບໍ່ດັ່ງນັ້ນ ກໍຂໍເຊັນສັນຍາພົວພັນ ກັບສະມາຄົມພິເສດ ນອກຈາກລະບົບສະມາຄົມທຳມະດາ.

ຍຸກສະໄໝຟື້ນຟູເສດຖະກິດ ແມ່ນບາດກ້າວສຳຄັນ ຂອງການກໍ່ສ້າງສາຍພົວພັນ ລະຫວ່າງສະຫະບໍລິສັດ ແລະ ສະມາຄົມ, ແລະແມ່ນໄລຍະວິວັດທະນາການ ຂອງສາຍການພົວພັນພາຍໃນ. ໃນສະໄໝທີ່ສະມາຄົມ ກໍຫາຈະເລີ່ມເກີດ ພັນທະນາສັນຍາ ລະຫວ່າງສະຫະບໍລິສັດ ແລະສະມາຄົມແມ່ນອີງໃສ່ຫລັກການການຄ້າໂດຍກົງ ແຕ່ຕົກມາໄລຍະທ້າຍຂອງສະໄໝຟື້ນຟູເສດຖະກິດ ສ່ວນຫລາຍແມ່ນອີງໃສ່ແຜນການ. ໂດຍສວຍໃຊ້ວິທີທາງເສດຖະກິດເປັນໄມ້ວັດ, ສະພາເສດຖະກິດ ແຫ່ງຊາດສູງສຸດ ແລະສະມາຄົມ ສາມາດປະຕິບັດກົດລະບຽບຢ່າງເຄັ່ງຄັດ ຕໍ່ສະຫະບໍລິສັດສະມາຊິກສະມາຄົມດ້ວຍຜົນສຳເລັດ.

ສິ່ງດັ່ງກ່າວນີ້ ພາໃຫ້ມີການປັບປຸງການຈັດຕັ້ງຂອງສະມາຄົມ, ແລະພາໃຫ້ເກີດມີຫລັກການພົວພັນ ທີ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ຂອງຍຸກສະໄຫມຟື້ນຟູຊຸດສາຫະກຳ.

ບັນດາທິດທາງຕົ້ນຕໍຂອງນະໂຍບາຍເອົາຊຸດສາຫະກຳເຂົ້າສະມາຄົມຂອງສະພາເສດຖະກິດແຫ່ງຊາດສູງສຸດ.

ບັນຫາເອົາຊຸດສາຫະກຳ ຂອງລັດເຂົ້າສະມາຄົມ ເປັນສູນແຫ່ງຄວາມສົນໃຈ ຂອງສະພາເສດຖະກິດແຫ່ງຊາດ ສູງສຸດທຸກເວລາ.

ແຕ່ປີ ໑໙໔໘ ຫາປີ ໑໙໔໙, ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ປະກອບສ່ວນຢ່າງຕັ້ງຫນ້າ ສະເພາະເຂົ້າໃນວຽກການ ເອົາຊຸດສາຫະກຳເຂົ້າສະມາຄົມ. ສະພາສູງໄດ້ສຸມກຳລັງຂອງຕົນ ເຂົ້າໃນການຮັບຮອງເອົາກົດລະບຽບ ແລະ ໃນການແກ້ໄຂຂໍ້ຂັດແຍ້ງ ລະຫວ່າງສະຫະບໍລິສັດ ແລະສະມາຄົມ, ໃຫ້ການຊ່ວຍເຫລືອທາງດ້ານວັດຖຸ ແລະຮ່າງບັນດາກົດຫມາຍ. ຖືວ່າສະມາຄົມ ແມ່ນອົງການຈັດຕັ້ງສະຫມັກໃຈ, ສະນັ້ນສະພາເສດຖະກິດແຫ່ງຊາດສູງສຸດ ຈຶ່ງເຂົ້າໄປຫຍຸ້ງກ່ຽວ ຢ່າງຫ້າວຫັນ ໃນການນຳພາວຽກການຜະລິດ.

ໃນໄລຍະປີ ໑໙໔໘-໑໙໔໙ ທັດສະນະດັ່ງກ່າວຂອງສະພາເສດຖະກິດແຫ່ງຊາດສູງສຸດ ໃນການແກ້ໄຂບັນຫາ ສະມາຄົມ

ແມ່ນມີເຫດຜົນເໝາະສົມດີ. ເງື່ອນໄຂສຳຄັນອັນໜຶ່ງ ທີ່ພາ-
ໃຫ້ບູລະນະຊຸດສາຫະກຳ ເຊື່ອມໂຊມຂຶ້ນໄດ້ນັ້ນແມ່ນການຮູ້ຈັກ
ກຳນົດການພົວພັນທາງດ້ານເສດຖະກິດ ຢ່າງເໝາະສົມບໍ່ວ່າ
ຢູ່ໃນແຕ່ລະຂະແໜງ ກໍຄືຢູ່ໃນແຕ່ລະເຂດຂອງປະເທດ. ເພື່ອ
ຈະເຮັດໄດ້ຄືແນວນັ້ນ ກໍຕ້ອງຮູ້ຈັກສວຍໃຊ້ສະພາບຄວາມເປັນ
ຈິງ ຂອງຊຸດສາຫະກຳ ໃນໄລຍະນັ້ນ ແລະປະເພນີທີ່ມີ ມາ
ແລ້ວ ສົມທົບເຂົ້າກັນ. ສະຫະບໍລິສັດ ແລະບໍລິສັດເອກະລາດ
ຈະປະຕິບັດໜ້າທີ່ດັ່ງກ່າວໄດ້ດີ ກ່ວາສະພາເສດຖະກິດ ແຫ່ງ
ຊາດສູງສຸດ ຊຶ່ງຢູ່ຫ່າງໄກຕົວຈິງຈາກການຜະລິດ. ສະພາບດັ່ງ
ກ່າວຂອງບັນຫາ ໄດ້ເຮັດໃຫ້ສະມາຄົມບໍລິສັດເປັນເອກະລາດ
ເກືອບຈະບໍ່ຂຶ້ນນຳສະພາເສດຖະກິດແຫ່ງຊາດສູງສຸດເລີຍ. ສະ
ມາຄົມ ສະຫະບໍລິສັດປະຕິບັດນະໂຍບາຍການຄ້າ ແລະນະໂຍ
ບາຍຈັດຫາວັດຖຸດິບ ຢ່າງເອກະລາດ, ປັບປຸງສາຍພົວພັນກັບ
ສະຫະບໍລິສັດສະມາຊິກຂອງຕົນ, ວົງເຕັ້ນທາແລະແຈກຢາຍ-
ສິນເຊື່ອ. ປະກົດການອັນໜຶ່ງທີ່ຊີ້ບອກ ກ່ຽວກັບຄວາມເປັນ-
ເອກະລາດຂອງສະມາຄົມ ແມ່ນການຂຶ້ນລາຄາສິນຄ້າ ຜະລິດ
ຈາກໂຮງຈັກໂຮງງານ. ການທີ່ສິນຄ້າກະສິກຳມີລາຄາຕ່ຳນັ້ນ
ໝາຍຄວາມວ່າ ມີຄວາມແຕກຕ່າງກັນ ຂອງສາຍພົວພັນຕະ-
ຫລາດ ລະຫວ່າງຕົວເມືອງແລະຊົນນະບົດ, ອັນນີ້ຂັດແຍ້ງກັບ
ທິດທາງນະໂຍບາຍເສດຖະກິດໃໝ່. ສະນັ້ນ ໃນທີ່ສຸດທິດທາງ
ຂອງສະພາເສດຖະກິດແຫ່ງຊາດສູງສຸດ ຊຶ່ງໃຫ້ຄວາມເປັນເອ
ກະລາດ ແກ່ສະມາຄົມແມ່ນບໍ່ຖືກຕ້ອງ.

ໃນໄລຍະເຄິ່ງປີສຸດທ້າຍ ໑໙໘໓, ການພົວພັນກັບສະມາຄົມສະຫະບໍລິສັດ ແມ່ນຖືກດັດແປງ, ໄດ້ມີການຕົກລົງຄົ້ນຄ້ວາຄືນໃຫມ່ ເພື່ອເຮັດແນວໃດຮັກສາສະມາຄົມໃຫ້ຄົງຕົວ.

ຄະນະກຳມະທິການ ເພື່ອຕິດຕາມສະມາຄົມສະຫະບໍລິສັດ-ຈຳເປັນຕ້ອງສືບຮູ້ສອງບັນຫາດັ່ງນີ້: ສະມາຄົມເປັນຮູບການ-ຈັດຕັ້ງຜົວເຜີນ ພໍແຕ່ເພື່ອລົບລ້າງການຊ່ວງຊິງກັນແລະເລືອກເຟັ້ນເອົາແຕ່ບໍລິສັດທີ່ດີເດັ່ນຫັ້ນຫຼືບໍ່; ສະມາຄົມບໍ່ໄດ້ແຕະຕ້ອງສິດຜົນປະໂຫຍດຂອງຜູ້ຊົມໃຊ້ຜົນຜະລິດຫຼືບໍ່ໃນຖານະທີ່ເປັນອົງການຜູກຂາດໃນທ້ອງຕະຫຼາດ. ໂຄງການຕິດຕາມ ຂອງຄະນະກຳມາທິການໄດ້ກວມບັນຫາຮອບດ້ານຂອງການ ເຄື່ອນໄຫວຂອງສະມາຄົມ: ໂຄງຮ່າງຈັດຕັ້ງ, ສະພາບການເງິນ, ສະພາບການຄ້າ, ການຜະລິດແລະອິດທິພົນຂອງສະມາຄົມ ຕໍ່ວຽກງານຂອງສະຫະບໍລິສັດອຸດສາຫະກຳ ແລະ ອື່ນໆ.

ຈາກການກວດກາຕິດຕາມ ຂອງຄະນະກຳມະທິການມີບາງສະມາຄົມຖືກລົບລ້າງ ແລະກິດຈະການຂອງບາງສະມາຄົມ ກໍຖືກຈຳກັດຮັດແຄບອີກຕື່ມ.

ການຮັບຮູ້ວ່າສະມາຄົມສະຫະບໍລິສັດ ຈຳເປັນຕ້ອງຢືນຍົງ-ຄົງຕົວນັ້ນ ໄດ້ເຮັດໃຫ້ສະພາເສດຖະກິດແຫ່ງຊາດສູງສຸດຕ້ອງປ່ຽນນະໂຍບາຍຂອງຕົນ ຕໍ່ສະມາຄົມ. ປີ ໑໙໘໔ເຖິງ ໑໙໘໕ ໄດ້ເກີດມີການວາງຫນ້າທີ່ສະເພາະຫນ້າ ເພື່ອເສີມສ້າງ ສະມາຄົມ ໃຫ້ສູນກາງໄກ່ເກັ່ຍ ລະຫວ່າງແຕ່ລະຂະແຫນງອຸດສາຫະກຳ ແລະພ້ອມກັນນັ້ນ ກໍຕ້ອງໄດ້ຮັກສາຫນ້າທີ່ ເຄື່ອນໄຫວ

ຄ້າຂາຍໃຫ້ແກ່ສະມາຄົມຄືກັນ. ນະໂຍບາຍຂອງສະພາເສດຖະກິດແຫ່ງຊາດສູງສຸດ ແລ້ວແມ່ນຢາກຮວບຮວມເອົາອຸດສາຫະກຳທັງໝົດ ຂອງລັດເຂົ້າສະມາຄົມ, ປັບປຸງການຈັດຕັ້ງຂອງສະມາຄົມ, ແບ່ງວຽກງານຈະແຈ້ງ ລະຫວ່າງ ສະຫະບໍລິສັດ (ບໍລິສັດຜະລິດ) ແລະສະມາຄົມ (ອົງການຈັດຫາແລະຈຳໜ່າຍ), ເຮັດໃຫ້ກິດຈະການການຄ້າແລະການຜະລິດ ຂອງອຸດສາຫະກຳ ໃຫ້ຫຍັບບໍ່ເຂົ້າກັນ, ຍົກສູງບົດບາດ ໄກ່ເກັ່ຍຂອງສະມາຄົມສະຫະບໍລິສັດ.

ໜ້າທີ່ຕົ້ນຕໍແລ້ວແມ່ນການກຳນົດບັນດາຫລັກການ ຈັດຕັ້ງແລະກໍ່ສ້າງສະມາຄົມສະຫະບໍລິສັດ. ບັນດາຫລັກການ ສະມາຄົມອຸດສາຫະກຳ ສະໄໝທີ່ນິຍົມໃນເວລານັ້ນບໍ່ສອດຄ່ອງເສຍແລ້ວ. ໂດຍອີງໃສ່ການດັດສ້າງປະຕິວັດ ແລະບົດຮຽນ ສ່ວນໃດສ່ວນໜຶ່ງ ທີ່ສະສົມໄວ້ນັ້ນ ຈຳເປັນຕ້ອງໄດ້ກຳນົດຫຼັກການກ່ຽວກັບການເອົາອຸດສາຫະກຳ ເຂົ້າສະມາຄົມ ໃຫ້ແທດເໝາະກັບເງື່ອນໄຂລະບອບສັງຄົມ ແລະເສດຖະກິດໃໝ່ . ຈະບັນລຸຄາດໝາຍດັ່ງກ່າວນີ້ໄດ້ ກໍຕ້ອງອີງໃສ່ວຽກການ ຜະລິດ ສ້າງໄລຍະຍາວນານ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ໂດຍມີການປະສານສົມທົບ ກັບສະມາຄົມສະຫະບໍລິສັດ, ສະຫະບໍລິສັດ, ບໍລິສັດສຳຄັນຕ່າງໆ, ອົງການຈັດຕັ້ງມະຫາຊົນອຸດສາຫະກຳ, ບໍລິສັດອື່ນສິ່ງ, ການຄ້າແລະກຳມະບານ.

ລັກສະນະອັນຕົ້ນຕໍອັນໜຶ່ງ ຂອງຂະບວນການເອົາອຸດສາຫະກຳ ເຂົ້າສະມາຄົມເວລານັ້ນ ແມ່ນທີ່ນເອກະຊົນຮວມມາ,

ສະມາຄົມຖືກຈັດຕັ້ງຂຶ້ນ ໃນສະພາບທີ່ທຶນເອກະຊົນຟື້ນຕົວນ້ອຍໜຶ່ງ. ຈາກນັ້ນ ໃນໄລຍະນະໂຍບາຍເສດຖະກິດໃໝ່, ໃນຖັນແຖວຂອງພວກນາຍທຶນ ຈຶ່ງເກີດຜົນວ່າ ອາດມີຄວາມ ສາມາດຟື້ນຟູ ລະບອບນາຍທຶນຄືນມາໃໝ່. ໃນສາຍຕາຂອງອະດີດນັກທຸລະກິດ, ນະໂຍບາຍເສດຖະກິດໃໝ່ ແມ່ນການສະແດງອອກເຖິງຄວາມອ່ອນເພຍ ຂອງອຳນາດໂຊວຽດ.ສະນັ້ນ ພວກເຂົາຈຶ່ງພະຍາຍາມ ຢາກຟື້ນຟູແນວຄິດນາຍທຶນຂຶ້ນ ຢູ່ໃນຂະບວນການເອົາສະຫະບໍລິສັດເຂົ້າສະມາຄົມ.ຕໍ່ໜ້າສະພາບການດັ່ງກ່າວ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ຕີລາຄາຖືກຕ້ອງ ທາດແທ້ເຈດຈຳນົງຂອງພວກນາຍທຶນແລະເດັດດ່ຽວຕ້ານການຈັດຕັ້ງສະມາຄົມສະຫະບໍລິສັດ ແບບນາຍທຶນ.ທ່າຢືນພື້ນຖານຂອງສະພາເສດຖະກິດແຫ່ງຊາດສູງສຸດ ແມ່ນສະແດງອອກຢ່າງຈະແຈ້ງ ຢູ່ໃນການສືບສວນຄະດີ ກ່ຽວກັບການ ຈັດຕັ້ງບໍລິສັດອຸດສາຫະກຳລັດ ທີ່ເມືອງເປຕະໂລກະລາດ ແລະແຂວງເປຕະໂລກະລາດ ຊຶ່ງເອົາໃຫ້ບຸກຄົນເຊົ່າ.

ທ້າຍປີ ໑໙໒໑, ກຸ່ມນັກທຸລະກິດ ເມືອງເປຕະໂລກະລາດໄດ້ຮ້ອງທຸກຕໍ່ສະພາເສດຖະກິດແຫ່ງຊາດສູງສຸດ ໃຫ້ແກ້ໄຂບັນຫາການຈັດຕັ້ງ ແລະຮັບຮອງເອົາກົດລະບຽບບໍລິສັດຂອງຕົນ. ອີງຕາມເອກະສານທີ່ມີຢູ່ໃນຫໍທະບຽນ ແມ່ນຮູ້ຈະແຈ້ງແລ້ວວ່າບໍລິສັດດັ່ງກ່າວ ຕາມຕົວຈິງກໍເກີດຂຶ້ນແລ້ວ ແລະ ມີຄະນະບໍລິຫານຊົ່ວຄາວ ຊຶ່ງຈຳເປັນຈະຕ້ອງຖືກຮັບຮູ້ທາງດ້ານກົດໝາຍອີກ. ຕາມບັນທຶກຂອງຄະນະບໍລິຫານໄດ້ເວົ້າວ່າ ໃນສະພາບ

ເສດຖະກິດດັ່ງກ່າວ ຜູ້ໃຫ້ເຊົ່າທຸກຄົນຈະແກ້ໄຂບັນຫາ ສະພານັ້ນດ້ວຍຕົນເອງບໍ່ໄດ້ ຫລືໄດ້ກໍຫນ້ອຍທີ່ສຸດ.ຕາມຣ່າງກົດລະບຽບ ທີ່ຄະນະບໍຣິຫານສົ່ງໃຫ້ນັ້ນ ກໍຈະແຈ້ງຢູ່ວ່າ, ສະຫະບໍຣິສັດ ບໍ່ໄດ້ແຕະຕ້ອງຄວາມເປັນເອກະລາດ ທາງດ້ານເສດຖະກິດ ຂອງບໍຣິສັດອຸດສາຫະກາສະມາຊິກ.ຣ່າງກົດລະບຽບ ໄດ້ເວົ້າເຖິງການໄກ່ເກັ່ຍການພົວພັນຂອງລັດ ຕໍ່ທຶນເອກະຊົນ,ຜູ້ຮັບຊື້ສິນຄ້າ, ຜູ້ຈັດສົ່ງວັດຖຸດິບ, ນ້ຳມັນເຊື້ອໄຟແລະຕໍ່ກຳມະກອນ.

ທາງດ້ານກົດຫມາຍ, ອົງການຮັບຜິດຊອບການເຊົ່າສະພາເສດຖະກິດ ເມືອງເປຕະໂລກະລາດ ແມ່ນເຫັນດີໃຫ້ ຈັດຕັ້ງສຳພັນ ບໍຣິສັດອຸດສາຫະກຳ, ແຕ່ຄະນະປະທານສະພາເສດຖະກິດແຫ່ງຊາດສູງສຸດບໍ່ເຫັນດີ. ຄະນະປະທານສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ຕີລາຄາຢ່າງຖືກຕ້ອງວ່າ ການຈັດຕັ້ງສະຫະບໍຣິສັດນີ້ ແມ່ນພວກນາຍທຶນຢາກປັບປຸງກຳລັງ ຂອງພວກເຈົ້າຂອງໂຮງງານໃຫ້ຄົນເຊົ່າ, ສະນັ້ນ ຈິ່ງຕ້ານການຈັດຕັ້ງສະມາຄົມສະຫະບໍຣິສັດນາຍທຶນ. ຄະນະປະທານສະພາເສດຖະກິດແຫ່ງຊາດສູງສຸດໄດ້ສະຫລຸບວ່າໃນສະພາບເສດຖະກິດຊຸດໂຊມ ແລະໃນສະພາບທີ່ມີການສວຍໂອກາດ ຄືແນວນີ້ ການຈັດຕັ້ງສະຫະບໍຣິສັດ ນັກທຸລະກິດບໍ່ມີຜົນດີ ແລະ ຈະໄປສູ່ການກະແຈກກະຈາຍຂອງເສດຖະກິດ, ຈະເປັນການຍົກສູງອິດທິພົນ ທາງດ້ານສັງຄົມຂອງນັກທຸລະກິດ ເຖິງແມ່ນວ່າເວລາປະຈຸບັນ ເຂົາຄືຈະສາມາດເຮັດໃຫ້ການອຸດສາຫະກຳຟືດ

ຟື້ນກໍຕາມ. ການຈັດຕັ້ງສຳພັນບໍລິສັດດັ່ງກ່າວ ໄດ້ເຮັດໃຫ້ບົດ ບາດຂອງນັກທຸລະກິດທະວີຂຶ້ນແລະແຂງແຮງຕໍ່ການະກອນ.

ບົດສະຫລຸບ ຍັງໄດ້ເວົ້າແຈ້ງເຖິງທິດທາງລວມຂອງສະພາ ເສດຖະກິດແຫ່ງຊາດສູງສຸດ ກ່ຽວກັບບັນຫາອະນຸຍາດ ໃຫ້ຈັດ ຕັ້ງສະມາຄົມສະຫະບໍລິສັດນາຍທຶນດ້ວຍ.

ບັນຫາການອະນຸມັດໃຫ້ຕັ້ງສະມາຄົມສະຫະບໍລິສັດ ນາຍທຶນ ໂຊວຽດ ມີຫລັກການແຕກຕ່າງແດ່. ຕາມກົດລະບຽບ ສະມາ ຄົມ ທີ່ໄດ້ຖືກຮັບຮອງໃນປີ ໑໙໘໘–໑໙໘໙, ໄດ້ບົ່ງບອກ ໄວ້ ວ່າ, ບໍລິສັດເອກະຊົນ ຈະເຂົ້າສະມາຄົມສະຫະບໍລິສັດໄດ້ກໍ່ ແຕ່ໃນເມື່ອໄດ້ຮັບອະນຸຍາດຈາກຄະນະປະທານສະພາເສດຖະ ກິດແຫ່ງຊາດສູງສຸດເທົ່ານັ້ນ. ຕໍ່ບໍລິສັດເອກະຊົນ ຍັງມີກົດລະ ບຽບບັງຄັບຄືກັນກັບ ບໍລິສັດຂອງລັດເວລາເຂົ້າສະມາຄົມ.ທຶນ ເອກະຊົນສາມາດເຂົ້າຮ່ວມສະມາຄົມໄດ້ ໃນທາງອ້ອມ ດ້ວຍ ຮູບການມີຫຸ້ນສ່ວນ ໃນບໍລິສັດຫຸ້ນສ່ວນປະສົມ. ແຕ່ວ່າໃນເມື່ອ ຢູ່ໃນສະມາຄົມຫຸ້ນສ່ວນລັດເປັນເຈົ້າຫຸ້ນຕົ້ນຕໍຄືແນວນັ້ນທຶນເອ-ກະຊົນ ຈຶ່ງບໍ່ມີເງື່ອນໄຂມີບົດບາດ ເປັນເອກະລາດໄດ້.

ແຕ່ວ່າ ປີ ໑໙໘໔–໑໙໘໕, ເວລາທີ່ທຶນເອກະຊົນ ມີບົດ ບາດສວຍໂອກາດຈະແຈ້ງແລ້ວ ສະພາເສດຖະກິດ ແຫ່ງຊາດ ສູງສຸດ ຈຶ່ງລົບລ້າງການພົວພັນທັງຫມົດ ກັບທຶນເອກະຊົນຢູ່ໃນ ລະບົບຂອງສະມາຄົມສະຫະບໍລິສັດ. ຕາມຮ່າງກົດລະບຽບສົມ ບູນ ກ່ຽວກັບສະມາຄົມສະຫະບໍລິສັດຂອງລັດ ຊຶ່ງບັນຍັດ ຂຶ້ນ ໂດຍຄະນະກຳມາທິການພິເສດ ຂອງສະພາເສດຖະກິດ ແຫ່ງ

ຊາດສູງສຸດນັ້ນ ຜູ້ຈະເຂົ້າຮ່ວມເປັນສະມາຊິກສະມາຄົມຖືກບົ່ງໄວ້ຢ່າງຈະແຈ້ງ. ອົງການທີ່ມີສິດເຂົ້າສະມາຄົມໄດ້ ມີແຕ່ບໍລິສັດຊຸດສາຫະກຳລັດ, ບໍລິສັດການຄ້າຂອງລັດ ທີ່ເປັນວິສາຫະກິດ ແລະບໍລິສັດຫຸ້ນສ່ວນປະສົມ ທີ່ລັດຄວບຄຸມເທົ່ານັ້ນ. ໃນທີ່ສຸດ, ຕອນທ້າຍຂອງສະໄໝຟື້ນຟູເສດຖະກິດໄດ້ມີການອັດປະຕູ ບໍ່ໃຫ້ທຶນເອກະຊົນທັງໝົດ ເຂົ້າຮ່ວມສະມາຄົມ ສະຫະບໍລິສັດໂຊວຽດ ແຕ່ປະການໃດ.

ຫລັກການອັນໜຶ່ງອີກ ຂອງການຈັດຕັ້ງສະມາຄົມ, ແມ່ນການບັງຄັບໃຊ້ໃຫ້ສະມາຄົມ ກວມເອົາແຕ່ບໍລິສັດຜະລິດ ປະເພດດຽວ ຢູ່ໃນຂະແໜງຊຸດສາຫະກຳຈຳກັດ.

ໃນໄລຍະຕົ້ນຂອງຂະບວນການ ເອົາບໍລິສັດ ຊຸດສາຫະກຳເຂົ້າສະມາຄົມ ສະພາເສດຖະກິດແຫ່ງຊາດສູງສຸດໄດ້ວາງບັນຫາວ່າ ກ່ຽວກັບຮູບການສະມາຄົມ: ຈະໃຫ້ເປັນສະມາຄົມຂະແໜງເສດຖະກິດ ສະເພາະຈຳກັດ ຫລືຈະໃຫ້ເປັນສະມາຄົມລັກສະນະກ້ວາງຂວາງ.

ເຖິງຢ່າງໃດກໍດີ, ສະມາຄົມສະເພາະແຕ່ລະ ຂະແໜງເສດຖະກິດຈຳກັດ ແລະສະມາຄົມສະຫະບໍລິສັດ ກ້ວາງຂວາງໂພດ ທັງສອງກໍ່ບໍ່ສອດຄ່ອງກັບເງື່ອນໄຂພາວະວິໄສ ຂອງຂະບວນເຂົ້າສະມາຄົມ ຂອງຊຸດສາຫະກຳ. ສະມາຄົມສະເພາະແຕ່ລະຂະແໜງເສດຖະກິດຈຳກັດນັ້ນ ໄດ້ເຮັດໃຫ້ວັດຖຸ ແລະພາຫະນະທາງດ້ານການເງິນ ໄປສູ່ຖານະແຕກຕ່າງກັນ ໂພດ ຢູ່ໃນຂະແໜງເສດຖະກິດ ຂະແໜງໃດຂະແໜງໜຶ່ງ. ໃນ

ການຈັດຕັ້ງສະມາຄົມສະເພາະແຕ່ລະຂະແໜງເສດຖະກິດຈຳກັດ ໄດ້ພາໃຫ້ເກີດສູນກາງນຳພາຫລາຍໂພດ ອັນໄດ້ເຮັດໃຫ້ກິດຈະການຈຳໜ່າຍ, ເກັບຊື້ ແລະຈັດຫານັ້ນອ່ອນເພຍລົງ. ແຕ່ຄັນຫາກມີສະມາຄົມທີ່ໃຫຍ່ໂຕໂພດ ຊ້ຳພັດມີຜົນບໍ່ດີຫລືບໍ່ດັ່ງນັ້ນ ການເອົາໃຈໃສ່ຂອງສະມາຄົມ ຕໍ່ແຕ່ລະຂະແໜງ ເສດຖະກິດ ກໍລົດນ້ອຍລົງ ແລະບໍ່ຕອບສະໜອງຕໍ່ຄວາມຕ້ອງການຜະລິດ ຂອງສະຫະບໍລິສັດ ແລະບໍລິສັດອື່ນ.ຕາມພາວະວິ ໄສສອງວິທີດັ່ງກ່າວ ໄດ້ເຮັດໃຫ້ບາດກ້າວການຟື້ນຟູອຸດສາຫະກຳຂອງລັດລົດນ້ອຍລົງ.

ມາເຖິງຕອນທ້າຍຂອງສະໄໝຟື້ນຟູເສດຖະກິດ, ຍ້ອນວ່າມີການກຳນົດ ໃຫ້ມີນະໂຍບາຍເສດຖະກິດແລະເຕັກນິກ ອັນດຽວ ສຳລັບທຸກຂະແໜງການອຸດສາຫະກຳ ຈຶ່ງພາໃຫ້ເກີດມີບັນຫາຈຳເປັນ ຕ້ອງເຮັດໃຫ້ສະມາຄົມສະຫະບໍລິສັດເຕີບໃຫຍ່ຂື້ນ. ປະເທດຊາດພວມຈະກ້າວເຂົ້າສູ່ການສ້າງອຸດສາຫະກຳ, ສະນັ້ນ ການປະຕິບັດນະໂຍບາຍດັ່ງກ່າວ ຈຶ່ງເປັນບັນຫາ ອັນຮີບດ່ວນທີ່ສຸດ. ການເຮັດໃຫ້ສະມາຄົມສະຫະບໍລິສັດເຕີບໃຫຍ່ຂື້ນ ມັນໄດ້ຊຸກຍູ້ໃຫ້ບໍລິສັດອຸດສາຫະກຳ ຍົກສູງລະດັບການຜະລິດ ແລະສະພາເສດຖະກິດແຫ່ງຊາດສູງສຸດສະສົມບົດຮຽນໄດ້ດີ. ການເຕີບໃຫຍ່ຂະຫຍາຍຕົວ ແມ່ນເປັນໄປຕາມຮູບການທີ່ວ່າ ສະມາຄົມໄດ້ກວມເອົາບໍລິສັດອຸດສາຫະກຳຂອງລັດຫລາຍບໍລິສັດທີ່ບໍ່ທັນເຂົ້າສະມາຄົມເທື່ອ, ຍຸບບາງສະຫະບໍລິສັດ ອຸດສາຫະກຳ, ໂດຍໂອນເອົາໜ້າທີ່ຈຳໜ່າຍແລະການຄ້າຂອງ

ສະຫະບໍລິສັດ ໄປຂຶ້ນກັບສະມາຄົມ. ໃນໄລຍະສັ້ນໆ (ແຕ່ວັນທີ ໑ ເດືອນຕຸລາ ໑໙໒໓ ຫາວັນທີ ໑ ເດືອນສິງຫາ ໑໙໒໕) ຈຳນວນບໍລິສັດເຂົ້າສະມາຄົມ ໄດ້ເພີ່ມຂຶ້ນ ໒໕%.

ໃນໄລຍະເອົາສະຫະບໍລິສັດເຂົ້າສະມາຄົມ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ພະເຊີນໜ້າກັບບັນຫາສັບສົນ ທີ່ສຸດກ່ຽວກັບຮູບການເຂົ້າສະມາຄົມ ຂອງສະຫະບໍລິສັດລັດ ແລະ ໂຮງຈັກໂຮງງານຂອງລັດ. ວິທີການແບບເສດຖະກິດນາຍທຶນ ກ່ຽວກັບການເຂົ້າສະມາຄົມ ບໍ່ສອດຄ່ອງກັບສະພາບ ເສດຖະກິດໂຊວຽດເສຍແລ້ວ. ບໍລິສັດທີ່ເຂັ້ມແຂງ ກໍບໍ່ສາມາດຊ່ວຍເຫລືອບໍລິສັດອ່ອນນ້ອຍໄດ້, ບໍ່ສາມາດຊັ້ອນສ່ວນ, ບໍ່ສາມາດສວຍໃຊ້ການບໍ່ມີເອກະລາດ ຂອງບໍລິສັດຊູດສາຫະກຳຕໍ່ທະນາຄານອີກແລ້ວ. ໃນເງື່ອນໄຂເສດຖະກິດ ສັງຄົມນິຍົມ ໄລຍະຟື້ນຟູສາມາດມີຮູບການເຂົ້າຮ່ວມສະມາຄົມດັ່ງນີ້: ໑) ຮູບການສະໝັກໃຈເຂົ້າຮ່ວມສະຫະບໍລິສັດ ແລະ ຂອງໂຮງຈັກໂຮງງານເອກະລາດ; ໒) ຮູບການແບບບັງຄັບ ເຂົ້າຮ່ວມ; ໓) ຮູບການແບບເຂົ້າຮ່ວມສະມາຄົມ ດ້ວຍສະໝັກໃຈສຳລັບບາງສະຫະບໍລິສັດ ແລະເຂົ້າຮ່ວມແບບຈຳເປັນຕ້ອງເຂົ້າ ສຳລັບບາງສະຫະບໍລິສັດອື່ນໆ.

ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ໃຊ້ຮູບການດັ່ງກ່າວຂ້າງເທິງນີ້, ແຕ່ການປ່ຽນແປງຮູບນັ້ນໄປຫາຮູບນີ້ແຕ່ລະ ໄລຍະບໍ່ຄືກັນ. ເວລາເລີ່ມເອົາສະຫະບໍລິສັດເຂົ້າສະມາຄົມໄດ້ແລ້ວຂັ້ນທຳອິດ, ສະພາເສດຖະກິດແຫ່ງຊາດສູງສຸດແມ່ນຮັກສາແຕ່

ສອງຮູບການທຳອິດ, ແລະຫລາຍກໍລະນີ ກໍໃຊ້ຮູບການບັງຄັບຫລາຍກ່ວາ.

ໃນໄລຍະປີທຳອິດ ຂອງນະໂຍບາຍເສດຖະກິດໃໝ່,ການເຂົ້າຮ່ວມສະມາຄົມຂອງສະຫະບໍລິສັດ ດ້ວຍຄວາມສະໝັກໃຈຖືວ່າເປັນເຫດການໃຫຍ່ ມີຄວາມໝາຍສຳຄັນທາງດ້ານເສດຖະກິດ. ເພາະມັນໄດ້ອຳນວຍໃຫ້ສະຫະບໍລິສັດຊຸດສາຫະກຳມີເງື່ອນໄຂ ເລືອກຮູບການຈັດຕັ້ງຈັດຫາ ແລະຈຳໜ່າຍທີ່ສອດຄ່ອງກັບຜົນປະໂຫຍດຂອງຕົນ ແລະໄດ້ສ້າງເງື່ອນໄຂອັນດີເພື່ອໃຫ້ສະຫະບໍລິສັດເຂົ້າສະມາຄົມ ປ້ອງກັນສິດ ແລະຜົນປະໂຫຍດຂອງຕົນ. ສິ່ງດັ່ງກ່າວໄດ້ຍັງຄັບໃຫ້ສະມາຄົມ ເອົາໃຈໃສ່ຕໍ່ຄວາມຮຽກຮ້ອງ ຂອງສະມາຊິກຕົນ.

ຮູບການອັນໜຶ່ງ ທີ່ຊຸກຍູ້ໃຫ້ສະຫະບໍລິສັດເຂົ້າ ສະມາຄົມແມ່ນການທີ່ລັດໃຫ້ການຊ່ວຍເຫລືອ ທາງດ້ານວັດຖຸ ເວລາຈັດຕັ້ງໃໝ່. ສະພາເສດຖະກິດແຫ່ງຊາດສູງສຸດໄດ້ມອບສິນຄ້າ, ວັດຖຸດິບ ແລະເງິນຈຳນວນໜຶ່ງ ໃຫ້ສະມາຄົມ.

ອັດຕາສ່ວນວັດຖຸຊ່ວຍເຫລືອ ແຕ່ລະສະມາຄົມນັ້ນ ຂຶ້ນກັບຄວາມສຳຄັນຂະແໜງເສດຖະກິດ ແລະສະພາບຕົວຈິງ. ຮູບການຊ່ວຍເຫລືອກໍແຕກຕ່າງກັນອີກ. ບາງກໍລະນີໄດ້ເອົາວັດຖຸມີຄຸນຄ່າ ແລະເງິນໃຫ້ສະມາຄົມຢືມ ໃນໄລຍະ ຍາວນານ, ເຊັ່ນ ໄລຍະຈັດຕັ້ງສະມາຄົມບໍລິສັດນວດໜັງ ຊຶ່ງສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ເອົາວັດຖຸມີຄຸນຄ່າ ແລະເງິນຂອງອະດີດກົມທັງໝົດ ມາໃຫ້ກູ້ຢືມໄລຍະຍາວນານ; ໃນບາງກໍລະ

ນີ້ອີກ ກໍເອົາວັດຖຸມອບໃຫ້ໂດຍບໍ່ມີຄ່າຕອບແທນ (ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ມອບຢາດິບທັງຫມົດໃຫ້ສະມາຄົມ-ຢາສູບ ໂດຍບໍ່ມີຄ່າຕອບແທນຫຍັງຫມົດ).

ນອກຈາກກ່າວມາຂ້າງເທິງແລ້ວ ຍັງມີຮູບການໃຫ້ ການຊ່ວຍເຫລືອວັດຖຸດິບ ຕໍ່ສະມາຄົມຮູບອື່ນໆອີກ. ກ່ອນອື່ນຫມົດກໍແມ່ນ ສະພາເສດຖະກິດແຫ່ງຊາດສູງສຸດ ເຂົ້າຫຸ້ນສ່ວນນຳສະມາຄົມ. ບາງສະມາຄົມ ສະພາເສດຖະກິດແຫ່ງຊາດສູງສຸດກໍມີຫຸ້ນສ່ວນຈຳນວນເຖິງ ໑ ລ້ານຮູບ. ສະພາເສດຖະກິດແຫ່ງຊາດສູງສຸດ ຈ່າຍຫຸ້ນສ່ວນຂອງຕົນ ດ້ວຍວັດຖຸດິບ, ສິນຄ້າແລະວັດຖຸຕ່າງໆ ຊຶ່ງສະມາຄົມທີຄວາມຕ້ອງການເປັນທີ່ສຸດ. ການປະຕິບັດທິດທາງ ອັນສຳຄັນອັນຫນຶ່ງ ຂອງສະພາເສດຖະກິດ-ແຫ່ງຊາດສູງສຸດ ແລ້ວແມ່ນເພີ່ມທະວີກ້ອນທຶນ ທາງດ້ານວັດຖຸ ແລະການເງິນ ໃຫ້ແກ່ສະມາຄົມ ໂດຍການຍຸບອົງການ ຈຳຫນ່າຍອື່ນໆ ມາເຂົ້າກັບສະມາຄົມສະຫະບໍລິສັດ.

ປັດໃຈອັນສຳຄັນອັນຫນຶ່ງ ທີ່ຊຸກຍູ້ໃຫ້ບໍລິສັດ ອຸດສາຫະກຳເຂົ້າສະມາຄົມ ແມ່ນການແບ່ງແຜນການສັ່ງຜະລິດ ຂອງລັດໂດຍສະພາເສດຖະກິດແຫ່ງຊາດສູງສຸດ. ແຜນການສັ່ງ ຜະລິດທັງຫມົດຂອງລັດ ແມ່ນຜ່ານສະມາຄົມ ຈຶ່ງປະຕິບັດໄດ້ ແລະມີແຕ່ໃນກໍລະນີພິເສດເທົ່ານັ້ນ ທີ່ຜ່ານສາຍອື່ນ. ອັນຕໍ່ໄປສະມາ-ຄົມ ກໍແບ່ງແຜນການສັ່ງຜະລິດ ທີ່ຖືກມອບຫມາຍມານັ້ນ ໃຫ້ແກ່ສະມາຊິກຂອງຕົນ: ແບ່ງສັນສ່ວນຕາມກຳລັງຜະລິດ ຂອງແຕ່ລະສະຫະບໍລິສັດ ແລະຕາມຄວາມເຫັນດີເຫັນພ້ອມຂອງຄະ

ນະບໍລິຫານແລະກອງປະຊຸມຂອງບັນດາຜູ້ມີອຳນາດເຕັມ ຂອງສະມາຄົມ. ໂດຍອີງໃສ່ບົດຮຽນໄດ້ພົບຄວາມຫຍຸ້ງຍາກ ໃນການຈຳໜ່າຍສິນຄ້າທີ່ຕົນຜະລິດ, ສະຫະບໍລິສັດແລະໂຮງຈັກໂຮງງານ ຈຶ່ງມີຄວາມສົນໃຈ ໃຫ້ມີຕະຫລາດຮັບປະກັນ. ສະຫະບໍລິສັດ ແລະໂຮງຈັກໂຮງງານດັ່ງກ່າວ ພະຍາຍາມເຮັດແນວໃດ ເພື່ອຢາກຮັບການສັ່ງຜະລິດຂອງລັດ ສະເພາະຕົນເອງ. ຍ້ອນການສັ່ງຜະລິດຖືກແບ່ງປັນ ຜ່ານສະມາຄົມດີແນວນັ້ນ ສະຫະບໍລິສັດ ແລະໂຮງຈັກໂຮງງານເອກະລາດ ຈຶ່ງຈຳເປັນເຂົ້າສະມາຄົມ ເພື່ອຮັບປະກັນໃຫ້ມີຜູ້ຊື້ສິນຄ້າທີ່ຕົນຜະລິດ.

ສິ່ງທີ່ມີຄວາມໝາຍສຳຄັນພິເສດ ໃນການຊຸກຍູ້ໃຫ້ບໍລິສັດ-ອຸດສາຫະກຳ ເຂົ້າສະມາຄົມ ແມ່ນລະບົບສິນເຊື່ອ ແລະການຍົກເວັ້ນພາສີອາກອນ ໃຫ້ແກ່ສະມາຄົມ. ສະເພາະຢ່າງຍິ່ງ, ການຊ່ວຍເຫລືອແລະສິນເຊື່ອຂອງລັດ ແມ່ນແຈກຢາຍຜ່ານສະມາຄົມ, ສະມາຄົມກຳເງິນກູ້ຢືມ ແລະວຽກການເກັບຊື້ ວັດຖຸດິບ, ສະນັ້ນ ຈຶ່ງມີເອກະສິດຕໍ່ບໍລິສັດ ທີ່ບໍ່ເຂົ້າສະມາຄົມ ໃນການຈ່າຍພາສີເສຍສ່ວຍ. ໃນເມື່ອສາມາດແກ່ຍາວ ໃລຍະຈ່າຍພາສີໄດ້ເງິນຂອງສະມາຄົມ ກໍມີຫລາຍຢູ່ໃນການ ໝູນວຽນ. ນອກເໜືອຈາກນັ້ນ, ອັດຕາສ່ວນພາສີອາກອນກໍແມ່ນລັດເປັນຜູ້ວາງ ຕາມເງິນເຈ້ຍທີ່ລຸດລາຄາຢູ່ສະເໝີ, ຈາກນັ້ນສະມາຄົມຈຶ່ງສາມາດເອົາຜົນປະໂຫຍດ ໃນການບໍ່ແນ່ ນອນຂອງສະພາບການເງິນ.

ຢູ່ໃນຂະແໜງອຸດສາຫະກຳຕ່າງໆ ເຊັ່ນ, ອຸດສາຫະກຳ-

ຕໍ່າແຜ່ນ, ຂະແໜງອຸດສາຫະກຳໜັງ ແລະອຸດສາຫະກຳພິມ ປັ້ນ ສິ່ງທີ່ສຳຄັນ ແມ່ນຮັບປະກັນວັດຖຸທີ່ສົ່ງມາແຕ່ຕ່າງປະເທດ ໃຫ້. ແຕ່ວ່າສະຫະບໍລິສັດແລະຍິ່ງໄປກວ່ານັ້ນ ບໍລິສັດຕ່າງໆບໍ່ມີສິດພົວພັນກັບຕະຫລາດຕ່າງປະເທດ, ຄືງມີສິດແຕ່ສະມາຄົມເທົ່ານັ້ນ. ສິນເຊື່ອທີ່ສຳລັບສັ່ງເຄື່ອງຕ່າງປະເທດມີແຕ່ສະມາຄົມເທົ່ານັ້ນໄດ້ຮັບ, ຜົນທີ່ສຸດເພື່ອໄດ້ຮັບເຄື່ອງສົ່ງມາແຕ່ຕ່າງປະເທດ ສະຫະບໍລິສັດແລະບໍລິສັດເອກະລາດກໍຈຳເປັນຕ້ອງເຂົ້າເປັນສະມາຊິກສະມາຄົມ.

ໂດຍບໍ່ຈຳເປັນຕ້ອງໃຊ້ຮູບການບັງຄັບ ສະພາເສດຖະ ກິດແຫ່ງຊາດສູງສຸດ ກໍສາມາດຈັດຕັ້ງສະມາຄົມຂຶ້ນໄດ້ເກືອບ ໃນທຸກຂະແໜງອຸດສາຫະກຳ.

ເຖິງຢ່າງໃດກໍດີ ການເຂົ້າຮ່ວມສະມາຄົມ ຂອງສະຫະບໍລິສັດ ແລະບໍລິສັດເອກະລາດ ດ້ວຍໃຈສະໝັກນີ້ ກໍມີຜົນສະທ້ອນບໍ່ດີຄືກັນ. ການອະນຸຍາດໃຫ້ເຂົ້າ ແລະ ອອກສະມາຄົມຕາມຊອບໃຈ, ເຖິງແມ່ນວ່າໂຄງຮ່າງອັນພົນຖານ ຈະຮັກສາໄດ້ກໍຕາມ, ແຕ່ມັນໄດ້ພາໃຫ້ສະຫະບໍລິສັດ ແລະບໍລິສັດເອກະລາດ ຄາວໜຶ່ງເຂົ້າແລະຄາວໜຶ່ງອອກ ຈາກສະມາຄົມ ຢູ່ແນວນັ້ນ. ຕາມທຳມະດາ ສ່ວນຫລາຍສະມາຊິກໃໝ່ຂອງສະມາຄົມ ແມ່ນສະຫະບໍລິສັດຂະໜາດນ້ອຍ ແລະບໍລິສັດ ເອກະລາດ.

ນອກຈາກນັ້ນ, ການເຂົ້າອອກສະມາຄົມຕາມໃຈຊອບນັ້ນບໍ່ຊຸກຍູ້ໃຫ້ມີລະບຽບວິໄນ ໃນທ່າມກາງສະມາຊິກຂອງສະມາຄົມ

ແລະເຮັດໃຫ້ມີການຜ່າຝືນລະບຽບວິໄນຕາມເນື້ອໃນສັນຍາ, ມີການຜ່າຝືນການພົວພັນ ແບບເສດຖະກິດ ພາຍໃນສະມາຄົມ. ຖານະບົດບາດຂອງສະມາຄົມ ກໍລົດນ້ອຍລົງ.

ປີ ໑໙໘໔ ທັດສະນະຂອງສະພາເສດຖະກິດແຫ່ງຊາດສູງສຸດ ຂອງສະຫະພາບໂຊວຽດ ຕໍ່ການເຂົ້າຮ່ວມສະມາຄົມຕາມໃຈຊອບຂອງສະຫະບໍລິສັດ ແລະບໍລິສັດຕ່າງໆ ມີການປ່ຽນແປງ. ອັນນີ້ສະແດງໃຫ້ເຫັນວ່າ ທາງດ້ານດີຂອງການເຂົ້າຮ່ວມສະມາຄົມຕາມໃຈຊອບນີ້ ໄດ້ໝົດໄປເສຍແລ້ວ, ແຕ່ທາງດ້ານບໍ່ດີ ໃນໄລຍະມີໄພພິບັດລະດູບານໃໝ່ ໑໙໘໕ ຊ້ຳພັດເດັ່ນຊັດຂຶ້ນ. ພາຍໃຕ້ເງື່ອນໄຂການແຈກຢາຍບໍ່ໄດ້. ສາຍເຫດອັນໜຶ່ງອີກ ທີ່ພາໃຫ້ສະພາເສດຖະກິດແຫ່ງຊາດສູງສຸດ ປ່ຽນທັດສະນະຕໍ່ການຈັດຕັ້ງຂອງສະມາຄົມ ແມ່ນການເກີດມີ ທ່າອຽງອັນໃໝ່ ໃນຂະບວນການສ້າງສະມາຄົມ. ເວລານີ້ສະມາຄົມ ບໍ່ໄດ້ຖືແຕ່ພຽງເປັນອົງການຈຳໜ່າຍສິນຄ້າສຳລັບສະຫະບໍລິສັດເທົ່ານັ້ນ, ແຕ່ຍັງແມ່ນອົງການທີ່ສຳຄັນ ໃນລະບົບ ບໍລິຫານອຸດສາຫະກຳຂອງລັດ. ດ້ວຍເຫດນັ້ນ, ສະພາເສດຖະກິດແຫ່ງຊາດສູງສຸດ ສະຫະພາບໂຊວຽດ ຈຶ່ງໄດ້ຖືວ່າການຈັດຕັ້ງສະມາຄົມສະຫະບໍລິສັດ, ຄືກັນກັບການຈັດຕັ້ງອົງການອື່ນໆຂອງລັດ. ຈາກການຄຸ້ມຄອງຂະບວນການເຂົ້າສະມາຄົມທາງອ້ອມ, ສະພາເສດຖະກິດແຫ່ງຊາດສູງສຸດ ສະຫະພາບ ໂຊວຽດ ຈຶ່ງໄດ້ຫັນປ່ຽນມາເຂົ້າສະມາຄົມ ສະຫະບໍລິສັດໂດຍກົງ, ໄດ້ຫັນມາໃຊ້ວິທີການບໍລິຫານ ໃນການຈັດຕັ້ງສະມາຄົມສະຫະ

ບໍລິສັດ ແຕ່ວ່າການປະຕິບັດວິທີນີ້ແມ່ນຫລີກເວັ້ນຫລັກການເຂົ້າຮ່ວມຕາມຊອບໃຈ.

ກ່ອນອື່ນໝົດ ສະມາຄົມສະຫະບໍລິສັດ ຖືກຈັດຕັ້ງຂຶ້ນ ໃນນາມອົງການຈຳໜ່າຍ ສຳລັບອຸດສາຫະກຳລັດ. ເພື່ອຢາກເຂົ້າໃຈນະໂຍບາຍ ທັນເອົາ ບໍລິສັດອຸດສາຫະກຳເຂົ້າສະມາຄົມ ຢ່າງເລິກເຊິງນັ້ນ ຕ້ອງເບິ່ງທັດສະນະ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ຕໍ່ຄວາມໝາຍຂອງຄຳເວົ້າຈຳໜ່າຍສິນຄ້າອຸດສາຫະກຳ. ກ່ອນປີ ໑໙໔໕, ຖືກັນວ່າວຽກການຈຳໜ່າຍສິນຄ້າອຸດສາຫະກຳ ຈະເປັນໄປຫລາຍຮູບແຕກຕ່າງກັນ -ຈຳໜ່າຍເໝົາເລີຍ ແລະຈຳໜ່າຍຍ່ອຍ,ແຕ່ຕົກມາເຖິງປີ ໑໙໔໓-໑໙໔໕, ເພື່ອດຶງດູດຜູ້ຊື້, ສະມາຄົມໄດ້ ຂະຫຍາຍການຂາຍຍ່ອຍຫລາຍກ່ວາ.

ການເສີມຂະຫຍາຍຂາຍຍ່ອຍ ໄດ້ຊ່ວຍໃຫ້ສະມາຄົມແກ້ໄຂບັນຫາຫຍຸ້ງຍາກຂອງຕົນ ໃນການຈຳໜ່າຍ ແລະສະມາຄົມກໍສາມາດໄດ້ຮັບເງິນທີ່ຕ້ອງການຢູ່ແລ້ວຕື່ມອີກ. ການແຜ່ຂະຫຍາຍການຂາຍຍ່ອຍນີ້ ໄດ້ສົ່ງຜົນສະທ້ອນອັນດີຕໍ່ການຄ້າຂອງລັດທີ່ອ່ອນແອ ແລະພ້ອມກັນກໍໄດ້ສ້າງຄວາມເຊື່ອໝັ້ນ ໃຫ້ແກ່ນັກເສດຖະສາດໂຊວຽດບາງຄົນທີ່ບໍ່ເຫັນດີເຫັນພ້ອມ ນຳຂະບວນສະຫະກອນ. ແຕ່ດ້ານໜຶ່ງ, ການເພີ່ມທະວີການຂາຍ - ຍ່ອຍນີ້ ໄດ້ແກ່ດຶງບໍ່ໃຫ້ສະມາຄົມແກ້ໄຂໜ້າທີ່ຕົ້ນຕໍຂອງຕົນ , ເຮັດໃຫ້ມີການໃຊ້ຈ່າຍຫລາຍໃນວຽກການຄ້າ ແລະໃຫ້ພາຫະນະການຜະລິດບໍ່ຮັບໃຊ້ການຜະລິດຕາມທີ່ຄວນ.ໃນເວລາທີ່ການ

ຂາຍຍ່ອຍມີການເພີ່ມທະວີເທົ່າໃດແຮງເຮັດໃຫ້ມີການຊ່ວງຊີງລະຫວ່າງບັນດາອົງການຮັບຜິດຊອບການຄ້າຂອງລັດ, ລະຫວ່າງສະມາຄົມ ແລະສະຫະກອນເທົ່ານັ້ນ. ເພືອຢາກກຳຈັດປະກົດການບໍ່ດີດັ່ງກ່າວ ແລະຫັນປ່ຽນກ້ອນທຶນ ໃຫ້ມາຮັບໃຊ້ການຜະລິດ ຈຳເປັນຕ້ອງໄດ້ດັດແປງທັດສະນະ ຕໍ່ການຂາຍຍ່ອຍຂອງສະມາຄົມຄືນໃຫມ່.

ທ້າຍປີ ໑໙໒໔, ສະພາເສດຖະກິດແຫ່ງຊາດສູງສຸດ ເຫັນດີນຳການຂາຍຍ່ອຍ ແລະຖືວ່າ ສະມາຄົມສະຫະບໍລິສັດ ແລະອົງການຈຳຫນ່າຍສິນຄ້າຊຸດສາຫະກຳລັດບໍ່ຈຳເປັນຕ້ອງ ປະຕິບັດມັນອີກແລ້ວ. ກອງປະຊຸມສະພາເສດຖະກິດ ແຫ່ງຊາດສູງສຸດ ທົ່ວສະຫະພາບ ໃນເດືອນທັນວາ ໑໙໒໔ ໄດ້ຕົກລົງຫ້າມບໍ່ໃຫ້ປະຕິບັດການຄ້າຍ່ອຍ ຂອງອົງການຊຸດສາຫະກຳລັດອີກ.

ສະພາເສດຖະກິດແຫ່ງຊາດສູງສຸດ ແມ່ນອີງຕາມທິດທາງການສອຍໃຊ້ ອົງການຈຳຫນ່າຍສະມາຄົມ. ທ່າຢືນດັ່ງກ່າວນີ້ ສອດຄ່ອງກັບທິດທາງຂອງພັກ ໃນການສ້າງລະບົບສະຫະກອນ. ມະຕິກອງປະຊຸມພັກ ໃນເດືອນເມສາ ໑໙໒໕ ໄດ້ຕົກລົງວ່າ ສະຫະກອນບໍລິໂພກ ເປັນຕ່ອງໂສ້ຕົ້ນຕໍຂອງການຄ້າ, ຊຸດສາຫະກຳຂອງລັດ ຕ້ອງເອົາສິນຄ້າທີ່ຕົນຜະລິດ ຜ່ານສະຫະກອນບໍລິໂພກ, ສອຍໃຊ້ທຶນເອກະຊົນໄດ້ແຕ່ໃນກໍລະນີ ສະຫະກອນບໍ່ສາມາດຮັບປະກັນ ການແລກປ່ຽນສິນຄ້າໃຫ້ເທົ່ານັ້ນ.

ໃນເມື່ອອີງໃສ່ສະຫະກອນ ເປັນສູນກາງຜ່ານສິນຄ້າຊຸດສາຫະກຳ ຂອງລັດຄືແນວນັ້ນ ສະພາເສດຖະກິດແຫ່ງຊາດສູງສຸດ

ຊ້ຳພັດຕ້ອງພະເຊີນໜ້າກັບບັນຫາສ້າງລະບຽບການພົວພັນລະຫວ່າງອຸດສາຫະກຳລັດ ແລະສະຫະກອນ. ທ້ອງເດືອນມິຖຸນາ ໑໙໘໕ ພະແນກຮັບຜິດຊອບນະໂຍບາຍ ຂອງສະພາເສດຖະ-ກິດແຫ່ງຊາດສູງສຸດ ໄດ້ພິມວິທະຍານິພົນຂອງ "ການພົວພັນຊຶ່ງກັນແລະກັນ ລະຫວ່າງອຸດສາຫະກຳຂອງລັດ ແລະ ສະຫະກອນ". ໃນເອກະສານດັ່ງກ່າວໄດ້ບົ່ງໄວ້ວ່າ,ການພົວພັນຊຶ່ງກັນແລະກັນ ລະຫວ່າງອຸດສາຫະກຳຂອງລັດ ແລະສະຫະກອນຕ້ອງເປັນໄປບົນພື້ນຖານສັນຍາຕາມເງື່ອນໄຂ ຕ່າງຝ່າຍຕ່າງມີຜົນ.

ມະຕິກອງປະຊຸມສະຫະກອນບໍລິໂພກສູນກາງພັກ ໃນເດືອນສິງຫາ ໑໙໘໕ ໄດ້ມີບົດບາດສຳຄັນທີ່ສຸດ ຕໍ່ການແກ້ໄຂບັນຫາການພົວພັນຊຶ່ງກັນແລະກັນ ລະຫວ່າງອຸດສາຫະກຳລັດແລະສະຫະກອນ. ມະຕິໄດ້ບົ່ງແຈ້ງວ່າ, ການຍົກເສດຖະກິດ ແຫ່ງຊາດ ແມ່ນມີຄວາມຈຳເປັນຕ້ອງແລະໃຫ້ມີຄວາມສາມາດ ໃນການຍົກຖານະບົດບາດຂອງສະຫະກອນ ໃນການຈຳໜ່າຍສິນຄ້າອຸດສາຫະກຳລັດ.ສະນັ້ນຈຶ່ງຕ້ອງຖືວ່າ ສະຫະກອນບໍລິໂພກເປັນຂົວຕໍ່ອັນຕົ້ນຕໍ ແລະສຳຄັນຂອງອຸດສາຫະກຳລັດທີ່ນຳເອົາສິນຄ້າອອກສູ່ທ້ອງຕະຫລາດ ໂດຍສະເພາະໃນເຂດ ຊົນນະບົດ. ພ້ອມກັນນັ້ນ ມະຕິຍັງໄດ້ເວົ້າວ່າ ເພື່ອເຮັດແນວ ໃດຢາກຍົກສູງບົດບາດສະຫະກອນ ຈຳເປັນຕ້ອງໃຫ້ມີສິດພິເສດ-ໃນການຮັບສິນຄ້າອຸດສາຫະກຳ. ບັນຫາມີຢູ່ວ່າ ສະຫະບໍລິສັດ ແລະສະມາຄົມ ຕ້ອງເພີ່ມທະວີອັດຕາສ່ວນຜົນຜະລິດອຸດສາຫະ

ກຳຂອງລັດຈຳໜ່າຍຜ່ານສະຫະກອນແລະວຽກການຈັດຫາວັດຖຸກະເສດ ກໍເໝືອນກັນ.

ໄດ້ມີການເຊັນສັນຍາລະຫວ່າງ ສະພາເສດຖະກິດ ແຫ່ງຊາດສູງສຸດ ກັບສະພາສະມາຄົມບໍລິໂພກສູນກາງ ກ່ຽວກັບ - ການພົວພັນຊື່ງກັນແລະກັນ ລະຫວ່າງອຸດສາຫະກຳລັດແລະສະຫະກອນບໍລິໂພກ. ຕາມສັນຍາດັ່ງກ່າວ ສະພາເສດຖະ ກິດແຫ່ງຊາດສູງສຸດ ຮັບພາລະສົ່ງສິນຄ້າອຸດສາຫະກຳ ໃຫ້ລະບົບສະຫະກອນບໍລິໂພກທັງໝົດ ທາງຝ່າຍສະຫະກອນກໍຮັບວ່າຈະຕ້ອງເຮັດໃຫ້ຄ່າຮັກສາສິນຄ້າຕ່ຳລົງ ແລະເຮັດໃຫ້ກົງຈັກນ້ອຍລົງ ແລະລຶດຜ່ອນຄ່າທຳນຽມຈຳໜ່າຍສິນຄ້າຢູ່ໃນທຸກຂັ້ນ.ທຸກການພົວພັນລະຫວ່າງ ອຸດສາຫະກຳຂອງລັດ ແລະສະຫະກອນລ້ວນແລ້ວແຕ່ເປັນໄປບົນພື້ນຖານສັນຍາ.

ການໂອນການຄ້າຍ່ອຍມາໃຫ້ສະຫະກອນບໍລິໂພກນີ້ ບໍ່ໄດ້ໝາຍຄວາມວ່າ ມີການລຶດຜ່ອນບໍລິມາດ ການຈຳໜ່າຍ ສິນຄ້າ ໂດຍອຸດສາຫະກຳແຕ່ປະການໃດ. ແຕ່ກົງກັນຂ້າມ ມັນແຮງເຮັດໃຫ້ວຽກການຈຳໜ່າຍກ້ວາງຂວາງອອກຕື່ມອີກ.ດັ່ງນັ້ນ ຕັ້ງແຕ່ໄລຍະທຳອິດຂອງການເອົາບໍລິສັດອຸດສາຫະກຳ - ເຂົ້າສະມາຄົມເປັນຕົ້ນມາ ໜ້າທີ່ອັນຮີບດ່ວນແມ່ນການແກ້ໄຂການຈຳໜ່າຍ ແລະການຈັດຕັ້ງອົງການສະເພາະ ວຽກການຈຳໜ່າຍ. ຄວາມຫຍຸ້ງຍາກໃນການຈຳໜ່າຍຜົນຜະລິດກະສິກຳ ໄລຍະປີ ໑໙໘໘–໑໙໘໙ ໄດ້ຊີ້ໃຫ້ເຫັນ ຢ່າງຈະແຈ້ງວ່າຖ້າບໍ່ເອົາໃຈໃສ່ວຽກການຈຳໜ່າຍ ຈະບໍ່ສາມາດ ຂະຫຍາຍ

ອຸດສາຫະກຳລັດໄວໄດ້.

ບາດລ້ຽວໃໝ່ຂອງການພົວພັນຊຶ່ງກັນແລະກັນລະຫວ່າງສະພາເສດຖະກິດແຫ່ງຊາດສູງສຸດ ແລະສະມາຄົມສະຫະບໍລິສັດ–ແມ່ນເລີ່ມຕົ້ນແຕ່ເວລາ ທີ່ມີກອງປະຊຸມຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ຄັ້ງວັນທີ ໕ ມີນາ ໑໙໘໔ . ກອງປະຊຸມຕົກລົງວ່າ, ສະພາເສດຖະກິດແຫ່ງຊາດສູງສຸດຈະຕ້ອງໃກ້ຊິດຕິດແທດກັບກົງຈັກການຄ້າຂອງຕົນ.ຍ້ອນບໍ່ມີກົງຈັກສະເພາະຂອງສະພາເສດຖະກິດແຫ່ງຊາດສູງສຸດ ເພື່ອນຳພາສະມາຄົມສະຫະບໍລິສັດຄືແນວນັ້ນ, ຄະນະປະທານສະພາເສດຖະກິດແຫ່ງຊາດສູງສຸດ ສະຫະພາບໂຊວຽດ ຈຶ່ງຍອມຮັບເຫັນດີ ໃຫ້ຈັດຕັ້ງຄະນະກຳມາທິການການຄ້າ ຢູ່ໃນທ່າມກາງຂອງສະພາເສດຖະກິດແຫ່ງຊາດສູງສຸດ ທີ່ມີໜ້າທີ່ຕິດຕາມ ສະມາຄົມສະຫະບໍລິສັດ ແລະອົງການການຄ້າຕ່າງໆ ຂອງສະພາ – ເສດຖະກິດແຫ່ງຊາດສູງສຸດ ໃນການປະຕິບັດມະຕິຮ່ວມ ແຫ່ງຊາດ ທາງດ້ານຄຸ້ມຄອງການຄ້າ, ວາງມາດຕາການເພື່ອລົດຜ່ອນຄ່າເກັບມ້ຽນ, ຈຳກັດພໍ່ຄ້າມືກາງ ແລະສຶກສາ ຄົ້ນຄ້ວາຜົນປະໂຫຍດ ການໃຊ້ທຶນເອກະຊົນຄືແນວໃດ.

ໃນເມື່ອປັບປຸງບົດບາດການນຳພາ ທາງດ້ານຈຳໜ່າຍຜົນຜະລິດອຸດສາຫະກຳລັດຂອງຕົນໄດ້ແລ້ວ, ສະພາເສດຖະ ກິດແຫ່ງຊາດສູງສຸດ ໄດ້ປັບປຸງບົດບາດຄຸ້ມຄອງຂອງສະມາຄົມສະຫະບໍລິສັດ ໃນທ້ອງຕະຫລາດວັດຖຸດິບ ແລະຜະລິດຕະພັນທາງດ້ານອຸດສາຫະກຳໄປນຳ. ເດືອນພະຈິກ ປີ ໑໙໘໔ ໄດ້ມີຂໍ

ຕົກລົງໃຫ້ສະມາຄົມສະຫະບໍລິສັດ ແລະບັນດາບໍລິສັດທີ່ມີຄວາມສຳຄັນອັນດັບຊາດ ຮັບຜິດຊອບສະພາບຕະຫລາດທາງດ້ານສິນຄ້າຊຸດສາຫະກຳ ໂດຍສະເພາະ ຢູ່ໃນຂອດທີ່ອົງການເຫລົ່ານີ້ເປັນແຫລ່ງຕົ້ນຕໍຂອງພະລາທິການສິນຄ້າ.

ທິດທາງປັບປຸງບົດບາດສະມາຄົມສະຫະບໍລິສັດຂອງສະພາ-ເສດຖະກິດແຫ່ງຊາດສູງສຸດ ໃນການຈັດຕັ້ງ ການຈຳໜ່າຍ ແລະລຳລຽງສິນຄ້າຊຸດສາຫະກຳລັດນັ້ນ ແມ່ນຍ້ອນຢາກ ໂອນໜ້າທີ່ຈຳໜ່າຍຂອງສະຫະບໍລິສັດ ໄປຜ່ານສະເພາະ ແຕ່ສະມາຄົມເທົ່ານັ້ນ.

ໃນໄລຍະປີຟື້ນຟູເສດຖະກິດ, ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ປະຕິບັດທິດທາງ ທັນປຽ່ນສະມາຄົມ ສະຫະບໍລິສັດໃຫ້ເປັນກົງຈັກຮັບຜິດຊອບແຜນການແລະຄຸ້ມຄອງ; ຈຳເປັນຈະຕ້ອງໄດ້ດັດແປງສາຍການພົວພັນ ລະຫວ່າງແຕ່ລະ ສະມາຄົມສະຫະບໍລິສັດ, ລະຫວ່າງບໍລິສັດຊຸດສາຫະກຳ ແລະສາຂາບໍລິສັດບໍ່ແມ່ນສະມາຊິກສະມາຄົມ ແລະສະຫະບໍລິສັດ, ບັນດາສະຫະກອນຕ່າງໆແລະອື່ນໆ ໂດຍການປັບປຸງຮູບການພົວພັນແບບສັນຍາໃຫ້ດີຂຶ້ນຕື່ມ.

ໃນສະໄໝ "ລະບົບກອມມູນິດ ທະຫານ" ຊຸດສາຫະກຳແມ່ນຜະລິດຕາມແນວທາງແບ່ງປັນຂອງລັດແຕ່ຕົກມາໃນສະ - ໄໝນະໂຍບາຍເສດຖະກິດໃໝ່ ສະພາບການຊ້ຳມີການ ທັນປຽ່ນ ຢ່າງຂາດຕົວ, ບໍລິສັດຊຸດສາຫະກຳ ໄດ້ເອົາຕົວ ອອກຈາກການປ້ອນວັດຖຸດິບຂອງລັດ ແລະກາຍມາເປັນບໍລິສັດທີ່ຈຸ້ມ

ຄອງຕົນເອງທາງດ້ານເສດຖະກິດ. ອັນນີ້ໝາຍຄວາມວ່າໄດ້ມີປະກົດການອັນໃໝ່ຂຶ້ນທາງດ້ານຮູບການພົວພັນຊຶ່ງກັນແລະກັນທາງດ້ານເສດຖະກິດ ລະຫວ່າງບັນດາບໍລິສັດຊຸດສາຫະກຳ . ຊຸດສາຫະກຳຂອງລັດ ໄດ້ຫັນອອກຈາກຫລັກການແບ່ງປັນການລຳລຽງ ແລະຈຳໜ່າຍເຂົ້າສູ່ຫລັກການພົວພັນແບບມີສັນຍາ. ໃນໄລຍະຫ້າອິດ ບໍລິສັດ ແລະສະຫະບໍລິສັດ ທີ່ຫັນຕົວມາເປັນບໍລິສັດວິສາຫະກິດ ໄດ້ປະຕິບັດການພົວພັນແບບມີສັນຍາ, ຊຶ່ງບໍ່ມີຫຍັງແປກຕ່າງຈາກການພົວພັນ ແບບເອກະຊົນ. ການທີ່ໃຫ້ເສລີພາບ ແກ່ບໍລິສັດຊຸດສາຫະກຳ ໃນການພົວພັນຊຶ່ງກັນແລະກັນຄືແນວນີ້, ຍ້ອນການຊ່ວງຊິງຫາວັດຖຸໝູນວຽນ, ເຮັດໃຫ້ບໍລິສັດເຫລົ່ານີ້ ຊອກຫາແຕ່ກຳໄລເທົ່ານັ້ນ ໃນການພົວພັນກັບຄູ່ຄ້າຂອງຕົນ.

ການປະຕິບັດເສດຖະກິດເສລີແນວນີ້ ແມ່ນຕ້ານກັບເສດຖະກິດ ຂຶ້ນແຜນການໂຊວຽດ. ໄລຍະປີ ໑໙໘໘-໑໙໘໙ ລາຄາໄດ້ຖີບຂຶ້ນ ໂດຍອ້າງເຫດຜົນວ່າ ເພື່ອປັບປຸງລາຄາສິນຄ້າຊຸດສາຫະກຳ, ການຊ່ວງຊິງຮ້າຍແຮງທີ່ສຸດ ຢູ່ໃນທ້ອງຕະຫລາດເຂດກາງ ໃນຂະນະທີ່ຂາດສິນຄ້າໃນເຂດນອກ, ສິ່ງດັ່ງກ່າວນີ້ໄດ້ເຮັດໃຫ້ສະພາເສດຖະກິດແຫ່ງຊາດສູງສຸດກະທົບກະເທືອນບໍ່ແມ່ນນ້ອຍ. ຢາກກຳຈັດຜົນສະທ້ອນບໍ່ດີດັ່ງກ່າວໄດ້ມີແຕ່ເພີ່ມທະວີປັບປຸງໃຫ້ການພົວພັນຊຸດສາຫະກຳລັດ ກັບສາຂາຂອງຕົນໃຫ້ມີແຜນການເທົ່ານັ້ນ. ຄວາມຮຽກຮ້ອງອັນເປັນພາວະວິໄສໃຫ້ປັບປຸງແຜນການ ໃນການຈັດຕັ້ງຈັດຫາແລະຈຳໜ່າຍ ຊຸດ

ສາທະກຳຂອງລັດ ໄດ້ສະແດງອອກໃນເຈດຈຳນົງຂອງສະພາ ເສດຖະກິດແຫ່ງຊາດສູງສຸດ ທີ່ຢາກແກ້ໄຂບັນຫານີ້ ໂດຍການ ດັດແປງແຜນການແບບປະຈຳວັນ, ປັບປຸງລະບົບສັນຍາຮ່ວມ, ແລະປັບປຸງລະບຽບວິໄນທາງດ້ານການສັນຍາ.

ໃນວຽກການຈັດຕັ້ງຈັດຫາ ແລະຈຳໜ່າຍຊຸດສາທະກຳ - ຂອງລັດ, ສິ່ງທີ່ມີຄວາມໝາຍສຳຄັນ ແມ່ນການວາງ .ແຜນ ການປະຈຳໄຕມາດ ຂອງສະມາຄົມສະຫະບໍລິສັດ ໃຫ້ແຕ່ລະ ໂຮງຈັກໂຮງງານ. ເຮັດໄດ້ແນວນັ້ນ ຈຶ່ງຈະແກ້ໄຂບັນຫາຈຳ ໜ່າຍ ແລະການຮັບປະກັນ ທາງດ້ານວັດຖຸ - ເຕັກນິກ ໃຫ້ ແກ່ສະຫະບໍລິສັດ ແລະບໍລິສັດໄດ້. ແຕ່ເຖິງແນວໃດກໍດີ ການ ວາງແຜນການປະຈຳໄຕມາດ ໃຫ້ໂຮງຈັກໂຮງງານນັ້ນ ມີຈຸດ ຂາດຕົກບົກພ່ອງຢູ່: ເປັນແຜນການໄລຍະສັ້ນ, ຍັງບໍ່ທັນ- ເໝາະສົມກັບຄວາມຮຽກຮ້ອງຕ້ອງການ ແລະຄວາມອາດສາ ມາດຂອງແຕ່ລະສາຂາ, ຍັງບໍ່ທັນມີການສົມທົບດີ ລະຫວ່າງ ແຜນການຈຳໜ່າຍ ແລະແຜນການຈັດຫາວັດຖຸດິບ ແລະ ສະ ບຽງອາຫານ. ອັນນີ້ແມ່ນອນທີ່ສຸດ ໄດ້ເຮັດໃຫ້ປະສິດທິພາບ- ຂອງແຜນການປະຈຳໄຕມາດລົດຜ່ອນລົງ.

ເພື່ອປັບປຸງລະບົບວາງແຜນວຽກການຈັດຫາແລະຈຳໜ່າຍ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ຫັນມາໃຊ້ການເຊັນສັນ ຍາຮວມ. ການເຊັນສັນຍານັ້ນ ບໍ່ແມ່ນພຽງແຕ່ເພື່ອຈຸດປະສົງ ປ້ອງກັນຄູ່ຮ່ວມເຊັນສັນຍາເທົ່ານັ້ນ, ແຕ່ຫາກຍັງເພື່ອໃຫ້ ມີ ແຜນການປະສານງານ ໃນວຽກການຈັດຫາແລະຈຳໜ່າຍ .

ສັນຍາໄດ້ບົ່ງເງື່ອນໄຂຮວມຂອງການຂາຍ, ລາຄາ ແລະຮູບການສົ່ງສິນຄ້າ. ສັນຍາຮວມແມ່ນເຊັນກັນໃນໄລຍະ ໑ ປີຫາ ໘ ປີ. ດ້ວຍເຫດນັ້ນ ອຸດສາຫະກຳຂອງລັດຈຶ່ງປ່ຽນຈາກການຂາຍຍ່ອຍ ມາໃຊ້ສັນຍາໄລຍະຍາວນານ. ມີການເຊັນສັນຍາຮວມ ລະຫວ່າງສະມາຄົມສະຫະບໍລິສັດດ້ວຍກັນ, ລະຫວ່າງສະມາຄົມສະຫະບໍລິສັດ ແລະສະຫະບໍລິສັດ, ລະຫວ່າງ ສະມາຄົມສະຫະບໍລິສັດ ແລະສະຫະພັນສະຫະກອນບໍລິໂພກສູນກາງ.

ເຖິງແມ່ນວ່າ ປີທຳອິດຂອງນະໂຍບາຍເສດຖະກິດ ໃໝ່ ການເຮັດສັນຍາຈະກວມເອົາ ແຕ່ບາງບໍລິສັດແລະບາງສະຫະບໍລິສັດກໍຕາມ, ແຕ່ເວລາຫັນປ່ຽນເຂົ້າສູ່ສັນຍາຮວມ ການພົວພັນກັນ ແບບບົນພື້ນຖານສັນຍາ ກໍແຜ່ຂະຫຍາຍໄປໃນທົ່ວທຸກ-ຂະແໜງອຸດສາຫະກຳ. ສັນຍາຮວມເປັນພື້ນຖານໃຫ້ແກ່ການເຊັນສັນຍາການຄ້າທົ່ວໄປ ລະຫວ່າງອົງການຂັ້ນລຸ່ມ.

ພາຫະນະສຳລັບການແກ້ໄຂວຽກການຈຳໜ່າຍ ທີ່ແຜ່ຜາຍກວ່າໝູ່ ໃນໄລຍະຟື້ນຟູເສດຖະກິດ ແມ່ນການຈຳໜ່າຍ ສະເພາະແຕ່ລະເຂດ. ການປະຕິບັດດັ່ງກ່າວນີ້ ໄດ້ສ້າງເງື່ອນໄຂໃຫ້ຈຳກັດການຊ່ວງຊິງກັນ ແບບບໍ່ດີໄດ້, ເຮັດໃຫ້ຕະຫຼາດພາຍໃນ ໄດ້ຮັບຜະລິດຕະພັນ ອຸດສາຫະກຳສົມສ່ວນກັນ ແລະກໍເໝາະສົມກັບຄວາມຮຽກຮ້ອງຕ້ອງການຂອງທ້ອງຖິ່ນ. ພ້ອມກັນນັ້ນ ການຈຳໜ່າຍສະເພາະແຕ່ລະເຂດນັ້ນຊ້ຳພັດເຮັດໃຫ້ສະຫະບໍລິສັດໃດໜຶ່ງ ເປັນອົງການຜູກຂາດໃນທ້ອງຕະຫລາດດັ່ງກ່າວ, ເຮັດໃຫ້ ສະກັດກັ້ນການສະແຫວງຫາປັບປຸງຄຸນ

ນະພາບແລະການລຶດຜ່ອນລາຄາຜະລິດ.ອີກປະການຫນຶ່ງ,ສະຫະບໍລິສັດ, ທັງໆທີ່ມີເງື່ອນໄຂ ທາງດ້ານເຕັກນິກແລະວັດຖຸ-ດິບ, ຊ້ຳພັດບໍ່ສາມາດຂະຫຍາຍການຜະລິດ ຕອບສະຫນອງທ້ອງຕະຫລາດ ທີ່ກ້ວາງຂວາງຂຶ້ນແຕ່ລະວັນ. ໃນຕອນທ້າຍຂອງສະໄຫມຟື້ນຟູເສດຖະກິດ, ໃນເວລາທີ່ບັນຫາ ການຂະຫຍາຍການຜະລິດ, ປັບປຸງຄຸນນະພາບເຫັນວ່າການຫລຸດຜ່ອນລາຄາຜະລິດ ໄດ້ມີຄວາມສຳຄັນ, ເວລານັ້ນ ການຈຳຫນ່າຍສະເພາະແຕ່ລະທ້ອງຖິ່ນ ຈຶ່ງມີຜົນດີ. ສະນັ້ນ ຕົກມາໃນ ປີ ໑໙໘໔ ຈຶ່ງໄດ້ວາງບັນຫາການແກ້ໄຂ ວິທີການແກ້ໄຂ ວຽກການຈຳຫນ່າຍຄືນໃຫມ່.

ໃນທ່າມກາງຜູ້ປະຕິບັດເສດຖະກິດ ມີແນວຄິດທີ່ວ່າ ເອົາວຽກການຈຳຫນ່າຍຮວມສູນ ຜ່ານສະມາຄົມສະຫະບໍລິສັດ ໄດ້ແຜ່ຂະຫຍາຍຫລາຍ. ແລະແນວຄິດດັ່ງກ່າວ ກໍໄດ້ຮັບ ຄວາມສະຫນັບສະຫນູນ ຈາກສະພາເສດຖະກິດແຫ່ງຊາດ ສູງສຸດ. ການທີ່ເອົາວຽກການຈຳຫນ່າຍຮວມສູນ ຜ່ານສະມາຄົມສະຫະບໍລິສັດນັ້ນ ໄດ້ເຮັດໃຫ້ກົງຈັກການຄ້າທັງຫມົດ ຕົກຢູ່ໃນກຳ ມືຂອງສະມາຄົມສະຫະບໍລິສັດ, ອັນທີ່ເຮັດໃຫ້ສາມາດເຮັດວຽກການຈຳຫນ່າຍ ໄດ້ສົມສ່ວນດີ ແລະຍັງສາມາດຫລຸດຜ່ອນ ໂສຫຸ້ຍການຄ້າຂອງອຸດສາຫະກຳໄດ້ອີກ. ການທີ່ເອົາວຽກການ-ຈຳຫນ່າຍຮວມສູນ ໄດ້ຊຸກຍູ້ໃຫ້ແກ້ໄຂບັນຫາປັບປຸງຄຸນນະພາບຜະລິດຕະພັນອຸດສາຫະກຳໄດ້ດີ, ຮັບປະກັນມາດຕາຖານການຜະລິດໄດ້ ແລະສາມາດປັບປຸງການກວດກາການປະຕິບັດຫນ້າ

ທີ່ປັບປຸງຄຸນນະພາບສິນຄ້າ ຂອງບໍລິສັດໄດ້ອີກດ້ວຍ. ທິດທາງສຳຄັນອັນໜຶ່ງ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ແມ່ນເຮັດແນວໃດ ຢາກໃຫ້ມີການປະສານສົມທົບກັນລະຫວ່າງວຽກການການຄ້າຂອງບໍລິສັດ ແລະການແກ້ໄຂບັນຫາຕົ້ນຕໍການຜະລິດຂອງອຸດສາຫະກຳລັດ. ການແກ້ໄຂບັນຫາດັ່ງກ່າວຈະບໍ່ສາມາດເຮັດໄດ້ ໃນໄລຍະເວລາອັນສັ້ນ, ການແກ້ໄຂ ໄດ້ແກ່ຍາວ ຊົ່ວໄລຍະຟື້ນຟູເສດຖະກິດ.

ການມອງເຫັນຄວາມສຳຄັນ ຕ້ອງເອົາວຽກການ ການຄ້າແລະການຜະລິດສົມທົບກັນ ໄດ້ຖືກຍົກຂຶ້ນຄັ້ງທຳອິດໃນກອງປະຊຸມໃຫຍ່ຂອງພັກ ຄັ້ງທີ XII ເດືອນເມສາ ໑໙໒໓.ມະຕິກອງປະຊຸມໄດ້ເວົ້າວ່າ, ຍ້ອນກິດຈະການຂອງສະຫະບໍລິສັດ ແລະບໍລິສັດຕ່າງໆ ເປັນເອກະລາດ, ຍ້ອນກິດຈະການຂອງສະມາຄົມສະຫະບໍລິສັດ ນັບມື້ນັບສຳຄັນ ແລະຍ້ອນສະພາບລວມຂອງອຸດສາຫະກຳ ຈຶ່ງຈຳເປັນຕ້ອງມີການປະສານງານ ລະຫວ່າງການຜະລິດລ້າໆ ແລະການຄ້າລ້າໆ ດີກ່ວາເກົ່າ("ພັກກອມມູນິດແຫ່ງສະຫະພາບໂຊວຽດ ໃນມະຕິ,ຂໍ້ຕົກລົງ ຂອງກອງປະຊຸມໃຫຍ່ຕ່າງໆ,ກອງປະຊຸມສູນກາງສະໄໝສາມັນ",ເຫລັ້ມທີ ໒,ໜ້າ ໔໒໐).

ຂະບວນເອົາການຄ້າແລະການຜະລິດ ຂອງອຸດສາຫະກຳ-ລັດ ເຂົ້າສົມທົບກັນ ໄດ້ເລັ່ງລັດທີ່ສຸດ,ໃນທ້າຍປີ ໑໙໒໔ ໃນຂະນະທີ່ສະພາເສດຖະກິດແຫ່ງຊາດສູງສຸດ ຮັບຜິດຊອບບັນຫານີ້ໂດຍກົງ. ອັນທີ່ມີບົດບາດສຳຄັນທີ່ສຸດ ແມ່ນກອງປະຊຸມບັນ

ດາອົງການ ຂຶ້ນກັບສະພາ ເສດຖະກິດແຫ່ງຊາດສູງສຸດທົ່ວສະຫະພາບ ທີ່ໄດ້ເປີດຂຶ້ນໃນເດືອນທັນວາ ປີ ໑໙໘໔. ໃນກອງປະຊຸມດັ່ງນີ້ ໄດ້ຄົ້ນຄ້ວາບັນຫາການຫມູນໃຊ້ ສະມາຄົມສະຫະບໍລິສັດ ເພື່ອຍົກສູງປະສິດທິພາບແຮງງານ ໃນການອຸດສາຫະກຳ ແລະລົດຜ່ອນລາຄາຂາຍຍ່ອຍ. ໃນຕົວຈິງແລ້ວແມ່ນການກຳນົດປະເພດສິນຄ້າ, ກຳນົດຈຳນວນປະເພດສິນຄ້າທີ່ຜະລິດອອກ, ກຳນົດມາດຕາຖານວັດຖຸດິບ ແລະຜົນຜະລິດ,ລົດຜ່ອນການໃຊ້ຈ່າຍແລະອື່ນໆ.

ເຖິງແນວໃດກໍດີ ສະມາຄົມສະຫະບໍລິສັດ ກໍຍັງບໍ່ອາດສາມາດ ກວມເອົາບໍລິສັດອຸດສາຫະກຳລັດທັງຫມົດໄດ້.ບໍລິສັດອຸດສາຫະກຳ ຂະຫນາດນ້ອຍແລະຂະຫນາດກາງສ່ວນຫລວງຫຼາຍ ແລະອຸດສາຫະກຳທ້ອງຖິ່ນ ເກືອບຫມົດທຸກແຫ່ງຍັງຢູ່ນອກຂອບເຂດຂອງລະບົບສະມາຄົມຢູ່. ໃນທີ່ສຸດ, ສະພາເສດຖະກິດແຫ່ງຊາດສູງສຸດ ກໍຍັງບໍ່ທັນນຳພາ ການອຸດສາຫະກຳລັດ ທັງຫມົດ ຜ່ານສະມາຄົມສະຫະບໍລິສັດໄດ້ເຕັມສ່ວນ. ໃນໄລຍະສອງປີທຳອິດ ຂອງສະໄຫມຟື້ນຟູເສດຖະກິດ ຍັງບໍ່ທັນໄດ້ເວົ້າເຖິງຄວາມຈຳເປັນ ໃນການຈັດຕັ້ງກົງຈັກ ການນຳສະເພາະຂະແຫນງອຸດສາຫະກຳທັງຫມົດ. ສະນັ້ນ ຂະບວນການຟື້ນຟູເສດຖະກິດ ກ່ອນອື່ນຫມົດ ໄດ້ປະຕິບັດໃນບັນດາບໍລິສັດທີ່ເຂົ້າໃນສະມາຄົມ. ວຽກງານໃນໄລຍະຟື້ນຟູນັບມື້ນັບຫລາຍ ແລະຈຳນວນບໍລິສັດ ກໍເພີ່ມທະວີຂຶ້ນ ສະນັ້ນ ຈະລຸ້ມຄອງວຽກການໄລຍະນີ້ ດ້ວຍໂຄງຮ່າງຈັດຕັ້ງອັນເກົ່າເຫັນວ່າ ມີຄວາມຫຍຸ້ງ

ຍາກ. ນອກຈາກນັ້ນ, ການຄ້າທັງໝົດ ກໍຕົກຢູ່ໃນກຳມືຂອງສະມາຄົມສະຫະບໍລິສັດ, ເວລາທີ່ສະຫະບໍລິສັດເຂົ້າເປັນສະມາຊິກ ສະມາຄົມແລ້ວ ກໍເລີຍກາຍເປັນອົງການຜະລິດເທົ່ານັ້ນ. ໃນສະພາບດັ່ງກ່າວ, ສະມາຄົມສະຫະບໍລິສັດ ກໍຄືພະແນກ - ຕ່າງໆ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ຕ່າງກໍບໍ່ສາມາດຮັບປະກັນ ຄວາມເປັນເອກະພາບ ທາງດ້ານທິດທາງ - ເສດຖະກິດແລະເຕັກນິກ ໃນແຕ່ລະຂະແໜງ ອຸດສາຫະກຳ. ສະມາຄົມບໍ່ສາມາດຮັບປະກັນ ຄວາມເປັນເອກະພາບ ທາງດ້ານນະໂຍບາຍເສດຖະກິດແລະເຕັກນິກໄດ້ນັ້ນ ກໍຍ້ອນວ່າ ບໍ່ສາມາດຄຸ້ມຄອງທຸກຂະແໜງອຸດສາຫະກຳ. ພະແນກຕ່າງໆ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ກໍຄືກັນ ເຮັດບໍ່ໄດ້ກໍຍ້ອນມີໜ້າທີ່ສະເພາະ (ກົມໃຫຍ່ອຸດສາຫະກຳລັດຮັບຜິດຊອບວຽກການຜະລິດແລະບັນຫາເຕັກນິກ, ກົມໃຫຍ່ເສດຖະກິດລັດຮັບຜິດຊອບການຂຶ້ນແຜນການ ແລະນະໂຍບາຍເສດຖະກິດ). ໃນໄລຍະເລີ່ງການສະໄຫມຟື້ນຟູເສດຖະກິດ ເລີຍເກີດບັນຫາຈຳເປັນຕ້ອງຈັດຕັ້ງອົງການໜຶ່ງຂຶ້ນ ທີ່ສາມາດຮັບຜິດຊອບ ການສົມທົບວຽກການຜະລິດ ແລະວຽກການຄ້າ ຢູ່ໃນແຕ່ລະ ຂະແໜງອຸດສາຫະກຳ.

ປີ ໑໙໘໔ ອົງການດັ່ງກ່າວ ເລີຍກາຍເປັນຂາປະຊຸມປະຈຳ. ອົງການນີ້ຖືກຈັດຕັ້ງຂຶ້ນໃນທ່າມກາງກົມໃຫຍ່ເສດຖະກິດລັດ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ສະຫະພາບໂຊວຽດ ແລະໃນທ່າມກາງກົມໃຫຍ່ເສດຖະກິດ ສະພາເສດຖະ

ກິດແຫ່ງຊາດສູງສຸດ ສາທາລະນະລັດ ສັງຄົມນິຍົມ ສະຫະພັນ ລັດເຊຍ. ປະຊຸມປະຈຳດັ່ງກ່າວ ແມ່ນມີໜ້າທີ່ຮັບຜິດຊອບບັນ ຫາການກິດຈະການ ຂອງຂະແໜງຊຸດສາຫະກຳດັ່ງກ່າວ(ກະ ກຽມຮ່າງມະຕິ ສະພາເສດຖະກິດແຫ່ງຊາດສູງສຸດ ທີ່ພົວພັນ ກັບໜົດຂະແໜງຊຸດສາຫະກຳ,ຮ່າງແຜນການຜະລິດແລະການ ຈັດຫວົດຖຸດິບ, ຮ່າງໂຄງການການເງິນ ແລະການຮວມສູນ- ການຜະລິດ), ປະສານກິດຈະການ ຂອງສະມາຄົມສະຫະບໍ ລິສັດ ຫລືກຸ່ມບໍລິສັດ ແບບສັນຍານິຍົມ ໃນໜ້າທີ່ຕ່າງໆ ຂອງ ຂາປະຊຸມປະຈຳນັ້ນ ກໍມີໜ້າທີ່ຮວມຕົ້ນຕໍເໜືອນກັນ,ກ່ອນອື່ນ ໝົດ ແມ່ນອົງການໜຶ່ງ ທີ່ເຕົ້າໂຮມເອົາສະຫະບໍລິສັດຊຸດສາ ຫະກຳຂອງລັດ ທັງສະມາຊິກສະມາຄົມ ແລະບໍ່ທັນໄດ້ເຂົ້າສະ ມາຄົມ ຢູ່ໃນຂະແໜງການໜຶ່ງ ຂອງຊຸດສາຫະກຳ. ອັນທີ ສອງ, ຕາມລັກສະນະການເຄື່ອນໄຫວຂອງມັນ ຂາປະຊຸມປະ ຈຳ ແມ່ນອົງການປະສານງານ ອັນທີສາມ,ທິດທາງຕົ້ນຕໍການ ເຄື່ອນໄຫວຂອງປະຊຸມປະຈຳ ແມ່ນແກ້ໄຂບັນຫາວິທະຍາສາດ ແລະເຕັກນິກ ໃຫ້ການຊຸດສາຫະກຳ.

ເຖິງຢ່າງໃດກໍດີ ຍ້ອນຂາດສູນກາງວາງແຜນ,ສະນັ້ນ ຂາ ປະຊຸມປະຈຳ ຈຶ່ງຂັດຂວາງການປະຕິບັດໜ້າທີ່ສະເພາະໜ້າ ຂອງຕົນ. ດ້ວຍເຫດຜົນດັ່ງກ່າວ ສະພາເສດຖະກິດແຫ່ງຊາດ ສູງສຸດ ຈຶ່ງຕັດສິນໃຈຈັດຕັ້ງຄະນະກຳມະການຂຶ້ນ. ເດືອນສິງ ຫາ ໑໙໔໕ ຄະນະປະທານຂອງສະພາເສດຖະກິດ ແຫ່ງຊາດ ສູງສຸດ ຈຶ່ງໄດ້ລົງມະຕິຈັດຕັ້ງຄະນະກຳມະການເຄມີຂຶ້ນໃນກົມ

ໃຫຍ່ເສດຖະກິດລັດທົ່ວໄປ, ແລະໄດ້ແບ່ງພະແນກເຄມີ, ແກ້ວ ແລະດິນກະເບື້ອງ ຂອງກົມໃຫຍ່ເສດຖະກິດລັດທົ່ວໄປ ໃຫ້ຣັບຜິດຊອບ.

ພ້ອມໆກັນກັບການເຕີບໃຫຍ່ຂະຫຍາຍຕົວ ຂອງສະມາຄົມ-ສະຫະບໍລິສັດ ອຸດສາຫະກຳ ໃນວຽກການຈັດຕັ້ງການພົວພັນ-ເສດຖະກິດ, ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ສ້າງສະມາຄົມສະຫະບໍລິສັດດັ່ງກ່າວ ໃຫ້ກາຍເປັນອົງການຄຸ້ມຄອງຂະແຫນງຫນຶ່ງ ຂອງອຸດສາຫະກຳລັດ. ໃນເມື່ອສະມາຄົມສະຫະບໍລິສັດ ມີຂອບເຂດກິດຈະການຈຳຫນ່າຍ ແລະຈັດຫາ ກ້ວາງອອກຄືແນວນັ້ນ ກໍພາໃຫ້ມີສິດຕັດສິນວຽກການຜະລິດ ຂອງສະຫະບໍລິສັດ ແລະບໍລິສັດເອກະລາດອັນຕື່ມ. ດ້ວຍເຫດນັ້ນ,ມາຣອດຕອນທ້າຍສະໄຫມຟື້ນຟູເສດຖະກິດ, ການຣ່ວມສົມທົບລະຫວ່າງການຈຳຫນ່າຍ ແລະການຜະລິດຈິ່ງຖືກແກ້ໄຂ ດ້ວຍວິທີຈັດຕັ້ງຄະນະກຳມະການ ແລະສຳນັກງານອັນປະຈຳ ສະພາເສດຖະກິດແຫ່ງຊາດສູງສຸດ ແລະດ້ວຍຣູບການປັບປຸງ ວຽກການຈັດຕັ້ງເສດຖະກິດ ຂອງສະມາຄົມສະຫະບໍລິສັດອີກດ້ວຍ.

ການຫັນປ່ຽນເຂົ້າສູ່ນະໂຍບາຍເສດຖະກິດໃຫມ່, ດັດສ້າງບໍລິສັດ ໃຫ້ເປັນບໍລິສັດ ທີ່ຄຸ້ມຄອງຕົນເອງ ທາງດ້ານເສດຖະກິດ ແລະເອົາບໍລິສັດເຫລົ່ານັ້ນ ອອກຈາກການປ້ອນ ວັດຖຸດິບຈາກລັດ, ໄດ້ເກີດບັນຫາກ່ຽວກັບ ການຈັດຫາວັດຖຸດິບ ອີກເທື່ອໃຫມ່. ວຽກການຈັດຫາວັດຖຸດິບ ໃນໄລຍະສົງຄາມກາງເມືອງ ແລະໃນໄລຍະມີການຣຸກຣານ ຈາກພາຍນອກຊ້ຳເປັນ

ໄປໃນຮູບການອື່ນ ທີ່ສອດຄ່ອງກັບສະພາບການໃໝ່ຂອງການຂະຫຍາຍຕົວ ທາງດ້ານເສດຖະກິດ. ໝາຍຄວາມວ່າມັນໄດ້ເຮັດໃຫ້ການຈັດຫາກະແຈກກະຈາຍອອກ ບໍ່ໃຫ້ຮວມສູນ ແລະປ່ຽນແປງວິທີການຈັດຫາວັດຖຸດິບ. ໃນເມື່ອມີທຶນໝູນວຽນແດ່ແລ້ວ ບໍລິສັດຈຳເປັນຕ້ອງຮັບປະກັນວັດຖຸດິບ, ນ້ຳມັນເຊື້ອໄຟ ແລະອຸປະກອນຕ່າງໆເອົາເອງ. ແຕ່ວ່າ ການແກ້ໄຂ ວຽກການຈັດຫາ ດ້ວຍວິທີການດັ່ງກ່າວ ກໍເໝາະສົມ ແຕ່ບາງບໍລິສັດເທົ່ານັ້ນ. ເຖິງແມ່ນວ່າບໍລິສັດນວດໝັງ,ບໍລິສັດສະບູແລະບໍລິສັດເກືອ ຫາກຮັບປະກັນການຜະລິດຂອງຕົນໄດ້ໂດຍອີງໃສ່ວັດຖຸດິບທ້ອງຖິ່ນຕົນກໍຕາມ, ແຕ່ບໍລິສັດຕ່ຳແຜ່ນ ແລະ ບໍລິສັດເຮັດແຜ່ນແພ ຊ້ຳພັດໄກຈາກແຫລ່ງວັດຖຸດິບຂອງຕົນ. ສະນັ້ນການສ້າງຕັ້ງກົງຈັກຫາວັດຖຸດິບ ສະເພາະບໍລິສັດ ດັ່ງກ່າວນັ້ນແມ່ນເປັນວຽກງານສິ້ນເປືອງໂພດ ແຕ່ວຽກງານນັ້ນ ພັດມີຜົນປະໂຫຍດນ້ອຍ. ນອກຈາກນັ້ນ, ວິທີທາງດັ່ງກ່າວໄດ້ເຮັດໃຫ້ທຶນແຈກຢາຍອັນພາໃຫ້ການເງິນຂອງບໍລິສັດອ່ອນເພຽລົງແລະດຶງຄວາມສົນໃຈຂອງບໍລິສັດ ອອກຈາກວຽກການຜະລິດ ແລະພາໃຫ້ມີການຊ່ວງຊີງກັນ ລະຫວ່າງຜູ້ຈັດຫາດ້ວຍກັນ ຢ່າງບໍ່ມີປະໂຫຍດ.

ການສ້າງລະບົບສະຫະບໍລິສັດ ອຸດສາຫະກຳ ກໍຕົກຢູ່ໃນສະພາບດຽວກັນກັບ ບໍລິສັດດັ່ງກ່າວຂ້າງເທິງ, ເຖິງແມ່ນວ່າ -ເປັນສະຫະບໍລິສັດກໍຕາມ ແຕ່ກໍຍັງຈຳເປັນຕ້ອງມີອົງການ ຈັດຫາວັດຖຸດິບ ສະເພາະຄືກັນ, ສຳລັບສະຫະບໍລິສັດ ກໍຈຳເປັນ

ຕ້ອງມີການພົວພັນໂດຍກົງ ກັບຜູ້ຜະລິດວັດຖຸດິບນັ້ນ ເຮັດໃຫ້ມີຄວາມຫຍຸ້ງຍາກອີກ. ດ້ວຍເຫດຜົນດັ່ງກ່າວ, ສະພາເສດຖະກິດແຫ່ງຊາດສູງສຸດ ຈຶ່ງຈຳເປັນຕ້ອງໄດ້ຈັດຕັ້ງສະມາຄົມຜູ້ຜະລິດວັດຖຸດິບອີກ. ອັນນີ້ກໍບໍ່ແມ່ນອື່ນໄກ ນອກຈາກສະພາເສດ-ຖະກິດແຫ່ງຊາດສູງສຸດ ຢາກຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ຂອງອຸດສາຫະກຳລັດ ທາງດ້ານອຸປະກອນ ຊຶ່ງມາແຕ່ຕ່າງປະເທດ, ບໍລິສັດອຸດສາຫະກຳ ແລະສະຫະບໍລິສັດອຸດສາຫະກຳ ຈະໄດ້ຮັບອຸປະກອນຈາກຕ່າງປະເທດກໍໃນເມື່ອສາມາດຈັດຕັ້ງເກັບຊື້ວັດຖຸດິບ ສົ່ງຂາຍຕ່າງປະເທດເອງໄດ້ເພື່ອເປັນການແລກປ່ຽນ. ຈາກນັ້ນ ກໍໄດ້ຈັດຕັ້ງບໍລິສັດ ຂາອອກ ແລະເກັບຊື້ວັດຖຸດິບຂຶ້ນໃນກົມໃຫຍ່ ການຄ້າສູນກາງ ສະພາເສດຖະກິດແຫ່ງຊາດສູງສຸດ.

ການເອົາວຽກການຈັດຫາວັດຖຸດິບ ຮວມສູນອີກບາດກ້າວ-ໜຶ່ງ ແມ່ນການຈັດຕັ້ງສະມາຄົມ. ແຕ່ບາງສະມາຄົມ ຊ້ຳພັດເຮັດແຕ່ວຽກການຈັດຫາວັດຖຸດິບເກີນຂອບເຂດ (ສະມາຄົມສະຫະບໍລິສັດຢາສູບ ແລະກັບໄຟ). ຕົກມາຕອນທ້າຍສະໄໝຟື້ນຟູເສດຖະກິດ ຊ້ຳເກີດມີທ່າອຽງ ຢາກຫັນປ່ຽນສະມາຄົມ-ດັ່ງກ່າວ ໃຫ້ເປັນສະມາຄົມຈັດຫາວັດຖຸດິບ. ຂັ້ນຕົ້ນສະມາຄົມຈັດຫາວັດຖຸດິບ ຮັບປະກັນຫລໍ່ລ້ຽງວັດຖຸດິບ ໃຫ້ສະເພາະແຕ່-ບໍລິສັດ ສະມາຊິກຂອງຕົນເທົ່ານັ້ນ, ຕໍ່ມາສະພາເສດຖະກິດ-ແຫ່ງຊາດສູງສຸດ ສະຫະພາບໂຊວຽດ ຈຶ່ງສັ່ງໃຫ້ຈັດຫາ ວັດຖຸດິບຫລໍ່ລ້ຽງ ບໍລິສັດອຸດສາຫະກຳທັງໝົດ.

ໜ້າທີ່ສຳຄັນຂອງສະພາເສດຖະກິດແຫ່ງຊາດສູງສຸດ ແມ່ນເຮັດແນວໃດ ດຶງດູດສະຫະກອນ ໃຫ້ມາເຮັດວຽກການຈັດຫາວັດຖຸດິບຊຸດສາຫະກຳ ເພາະວ່າ ກ່ອນສະໄໝການປະຕິວັດ, ສະຫະກອນບໍ່ພຽງແຕ່ເຮັດວຽກຈຳໜ່າຍເທົ່ານັ້ນ ແຕ່ກໍ ຍັງເຮັດວຽກການເກັບຊື້ ພືນຜະລິດກະສິກຳມາອີກ (ເຊັ່ນ : ໜັງ, ຂົນສັດ, ປໍ, ຢາສູບ ແລະອື່ນໆ).ສະຫະກອນ ມີບົດຮຽນຫລາຍໃນວຽກການຈັດຫາ ແລະມີກົງຈັກເໝາະສົມດີ . ແຕ່ວ່າ ໃນໄລຍະສົງຄາມກາງເມືອງ ແລະໃນເວລາທີ່ມີການຮຸກຮານຈາກພາຍນອກ ລັດກໍເຮັດວຽກການຈັດຫາ (ລັດຜູກຂາດວັດຖຸດິບກ່ຽວກັບໜັງ, ຢາສູບຊະນິດຕ່າງໆ, ຜູກຂາດການແຈກຢາຍສະບຽງອາຫານ, ສິນຄ້າແລກປ່ຽນ), ການທີ່ລັດຜູກຂາດຄືແນວນີ້ ໄດ້ເຮັດໃຫ້ສະຫະກອນບໍລິໂພກບໍ່ປະຕິບັດວຽກການຈັດຫາວັດຖຸດິບ ຊຸດສາຫະກຳເກືອບໝົດ.ນັບແຕ່ເວລາຫັນເຂົ້າສູ່ນະໂຍບາຍເສດຖະກິດໃໝ່ ສະພາເສດຖະກິດ-ແຫ່ງຊາດສູງສຸດ ໄດ້ດັດສ້າງສະຫະກອນບໍລິໂພກ ເປັນສະຫະກອນຈັດຫາວັດຖຸດິບ ປະເພດຕໍ່ໄປນີ້, ເຊັ່ນ ປ່ານ,ຢາສູບປະເພດຕ່າງໆ ແລະໜັງ. ສະຫະກອນບໍລິໂພກ ເຮັດໜ້າທີ່ອົງການຈັດຫາຫລາຍທີ່ສຸດ ຢູ່ໃນເຂດທີ່ບໍ່ມີກົງຈັກຈັດຫາຊຸດສາຫະກຳລັດ ຫລືວ່າໃນເຂດທີ່ກົງຈັກດັ່ງກ່າວ ບໍ່ມີຄວາມສາມາດພຽງພໍ.

ວຽກການຈັດຫາວັດຖຸດິບ ແລະເຂົ້າຈີ່ຂອງຊຸດສາຫະກຳລັດ ແລະສະຫະກອນກະເສດ ແມ່ນບົນພື້ນຖານການເຊັ່ນ ສັນຍາ

ໂດຍມີການນັບຖືຫລັກການ ຕ່າງຝ່າຍຕ່າງມີຜົນແລະຕ່າງຝ່າຍຕ່າງປະຕິບັດຂໍ້ຜູກພັນ ເພື່ອເຮັດແນວໃດ ໃຫ້ສະຫະກອນ ສາມາດຮັບປະກັນວັດຖຸດິບ ແລະເຂົ້າຈີ່ ໃຫ້ອົງການຕ່າງໆ ຂອງລັດ ເຊັ່ນ ສະຫະບໍລິສັດ, ສະມາຄົມສະຫະບໍລິສັດ ແລະ ອົງການອຸດສາຫະກຳ ໂດຍອີງໃສ່ລະບົບການຄ້າທ້ອງຖິ່ນ.

ຍ້ອນລັດມີທິດທາງຢາກໃຫ້ວຽກການຈັດຫາຮວມສູນ ຈຶ່ງໄດ້ດຶງເອົາວຽກການຈັດຫາ ຈາກບໍລິສັດເອກະລາດມາຂຶ້ນນຳສະຫະບໍລິສັດແລະຕໍ່ມາໃຫ້ມາຂຶ້ນນຳສະມາຄົມສະຫະບໍລິສັດ. ໃນເມື່ອວຽກການຈັດຫາກ້ວາງຂວາງອອກ ພ້ອມດຽວກັນ ມັນກໍຮຽກຮ້ອງໃຫ້ຂະຫຍາຍກົງຈັກຮັບຜິດຊອບວຽກການຈັດຫາແລະຜົນທີ່ສຸດ ກໍເຮັດໃຫ້ມີລາຍຈ່າຍເພີ່ມຂຶ້ນ. ສະພາເສດຖະກິດ-ແຫ່ງຊາດສູງສຸດ ໄດ້ດຶງເອົາສະຫະກອນ ມາ ເຮັດວຽກຈັດຫາ ຢ່າງກ້ວາງຂວາງ ແລະອຳນວຍຄວາມສະດວກໃຫ້ປະຕິບັດຫນ້າທີ່ວຽກການ,ເຮັດໄດ້ຄືແນວນັ້ນ ສະພາເສດຖະກິດແຫ່ງຊາດສູງສຸດ ຈຶ່ງສາມາດຫັນງົບປະມານຄ່າໃຊ້ຈ່າຍ ກ່ຽວກັບວຽກການຈັດຫາ ໄປຫມູນໃນວຽກການຜະລິດຕື່ມໄດ້, ສິ່ງດັ່ງກ່າວ ແມ່ນສອດຄ່ອງກັບແນວທາງ ອຸດສາຫະກຳ ຂອງລັດທີ່ສຸດ.

ເວລາຮວມສູນວຽກການຈັດຫາວັດຖຸດິບກະສິກຳໄດ້ດີແລ້ວ, ສະພາເສດຖະກິດແຫ່ງຊາດສູງສຸດ ຈຶ່ງຫ້າມບໍ່ໃຫ້ອົງການເສດຖະກິດທ້ອງຖິ່ນ ເຮັດຫນ້າທີ່ວຽກການຈັດຫາ. ເວລາຍົກການຈັດຕັ້ງວຽກງານການຈັດຫາ ມາໃຫ້ສະມາຄົມສະຫະບໍລິສັດ -

ແລ້ວ,ສະພາເສດຖະກິດແຫ່ງຊາດສູງສຸດ ກໍໄດ້ສ້າງອົງການ-ຮັບຜິດຊອບຈັດຫາ ໃຫ້ເປັນອົງການຈັດຫາສະເພາະແຕ່ລະຂະແໜງການຜະລິດ ຕົວຢ່າງ, ຢູ່ໃນຂະແໜງຊຸດສາຫະກຳຕ່ຳແຜ່ນມີການຈັດຕັ້ງ ການຈັດຫາສະເພາະ ແຕ່ລະປະເພດວັດຖຸດິບ: ສະມາຄົມ "ແລນ", "ຝ້າຍ", "ປໍ່".ການພົວພັນລະຫວ່າງສະມາຄົມສະຫະບໍລິສັດ ແລະອົງການຈັດຫາວັດຖຸ ດິບຊ່ວຍແມ່ນເປັນໄປບົນພື້ນຖານສັນຍາ.

ມີຫລາຍອົງການຈັດຫາ ທີ່ຮຽກຮ້ອງໃຫ້ມີການປະສານວຽກງານການຈັດຫາ ລະຫວ່າງອົງການຈັດຫາດ້ວຍກັນ.ດ້ວຍເຫດນັ້ນ ໃນເດືອນພຶດສະພາ ປີ ໑໙໘໔ ໃນທ່າມກາງສະພາເສດຖະກິດແຫ່ງຊາດສູງສຸດຂອງ ຈຶ່ງໄດ້ຈັດຕັ້ງຄະນະກຳມະການ-ວັດຖຸດິບຂຶ້ນ. ໜ້າທີ່ຂອງຄະນະກຳມະການວັດຖຸດິບແມ່ນການເກັບກຳເອົາຄວາມຮຽກຮ້ອງຕ້ອງການ ຂອງຊຸດສາຫະ ກຳທາງດ້ານວັດຖຸດິບ, ຊັ່ງຊາຜົນປະໂຫຍດ ລະຫວ່າງຂາເຂົ້າແລະຂາອອກ ຂອງຊຸດສາຫະກຳ.

ວຽກການສຳຄັນອັນໜຶ່ງອີກ ຂອງສະພາເສດຖະກິດ ແຫ່ງຊາດສູງສຸດ ແມ່ນການກຳນົດຮູບການຈັດຫາໃໝ່. ນັບຕັ້ງແຕ່ລັດມີການລົບລ້າງ ການແບ່ງປັນສະບຽງອາຫານ ແບບບັງຄັບແລະການຜູກຂາດ ແຕ່ລະປະເພດວັດຖຸດິບເປັນຕົ້ນມາ, ຫລັກການການບັງຄັບໃຊ້ກ່ຽວກັບການຈັດຫາ ກໍປະຕິບັດນ້ອຍລົງທັນທີ. ແນ່ນອນສ່ວນໜຶ່ງວັດຖຸດິບ ກໍຍັງຜ່ານພາສີ ສະບຽງອາຫານຢູ່ ກ່ອນທີ່ຊຸດສາຫະກຳລັດ ຈະມີສິດຈຳໜ່າຍ,ແຕ່ວ່າຈຳ

ນວນນ້ອຍທີ່ສຸດ. ນັບແຕ່ ໑໙໘໖ ເປັນຕົ້ນມາ ການເສຍພາສີບໍ່ໄດ້ເປັນຮູບວັດຖຸແລ້ວ ແຕ່ເປັນເງິນສົດ, ອັນນັ້ນໝາຍຄວາມວ່າ ບໍ່ມີການປະຕິບັດຫລັກການການບັງຄັບໃຊ້ອີກແລ້ວກ່ຽວກັບວຽກການຈັດຫາວັດຖຸດິບ. ໃນເງື່ອນໄຂດັ່ງກ່າວ ການຈັດຫາແບບມີວິທີການ ຊຸກຍູ້ທາງດ້ານເສດຖະກິດນັ້ນ ຈະຕ້ອງມີບົດບາດອັນສຳຄັນ.

ເພື່ອຢາກຄົ້ນຄ້ວາເຫັນພື້ນຖານນະໂຍບາຍເສດຖະກິດຂອງສະພາເສດຖະກິດແຫ່ງຊາດສູງສຸດ ຈຳເປັນຕ້ອງເບິ່ງ ບັນຫາຄ່າຈັດຫາ. ຄວາມເປັນຈິງກໍມີຢູ່ວ່າ ໄດ້ມີການຄິດໄລ່ ຄັກແນ່ແລ້ວ. ການແກ້ໄຂບັນຫາຄ່າຈັດຫາ ກໍມີຄວາມຫຍຸ້ງຍາກ ບໍ່ນ້ອຍ ເພາະວ່າ ຄິດໄລ່ໃນເງື່ອນໄຂ ທີ່ເສດຖະກິດ ກະແຈກກະຈາຍ ແລະໃນສະພາບທີ່ມີລະບົບເງິນບໍ່ສະດວກ ຈຳເປັນຕ້ອງໄດ້ເອົາໃຈໃສ່ ບໍ່ພຽງແຕ່ອົງປະກອບ ການວາງລາຄາ-ແບບທຳມະດາເທົ່ານັ້ນ, ແຕ່ຍັງຕ້ອງອີງໃສ່ຈຸດພິເສດຂອງສະໄໝຟື້ນຟູເສດຖະກິດອີກ (ເງິນເຟີ້, ອັດຕາການວາງລາຄາເງິນ ຮູບ ຂອງກະຊວງປະຊາຊົນ ວ່າການການເງິນ, ແລະເງື່ອນໄຂການໃຫ້ສິນເຊື່ອ ກໍຂະຫຍາຍຂຶ້ນ). ຖ້າບໍ່ຄິດໄລ່ຈຸດພິ-ເສດດັ່ງກ່າວນີ້ ກໍຈະສ້າງຄວາມເສຍຫາຍ ຢ່າງໃຫຍ່ຫຼວງໃຫ້ແກ່ວຽກງານການຈັດຫາ.

ມາຮອດນີ້ ສະພາເສດຖະກິດແຫ່ງຊາດສູງສຸດ ຕ້ອງໄດ້ຜະເຊີນໜ້າກັບ ໜ້າທີ່ກຳນົດວິທີການຮວມ ໃນການແກ້ໄຂ ບັນຫາວາງລາຄາ ໃນໄລຍະປີທຳອິດ ຂອງນະໂຍບາຍເສດຖະ-

ກິດໃໝ່. ສະພາເສດຖະກິດແຫ່ງຊາດສູງສຸດ ມີຄຳເຫັນວ່າຈະເປັນຕ້ອງໄດ້ຄິດໄລ່ຄ່າພະລິດ ແລະອັດຕາສ່ວນ ປະສິດທິພາບການພະລິດວັດຖຸດິບ ໃຫ້ແກ່ຜູ້ພະລິດອີກດ້ວຍ, ເຮັດຄືແນວນັ້ນຜູ້ກ່ຽວຈຶ່ງຈະມີກຳລັງໃຈພະລິດ ແລະສົ່ງວັດຖຸດິບໃຫ້ ອົງການຈັດຫາຂອງລັດ. ອົງການຈັດຫາ ກໍຈະຕ້ອງຂາຍວັດຖຸດິບຕໍ່ໃນລາຄາຊຶ່ງລືມກັບຄ່າໃຊ້ຈ່າຍ ສະເພາະກິງຈັກຂອງຕົນອີກ.

ບັນຫາທີ່ໜ້າສົນໃຈອັນໜຶ່ງ ແມ່ນຮູບການຈ່າຍຄ່າວັດຖຸດິບທີ່ເກັບແລ້ວ. ໃນດ້ານໜຶ່ງ, ໃນໄລຍະເວລາທີ່ຫັນເຂົ້າສູ່ນະໂຍບາຍເສດຖະກິດໃໝ່ນັ້ນ ໄດ້ມີການແລກປ່ຽນ ດ້ວຍລະບົບເງິນຕາແລ້ວ, ສະນັ້ນ ຮູບການຈ່າຍກໍບໍ່ມີອັນສົງໄສອີກ. ແຕ່ອີກດ້ານໜຶ່ງ ການກ້າວເຂົ້າສູ່ລະບົບແລກປ່ຽນສິນຄ້າ ດ້ວຍເງິນຕາ ຊ້ຳພັດຢູ່ໃນໄລຍະທີ່ຂາດສິນຄ້າ ແລະເງິນ ຮູບ ໂຊວຽດເຟີ້, ດ້ວຍເຫດຜົນດັ່ງກ່າວ ຜູ້ພະລິດວັດຖຸດິບ ຈຶ່ງບໍ່ຢາກຮັບເງິນສົດ ເວລາຂາຍວັດຖຸດິບ. ຄຳສັ່ງສະພາບໍລິຫານສູນກາງທົ່ວລັດເຊຍ ໃນວັນທີ ໑໒ ສິງຫາ ປີ ໑໙໒໑ ໄດ້ອະນຸຍາດໃຫ້ຈ່າຍສິນຄ້າບໍ່ພຽງແຕ່ດ້ວຍເງິນສົດເທົ່ານັ້ນແຕ່ສາມາດຈ່າຍດ້ວຍເຄື່ອງຂອງປະເພດຕ່າງໆ ດ້ວຍລາຄາ ທຽບເທົ່າ (ຕົວຢ່າງເຂົ້າຈີ່). ນັບແຕ່ຕົ້ນປີ ໑໙໒໒ ເປັນຕົ້ນມາ, ໃນວຽກງານການຈັດຫາວັດຖຸດິບ ໄດ້ມີການປ່ຽນແປງຮູບການຊຳລະຄ່າວັດຖຸດິບ ຈາກຮູບການແລກປ່ຽນ ສິ່ງຂອງດ້ວຍ ລາຄາເທົ່າທຽມ ມາເປັນຮູບການຈ່າຍດ້ວຍເງິນສົດ.

ເພື່ອຢາກແກ້ໄຂວຽກງານການຈັດຕັ້ງຈຳໜ່າຍ ແລະ ລຳ

ລຽງຈັດຫາຂອງອຸດສາຫະກຳລັດໃຫ້ໄດ້ຜົນດີຈຳເປັນທີ່ສຸດຕ້ອງ ມີນັກວິຊາສະເພາະ ທີ່ມີລະດັບພໍສົມຄວນ. ໃນໄລຍະ ທຳອິດ ສະພາເສດຖະກິດແຫ່ງຊາດສູງສຸດ ແລະສະມາຄົມສະຫະບໍລິ-ສັດສ່ວນຫລາຍ ແມ່ນອີງໃສ່ພະນັກງານເກົ່າ. ເຖິງຢ່າງໃດກໍດີ, ຈຳເປັນຕ້ອງໃຫ້ມີພະນັກງານວິຊາສະເພາະທີ່ເຂົ້າໃຈຈຸດໝາຍປາຍທາງ ແລະໜ້າທີ່ຂອງນະໂຍບາຍເສດຖະກິດ ສະຫະພາບໂຊວຽດ ແລະຮູ້ຈັກໝູນໃຊ້ ໃຫ້ປະກົດຜົນເປັນຈິງ . ສະນັ້ນ ສະພາເສດຖະກິດແຫ່ງຊາດສູງສຸດ ຈຶ່ງໄດ້ຈັດຕັ້ງການສ້າງພະນັກງານການຄ້າໃໝ່ອີກ, ໄດ້ຈັດຕັ້ງການ ຮ່ຳຮຽນວຽກການການຄ້າ, ການຮ່ຳຮຽນໄດ້ຈັດຕັ້ງຂຶ້ນ ທີ່ສຳນັກງານການຄ້າ ແລະຢູ່ໃນສະພາເສດຖະກິດແຫ່ງຊາດສູງສຸດເອງ . ທຸກໆສຳນັກງານເສດຖະກິດ ມີສິດສົ່ງພະນັກງານຂອງຕົນ ມາຮ່ຳຮຽນໃນທີ່ນັ້ນ. ນອກເໜືອຈາກນັ້ນ ພະນັກງານທີ່ຈະໄປ-ປະຕິບັດວຽກງານການຄ້າ ຢູ່ຕ່າງປະເທດກໍຖືກສ້າງຂຶ້ນ ຢູ່ໃນກະຊວງປະຊາຊົນວ່າການຕ່າງປະເທດເອງ.

<u>ສະມາຄົມສະຫະບໍລິສັດ ໃນລະບົບຄຸ້ມຄອງ</u>
<u>ອຸດສາຫະກຳໂຊວຽດໃນໄລຍະຟື້ນຟູ</u>

ໃນໄລຍະຟື້ນຟູ, ສະມາຄົມສະຫະບໍລິສັດ ມີບົດບາດສຳຄັນຢ່າງຍິ່ງ ໃນລະບົບຄຸ້ມຄອງອຸດສາຫະກຳຂອງລັດ. ໃນໄລຍະປີເຄິ່ງທຳອິດ ສະມາຄົມສະຫະບໍລິສັດ ສາມາດເຕົ້າໂຮມເອົາ

ສະຫະບໍລິສັດ ຮອດ ໑໘໙ ແຫ່ງໃນຈຳນວນ ໓໖໐ ແຫ່ງທີ່ມີຢູ່ ເວລານັ້ນ, ໕໐% ຂອງບໍລິສັດ ແລະ ໗໙% ຂອງກຳລັງແຮງ ງານທັງໝົດ ຂອງສະຫະບໍລິສັດອຸດສາຫະກຳແລະໃນໄລຍະຕໍ່ ມາ ອັດຕາສ່ວນສະຫະບໍລິສັດເຂົ້າສະມາຄົມແຮງເພີ່ມຂຶ້ນຫຼາຍ.

ວຽກງານການເຄື່ອນໄຫວຂອງສະມາຄົມ ສ່ວນໃຫຍ່ ແມ່ນ ການຈຳໜ່າຍສິນຄ້າ ທີ່ບໍລິສັດສະມາຊິກຜະລິດອອກມາໄດ້ : ຈຳໜ່າຍສິນຄ້າດັ່ງກ່າວ ຢູ່ຕະຫລາດພາຍໃນ ແລະ ປະກອບ ສ່ວນໃນວຽກງານຂາອອກ ແລະຂາເຂົ້າ.ແຕ່ສິ່ງສຳຄັນພິເສດ ນັ້ນ ແມ່ນວຽກງານການຈັດຕັ້ງຈຳໜ່າຍຜະລິດຕະພັນ ອຸດສາ ຫະກຳຢູ່ຕະຫຼາດພາຍໃນ.ໃນໄລຍະແຕ່ປີ໑໙໘໓-໑໙໘໔ ຫາປີ ໑໙໘໕-໑໙໘໖ ການແລກປ່ຽນສິນຄ້າຂອງສະມາຄົມຢູ່ຕະຫຼາດ ພາຍໃນໄດ້ເພີ່ມຂຶ້ນຈາກ ໑໙໗,໘ ລ້ານຣູບ ເຖິງ ໘໗໙໓,໘ ລ້ານ ຣູບ , ໝາຍຄວາມວ່າ ໄດ້ເພີ່ມຂຶ້ນເຖິງ ໓ ເທົ່າຕົວ. ໂດຍສະເພາະແມ່ນສະມາຄົມ ສະຫະບໍລິສັດຕ່ຳແຜ່ນ ທົ່ວລັດ ເຊຍ, ສະມາຄົມສະຫະບໍລິສັດ ເຂດອູລານ ສະມາຄົມສະຫະ ບໍລິສັດນ້ຳມັນ ສະມາຄົມສະຫະບໍລິສັດໜັງ ທົ່ວລັດເຊຍ ທີ່ໄດ້ ເອົາເຄື່ອງຜະລິດອອກສູ່ການສັນຈອນຫລາຍ.ໃນໄລຍະ໑໙໘໕ ຫາ ໑໙໘໖ ສະຫະບໍລິສັດດັ່ງກ່າວ ໄດ້ຜະລິດສິນຄ້າ ໄດ້ທັງ ໝົດ ໕໔,໑% ທີ່ເປັນສິນຄ້າຈຳໜ່າຍໃນຕະຫລາດພາຍໃນ.

ໃນການຈຳໜ່າຍການຂາຍຍົກ ມີບົດບາດຫລາຍ ທີ່ສຸດ, ການຂາຍຍົກໄດ້ກວມເອົາ ໙໓% ຂອງບໍລິມາດຜະລິດ ຕະພັນ ທັງໝົດ ທີ່ຈຳໜ່າຍຢູ່ຕະຫລາດພາຍໃນ.

ສິ່ງທີ່ເປັນຫນ້າສົນໃຈ ແມ່ນການແບ່ງການຈຳຫນ່າຍສິນຄ້າຍົກ ລະຫວ່າງແຕ່ລະອົງການຕົວແທນຈຳຫນ່າຍ (ຈົ່ງເບິ່ງເປີເຊັນໃນຕາຕະລາງດັ່ງລຸ່ມນີ້).

ຕາຕະລາງ

ຕົວແທນຈຳຫນ່າຍ	໑໙໘໓-໘໔	໑໙໘໔-໘໕	໑໙໘໕-໘໖
ອົງການລັດ	໔໕,໖	໔໘,໘	໓໗,໙
ສະຫະກອນ	໓໖,໔	໔໔,໔	໕໑,໔
ເອກະຊົນ	໑໗,໐	໑໓,໔	໙,໗
ລວມ	໑໐໐	໑໐໐	໑໐໐

ຕາຕະລາງນີ້ໄດ້ຊີ້ໃຫ້ເຫັນວ່າ ມີສອງແງ່ຂະຫຍາຍໃນວຽກງານການຈຳຫນ່າຍ ຂອງສະມາຄົມສະຫະບໍລິສັດ. ດ້ານຫນຶ່ງ, ຊີ້ໃຫ້ເຫັນວ່າ ອັດຕາສ່ວນການຈຳຫນ່າຍຂອງເອກະຊົນໃນຕະຫລາດພາຍໃນ (ແຕ່ປີ ໑໙໘໓-໘໕ ເຖິງປີ ໑໙໘໕-໘໖) ໄດ້ຫລຸດລົງເກືອບສອງເທົ່າຕົວ, ອີກດ້ານຫນຶ່ງ ອັດຕາສ່ວນການຈຳຫນ່າຍຂອງສະຫະກອນ ໄດ້ເພີ່ມທະວີຂຶ້ນ, ແຕ່ປີ ໑໙໘໕-໑໙໘໖ ອັດຕາສ່ວນການຈຳຫນ່າຍຂອງສະຫະກອນຫລາຍກ່ວາເຄິ່ງຫນຶ່ງ ຂອງການແລກປ່ຽນສິນຄ້າທັງຫມົດ. ສະຫະກອນໄດ້

ກາຍເປັນຕົວແທນຈຳໜ່າຍຕົ້ນຕໍຂອງສະມາຄົມ, ແລະສິ່ງດັ່ງ-ກ່າວນີ້ ສອດຄ່ອງກັບທິດທາງຮວມ ຂອງສະພາເສດຖະ ກິດແຫ່ງຊາດສູງສຸດ ສະຫະພາບໂຊວຽດ ຊຶ່ງແນໃສ່ ໂອນວຽກການຈຳໜ່າຍຍ່ອຍນີ້ ໃຫ້ຂຶ້ນກັບລະບົບສະຫະກອນ.

ກ່ອນໜ້າປີ ໑໙໘໕, ການພົວພັນລະຫວ່າງສະມາຄົມແລະສະຫະກອນ ແມ່ນເປັນໄປຕາມສັນຍາ ການຄ້າທຳມະດາເທົ່ານັ້ນ. ແຕ່ວ່າ, ການປະຕິບັດສັນຍາການຄ້າຍ່ອຍດັ່ງກ່າວ ບໍ່ສອດຄ່ອງກັບທິດທາງຂອງພັກ ທີ່ຢາກປັບປຸງລະບົບ ແຜນການເສດຖະກິດໂຊວຽດ. ສະນັ້ນ ນັບແຕ່ປີ ໑໙໘໕ ເປັນຕົ້ນມາການພົວພັນລະຫວ່າງ ຊຸດສາຫະກຳ ແບບສະມາຄົມ ແລະສະມາຄົມບໍລິໂພກສູນກາງ ຈຶ່ງປ່ຽນມາເປັນຮູບການສັນຍາ ການຄ້າ ໄລຍະຍາວນານ ແທນຮູບການສັນຍາ ອັນໜຶ່ງອັນດຽວ.

ບາດກ້າວທຳອິດຂອງທິດທາງດັ່ງກ່າວ ກໍໄດ້ເລີ່ມມາແຕ່ໄລຍະຕົ້ນ ຂອງການເອົາບໍລິສັດ ເຂົ້າສະມາຄົມພຸ້ນ. ສະຫະບໍລິສັດນ້ຳຕານ ໃນເດືອນຕຸລາ ໑໙໘໘ ແລະສະຫະບໍລິສັດ ເກືອໃນເດືອນມີນາ ໑໙໘໙ ໄດ້ເຊັນສັນຍາກັບສະມາຄົມ ບໍລິໂພກສູນກາງວ່າ ຈະຈຳໜ່າຍສິນຄ້າຂອງຕົນສ່ວນໜຶ່ງຜ່ານສະມາຄົມບໍລິໂພກສູນກາງ. ແຕ່ວ່າ ສະມາຄົມໄດ້ເອົາສິນຄ້າ ຈຳນວນສ່ວນນ້ອຍໜຶ່ງເທົ່ານັ້ນ ຈຳໜ່າຍຜ່ານສະຫະກອນ.

ຫລັງຈາກວິກິດການທາງດ້ານຈຳໜ່າຍໃນລະດູໃບໄມ້ຫລົ່ນ ໑໙໘໙ ແລ້ວ ສະມາຄົມກໍຄືສະມາຄົມບໍລິໂພກສູນກາງ ຕ່າງກໍບໍ່ມີຄວາມສົນໃຈ ຢາກເຊັນສັນຍາໄລຍະຍາວນານນຳກັນ.ປະ

ກົດການດັ່ງກ່າວນັ້ນ ເກີດຂຶ້ນກໍດ້ວຍເຫດຜົນສອງປະການ ດັ່ງ ນີ້: ສະມາຄົມຊູດສາຫະກຳ ຖືວ່າສະຫະກອນ ບໍ່ມີຄວາມສາມາດພຽງພໍ ທີ່ຈະເອົາສິນຄ້າໄປຈຳໜ່າຍ ໃນຊົນນະບົດໄດ້, ແຕ່ສະຫະກອນກໍຄິດວ່າ ສະມາຄົມຈະບໍ່ສາມາດລຳລຽງສິນຄ້າທີ່ຕົກລົງກັນໃຫ້ຕົນໄດ້ເປັນປົກກະຕິ. ໃນເວລາທີ່ບໍ່ມີຄວາມສົນໃຈເຊັ່ນສັນຍາໄລຍະຍາວ ກັບສະມາຄົມບໍລິໂພກສູນກາງ ດີແນວນັ້ນ ສະມາຄົມກໍຫັນໄປຂະຫຍາຍການພົວພັນ ກັບອົງການຈຳໜ່າຍ ຂັ້ນກາງ (ສະມາຄົມບໍລິໂພກແຂວງ) ແລະຂັ້ນລຸ່ມຂອງສະຫະກອນ. ການປະຕິບັດດັ່ງກ່າວມີຜົນດີ ສຳລັບອົງການຈຳໜ່າຍຂັ້ນລຸ່ມຂອງສະຫະກອນ ເພາະວ່າ ມັນລົບລ້າງການອ່ອນນ້ຳທີ່ສົນເປື້ອງທີ່ສຸດ ຂອງສະມາຄົມບໍລິໂພກ ສູນກາງ ແລະກໍມີຜົນດີໃຫ້ແກ່ສະມາຄົມຄືກັນ ເພາະວ່າ ສາມາດສົ່ງເຄື່ອງຊູດສາຫະກຳ ໄປຈຳໜ່າຍໃນທ້ອງຕະຫລາດຊົນນະບົດໄດ້ໄວ.

ສະມາຄົມບໍລິໂພກສູນກາງ ບໍ່ເຫັນດີເຫັນພ້ອມເດັດຂາດນຳການປະຕິບັດດັ່ງກ່າວ ແລະຖືວ່າເປັນການມ້າງເພ ວຽກການຈຳໜ່າຍຂອງສະຫະກອນ ແລະເປັນການຫລຸດຜ່ອນຖານະບົດບາດການນຳພາ ໃນນາມສູນກາງສະຫະກອນ ບໍລິໂພກຂອງຕົນ. ສະພາບັນດາສະມາຄົມສະຫະບໍລິສັດ ມີທ່າທີຕໍ່ບັນຫານີ້ບໍ່ເປັນເອກະພາບກັນ. ບາງສະມາຄົມສະຫະບໍລິສັດ ກໍຍັງດຳເນີນຈຳໜ່າຍສິນຄ້າຂອງຕົນ ຜ່ານສະຫະກອນ (ສະມາຄົມໄມ້ຂີດໄຟ), ບາງສະມາຄົມສະຫະບໍລິສັດ ກໍເຊັ່ນສັນຍາການ

ຄ້າກັບ ສະມາຄົມບໍລິໂພກສູນກາງ (ສະມາຄົມສະຫະບໍລິສັດ-ຢາສູບ, ສະຫະບໍລິສັດນ້ຳຕານ), ຍັງມີອີກບາງສະມາຄົມ ກໍເຮັດທັງສອງຮູບການ (ເຊັ່ນ ສະມາຄົມສະຫະບໍລິສັດເກືອ).

ປີ ໑໙໘໕ ຫລັງຈາກມີການຫັນປ່ຽນ ເຂົ້າສູ່ການ ປົວແປງເສດຖະກິດ ແລະຫລັງຈາກມີການເພີ່ມທະວີຂຶ້ນແຜນການເສດຖະກິດ, ບັນຫາຊຸກຍູ້ເຮັດໃຫ້ກົງຈັກບໍລິໂພກສະຫະກອນ ປະກອບສ່ວນ ຢ່າງຫ້າວຫັນ ເຂົ້າໃນວຽກການຈຳໜ່າຍສິນຄ້າ-ອຸດສາຫະກຳ ໃນຕະຫລາດພາຍໃນ ໄດ້ຝືດຝົ້ນທີ່ສຸດ. ທັງສະພາເສດຖະກິດແຫ່ງຊາດສູງສຸດ ກໍຄືສະມາຄົມບໍລິໂພກສູນກາງ ຕ່າງກໍເລັ່ງລັດ ຢາກແກ້ໄຂບັນຫານີ້ ໂດຍການໃຊ້ລະບົບ ສັນຍາຮ່ວມ ໃຫ້ກວ້າງຂວາງທີ່ສຸດ. ໃນໄລຍະ ໑໙໘໕-໑໙໘໖, ອັດຕາສ່ວນຂອງລະບົບສັນຍາຮ່ວມ ທີ່ສະມາຄົມເຊັນກັບສະຫະກອນ ເພື່ອຈຳໜ່າຍສິນຄ້າ ໃນຕະຫລາດພາຍໃນ ກວມເອົາແຕ່ ໘໗% ເທົ່ານັ້ນ, ແຕ່ການຈຳໜ່າຍຂອງສະມາຄົມສະຫະບໍລິສັດ ຜ່ານລະບົບສະຫະກອນ ກວມຮອດ ໔໕,໖%. ສັນຍາຮ່ວມ ໄດ້ກາຍເປັນຮູບການຕົ້ນຕໍ ໃນການຂະຫຍາຍສາຍພົວ-ພັນການຄ້າ ລະຫວ່າງ ສະມາຄົມແລະລະບົບສະຫະກອນ.

ການພົວພັນລະຫວ່າງ ອົງການການຄ້າທ້ອງຖິ່ນ ກັບສະມາຄົມສະຫະບໍລິສັດ ຊ້ຳພັດມີອັນຂັດແຍ້ງກັນ. ສະມາຄົມມີໜ້າທີ່ຮັບໃຊ້ ອຸດສາຫະກຳທົ່ວປະເທດ ແລະອຸດສາຫະກຳລັດ, ແຕ່ອົງການການຄ້າທ້ອງຖິ່ນ ຊ້ຳພັດມີໜ້າທີ່ຮັບໃຊ້ອຸດສາຫະ ກຳແຂວງ ແລະເມືອງ ເບິ່ງຕາມລັກສະນະຂອງການເຄື່ອນໄຫວ

ແລ້ວ ອົງການການຄ້າທ້ອງຖິ່ນ ເປັນພຽງແຕ່ອົງການທົ່ວໄປ, ແຕ່ບໍ່ແມ່ນອົງການການຄ້າສະເພາະ, ສະນັ້ນໄດ້ພາໃຫ້ມີການໃຊ້ຈ່າຍຫລາຍອຽກການຈັດຫາ. ດ້ວຍເຫດນັ້ນ ສະມາຄົມສະຫະບໍລິສັດ ຈຶ່ງຖືວ່າການມີອົງການການຄ້າທ້ອງຖິ່ນ ແມ່ນບໍ່ຖືກຕ້ອງທາງດ້ານເສດຖະກິດ ແລະການຈັດຕັ້ງ.

ຈາກນັ້ນສະພາເສດຖະກິດແຫ່ງຊາດສູງສຸດຈຶ່ງມອງເຫັນວ່າ ອົງການເສດຖະກິດທ້ອງຖິ່ນ ເຮັດການແລກປ່ຽນສິນຄ້າບົກກະຕິຢູ່ ເຖິງແມ່ນວ່າໃນໄລຍະທ້າຍຂອງສະໄຫມຟື້ນຟູເສດຖະກິດ, ຈຳນວນອົງການການຄ້າທ້ອງຖິ່ນ ຈະມີຈຳນວນນ້ອຍລົງກໍຕາມ, ສະແດງວ່າ ອົງການດັ່ງກ່າວ ໄດ້ສົ່ງສິນຄ້າອອກ ຈໍລະຈອນຫລາຍກ່ວາເກົ່າ. ປີ ໑໙໒໔ ການແລກປ່ຽນສິນຄ້າ ຂອງອົງການການຄ້າທ້ອງຖິ່ນ ນ້ອຍກ່ວາການແລກປ່ຽນສິນຄ້າຂອງສະມາຄົມບໍລິສັດ ພຽງແຕ່ ໑໕% ເທົ່ານັ້ນ. ຈຳເປັນຕ້ອງ ແບ່ງປັນຫນ້າທີ່ກັນ ລະຫວ່າງ ສະມາຄົມສະຫະບໍລິສັດແລະອົງການການຄ້າທ້ອງຖິ່ນ ໃນລະບົບການຄ້າ. ຈາກນັ້ນມາ ອົງການການຄ້າທ້ອງຖິ່ນ ກາຍເປັນອົງການຮັບເຫມົາ ຂະຫນາດກາງຂອງການຈຳຫນ່າຍ ແລະຈັດຫາສິນຄ້າ. ສ່ວນວຽກງານການລຳລຽງ ແລະການຈັດຫາອື່ນໆ ໄດ້ຖືກໂອນມາເຂົ້າໃນຫນ້າທີ່ຮັບຜິດຊອບຂອງສະມາຄົມ.

ສະມາຄົມມີບົດບາດສຳຄັນຍິ່ງ ໃນການສະຖາປະນາ ສາຍການພົວພັນ ທາງດ້ານເສດຖະກິດ ກັບຕ່າງປະເທດ. ສະມາຄົມສ່ວນຫລວງຫລາຍ ແມ່ນປະຕິບັດຫນ້າທີ່ ສັ່ງຊື້ວັດຖຸດິບອຸປະ

ກອນແລະຈຳໜ່າຍສິນຄ້າຊຸດສາທະກຳຂອງສະຫະບໍລິສັດແລະ ບໍລິສັດກັບຕ່າງປະເທດ. ການທີ່ສະມາຄົມອອກສູ່ຕະຫຼາດພາຍນອກນັ້ນ ກໍຍ້ອນມີຄວາມຮຽກຮ້ອງຕ້ອງການວັດຖຸດິບ, ເຄື່ອງຈັກຜະລິດ ແລະວັດຖຸອື່ນໆ ຈາກຕ່າງປະເທດ, ຍ້ອນຂາດອົງການສະພາຣັບຜິດຊອບຂາເຂົ້າຂາອອກ ແລະຍ້ອນສະຫະບໍລິສັດ ບໍ່ສາມາດພົວພັນກັບຕ່າງປະເທດ. ເວລານັ້ນ, ໄດ້ເກີດມີຄວາມຈຳເປັນ ຕ້ອງຮ່ວມເອົາວຽກງານຂາອອກ ຂາເຂົ້າຂອງແຕ່ລະຂະແໜງຊຸດສາທະກຳ ໄປຂຶ້ນກັບສະມາຄົມ.ການເຄື່ອນໄຫວເຮັດການຄ້າພາຍນອກ ຂອງສະມາຄົມກໍຕ້ອງເປັນໄປຕາມກົດລະບຽບຂອງຕົນ, ຕ້ອງອີງໃສ່ຫລັກການ ການຜູກຂາດ ການຄ້າພາຍນອກຂອງລັດ.

ໃນເວລາສະມາຄົມພົວພັນ ກັບຕະຫລາດພາຍນອກ, ພ້ອມກັນນັ້ນ ບໍລິມາດການຄ້າຕ່າງປະເທດ ກໍເພີ່ມຂຶ້ນ ຈຶ່ງຈຳເປັນຕ້ອງຈັດຕັ້ງກົງຈັກການຄ້າ ປະຈຳຢູ່ຕ່າງປະເທດ ແລະຄວາມຮຽກຮ້ອງ ໃຫ້ມີສຳນັກຕ່າງໜ້າການຄ້າ ຢູ່ຕ່າງປະເທດ ກໍເກີດຂຶ້ນ. ສະນັ້ນ ສະມາຄົມຈຶ່ງຈັດຕັ້ງ ພະແນກການຄ້າ,ສຳນັກຕາງໜ້າ, ສຳນັກແລກປ່ຽນສິນຄ້າ; ແລະຍັງມີຕົວ ແທນຈຳໜ່າຍອີກ. ເພື່ອນຳພາ ອົງການຂາເຂົ້າຂາອອກ,ສະມາຄົມໄດ້ຈັດຕັ້ງພະແນກຂາເຂົ້າຂາອອກຂອງຕົນຂຶ້ນ.

ເງື່ອນໄຂການເຂົ້າຮ່ວມຕະຫລາດພາຍນອກຂອງສະມາຄົມຖືກກຳນົດຈາກສາມອົງການພ້ອມໆກັນ ກ່ອນອື່ນແມ່ນ ສະພາເສດຖະກິດແຫ່ງຊາດສູງສຸດ ກະຊວງວ່າການຄ້າ ພາຍນອກ

ແລະກະຊວງປະຊາຊົນວ່າການການເງິນ. ສະພາເສດຖະກິດແຫ່ງຊາດສູງສຸດ ເປັນຜູ້ກຳນົດປະເພດສິນຄ້າທີ່ຈະເອົາເຂົ້າ-ມາຈາກຕະຫລາດພາຍນອກ. ກະຊວງປະຊາຊົນວ່າການການຄ້າພາຍໃນ ໃຫ້ອະນຸຍາດ ກ່ຽວກັບການເອົາສິນຄ້າ ປະເພດດັ່ງກ່າວເຂົ້າມາ ແລະແມ່ນກະຊວງປະຊາຊົນວ່າການ ການເງິນ ເປັນຜູ້ໃຫ້ເງິນຕາຕ່າງປະເທດ. ເຮັດຄືແນວນີ້ ລັດຈຶ່ງສາມາດຄວບຄຸມວຽກງານການຄ້າພາຍນອກຂອງສະມາຄົມສະຫະບໍລິສັດ ອຸດສາຫະກຳໄດ້.

ວຽກການຕົ້ນຕໍຂອງສະມາຄົມ ແມ່ນການຈັດຕັ້ງຫລໍ່ລ້ຽງສະຫະບໍລິສັດ ແລະບໍລິສັດທາງດ້ານວັດຖຸ ແລະເຕັກນິກ. ໃນໄລຍະທ້າຍຂອງສະໄຫມຟື້ນຟູເສດຖະກິດ ສະມາຄົມສະຫະບໍລິສັດຂະຫນາດໃຫຍ່ ໄດ້ຫັນໄປຮັບໃຊ້ບໍລິສັດ ທີ່ບໍ່ເຂົ້າ ສະມາຄົມ, ຫມາຍຄວາມວ່າ ສະມາຄົມສະຫະບໍລິສັດ ໄດ້ກາຍເປັນອົງ - ການຈັດຫາວັດຖຸແລະເຕັກນິກ ໃຫ້ແກ່ອຸດສາຫະກຳ ທັງຫມົດຂອງລັດ.

ພາກສ່ວນໃຫຍ່ຂອງວຽກງານການຈັດຫາວັດຖຸແລະເຕັກນິກແມ່ນການຈັດຫາວັດຖຸດິບ. ໃນໄລຍະທຳອິດ ສະມາຄົມໄດ້ - ເອົາວຽກງານການຈັດຫາວັດຖຸດິບ ຂອງສະຫະບໍລິສັດ ອຸດສາຫະກຳເຂົ້າລະບຽບ ແລະໄດ້ແບ່ງເຂດຈັດຫາວັດຖຸດິບ ໃຫ້ແຕ່ລະສະຫະບໍລິສັດອີກດ້ວຍ. ລະດູຮ້ອນປີ ໑໙໔໔, ວັດຖຸດິບເຄື່ອງປ່າຂອງດົງ ແລະວັດຖຸດິບ ມາຈາກສັດຂາດແຄນ ຢ່າງຫນັກ, ອັນໄດ້ເຮັດໃຫ້ສະມາຄົມ ຕ້ອງປະການຄຸ້ມຄອງ ວຽກ

ງານການຈັດຫາຂອງສະຫະບໍລິສັດ ມາຫາວຽກການຈັດຫາວັດຖຸດິບ ສະເພາະຕົນເອງ. ໃນເວລາທຳອິດ ສະມາຄົມບໍ່ໃຊ້-ກົງຈັກຂອງຕົນ, ແຕ່ໃຊ້ຮູບການເຊັນສັນຍາກັບຕົວແທນ ເຊັນ (ກະຊວງປະຊາຊົນວ່າການສະບຽງອາຫານ, ສະມາຄົມບໍລິ-ໂພກສູນກາງ ແລະອື່ນໆ) ຫລືໃຊ້ບຸກຄົນເຮັດວຽກງານ ການຈັດຫາວັດຖຸດິບໃຫ້ຕົນ. ສະມາຄົມຍັງມີພະແນກຮັບ ແລະ ຄັດເລືອກວັດຖຸດິບຂອງຕົນອີກດ້ວຍ.

ແຕ່ວ່າ ສະຫະບໍລິສັດສ່ວນຫລວງຫລາຍ ບໍ່ສາມາດຮັບເອົາວັດຖຸດິບຈາກຕະຫຼາດໂດຍສະເພາະແມ່ນສະຫະບໍລິສັດທີ່ຢູ່ຫ່າງໄກຈາກຕະຫລາດ, ໄດ້ສ້າງຜົນສະທ້ອນບໍ່ດີ ໃຫ້ແກ່ສະຫະບໍລິສັດທີ່ເກີດໃຫມ່; ໄດ້ເຮັດໃຫ້ມີການຊ່ວງຊີງ ລະຫວ່າງ ຜູ້ຈັດຫາວັດຖຸດິບດ້ວຍກັນ, ອັນໄດ້ພາໃຫ້ລາຄາວັດຖຸດິບສູງຂຶ້ນຕື່ມ-ສິ່ງທັງຫມົດນີ້ ມັນຮຽກຮ້ອງໃຫ້ເບິ່ງນະໂຍບາຍການຈັດຫາຄືນໃຫມ່. ໃນໄລຍະ ໑໙໘໓ ຫາ ໑໙໘໔ ສະມາຄົມສະຫະບໍລິ-ສັດ ໄດ້ເລັ່ງລັດວຽກການຈັດຫາວັດຖຸດິບຂຶ້ນ. ສະມາຄົມສ່ວນຫລວງຫລາຍ ກໍໄດ້ຈັດຕັ້ງກົງຈັກຈັດຫາວັດຖຸດິບຂອງຕົນຂຶ້ນ.

ເພື່ອຢາກປັບປຸງພື້ນຖານທາງດ້ານວັດຖຸດິບໃຫ້ແກ່ອຸດສາຫະກຳ, ສະມາຄົມຈຳເປັນຕ້ອງໄດ້ເອົາໃຈໃສ່ ເພີ່ມປະລິມານການຈັດຫາວັດຖຸດິບ ແລະພ້ອມກັນນັ້ນ ຈຳເປັນຕ້ອງໄດ້ປັບປຸງຄຸນນະພາບ. ສະມາຄົມສະຫະບໍລິສັດ ແລະສະມາຄົມວັດຖຸດິບຢາກຍົກສູງການຜະລິດຕັກນິກກະສິກຳໄດ້, ຈຳຕ້ອງມີ ວິທີການຫລາຍຢ່າງ (ເຊັ່ນ ການໃຫ້ເງິນສິນເຊື່ອ, ປັບປຸງເຕັກ

ນິກກະສິກຳແລະວຽກການຈັດຕັ້ງ). ເພື່ອຈຸດປະສົງດັ່ງກ່າວ, ສະມາຄົມສະຫະບໍລິສັດ ແລະສະມາຄົມ ຕ້ອງຊ່ວຍເຫລືອທາງດ້ານການເງິນ ແກ່ພະແນກວິທະຍາສາດ ແລະ ພະແນກຄົ້ນຄ້ວາ ຂອງກະຊວງປະຊາຊົນວ່າການການສຶກສາແລະກະຊວງປະຊາຊົນວ່າການລົ້ມຄອງທີ່ດິນ ທີ່ປະຕິບັດໜ້າທີ່ ທີ່ສະມາຄົມວາງໄວ້. ຫລັງຈາກຄັດເລືອກແນວປູກ, ຄົ້ນຄ້ວາໄດ້ ແນວໃໝ່ ແລະເຕັກນິກກະສິກຳໃໝ່ແລ້ວ, ສະມາຄົມສະຫະບໍລິສັດ ແລະສະມາຄົມວັດຖຸດິບ ກໍແຜ່ພາຍເຕັກນິກວັດຖຸດິບໃຫ້ແກ່ຜູ້ຜະລິດທັງຫລາຍ. ສະມາຄົມສະຫະບໍລິສັດ ແລະ ສະມາຄົມວັດຖຸດິບ ໄດ້ເອົາວັດຖຸທີ່ມີຄຸນນະພາບສູງ ໃຫ້ຕົນຜະລິດ ອອກຈາກສູນເລືອກແນວປູກຂອງຕົນເອງ ສົ່ງໃຫ້ຜູ້ຜະລິດທັງຫຼາຍ. ສະມາຄົມສະຫະບໍລິສັດ ທຳການແລກປ່ຽນວັດຖຸໂດຍກົງ ແລະໃຫ້ການກູ້ຢືມແກ່ຜູ້ຜະລິດວັດຖຸດິບ. ເພື່ອຮັບປະກັນວຽກ ການດັ່ງກ່າວສະພາເສດຖະກິດແຫ່ງຊາດສູງສຸດໄດ້ກຳນົດທຶນພິເສດໃຫ້ແກ່ສະມາຄົມສະຫະບໍລິສັດ ແລະສະມາຄົມວັດຖຸດິບ. ໂດຍສະເພາະ ກ້ອນທຶນພິເສດດັ່ງກ່າວນັ້ນ ສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ກຳນົດໃຫ້ ເພື່ອຟື້ນຟູການປູກຢາຢູ່ ກະລົມແລະກາວະກາດ. ໂດຍອີງໃສ່ກ້ອນທຶນດັ່ງກ່າວ ສະມາຄົມສະຫະບໍລິສັດຢາສູບ ໄດ້ເອົາແນວຢາທີ່ມີຄຸນນະພາບສູງໃຫ້ແກ່ບຸກຄົນ ທີ່ສົນໃຈຜະລິດ.

ສະມາຄົມສະຫະບໍລິສັດ ແລະສະມາຄົມວັດຖຸດິບ ໄດ້ມີມາດຕາການ ເພື່ອເຮັດແນວໃດປັບປຸງກຳລັງການຜະລິດໃຫ້ແກ່ຂະ

ແຫນງກະສິກຳ ທີ່ລຳລຽງວັດຖຸດິບມາຈາກປະເພດສັດ ແກ່ຊູດສາທະກຳລັດ. ທ້າຍປີ ໑໙໘໕, ໂດຍການຮ່ວມມື ຢ່າງທ້າວທັນ ຈາກສະມາຄົມຕຳແຜ່ນທີ່ວລັດເຊຍ, ຈາກສະມາຄົມ ຫຸ້ນສ່ວນ "ແລນ" ແລະສະຫະບໍລິສັດຜະລິດແພແລນທັງໝົດ ໄດ້ຈັດຕັ້ງສະມາຄົມຫຸ້ນສ່ວນ "ຜູ້ລ້ຽງແກະ" ຂຶ້ນ.ບາງສະມາຄົມກໍໄດ້ຈັດຕັ້ງການຊຸດບໍ່ແຮ່ ດ້ວຍກຳລັງຂອງຕົນ.

ການຈັດຕັ້ງພະລາທິການວັດຖຸດິບ ຂອງຊູດສາທະກຳລັດມັນມີຄວາມໝາຍອັນສຳຄັນຫລາຍທີ່ສຸດໂດຍສະເພາະ ແມ່ນການໄຈ້ແຍກຊະນິດ ແລະການວາງລາຄາໃຫ້ເຫມາະສົມ ຂອງວັດຖຸດິບດັ່ງກ່າວ.

ໃນໄລຍະການສິ້ນສຸດ ການຟື້ນຟູຊູດສາທະກຳນັ້ນສະມາຄົມສະຫະບໍລິສັດ ແລະອົງການຄວບຄຸມວັດຖຸດິບ ໄດ້ກາຍເປັນອົງການຈັດຫາວັດຖຸດິບຕົ້ນຕໍ ຮັບໃຊ້ຂະແຫນງຊູດສາທະກຳທີ່ກ່ຽວຂ້ອງ.

ແຕ່ວ່າ ຫນ້າທີ່ຂອງສະມາຄົມສະຫະບໍລິສັດ ບໍ່ມີພຽງແຕ່ຈັດຫາວັດຖຸດິບເທົ່ານັ້ນ ເຂົາຍັງໄດ້ກຳກັບພະລາທິການອຸປະກອນການຜະລິດ ແລະອຸປະກອນໃຫ້ແກ່ສະຫະບໍລິສັດ ແລະໂຮງຈັກໂຮງງານຕ່າງໆອີກ. ໃນເມື່ອບໍລິມາດຂອງວຽກການດັ່ງກ່າວຫາກຂະຫຍາຍໄປ ຢ່າງກ້ວາງຂວາງແນວນັ້ນສະມາຄົມສະຫະບໍລິສັດ ໄດ້ສ້າງຕັ້ງຫ້ອງການເຕັກນິກພິເສດ ຂອງຕົນຂຶ້ນ.

ເພື່ອດຳເນີນການເຄື່ອນໄຫວພະລາທິການ ແລະການຂາຍນັ້ນ ສະມາຄົມສະຫະບໍລິສັດ ໄດ້ຮັບໂຮມເອົາສິນເຊື່ອກ້ອນສຳ

ຄົນຈຳນວນໜຶ່ງ ເພື່ອຮັບໃຊ້ວຽກງານດັ່ງກ່າວ, ພວກເຂົາໄດ້ໃຊ້ຄວາມພະຍາຍາມ ຢ່າງເລິກເຊິ່ງແລະຮອບດ້ານ ເພື່ອຊຸກຍູ້ຈຸດສາຫະກຳຂອງເຂົາ ແລະການເຄື່ອນໄຫວຂອງສະຫະບໍລິສັດ. ເມື່ອເພິ່ນໄດ້ຮັບ ຜະລິດຕະພັນຈຳນວນຫລວງຫລາຍຈາກສະຫະບໍລິສັດ ເພື່ອຂາຍນັ້ນ ສະມາຄົມສະຫະບໍລິສັດ ໄດ້ໄຈ້ແຍກຈຳນວນຄຸນນະພາບ ແລະການຕົກແຕ່ງພາຍນອກຂອງການຜະລິດຕະພັນດັ່ງກ່າວ ໃຫ້ແກ່ສະຫະບໍລິສັດ. ໃນວິທີການດັ່ງກ່າວ ແມ່ນອີງໃສ່ການປະຕິບັດສັນຍາ ລະຫວ່າງສະມາຄົມສະຫະບໍລິສັດ ແລະສະຫະບໍລິສັດ. ໃນສັນຍາເມື່ອປີ ໑໙໔໘-໑໙໔໔ ເພິ່ນໄດ້ອະນຸມັດເປີເຊັນ ຜະລິດຕະພັນຂອງສະຫະບໍລິສັດ ພ້ອມດ້ວຍເງື່ອນໄຂນຳສິ່ງຜະລິດຕະພັນດັ່ງກ່າວໃຫ້ແກ່ສະມາຄົມສະຫະບໍລິສັດ, ແຕ່ເລີ່ມຈາກປີ ໑໙໔໕ ມາ ເພິ່ນໄດ້ວາງທິດທາງໃໝ່ ໃນການປະຕິບັດສັນຍາດັ່ງກ່າວ. ການຫັນໄປໃຊ້ລະບົບການສັ່ງຈອງນັ້ນ ໄດ້ສ້າງເງື່ອນໄຂໃຫ້ແກ່ສະມາຄົມສະຫະບໍລິສັດ ບົ່ງລັກສະນະຂອງຜະລິດຕະພັນ ຫລາຍຢ່າງເຂົ້າໃນສັນຍາ ເຊັ່ນ: (ຮູບຂອງສິນຄ້າ ຄຸນນະພາບ, ສີສັນລວດລາຍ, ລາຄາແລະອື່ນໆອີກ). ດ້ວຍການປະຕິບັດ ສັນຍາດັ່ງກ່າວ ສະມາຄົມສະຫະບໍລິສັດ ຈຶ່ງສາມາດຊຸກຍູ້ການເຄື່ອນໄຫວດ້ານການຜະລິດ ຂອງສະຫະບໍລິສັດ ແລະໂຮງງານໄດ້.

ເພື່ອຮັບໃຊ້ຈຸດໝາຍດັ່ງກ່າວນັ້ນ ສະພາແຮງງານ, ປ້ອງກັນຊາດ ແລະສະພາເສດຖະກິດແຫ່ງຊາດສູງສຸດ ໄດ້ວາງທິດທາງກຳນົດມາດຖານອອກ. ການແກ້ໄຂບັນຫາເສດຖະກິດ -

ເຕັກນິກດັ່ງກ່າວຂ້າງເທິງນີ້ ມັນສະແດງອອກ ເຖິງການເອົາໃຈໃສ່ຕໍ່ຄວາມຈໍານິຈໍານານພິເສດ ດ້ານການຜະລິດ,ການຍົກສູງປະສິດທິພາບຂອງແຮງງານ, ການຫລຸດຜ່ອນລາຄາ ການຜະລິດອຸດສາຫະກໍາ. ການວາງມາດຖານແລະການກໍານົດສິນຄ້າອຸດສາຫະກໍາ ຊະນິດຕ່າງໆອອກນັ້ນ ໄດ້ສ້າງເງື່ອນໄຂໃຫ້ສະມາຄົມສະຫະບໍລິສັດ ຈັດວາງການເຄື່ອນໄຫວ ການຜະລິດຂອງສະຫະບໍລິສັດຕ່າງໆ ຕາມໃຈຊອບຂອງຕົນໄດ້.

ພາຍໃນສະມາຄົມສະຫະບໍລິສັດ ເພິ່ນໄດ້ຈັດຕັ້ງ ຫ້ອງການປະເພດຜະລິດຕະພັນ (ຈໍາແນກຊະນິດຜະລິດຕະພັນ)ແລະຄະນະກໍາມາທິການອື່ນ. ໜ້າທີ່ຂອງຫ້ອງການແລະຄະນະກໍາມາທິການດັ່ງກ່າວ ແມ່ນດໍາເນີນການໄຈ້ແຍກຊະນິດສິນຄ້າ ແລະຄຸນນະພາບ ທີ່ຕ້ອງການໃນຕະຫລາດ, ໂຄສະນາສິນຄ້າໃໝ່. ເພື່ອໃຫ້ບໍລິສັດມີຄວາມສົນໃຈ ໃນການຜະລິດສິນຄ້າ ຊະນິດໃໝ່ອັນນັ້ນ ສະຫະບໍລິສັດໄດ້ມີນະໂຍບາຍຈ່າຍເງິນເພີ່ມ ໃຫ້ແກ່ເຂົາເຈົ້າ.

ສະມາຄົມສະຫະບໍລິສັດ ໄດ້ມີບົດບາດອັນສໍາຄັນຫລາຍຢ່າງໃນການຈັດຕັ້ງການຜະລິດແບບໃໝ່ ເຊັ່ນ: ບົດບາດອັນ ທີໜຶ່ງ ໄດ້ແກ່ການລົງທຶນ ກໍ່ສ້າງໂຮງຈັກໂຮງງານເປັນພາລະຂອງເຂົາເອງ ແລະບົດບາດອັນໜຶ່ງອີກ ແມ່ນພວກເຂົາ ໄດ້ລົງສູ່ໂຮງງານ ເພື່ອແກ້ບັນຫາກົນຈັກ ແລະ ບັນຫາການຜະລິດ ໃຫ້ແທດເໝາະ ກັບບັນຫາຕົວຈິງ.

ໃນໄລຍະທ້າຍຂອງການຟື້ນຟູອຸດສາຫະກໍາ ສະມາຄົມສະ

ທະບໍລິສັດ ໄດ້ສົ່ງອິດທິພົນຂອງຕົນ ເຂົ້າໃສ່ກິດຈະການອຸດສາ ຫະກຳຂອງເຂົາ; ດ້ວຍເຫດນັ້ນ ສະມາຄົມສະຫະບໍລິສັດ ຈຶ່ງ ໄດ້ກາຍເປັນສາຂາສຳຄັນ ຂອງໂຄງຮ່າງການຈັດຕັ້ງ ອຸດສາ ຫະກຳ.

ວິວັດທະນາການ ຂອງລະບົບ ສະມາຄົມສະຫະບໍລິສັດ ໃນໄລຍະຟື້ນຟູ ອຸດສາຫະກຳ

ເພິ່ນຈັດຕັ້ງສະມາຄົມ ສະຫະບໍລິສັດອັ້ນ ເພື່ອເຮັດໜ້າທີ່ ເໝືອນກັບກຸ່ມອຸດສາຫະກຳລັດ ເພື່ອຄວບຄຸມການຂາຍ,ການ ພະລາທິການ ແລະການຈັດຫານັ້ນ ໄດ້ສືບຕໍ່ບົດບາດ ຂອງຕົນ ໃນໄລຍະປີ ໑໙໔໖ ຫາປີ ໑໙໔໘. ທິດທາງຂະຫຍາຍ ອຸດສາ ຫະກຳລັດ ໃຫ້ເປັນສະມາຄົມສະຫະບໍລິສັດນັ້ນ ໄດ້ແກ່ການຂະ ຫຍາຍສະມາຄົມສະຫະບໍລິສັດໃໝ່, ສ່ວນສະມາຄົມສະຫະບໍລິ ສັດເກົ່ານັ້ນ ກໍສືບຕໍ່ການເຄື່ອນໄຫວການຄ້າຂອງຕົນຢ່າງຮອບ ດ້ານ. ນອກຈາກການຈັດຕັ້ງ ເປັນສະມາຄົມສະຫະບໍລິສັດ - ແລ້ວ ເພິ່ນຍັງໄດ້ສືບຕໍ່ ສ້າງສະມາຄົມ ແບບສັນຍານິຍົມທີ່ໃຊ້ ໄດ້ ໃນພື້ນຖານການຕົກລົງ ແບບມີລັກສະນະສະມາຄົມສະຫະ ບໍລິສັດ.

ເຖິງຢ່າງນັ້ນກໍດີ ໃນໄລຍະຟື້ນຟູອຸດສາຫະກຳ ການຈັດຕັ້ງ ສະມາຄົມສະຫະບໍລິສັດ ໃນຕົວຈິງໄດ້ມີການປ່ຽນແປງ ອັນສຳ

ຄົນ.ຖ້າຫາກວ່າ ເມື່ອໄລຍະຟື້ນຟູອຸດສາຫະກຳນັ້ນການຈັດຕັ້ງສະມາຄົມສະຫະບໍລິສັດ ໄດ້ອີງໃສ່ພື້ນຖານການຕົກລົງສະໝັກໃຈ ລະຫວ່າງ ບໍລິສັດຕ່າງໆ, ແຕ່ຕົກມາເຖິງ ປີ ໑໙໔໕ - ໑໙໔໗ ນັ້ນ ການຈັດຕັ້ງສະມາຄົມສະຫະບໍລິສັດນັ້ນ ໄດ້ປະຕິບັດຕາມຮູບການຂອງການປົກຄອງ ດ້ວຍມະຕິຂອງສະພາເສດຖະກິດແຫ່ງຊາດສູງສຸດ, ສະພາແຮງງານແລະປ້ອງກັນ ຊາດ-ແຫ່ງສາທາລະນະລັດ ສະຫະພັນສັງຄົມນິຍົມໂຊວຽດ.ສະຫລຸບແລ້ວ ຕາມທຳມະດາ ສະຫະບໍລິສັດທັງຫລາຍ ບໍ່ໄດ້ມີຄວາມ-ຂັດຂ້ອງ ໃນການເຂົ້າເປັນສະມາຄົມ ສະຫະບໍລິສັດ ດັ່ງກ່າວແຕ່ຢ່າງໃດ ແລະໃນບາງກໍລະນີ ກໍແມ່ນພວກເຂົາເອງ ທີ່ໄດ້ສະເໜີແນວຄິດດັ່ງກ່າວ. ແຕ່ການປະກອບໃຫ້ເປັນສະມາຄົມສະຫະບໍລິສັດນັ້ນ ໄດ້ມີການປ່ຽນແປງ. ໃນພາກປະຕິບັດ ຕົວຈິງ ເມື່ອປີ ໑໙໔໕-໑໙໔໗ ນັ້ນ ເພິ່ນໄດ້ໃຊ້ຫລັກການຈັດຕັ້ງສະມາຄົມສະຫະບໍລິສັດ ແບບດຽວກັນ ທີ່ເພິ່ນໃຊ້ຢູ່ໃນທ້າຍໄລຍະການຟື້ນຟູອຸດສາຫະກຳນັ້ນ. ລະບຽບການໃໝ່ໃນການຈັດຕັ້ງສະມາຄົມ ມັນສອດຄ່ອງກັບສະພາບເສດຖະກິດຂອງຍຸກສະໄໝ ທີ່ເພິ່ນສຸມທຸກເຫື່ອແຮງ ເພື່ອວາງແຜນເສດຖະກິດ.

ການປ່ຽນແປງລະບຽບການຈັດຕັ້ງ ສະມາຄົມສະຫະບໍລິສັດມັນສະແດງເຖິງໃນໄລຍະການຟື້ນຟູອຸດສາຫະກຳໜັກ,ສະມາຄົມສະຫະບໍລິສັດ ໄດ້ຍົກລະດັບຂອງຕົນຂຶ້ນ ເທື່ອລະກ້າວ ໃນການຂາຍຜະລິດຕະພັນ ຂອງໂຮງຈັກໂຮງງານຂອງຕົນ ທີ່ໄດ້ລວບລວມຂຶ້ນ ໃນປີ ໑໙໔໕-໑໙໔໗ ນັ້ນ ຊຶ່ງຫຼັງຈາກນັ້ນການ

ຂາຍຜະລິດຕະພັນ ຂອງຂະແໜງອຸດສາຫະກຳ ຂອງເຂົາໄດ້ຖືກຮັບປະກັນ. ສະຫລຸບແລ້ວວ່າ ລະດັບສູງສຸດຂອງການລວມສູນ ການຈຳໜ່າຍຜະລິດຕະພັນ ຢູ່ໃນສະມາຄົມສະຫະບໍລິສັດ ຕັ້ງແຕ່ເວລາຖືກສ້າງຕັ້ງຂຶ້ນນັ້ນ ແມ່ນລັກສະນະເດັ່ນອັນທີສອງ ຂອງການເຮັດໃຫ້ເປັນສະມາຄົມສະຫະບໍລິສັດ ໃນປີ ໑໙໘໖-໑໙໘໗.

ລະດັບສູງຂອງການເຮັດໃຫ້ເປັນສະມາຄົມສະຫະບໍລິສັດໃນປີ ໑໙໘໘-໑໙໘໙ ນັ້ນ ໄດ້ນຳໄປສູ່ການເພີ່ມທະວີລະດັບການເຄື່ອນໄຫວການຈັດຕັ້ງ ແລະເສດຖະກິດ ຂອງສະມາຄົມ ສະຫະບໍລິສັດ, ຊຶ່ງມັນໄດ້ສະແດງອອກເຖິງການຂະຫຍາຍ ຕົວຂອງເງິນທີ່ເກັບມາໄດ້ທັງໝົດ ຈາກກິດຈະການຂອງ ເຂົາ (ການຂາຍ, ການຈັດຫາ, ການພະລາທິການ,ວຽກງານຂາເຂົ້າຂາອອກເປັນຕົ້ນ). ສຳລັບໄລຍະແຕ່ປີ ໑໙໘໓/໘໔ - ໑໙໘໗/໘໘ ທຶນໝູນວຽນຂອງສະມາຄົມສະຫະບໍລິສັດຈາກຫຼາຍຮູບການພະລາທິການ ແລະການຂາຍຂອງເຂົາ ໄດ້ເພີ່ມຂຶ້ນເຖິງ ໕,໕ ເທົ່າ.

ການຂາຍຜະລິດຕະພັນ ອຸດສາຫະກຳ ຢູ່ຕະຫລາດພາຍໃນປະເທດ ຍາມໃດກໍຢູ່ໃນສະພາບນຳໜ້າ ຂອງເງິນໝູນວຽນທັງໝົດ ຂອງສະມາຄົມສະຫະບໍລິສັດ. ອັດຕາສ່ວນຂອງເງິນໝູນວຽນທັງໝົດ ຂອງສະມາຄົມສະຫະບໍລິສັດນັ້ນໄດ້ເພີ່ມຂຶ້ນຈາກປີ ໑໙໘໓ / ໘໔ - ໑໙໘໗ / ໘໘ ແຕ່ ໗໒,໑ ຫາ ໘໐,໕%. ການຂາຍຜະລິດຕະພັນ ອຸດສາຫະກຳຂອງບາງສະ

ມາຄົມສະຫະບໍລິສັດ ມີຄວາມໝາຍສຳຄັນ ໃນຕະຫລາດພາຍ ໃນປະເທດ ເຊັ່ນ ສະມາຄົມສະຫະບໍລິສັດ ຊຸດສາຫະກຳເກືອ ໃນສົກປີ ໑໙໔໗ / ໔໘. ເງິນໝູນວຽນທັງໝົດ ມີຈຳນວນ ເຖິງ ໙໘,໙%, ແລະຂອງສະມາຄົມສະຫະບໍລິສັດຕ່ຳແຜ່ນໄດ້ ເຖິງ ໑໐໐%. ສະຫລຸບແລ້ວ ມັນຢັ້ງຢືນໃຫ້ເຫັນວ່າການຂາຍ ຜະລິດຕະພັນ ຊຸດສາຫະກຳລັດ ເປັນສ່ວນປະກອບ ອັນສຳຄັນ ຂອງການເຄື່ອນໄຫວ ຂອງສະມາຄົມສະຫະບໍລິສັດ.

ການພົວພັນລະຫວ່າງ ສະມາຄົມສະຫະບໍລິສັດ ແລະສະຫະ ກອນບໍລິໂພກ ໄດ້ແກ່ການເຮັດເປັນສັນຍາ, ທີ່ຕາມທຳມະດາ ແລ້ວ ມີອາຍຸພຽງໜຶ່ງປີ. ສັນຍາທີ່ເພັ່ນເຊັ່ນກັນນັ້ນ ມັນກວມ ລວມເຖິງ ບັນດາສິນຄ້າອັນສຳຄັນ, ບົ່ງເງື່ອນໄຂການນຳສົ່ງ ສິນຄ້າ ພ້ອມດ້ວຍຫລັກຊຳລະຄ່າສິນຄ້າດັ່ງກ່າວດ້ວຍ.ບໍລິມາດ ກິດຈະການ ແບບໃຊ້ສັນຍາກັນນັ້ນ ມັນນັບມື້ນັບຂະຫຍາຍ ຕົວ ຢ່າງບໍ່ຢຸດຢັ້ງ. ຖ້າຫາກວ່າ ໃນສົກປີ ໑໙໔໕ / ໔໖ ສຳລັບ ແຕ່ ໑໔ ສະມາຄົມສະຫະບໍລິສັດເທົ່ານັ້ນ ກິດຈະການ ຂອງ ພວກເຂົາ ຄິດສະເລັ່ຍມີເຖິງ ໔໕,໖%, ໃນສົກປີ ໑໙໔໗ / ໔໘ ນັ້ນ ກໍໄດ້ເຖິງ ໗໖,໙%, ແຕ່ຖ້າຫາກເພັ່ນເວົ້າເຖິງ - ພຽງບໍລິສັດດຽວເທົ່ານັ້ນ ກິດຈະການຂອງເຂົາ ແຮງກິນເປີ ເຊັນຫລາຍກ່ວາອີກ.

ການຈັດຕັ້ງສາຍການພົວພັນການຄ້າ ຂອງສະມາຄົມສະຫະ ບໍລິສັດ ດ້ວຍການໃຊ້ລະບົບສັນຍາກວມລວມນັ້ນ ມັນມີຄວາມ ໝາຍສຳຄັນ ເພື່ອຍົກສູງຄວາມໄວ້ວາງໃຈ ຂອງສະຫະກອນ

ບໍລິໂພກຕໍ່ຕະຫລາດພາຍໃນ.ສະຫະກອນມີຄວາມສາມາດ ກຳນົດບໍລິມາດ ແລະແຍກຊະນິດສິນຄ້າຂອງເຂົາໄດ້ ໄວ້ລ່ວງໜ້າ, ບໍ່ຈຳຕ້ອງໄດ້ຮິບໂຮມສິນຄ້າສຳລອງໄວ້ຫລວງຫລາຍ. ສະຫະກອນກໍມີທ່າດີທ່າສະດວກ ໃນການຊຳລະຄ່າສິນຄ້າທີ່ສົ່ງໃຫ້ແລ້ວນັ້ນ. ເຊັ່ນຕົວຢ່າງ: ໃນສົກປີ ໑໙໘໗ / ໘໘ ສັນຍາລະຫວ່າງ ສະມາຄົມສຸະຫະບໍລິສັດນ້ຳມັນໄຂ ກັບສະມາຄົມສູນກາງສະຫະກອນ ໄດ້ບົ່ງໄວ້ວ່າ ການຈ່າຍເປັນເງິນສົດຈະຕ້ອງປະຕິບັດກັນ ທຸກໄລຍະສາມເດືອນ ໃນຈຳນວນ ໘໕% , ແລະສ່ວນເຫລືອນັ້ນ ຈະຕ້ອງຈ່າຍເປັນຮູບການໃບບິນຫຼັງຈາກ ສິນຄ້າໄດ້ສົ່ງມາຮອດຈຸດນັດໝາຍແລ້ວ ໃນກຳນົດ ໙໐ ມື້. ການປະຕິບັດດັ່ງກ່າວ ເພິ່ນບໍ່ໄດ້ປະຕິບັດກັບ ພວກນາຍທຶນເອກະເທດ.

ລະບົບການເຮັດສັນຍານີ້ ໄດ້ສົ່ງຜົນສະທ້ອນອັນໃຫຍ່ຫລວງຕໍ່ການຈັດຕັ້ງການເຄື່ອນໄຫວການຄ້າ ຂອງສະມາຄົມສະຫະບໍລິສັດ. ຈຸດດີອີກຈຸດໜຶ່ງ ໄດ້ແກ່ການຂະຫຍາຍການສົ່ງສິນຄ້າຜ່ານສາງ.ຖ້າຫາກວ່າ ໃນປີທຳອິດ ບັນດາສະມາຄົມສະຫະບໍລິສັດ ໄດ້ໂຮມສິນຄ້າຂອງຕົນທັງໝົດ ໄວ້ໃນສາງຂອງ ພວກເຂົາແລ້ວ, ຈາກນັ້ນ ຈຶ່ງໄດ້ຈຳໜ່າຍສິນຄ້າໄປຫາຜູ້ຊື້ຂາຍ, ແຕ່ເມື່ອມີການຂະຫຍາຍລະບົບສັນຍາແລ້ວຄວາມຈຳເປັນທີ່ຈະຕ້ອງມີສາງເພີ່ມ ກໍໄດ້ຫລຸດພົ້ນໄປ ເຊັ່ນ ໃນສົກປີ ໑໙໘໕ / ໑໙໘໖ ການສົ່ງສິນຄ້າຜ່ານສາງ ຂອງສະມາຄົມສະຫະບໍລິສັດ ຄ້າຂາຍໃນຕະຫລາດພາຍໃນ ມີ ໙໘% ແຕ່ຜ່ານລະບົບສາງມີ

ເຖິງ ໗໒%, ໃນສົກປີ ໑໙໘໒/໘໙ ການສົ່ງສິນຄ້າຜ່ານສາງ ຂະຫຍາຍຕົວຂຶ້ນຮອດ ໒໕,໕% ແລະສິນຄ້າຄ້າງສາງມີພຽງ-ແຕ່ ໑໔%.

ການຂະຫຍາຍລະບົບສິນຄ້າຜ່ານສາງ ສະແດງໃຫ້ ເຫັນສາຍການພົວພັນ ເສດຖະກິດໂດຍກົງ ລະຫວ່າງ ໂຮງງານ ແລະສາຂາຂັ້ນລ່າງ ຂອງລະບົບສະຫະກອນ. ດ້ວຍເຫດຜົນດັ່ງກ່າວ ເພິ່ນຈຶ່ງເຫັນວ່າ ບໍ່ມີຄວາມຈຳເປັນ ຈະຕ້ອງຮັກສາກົງຈັກ ຂອງສະມາຄົມສະຫະບໍລິສັດ ຢູ່ຕາມທ້ອງຖິ່ນໄວ້. ສະນັ້ນ ໃນທ້າຍທົດສະວັດ ທີ ໘ ຈຳນວນຂະແໜງ ຫ້ອງການ ແລະ ສາຂາຂອງສະມາຄົມສະຫະບໍລິສັດ ໄດ້ຖືກລົບລ້າງ. ຈາກການນຳໃຊ້ລະບົບສິນຄ້າຜ່ານສາງນີ້ ໄດ້ພາໃຫ້ລາຍຈ່າຍຄ່າຂົນສົ່ງໄດ້ລົດນ້ອຍຖອຍລົງ. ຈຳນວນພະນັກງານຄຸ້ມຄອງຂອງສະມາຄົມສະຫະບໍລິສັດ ກໍໄດ້ລົດຜ່ອນລົງ.

ແຕ່ເຖິງຢ່າງໃດກໍດີ, ການນຳໃຊ້ສັນຍານີ້ໄດ້ມີຄວາມໝາຍສຳຄັນໃນການຈັດລະບົບຕາໜ່າງການຄ້າ ໃຫ້ເປັນລະບຽບ, ແຕ່ໃນພາກປະຕິບັດສັນຍາຕົວຈິງ ກໍຍັງມີຂໍ້ບົກພ່ອງຫຼາຍ. ກ່ອນອື່ນໝົດ ກໍແມ່ນຫລັກການ ເຊັ່ນ ສັນຍາທີ່ມີການຂາດຕົກ ບົກພ່ອງ. ການເຈລະຈາ ລະຫວ່າງ ສະມາຄົມສະຫະ ບໍລິສັດ ແລະສະມາຄົມສູນກາງ ຄຸ້ມຄອງສະຫະກອນ ໄດ້ດຳເນີນ ໄປຕັ້ງຫລາຍເດືອນ. ບາງຄັ້ງຄວາມເຫັນລະຫວ່າງສອງຝ່າຍ ບໍ່ກົງກັນ ຊຶ່ງຮຽກຮ້ອງໃຫ້ມີການຊຸກຍູ້ ຈາກອົງການອື່ນ ເທິງ (ເຊັ່ນ ສະພາເສດຖະກິດແຫ່ງຊາດສູງສຸດ, ກະຊວງປະຊາຊົນ

ວ່າການຄ້າ, ຄະນະກຳມາທິການ ຕັດສິນຂັ້ນສູງ ຂອງສະພາ ແຮງງານ ແລະປ້ອງກັນຊາດ ແລະອື່ນໆອີກ). ສະມາຄົມສະຫະບໍລິສັດ ບໍ່ເຫັນດີນຳການໃຊ້ສັນຍາ ທີ່ນຳປະຕິບັດຄືຢູ່ໃນປະຈຸບັນນີ້ ການຂາດຕົກບົກພ່ອງຂອງສັນຍາ ແມ່ນພາກປະຕິບັດ-ຕົວຈິງ ໄດ້ມີຢູ່ບ່ອນວ່າ ສັນຍາດັ່ງກ່າວທີ່ເຊັນກັນ ລະຫວ່າງ ສະມາຄົມສະຫະບໍລິສັດນັ້ນ ເກືອບທຸກສະບັບ ແມ່ນໄດ້ເຊັນກັບ ອົງການສູນກາງສະຫະກອນ, ກ່ອນອື່ນຫມົດ ແມ່ນສະມາຄົມ-ສູນກາງ ຊຸມຄອງສະຫະກອນ. ສະມາຄົມສູນກາງ ແລະ ຊຸມ ຄອງສະຫະກອນ, ກໍບໍ່ເຫັນດີນຳການເຊັນສັນຍາລະຫວ່າງສະມາຄົມສະຫະບໍລິສັດ ແລະສາຂາບໍລິໂພກຂັ້ນພື້ນຖານຂອງສະ-ຫະກອນ. ການປະຕິບັດດັ່ງກ່າວ ໄດ້ສົ່ງຜົນສະທ້ອນອັນບໍ່ດີໄປ ສູ່ລະບົບທັງຫມົດດັ່ງນີ້: ອັນທີຫນຶ່ງ ໄດ້ແກ່ການຕັດແຍກສະຫະກອນຂັ້ນພື້ນຖານ ອອກຈາກສາຍການພົວພັນໂດຍກົງກັບຊຸດສາຫະກຳລັດ ອົງການສູນກາງສະຫະກອນ ໄດ້ຈ່ອງດຶງການ ຂະຫຍາຍຕົວຂອງເຂົາ ໃນສາຂາສຳຄັນຂອງໂຄງຮ່າງການແລກປ່ຽນສິນຄ້າທັງຫມົດ. ອັນທີສອງ ເນື່ອງຈາກຂາດຕົວເລກຄົບຖ້ວນ ກ່ຽວກັບຄວາມຕ້ອງການຕົວຈິງ ແຕ່ລະປະເພດ ສິນຄ້ານັ້ນ ອົງການສູນກາງສະຫະກອນ ຈຶ່ງບໍ່ສາມາດຮູ້ ແມ່ນແຕ່ຈຳນວນໃກ້ຄຽງຂອງບໍລິມາດ ຄວາມຕ້ອງການແຕ່ລະຊະນິດສິນ-ຄ້າ ຢູ່ແຕ່ລະອົງເຂດ, ແລະຢູ່ພາຍໃນປະເທດທັງຫມົດກໍເຊັ່ນດຽວກັນ. ບາງຄັ້ງມັນກໍໄປເຖິງບ່ອນວ່າ ອົງການສະຫະກອນ ສູນກາງ ໄດ້ປະຕິເສດຮອດການສົ່ງສິນຄ້າທີ່ຂາດເຂີນ ຢ່າງບໍ່

ມີເຫດມີຜົນ. ເນື່ອງຈາກບໍ່ຮູ້ສະພາບຕະຫລາດຊຸດສາຫະກຳຈຶ່ງ ໄດ້ດຳເນີນການໄປດ້ວຍຄວາມມືດມົນ. ພຶດຕິການດັ່ງກ່າວນັ້ນ ໄດ້ສ້າງອັນຕະລາຍທີ່ຮ້າຍແຮງຕໍ່ການຕັດຂາດ ລະຫວ່າງ ຊຸດ ສາຫະກຳລັດ ແລະຕະຫລາດ, ລະຫວ່າງການຜະລິດແລະລະ ບົບບໍລິໂພກ, ຊຶ່ງທັງນີ້ນັ້ນໄດ້ກົງກັນຂ້າມກັບທິດທາງລວມຂອງ ພັກໃນວຽກງານກໍ່ສ້າງປະເທດ ໃຫ້ເປັນຊຸດສາຫະກຳ.

ຮູບການພົວພັນລະຫວ່າງ ຊຸດສາຫະກຳແລະຕະຫລາດ ທີ່ ເກີດຂຶ້ນນັ້ນ ມັນຮຽກຮ້ອງໃຫ້ມີການປ່ຽນແປງ. ສະມາຄົມສຸະ ຫະບໍ ລິສັດ ໄດ້ມີບາດກ້າວຕາມທິດທາງດັ່ງກ່າວມານັ້ນ. ເພິ່ນ ໄດ້ປ່ຽນສັນຍາ ແມ່ນມາເປັນໃບສັນຍາຕົກລົງທົ່ວໄປທີ່ມັນແຕກ ຕ່າງກັນກັບສັນຍາແມ່, ໃນການກຳນົດຈຳນວນສິນຄ້າທີ່ ຈະ ຕ້ອງນຳສົ່ງ, ການແຈກຢາຍສິນຄ້າຕາມເຂດຕ່າງໆ, ລາຄາ ສິນຄ້າ, ກຳນົດເວລາ ແລະເງື່ອນໄຂນຳສົ່ງສິນຄ້າ,ວິທີການ ຄິດໄລ່ ແລະເພິ່ນໄດ້ສຶກສາເງື່ອນໄຂນຳສົ່ງທົ່ວໄປ ເທົ່ານັ້ນ. ພ້ອມດຽວກັນນັ້ນ ບັນດາຜູ້ແທນກອງປະຊຸມ ກໍໄດ້ຮັດຮ່າງສັນ ຍາ ທີ່ເພິ່ນຮຽກວ່າ ສັນຍາທ້ອງຖິ່ນ ທີ່ເພິ່ນໃຊ້ເປັນພື້ນຖານ- ໃນການເຈລະຈາ ລະຫວ່າງສະມາຄົມສະຫະບໍລິສັດ ແລະສາ ຂາພື້ນຖານ ຂອງລະບົບສະຫະກອນ. ຖ້າຫາກທຽບໃສ່ສັນຍາ ແມ່ແລ້ວ ໃບສັນຍາຕົກລົງທົ່ວໄປນັ້ນ ໄດ້ສ້າງຄວາມສະ ດວກ ໃນການສ້າງສາຍພົວພັນໂດຍກົງ ລະຫວ່າງຊຸດສາຫະກຳແລະ ອົງການສະຫະກອນຂັ້ນພື້ນຖານ ແລະໄດ້ສົ່ງຜົນສະທ້ອນທີ່ມີລັກ ສະນະດັດແປງ ຕໍ່ຄວາມຕ້ອງການຂອງຕະຫລາດ.

ໃນກອງປະຊຸມພັກຄັ້ງທີ XVI ທີ່ໄດ້ເປີດຂຶ້ນ ໃນເດືອນເມສາ ປີ ໑໙໒໙ ເມື່ອເພິ່ນສຶກສາມາດຕາການກ່ຽວກັບການປັບປຸງວຽກງານ ຂອງກົງຈັກການຄ້າໃຫ້ດີຂຶ້ນນັ້ນ ເພິ່ນສັງເກດເຫັນວ່າ ການປັບປຸງລະບົບການຄ້າ ໃຫ້ເຫມາະສົມກັບ ສະພາບຕົວຈິງນັ້ນ ມັນຕ້ອງຫັນໄປສູ່ທິດສະນະ ການກະຈ່າຍຫນ້າທີ່ອອກເທື່ອລະກ້າວ, ແລະໃນຂະນະດຽວກັນນັ້ນເພິ່ນກໍປົກປັກຮັກສາ ແລະປັບປຸງການຈຸ້ນາລວມສູນ ໃນວຽກງານວາງແຜນດ້ານການເງິນແລະດ້ານການຄ້າ; ປັບປຸງລະບົບການຄ້າໃຫ້ຄ່ອງແຄ້ວ, ແລະລຶດຂຶ້ນສາຍພົວພັນລະຫວ່າງກາງ ທີ່ມີໃນປະຈຸບັນ ລະຫວ່າງໂຮງງານກັບຜູ້ຈົມໃຊ້ ສິນຄ້າ ອຸດສາຫະກຳ ແລະລະຫວ່າງຜູ້ຜະລິດວັດຖຸດິບກະເສດ ກັບຜູ້ບໍລິໂພກ ວັດຖຸດັ່ງກ່າວ.

ໃນມະຕິຂອງສະພາແຮງງານ ແລະປ້ອງກັນຊາດສະບັບລົງວັນທີ ໓ ເດືອນກໍລະກົດ ປີ ໑໙໒໙ ເພິ່ນໄດ້ສັງເກດເຫັນ ມີຄວາມຈຳເປັນໃນພາກປະຕິບັດສັນຍາແມ່ ລະຫວ່າງສະມາຄົມສະຫະບໍລິສັດ ແລະສະມາຄົມສູນກາງ ຈຸ້ມຄອງ ສະຫະກອນຕ້ອງເພີ່ມເຕີມສັນຍາທ້ອງຖິ່ນເຂົ້ານຳ, ຊຶ່ງແມ່ນສັນຍາ ລະຫວ່າງ ສາຂາຂອງສະມາຄົມສະຫະບໍລິສັດ ຂະແຫນງດຽວ ຢູ່ທ້ອງຖິ່ນ ກັບສາຂາສະຫະກອນບໍລິໂພກຂັ້ນພື້ນຖານ, ຫມາຍຄວາມວ່າ ມະຕິຂອງສະພາແຮງງານແລະປ້ອງກັນຊາດໄດ້ຮັບຮູ້ການປະຕິບັດຂອງສະພາ ເສດຖະກິດແຫ່ງຊາດສູງສຸດສະຫະພາບ ສາທາລະນະລັດ ສັງຄົມນິຍົມໂຊວຽດໃນການສ້າງສາຍ

ພົວພັນໂດຍກົງຂອງສະມາຄົມສະຫະບໍລິສັດ ກັບທຸກສາຂາຂອງ ສະຫະກອນບໍລິໂພກ.

ມະຕິຂອງສະພາແຮງງານ ແລະປ້ອງກັນຊາດ ສະຫະພາບ ສາທາລະນະລັດ ສັງຄົມນິຍົມໂຊວຽດ ໄດ້ຮັບຮູ້ ການຮັບຜິດ ຊອບຮ່ວມກັນ ທັງສອງກ້ຳສອງຝ່າຍ ເພື່ອປະຕິບັດຂໍ້ຜູກ ມັດ ຂອງສັນຍາ ໃຫ້ສຳເລັດຜົນ. ແຕ່ກ່ອນນັ້ນ ສະຫະກອນ ໄດ້ມີ ຖານະອະພິສິດຫລາຍກ່ອນຮູດສາຫະກຳລັດ. ເອົາມີສິດປະຕິ- ເສດ ການຮັບເອົາສິນຄ້າແຕ່ຝ່າຍດຽວ, ໃນກໍລະນີ ທີ່ສິນຄ້າ ດັ່ງກ່າວ ບໍ່ໄດ້ຮັບຄວາມນິຍົມ ຢູ່ໃນຕະຫລາດ ເປັນເວລາດົນ ນານ. ການປະຕິເສດແຕ່ຝ່າຍດຽວດັ່ງກ່າວນັ້ນມັນໄດ້ເຮັດໃຫ້ ຮູດສາຫະກຳ ຕົກຢູ່ໃນສະພາບຫຍຸ້ງຍາກຫລາຍ, ກໍ່ໃຫ້ເກີດມີ ສິນຄ້າລົ້ນຕະຫລາດ ແລະໄດ້ເຮັດໃຫ້ທຶນໝູນວຽນຢຸດຊະງັກ. ການຮັບຮູ້ຄວາມຮັບຜິດຊອບຮ່ວມກັນ ຕໍ່ການປະຕິບັດສັນຍາໃຫ້ ໄດ້ຮັບຜົນນັ້ນ ເປັນບາດກ້າວຂອງການຂະຫຍາຍ ການພົວພັນ ດ້ານເສດຖະກິດໄປພາຍໜ້າ ລະຫວ່າງຮູດສາຫະກຳ ກັບສະ ຫະກອນບໍລິໂພກ. ມາດຕາການດັ່ງກ່າວ ໄດ້ເຮັດໃຫ້ຫຼັກການ ປະຕິບັດສັນຍາແໜ້ນໜາ ແລະເຮັດໃຫ້ການປັບປຸງ ການພົວ ພັນ ລະຫວ່າງຮູດສາຫະກຳລັດ ກັບຕາໜ່າງການຄ້າໃຫ້ດີຂຶ້ນ.

ໃນທີ່ສຸດ, ໃນມະຕິຂອງສະພາແຮງງານແລະປ້ອງກັນຊາດ ໄດ້ເນັ້ນເຖິງຄວາມຈຳເປັນ ໃນການນຳສິ່ງສິນຄ້າໃຫ້ໄປເຖິງ ຜູ້ບໍລິໂພກນັ້ນໂດຍໄວ. ເພື່ອຈະປະຕິບັດໄດ້ແນວນີ້ ໃນສັນຍາ ດັ່ງກ່າວ ເພິ່ນໄດ້ບັນຈຸຕາຕະລາງ ຂົນສົ່ງສິນຄ້າໃສ່ນຳ, ຊຶ່ງ

ຕາຕະລາງດັ່ງກ່າວ ຮັບປະກັນການນຳສົ່ງສິນຄ້າໃຫ້ຜູ້ບໍລິໂພກໄດ້ປົກກະຕິ. ເພິ່ນຍັງໄດ້ເອົາໃຈໃສ່ ຕໍ່ການຈັດວາງ ໄລຍະເວລາການສົ່ງສິນຄ້າໃຫ້ສັ້ນເຂົ້າ, ຕໍ່ການຊຸກຊ້າຂອງການສົ່ງສິນຄ້ານັ້ນ ຕົກເປັນຄວາມຮັບຜິດຊອບ ທາງດ້ານເງິນຂອງ ຜູ້ນຳສົ່ງ.

ຫລັກການສຳຄັນເຫລົ່ານີ້ ໄດ້ສະແດງອອກຢູ່ໃນບັນຊີ ຂອງເງື່ອນໄຂຈັດສົ່ງສິນຄ້າ ໂດຍສະມາຄົມສະຫະບໍລິສັດ,ທີ່ໄດ້ບົ່ງໄວ້ຢູ່ໃນສັນຍາແມ່. ເນື່ອງຈາກຢູ່ໃນສັນຍາແມ່ ເພິ່ນຕ້ອງບົ່ງເງື່ອນໄຂອັນຈຳເປັນໃຫ້ຖືກຕ້ອງ ເພື່ອຈັດຕັ້ງວາງແຜນ ຕະຫລາດນັ້ນ. ສະພາແຮງງານ ແລະປ້ອງກັນຊາດ ໄດ້ສະເຫນີຕໍ່ສະມາຄົມສະຫະບໍລິສັດ ແລະສະມາຄົມສູນກາງ ຄຸ້ມຄອງສະຫະກອນ ໃຫ້ເອົາຈຳນວນທັງຫມົດ ຂອງຜະລິດຕະພັນທີ່ສົ່ງໃຫ້ສະມາຄົມສະຫະບໍລິສັດນັ້ນ ພ້ອມກັບການແຍກປະເພດສິນຄ້າທີ່ສຳຄັນ ແລະບໍລິເວນຄ້າຂາຍ, ບໍລິມາດການຂົນສົ່ງແຕ່ລະໄຕມາດ, ລາຄາສິນຄ້າ ແລະລາຄາຜ່ອນຜັນຂອງມັນ,ໄລຍະສະເລັ່ຍຂອງການຈ່າຍສິນເຊື່ອ ໂດຍສະມາຄົມສະຫະບໍລິສັດຕາມແຕ່ລະປະເພດສິນຄ້າ, ວິທີການແລະໄລຍະເວລາ ການແຈກຢາຍເປັນລຳດັບ, ແລະສຸດທ້າຍນີ້ ໄດ້ແກ່ການນຳສົ່ງ ສິນຄ້າ (ເຊັ່ນ ສິນຄ້າຜ່ານ ຫລືສົ່ງໃຫ້ສາຂາ ຂອງສະມາຄົມສະຫະບໍລິສັດທ້ອງຖິ່ນໂດຍກົງ, ຊະນິດເຄື່ອງຫຸ້ມຫໍ່) ເຂົ້າໃນສັນຍາ. ໃນສັນຍາແມ່ນັ້ນ ເພິ່ນໄດ້ບົ່ງຄວາມຮັບຜິດຊອບ ຂອງຜູ້ຈັດສົ່ງຕໍ່ ຄຸນນະພາບຂອງຜະລິດຕະພັນ ແລະການປະຕິບັດໄລຍະເວ

ລາຈັດສົ່ງສິນຄ້າໃຫ້ທ່ວງທັນກັບເວລາ.ສັນຍານີ້ ເພິ່ນໄດ້ເຊັນກັນ ໃນກຳນົດໜຶ່ງປີ.

ດັ່ງນັ້ນ ມະຕິຂອງສະພາແຮງງານ ແລະປ້ອງກັນຊາດ ໄດ້ຊ່ວຍເຮັດໃຫ້ລະບຽບການຂອງສັນຍາ ນັບມື້ນັບຖືກປັບປຸງໃຫ້ດີຕະຫລອດໄປ ແລະໄດ້ຊຸກຍູ້ການເພີ່ມທະວີ ການປະຕິບັດແຜນການລັດ ທັງໃນດ້ານອຸດສາຫະກຳ ແລະ ກໍຄືດ້ານ ຕາໜ່າງການຄ້າ.

ແຕ່ຢ່າງໃດກໍດີ ເຖິງແມ່ນວ່າ ສັນຍາແມ່ຈະສົ່ງຜົນສະທ້ອນອັນໃຫຍ່ຫລວງ ຕໍ່ການເຮັດຕາໜ່າງການຄ້າມີລະບຽບກໍຕາມ ການປະຕິບັດສັນຍາດັ່ງກ່າວ ກໍຍັງພົບຂໍ້ບົກພ່ອງຢູ່, ຊຶ່ງມັນໄດ້ກົດໜ່ວງຄວາມອາດສາມາດ ຂອງອຸດສາຫະກຳ ໃນການຕອບສະໜອງ ຢ່າງວ່ອງໄວ ຕໍ່ຄຳຮຽກຮ້ອງຕ້ອງການ ຂອງຕະຫລາດ ໄດ້ຖືກຕ້ອງຕາມກາລະເທສະ ຂອງຜູ້ບໍລິໂພກ. ການກຳຈັດຄວາມຂາດແຄນດ້ານສິນຄ້ານັ້ນ ໄດ້ເຮັດໃຫ້ບັນຫາການພົວພັນ ລະຫວ່າງອຸດສາຫະກຳກັບຕະຫລາດ ເກີດຂຶ້ນອີກອັນໜຶ່ງ. ຄວາມຕ້ອງການອັນຈຳເປັນນັ້ນ ໄດ້ແກ່ການສ້າງສາຍພົວພັນອຸດສາຫະກຳ ກັບຕະຫລາດ, ຊຶ່ງອຸດສາຫະກຳ ຈະໃຊ້ຄວາມສາມາດຂອງຕົນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຕະຫລາດ ໃຫ້ໄດ້ທັນການ.ມີແຕ່ເຮັດແນວນີ້ໄດ້ເທົ່ານັ້ນ ອຸດສາຫະກຳຈຶ່ງສາມາດກາຍເປັນເສົາຄ້ຳອັນແໜ້ນໜາດ້ານເສດຖະກິດ ໃຫ້ແກ່ຕົວເມືອງ ກັບຊົນນະບົດໄດ້ແລະຈຶ່ງຈະມີບົດບາດນຳໜ້າ ຕໍ່ກິດຈະການກະເສດ.ອຸດສາຫະກຳ

ແບບສະມາຄົມສະຫະບໍລິສັດບໍ່ສາມາດຕອບສະໜອງການປ່ຽນແປງຂອງຕະຫລາດໄດ້ທັນເວລານັ້ນ, ແມ່ນຍ້ອນຄວາມກົດດັນທາງການຄ້າຂອງລັດ ແລະໂດຍສະເພາະ ກໍແມ່ນຍ້ອນ ການຄ້າຂອງສະຫະກອນ, ທີ່ມີຕາໜ່າງສາຂາການຄ້າທີ່ຢູ່ໃຕ້ການຄວບຄຸມຂອງເຂົາຢູ່. ຄວາມຈຳເປັນໃນການສ້າງຕັ້ງ ສາຍ-ການພົວພັນ ລະຫວ່າງອຸດສາຫະກຳ ກັບຕາໜ່າງ ການຄ້າໃໝ່ ເພື່ອເຮັດໃຫ້ຕາໜ່າງດັ່ງກ່າວ ສາມາດແຈ້ງ ສະພາບການປ່ຽນແປງທີ່ເກີດຂຶ້ນ ຢູ່ພາຍໃນຕະຫລາດຊື້ຂາຍຢ່າງວ່ອງໄວແລະຈັດເຈນ ແກ່ອຸດສາຫະກຳ. ໃນເມື່ອເວລາເພິ່ນໄດ້-ຮັບຂ່າວ ແຈ້ງການດັ່ງກ່າວ ອຸດສາຫະກຳຈຶ່ງສາມາດ ປັບຕົວໃຫ້ເຂົ້າກັບຄວາມຮຽກຮ້ອງຕ້ອງການຂອງຕະຫລາດໃຫ້ທັນເວລາ. ຮູບການພົວພັນລະຫວ່າງ ອຸດສາຫະກຳກັບ ຕາໜ່າງການຄ້າດັ່ງກ່າວ ໄດ້ກາຍເປັນລະບົບຄ້າສົ່ງເບື້ອງຕົ້ນ.ນີ້ເປັນເທື່ອທຳອິດ ທີ່ເພິ່ນໄດ້ນຳໃຊ້ລະບົບດັ່ງກ່າວ ເຂົ້າໃນອຸດສາ-ຫະກຳຕ່ຳແຜ່ນ. ລະດັບການເຕົ້າໂຮມການຂາຍ ເຂົ້າກັນໃນລະດັບສູງ, ການຫັນໃຫ້ແຮງງານຊຳນິຊຳນານ ດ້ານວິຊາສະເພາະ, ການຈັດສັນສິນຄ້າແຜ່ນແພ ໃຫ້ມີລະບຽບດີແລະການມີປະສົບການກ້ວາງຂວາງ ຂອງສະມາຄົມສະຫະບໍລິສັດ ຕ່ຳແຜ່ນໃນການຈັດຕັ້ງ ການຂາຍຜະລິດຕະພັນ ອຸດສາຫະ ກຳຂອງຕົນ ເປັນເງື່ອນໄຂລ່ວງໜ້າ ຂອງການຂ້າມຜ່ານ ໄປສູ່ລະບົບດັ່ງກ່າວ.

ຈຸດລິເລີ່ມຂອງລະບົບ ທີ່ໃຊ້ໃບສັ່ງໃນເບື້ອງຕົ້ນໄດ້ແກ່ການ

ປະຕິບັດໂຄງການການຜະລິດຂອງອຸດສາຫະກຳຕ່ຳແຜ່ນ. ເທື່ອທີຫນຶ່ງ ໄດ້ແກ່ການສ້າງໂຄງການທົດລອງ ຂອງໄລຍະ ການຜະລິດຫມົດປີ. ໂດຍອີງໃສ່ພື້ນຖານຂອງໂຄງການດັ່ງ ກ່າວເພິ່ນໄດ້ສ້າງໂຄງການລະອຽດສຳລັບເຄິ່ງປີຂຶ້ນ,ທີ່ເພິ່ນອີງໃສ່ລັກສະນະພິເສດ ຂອງຄວາມຕ້ອງການ ຂອງຕະຫລາດແຕ່ລະດູການ. ເພິ່ນໄດ້ຮັບຮອງເອົາແຜນການປີກ່ອນ ເຖິງໄລຍະການຜະລິດຈະເລີ່ມຕົ້ນ ບໍ່ໃຫ້ຊ້າກ່ວາສີ່ເດືອນເຄິ່ງ.ກຳນົດໄລຍະເວລາດັ່ງກ່າວ ໄດ້ອຳນວຍຄວາມສະດວກ ແກ່ສະມາຄົມ-ສະຫະບໍລິສັດຕ່ຳແຜ່ນ ໄດ້ຂຶ້ນແຜນການການຜະລິດ ຖາວອນຂອງເຄິ່ງປີຂອງຕົນ ໃຫ້ທັນເວລາ. ໃນທີ່ສຸດ ເພື່ອສ້າງແຜນການເຄິ່ງປີນັ້ນ, ສະມາຄົມສະຫະບໍລິສັດຕ່ຳແຜ່ນ ທົ່ວລັດລັດເຊຍ ຈະຕ້ອງກຳໄດ້ເນື້ອໃນຂອງໃບສັ່ງ ຂອງບັນດາການຈັດຕັ້ງການຄ້າ. ການປະກອບໃບສັ່ງຂອງອົງການຈັດຕັ້ງການຄ້ານັ້ນ ໄດ້ເລີ່ມຈາກການຮິບໂຮມໃບສັ່ງ ຂອງສະຫະສະມາຄົມບໍລິໂພກຂອງເມືອງ ແລະອົງການການຄ້າທ້ອງຖິ່ນ. ແລະພາຍຫລັງທີ່ເພິ່ນໄດ້ດັດແປງເປັນທີ່ແນ່ນອນ ຢູ່ໃນສະມາຄົມສະຫະບໍລິສັດ ອຸດສາຫະກຳຕ່ຳແຜ່ນ ທົ່ວລັດລັດເຊຍແລ້ວ ເພິ່ນກໍໄດ້-ຍື່ນໃບສັ່ງດັ່ງກ່າວ ໃຫ້ແກ່ສະຫະສະມາຄົມບໍລິໂພກສູນກາງ -ແລະສະພາການຄ້າທ້ອງຖິ່ນ. ຂໍ້ມູນທີ່ໄດ້ມານັ້ນ ແມ່ນມາຈາກພື້ນຖານການສ້າງແຜນການການຜະລິດ ຂອງສະຫະບໍລິ ສັດແລະຂອງໂຮງງານອຸດສາຫະກຳຕ່ຳແຜ່ນ ແບບສະມາຄົມສະ-ຫະບໍລິສັດ. ການສ້າງແຜນການການຜະລິດດັ່ງກ່າວນີ້ມີຜູ້ແທນ

ຈາກຕາໜ່າງການຄ້າທັງຫລາຍເຂົ້າຮ່ວມນຳ. ທັງນີ້ກໍເພື່ອຮັບປະກັນໃຫ້ໃບສັ່ງສອດຄ່ອງກັບ ຄວາມສາມາດຂອງຊຸດສາຫະກຳ ແລະກໍເພື່ອຍາກປັບປຸງການຜະລິດ ໃຫ້ຖືກກັບຄວາມຮຽກຮ້ອງຕ້ອງການ ຂອງທ້ອງຕະຫລາດ.

ລະບົບໃບສັ່ງພາງ ທີ່ສອດຄ່ອງກັບການປະຕິບັດ ສັນຍາແມ່ໄດ້ສິ່ງຜົນສະທ້ອນໃນທາງທີ່ເປັນຈິງ ໃຫ້ແກ່ຊຸດສາຫະກຳແບບສະມາຄົມສະຫະບໍລິສັດ. ລະບົບໃບສັ່ງພາງດັ່ງກ່າວ ໄດ້ສ້າງຄວາມສະດວກ ໃນການຈັດໃຫ້ເປັນລະບຽບ ສາຍສຳພັນ ລະຫວ່າງ ສະມາຄົມສະຫະບໍລິສັດ ກັບຕາໜ່າງການຄ້າ, ໃນການຕອບສະໜອງ ຄວາມຮຽກຮ້ອງຕ້ອງການສິນຄ້າ ຊຸດສາຫະກຳ ຂອງທ້ອງຕະຫລາດໃຫ້ ດີຂຶ້ນ, ໃນການຊຸກຍູ້ ການວາງແຜນຢ່າງຮອບຄອບ ໃນດ້ານການເຄື່ອນໄຫວການຜະລິດ ແລະກໍຄືທັງດ້ານການຂາຍ ຂອງຊຸດສາຫະກຳລັດ.

ໃນໄລຍະຂ້າມຜ່ານເຂົ້າສູ່ການດັດສ້າງຊຸດສາຫະກຳນັ້ນສະມາຄົມສະຫະບໍລິສັດ ນັບມື້ນັບເອົາໃຈໃສ່ຕໍ່ການຈັດຕັ້ງ ພະລາທິການວັດຖຸເຕັກນິກ ແກ່ຊຸດສາຫະກຳລັດ. ທຶນຮອນຂອງ ສະມາຄົມສະຫະບໍລິສັດ ໃນກິດຈະການພະລາທິການດ້ານວັດຖຸດິບແກ່ຊຸດສາຫະກຳ, ກໍຄືທາງດ້ານວັດຖຸອຸປະກອນການຜະລິດໄດ້ຂະຫຍາຍຕົວຂຶ້ນ ຢ່າງບໍ່ຢຸດຢັ້ງ. ຖ້າຫາກ ວ່າ ໃນສົກປີ ໑໙໘໕ / ໘໖ ນັ້ນ ທຶນໃຊ້ໃນກິດຈະການ ດ້ານພະລາທິການວັດຖຸດິບກະເສດ ມີ ໖໐໓ ລ້ານ ໕ ແສນ ຮູບ, ແຕ່ໃນ ປີ ໑໙໘໗/໘໘ ນັ້ນ ໄດ້ມີເຖິງ ໗໔໘ ລ້ານ ໘ ແສນຮູບ. ພາຍ

ໃນໄລຍະເວລາດັ່ງກ່າວ ເງິນທຶນທີ່ໃຊ້ໃນກິດຈະການພະລາທິການ ວັດຖຸອຸປະກອນການຜະລິດ ໄດ້ເພີ່ມຈາກ ໓໕໕ ລ້ານ ໆ ແສນຣູບ. ການເພີ່ມພາກສ່ວນ ກິດຈະການ ດ້ານພະລາທິການວັດຖຸປະກອນການຜະລິດ ແກ່ອຸດສາຫະກຳ ຂອງສະມາຄົມສະຫະບໍລິສັດນັ້ນ ໄດ້ພິສູດເຖິງຄວາມກ້າວໜ້າຂອງສະມາຄົມສະຫະບໍລິສັດ ໃນການຈັດຕັ້ງພະລາທິການ ວັດຖຸຕົກນົກ-ແກ່ອຸດສາຫະກຳລັດ ຢ່າງບໍ່ຢຸດຢັ້ງ.

ເພື່ອກຳນົດບົດບາດ ແລະທີ່ຕັ້ງຂອງສະມາຄົມສະຫະບໍລິສັດ ໃນລະບົບຄຸ້ມຄອງອຸດສາຫະກຳລັດນັ້ນ ເພິ່ນເຫັນຄວາມ ຈຳເປັນ ຕ້ອງກ່າວເຖິງອິດທິພົນອັນເຕີບໃຫຍ່ໃນການຈັດຫາເງິນສິນເຊື່ອ ແກ່ອຸດສາຫະກຳ ແບບສະມາຄົມສະຫະບໍລິສັດ. ໃນຂະນະທີ່ເພິ່ນໄດ້ມອບສິດການນຳໃຊ້ບໍລິມາດອັນໃຫຍ່ຫຼວງຂອງສິນເຊື່ອ ຂອງທະນາຄານນັ້ນ ຄວາມສະດວກເພື່ອຮັບສິນເຊື່ອນັ້ນ ໄດ້ເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ. ຕົວຢ່າງ ໃນປີ ໑໙໔໗ ເພິ່ນໄດ້ມອບສິນເຊື່ອທັງໝົດ ໃຫ້ແກ່ສະມາຄົມສະຫະບໍລິສັດ ຕ່ຳແຜ່ນ ທີ່ວັດລັດເຊຍ ແລະສະມາຄົມສະຫະບໍລິສັດນ້ຳມັນ ຈຶ່ງໄດ້ກຳນົດໃຫ້ແກ່ອຸດສາຫະກຳຕ່ຳແຜ່ນແລະນ້ຳມັນ. ອັດຕາສ່ວນຂອງເງິນສິນເຊື່ອ ຂອງທະນາຄານ ທີ່ແຈກຢາຍໃຫ້ແກ່ສະມາຄົມສະຫະບໍລິສັດ ຂະແໜງອື່ນໆນັ້ນກໍໄດ້ເພີ່ມຂຶ້ນເຊັ່ນດຽວກັນ.

ສະມາຄົມສະຫະບໍລິສັດ ໄດ້ກາຍເປັນສູນແຈກຢາຍສິນເຊື່ອຂອງທະນາຄານ ໃຫ້ບໍ່ພຽງແຕ່ສະມາຊິກຂອງຕົນ ເທົ່ານັ້ນ, ພວກເຂົາຍັງໄດ້ແຈກຢາຍສິນເຊື່ອດັ່ງກ່າວໃຫ້ທັງບັນດາອຸດສາ

ຫະກຳທັງໝົດ ໃນຂະແໜງດຽວກັນ ຊຶ່ງໃນນັ້ນກໍມີອຸດສາຫະກຳ ທີ່ບໍ່ເປັນສະມາຊິກ ຂອງສະມາຄົມສະຫະບໍລິສັດອີກດ້ວຍ.

ການຂະຫຍາຍບົດບາດ ຂອງສະມາຄົມສະຫະບໍລິສັດ ໃນການຈັດຕັ້ງພະລາທິການ, ການຊື້ຂາຍ, ການລົງທຶນ ແລະການສິນເຊື່ອ ຂອງອຸດສາຫະກຳລັດນັ້ນ ມັນໄດ້ເຮັດໃຫ້ມີການປ່ຽນແປງ ການພົວພັນພາຍໃນ ຂອງສະມາຄົມສະຫະບໍລິສັດ. ກ່ອນອື່ນໝົດ ສະມາຄົມສະຫະບໍລິສັດ ປົດປ່ອຍບັນດາສະຫະບໍລິສັດຕ່າງໆ ໃຫ້ພົ້ນອອກຈາກກິດຈະການຄ້າຂາຍ,ທີ່ເປັນການອຳນວຍຄວາມສະດວກ ແກ່ສະຫະບໍລິສັດ ກຳກັບແຕ່ການ ແກ້ໄຂ ບັນຫາການຜະລິດເທົ່ານັ້ນ. ສະມາຄົມສະຫະບໍລິສັດ ໄດ້ເອົາໜ້າທີ່ການຈັດຕັ້ງພະລາທິການ ວັດຖຸເຕັກນິກ ຈຳນວນຫລວງຫລາຍ ແກ່ອຸດສາຫະກຳລັດ ມາເປັນຂອງຕົນ. ພວກເຂົາໄດ້ສຸມໃສ່ການຈຳໜ່າຍສິນເຊື່ອ,ທີ່ເປັນໄມ້ວັດເພີ່ມເຕີມໃນການຈັດວາງການເຄື່ອນໄຫວການຜະລິດຂອງສະຫະບໍລິສັດ.

ການພົວພັນຂອງສະມາຄົມສະຫະບໍລິສັດ ກັບຕາໜ່າງການຄ້າໄດ້ສ້າງຂຶ້ນ ບົນພື້ນຖານລະບົບລາຄາໃນການຄ້າ. ລາຄາທີ່ວາງອອກ ໄດ້ອີງໃສ່ລາຄາຕົ້ນທຶນ, ລາຍຈ່າຍນອກການຜະລິດ ແລະບາງຂະໜາດຂອງກຳໄລ, ພ້ອມທັງຄວາມ ຮຽກຮ້ອງຕ້ອງການ ຂອງຜູ້ບໍລິໂພກອີກດ້ວຍ. ການແຕກຕ່າງ ກັນລະຫວ່າງລາຄາທີ່ເພີ່ມຄິດໄລ ແລະລະບົບລາຄາ ໃນທ້ອງຕະຫລາດ ມີພຽງນ້ອຍດຽວ. ແຕ່ເຖິງຢ່າງໃດກໍດີ ການເກີດມີສອງລະບົບລາຄານັ້ນ ມັນໄດ້ສະແດງເຖິງທ່າອ່ອນເພຍ ຂອງ

ສະຫະບໍລິສັດ ພາຍໃນສະມາຄົມສະຫະບໍລິສັດ ເກີດຂຶ້ນໃນອະນາຄົດ.

ສະມາຄົມສະຫະບໍລິສັດ ໄດ້ນຳໃຊ້ວິທີຊຳລະບັນຊີໂດຍບໍ່ໃຊ້ໃບສັ່ງຈ່າຍຂອງການແລກປ່ຽນ, ເພິ່ນໄດ້ຈ່າຍກັນ ໂດຍເງິນສົດໂລດ (ເຊັ່ນ ສະມາຄົມສະຫະບໍລິສັດຕໍ່າແຜ່ນ, ເຫລັກແລະຢາດູດ). ການປະຕິບັດດັ່ງກ່າວ ໄດ້ນຳໄປສູ່ການລົດຜ່ອນບົດບາດຂອງໃບສັ່ງຈ່າຍທີ່ອອກໃຫ້ ໂດຍສະຫະບໍລິສັດໃນການພົວພັນຂອງສິນເຊື່ອຂອງເຂົາ ແລະການຈ່າຍກັບສະມາຄົມສະຫະບໍລິສັດ.

ສະມາຄົມສະຫະບໍລິສັດ ໄດ້ກ້າວເຂົ້າສູ່ລະບົບການຊຳລະ-ບັນຊີ ຢ່າງເປັນແຜນການເທື່ອລະກ້າວ. ເພິ່ນໄດ້ຊຳລະຄ່າຜະລິດຕະພັນ ດ້ວຍເງິນສົດ ໃນເງື່ອນໄຂທີ່ວ່າ ສະຫະບໍລິສັດ - ຕ້ອງມອບສິນເຊື່ອໄລຍະສັ້ນຂອງຕົນ ໃຫ້ແກ່ສະມາຄົມສະຫະບໍລິສັດ, ໝາຍຄວາມວ່າ , ໃນກໍລະນີທີ່ບໍລິສັດຫາກໂດຍເທດຈິງ ໄດ້ມອບຊັບພະຍາກອນ ການເງິນຂອງເຂົາໃຫ້ແກ່ສະມາຄົມສະຫະບໍລິສັດ.

ສະນັ້ນ ເຖິງທ້າຍປີ ໑໙໔໐ ລະບົບສະມາຄົມສະຫະບໍລິສັດໄດ້ດັດປ່ຽນຢ່າງກ້ວາງຂວາງ. ສະມາຄົມສະຫະບໍລິສັດ ໄດ້ກາຍເປັນອົງການ ຂອງສະພາເສດຖະກິດແຫ່ງຊາດສູງສຸດໃນສະຫະພາບ ສາທາລະນະລັດ ສັງຄົມນິຍົມໂຊວຽດ ໃນການຊີ້ນຳຊຸດສາຫະກຳລັດ. ສະມາຄົມສະຫະບໍລິສັດ ໄດ້ລວບລວມເອົາວຽກງານພະລາທິການ, ການຊື້ຂາຍແລະການລົງທຶນຊຸດ

ສາທະກຳມາເປັນຂອງຕົນ, ເຂົາໄດ້ໃຊ້ອິດທິພົນອັນສຳຄັນຂອງເຂົາ ຕໍ່ການເຄື່ອນໄຫວການຜະລິດ ຂອງສະຫະບໍລິສັດ ແລະໂຮງຈັກໂຮງງານ. ສະມາຄົມສະຫະບໍລິສັດ ໄດ້ຈັດວາງ ບໍລິມາດຜະລິດຕະພັນ ທີ່ຜະລິດອອກ, ຄຸນນະພາບ, ແຍກປະເພດສິນຄ້າ. ການພົວພັນຂອງສະມາຄົມສະຫະບໍລິສັດ ໃນການຈັດຕັ້ງເສດຖະກິດ ຖືວ່າເດັ່ນທີ່ສຸດ ທີ່ໄດ້ແຜ່ອອກນອກຂອບເຂດ-ຊຸດສາທະກຳຂອງຕົນ ແລະໄດ້ດຳເນີນໜ້າທີ່ຈັດວາງໃຫ້ເປັນແຜນການ ຢູ່ໃນມາດຕາສ່ວນ ຂະແໜງຊຸດສາທະກຳທັງໝົດ.

ການເພີ່ມທະວີບົດບາດ ຂອງສະມາຄົມສະຫະບໍລິສັດ ໃນການຈັດຕັ້ງຊຸດສາທະກຳລັດ ແບບໃໝ່ນັ້ນ ໄດ້ວາງບັນຫາ ອອກ ກ່ຽວກັບບົດບາດຂອງກົມໃຫຍ່ ສະພາເສດຖະກິດແຫ່ງ-ຊາດສູງສຸດ ສະຫະພາບ ສາທາລະນະລັດ ສັງຄົມນິຍົມ ໂຊວຽດ. ບັນດາໜ້າທີ່ອັນສຳຄັນຈຳນວນໜຶ່ງຂອງກົມໃຫຍ່ ໄດ້ດຳເນີນການຊີ້ນຳຊຸດສາທະກຳ ແບບປະຕິບັດຫລັກການ ລວມເທົ່ານັ້ນ.

ໃນສະພາບດັ່ງກ່າວ ພະນັກງານເສດຖະກິດບາງຄົນ ໄດ້ມີທ່າອຽງຢາກຮິບໂຮມໜ້າທີ່ ການວາງແຜນການ, ການຈັດວາງເສດຖະກິດ ແລະການຊີ້ນຳລວມ ເຂົ້າເປັນຂອງອົງການໜຶ່ງ ຂອງກົມໃຫຍ່ ຂອງສະພາເສດຖະກິດແຫ່ງຊາດ ສູງສຸດ ສະຫະພາບສາທາລະນະລັດ ສັງຄົມນິຍົມໂຊວຽດ, ສ່ວນໜ້າທີ່ການຈັດຕັ້ງການຄ້າຂາຍ, ການພະລາທິການວັດຖຸເຕັກນິກໃຫ້ເປັນຂອງສະມາຄົມສະຫະບໍລິສັດ. ການແກ້ໄຂບັນຫາດັ່ງກ່າວ

ໃນຮູບການການຈັດຕັ້ງນັ້ນ ມັນໝາຍເຖິງ ການຮວມກົມໃຫຍ່ຂອງສະພາເສດຖະກິດແຫ່ງຊາດສູງສຸດ ສະຫະພາບສາທາລະນະລັດ ສັງຄົມນິຍົມໂຊວຽດ ເຂົ້າກັບກັບສະມາຄົມສະຫະບໍລິສັດ ທີ່ກ່ຽວຂ້ອງ.

ໂດຍການເອົາໃຈໃສ່ ແລະການຂະຫຍາຍຕົວ ຂອງການວາງແຜນການແບບລວມສູນ ບໍ່ແມ່ນແຕ່ໄດ້ມີການປ່ຽນແປງວິທີການເຄື່ອນໄຫວ ຂອງສະມາຄົມສະຫະບໍລິສັດ ຕໍ່ສາຍການພົວພັນ ອຸດສາຫະກຳກັບ ທ້ອງຕະຫລາດເທົ່ານັ້ນ, ແຕ່ຫາກຮູບການການຈັດຕັ້ງ ຂອງສາຍການພົວພັນອັນນັ້ນ ກໍໄດ້ຖືກປັບປຸງໃຫ້ດີອີກ. ສະພາບອັນນັ້ນ ມັນສະແດງເຖິງ ສ່ວນເລິກຂອງອຸດສາຫະກຳ ໂດຍສະເພາະ ເງື່ອນໄຂ ສຳລັບການຈັດຕັ້ງ-ພື້ນຖານຂອງລະບົບ ແລະວິທີການຄຸ້ມຄອງ ອຸດສາຫະກຳ ທັງໝົດ ແມ່ນພວມຈະສຸກງອມແລ້ວ.

ການຄຸ້ມຄອງອຸດສາຫະກຳລັດ

ແລະ ກຸ່ມຂະແໜງອຸດສາຫະກຳ

ໃນໄລຍະ ແຕ່ປີ ໑໙໒໙ ຫາປີ ໑໙໓໒

ການຂ້າມຜ່ານ ໄປສູ່ການເຮັດໃຫ້ເປັນອຸດສາຫະກຳ ແລະການປັບປຸງການຄຸ້ມຄອງອຸດສາຫະກຳ

ມາເຖິງປີ ໑໙໒໗ ສະຫະພາບໂຊວຽດໄດ້ບັນລຸເຖິງຄວາມສຳເລັດ ຢ່າງຈຸດເຈນ ໃນການດັດສ້າງເຕັກນິກ ອຸດສາຫະກຳ. ພ້ອມກັນນັ້ນ ມັນກໍເປັນການບຸກໂຈມຕີ ຢ່າງເອົາເປັນເອົາຕາຍ ໃສ່ປ້ອມດ່ານໜ້າຂອງພວກນາຍທຶນ ໃນຂົງເຂດອຸດສາຫະກຳ ກໍຄືໃນດ້ານການຄ້າ. ບັນຫາທີ່ວ່າ " ໃຜແຂງກ່ວາໃຜ" ນັ້ນ ໄດ້ຕົກເປັນຂອງຝ່າຍ ສັງຄົມນິຍົມ ທັງຢູ່ໃນຕົວເມືອງ ແລະທັງຢູ່ໃນເຂດຊົນນະບົດ ກໍເຊັ່ນດຽວກັນ. ກ່ອນໄລຍະເລີ່ມຕົ້ນຂອງການປະຕິບັດ ແຜນການຫ້າປີຄັ້ງທີໜຶ່ງນັ້ນ ມີສອງຮູບການດຳລົງຊີວິດເທົ່ານັ້ນ ທີ່ຄົງຕົວຢູ່ເຊັ່ນ: ຮູບການດຳລົງຊີວິດ ແບບສັງຄົມນິຍົມ ແລະແບບການຜະລິດນ້ອຍ ເອກະເທດ. ແຕ່ໃນເວລານັ້ນ ຖານະຂອງຮູບການ ດຳລົງຊີວິດແບບການຜະລິດນ້ອຍ ເອກະເທດ ຊ້ຳພັດຖືກຕົກໄປຢູ່ໃນອັນດັບທີສອງ, ທັງຍອມປະນ່ອມໄວ້ໃຫ້ແກ່ຝ່າຍນິຍົມການດຳລົງຊີວິດ ແບບສັງຄົມນິຍົມ. ໄຊຊະນະອັນສຸດທ້າຍ ຂອງຮູບການ

ແບບສັງຄົມນິຍົມນັ້ນ ມັນຂຶ້ນຢູ່ກັບການປະຕິບັດມະຕິກອງປະຊຸມໃຫຍ່ຂອງພັກ ຄັ້ງທີ XIV ກ່ຽວກັບການເຮັດໃຫ້ເປັນອຸດສາຫະກຳ ສັງຄົມນິຍົມສຳເລັດຜົນ. ໜ້າທີ່ຕົ້ນຕໍຂອງສະໄໝນັ້ນມີຢູ່ວ່າ ຫັນປ່ຽນສະຫະພາບໂຊວຽດ ໃຫ້ກາຍເປັນປະເທດອຸດສາຫະກຳ ຂະຫຍາຍຕົວໃນອັນດັບສູງສຸດ. ເພື່ອຈະບັນລຸ ເປົ້າໝາຍດັ່ງກ່າວ ເພິ່ນເຫັນມີຄວາມຈຳເປັນຕ້ອງສຳຫລວດ ຄືນຮູບການຈັດຕັ້ງຕ່າງໆ ແລະວິທີການຄຸ້ມຄອງອຸດສາຫະກຳ ທີ່ມີຢູ່ໃນເວລານັ້ນ.

ໃນສະໄໝການຟື້ນຟູເສດຖະກິດນັ້ນ ບັນຫາເສດຖະກິດ ທີ່ສຳຄັນທີ່ສຸດ ບັນຫາໜຶ່ງນັ້ນ ແມ່ນການບັນຊາກຳລັງການຈໍລະຈອນ ຂອງທ້ອງຕະຫລາດ ເຂົ້າມາຮັບໃຊ້ຜົນປະໂຫຍດ ການກໍ່ສ້າງສັງຄົມນິຍົມ. ເພື່ອແກ້ໄຂບັນຫາດັ່ງກ່າວນັ້ນ ເພິ່ນກໍໄດ້ທຳການດັດແປງຮູບການການຈັດຕັ້ງຄຸ້ມຄອງ ໃຫ້ເໝາະສົມເທົ່າທີ່ຄວນ.

ໃນໄລຍະການດັດສ້າງເສດຖະກິດນັ້ນ ເພິ່ນກໍໄດ້ວາງບັນ-ຫາ ການຈັດຕັ້ງໃໝ່ອອກ. ໃນສະໄໝປີ ໑໙໒໖ ຫາ ປີ ໑໙໒໗ ນັ້ນ ເພິ່ນໄດ້ນຳປະຕິບັດ ມາດຕະການ ອັນແທດເໝາະ ໃນການປັບປຸງລະບົບຄຸ້ມຄອງອຸດສາຫະກຳທີ່ມີຢູ່ນັ້ນ; ເພິ່ນໄດ້ຂະຫຍາຍຄວາມເປັນເອກະລາດ ໃນດ້ານ ບໍລິຫານຂອງບັນດາໂຮງຈັກໂຮງງານ ທີ່ແຕກຕ່າງກັນ. ໃນພື້ນຖານແລ້ວ ຮູບການຈັດຕັ້ງຄຸ້ມຄອງ ທີ່ເພິ່ນຈັດຕັ້ງຂຶ້ນທີ່ໄດ້ຮັບຜົນສະທ້ອນ ຈາກການດຳເນີນໜ້າທີ່ ດ້ານເສດຖະກິດ ແລະ ການ

ເນືອງໃນສະໄຫມການຟື້ນຟູເສດຖະກິດນັ້ນກໍບໍ່ໄດ້ມີການປ່ຽນ-ແປງແຕ່ຢ່າງໃດ. ອີກປະການຫນຶ່ງການສັບປ່ຽນໂຄງຮ່າງໃນວຽກງານເສດຖະກິດແຫ່ງຊາດ, ທີ່ປະກົດຂຶ້ນ ໃນໄລຍະການດຳເນີນ ການເຮັດໃຫ້ເປັນອຸດສາຫະກຳນັ້ນ,ມັນຮຽກຮ້ອງໃຫ້ມີການຈັດຕັ້ງ ກົງຈັກຄຸ້ມຄອງລັດທັງຫມົດນັ້ນຄືນໃຫມ່ ແລ້ວຫັນກົງຈັກດັ່ງກ່າວ ໃຫ້ສອດຄ່ອງກັບລະບົບເສດຖະກິດ ຂອງພວກເຮົາ ແລະໃຫ້ເຫມາະກັບພາລະຫນ້າທີ່ ຂອງການກໍ່ສ້າງ ສັງຄົມນິຍົມ.

ວິທີຈັດວາງສາຍການພົວພັນເສດຖະກິດ ໃນອຸດສາຫະກຳທີ່ສະມາຄົມສະຫະບໍລິສັດ ນຳໃຊ້ມານັ້ນ ໄດ້ກັບກາຍເປັນຂໍ້ຂັດ-ແຍ້ງ ກັບພາລະຫນ້າທີ່ ຂອງການດັດສ້າງເຕັກນິກ. ໃນສະໄຫມການຟື້ນຟູເສດຖະກິດນັ້ນ ສະມາຄົມສະຫະບໍລິສັດ ໄດ້ດຳເນີນການເຄື່ອນໄຫວເສດຖະກິດຂອງຕົນ ໂດຍອີງໃສ່ພື້ນຖານການຄ້າ ດ້ວຍການນຳໃຊ້ການພົວພັນການຄ້າ ແລະເງິນຕາ. ໃນການດຳເນີນເສດຖະກິດ ຂອງສະມາຄົມສະຫະບໍລິສັດ ນັ້ນຕາມຫລັກການແລ້ວ, ລາຄາແມ່ນໄດ້ວາງອອກບົນພື້ນຖານກົດເກນຂອງຄຸນຄ່າ. ໃນເວລານັ້ນ ແມ່ນໄລຍະທີ່ ອຸດສາຫະກຳຖືກທົດສອບ ຈາກການກົດຫນ່ວງຂອງຕະຫລາດ ທີ່ມີການຈັດຕັ້ງ.

ໃນເປົ້າຫມາຍຂອງໂຄງການ ເຮັດໃຫ້ເປັນອຸດສາຫະກຳ-ຂອງ ທ່ານ ວ.ອິ.ເລນິນ ນັ້ນ ບໍ່ມີພຽງແຕ່ ການກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ສັງຄົມນິຍົມເທົ່ານັ້ນ, ແຕ່ກໍ່ຍັງແມ່ນການ

ຮັບປະກັນຄວາມເປັນເອກະລາດຂອງປະເທດຊາດ ດ້ານເສດຖະກິດອີກດ້ວຍ. ສິ່ງທີ່ເປັນປັດໄຈຕັດສິນຊີ້ຂາດ ເພື່ອສຳເລັດເປົ້າໝາຍດັ່ງກ່າວ ແມ່ນຈັງຫວະຂອງການສ້າງອຸດສາຫະກຳຂະໜາດໃຫຍ່. ວິທີການຈັດສັນຕະຫລາດ ທີ່ນຳໃຊ້ໂດຍ ສະມາຄົມສະຫະບໍລິສັດ ເພື່ອຈັດວາງການຜະລິດອຸດສາຫະກຳນັ້ນ ເປັນທີ່ຮູ້ກັນຢູ່ແລ້ວວ່າ ມັນໄດ້ກັບກາຍເປັນສິ່ງກີດຂວາງ ການກ້າວເດີນ ຂອງການກໍ່ສ້າງເສດຖະກິດແຫ່ງຊາດ ໃຫ້ເປັນອຸດສາຫະກຳຂະໜາດໃຫຍ່. ຄວາມຈຳເປັນໃນການປ່ຽນແປງ-ຂະໜາດ ຂອງເສດຖະກິດແຫ່ງຊາດ ໃນໄລຍະເວລາອັນສັ້ນສັ້ນນັ້ນ ມັນຮຽກຮ້ອງໃຫ້ຕ້ອງປະຕິບັດນະໂຍບາຍລາຄາທີ່ສອດຄ່ອງເໝາະສົມ, ຊຶ່ງໂດຍອີງໃສ່ພື້ນຖານດັ່ງກ່າວຈະອາດສາມາດສູມທຸກຊັບພະຍາກອນທີ່ມີຢູ່ນັ້ນ ໃຫ້ແກ່ພາກສ່ວນ ນຳໜ້າຂອງການກໍ່ສ້າງສັງຄົມນິຍົມ.

ຄືດັ່ງທີ່ພວກເຮົາໄດ້ກ່າວໄວ້ແລ້ວ ຢູ່ຂ້າງເທິງນັ້ນວ່າ ການໃຊ້ສັນຍາແມ່ ເຂົ້າໃນອຸດສາຫະກຳ ແລະການດຳເນີນ ການຈັດວາງການແລກປ່ຽນສິນຄ້າ ໃຫ້ເປັນແຜນການນັ້ນ ມັນໄດ້ສ້າງຄວາມຈຳເປັນ ຢ່າງນອກຕົວ ໃນການປັບປຸງການ ຄຸ້ມຄອງອຸດສາຫະກຳ ແບບລວມສູນ ໃຫ້ເປັນແຜນການ ໃນຂັ້ນຕໍ່ໄປ. ການປະຕິບັດດັ່ງກ່າວ ມັນໄດ້ມີຜົນສະທ້ອນ ໃນກົດລະບຽບການຈັດຕັ້ງ ຂອງສະຫະບໍລິສັດ ທີ່ເພິ່ນຮັບຮອງເອົາ ໃນວັນທີ ໒໙ ມິຖຸນາ ປີ ໑໙໒໗, ຊຶ່ງໂດຍອີງໃສ່ ກົດລະບຽບການຈັດຕັ້ງດັ່ງກ່າວ ວິສາຫະກິດຂອງສະຫະບໍລິສັດໄດ້ນຳເຂົ້າ

ສູ່ຫລັກການກຸ້ມຕົນເອງ ດ້ານເສດຖະກິດ. ແຕ່ເຖິງຢ່າງໃດກໍ-ຕາມ ການປະຕິບັດເປົ້າຫມາຍດັ່ງກ່າວ ກໍໄດ້ພົບຄວາມຫຍຸ້ງຍາກນາໆປະການ, ໃນນັ້ນ ກໍແມ່ນການວາງຫລັກການ ທາງທິດສະດີ ແລະວິທີປະຕິບັດ ຫລັກການກຸ້ມຕົນເອງດ້ານເສດຖະກິດ.

ຕາມຫລັກການແລ້ວ ການນຳໃຊ້ຫລັກການກຸ້ມຕົນເອງດ້ານເສດຖະກິດດັ່ງກ່າວ ມັນບໍ່ໄດ້ດຳເນີນໄປສອດຄ່ອງກັບ ເງື່ອນໄຂໃຫມ່ ຂອງການຈັດຕັ້ງການຜະລິດ ແບບສັງຄົມນິຍົມ. ນັກເສດຖະສາດບາງຄົນໃນເວລານັ້ນຖືວ່າ ການນຳໃຊ້ເສດຖະ-ກິດ ເຂົ້າສູ່ໄລຍະດັດສ້າງນັ້ນ ໃນຕົວແມ່ນການໂຈມຕີຕໍ່ນະໂຍບາຍເສດຖະກິດໃຫມ່, ແມ່ນການເຮັດໃຫ້ບົດບາດ ການວາງແຜນໄດ້ແຂງແຮງຂຶ້ນໃນຂັ້ນຕໍ່ໄປ ແລະແມ່ນການນຳເອົາ ທຸກບັນຫາເສດຖະກິດແຫ່ງຊາດ ເຂົ້າຢູ່ໃຕ້ການບັນຊາຂອງລະບົບແຜນການ.

ທີ່ຈິງແລ້ວ ຄວາມເຫັນດັ່ງກ່າວ ມັນຫມາຍເຖິງການຄັດ - ຄ້ານແຜນການກັບການກຸ້ມຕົນເອງ ດ້ານເສດຖະກິດ. ຖ້າຫາກວ່າ ເພິ່ນຢືນຢັນຢູ່ໃນຄວາມເຂົ້າໃຈດັ່ງກ່າວກໍຫມາຍວ່າໃນໄລຍະການຟື້ນຟູເສດຖະກິດນັ້ນ ເພິ່ນນຳໃຊ້ນະໂຍບາຍ ເສດຖະກິດໃຫມ່ ແມ່ນເປັນພຽງນະໂຍບາຍ ເສດຖະກິດ ທີ່ຈຳເປັນ, ສະນັ້ນ ການຂ້າມຜ່ານໄປສູ່ການເຮັດໃຫ້ເປັນອຸດສາຫະກຳ ກໍ່ຈິ່ງປະຕິເສດນະໂຍບາຍດັ່ງກ່າວນັ້ນ. ແຕ່ເຖິງຢ່າງໃດຄວາມເຂົ້າໃຈດັ່ງກ່າວ ແມ່ນກົງກັນຂ້າມກັບທິດທາງການເມືອງຂອງ

ພັກເຮົາ ໃນພາກປະຕິບັດຕົວຈິງ.ກ່ຽວກັບບັນຫານີ້ ມະຕິຮວມຂອງກອງປະຊຸມສະໄຫມສາມັນຂອງສູນກາງຂອງຄະນະກຳມະການກວດກາສູນກາງ ແລະຄະນະກະມະການສູນກາງ ສະບັບລົງວັນທີ ໑໑ ເມສາ ປີ ໑໙໔໙ ທີ່ບົ່ງໄວ້ວ່າ: "ນະໂຍບາຍເສດຖະກິດໃຫມ່ ແມ່ນເສັ້ນທາງນີ້ເທົ່ານັ້ນ ທີ່ເປັນເສັ້ນທາງເດີນຂອງພັກ ແລະບົນເສັ້ນທາງດັ່ງກ່າວເທົ່ານັ້ນ ຈຶ່ງຈະສາມາດປ່ຽນແປງເສດຖະກິດຂອງປະເທດຊາດ ໃຫ້ເປັນສັງຄົມນິຍົມໄດ້. ສະນັ້ນ ການໂຄສະນາໃສ່ຮ້າຍປ້າຍສີ ... ກ່ຽວກັບການຍົກເລີກນະໂຍບາຍເສດຖະກິດໃຫມ່ນັ້ນຈະຕ້ອງພົບກັບການຕ້ານຄືນ ຢ່າງເດັດດ່ຽວຈາກພັກ" ("ພ.ກ.ສ.ຊ. ໃນມະຕິຂອງກອງປະຊຸມສະພາ, ກອງປະຊຸມແລະກອງປະຊຸມສາມັນ ຂອງສູນກາງພັກ", ເຫລັ້ມທີ ໔, ຫນ້າ ໗໐.)

ການນຳເອົາວິສາຫະກິດ ເຂົ້າສູ່ຫລັກການກຸ້ມຕົນດ້ານເສດຖະກິດນັ້ນ ໄດ້ນຳໄປສູ່ມາດຕະການຫລາຍຢ່າງ ໃນດ້ານການປັບປຸງການຈັດຕັ້ງກົງຈັກສູນກາງ ຂອງສະພາເສດຖະກິດແຫ່ງຊາດສູງສຸດ ແລະອົງການສະພາເສດຖະກິດແຫ່ງຊາດ ສູງສຸດປະຈຳສາທາລະນະລັດ, ກວດກາຄືນອົກບົດບາດ ແລະ ທີ່ຕັ້ງຂອງສະຫະບໍລິສັດ, ຍົກລະດັບບົດບາດການບໍລິຫານ ເສດຖະກິດ ຂອງວິສາຫະກິດ.

ການສິ້ນສຸດຂອງໄລຍະການຟື້ນຟູ ແລະການດຳເນີນ ການດັດສ້າງຊຸດສາຫະກຳ ຢ່າງກ້ວາງຂວາງນັ້ນ ໄດ້ນຳໄປສູ່ການປ່ຽນແປງອັນສຳຄັນ ແລະອັນມີຄຸນນະພາບສູງໃນດ້ານເສດຖະ

ກິດແຫ່ງຊາດ. ຂະໜາດການຜະລິດ,ການວາງແຜນ ໄດ້ຂະຫຍາຍອອກໄປນັ້ນ ມັນກໍມີອົງການຊ່ຽວຊານຄຸ້ມຄອງອຸດສາຫະກໍາເກີດຂຶ້ນ, ການຈັດແບ່ງເຂດຂອງປະເທດ ກໍໄດ້ສໍາເລັດລົງ, ດໍາເນີນການກະກຽມກໍ່ສ້າງພະນັກງານວິສະວະກໍາແລະເຕັກນິກ, ໄດ້ປ່ຽນຮູບການ ແລະວິທີຂອງການລົງທຶນແລະສິນເຊື່ອອຸດສາຫະກໍາ, ລະບົບຊໍາລະໂດຍໃບສັ່ງຈ່າຍກໍໄດ້ນໍາໃຊ້ຢ່າງກ້ວາງຂວາງ, ໃນຕົວຈິງ ຜົນສະທ້ອນຂອງກໍາລັງພຶດສະດານຂອງຕະຫລາດ ຕໍ່ການຂະຫຍາຍຕົວ ຂອງເສດຖະກິດໂຊວຽດ ໄດ້ຖືກຍົກເລີກ. ສິ່ງທັງໝົດເຫລົ່ານີ້ ເຮັດໃຫ້ມີເງື່ອນໄຂອັນດີ ເພື່ອປັບປຸງການຄຸ້ມຄອງອຸດສາຫະກໍາ. ໃນໄລຍະແຕ່ປີ ໑໙໔໘ ຫາປີ ໑໙໔໙ ນັ້ນ ໂຄງຮ່າງການຈັດຕັ້ງ ຂອງກົງຈັກຄຸ້ມຄອງເສດຖະກິດ ໄດ້ຖືກປັບປຸງຂຶ້ນ ຢ່າງເນື່ອງນິດລຽນຕິດ, ວິທີຊີ້ນໍານໍາພາ ທີ່ກົງຈັກດັ່ງກ່າວນໍາໃຊ້ຢູ່ນັ້ນ ກໍໄດ້ຖືກປ່ຽນແປງ. ມາດຕະການ ທີ່ສະພາເສດຖະກິດແຫ່ງຊາດ ສູງສຸດ ຂອງ ສ.ສ.ສ.ຊ. ໄດ້ບົ່ງອອກນັ້ນ ມັນແມ່ນຄວາມຈໍາເປັນ ເພື່ອສໍາເລັດພາລະໜ້າທີ່ ຂອງແຜນການຫ້າປີ ຊຸດທີໜຶ່ງ. ໃນກໍລະນີຢູ່ບ່ອນໃດ ຫາກຂາດການຊີ້ນໍາ ດ້ານວຽກງານວິທະຍາສາດ ແລະເຕັກນິກນັ້ນ ເພິ່ນຕ້ອງຈັດຕັ້ງໜ່ວຍພິເສດຂຶ້ນ ຢູ່ທົ່ວສາຫະກິດ, ສະຫະບໍລິສັດແລະໂຮງງານທີ່ເຫັນຈໍາເປັນ. ການຈັດການຜະລິດໃຫ້ຖືກຕ້ອງ ຕາມແບບສັງຄົມນິຍົມນັ້ນ ເພິ່ນໄດ້ຖືວ່າ ເປັນບັນຫາສໍາຄັນທີ່ສຸດບັນຫາໜຶ່ງ ໃນການປະຕິບັດພາລະໜ້າທີ່ ກໍ່ສ້າງອຸດສາຫະກໍາຂະໜາດໃຫຍ່

ສັງຄົມນິຍົມ. ໃນເດືອນຕຸລາປີ ໑໙໘໗ ມະຕິກ່ຽວກັບຫ້ອງການຈັດການຜະລິດໃຫ້ຖືກຕ້ອງ ຢູ່ພາຍໃນກົມໃຫຍ່ ແລະຄະນະກຳມາການ ສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ., ສະຫະບໍລິສັດ ແລະວິສາຫະກິດໄດ້ສຳເລັດການແບ່ງຂັ້ນພື້ນຖານຂອງການຈັດຕັ້ງ ເພື່ອດຳເນີນວຽກງານດັ່ງກ່າວ.

ພ້ອມດຽວກັນນັ້ນ ເພິ່ນກໍໄດ້ວາງມາດຕະການ ອັນຈະແຈ້ງຕໍ່ບັນຫາການປັບປຸງ ການຄຸ້ມຄອງອຸດສາຫະກຳໃນຂົງເຂດຂະແໜງອຸດສາຫະກຳ ສະເພາະ.

ໃນເດືອນມິຖຸນາ ປີ ໑໙໘໙ ເພິ່ນໄດ້ຈັດຕັ້ງຄະນະກຳມະການ ອຸດສາຫະກຳຖ່ານຫີນ "ໂກກ" ແລະທາດແກັດເຄມີ,ທີ່ເພິ່ນໄດ້ດຳເນີນແຜນການ ແລະການບໍລິຫານກິດຈະການ ໃນຂອບເຂດອຸດສາຫະກຳຂອງຕົນ. ໃນເດືອນພະຈິກຂອງປີດຽວກັນນັ້ນ ເພິ່ນໄດ້ຈັດຕັ້ງກຳມະການ ກ່ຽວກັບບັນຫານຳເອົາເຄມີ ເຂົ້າຮັບໃຊ້ເສດຖະກິດແຫ່ງຊາດ ທີ່ຂຶ້ນກັບສະພາລັດຖະມົນຕີ ປະຊາຊົນແຫ່ງ ສ.ສ.ສ.ຊ., ເນື່ອງຈາກວ່າ ມັນມີການປັບປຸງ ອົງການຄຸ້ມຄອງອຸດສາຫະກຳເຄມີນັ້ນ ເພິ່ນຈຶ່ງໄດ້ດຳເນີນມາດຕະການຕົວຈິງແລະເໝາະສົມ ເພື່ອຈັດວາງ ການຄຸ້ມຄອງຂະແໜງດັ່ງກ່າວ ໃຫ້ເຂົ້າສູ່ລະບຽບການ. ພ້ອມກັນນັ້ນ ເພິ່ນໄດ້ຈັດຕັ້ງຄະນະກຳມະການ ຄຸ້ມຄອງ ການຜະລິດໄຫມທຽມ ຂຶ້ນຢູ່ໃນໂຄງຮ່າງ ຂອງສະພາເສດຖະກິດ ແຫ່ງຊາດ ສ.ສ.ສ.ຊ., ຊຶ່ງຄະນະກຳມະການດັ່ງກ່າວ ມີໜ້າທີ່ຮັບຜິດຊອບ ການວາງແຜນການ, ການຈັດວາງແລະການຄຸ້ມ

ຄອງການຜະລິດກັບການກໍ່ສ້າງຂັ້ນພື້ນຖານ. ອີງການຄຸ້ມຄອງອຸດສາຫະກຳໂລຫະ ກໍໄດ້ຖືກປັບປຸງໃໝ່ ເຊັ່ນດຽວກັນ. ໂດຍອີງໃສ່ການຈັດຕັ້ງເກົ່າຂອງກົມໃຫຍ່ ຄຸ້ມຄອງໂລຫະນັ້ນ ເພິ່ນໄດ້ຈັດຕັ້ງກົມຊ່ຽວຊານການສ້າງກົນຈັກ, ການວິສະວະກຳໂລຫະ, ບໍ່ແຮ່ແລະໂລຫະສີ. ເນື່ອງຈາກວ່າ ໄລຍະນັ້ນມັນແມ່ນໄລຍະດັດສ້າງອຸດສາຫະກຳ ການປັບປຸງການຈັດຕັ້ງໃໝ່ ນັ້ນມັນຈຶ່ງມີຄວາມໝາຍສຳຄັນເປັນພິເສດ. ຄວາມຈຳເປັນ ໄດ້ເພີ່ມຂຶ້ນ ໃນຂະແໜງໂລຫະກຳນັ້ນ ໄດ້ແກ້ບັນຫາການປັບປຸງການຈັດຕັ້ງການຜະລິດ ແລະການຄຸ້ມຄອງຂະແໜງດັ່ງກ່າວ. ໃນສະໄໝປະຕິບັດແຜນການຫ້າປີຊຸດທຳອິດນັ້ນ ວິສາຫະກິດເຫລັກທັງໝົດ ໄດ້ໂຮມເຂົ້າເປັນສະຫະບໍລິສັດດຽວ. ໃນເວລາທີ່ເພິ່ນວາງແຜນຂະຫຍາຍອຸດສາຫະກຳເຫລັກດຳນັ້ນ, ສະພາແຮງງານແລະປ້ອງກັນຊາດ ໄດ້ມີມະຕິຮັບຮອງເອົາກົດລະບຽບການຈັດຕັ້ງ ກ່ຽວກັບການກໍ່ສ້າງໂຮງງານຫລອມເຫລັກໃໝ່. ໂດຍອີງໃສ່ມະຕິຂອງຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ. ນັ້ນ ເພິ່ນໄດ້ຈັດຕັ້ງຄະນະກຳມາທິການພິເສດຂຶ້ນ, ເພື່ອຮັບຜິດຊອບບັນຫາ ການຮັບປະກັນຜະລິດຕະພັນ ຂອງອຸດສາຫະກຳ ວິສະວະກຳໂລຫະໂດຍຜະລິດຕະພັນຂອງອຸດສາຫະກຳ ນ້ຳມັນເຊື້ອເພີງ. ເພື່ອປັບປຸງວຽກງານຂອງອຸດສາຫະກຳ ຜະລິດແກ້ວແອ່ນ ແລະເຄື່ອງດິນປັ້ນນັ້ນ ເພິ່ນໄດ້ຈັດໃຫ້ເປັນສະຫະບໍລິສັດເຄມີ ຂະໜາດໃຫຍ່. ໃນເວລາດຽວກັນ ເພິ່ນກໍໄດ້ວາງມາດຕະການ

ປັບປຸງການຄຸ້ມຄອງຊຸດສາຫະກຳໄມ້, ການກໍ່ສ້າງຂັ້ນພື້ນຖານ, ແລະອື່ນໆ ໃຫ້ລວມສູນ.

ມາດຕະການທັງຫມົດດັ່ງກ່າວ ທີ່ເພິ່ນໄດ້ດຳເນີນຢູ່ໃນຂອບເຂດ ຂອງລະບົບຄຸ້ມຄອງຊຸດສາຫະກຳ ໃນເວລານັ້ນ, ກໍຄືໃນທ້າຍຂອງທົດສະວັດທີສາມນັ້ນ ໃນວຽກງານຂອງຊຸດສາຫະກຳໄດ້ອຳນວຍເງື່ອນໄຂອັນຈຳເປັນ ເພື່ອດຳເນີນການປັບປຸງລະບົບຄຸ້ມຄອງຊຸດສາຫະກຳ ຢູ່ຂັ້ນພື້ນຖານທັງຫມົດນັ້ນ.

ໃນໄລຍະການກະກຽມ ການປະຕິຮູບການຄຸ້ມຄອງຊຸດສາ-ຫະກຳນັ້ນ ເພິ່ນປະຕິບັດວຽກງານກະກຽມອັນໃຫຍ່ຫລວງດັ່ງ-ກ່າວ ດ້ວຍຄະນະກຳມາທິການພິເສດ ທີ່ເພິ່ນໄດ້ຈັດຕັ້ງ ຂຶ້ນ. ເພື່ອຄົ້ນຄ່ວາບັນຫາດັ່ງກ່າວ ເພິ່ນໄດ້ພິມວິທະຍານິພົນຂອງຄະນະກຳມະການສູນກາງ ກອງກວດກາຂອງກຳມະກອນຊາວນາ ຊຶ່ງໃນນັ້ນ ເພິ່ນໄດ້ຂີດໄວ້ວ່າ, ເວລາປັບປຸງອົງການຈັດຕັ້ງ-ຄຸ້ມຄອງຊຸດສາຫະກຳ ແຕ່ເທິງລົງຮອດລຸ່ມນັ້ນໄດ້ມາຮອດແລ້ວ. ສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ.ບໍ່ພຽງແຕ່ຈະຕ້ອງສຸມໃສ່ການຊີ້ນຳຊຸດສາຫະກຳ ດ້ານວິຊາການເທົ່ານັ້ນ, ແຕ່ທັງຈຳຕ້ອງໂຮມຫນ້າທີ່ຊີ້ນຳດ້ວຍວິຊາການແລະຫນ້າທີ່ວາງແຜນການເສດຖະກິດເຂົ້າກັນຢ່າງສະນິດແຫນ້ນອີກດ້ວຍ.

ຫລັກການທີ່ເປັນພື້ນຖານ ເພື່ອປະຕິຮູບການຄຸ້ມຄອງຊຸດສາຫະກຳ ໃນຂັ້ນຕໍ່ໄປນັ້ນ ໃນພື້ນຖານແລ້ວ ມັນມີຄວາມ ແຕກຕ່າງກັນຫລາຍ ກັບຫລັກການທີ່ເພິ່ນນຳໃຊ້ ຢູ່ໃນໄລຍະຕົ້ນ - ຂອງການດຳເນີນນະໂຍບາຍ ເສດຖະກິດໃຫມ່ນັ້ນ.

ການເພີ່ມທະວີຊັບພະຍາກອນວັດຖຸຢູ່ໃນກຳມືຂອງລັດ,ການຂະຫຍາຍຂອບເຂດ ລະບົບສັງຄົມນິຍົມ, ການຍຶດກອງທຶນເອກະເທດ ທັງຈາກຊຸດສາຫະກຳ ແລະທັງການແລກປ່ຽນສິນຄ້າຍ່ອຍ ໄດ້ສ້າງພື້ນຖານອັນໝັ້ນໜຽວເພື່ອລົງເລິກ ແລະ ຂະຫຍາຍການລິເລີ່ມເຮັດແຜນການ ໃນຊຸດສາຫະກຳ ໃນໄລຍະເລີ່ມຕົ້ນຂອງແຜນການຫ້າປີຊຸດທຳອິດ. ຄວາມຮຽກຮ້ອງຕ້ອງການອັນໃຫມ່ ກ່ຽວກັບບັນຫາເຕັກນິກ ແລະການຈັດຕັ້ງ ຂອງການວາງແຜນໄດ້ເກີດຂຶ້ນ.

ແຕ່ວ່າ ບັນຫາປັບປຸງການຊີ້ນຳ ວິສາຫະກິດນັ້ນເປັນບັນຫາຕົ້ນຕໍ ໃນທ່າມກາງທຸກໆບັນຫາ, ຊຶ່ງໄດ້ແກ່ບົດບາດຂອງວິສາຫະກິດ ໃນໄລຍະການດັດສ້າງເສດຖະກິດ.ໃນລາຍງານຂອງສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ."ກ່ຽວກັບການປັບປຸງການຈັດຕັ້ງຄຸ້ມຄອງຊຸດສາຫະກຳ",ຊຶ່ງບ່ອນໃດທີ່ເພິ່ນນຳໃຊ້ຫລັກການພື້ນຖານ ຂອງການປະຕິຮູບນັ້ນເພິ່ນໄດ້ເນັ້ນວ່າ ວິສາຫະກິດ ຈະຕ້ອງເປັນອົງການເອກະລາດ,ສ່ວນອົງການບໍລິຫານ ຂອງວິສາຫະກິດດັ່ງກ່າວ ໄດ້ຍຶດຖືຄວາມຮັບຜິດຊອບ ຕໍ່ການສຳເລັດໂຄງການການຜະລິດ". ດັ່ງນັ້ນ ມັນຈຶ່ງມີການຊີ້ນຳກ່ຽວກັບໂຄງຮ່າງ ແລະເນື້ອໃນຂອງແຜນການການຜະລິດ ແລະການເງິນ,ການຈັດຕັ້ງການຊື້ຂາຍ, ພະລາທິການ,ການລົງທຶນແລະອື່ນໆໃນທຳນອງດຽວກັນນີ້. ຂອບເຂດການກຸ້ມຕົນເອງ ດ້ານເສດຖະກິດ ກໍໄດ້ຂະຫຍາຍອອກຢູ່ທຸກແຫ່ງຫົນ. ເພິ່ນໄດ້ສະເຫນີໃຫ້ນຳໃຊ້ ຢູ່ທັງໃນວິສາຫະກິດ

ທັງຫມົດແລະທັງພາຍໃນຂະແຫນງວິສາຫະກິດອີກ(ເຊັ່ນ: ພະແນກ, ຫນ່ວຍການຜະລິດ.) ເພິ່ນໄດ້ວາງມາດຕະການເພື່ອປັບປຸງການຈັດຕັ້ງແຮງງານ, ຊຸກຍູ້ວິທີບໍລິຫານ, ລະບອບຫົວຫນ້າໃຫ້ເຂັ້ມແຂງ, ຍົກສູງລະດັບຄວາມຮູ້ດ້ານເຕັກນິກ ແລະເສດຖະກິດ ແກ່ຜູ້ອໍານວຍການວິສາຫະກິດ. ໃນຂະນະທີ່ -ການປັບປຸງລະບົບຄຸ້ມຄອງຊຸດສາຫະກໍາ ແລະການຍົກບົດບາດຂອງວິສາຫະກິດຂັ້ນນັ້ນ ໄດ້ເກີດມີບັນຫາກ່ຽວກັບທີ່ຕັ້ງແລະບົດບາດຂອງສະຫະບໍລິສັດ ຢູ່ໃນລະບົບດັ່ງກ່າວ.

ກ່ອນຫນ້າການປະຕິຮູບນັ້ນ ໃນຄະນະກໍາມາທິການສູນກາງຄະນະກວດກາຂອງກໍາມະກອນ ແລະຊາວນາ ເພິ່ນໄດ້ນໍາສະເຫນີໃຫ້ມີການປະກອບ ອົງການຈັດຕັ້ງອັນຫນຶ່ງຂຶ້ນທີ່ແມ່ນການເຕົ້າໂຮມບັນດາວິສາຫະກິດ ທີ່ມີຂະແຫນງວິຊາການຄ້າຍຄືກັນນັ້ນ. ການຈັດຕັ້ງດັ່ງກ່າວ ມັນກົງກັນຂ້າມກັບການຈັດຕັ້ງຂອງສະຫະບໍລິສັດ ທີ່ເປັນກຸ່ມຊຸດສາຫະກໍາປະຈໍາເມືອງ.ການໂຮມວິສາຫະກິດ ແບບມີວິຊາການຄ້າຍຄືກັນນີ້ ຕາມຄວາມເຫັນ -ຂອງຄະນະກໍາມາທິການ ກວດກາຂອງກໍາມະກອນ ແລະຊາວນານັ້ນ ມັນໄດ້ນໍາຄວາມສະດວກ ອັນໃຫຍ່ຫລວງ ແກ່ການບັນຊາແບບເຕັກນິກ ຂອງຊຸດສາຫະກໍາ. ການເຕົ້າໂຮມແບບ ນີ້ມັນຫມາຍເຖິງການເກີດມີ ຮູບການຄຸ້ມຄອງຊຸດສາຫະກໍາໃຫມ່ຂຶ້ນມາ, ທີ່ຈັດຕັ້ງຂຶ້ນບົນພື້ນຖານການຊ່ຽວຊານ ໃນຂະແຫນງວິຊາການ, ຊຶ່ງເພິ່ນໄດ້ຖືວ່າ ໃຫ້ມີການປັບປຸງການໂຮມກຸ່ມວິສາຫະກິດ ໂດຍຖືເອົາການຊ່ຽວຊານ ດ້ານເຕັກໂນໂລຢີເປັນ

ຫລັກການ. ໃນເວລາທີ່ເພິ່ນປຶກສາຫາລືກັນ ກ່ຽວກັບທີ່ຕັ້ງຂອງສະຫະບໍລິສັດ ໃນລະບົບຄຸ້ມຄອງໃຫມ່ນັ້ນບັນດາຜູ້ແທນຈຳນວນສ່ວນຫລວງຫລາຍ ໄດ້ເຫັນດີນຳກັນວ່າ ໃນເວລາເມື່ອວິສາຫະກິດ ໄດ້ມີຫນ້າທີ່ການດັດສ້າງດ້ານເຕັກນິກນັ້ນ ສະພາບຂອງສະຫະບໍລິສັດ ຈະໄດ້ຮັບການປ່ຽນແປງ ຢູ່ໃນລະບົບຄຸ້ມຄອງຊຸດສາຫະກຳ.

ໃນນັ້ນ ໃນທ່າມກາງການກະກຽມ ການປະຕິຮູບການຄຸ້ມຄອງຊຸດສາຫະກຳ ໃນທ້າຍທົດສະວັດທີສາມ (ໃນລະຫວ່າງປີ ໑໙໔໐ ຫາປີ ໑໙໕໐)ນັ້ນ ເພິ່ນໄດ້ວາງທິດທາງລວມແລະວິທີການດຳເນີນງານການປະຕິຮູບອອກ.

ກຸ່ມຂະແຫນງຊຸດສາຫະກຳ

ໃນໄລຍະການຟື້ນຟູເສດຖະກິດນັ້ນລະບົບຄຸ້ມຄອງຊຸດສາຫະກຳ ໄດ້ປະກົດຂຶ້ນດັ່ງນີ້: ວິສາຫະກິດ - ສະຫະບໍລິສັດ- ສະມາຄົມສະຫະບໍລິສັດ - ກົມໃຫຍ່ - ອົງການບໍລິຫານ ຂອງສະພາເສດຖະກິດແຫ່ງຊາດສູງສຸດ.

ແຕ່ໃນສະພາບດຳເນີນການດັດສ້າງເຕັກນິກ ຢ່າງກວ້າງຂວາງນັ້ນ ໄດ້ມີການປ່ຽນແປງຫນ້າທີ່ ຂອງສະຫະບໍລິສັດ, ຍົກສູງບົດບາດ ຂອງວິສາຫະກິດ ໃນລະບົບຄຸ້ມຄອງ, ເງື່ອນໄຂອັນນອກຕົວ ເພື່ອປ່ຽນແປງຮູບການຈັດຕັ້ງ ແລະ ວິທີຄຸ້ມຄອງຊຸດສາຫະກຳທັງຫມົດ ກໍປະກົດຂຶ້ນ.

ປະຕິບັດລະບົບໄມ້ວັດເສດຖະກິດແລະເຄື່ອງບຳເນັດແກ່ກຳລັງໃຈ ສະມາຄົມສະຫະບໍລິສັດ ໄດ້ຈັດວາງຂະແໜງ ອຸດສາຫະກຳ ຢ່າງມີປະສິດທິພາບ. ກົມໃຫຍ່ຂອງສະພາເສດຖະກິດແຫ່ງຊາດສູງສຸດນັ້ນ ເປັນອົງການປົກຄອງທີ່ບໍ່ມີໄມ້ວັດເສດຖະກິດ ຊຶ່ງໃນພາກປະຕິບັດຕົວຈິງແລ້ວ ບໍ່ສາມາດນຳອິດທິພົນອັນສັກສິດຂອງຕົນ ເພື່ອຊຸກຍູ້ການຂະຫຍາຍຕົວຂອງຂະແໜງອຸດສາຫະກຳໄດ້.

ໃນສະພາບດັ່ງກ່າວນັ້ນ ລະຫວ່າງການດຳເນີນໜ້າທີ່ການປົກຄອງ ກັບໜ້າທີ່ຈັດວາງການຄຸ້ມຄອງອຸດສາຫະກຳ ໄດ້ຕັດຂາດອອກຈາກກັນ. ສະນັ້ນ ມັນຈຶ່ງເກີດມີຄວາມຈຳເປັນຢ່າງນອກຕົວທີ່ສຸດ ເຮັດໃຫ້ໜ້າທີ່ຈັດວາງ ກັບໜ້າທີ່ບໍລິຫານການຄຸ້ມຄອງອຸດສາຫະກຳທັງໝົດ ເຂົ້າຢູ່ໃນອົງການອັນດຽວກັນ.

ບົດບາດອັນສຳຄັນ ໃນການແກ້ໄຂບັນຫາດັ່ງກ່າວ ໄດ້ແກ່ການຈັດຕັ້ງກຸ່ມອຸດສາຫະກຳຂຶ້ນ, ຊຶ່ງມັນໄດ້ກາຍເປັນ ບາດກ້າວແຫ່ງການຈັດຕັ້ງ ກະຊວງປະຊາຊົນປະຈຳຂະແໜງນັ້ນ. ອົງການທີ່ເຕົ້າໂຮມໜ້າທີ່ຂອງກົມໃຫຍ່ ກັບໜ້າທີ່ຂອງສະມາຄົມສະຫະບໍລິສັດ ກໍໄດ້ກຳເນີດຂຶ້ນ. ພາລະໜ້າທີ່ຕົ້ນຕໍ ຂອງອົງການໃໝ່ ທີ່ຈັດຕັ້ງຂຶ້ນນັ້ນ ມີຢູ່ວ່າ ກຳກັບການຈັດຕັ້ງຊີ້ນຳດ້ານເຕັກນິກແລະເສດຖະກິດໃນການຜະລິດ ສຳຫຼັບຂະແໜງອຸດສາຫະກຳທັງໝົດນັ້ນ. ເຖິງແມ່ນວ່າ ເພິ່ນໄດ້ມີບົດຮຽນ-ຈານວນໜຶ່ງແລ້ວ ໃນການເຕົ້າໂຮມໜ້າທີ່ຂອງສະມາຄົມສະຫະບໍລິສັດ ຂອງກົມໃຫຍ່ (ເຊັ່ນ: ສະມາຄົມສະຫະບໍລິສັດຕ່ຳ

ແຜ່ນ) ກໍຕາມ ບັນຫາທັງໝົດກ່ຽວກັບການຈັດຕັ້ງໃຫ້ເປັນອົງການອັນດຽວ, ທີ່ສາມາດຕອບສະໜອງຕໍ່ການແກ້ໄຂ ບັນຫາພື້ນຖານ ທີ່ມີໃນໄລຍະນັ້ນ ກໍຍັງບໍ່ສາມາດແກ້ໄຂໄດ້. ເຖິງແມ່ນວ່າ ໜ້າທີ່ຂອງສະມາຄົມສະຫະບໍລິສັດຕໍ່າແຜ່ນຈະໄດ້ຮັບການວິວັດເທົ່າໃດກໍຕາມ ສະມາຄົມສະຫະບໍລິສັດດັ່ງກ່າວກໍຍັງເປັນກົງຈັກພະລາທິການ ແລະຊົ້ຂາຍ ຂອງອຸດສາຫະກໍາລັດຢູ່ຕໍ່ໄປ. ສ່ວນບັນຫາຊີ້ນໍາດ້ານເຕັກນິກ ຂອງສະມາຄົມສະຫະບໍລິສັດຕໍ່າແຜ່ນນັ້ນ ກໍຍັງຕົກຢູ່ນອກຂອບເຂດຄວາມສາມາດຂອງເຂົາ. ແຕ່ເຖິງຢ່າງໃດກໍຕາມ ໃນໄລຍະການເຮັດໃຫ້ ເປັນປະເທດ ອຸດສາຫະກໍາ ນັ້ນ ເສົາຄໍ້າແກ່ການຍົກລະດັບ - ເຕັກນິກ ຂອງອຸດສາຫະກໍາ ແລະບັນຫາອື່ນໆທັງໝົດເຫຼົ່ານັ້ນຈະຕ້ອງຖືກແກ້ໄຂ ຢູ່ໃນທິດທາງຕົ້ນຕໍຂອງພັກ.ການຮວບຮວມໜ້າທີ່ຂອງກົມໃຫຍ່ ສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ. ແລະສະມາຄົມສະຫະບໍລິສັດເຂົ້າກັນ ເປັນທາງການນັ້ນ ໂດຍປາສະຈາກການປັບປຸງການຈັດຕັ້ງ ຢ່າງເລິກເຊິ່ງ ລະບົບຄຸ້ມຄອງອຸດສາຫະກໍາທັງໝົດນັ້ນ ບໍ່ອາດສາມາດຈະນໍາເອົາ ແລະບໍ່ໄດ້ນໍາເອົາຜົນດີ ມາໃຫ້ແຕ່ຢ່າງໃດ. ບົດຮຽນທີ່ໄດ້ມາຈາກສະມາຄົມສະຫະບໍລິສັດ ອຸດສາຫະກໍາ ຕໍ່າແຜ່ນ ທີ່ວລັດລັດເຊຍນັ້ນ ເຫັນວ່າບໍ່ໄດ້ອໍານວຍຜົນສໍາເລັດມາໃຫ້ແກ່ຈຸດປະສົງດັ່ງກ່າວ ແລະພາຍຫລັງຕໍ່ມາ ແນວຄິດເຕົ້າໂຮມດັ່ງກ່າວ ກໍໄດ້ຖືກຍົກເລີກ.

ໃນໄລຍະທໍາອິດນັ້ນ ເພິ່ນມີຈຸດປະສົງ ຢາກຈະລົບລ້າງກົມ

ປົກຄອງທີ່ບໍ່ກຸ້ມຕົນເອງດ້ານເສດຖະກິດນັ້ນ ແລ້ວເຕົ້າໂຮມກົມດັ່ງກ່າວນີ້ ເຂົ້າກັບກຸ່ມຊຸດສາຫະກຳ (ສະມາຄົມ ສະຫະບໍລິ-ສັດ) ທີ່ກຸ້ມຕົນເອງດ້ານເສດຖະກິດນັ້ນ. ຜ່ານການ ປະຕິບັດການເຕົ້າໂຮມດັ່ງກ່າວ ກຸ່ມຊຸດສາຫະກຳ ທີ່ກຸ້ມຕົນເອງ ດ້ານເສດຖະກິດນັ້ນ ກໍໄດ້ກຳເນີດຂຶ້ນ, ຊຶ່ງການເຄື່ອນໄຫວ ດ້ານເສດຖະກິດ ຂອງກຸ່ມຊຸດສາຫະກຳດັ່ງກ່າວ ໄດ້ຂະຫຍາຍກວມໄປຮອດ ຂະແໜງຊຸດສາຫະກຳທັງໝົດ. ສະມາຄົມສະຫະບໍລິສັດ ຊຶ່ງໄດ້ເປັນອົງການທີ່ກຳເນີດຂຶ້ນດ້ວຍສະຫະພັນສະໝັກໃຈ ຂອງສຸະຫະບໍລິສັດລັດ ແລະວິສາຫະກິດນັ້ນ ໄດ້ກາຍເປັນອົງການ ທີ່ກວມລວມທຸກຂົງເຂດການຜະລິດ ແລະເສດຖະກິດຂອງຊຸດສາຫະກຳ ສະມາຄົມສະຫະບໍລິສັດ. ແຕ່ເຖິງຢ່າງໃດກໍຕາມ ບັນຫາການກໍ່ສ້າງເສດຖະກິດແຫ່ງຊາດ ໃຫ້ເປັນຊຸດ-ສາຫະກຳຂະໜາດໃຫຍ່ນັ້ນ, ບໍ່ອາດສາມາດແກ້ໄຂໄດ້ໃນໄລຍະເວລາອັນສັ້ນໆ ຖ້າຫາກເພິ່ນແນໃສ່ແຕ່ການນຳໃຊ້ວິທີຂອງສະມາຄົມສະຫະບໍລິສັດດັ່ງກ່າວເທົ່ານັ້ນ. ໃນການເຄື່ອນໄຫວເສດຖະກິດຂອງຕົນນັ້ນ ສະມາຄົມສະຫະບໍລິສັດ ໄດ້ອີງໃສ່ຜົນປະໂຫຍດຈາກວິທີສ້າງ ຕະຫລາດ ເພື່ອຈັດວາງການຜະລິດຊຸດສາຫະກຳ. ໃນຕົວແລ້ວ ລະບົບກົງຈັກດັ່ງກ່າວ ມັນບໍ່ຕອບສະໜອງກັບການປ່ຽນແປງ ແບບກະທັນຫັນທີ່ເກີດຂຶ້ນ ຕາມພາກສ່ວນເສດຖະກິດຕ່າງໆນັ້ນ. ນອກຈາກນັ້ນແລ້ວ ໃນວຽກງານຂອງສະມາຄົມສະຫະບໍລິສັດ ກໍໄດ້ມີຂໍ້ບົກຜ່ອງຫລາຍອັນ, ທີ່ເປັນສິ່ງຂັດຂວາງ ໃນການດຳເນີນການຊີ້ນຳ ອັນມີປະສິດທິ

ພາບ ຂອງຂະແໜງອຸດສາຫະກຳທັງໝົດນັ້ນ. ຂໍ້ບົກພ່ອງອັນທີໜຶ່ງ ແມ່ນວຽກງານໃນການວາງແຜນຂະຫຍາຍ ການຜະລິດທົ່ວຂະແໜງນັ້ນ ບໍ່ຂະຍັນຂັນແຂງ. ສະມາຄົມສະຫະບໍລິສັດບໍ່ໄດ້ມີການຮັບປະກັນການຊີ້ນຳ ຝ່າຍເຕັກນິກ ແກ່ອຸດສາຫະກຳແຕ່ຢ່າງໃດ, ຊຶ່ງມັນເປັນການກົງກັນຂ້າມ ກັບພາລະໜ້າທີ່ຂອງແຜນການຫ້າປີ ຊຸດທີໜຶ່ງ ໃນດ້ານການດັດສ້າງເຕັກນິກອຸດສາຫະກຳນັ້ນ. ຂໍ້ບົກພ່ອງອັນທີສອງ ມີຢູ່ບ່ອນວ່າ ສະມາຄົມສະຫະບໍລິສັດ ໄດ້ທົດສອບກັບຂໍ້ຂາດຕົກບົກພ່ອງອັນຊ້ຳເຮື້ອຈາກທຶນໝູນວຽນຂອງຕົນເອງ. ໝາຍຄວາມວ່າ, ຄວາມພະຍາມຍາມ ເພື່ອຈັດຕັ້ງກົມໃຫຍ່ທີ່ກຸ້ມຕົນເອງ ດ້ານເສດຖະກິດໂດຍອີງໃສ່ພື້ນຖານການເຕົ້າໂຮມກົມໃຫຍ່ຂອງສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຣ. ກັບສະມາຄົມສະຫະບໍລິສັດ, ຊຶ່ງໃນການເຄື່ອນໄຫວການເຕົ້າໂຮມທີ່ເພິ່ນໄດ້ເກືອກ່ອນເອົາວິທີປະຕິບັດ ວຽກງານອັນເກົ່າແກ່ ຂອງສະມາຄົມ-ສະຫະບໍລິສັດນັ້ນ, ມັນບໍ່ໄດ້ນຳຜົນມາໃຫ້ແຕ່ຢ່າງໃດເລີຍ. ສະນັ້ນ ເພິ່ນຈຶ່ງມີຄວາມຈຳເປັນ ຕ້ອງຈັດຕັ້ງອົງການຄຸ້ມຄອງ - ໃໝ່ຂຶ້ນ. ດັ່ງນັ້ນ ອົງການດັ່ງກ່າວ ຈຶ່ງກາຍເປັນອົງການ - ຂອງກຸ່ມຂະແໜງອຸດສາຫະກຳ, ຊຶ່ງເພິ່ນໄດ້ຖືເປັນຈຸດສູມພາລະໜ້າທີ່ບໍລິຫານ ແລະຈັດວາງການຄຸ້ມຄອງອຸດສາຫະກຳ.

ເຫດຜົນຕົ້ນຕໍ ຂອງການຈັດຕັ້ງກຸ່ມຂະແໜງ ອຸດສາຫະກຳຂຶ້ນນັ້ນ ແມ່ນຄວາມຈຳເປັນທາງດ້ານຄຸ້ມຄອງເຕັກນິກ ແລະເສດຖະກິດ ໃຫ້ຢູ່ໃນຂອບເຂດອັນໜຶ່ງອັນດຽວ, ການຍ້າຍຈຸດ

ສຳຄັນໃນການຈັດຕັ້ງການຜະລິດ ແລະການຄຸ້ມຄອງລົງສູ່ວິສາຫະກິດ ແລະ ລົດສາຂາລະຫວ່າງກາງລົງ, ການປັບປຸງການຮວມກຸ່ມວິສາຫະກິດ ໂດຍອີງໃສ່ຄວາມຊ່ຽວຊານດ້ານການຜະລິດ ແລະຈັດຕັ້ງເປັນຂະແໜງຊ່ຽວຊານ ດ້ານວິຊາການ ດັງກ່າວ, ຂະຫຍາຍບົດບາດການກຸ້ມຕົນເອງ ທາງດ້ານເສດຖະກິດໃນທຸກສາຂາກົງຈັກ ອຸດສາຫະກຳ, ຈັດຕັ້ງວຽກງານອຸດ-ສາຫະກຳ ເພື່ອຂະຫຍາຍພື້ນຖານເຕັກນິກ ຂອງເສດຖະກິດແຫ່ງຊາດ.

ພາລະໜ້າທີ່ຂອງກຸ່ມອຸດສາຫະກຳໃໝ່ນັ້ນມີຄື: ການວາງແຜນການຜະລິດ ຂອງຂະແໜງອຸດສາຫະກຳທັງໝົດ, ການວາງແຜນການ ແລະການຊີ້ນຳໃນວຽກງານການກໍ່ສ້າງ ອັນເປັນຕົ້ນຕໍ, ການຊີ້ນຳເຕັກນິກ, ການຈັດຕັ້ງພະລາທິ ການ ແລະການຊື້ຂາຍ, ຊີ້ນຳການເຄື່ອນໄຫວດ້ານການຄ້າ ແລະດ້ານການເງິນ, ການຈັດຕັ້ງແຮງງານ, ການກໍ່ສ້າງ ແລະການແຈກຢາຍພະນັກງານ. ໂຄງຮ່າງຂອງອົງການຊີ້ນຳ , ສາຍການພົວພັນພາຍໃນແຕ່ລະສາຂາຄຸ້ມຄອງໄດ້ແຕກຕ່າງກັນຕາມແຕ່ລັກສະນະຂອງຂະແໜງອຸດສາຫະກຳ ຂອງສະພາບ-ເສດຖະກິດ, ເຕັກນິກແລະການຈັດຕັ້ງຂອງມັນ, ຂອງການປະກອບຂອງວິສາຫະກິດ, ລະດັບຂອງການຊ່ຽວຊານດ້ານວິຊາ - ການ, ທີ່ຕັ້ງດ້ານພູມິສາດແລະອື່ນໆ. ເພິ່ນໄດ້ແບ່ງກຸ່ມອຸດສາຫະກຳອອກເປັນສາມຈຳພວກດັ່ງນີ້:

໑. ກຸ່ມອຸດສາຫະກຳ, ທີ່ເຕົ້າໂຮມວິສາຫະກິດແລະສະຫະ

ບໍລິສັດເຂົ້າກັນນັ້ນມີຄວາມໝາຍສະຫະພາບ. ກຸ່ມຊຸດສາຫະກຳ ດັ່ງກ່າວນີ້ ໄດ້ຊີ້ນຳການເຄື່ອນໄຫວທຸກຢ່າງ ຂອງວິສາຫະກິດ ທີ່ຢູ່ໃນການຄຸ້ມຄອງຂອງເຂົາ (ເຊັ່ນ: ການວາງແຜນການ ການຜະລິດ, ການວາງແຜນແລະການຊີ້ນຳການກໍ່ສ້າງ ອັນ ເປັນພື້ນຖານ, ການຊີ້ນຳດ້ານເຕັກນິກ, ການຈັດຕັ້ງພະລາທິ - ການແລະຊື້ຂາຍ, ການຊີ້ນຳວຽກງານການຄ້າ ແລະ ການ ເງິນ, ການຈັດຕັ້ງແຮງງານເປັນຕົ້ນ)

໔. ກຸ່ມຊຸດສາຫະກຳ, ທີ່ປະກອບດ້ວຍວິສາຫະກິດແລະສະ ຫະບໍລິສັດ ຂອງຊຸດສາຫະກຳສະຫະພາບ, ສາທາລະນະລັດ ແລະທ້ອງຖິ່ນ. ກ່ຽວກັບການພົວພັນຕໍ່ວິສາຫະກິດ ແລະສະຫະ ບໍລິສັດ ທີ່ມີ ລັກສະນະສະຫະພາບນັ້ນ ເຂົາຕ້ອງປະຕິບັດ ພາລະໜ້າທີ່ທັງໝົດທີ່ກ່າວໄວ້ນັ້ນ, ແຕ່ສ່ວນການພົວພັນ ຕໍ່ວິ ສາຫະກິດ ກັບສະຫະບໍລິສັດ ທີ່ມີລັກສະນະ ສາທາລະນະລັດ ແລະທ້ອງຖິ່ນນັ້ນ ເຂົາຕ້ອງປະຕິບັດໜ້າທີ່ ຂອງສະມາຄົມສະ ຫະບໍລິສັດ, ຊຶ່ງສົມທົບກັບໜ້າທີ່ດັ່ງກ່າວຍັງມີ ການວາງແຜນ ການການຜະລິດ, ການກໍ່ສ້າງອັນເປັນພື້ນຖານ, ການຊີ້ນຳລວມ ດ້ານເຕັກນິກ ໃນການກໍ່ສ້າງພະນັກງານ.

໕. ກຸ່ມທີ່ມີລັກສະນະຄ້າຍຄື ສະມາຄົມສະຫະບໍລິສັດ, ທີ່ ແມ່ນການເຕົ້າໂຮມຂອງວິສາຫະກິດ ແລະສະຫະບໍລິສັດທີ່ມີລັກ ສະນະ ສາທາລະນະລັດເຂົ້າກັນ. ໃນກໍລະນີດັ່ງກ່າວ ນອກ ຈາກພາລະໜ້າທີ່ຂອງສະມາຄົມສະຫະບໍລິສັດແລ້ວ ຍັງມີການ ວາງແຜນການການຜະລິດ ລະຫວ່າງສາທາລະນະລັດ ແລະ

ການກໍ່ສ້າງຕົ້ນຕໍ, ຊຶ່ງນໍາການດັດສ້າງເຕັກນິກ.

ເພື່ອໃຫ້ສອດຄ່ອງກັບຂະນິດຂອງກຸ່ມຊຸດສາຫະກໍານັ້ນ ເພິ່ນໄດ້ດໍາເນີນການປັບປຸງການເຕົ້າໂຮມ ຂອງວິສາຫະກິດ ແລະ ສະຫະບໍລິສັດ ທີ່ມີລັກສະນະສະຫະພາບ. ໝວດຊຸດສາຫະກໍາໝວດທີໜຶ່ງ ປະກອບດ້ວຍໂຮງງານຜະລິດກົນຈັກພິເສດ, ໂລຫະກໍາ ແລະຊຸດສາຫະກໍາເຊື້ອເພີງ; ສ່ວນໝວດທີສອງ ນັ້ນປະກອບດ້ວຍວິສາຫະກິດຜະລິດກົນຈັກທົ່ວໄປ; ໝວດທີສາມນັ້ນປະກອບດ້ວຍບັນດາຊຸດສາຫະກໍາເບົາ ການຜະລິດສະບຽງອາຫານ .

ໃນເວລາຈັດຕັ້ງກຸ່ມຊຸດສາຫະກໍາ ທີ່ມີລັກສະນະ ສາທາລະນະລັດຂຶ້ນນັ້ນ ລະບົບການພົວພັນທັງໝົດ ລະຫວ່າງກຸ່ມຊຸດສາຫະກໍາສະຫະພາບ ກັບສາທາລະນະລັດ ແລະທ້ອງຖິ່ນ ໄດ້ຖືກຮັກສາໄວ້ ເໝືອນເດີມເກືອບໝົດ. ແຕ່ວ່າແທນໜ້າທີ່ຂອງສະຫະບໍລິສັດເອກະລາດ ແລະວິສາຫະກິດນັ້ນ ເພິ່ນໄດ້ໃຊ້ສາຂາລະຫວ່າງກາງ ຂອງ ກຸ່ມ ຊຸດສາຫະກໍາ ສາທາລະນະລັດ ເປັນສາຍການພົວພັນ ກັບກຸ່ມຊຸດສາຫະກໍາສະຫະພາບ. ເພິ່ນໄດ້ມອບໜ້າທີ່ ຂອງຄະນະອໍານວຍການສະພາເສດຖະກິດ - ແຫ່ງຊາດ ຂອງສາທາລະນະລັດ ໃຫ້ແກ່ກຸ່ມດັ່ງກ່າວ.

ໃນເມື່ອອີງການຈັດຕັ້ງທາກເປັນຕົ້ນຂອງ ດ້ານເສດຖະກິດແລ້ວ ກຸ່ມຊຸດສາຫະກໍາ ກໍໄດ້ມີຄວາມດຸນດ່ຽງຂອງຕົນ, ຊຶ່ງໃນນັ້ນ ມີທັງຊັບສິນບັດທັງໝົດ ຂອງວິສາຫະກິດ ແລະສະຫະບໍລິສັດ ທີ່ມີຄວາມໝາຍສະຫະພາບ. ກໍາໄລຂອງກຸ່ມຊຸດສາຫະ-

ກຳນັ້ນ ແມ່ນສ່ວນແຕກຕ່າງລະຫວ່າງ ລາຄາພ້ອມເຍົາກັບລາຄາຕົ້ນທຶນຂອງການຜະລິດ, ທີ່ໃຫ້ພົນສະທ້ອນຕໍ່ຄວາມດູນດ່ຽງຂອງກຸ່ມຊຸດສາຫະກຳດັ່ງກ່າວ. ລະບົບກົງຈັກການຈັດຕັ້ງຂອງກຳໄລດັ່ງກ່າວມີດັ່ງນີ້: ເບື້ອງຕົ້ນວິສາຫະກິດແລະສະຫະບໍລິສັດໄດ້ໂອນກຳໄລທັງໝົດ ພາຍໃນປີນັ້ນເຂົ້າໃນບັນຊີຂອງກຸ່ມຊຸດສາຫະກຳ; ວິສາຫະກິດ ກໍໄດ້ໂອນກຳໄລເພີ່ມເຕີມທີ່ໄດ້ກະໄວ້ໃນແຜນການ ເຂົ້າໃນບັນຊີຂອງກຸ່ມຊຸດສາຫະກຳອີກ, ສ່ວນກຳໄລເພີ່ມເຕີມອື່ນໆນັ້ນ ກໍໄດ້ໂອນເຂົ້າບັນຊີຂອງກຸ່ມຊຸດສາຫະ-ກຳ ເຊັ່ນດຽວກັນ ໂດຍພົວພັນກັບການສຳເລັດ ການປະຕິບັດແຜນການ. ວຽກງານຂອງວິສາຫະກິດ ທີ່ສົມທົບຢູ່ໃນກຸ່ມຊຸດ-ສາຫະກຳນັ້ນ ໄດ້ຄິດໄລ່ໂດຍພື້ນຖານ ການແຕກຕ່າງ ລະຫວ່າງລາຄາຕົ້ນທຶນຂອງແຜນການ ແລະຂອງການຜະລິດຕົວ-ຈິງ. ວິສາຫະກິດບໍ່ໄດ້ມີບັນຊີດອກເບ້ຍແລະການຂາດທຶນເປັນຂອງຕົນເອງແຕ່ຢ່າງໃດ. ທັງນີ້ມັນໄດ້ສະແດງເຖິງການລວມສູນ ໜ້າທີ່ການເງິນ ໃນລະດັບສູງຢູ່ໃນຂົງເຂດ ຂອງກຸ່ມຊຸດສາຫະກຳ.

ສ່ວນສະຫະບໍລິສັດ ທີ່ມີຄວາມໝາຍສາຫາລະນະລັດ ແລະທ້ອງຖິ່ນນັ້ນ ກຸ່ມຊຸດສາຫະກຳ ໄດ້ອະນຸມັດບັນຊີກຳໄລ ແລະຂາດທຶນພິເສດໃຫ້ເຂົາເຈົ້າ ພ້ອມດ້ວຍການແບ່ງປັນ ອັນທີ່ເໝາະສົມ ໃຫ້ແກ່ບັນດາສະຫະບໍລິສັດ ແລະວິສາຫະກິດ ດັ່ງກ່າວ .

ເພື່ອຈັດຕັ້ງຄຸ້ມຄອງແລະຈັດວາງການຜະລິດ ຢູ່ໃນລະບົບ-

ຂອງກຸ່ມຊຸດສາຫະກຳນັ້ນ ເພິ່ນໄດ້ຈັດຕັ້ງອົງການປະຕິບັດງານ ແລະບໍລິຫານງານຊ່ຽວຊານຂຶ້ນ. ອົງການປະຕິບັດງານ ແລະ ອົງການຊ່ຽວຊານ ໄດ້ດຳເນີນໜ້າທີ່ເປັນອະນຸພະແນກກຸ້ມຕົນ ຂອງ ດ້ານເສດຖະກິດ. ສ່ວນອົງການປະຕິບັດງານນັ້ນໄດ້ແກ່ ກົມຄຸ້ມຄອງ ດ້ານພະລາທິການ ແລະຊື້ຂາຍພະລິດຕະພັນເຄື່ອງ ສຳເລັດຮູບ ແລະການກໍ່ສ້າງອັນເປັນຕົ້ນຕໍ, ອົງການຊ່ຽວ ຊານ ໄດ້ດຳເນີນໃນສ່ວນໃຫຍ່ ໜ້າທີ່ພະລາທິການ ແລະ ຊື້ ຂາຍ ແລະໜ້າທີ່ການຜະລິດແຕ່ພຽງສ່ວນດຽວ (ເຊັ່ນ ການ ກໍ່ສ້າງອັນເປັນຕົ້ນຕໍ). ສ່ວນໜ້າທີ່ຂອງອົງການບໍລິຫານນັ້ນ ໄດ້ແກ່ກົມຄຸ້ມຄອງດ້ານແຜນການເສດຖະກິດແລະລາຍງານ . ອົງການບໍລິຫານ ໄດ້ດຳເນີນໜ້າທີ່ວາງແຜນ ເສດຖະກິດ , ການເຮັດການລາຍງານ ແລະກວດກາການຜະລິດ ໃນທຸກກຸ່ມ ຊຸດສາຫະກຳ, ປະຕິບັດວຽກງານຄົ້ນຄ້ວາວິທະຍາສາດ ແລະ ຊີ້ນຳດ້ານເຕັກນິກ.

ໜ້າທີ່ຕົ້ນຕໍອັນໜຶ່ງ ຂອງກຸ່ມຊຸດສາຫະກຳແມ່ນການຈັດຕັ້ງ ຊີ້ນຳດ້ານເຕັກນິກ ແກ່ບັນດາສະຫະບໍລິສັດ ແລະ ວິສາຫະກິດ ຕ່າງໆ ທີ່ໄດ້ໂຮມເຂົ້າກັນ. ສະຖາບັນຄົ້ນຄ້ວາຂະແໜງວິທະ ຍາສາດ ກໍ່ຂຶ້ນໂດຍກົງກັບກຸ່ມຊຸດສາຫະກຳດັ່ງກ່າວ. ໃນຕົວຈິງ ກຸ່ມຊຸດສາຫະກຳ ທີ່ໄດ້ຈັດຕັ້ງຂຶ້ນນັ້ນ ໄດ້ດຳເນີນການຄຸ້ມຄອງ ຂະແໜງຊຸດສາຫະກຳທັງໝົດ.

ໃນເບື້ອງຕົ້ນ ແມ່ນຄະນະກຳມະການບໍລິຫານເປັນຜູ້ບັນຊາ ກຸ່ມຊຸດສາຫະກຳ, ແລະຫລັງຈາກນັ້ນ ຮູບການບໍລິຫານ ເປັນ

ຄະນະກຳໄດ້ມີການປ່ຽນແປງໃຫ້ເປັນແບບຫົວໜ້າຜູ້ດຽວ ເປັນຜູ້ບັນຊາ. ການຊຸນຳກຸ່ມຊຸດສາຫະກຳຕ່າງໆ ເພິ່ນກໍໄດ້ມອບ-ໃຫ້ແກ່ຜູ້ອຳນວຍການ.

ກຸ່ມຊຸດສາຫະກຳໄດ້ຈັດຕັ້ງຂຶ້ນ ໃນຕົ້ນປີ ໑໙໓໐ ໂດຍອີງໃສ່ມະຕິຂອງສູນກາງ ພັກກອມມູນິດ ທົ່ວສະຫະພາບ(ໂບນເຊວິກ) ສະບັບລົງວັນທີ ໕ ເດືອນທັນວາ ປີ ໑໙໒໙.ພ້ອມດຽວກັນນັ້ນ ເພິ່ນກໍໄດ້ຍຸບກົມໃຫຍ່ ພ້ອມດ້ວຍຄະນະກຳມະການ ທີ່ກ່ຽວຂ້ອງກັບມັນ ແລະສະມາຄົມສະຫະບໍລິສັດ ຈຳນວນ ໑໔ ສະມາຄົມ. ໂດຍອີງໃສ່ພື້ນຖານຂອງກົມໃຫຍ່ ແລະສະມາຄົມສະຫະບໍລິສັດນັ້ນ ເພິ່ນໄດ້ຈັດຕັ້ງກຸ່ມຂະແໜງຊຸດສາຫະກຳທົ່ວສະຫະພາບ ຈຳນວນ ໓໓ ກຸ່ມຂຶ້ນ. ເພິ່ນກໍຍັງໄດ້ຈັດຕັ້ງ ກຸ່ມຊຸດສາຫະກຳ ສາທາລະນະລັດແຂວງຂຶ້ນອີກ, ຊຶ່ງໃນນັ້ນມີສະຫະບໍລິສັດ ແລະວິສາຫະກິດຊຸດສາຫະກຳ ສາທາລະນະລັດ - ແລະທ້ອງຖິ່ນ ເຂົ້າຮ່ວມດ້ວຍ. ຢູ່ສະຫະພັນສາທາລະນະລັດ-ສັງຄົມນິຍົມລັດເຊຍ ເພິ່ນໄດ້ຈັດຕັ້ງກຸ່ມຊຸດສາຫະກຳທີ່ມີລັກສະນະຄ້າຍຄືກັນນັ້ນ ຂຶ້ນຈຳນວນ ໑໑ ແຫ່ງ. ບາງຄັ້ງໃນ ຂະແໜງຊຸດສາຫະກຳ ອັນໜຶ່ງອັນດຽວນັ້ນ ເພິ່ນໄດ້ຈັດຕັ້ງໃຫ້-ເປັນກຸ່ມຊຸດສາຫະກຳສະຫະພາບ, ສາທາລະນະລັດແລະທ້ອງຖິ່ນ. ການຈັດຕັ້ງກຸ່ມຊຸດສາຫະກຳດັ່ງກ່າວ ບໍ່ໄດ້ເປັນສິ່ງກີດ-ຂວາງ ໃຫ້ແກ່ການດຳລົງຄົງຕົວ ຂອງສ່ວນແບ່ງຂອງກຸ່ມຊຸດ-ສາຫະກຳ ແບບສະຫະພາບ, ສາທາລະນະລັດ ແລະທ້ອງຖິ່ນ ແຕ່ຢ່າງໃດ

ບັນດາວິສາຫະກິດຊຸດສາຫະກຳ ສາທາລະນະລັດແລະທ້ອງຖິ່ນ, ທີ່ເຂົ້າຮ່ວມໃນກຸ່ມຊຸດສາຫະກຳ ທົ່ວສະຫະພາບນັ້ນ,ຍັງຮັກສາຄວາມຂຶ້ນຄອງ ຈາກອົງການຂອງສາທາລະນະລັດແລະທ້ອງຖິ່ນໄວ້. ການລົງທຶນຂອງວິສາຫະກິດ ຊຸດສາຫະກຳດັ່ງກ່າວ ໄດ້ຜ່ານງົບປະມານຂອງສາທາລະນະລັດ ຫລືທ້ອງຖິ່ນ. ກຸ່ມຊຸດສາຫະກຳທົ່ວສະຫະພາບ ໄດ້ມີການພົວພັນໂດຍກົງກັບວິສາຫະກິດ ສາທາລະນະລັດແລະທ້ອງຖິ່ນ ພຽງແຕ່ບັນຫາບໍລິຫານເສດຖະກິດ (ເຊັ່ນ: ພະລາທິການ, ຊື້ຂາຍ, ການຊີ້ນຳດ້ານເຕັກນິກ) ເທົ່ານັ້ນ. ເຖິງແມ່ນວ່າ ຢູ່ບ່ອນໃດ ບ່ອນໜຶ່ງ ຫາກໄດ້ຈັດຕັ້ງກຸ່ມຊຸດສາຫະກຳ ສາທາລະນະລັດ ຂຶ້ນກໍຕາມ ການຊື້ຂາຍ, ການຈັດຫາວັດຖຸດິບ ແລະ ການຂາຍຜະລິດຕະພັນນັ້ນ ແມ່ນໜ້າທີ່ຂອງກຸ່ມຊຸດສາຫະກຳ ສະຫະພາບ. ສ່ວນກຸ່ມຊຸດສາຫະກຳ ສາທາລະນະລັດ ມີສິດປະຕິບັດການພະລາທິການ ແລະການຊື້ຂາຍ ໄດ້ພຽງຢູ່ໃນຂອບເຂດ ທີ່ສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ. ໄດ້ກຳນົດໄວ້ເທົ່ານັ້ນ.

ກຸ່ມຊຸດສາຫະກຳ ໄດ້ຂຶ້ນກັບສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ. ທີ່ເປັນຜູ້ກຳນົດໜ້າທີ່ທາງດ້ານການວາງແຜນ, ໃຫ້ຄຳແນະນຳກ່ຽວກັບການວາງລາຄາ,ກວດກາການປະຕິບັດແຜນການ, ດຳເນີນການກວດກາ ແລະການສຳຫລວດ, ຮັບຮອງເອົາກົດລະບຽບການຈັດຕັ້ງ ແລະຄັດເລືອກເອົາພະນັກງານບໍລິຫານ.

ໃນໄລຍະນັ້ນ ສະຫະບໍລິສັດ ຍັງເປັນອົງການຊີ້ນຳວິສາຫະກິດຢູ່, ເອົາຮັບຜິດຊອບໃນການຈັດຕັ້ງການເຄື່ອນໄຫວ ດ້ານການຜະລິດ ແລະເສດຖະກິດ ຂອງວິສາຫະກິດດັ່ງກ່າວ. ແຕ່ເຖິງຢ່າງໃດສິດຂອງສະຫະບໍລິສັດ ໄດ້ຖືກຈຳກັດລົງ. ໜ້າທີ່ບາງຢ່າງຂອງສະຫະບໍລິສັດ ໄດ້ເອົາມອບໃຫ້ກຸ່ມຂະແໜງອຸດສາຫະກຳ ແລະໜ້າທີ່ອີກຈຳນວນໜຶ່ງ ໄດ້ມອບໃຫ້ແກ່ວິສາຫະກິດກຸ້ມຕົນເອງ ດ້ານເສດຖະກິດ, ສິດດ້ານການຈັດຕັ້ງ - ການຊື້ຂາຍແລະພະລາທິການ ຂອງສະຫະບໍລິສັດນັ້ນ ກໍໄດ້ຖືກລົບລ້າງ. ສະຫລຸບແລ້ວເນື່ອງຈາກວ່າ ມີການຈັດຕັ້ງກຸ່ມ ອຸດສາຫະກຳຂຶ້ນນັ້ນ ໂຄງຮ່າງສາຍພົວພັນຂອງການຄຸ້ມຄອງ ອຸດສາຫະກຳນັ້ນ ປະກອບດ້ວຍສາມຫາສີ່ຂັ້ນດັ່ງນີ້ ສະພາເສດຖະກິດແຫ່ງຊາດສູງສຸດ-ກຸ່ມອຸດສາຫະກຳ-ສະຫະບໍລິສັດ-ວິສາຫະກິດ . ແຕ່ໃນຂັ້ນພື້ນຖານແລ້ວ ໂຄງຮ່າງດັ່ງກ່າວປະກອບດ້ວຍສາມຂັ້ນເຊັ່ນ ສະພາເສດຖະກິດແຫ່ງຊາດສູງສຸດ- ກຸ່ມອຸດສາຫະກຳ-ວິສາຫະກິດ .

ໜ້າທີ່ຕົ້ນຕໍອັນໜຶ່ງ ຂອງກຸ່ມອຸດສາຫະກຳນັ້ນແມ່ນການຈັດຕັ້ງການຜະລິດ ໃຫ້ເປັນແຜນການ. ການຊີ້ນຳໃນການວາງ-ແຜນອຸດສາຫະກຳນັ້ນ ແມ່ນຄະນະກຳມາທິການ ແຜນຜັງແຫ່ງຊາດ ເປັນຜູ້ວາງອອກ. ແລ້ວຕໍ່ຈາກນັ້ນ ສະພາເສດຖະກິດ-ແຫ່ງຊາດສູງສຸດ ກໍໄດ້ວາງແຜນການຫຍໍ້ດ້ານອຸດສາຫະກຳໃຫ້ເໝາະກັບສະພາບຕົວຈິງອອກ. ໂດຍອີງໃສ່ພື້ນຖານ ຂອງການຊີ້ນຳແຜນການລວມ ຂອງສະພາເສດຖະກິດແຫ່ງຊາດສູງ

ສຸດນັ້ນ ກຸ່ມຊຸດສາຫະກຳ ໄດ້ມາຄົ້ນຄ້ວາການຊີ້ນຳທີ່ສອດຄ່ອງ ໃຫ້ແກ່ສະຫະບໍລິສັດ ຫລືແກ່ວິສາຫະກິດເອກະລາດ ເພື່ອປະກອບແຜນເສດຖະກິດ ປະຈຳປີຂອງຕົນອອກ. ແລ້ວຜູ້ສຸດທ້າຍນີ້ ໂດຍອີງໃສ່ການຊີ້ນຳດັ່ງກ່າວ ແລະອີງໃສ່ຄວາມອາດສາມາດ ຂອງຕົນ ວາງຕົວເລກຕົວຈິງອອກ ແລ້ວສົ່ງຕົວເລກດັ່ງກ່າວ-ໃຫ້ແກ່ກຸ່ມຊຸດສາຫະກຳ ເພື່ອນຳປະຕິບັດ. ຕາມຕົວເລກດັ່ງ-ກ່າວ ກຸ່ມຊຸດສາຫະກຳໄດ້ປະກອບຕົວເລກຮັບປະກັນຫຍໍ້ອອກ, ຊຶ່ງໃນການຄົ້ນຄ້ວາຕົວເລກຮັບປະກັນດັ່ງກ່າວກຸ່ມຊຸດສາຫະກຳ ໄດ້ຖືກຊີ້ນຳ ໂດຍແຜນການລວມຂອງລັດ ແລະໂດຍອີງໃສ່ພົນປະໂຫຍດຂອງການພັດທະນາ ຂະແໜງຊຸດສາຫະກຳຂອງຕົນ.

ຫລັງຈາກສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ. ໄດ້ຮັບຮອງເອົາຕົວເລກຮັບປະກັນແລ້ວ, ກຸ່ມຊຸດສາຫະກຳກໍໄດ້ແຈ້ງໃຫ້ແກ່ສະຫະບໍລິສັດແລະວິສາຫະກິດກ່ຽວກັບໜ້າທີ່ການຜະລິດທີ່ເປັນຮູບແຜນການການຜະລິດແລະການເງິນ , ຊຶ່ງອີງໃສ່ພື້ນຖານຂອງແຜນການດັ່ງກ່າວ ເພິ່ນໄດ້ຈັດຕັ້ງການເຄື່ອນໄຫວເສດຖະກິດທັງໝົດ ຂອງວິສາຫະກິດ (ສະຫະບໍລິສັດ). ໃນເວລາທີ່ເພິ່ນຮ່າງແຜນການການຜະລິດ ແລະການເງິນໃຫ້ແກ່ວິສາຫະກິດນັ້ນ ເພິ່ນໄດ້ກຳນົດໜ້າທີ່ການຜະລິດ, ຫລັກການຈ່າຍວັດຖຸດິບ ທັງເປັນຮູບວັດຖຸ ແລະທັງເປັນ ຮູບເງິນຕາ, ວັດຖຸປະກອນ, ຄວາມຕ້ອງການທາງດ້ານແຮງ-ງານ, ລາຄາຕົ້ນທຶນທີ່ຄາດຄະເນໄວ້ ແລະອື່ນໆອີກດ້ວຍ. ແຜນການການຜະລິດແລະການເງິນ ພ້ອມກັບຕົວເລກອັນຈຳ ເປັນ

ອື່ນໆນັ້ນ ເພິ່ນໄດ້ພິຈາລະນາກັນ ຢູ່ໃນຄະນະບໍລິຫານຂອງກຸ່ມຊຸດສາຫະກໍາ ໂດຍສົມທົບກັບບັນດາຜູ້ອໍານວຍການວິສາຫະກິດ ແລະແຜນການການຜະລິດແລະການເງິນດັ່ງກ່າວ ແລ້ວໄດ້ຮັບຮອງເອົາ ໂດຍຄະນະບໍລິຫານ ຂອງກຸ່ມວິສາຫະກິດດັ່ງກ່າວ. ລາຄາຕົ້ນທຶນຄາດຄະເນ ທີ່ຮັບຮູ້ໂດຍກຸ່ມຊຸດສາຫະກໍານັ້ນແມ່ນລາຄາຜະລິດຕະພັນ ຊຶ່ງວິສາຫະກິດໄດ້ຂາຍໃຫ້ແກ່ ຄະນະບໍລິຫານ ຂອງກຸ່ມຊຸດສາຫະກໍາ ແລະອົງການຈັດຕັ້ງອື່ນໆນັ້ນ. ວິສາຫະກິດ ໄດ້ຮັບໃບສັ່ງຈ່ອງຈາກກຸ່ມຊຸດສາຫະກໍາ,ຊຶ່ງໃນໃບສັ່ງດັ່ງກ່າວນັ້ນ ນອກຈາກເພິ່ນໄດ້ວາງລາຄາໄວ້ແລ້ວກໍຍັງໄດ້ກໍານົດບໍລິມາດ, ກໍານົດເວລາ ແລະເງື່ອນໄຂຂອງການມອບຜະລິດຕະພັນສໍາເລັດຮູບ, ເງື່ອນໄຂການກໍ່ສ້າງອັນໃໝ່ . ການສ້ອມແປງຂະໜາດນ້ອຍ, ຂະໜາດກາງແລະປະຈໍາວັນນັ້ນ ໄດ້ກໍານົດໄວ້ໃນບໍລິມາດ ການຮັບສ້ອມແປງກວມລວມນັ້ນ. ແຜນການຂະຫຍາຍການຜະລິດ ໃນອະນາຄົດ, ແຜນການດັດສ້າງ ແລະການຈັດການຜະລິດ ໃຫ້ແທດເໝາະນັ້ນ ໄດ້ວາງອອກ ຢູ່ໃນຫລັກການຊີ້ນໍາລວມ ຂອງກຸ່ມຊຸດສາຫະກໍາ.

ແຕ່ເຖິງຢ່າງໃດກໍດີ ໃນພາກປະຕິບັດຕົວຈິງ ການເຮັດໃຫ້ເປັນແຜນການນັ້ນ ໄດ້ຮັບຄວາມຫຍຸ້ງຍາກ:ການວາງແຜນດັ່ງກ່າວ ໄດ້ຮັບຜົນສະທ້ອນຈາກລະດັບອັນຕໍ່າ ຂອງຫຼັກການວາງແຜນ, ການຂາດພະນັກງານ ເສດຖະກິດອັນຈໍາເປັນ ທີ່ຊໍານິຊໍານານ ແລະລະບົບບໍລິຫານ ການຈັດຕັ້ງລຸ້ມຄອງນັ້ນ.ໜ່ວຍວາງແຜນຂອງກຸ່ມຊຸດສາຫະກໍາ ພ້ອມກັບພະແນກລຸ້ມຄອງອື່ນໆ

ນັ້ນໄດ້ປະກອບຕົວເລກເປົ້າໝາຍແລະແຜນການອັນເທົ່ານັ້ນ. ສ່ວນວຽກງານປະຈຳວັນ ກ່ຽວກັບແຜນການນັ້ນບໍ່ໄດ້ສອດຄ່ອງກັນ. ການຄາດເຄື່ອນຈາກແຜນການ, ທີ່ເກີດຈາກການສົ່ງ-ຈ່ອງ ຂອງອົງການອື່ນໆນັ້ນ ໄດ້ຮູ້ຈັກຢູ່ໃນກົມວາງແຜນເສດ-ຖະກິດ ຂອງກຸ່ມຊຸດສາຫະກຳ ແຕ່ນຳເອົາບົດລາຍງານຂອງວິສາຫະກິດ ຫລືນຳເອົາເອກະສານສະຖິຕິເທົ່ານັ້ນ. ໃນເງື່ອນໄຂດັ່ງກ່າວ ພະແນກວາງແຜນເສດຖະກິດ ຂອງກຸ່ມຊຸດສາຫະກຳ ບໍ່ສາມາດວາງມາດຕະການ ແກ້ໄຂໃຫ້ທັນເວລາ ຂອງແຜນການວິສາຫະກິດ ແລະບໍ່ສາມາດໃຊ້ອິດທິພົນຂອງຕົນເຂົ້າໃນການຜະລິດໄດ້. ສະພາບການທັງໝົດເຫລົ່ານີ້ ໄດ້ນຳຄວາມຫຍຸ້ງຍາກ ມາສູ່ການຈັດຕັ້ງວຽກງານວິສາຫະກິດຊຸດສາຫະກຳ ແລະເປັນສິ່ງກີດຂວາງຕໍ່ການນຳໃຊ້ຫລັກການ ກຸ້ມຕົນເອງ ດ້ານເສດຖະກິດດັ່ງກ່າວ.

ໃນມະຕິຂອງກອງປະຊຸມ ກ່ຽວກັບການວາງແຜນການການຜະລິດຊຸດສາຫະກຳວິສະວະກຳໂລຫະແລະເອເລັກຕະໂລນິກ-ທົ່ວສະຫະພາບ ລົງທີ I ນັ້ນ ໄດ້ບົ່ງໄວ້ວ່າ "ການຈັດຕັ້ງແລະການວາງແຜນການການຜະລິດຈະຕ້ອງກາຍເປັນພາກສ່ວນນຳໜ້າ ຂອງການຄຸ້ມຄອງ". ໃນມະຕິຂອງຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ. ສະບັບລົງວັນທີ ໑໘ ສິງຫາ ປີ ໑໙໖໑ ກ່ຽວກັບບັນຫາການວາງ - ແຜນການລະຫວ່າງແລະພາຍໃນໂຮງງານນັ້ນເພິ່ນເຫັນວ່າມັນມີການບົກພ່ອງ ສະເພາະສຳຫລັບຊຸດສາຫະກຳທັງໝົດນັ້ນ .

ຕົວຢ່າງວ່າ: ການຄົ້ນຄ້ວາກ່ຽວກັບລະບົບເຕັກໂນໂລຢີ ບໍ່ໄດ້ຖືກເອົາໃຈໃສ່ ຢ່າງເລິກເຊິ່ງ. ເພິ່ນບໍ່ໄດ້ວາງຕົວເລກຄາດຫມາຍ ກ່ຽວກັບການຜະລິດ ແລະການຈຳຫນ່າຍ ວັດຖຸປະ-ກອນອອກ, ອຸປະກອນທີ່ສົ່ງອອກກໍບໍ່ໄດ້ມີຄຳແນະນຳ ອັນຈຳເປັນສຳຫລັບການບັນຊາ ແລະບົວລະບັດສ້ອມແປງ ຕິດຄັດໄປພ້ອມ, ແຜນການການຜະລິດແລະການເງິນບໍ່ສອດຄ່ອງກັບຫລັກຖານທາງດ້ານເຕັກນິກ, ຕົວເລກການຜະລິດ ຂອງການທົດສອບແລະສະຖິຕິ ທີ່ເຊື່ອຖືບໍ່ໄດ້ນັ້ນ ກໍໄດ້ນຳມາໃຊ້ໂດຍບໍ່ເຫັນຜົນປະໂຫຍດຂອງການວິໄຈຫລັກການເຕັກນິກອັນລະອຽດນັ້ນ; ການຈັດຕັ້ງຄຸ້ມຄອງລະບົບສາງ ແລະສາຂາໂຮງງານສຳລອງອ່ອນແອ, ຂາດໂຄງຮ່າງການຈັດຕັ້ງຄຸ້ມຄອງສະຫະບໍລິສັດອັນຈະແຈ້ງ.

ໃນໄລຍະປະຕິບັດແຜນການຫ້າປີຊຸດທີຫນຶ່ງນັ້ນເພິ່ນໄດ້ເອົາໃຈໃສ່ເປັນພິເສດຕໍ່ບັນຫາຈັດຕັ້ງການຜະລິດ ໃຫ້ເຫມາະສົມ. ມາດຕະການດັ່ງກ່າວນີ້ໄດ້ວາງອອກ ແລະມີລັກສະນະສະຫລັບຊັບຊ້ອນ ເຊັ່ນຄື: ຫລັກການຂອງການວາງແຜນກໍໄດ້ປັບປຸງ, ລະບົບການຄິດໄລ່ໄດ້ແກ້ໄຂໃຫ້ດີຂຶ້ນ, ວິທີຄິດໄລ່ ແລະ ການລາຍງານກໍມີການປັບປຸງ ແລະອື່ນໆອີກ.

ເນື່ອງຈາກມີການຈັດຕັ້ງ ກຸ່ມຊຸດສາຫະກຳຂຶ້ນນັ້ນໄດ້ມີການປ່ຽນແປງຮູບການ ແລະວິທີການພະລາທິການ ແລະ ການຊີ້-ຂາຍ. ໃນໂຄງຮ່າງກຸ່ມຊຸດສາຫະກຳ ເພິ່ນໄດ້ຈັດຕັ້ງກົມຊ່ຽວຊານວຽກງານກຸ້ມຕົນເອງ ດ້ານເສດຖະກິດ ກ່ຽວກັບການພະ

ລາທິການແລະຊື້ຂາຍ, ຊຶ່ງກົມຈຸ່ຽວຊານດັ່ງກ່າວ ມີໜ້າທີ່ກໍາ ກັບການວາງແຜນ ແລະການຈັດຕັ້ງວຽກງານບໍລິຫານດ້ານພະ ລາທິການແລະຊື້ຂາຍ ຂອງຂະແໜງຊຸດສາຫະກໍາ ທັງໝົດ. ການພະລາທິການບັນດາວິສາຫະກິດ ໄດ້ດໍາເນີນໄປ ບົນພື້ນ ຖານ ຂອງລາຍການທີ່ອະນຸມັດໄວ້ນັ້ນ, ຊຶ່ງຕາມລາຍການດັ່ງ ກ່າວ ວິສາຫະກິດໄດ້ຮັບວັດຖຸປະກອນ ອັນຈໍາເປັນ ບໍ່ຕໍ່າກວ່າ ໘໐%. ສ່ວນເຫລືອນັ້ນ ວິສາຫະກິດມີສິດຊື້ຂາຍເອົາເອງ, ແຕ່ວ່າ ການຊື້ຂາຍເອົາເອງນັ້ນ ຈະຕ້ອງຢູ່ພາຍໃຕ້ການ- ກວດກາ ຂອງຄະນະບໍລິຫານ ຂອງກຸ່ມຊຸດສາຫະກໍາ

ກົມພະລາທິການແລະຊື້ຂາຍ ຮັບໜັງສືສັ່ງຈອງແລ້ວ ແຈກ ຢາຍໜັງສືສັ່ງຈອງດັ່ງກ່າວ ໃຫ້ວິສາຫະກິດຕ່າງໆ, ພ້ອມທັງ ກໍານົດປະເພດຂອງຜະລິດຕະພັນ ແລະວາງລະບຽບການ ຮັບ ເອົາຜະລິດຕະພັນດັ່ງກ່າວ. ລະບົບສັນຍາແມ່ກໍໄດ້ນໍາມາໃຊ້. ເພິ່ນໄດ້ມອບໜ້າທີ່ກ່ຽວກັບການຈັດຕັ້ງລະບົບສາງ ຂອງຂະ ແໜງຊຸດສາຫະກໍາທັງໝົດ ໃຫ້ກົມພະລາທິການແລະຊື້ຂາຍ, ຊຶ່ງໃນລະບົບສາງດັ່ງກ່າວ ມັນກວມລວມທັງສາງຂອງວິສາຫະ ກິດ ແລະຂອງບັນດາໂຮງງານເອກະລາດອີກດ້ວຍ. ກົມພະລາ ທິການແລະຊື້ຂາຍດັ່ງກ່າວ ໄດ້ຈັດຫາແລະຊື້ວັດຖຸປະກອນ ອັນ ເປັນພື້ນຖານ, ບໍລິຫານການພະລາທິການເຕັກນິກ, ລະບົບ ສາງ, ວາງມາດຕະຖານການເກັບມ້ຽນວັດຖຸດິບແລະການຈ່າຍ ວັດຖຸປະກອນ ຕ່າງໆ.

ໃນເດືອນໄຂທີ່ມີການຊຸມຄອງ ຊຸດສາຫະກໍາແບບລວມສູນ-

ນັ້ນ ການຈັດວາງແບບລວມສູນກິດຈະການພະລາທິການໄດ້ອຳນວຍທ່າດີຫລາຍຢ່າງ ແກ່ສະຫະບໍລິສັດແລະວິສາຫະກິດຕ່າງໆ. ໃນຂົງເຂດຂະແໜງອຸດສາຫະກຳທັງໝົດນັ້ນເພິ່ນກໍໄດ້ມີການປະຢັດລາຍຈ່າຍຄ່າຈໍລະຈອນ ແຈກຢາຍ, ເພີ່ມຮອບຂອງທຶນໝູນວຽນໃຫ້ຫລາຍຂຶ້ນ. ແຕ່ຢ່າງໃດກໍຕາມ ເຖິງແມ່ນວ່າທ່າດີ ຂອງການພະລາທິການແລະການຊື້ຂາຍ ແບບລວມສູນ ຈະປາກົດຂຶ້ນ ຢ່າງຈັດເຈນເທົ່າໃດກໍຕາມ, ຫລັງຈາກການນຳ-ໃຊ້ ລະບົບລວມສູນດັ່ງກ່າວ ເພິ່ນໄດ້ເຫັນມີຂໍ້ບົກພ່ອງຫຼາຍອັນເກີດຂຶ້ນ, ຊຶ່ງໃນກອງປະຊຸມຂອງບັນດາລັດຖະການ ວິສາຫະກິດ ສັງຄົມນິຍົມ ທົ່ວສະຫະພາບ ຄັ້ງທີ I ນັ້ນ ເພິ່ນໄດ້ມີການໂຈມຕີໜັກ ຕໍ່ການນຳໃຊ້ລະບົບພະລາທິການດັ່ງກ່າວ. ໃນການນຳໃຊ້ລະບົບໃໝ່ນີ້ ວິສາຫະກິດ ບໍ່ໄດ້ດຳເນີນກິດຈະ - ການ ດ້ານພະລາທິການປະຈຳວັນທັງໝົດດ້ວຍຕົນເອງ ແຕ່ແມ່ນບັນດາຂະແໜງ, ໜ່ວຍພະລາທິການປະຈຳເມືອງແລະພະແນກພະລາທິການອື່ນໆ ເປັນຜູ້ດຳເນີນວຽກງານດັ່ງກ່າວ. ສະພາບດັ່ງກ່າວ ມັນໄດ້ສ້າງຄວາມຫຍຸ້ງຍາກແອບແຝງໃຫ້ແກ່ກົງຈັກ ຂອງກຸ່ມອຸດສາຫະກຳ ໃນການຈັດຕັ້ງພະລາທິການ - ຕາມລາຍບັນຊີ, ການຈັດປະເພດຜະລິດຕະພັນແລະນອກຈາກນັ້ນ ມັນຍັງໄດ້ຕັດວິສາຫະກິດ ອອກຈາກການຈັດຕັ້ງ ປະຕິບັດວຽກງານດັ່ງກ່າວອີກດ້ວຍ.

ໜັງສືພິມ "ຊາ ອິນດູຕີອາລີຊາຊີຢູ" ("ເພື່ອອຸດສາຫະ-ກຳ") ສະບັບລົງວັນທີ ໓໐ ເດືອນມັງກອນ ປີ ໑໙໓໑ ນັ້ນໄດ້

ພິມບົດຄວາມ "ພວກເຮົາຈະປັລປຸງການພະລາທິການຊຸດສາຫະກຳກັນໄດ້ແນວໃດ" ອອກໃນໜ້າໜັງສືພິມ ຊຶ່ງໃນບົດຄວາມດັ່ງກ່າວ ເພິ່ນໄດ້ວິໃຈກ່ຽວກັບເຫດຜົນຂອງຄວາມຫຍຸ້ງຍາກ, ທີ່ເກີດຂຶ້ນຢູ່ໃນການຈັດຕັ້ງພະລາທິການນັ້ນ. ຕົວຢ່າງວ່າ ໃນວິສາຫະກິດ ສະມາຄົມຊຸດສາຫະກຳນ້ຳມັນເຊື້ອເພີງ, ສະຫະພັນຊຸດສາຫະກຳເຄມີ, ສະຫະພັນຊຸດສາຫະກຳ ລົດຍົນໄດ້ປຣັບໃບສັ່ງຈ່ອງ ແລະລາຍການລະອຽດ ຂອງວັດຖຸອັນຈຳເປັນຂອງຕົນເລື້ອຍໆ. ສະເພາະແຕ່ໃນໄລຍະສາມເດືອນ - ເທົ່ານັ້ນ ໂຮງງານຜະລິດເຄື່ອງກົນຈັກກະເສດຂອງລັດ ອູກຣະລາອີນາ ປຣັບແປງຂໍ້ຄວາມສັ່ງຈ່ອງຂອງຕົນ ເຖິງ ໕໐ ຂໍ. ເນື່ອງຈາກວ່າ ເຖິງເວລານັ້ນ ຍັງບໍ່ທັນມີອັດຕາຢັ້ງຢືນ ທາງວິທະຍາການ ຂອງການຈ່າຍວັດຖຸ ຕໍ່ຫົວໜ່ວຍການຜະລິດນັ້ນ ມັນຈຶ່ງເຮັດໃຫ້ໃບສັ່ງຈ່ອງບໍ່ສອດຄ່ອງກັບຄວາມຕ້ອງການ ໃນຕົວຈິງ. ຕົວຢ່າງວ່າ: ໂຮງການໂລຫະກຳ ໃນເວລາ ໙ ເດືອນ ມີຄວາມຕ້ອງການໄມ້ ໑໗໐ ພັນແມັດກ້ອນ, ແຕ່ໃນຕົວຈິງ ຄວາມຕ້ອງການດັ່ງກ່າວ ມີພຽງ ໗໔ ພັນແມັດກ້ອນເທົ່ານັ້ນ. ໃນເບື້ອງຕົ້ນ ໂຮງງານຜະລິດລູກຄຳພາຍເພົາກົນຈັກໄດ້ຍື່ນໃບສັ່ງຈ່ອງຂອງຕົນ ທີ່ຕ້ອງການເຫລັກກ້າ ໗ ພັນໂຕນ, ແຕ່ຄວາມຕ້ອງການຕົວຈິງນັ້ນ ແມ່ນ ໙໗໔ ໂຕນ.

ລະບົບການອະນຸມັດ ແລະການຕົກແຕ່ງເອກະສານກໍ່ບໍ່ມີປະສິດທິພາບ. ຕັ້ງແຕ່ຕາມສາຍອົງການຈຸ້ຽວຊານ ຂອງລະບົບພະລາທິການເທົ່ານັ້ນ ໃບຄຳຮ້ອງຈະຕ້ອງຜ່ານເຖິງ ໕ ທາ

ຝ ຂັ້ນ.ຕາມສາຍອີງການວາງແຜນການ ແລະຈັດວາງຊຸດສາ
ທະກຳ ກໍມີລັກສະນະເທົ່າທຽມກັນ. ຂໍ້ບົກພ່ອງອັນສຳຄັນທີ່ປາ
ກົດຂຶ້ນ ໃນລະບົບດັ່ງກ່າວນັ້ນ ແມ່ນການຂາດການຮັບຜິດຊອບ
ແບບບຸກຄົນຕໍ່ການຈັດຕັ້ງ ພະລາທິການດັ່ງກ່າວ, ແລະ ຍັງມີ
ການຮັບຜິດຊອບແບບກົມທັງໝົດອີກ.

ໃນກອງປະຊຸມສະພາທົ່ວສະຫະພາບ ຂອງລັດຖະກອນວິສາ
ຫະກິດ ສັງຄົມນິຍົມ ຄັ້ງທີ I ນັ້ນ ເພິ່ນໄດ້ບົ່ງໄວ້ວ່າ ການທີ່
ມີລະບົບພະລາທິການນັ້ນ ມັນໄດ້ເຮັດໃຫ້ຜູ້ອຳນວຍການ ວິສາ
ຫະກິດ ໄດ້ປິດຕົວອອກຈາກບັນຫາການຈັດຕັ້ງ ພະລາທິການ.
ໃບສັ່ງຈ່ອງຊຸປະກອນນັ້ນ ແມ່ນຕ້ອງສົ່ງໃຫ້ແກ່ກຸ່ມຊຸດສາຫະກຳ
ແລ້ວຫລັງຈາກນັ້ນ ກຸ່ມຊຸດສາຫະກຳ ຈະຕ້ອງແຈກຢາຍໃບສັ່ງ
ດັ່ງກ່າວ ໃຫ້ແກ່ບັນດາໂຮງງານ ໂດຍບໍ່ຈຳຕ້ອງໃຫ້ມີ ເຈົ້າ
ຂອງຜູ້ສັ່ງຈ່ອງເຂົ້າຫຍຸ້ງກ່ຽວແຕ່ຢ່າງໃດ. ເພິ່ນຫ້າມບໍ່ໃຫ້ -
ໂຮງງານຜະລິດ ວັດຖຸປະກອນ ສຳຫລັບຕົນເອງ ນອກແຜນ
ການແລະໂດຍບໍ່ໄດ້ຮັບຄຳເຫັນດີຈາກກຸ່ມຊຸດສາຫະກຳ,ແຕ່ວ່າ
ຖ້າຫາກບໍ່ມີການສົມທົບໂດຍກົງຂອງໂຮງງານແລະຜູ້ສັ່ງ ຈ່ອງ
ໂດຍປາສະຈາກການເຮັດໃຫ້ເປັນສັນຍາ ລະຫວ່າງຝ່າຍຕ່າງ
ຕ່າງແລ້ວ ການສັ່ງຈ່ອງດັ່ງກ່າວ ຈະບໍ່ຮັບປະກັນການປະຕິບັດ
ໄດ້. ສະນັ້ນ ການຈັດລະບົບພະລາທິການຊຸດສາຫະກຳ ໃຫ້ມີ
ລະບຽບຫລັກການນັ້ນ ມັນຈຶ່ງພົວພັນກັນກັບການປັບປຸງ ການ
ວາງແຜນການ, ເຮັດໃຫ້ການປະຕິບັດສັນຍາເຂົ້າຮູບ ເຂົ້າ
ຮອຍ, ນຳເອົາຫລັກການພົນປະໂຫຍດຮວມໝູ່ ແລະ ບຸກຄົນ

ເຂົ້າມາໃຊ້.

ພ້ອມໆກັບການຊີ້ນຳ ການປະຕິບັດມະຕິຂອງກອງປະຊຸມລັດຖະກອນ ຈາກວິສາຫະກິດ ສັງຄົມນິຍົມທົ່ວສະຫະພາບແລ້ວຄະນະປະທານ ສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ. ໃນວັນທີ ໒໕ ເດືອນມີນາ ປີ ໑໙໓໑ ໄດ້ພິມມະຕິສະບັບພິເສດອອກກ່ຽວກັບ "ມາດຕະການກ່ຽວກັບການປັບປຸງລະບົບພະລາທິການ". ໃນນັ້ນເພິ່ນໄດ້ບົ່ງໄວ້ວ່າການພົວພັນດ້ານປະຈຳວັນ ແລະການປົກຄອງຂອງລະບົບວັດຖຸສາງ ຂອງວິສາຫະກິດນັ້ນ ແມ່ນໜ້າທີ່ຮັບຜິດຊອບ ຂອງຜູ້ອຳນວຍການ ແລະຜູ້ຮອງຂອງເຂົາ. ວຽກງານພຸກຍາ່ງ ກ່ຽວກັບການຮັບປະກັນວັດຖຸປະກອນອັນຈຳເປັນ ແກ່ວິສາຫະກິດນັ້ນ ຈະຕ້ອງຍຶດຖືເອົາສັນຍາແມ່ທີ່ໄດ້ເຊັນກັນ ລະຫວ່າງກຸ່ມຊຸດສາຫະກຳ ແລະຜູ້ຈັດຫາໃຫ້ນັ້ນ ມາເປັນພື້ນຖານ ໂດຍໃຫ້ມີການສອດຄ່ອງກັບງົບປະມານແລະສິນເຊື່ອ ທີ່ເພິ່ນອະນຸມັດໃຫ້ແກ່ວິສາຫະກິດ - ຕ່າງໆນັ້ນ. ເພິ່ນເຫັນຄວາມຈຳເປັນຕ້ອງປັບປຸງ ວິທີການປະກອບຄຳຮ້ອງ, ຈັດໃຫ້ມີລະບົບຮັບຜິດຊອບດ້ານເງິນຄຳຕໍ່ການບໍ່ນັບຖືເງື່ອນໄຂຂອງສັນຍາ ຫລືບໍ່ປະຕິບັດຕາມຂໍ້ຜູກມັດ ດ້ານພະລາທິການແລະການຊື້ຂາຍ ທີ່ໄດ້ເຊັນກັນແລ້ວນັ້ນ.ຝ່າຍຜິດ (ຝ່າຍລະເມີດສັນຍາ) ນັ້ນ ຈະຕ້ອງໄດ້ຈ່າຍຄ່າປັບໃໝ,ຖືກປະຕິບັດວິໄນ, ເພີ່ມຄວາມຮັບຜິດຊອບຂອງວິສາຫະກິດຕໍ່ຂໍ້ຜູກມັດ ທີ່ຕົນໄດ້ຮັບໄປນັ້ນ. ເພື່ອປັບປຸງການພະລາທິການ ນັ້ນເພິ່ນໄດ້ຫັນໄປສູ່ການສ້າງແຜນການພະລາທິການວັດຖຸປະກອນ

(ບັນຊີດຸນດ່ຽງທາງດ້ານ ວັດຖຸປະກອນ).ແຜນການນັ້ນທີ່ເພິ່ນຖືວ່າ ເປັນສ່ວນປະກອບຂອງຕົວເລກຮັບປະກັນ ຂອງການຂະຫຍາຍຊຸດສາຫະກຳ ແລະພ້ອມກັນນັ້ນ ເພິ່ນລົງນະຕິຮັບຂອງ-ເອົາໂລດ. ບັນຊີດຸນດ່ຽງ ຂອງ ວັດຖຸປະກອນ ຂອງວິສາຫະກິດນັ້ນ ໄດ້ປະກອບຂຶ້ນຈາກພື້ນຖານ ຂອງໃບສັ່ງຈ່ອງຂອງບັນດາໂຮງງານຕ່າງໆ.

ພ້ອມດຽວກັນນັ້ນ ເພິ່ນໄດ້ຈັດຕັ້ງກຸ່ມພະລາທິການຊ່ຽວຊານທີ່ກຸ້ມຕົນເອງ ດ້ານເສດຖະກິດຂຶ້ນ. ຕົວຢ່າງ: ໃນກຸ່ມຊຸດສຸາຫະກຳພະລິດລົດ ແລະລົດໄຖນາ ກໍໄດ້ຈັດຕັ້ງກຸ່ມຊ່ຽວຊານທີ່ມີຊື່ວ່າ "ອາບໂຕແລມສະນາບ" ຂຶ້ນແທນກົມພະລາທິການຂອງເຂົາ. ບົດບາດຂອງວິສາຫະກິດ ກໍໄດ້ຍົກສູງຂຶ້ນ, ໜ້າທີ່ພະລາທິການນັ້ນ ໄດ້ມອບໃຫ້ແກ່ພະແນກພະລາທິການ ຂອງເຂົາໂດຍກົງ. ວຽກງານທັງມວນຂອງເຂົາ ໄດ້ຈັດຂຶ້ນບົນພື້ນຖານຂອງສັນຍາທ້ອງຖິ່ນທີ່ໄດ້ເຊັນກັນໂດຍກົງກັບຝ່າຍຈັດຫາ ໂດຍປະຕິບັດຕາມສັນຍາແມ່ ຂອງກຸ່ມຊຸດສາຫະກຳນັ້ນ. ໃນກໍລະນີຫາກບໍ່ມີສັນຍາແມ່ ວິສາຫະກິດມີສິດດຳເນີນກິດຈະການ ຢ່າງມີເອກະລາດ. ຕາມກົດລະບຽບການຈັດຕັ້ງໃໝ່ນັ້ນ ວິສາຫະກິດໄດ້ມີຄວາມຮັບຜິດຊອບ ຢ່າງເຕັມປ່ຽມຕໍ່ຂໍ້ຜູກມັດ ທີ່ໄດ້ຕົກລົງກັນ, ຕໍ່ຄວາມເສຍຫາຍຂອງເຂົາ ທີ່ກຸ່ມຊຸດສາຫະກຳບໍ່ສາມາດທົດແທນໄດ້ນັ້ນ. ການປ່ຽນແປງແບບດຽວກັນນີ້ເພິ່ນກໍໄດ້ນຳປະຕິບັດຢູ່ໃນກຸ່ມຊຸດສາຫະກຳ "ສະຫະພັນການພະລິດ - ເຄື່ອງຈັກຂະໜາດກາງ".

ທຸກບັນຫາທີ່ພົວພັນເຖິງການຄຸ້ມຄອງທຶນຄົງທີ່ ແລະທຶນໝູນວຽນ, ໝາຍຄວາມວ່າ ການຂຶ້ນແຜນການການເງິນ, ການສິນເຊື່ອທະນາຄານ, ການແຈກຢາຍແລະການແບ່ງປັນ ທຶນຮອນ ລະຫວ່າງອົງການຂອງກຸ່ມຊຸດສາຫະກຳ ທີ່ກຸ້ມຕົນເອງ-ດ້ານເສດຖະກິດ ການກຳນົດແລະການອະນຸມັດລາຄາທີ່ໄດ້ຄິດໄລ່ ແລະພ້ອມດ້ວຍນະໂຍບາຍການເງິນລວມນັ້ນ, ໄດ້ສູນໃສ່ໃນກົມການເງິນ ຂອງກຸ່ມຊຸດສາຫະກຳ.

ການລົງທຶນຂອງວິສາຫະກິດນັ້ນ ແມ່ນຄະນະບໍລິຫານ ຂອງກຸ່ມຊຸດສາຫະກຳ ເປັນຜູ້ອະນຸມັດ ໃຫ້ຕາມລະບຽບການລວມ-ສູນ ໂດຍສອດຄ່ອງກັບງົບປະມານປະຈຳປີ,ປະຈຳສາມເດືອນ ແລະປະຈຳເດືອນ ທີ່ເພິ່ນໄດ້ກະໄວ້ນັ້ນ.

ໃນກົດລະບຽບການຈັດຕັ້ງວິສາຫະກິດ ທີ່ໄດ້ຮ່າງຂຶ້ນ ໂດຍຄະນະບໍລິຫານ ຂອງກຸ່ມຊຸດສາຫະກຳຜະລິດລົດແລະລົດໄຖນາ (ວາໂຕ) ໄດ້ບົ່ງໄວ້ວ່າ ຈຸດສົມບັດຂອງວິສາຫະກິດ,ທຶນໝູນວຽນ, ຂະໜາດຂອງກອງທຶນທີ່ສະສົມໄວ້ ໃຊ້ທົດແທນຄ່າຫຼູ້ຍຫ້ຽນນັ້ນ ໄດ້ຖືກວາງອອກ ສຳຫລັບວິສາຫະກິດ ໃນທຸກໆປີ. ວິສາຫະກິດ ໄດ້ດຳເນີນ ບັນຊີການເງິນເອກະລາດ, ທຳລາຍງານ ເຕັກນິກ, ການຄ້າ ແລະ ສະຖິຕິ, ການຄິດໄລ່, ຂຶ້ນບັນຊີສິ່ງຂອງ. ການຊຳລະ ລະຫວ່າງ ຄະນະບໍລິ-ຫານ ກັບວິສາຫະກິດ ໄດ້ດຳເນີນໄປທຸກໆສາມເດືອນ.

ກຸ່ມຊຸດສາຫະກຳ ໄດ້ຮັບອຳນາດເຕັມໃນການວາງແຜນລາຄາ ຢ່າງກວ້າງຂວາງ. ໃນມະຕິຂອງສູນກາງພັກ ກອມມູນິດ

ທົ່ວສະຫະພາບ (ໂບນເຊວິກ) ໃນເດືອນທັນວາ ປີ ໑໙໔໙ ນັ້ນ ເພິ່ນໄດ້ບົ່ງໄວ້ວ່າ ເພື່ອຈຸດປະສົງປັບປຸງອຳນາດບໍລິຫານ ປະຈຳວັນແລະຄວາມຮັບຜິດຊອບ ຂອງກຸ່ມອຸດສາຫະກຳ ໃຫ້ເຂັ້ມແຂງຂຶ້ນນັ້ນ ມັນມີຄວາມຈຳເປັນ ທີ່ໃນເວລາວາງແຜນ ແລກປ່ຽນສິນຄ້າດັ່ງກ່າວ ສະພາເສດຖະກິດແຫ່ງຊາດສູງສຸດ ແລະກະຊວງປະຊາຊົນວ່າການການຄ້າ ຈະຕ້ອງໃຫ້ທິດທາງ ລວມເຫຼົ່ານັ້ນ ໃນການລົດລາຄານຳສົ່ງ, ພ້ອມທັງບົ່ງຂອບເຂດສະເລັຍ ຂອງການຫລຸດລາຄາດັ່ງກ່າວ, ເພື່ອພາຍຫລັງມາ ຈະອຳນວຍຄວາມສະດວກແກ່ກຸ່ມອຸດສາຫະກຳ ເພື່ອວາງລາຄາ-ເອົາເອງ.

ກຸ່ມອຸດສາຫະກຳ ດຳເນີນການວາງແຜນການ ລາຄາຂອງຂະແໜງ ແລະພາຍໃນຂະແໜງອຸດສາຫະກຳຂອງຕົນ. ຖ້າຫາກວ່າ ກ່ອນມີການປະຕິຮູບ ການຊຸ້ມຄອງອຸດສາຫະກຳ ນັ້ນແມ່ນກະຊວງປະຊາຊົນວ່າການການຄ້າເປັນຜູ້ວາງແລະອະນຸ-ມັດລາຄາ ໃຫ້ແກ່ຜະລິດຕະພັນ ຂອງອຸດສາຫະກຳຕ່ຳແຜ່ນ , ແຕ່ເມື່ອມີການຈັດຕັ້ງສຳພັນສະຫະບໍລິສັດຕ່ຳແຜ່ນແລ້ວ ໜ້າທີ່ດັ່ງກ່າວ ໄດ້ມອບໃຫ້ແກ່ກົມຊື້ຂາຍ ຂອງກຸ່ມອຸດສາຫະກຳນັ້ນ.

ໃນເດືອນມີນາ ປີ ໑໙໕໐ ຄະນະປະທານສະພາເສດຖະ-ກິດແຫ່ງຊາດສູງສຸດ ຂອງ ສ.ສ.ສ.ຊ. ໄດ້ອອກມະຕິສະບັບໜຶ່ງ, ຊຶ່ງໂດຍອີງໃສ່ມະຕິດັ່ງກ່າວ ກົມຈັກຂອງສະພາເສດ-ຖະກິດແຫ່ງຊາດສູງສຸດ ມີໜ້າທີ່ກຳກັບການວາງທິດທາງກ່ຽວກັບການວາງລາຄາ ໃຫ້ແກ່ຂະແໜງອຸດສາຫະກຳ. ໃນນັ້ນ

ເພິ່ນໄດ້ກຳນົດນະໂຍບາຍລາຄາ,ວາງຂອບເຂດສະເລັ່ຍຂອງ ລາຄາດັ່ງກ່າວໄວ້. ການກະກຽມວັດຖຸອັນຈຳເປັນ ແລະການ ຮວບຮວມ ບັນຊີລາຄາທີ່ແທ້ຈິງ ເປັນໜ້າທີ່ຄວາມຮັບຜິດຊອບ ຂອງພະແນກທີ່ກ່ຽວຂ້ອງ ຂອງກຸ່ມຊຸດສາຫະກຳ. ສ່ວນລາຄາ ສິນຄ້າຊຸປະໂພກ,ບໍລິໂພກ ແມ່ນກະຊວງປະຊາຊົນ ວ່າການ ການຄ້າ ເປັນຜູ້ວາງອອກຕາມເຄີຍ.

ໃນເມື່ອເພິ່ນຈັດວາງຂະແໜງຊຸດສາຫະກຳ ໃຫ້ໄດ້ຮັບຜົນ ປະໂຫຍດອັນດີນັ້ນ ກຸ່ມຊຸດສາຫະກຳ ໄດ້ວາງລາຄາຂອງຂະ- ແໜງ ເປັນລະບົບອັນດຽວອັ້ນ. ພາຍໃນກຸ່ມຊຸດສາຫະກຳທຸກ ທຸກວິສາຫະກິດ ຈະຕ້ອງຄິດໄລ່ລາຄາ ຂອງໃຜມັນຕາງຫາກ. ໃນເມື່ອວິສາຫະກິດ ໄດ້ຮັບຄຳສັ່ງຈ່ອງຂອງສາມເດືອນ ແລ້ວ ກຸ່ມຊຸດສາຫະກຳ ໄດ້ວາງລາຄາຕົ້ນທຶນຂອງຜະລິດຕະພັນຕາມ ແຜນການວາງອອກ, ຊຶ່ງລາຄາດັ່ງກ່າວ ແມ່ນລາຄາ ແຜນ ການວາງໄວ້ ເພື່ອໃຊ້ຄິດໄລ່ລະຫວ່າງກຸ່ມຊຸດສາຫະກຳ ກັບ ວິສາຫະກິດ. ລາຄາຕົວຈິງແມ່ນລາຄາທີ່ອີງໃສ່ພື້ນຖານ ຂອງ ລາຄາຕົ້ນທຶນຕົວຈິງ. ໃນເວລາເພິ່ນມອບຜະລິດຕະພັນ ສຳ ເລັດຮູບນັ້ນ ສ່ວນແຕກຕ່າງລະຫວ່າງ ລາຄາແຜນການກັບລາ ຄາຕົວຈິງ ໄດ້ຖອກເຂົ້າໃສ່ບັນຊີ ຂອງກຸ່ມຊຸດສາຫະກຳ ທີ່ທະ ນາຄານແຫ່ງຊາດ.

ໃນກໍລະນີ,ເມື່ອລາຄາຕົວຈິງຫາກຕ່ຳກ່ວາລາຄາແຜນການ ນັ້ນ, ໂຮງງານຈະຕ້ອງສົ່ງໃບບິນພິເສດ ຂອງສ່ວນແຕກຕ່າງ ຂອງລາຄາດັ່ງກ່າວ ໄປໃຫ້ແກ່ກຸ່ມຊຸດສາຫະກຳ ເພື່ອຈ່າຍທົດ

ແທນ. ພາຍໃນກຸ່ມຊຸສດາຫະກຳນັ້ນເພິ່ນມີວິທີການຊຳລະຄ່າຜະລິດຕະພັນແຕກຕ່າງກັນ. ເຊັ່ນຕົວຢ່າງ: ໃນກຸ່ມຊູດສາຫະກຳຜະລິດລົດແລະລົດໄຖນານັ້ນ ຕາມຂໍ້ຜູກມັດໃນສັນຍາແມ່ນເພິ່ນໄດ້ນຳໃຊ້ວິທີຊຳລະຄ່າຂາຍຜະລິດຕະພັນ ແຕ່ລະງວດ ເປັນບາດດຽວ.

ກຸ່ມຊູດສາຫະກຳໄດ້ດຳເນີການຄິດໄລ່ ຕາມບັນຊີລວມສູນ-ກັບງົບປະມານ, ໂດຍສະເພາະ, ເພິ່ນໄດ້ໂອນອາກອນຂອງຫຶນໝູນວຽນ ແຫ່ງວິສາຫະກິດຂອງຕົນທັງໝົດຫລືໜ່ວຍເສດຖະກິດອື່ນໆ ແກ່ກອງງົບປະຖານຂອງລັດ. ມີແຕ່ໃນປີ ໑໙໖໑ ເທົ່ານັ້ນ ເພິ່ນໄດ້ຮັບອາກອນຂອງຫຶນໝູນວຽນຈາກກຸ່ມຊູດສາຫະກຳທັງໝົດ ເຖິງ ໗໔% ຂອງຈຳນວນເງິນອາກອນ ທັງໝົດ.

ພ້ອມດຽວກັບການຈັດຕັ້ງ ກຸ່ມຊູດສາຫະກຳນັ້ນ ເພິ່ນໄດ້ປະຕິບັດການປະຕູຮູບເງິນສິນເຊື່ອອີກດ້ວຍ. ການໂຮມໜ້າທີ່ບໍລິຫານ ຂະແໜງທັງໝົດ ໃສ່ໃນກຳມືຂອງກຸ່ມຊູດສາຫະກຳນັ້ນ ມັນມີຄວາມຈຳເປັນລວມສູນ ແຈກຢາຍຊັບພະຍາກອນ ດ້ານການເງິນອີກ.

ການພົວພັນທາງດ້ານສິນເຊື່ອ, ທີ່ໄດ້ຕັ້ງຂຶ້ນບົນພື້ນຖານ - ການເຊື່ອຖືຊຶ່ງກັນແລະກັນ ທັງໂດຍທາງກົງແລະໂດຍ ທາງອ້ອມ, ໄດ້ນຳການຂັດແຍ້ງຢ່າງຮຸນແຮງ ມາສູ່ຂະບວນການຂະຫຍາຍແລະການປັບປຸງການວາງແຜນການແບບລວມສູນ, ການປັບປຸງລະບົບຄຸ້ມຄອງ ແລະການນຳເອົາວິສາຫະກິດເຂົ້າສູ່ຫຼັກ

ການກຸ້ມຕົນເອງດ້ານເສດຖະກິດ, ສະຫລຸບແລ້ວແມ່ນໃນໄລຍະນັ້ນ ໄດ້ມີບັນຊີການຄ້າ ທີ່ເພິ່ນເອີ້ນກັນວ່າ "ການເຊື່ອຖື ຊຶ່ງກັນແລະກັນ ໂດຍທາງອ້ອມ" ທີ່ເປັນການຂັດຂວາງກັບໜ້າທີ່ໃໝ່ ທີ່ເພິ່ນໄດ້ສຶກສາກັນໃນເວລານັ້ນ.

ແຕ່ຢ່າງໃດກໍດີ ໃນເວລາເພິ່ນປະຕິບັດການປະຕິຮູບ ຢູ່ໃນຂັ້ນພື້ນຖານນັ້ນ ວິທີສິນເຊື່ອກໍຍັງບໍ່ທັນໄດ້ຮັບການຂະຫຍາຍຕົວໄປໂລດ. ໃນຂັ້ນທຳອິດຂອງການປະຕິຮູບສິນເຊື່ອນັ້ນເພິ່ນໄດ້ລຶບລ້າງບັນຊີການເງິນ ຂອງວິສາຫະກິດຈຳນວນຫລາຍລາຍຢູ່ທະນາຄານແຫ່ງຊາດ (ເຊັ່ນ ບັນຊີລາຍວັນ, ບັນຊີບໍລິຫານ, ບັນຊີພິເສດ, ບັນຊີຜະລິດຕະພັນ ແລະອື່ນໆ) ແລ້ວເພິ່ນກໍໄດ້ນຳເອົາບັນຊີລວມອັນດຽວ ຂອງວິສາຫະກິດມາໃຊ້ທົດແທນບັນດາບັນຊີດັ່ງກ່າວຂ້າງເທິງນີ້, ຊຶ່ງບັນຊີລວມອັນດຽວ ດັ່ງກ່າວໃຊ້ໄດ້ສຳລັບການເຄື່ອນໄຫວ ດ້ານການເງິນທຸກໆປະເພດ. ທະນາຄານໄດ້ຈ່າຍເງິນ ໃຫ້ແກ່ວິສາຫະກິດຕາມລາຄາອັນຄິດໄລ່, ທີ່ຄະນະບໍລິຫານຂອງກຸ່ມຊຸດສາຫະກຳໄດ້ກຳນົດໃຫ້ເອົານັ້ນ. ສ່ວນເງິນສະສົມ ທີ່ປະກອບດ້ວຍເງິນກຳໄລ ແຜນການແລະຄ່າຫລູ້ຍຫ້ຽນນັ້ນ ທະນາຄານໄດ້ຫັກເອົາໄວ້.

ກ່ອນມີການປະຕິຮູບສິນເຊື່ອນັ້ນ ຄະນະອຳນວຍການກຸ່ມຊຸດສາຫະກຳ ໄດ້ໃຫ້ເງິນແກ່ວິສາຫະກິດທຸກໆເດືອນ ຕາມລາຄາຕົ້ນທຶນ ທີ່ເພິ່ນຄາດຄະເນໄວ້. ການຊຳລະບັນຊີ ບັ້ນສຸດທ້າຍນັ້ນ ເພິ່ນໄດ້ປະຕິບັດຂຶ້ນ ທຸກໆທ້າຍສາມເດືອນ. ການຂາດຕົກບົກພ່ອງອັນໃຫຍ່ຫລວງ ຂອງລະບົບດັ່ງກ່າວມີຢູ່ບ່ອນວ່າຄະນະ

ບໍລິຫານກຸ່ມຊຸດສາຫະກຳ ໄດ້ແນໃສ່ປະຕິບັດການກວດກາ ແຕ່ແຜນການເງິນປະຈຳເດືອນ, ແຕ່ການກວດກາດັ່ງກ່າວ ໄດ້ມີການຈຸກຈ້ຳເລື້ອຍໆ. ການຄາດເຄື່ອນຂອງບັນຊີລາຍວັນນັ້ນ- ມັນພາໃຫ້ເກີດການຂາດດຸນຢູ່ໃນຄັງ (ຫລູມງົບປະມານ).

ໃນເງື່ອນໄຂດັ່ງກ່າວ ມັນໄດ້ນຳໄປສູ່ຄວາມຫຍຸ້ງຍາກ ຕໍ່ການກວດກາການປະຕິບັດແຜນການເງິນ ແລະການຜະລິດ . ຜົນສະທ້ອນອັນຫຼີກລ່ຽງບໍ່ໄດ້ ໄດ້ນຳມາສູ່ການເຄື່ອນໄຫວ ດັ່ງກ່າວ ຄືລະບົບການເງິນທັງໝົດ ບໍ່ໄດ້ເຮັດຫຍັງອື່ນຫຼາຍກ່ວາຄວາມພໍອົກພໍໃຈ ໃນການຕອບສະໜອງຄຳຂໍຮ້ອງ ດ້ານການເງິນ ແກ່ວິສາຫະກິດ ເພື່ອຈ່າຍຄ່າເງິນເດືອນ,ຊຶ່ງສ່ວນໃຫຍ່ແລ້ວ ການຕອບສະໜອງດັ່ງກ່າວ ກໍແມ່ນໃຫ້ໃນຮູບການເປັນການກູ້ຢືມ. ພາຍຫລັງມາ ເງິນກູ້ຢືມດັ່ງກ່າວ ກໍໄດ້ສະສົມໄວ້ຢູ່ໃນຄະນະບໍລິຫານ ຂອງກຸ່ມຊຸດສາຫະກຳນັ້ນ.ສະພາບຕົວຈິງໃນການຈັດຕັ້ງການເງິນ ຂອງວິສາຫະກິດ ກໍໄດ້ຕົກຢູ່ໃນສະ- ພາບເໝືອນແຕ່ກ່ອນກັບເວລາທີ່ຍັງບໍ່ທັນໄດ້ນຳໃຊ້ຫຼັກການກຸ້ມຕົນເອງດ້ານເສດຖະກິດ ໃນວິສາຫະກິດນັ້ນ. ການແຕກຕ່າງກັນນັ້ນ ມີຢູ່ທີ່ວ່າ ການເງິນຂອງວິສາຫະກິດ ໄດ້ອີງໃສ່ລາຄາຕົ້ນທຶນ ຕົວຈິງເທົ່ານັ້ນ.

ໄລຍະການປະຕິຮູບໃໝ່ນັ້ນ ໄດ້ເລີ່ມຂຶ້ນໃນເດືອນ ກຸມພາ ປີ ໑໙໓໑. ບັນຊີລວມໄດ້ນຳເຂົ້າມາໃຊ້, ຊຶ່ງວິທີການ ດັ່ງກ່າວ ໄດ້ຊຸກຍູ້ໃຫ້ມີຜົນສຳເລັດໃນການປະຕິບັດແຜນການການຜະລິດແລະການເງິນ.ການສົມດຸນຂອງບັນຊີລວມ ໄດ້ສະແດງ

ເຖິງພົນທາງດ້ານການເງິນໃນການປະຕິບັດແຜນການ ໃຫ້ສຳເລັດ. ແຕ່ໃນທ່າມກາງການດຳເນີນການປະຕິຮູບນັ້ນ ຄວາມຜິດພາດກໍໄດ້ປາກົດຂຶ້ນ ຢ່າງໄວວາທີ່ສຸດ: ເພິ່ນໄດ້ປະຕິບັດ-ການຊຳລະລາຍການແຈ້ງລາຄາສິນຄ້າ ທີ່ຜູ້ຂາຍສົ່ງໃຫ້ ນັ້ນຢ່າງອັດຕະໂນມັດໂລດ. ທະນາຄານບໍ່ໄດ້ຮູ້ຄວາມຍິນຍອມ - ຂອງຜູ້ຊື້ ທີ່ທະນາຄານໄດ້ຫັກເງິນອອກຈາກບັນຊີ ການເງິນຂອງເຂົານັ້ນ. ຜູ້ຊື້ແລະສາຂາຂອງທະນາຄານລັດ ບໍ່ໄດ້ຮັບການແຈ້ງຂ່າວອັນຈຳເປັນໃນເວລາທີ່ຄວນ. ປາກົດການທັງ-ໝົດນີ້ ມັນໄດ້ເຮັດໃຫ້ມີການເພີ່ມຂອບເຂດງົບປະມານ ທີ່ກະໄວ້. ການຂາດການກວດກາໃນຂັ້ນພື້ນຖານນັ້ນມັນໄດ້ເປີດໂອກາດ ໃຫ້ແກ່ວິສາຫະກິດ ຜູ້ຈັດຫາເອກະເທດນັ້ນ ສໍ້ໂກງໄດ້. ພຶດຕິການດັ່ງກ່າວ ມັນໄດ້ສ້າງຊ່ອງວ່າງກຳນົດເວລາ ຕໍ່ການຊຳລະລາຍຮັບຂອງຜູ້ຂາຍ ກັບລາຍຈ່າຍຂອງຜູ້ຊື້.

ນະໂຍບາຍທີ່ຊຸກຍູ້ຂະແໜງບັນລຸຜົນປະໂຫຍດໄດ້ນັ້ນ ໃນເມື່ອເພິ່ນໄດ້ນຳໃຊ້ການກຸ້ມຕົນເອງດ້ານເສດຖະກິດ, ແລະຂໍ້ບົກພ່ອງ ທີ່ປະຕິບັດການປະຕິຮູບສິນເຊື່ອ ໃນໄລຍະຕົ້ນ ນັ້ນເພິ່ນໄດ້ປະຕິບັດການຊຳລະລາຍຮັບ ຂອງວິສາຫະກິດ ແບບ "ພາຍໃຕ້ແຜນການ". ວິສາຫະກິດໄດ້ຮັບສິນເຊື່ອ ໂດຍບໍ່ມີການສຳເລັດການປະຕິບັດແຜນການ ແຕ່ຢ່າງໃດ.ສະພາບດັ່ງກ່າວ ມັນໄດ້ນຳໄປສູ່ການໃຊ້ງົບລື່ນກາຍຂອບເຂດ ຂອງສິນເຊື່ອ, ທັງໃນເງື່ອນໄຂທີ່ບໍ່ສຳເລັດຕົວເລກ ຮັບປະກັນຂອງ-ແຜນການກໍຕາມ, ບໍ່ວ່າທາງບໍລິມາດ ກໍຄືທາງຄຸນນະພາບ -

ເພີ່ນໄດ້ຊຳລະກຳໄລແບບອັດຕະໂນມັດຕາມງົບປະມານ ໂດຍບໍ່ໄດ້ຄຳນຶງເຖິງການຮັບຕົວຈິງຂອງເຂົາມີເທົ່າໃດແທ້. ທັງຫມົດນີ້ ມັນໄດ້ເຮັດໃຫ້ວິສາຫະກິດ ຂາດຄວາມສົນໃຈ ຕໍ່ການລົດລາຄາຕົ້ນທຶນ, ຕໍ່ການສະສົມກຳໄລ ແລະຕໍ່ການປຸກລະດົມເອົາຊັບພະຍາກອນ ພາຍໃນປະເທດມາໃຊ້. ມາດຕະການ ທີ່ເພີ່ນນຳໃຊ້ ເພື່ອລົບລ້າງຂໍ້ຜິດພາດ ໃນການປະຕິບັດການປະຕິຮູບສິນເຊື່ອນັ້ນ ແມ່ນການປັບປຸງຫລັກການກຸ້ມຕົນເອງ ດ້ານເສດຖະກິດ, ໃນການຈຳກັດການຊຳລະແບບອັດຕະໂນມັດ ນັ້ນແລະເພີ່ນໄດ້ຫັນມາເບີກຈ່າຍສິນເຊື່ອ ຫລັງຈາກການສຳເລັດແຜນການ. ເພີ່ນໄດ້ແບ່ງທຶນຂອງວິສາຫະກິດ ອອກເປັນທຶນເດີມ ແລະທຶນກູ້. ເພີ່ນໄດ້ຈັດຕັ້ງບັນຊີປະກັນໄພອັນ, ຊຶ່ງໃນບັນຊີດັ່ງກ່າວ ໄດ້ມີກຳໄລເພີ່ມເຕີມ ບໍ່ຕ່ຳກວ່າ ໕໐%, ຫລືວິສາຫະກິດ ຈະໄດ້ຮັບເງິນດັ່ງກ່າວ ເມື່ອເຂົາເຈົ້າຫາກ ໄດ້ມີການລົດລາຄາຕົ້ນທຶນລົງ. ເພີ່ນກໍອາດສາມາດນຳໃຊ້ເງິນດັ່ງກ່າວໄດ້ ຫລັງຈາກວິສາຫະກິດ ຫາກສຳເລັດຫນ້າທີ່ຕາມແຜນການ ກ່ຽວກັບການລົດລາຄາຕົ້ນທຶນ. ຄ່າໃຊ້ຈ່າຍຂອງວິສາຫະກິດທັງຫມົດ ມັນຂຶ້ນກັບການສະສົມຂອງເຂົາ. ໃນເມື່ອການປະຕິຮູບສິນເຊື່ອ ຫາກໄດ້ຮັບການປັບປຸງຂຶ້ນແລ້ວ, ເພີ່ນໄດ້ລົບລ້າງລະບຽບການ, ທີ່ບັງຄັບໃຫ້ວິສາຫະກິດ ຕ້ອງຖອກກຳໄລຂອງເຂົາເກືອບຫມົດ ເຂົ້າໃຫ້ທະນາຄານລັດແລ້ວການລົງທຶນໃຫ້ແກ່ວິສາຫະກິດທັງຫມົດ ກໍໄດ້ຮັບຈາກງົບປະມານ. ເພີ່ນໄດ້ສ້າງການພົວພັນໂດຍກົງ ລະຫວ່າງຕົວເລກຂອງການສະສົມ-

ກັບການສຳເລັດແຜນການອັນ. ໂດຍວິທີການດັ່ງກ່າວ ໄດ້ຊຸກຍູ້ໃຫ້ວິສາຫະກິດສົນໃຈຕໍ່ການເຮັດໃຫ້ແຜນການສຳເລັດ.

ໃນສະພາບການດັ່ງກ່າວນີ້ ການທີ່ເຮັດໃຫ້ກິດຈະການ ໄດ້ຮັບຜົນປະໂຫຍດນັ້ນ ເປັນບັນຫາຕົ້ນຕໍ. ໃນໄລຍະການ ດຳເນີນແຜນການຫ້າປີ ຊຸດທີ ໑ ນັ້ນ ໄດ້ມີການຄາດເຄື່ອນ ລະຫວ່າງລາຄາຕົ້ນທຶນ ກັບລາຄາຂາຍຍົກຂອງໂລຫະ, ແຮ່, ຖ່ານຫີນ, ໄມ້ແລະວັດຖຸອື່ນໆອີກ. ໃນປີ ໑໙໓໑ ຕາມແຜນການລາຄາຖ່ານຫີນປຸງແຕ່ງ (ໂກກ) ຕົກເປັນ ໖໐ ຮູບ ໓໖ ໂກເປັກ ຕໍ່ໜຶ່ງໂຕນ, ແຕ່ລາຄາຂາຍຍົກ ມີພຽງ ໑໕,໔໐ ຮູບ. ໃນກຸ່ມອຸດສາຫະກຳ "ສະຫະອຸດສາຫະກຳເຄື່ອງຈັກສ່ຽນ" ນັ້ນ ຕົວເລກສະເລັ່ຍຂອງລາຄາ ຕໍ່ລາຄາຕົ້ນທຶນຂອງອຸປະກອນກົນຈັກ ບໍ່ຫຸ່ນທ່ຽງໃນຂອບເຂດ ແຕ່ ໕໕ ຫາ ໑໔໐%, ສ່ວນຈັກສ່ຽນນັ້ນ ຕົວເລກສະເລັ່ຍມີປະມານເຖິງ ໑໔໐%, ສຳຫລັບແຕ່ລະຊະນິດນັ້ນ ຄວາມແຕກຕ່າງຂອງຕົວເລກ ແມ່ນຈາກ -໑໐໘ ຫາ ໑໗໐%.

ສຳຫລັບໄລຍະການເຮັດໃຫ້ເປັນອຸດສາຫະກຳນັ້ນການຄາດເຄື່ອນຂະໜາດນີ້ ມັນມີຄວາມໝາຍສຳຄັນທີ່ສຸດ. ມັນໄດ້ສະແດງເຖິງການຊຸກຍູ້ ໃຫ້ນຳເອົາເຕັກນິກອັນໃໝ່ເຂົ້າມາ, ຊຶ່ງກ່ອນອື່ນໝົດ ແມ່ນໃນຂະແໜງອຸດສາຫະກຳໜັກ. ລັດໄດ້ອະນຸມັດເງິນອຸດໜູນ ເພື່ອຖົມຊົມການຄາດເຄື່ອນລາຄາດັ່ງກ່າວ, ທີ່ກຸ່ມອຸດສາຫະກຳໄດ້ນຳໄປໃຊ້ ຢ່າງກ້ວາງຂວາງ. ເລີ່ມແຕ່ປີ ໑໙໓໕ ເປັນຕົ້ນໄປ ເງິນອຸດໜູນຂອງລັດດັ່ງກ່າວກໍໄດ້ລົດ

ຜ່ອນລົງ, ແລະສຳຫລັບບາງຂະແໜງນັ້ນ ຂະໜາດຂອງເງິນ ຊຸດໜູນດັ່ງກ່າວ ກໍໄດ້ແຄບເຂົ້າ.

ບັນຫາສຳຄັນອີກບັນຫາໜຶ່ງ ກໍແມ່ນບັນຫາການຮ່າງ ຫລັກການຈັດຕັ້ງແລະວິທີການນຳເອົາວິສາຫະກິດເຂົ້າໃນຫລັກການກຸ້ມຕົນເອງດ້ານເສດຖະກິດ. ເນື່ອງຈາກຂາດວິທີການເອກະພາບ ແລະຂາດການແລກປ່ຽນບົດຮຽນ ຢ່າງກວ້າງຂວາງນັ້ນ ມັນໄດ້ນຳໄປສູ່ບ່ອນວ່າ ວິສາຫະກິດເກືອບທຸກບ່ອນ ໄດ້ນຳໃຊ້ຫລັກການກຸ້ມຕົນເອງ ດ້ານເສດຖະກິດ "ຂອງໃຜຂອງມັນ", ນຳໃຊ້ຮູບການຊຳລະດ້ານການເງິນ ລະຫວ່າງໂຮງງານຕ່າງຕ່າງ "ແບບໃຜແບບມັນ".

ການນຳເອົາຫລັກການກຸ້ມຕົນເອງດ້ານເສດຖະກິດເຂົ້າໃນຊຸດສາຫະກຳນັ້ນມັນບໍ່ມີພຽງຄວາມຕ້ອງການແຕ່ຕ້ອງປັບປຸງລະບົບບັນຊີ ແລະການຈັດຕັ້ງການວາງແຜນ ພາຍໃນໂຮງງານ-ເທົ່ານັ້ນ. ຂອດສຳຄັນໃນວຽກງານດັ່ງກ່າວແມ່ນການແບ່ງປັນທຶນໝູນວຽນ ແລະປະຕິບັດໃບສັ່ງຈ່ອງ ໃຫ້ແກ່ໂຮງງານນັ້ນ. ເປັນເວລານານພໍຄວນ ທີ່ໃນໜ້າໜັງສືພິມ ເພິ່ນໄດ້ພົບເຫັນມີການແລກປ່ຽນຄວາມຄິດຄວາມເຫັນກັນ ກ່ຽວກັບການນຳໃຊ້ວິທີບັນຊີລວມ ພາຍໃນໂຮງງານ ຫລືລະບົບໃບແຊກ (ໃບສັ່ງຈ່າຍ) ທີ່ຈະເໝາະສົມກ່ອນກັນ? ເພິ່ນໄດ້ຮັບຮູ້ນຳກັນວ່າລະບົບບັນຊີລວມນັ້ນ ເປັນລະບົບທີ່ມີມວນຄ່ອງແຄ້ວແລະເໝາະສົມກັບສະພາບຕົວຈິງຫລາຍກວ່າ. ທ່າດີຂອງລະບົບດັ່ງ ກ່າວມັນມີຢູ່ວ່າ ເພິ່ນບໍ່ຕ້ອງການເອກະສານເພີ່ມເຕີມແຕ່ຢ່າງໃດ.

ໃນບາງກໍລະນີຫລັກການກຸ້ມຕົນເອງດ້ານເສດຖະກິດ ກໍໄດ້ບ່ຽງບ່າຍອອກໄປ. ເຊັ່ນໂຮງງານ "ອຸດສາຫະກຳລົດ ກະເສດ ທີ່ເມືອງໂລສະຕົບ" ໄດ້ນຳເອົາໂຮງງານເຂົ້າສູ່ "ຫຼັກການກຸ້ມຕົນເອງ ຢ່າງສົມບູນ" ນັ້ນ. "ຄວາມສົມບູນ" ຂອງເອົາມີຄືວ່າ ໂຮງງານໄດ້ມີການພົວພັນໂດຍກົງກັບທະນາຄານລັດ. ທະນາຄານລັດໄດ້ເປີດບັນຊີລວມຂອງຕົນ ໃຫ້ແກ່ທຸກສາຂາໂຮງງານ ໂດຍບໍ່ຖືວ່າ ໂຮງງານມີບັນຊີລວມກໍຕາມ. ມັນຄ້າຍຄືກັບວ່າ ຢູ່ໃນໂຮງງານເອງ ໄດ້ມີສາຂາທະນາຄານ ພິເສດປະຈຳຢູ່. ການຈັດຕັ້ງການພົວພັນດັ່ງກ່າວຂຶ້ນນັ້ນ ມັນໄດ້ນຳໄປສູ່ການຕັດແຍກວິສາຫະກິດ ອອກເປັນອົງການຜະລິດອັນດຽວຕ່າງຫາກ ແລະກົງກັນຂ້າມກັບມະຕິຂອງສູນກາງພັກກອມມູນິດ ທົ່ວສະຫະພາບ (ໂບນເຊວິກ) ສະບັບລົງວັນ ໕ ທັນວາ ປີ ໑໙໒໙ ນັ້ນ. ບາງຄັ້ງຫລັກການບັນຊີລວມ ກໍເກີດຂັດແຍ້ງກັບບັນຊີພິເສດ ຂອງ "ຫລັກການກຸ້ມຕົນເອງ ດ້ານເສດຖະກິດ". ການຈັດຕັ້ງກອງທຶນບຳເນັດນັ້ນ ກໍບໍ່ໄດ້ມີຫຼັກການ-ເປັນເອກະພາບກັນ. ໃນວິສາຫະກິດຈຳພວກໜຶ່ງ ເພິ່ນໄດ້-ວາງກອງທຶນດັ່ງກ່າວອອກ ໑໐%, ສ່ວນບ່ອນອື່ນນັ້ນເພິ່ນວາງອອກແຕ່ ໔໐ ຫາ ໙໐% ຂອງເງິນປະຢັດໄດ້. ໃນໂຮງງານຜະລິດລົດ ຢູ່ມົດສະກູນັ້ນເພິ່ນໄດ້ວາງມາດຕະຖານໃນການໃຫ້ຄ່າບຳເນັດໄວ້ ຄືຈະຕ້ອງສຳເລັດແຜນການເຖິງ ໑໐໐% , ສ່ວນໂຮງງານ "ຜະລິດສາຍກາບ" ນັ້ນ ເພິ່ນໄດ້ໃຫ້ຄ່າບຳເນັດ ພຽງແຕ່ສຳເລັດແຜນການເຖິງ ໙໐% ເທົ່ານັ້ນ.

ເຖິງວ່າຈະມີຂໍ້ບົກພ່ອງຕັ້ງຫລວງຫລາຍກ່າຍກອງເທົ່າໃດກໍຕາມ ວຽກງານຂອງໂຮງງານ ໃນເງື່ອນໄຂທີ່ນຳໃຊ້ຫຼັກການກຸ້ມຕົນເອງ ດ້ານເສດຖະກິດຢູ່ນັ້ນ ມັນໄດ້ນຳຜົນປະຈັກຕາຂຶ້ນມາດັ່ງນີ້: ໄດ້ລົດຜ່ອນການເສຍຫາຍເວລາ, ໄດ້ເພີ່ມການຜະລິດ ຜະລິດຕະພັນຂຶ້ນ, ໄດ້ນຳເອົາລະບົບເຣັດເປັນສັນຍາເຂົ້າໃຊ້ຢູ່ພາຍໃນພາກສ່ວນຂອງວິສາຫະກິດ. ການປະຕິບັດດັ່ງກ່າວ ມັນໄດ້ສົ່ງຜົນສະທ້ອນອັນດີ ໃຫ້ແກ່ການຂະຫຍາຍເສດຖະກິດແຫ່ງຊາດ.

ການລິເລີ່ມແລະຄວາມປາຖະໜາອັນແຮງກ້າ ຂອງຊາວຜູ້ອອກແຮງງານ ໄດ້ມີຄວາມໝາຍອັນສຳຄັນບໍ່ໜ້ອຍ. ໃນທົດສະວັດທີ ໔ ແລະຕົ້ນທົດສະວັດທີ ໕ ນັ້ນ ການລິເລີ່ມ ແລະຄວາມປາຖະໜາດັ່ງກ່າວ ມັນໄດ້ສະແດງອອກໃນເວລາເພີ່ມຮ່າງແຜນການໃຫ້ລື່ນແຜນການລວມ. ແນວຄິດຂອງແຜນ ດັ່ງກ່າວ ໄດ້ປາກົດຂຶ້ນ ໂດຍການອອກຫົວຄິດ ຂອງຊາວກຳມະກອນ ເພື່ອປະຕິບັດແຜນການຫ້າປີ ຊຸດທີ ໑ ໃຫ້ສຳເລັດກ່ອນກຳນົດ. ການຮ່າງແຜນການໃຫ້ລື່ນແຜນການລວມ ຂອງຊາວກຳມະກອນນັ້ນ ໄດ້ຈັດຂຶ້ນບົນພື້ນຖານ ຂອງການແຂ່ງຂັນແຮງງານ ສັງຄົມນິຍົມ. ຈຸດໝາຍໃຈກາງ ຂອງແຜນການ ດັ່ງກ່າວນີ້ ໄດ້ແກ່ການນຳໃຊ້ອຸປະກອນ, ວັດຖຸດິບ ແລະວັດຖຸສິ່ງຂອງໃຫ້ເໝາະສົມ, ຍົກຄຸນນະພາບຂອງຜະລິດຕະພັນ ທີ່ຜະລິດອອກໃຫ້ສູງຂຶ້ນ.

ຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະການຈັດຕັ້ງ,ທີ່

ເກີດຂຶ້ນ ໃນໄລຍະການເຮັດໃຫ້ເປັນຊູດສາຫະກຳນັ້ນ, ແມ່ນ ເນື່ອງຈາກເງື່ອນໄຂ ສະເພາະຂອງໄລຍະນັ້ນ. ປະເທດຊາດ ໄດ້ກ້າວເຂົ້າສູ່ເສັ້ນທາງ ກໍ່ສ້າງສັງຄົມນິຍົມ ບໍ່ໄດ້ມີບົດຮຽນ-ຫຍັງຫມົດ, ພາຫະນະ ຂາດໆເຂີນໆ, ຂາດຄວາມຮູ້ຄວາມ ສາມາດອັນຈຳເປັນ. ມັນຮຽກຮ້ອງໃຫ້ມີການຈັດຕັ້ງລະບົບຄຸ້ມ ຄອງການຜະລິດ ຊູດສາຫະກຳ ທີ່ເປັນຂອງຕົນເອງ ຂຶ້ນແລ້ວ ຮູບການແລະວິທີຄຸ້ມຄອງແບບໃຫມ່ອັນນັ້ນ ຈະຕ້ອງເອົາໄປທົດ ສອບ ໃນພາກປະຕິບັດຕົວຈິງ.

ແຕ່ເຖິງຢ່າງໃດກໍຕາມ ໃນທ່າມກາງການແກ້ໄຂບັນຫາດັ່ງ ກ່າວ ເພິ່ນໄດ້ປະເຊີນກັບຄວາມຫຍຸ້ງຍາກນອກຕົວອີກ. ເນື່ອງ ຈາກມີການຂະຫຍາຍຕົວ ມາດຕາສ່ວນຂອງການກໍ່ສ້າງ ທີ່ສຳ ຄັນ ແລະການຂາດເຂີນທຶນຮອນ ອັນຈຳເປັນນັ້ນ ມັນໄດ້ເຮັດ ໃຫ້ເກີດມີຄວາມສັບສົນຂຶ້ນຢູ່ໃນງົບປະມານຂອງລັດ. ຄວາມ ຫຍຸ້ງຍາກຊົ່ວຄາວ ໃນວຽກງານພະລາທິການ ເຄື່ອງບໍລິໂພກ ແລະສິນຄ້າຊູດສາຫະກຳ ແກ່ປະຊາຊົນນັ້ນ ມັນໄດ້ເຮັດໃຫ້ມີ-ຄວາມຈຳເປັນ ຕ້ອງຫັນໄປສູ່ການແລກປ່ຽນສິ່ງຂອງແລະການ ເບີກຈ່າຍເງິນເດືອນ ເປັນວັດຖຸ. ສິ່ງທີ່ຮ້າຍແຮງໄປກ່ວານັ້ນ ອີກ ແມ່ນການຜິດພາດ, ທີ່ປາກົດຂຶ້ນໃນທ່າມກາງ ການດຳ ເນີນການປະຕິຮູບສິນເຊື່ອ, ໃນການຈັດຕັ້ງພະລາທິການວັດຖຸ ເຕັກນິກ ທີ່ເພິ່ງອີງໃສ່ທິດສະດີ ດ້ານເສດຖະກິດ ຂອງທິດສະ ວັດທີສາມ ກ່ຽວກັບເນື້ອໃນການພົວພັນສິນຄ້າແລະການເງິນ-ໃນໄລຍະຂ້າມຜ່ານ.

ເນື່ອງຈາກມີການອີງໃສ່ທິດສະດີ ດັ່ງກ່າວນັ້ນ ການນຳໃຊ້ການພົວພັນສິນຄ້າແລະການເງິນ ໄດ້ມີການສົມທົບກັບທິດທາງນະໂຍບາຍເສດຖະກິດໃໝ່ຊົ່ວຄາວ ແລະໄດ້ເປັນເຫດໃຫ້ນຳເອົາເສດຖະກິດ ທີ່ມີຫລາຍໂຄງຮ່າງມາປະຕິບັດ. ການລົບລ້າງລະບົບເສດຖະກິດ ທີ່ມີຫລາຍໃນໂຄງຮ່າງນັ້ນ ເພິ່ນເຊື່ອກັນວ່າ ເປັນການສິ້ນສຸດຂອງການພົວພັນສິນຄ້າແລະການເງິນ.

ໃນພາກຕົວຈິງນັ້ນ ມັນໝາຍເຖິງການພັງທະລາຍຂອງລະບົບການເງິນ, ການຫັນປ່ຽນເງິນຕາ ເຂົ້າໃນລະບົບຊຳລະເງິນໂດຍບັນຊີ, ການປະຕິເສດຂອງການແລກປ່ຽນ ສິນຄ້າ, ການກ້າວໄປສູ່ການແລກປ່ຽນວັດຖຸກັບວັດຖຸໂດຍກົງ, ການບໍ່ເຂົ້າແກັບເຂົ້າເກັຍຂອງແຜນການ ແລະການກຸ້ມຕົນເອງດ້ານເສດຖະກິດ, ແຜນການແລະຕະຫລາດ, ແລະໃນຜົນສຸດທ້າຍກໍໄປເຖິງບ່ອນບໍ່ສອດຄ່ອງ ຂອງລະບອບສັງຄົມນິຍົມ ກັບການນຳໃຊ້ການພົວພັນສິນຄ້າແລະການເງິນ. ເຫດຜົນຂອງແນວຄິດດັ່ງກ່າວມີຄື: ເສດຖະກິດສັງຄົມນິຍົມ ຂະຫຍາຍຕົວໄປຢ່າງມີແຜນການແບບດຽວເທົ່ານັ້ນ, ແຕ່ຕະຫລາດດຶງໄປຫາການນຳໃຊ້ ການພົວພັນສິນຄ້າແລະການເງິນ ຢ່າງຫລີກລ່ຽງບໍ່ໄດ້ . ສະຫລຸບແລ້ວສອງປະເທດນີ້ ແມ່ນດຳເນີນໄປຮ່ວມກັນບໍ່ໄດ້ - ເດັດຂາດ.

ການຈັດຕັ້ງໃຫ້ເປັນແຜນການ ມັນເປັນການກົງກັນກັບການຕະຫລາດ ໝາຍຄວາມວ່າ ການສ້າງຕັ້ງສັງຄົມນິຍົມມັນເປັນສິ່ງທີ່ກົງກັນຂ້າມ ກັບການຜະລິດສິນຄ້າ. ເນື່ອງຈາກການຈັດ-

ຕັ້ງວາງແຜນການຜະລິດສັງຄົມນິຍົມ ໄດ້ເຂົ້າມາສັບປ່ຽນການຂະຫຍາຍ ແບບໄປຕາມທຳມະຊາດ ຂອງລະບອບທຶນນິຍົມນັ້ນ ການຂະຫຍາຍການວາງແຜນ ມັນຈຶ່ງໝາຍເຖິງການສະລາຍຕົວ ຂອງການພົວພັນຕະຫລາດ.

ແນວຄິດແນວນັ້ ໝາຍເຖິງການລົບລ້າງ ຢ່າງສິ້ນເຊີງ - ໜ້າທີ່ຂອງຕະຫລາດ, ແລະແທນບ່ອນຂອງຕະຫລາດດັ່ງກ່າວນັ້ນ ເພິ່ນສະເໜີໃຫ້ມີລະບົບເຄັ່ງຄັດ ຂອງການເຄື່ອນໄຫວ-ເສດຖະກິດທຸກພາກສ່ວນ, ການສັບປ່ຽນປະເພດສິນຄ້າ (ຕະຫລາດ) ດ້ວຍປະເພດການບັນຊີ ແລະການແຈກຢາຍ.

ເປັນທີ່ຮູ້ກັນຢູ່ແລ້ວວ່າ ການນຳໃຊ້ຫລັກການກຸ້ມຕົນເອງ - ດ້ານເສດຖະກິດນັ້ນ ມັນພົວພັນກັບການໃຊ້ການພົວພັນດ້ານສິນຄ້າແລະດ້ານການເງິນ, ແຕ່ວ່າ ການຈັດຂວາງແຜນການ ຕໍ່ການພົວພັນດ້ານສິນຄ້າ ແລະດ້ານການເງິນນັ້ນມັນໝາຍເຖິງການຈັດຂວາງແຜນການ ຕໍ່ຫລັກການກຸ້ມຕົນເອງດ້ານເສດຖະກິດ. ໃນຕົວຈິງແທ້ນັ້ນ ຫລັກການກຸ້ມຕົນເອງດ້ານເສດຖະກິດເປັນວິທີຊຸກຍູ້ການສຳເລັດແຜນການຂອງລັດ.ແຕ່ໃຫ້ພວກເຮົາເຫັນນຳກັນວ່າ ໃນໄລຍະດຳເນີນແຜນການຫ້າປີຊຸດທີໜຶ່ງນັ້ນ ການກຸ້ມຕົນເອງດ້ານເສດຖະກິດນັ້ນ ມີລັກສະນະພິເສດຂອງ-ມັນ. ບັນຫາສັງຄົມແລະເສດຖະກິດ ຂອງການຮີດໃຫ້ ເປັນປະເທດອຸດສາຫະກຳນັ້ນ ມັນຮຽກຮ້ອງໃຫ້ມີການລວມສູນ ຊັບພະຍາກອນດ້ານການເງິນ. ການປ່ຽນແປງໂຄງຮ່າງການຜະລິດຂອງເສດຖະກິດ ຈະໄປໄວໄດ້ ກໍແຕ່ເມື່ອມີການລວມ ສູນ

ການເງິນແລະຈັດວາງການລົງທຶນແລະພ້ອມທັງການແຈກຢາຍເປັນແບບລວມສູນແຫລ່ງການເງິນຕໍ່ຄວາມຕ້ອງການ ໃນການກໍ່ສ້າງໃນໄລຍະສັ້ນ ແລະໄລຍະຍາວ.

ການສຳເລັດໂຄງການດັ່ງກ່າວໃນຕົວຈິງນັ້ນ ໃນໄລຍະ-ການເຮັດໃຫ້ເປັນປະເທດອຸດສາຫະກຳ ໄດ້ນຳໄປສູ່ການ ຈັດໃຫ້ເປັນລະບຽບ ຢ່າງເຄັ່ງຄັດ ບັນດາໜ່ວຍເສດຖະກິດ ເຂດກະລາດ ຂອງວິສາຫະກິດ ທີ່ກຸ້ມຕົນເອງດ້ານເສດຖະກິດ. ໃນກອງປະຊຸມລັດຖະກອນ ທົ່ວສະຫະພາບ ຂອງອຸດສາຫະກຳສັງຄົມນິຍົມ ໃນເດືອນມິນາ ປີ ໑໙໓໑ ແລະໃນກອງປະຊຸມ ພັກກອມມູນິດ ທົ່ວສະຫະພາບ (ໂບນເຊວິກ) ຄັ້ງທີ XVII ໃນເດືອນມັງກອນ ຫາເດືອນກຸມພາ ປີ ໑໙໓໔ ນັ້ນ ເພິ່ນໄດ້ມີການປະມານຕໍ່ນັກເສດຖະສາດ ບາງຈຳພວກທີ່ເຫັນຂະບວນການດັ່ງກ່າວ ແມ່ນການສິ້ນສຸດຂອງລະບອບເງິນຕາແລະແມ່ນການຂ້າມຜ່ານໄປສູ່ການແລກປ່ຽນ ວັດຖຸກັບວັດຖຸໂດຍກົງ ນັ້ນຢ່າງຮຸນແຮງທີ່ສຸດ.

ສະນັ້ນ ໃນໄລຍະປີ ໑໙໔໙ ຫາປີ ໑໙໓໐ ນັ້ນເພິ່ນໄດ້ດຳເນີນການປັບປຸງການຈັດຕັ້ງ ການຄຸ້ມຄອງໃໝ່. ຈຸດໃຈກາງຂອງການປັບປຸງດັ່ງກ່າວ ແມ່ນເພັ່ນແນໃສ່ຈັດຕັ້ງກຸ່ມອຸດສາຫະກຳ ທີ່ກຸ້ມຕົນເອງດ້ານເສດຖະກິດ, ທີ່ນຳໄປສູ່ການປ່ຽນແປງຂັ້ນພື້ນຖານ ຂອງລະບົບຄຸ້ມຄອງອຸດສາຫະກຳທັງໝົດ ຢູ່ໃນ-ເວລານັ້ນ.

ແຕ່ເມື່ອຕົກມາເຖິງກາງປີ ໑໙໓໐ ເພິ່ນຈຶ່ງເຫັນມີຄວາມ-

ບົກພ່ອງຢ່າງຮ້າຍແຮງປາກົດຂຶ້ນໃນວຽກງານຂອງກຸ່ມຊຸດສາ-
ທະກຳ ທີ່ກຸ້ມຕົນເອງດ້ານເສດຖະກິດ. ໃນການສືບສວນຂອງ
ຄະນະກຳມາທິການ ຂອງສະພາເສດຖະກິດແຫ່ງຊາດ ສູງສຸດ
ແລະອົງການອ້າຫລວງກວດກາ ຂອງກຳມະກອນແລະຊາວນາ
ການເຄື່ອນໄຫວ ຂອງກຸ່ມ ຊຸດສາທະກຳ ຕ່ຳແຜ່ນ ທົ່ວສະ-
ຫະພາບ ດ້ານການຜະລິດ ແລະ ດ້ານ ເສດຖະກິດ ນັ້ນ
ເພິ່ນໄດ້ພົບເຫັນ ຄວາມບົກພ່ອງ, ທີ່, ຄິດັ່ງ ຊຶ່ໃຫ້ເຫັນໃນ
ການປະຕິບັດຕົວຈິງນັ້ນ, ເປັນຄວາມບົກພ່ອງປະພຶດອັນ ດຽວ
ກັນກັບ ຢູ່ໃນກຸ່ມຊຸດສາທະກຳ ຫລາຍບ່ອນນັ້ນ ເຊັ່ນ:ກົງຈັກດັ່ງ
ກ່າວມັນເປັນກົງຈັກຄຸ້ມຄອງອັນໃຫຍ່ໂຕມະໂຫຖານແລະບໍ່ມີປະ
ສິດທິພາບ, ຂາດສິດແລະໜ້າທີ່ອັນຈະແຈ້ງ ລະຫວ່າງ ວຽກ
ງານບໍລິຫານ ກັບການປະຕິບັດງານ. ໃນການດຳເນີນການ-
ປະຕິຮູບ ໃນຕົວຂອງມັນນັ້ນ ໄດ້ມີປາກົດການກົດໜ່ວງຫຼາຍ
ຢ່າງ. ຕົວຢ່າງ ການຫັນປ່ຽນວິສາຫະກິດ ໃຫ້ເຂົ້າຢູ່ໃນຫລັກ
ການກຸ້ມຕົນເອງ ດ້ານເສດຖະກິດນັ້ນ ຕາມຄວາມຄາດ ຝັນ
ຂອງເຂົານັ້ນ ແມ່ນເປັນການກຸ້ມຕົນເອງ ທາງດ້ານເສດຖະ-
ກິດ ຢ່າງກວ້າງຂວາງທີ່ສຸດ, ແຕ່ຫລັງຈາກໄດ້ຈັດຕັ້ງກຸ່ມຊຸດ-
ສາທະກຳ ຂຶ້ນສຳເລັດແລ້ວ ພັດເປັນຮູບການກົງກັນ ຂ້າມ .
ການຂະຫຍາຍການຈຸ່ຽວຊານ ດ້ານການຜະລິດແລະການເກີດ
ມີຂະແໜງຊຸດສາທະກຳ ອັນໃຫມ່ນັ້ນ ມັນຮຽກຮ້ອງໃຫ້ມີການ
ຈັດຕັ້ງວຽກງານ ອັນມີປະສິດທິພາບ ໃນການປັບປຸງດ້ານເຕັກ
ໂນໂລຍີ ຂອງຊຸດສາທະກຳ, ແຕ່ຄວາມບົກພ່ອງອັນຫຼວງຫຼາຍ

ກ່າຍກອງ ທີ່ເພີ່ມພົບພໍ້ຢູ່ໃນວຽກງານຂອງກຸ່ມຊຸດສາຫະກຳນັ້ນ ໄດ້ກີດຂວາງການນຳພາ ຂະແຫນງຊຸດສາຫະກຳຢ່າງມີປະສິດທິພາບ. ກ່ຽວກັບບັນຫານີ້ ໄດ້ບົ່ງຢູ່ໃນມະຕິຂອງກອງປະຊຸມ-ໃຫຍ່ພັກ ກອມມູນິດທົ່ວສະຫະພາບ (ໂບນເຊວິກ)ຄັ້ງທີ XVII ແລະໃນຄຳປາໄສ ຂອງສະພາເສດຖະກິດແຫ່ງຊາດ ສູງສຸດ ຂອງ ສ.ສ.ສ.ຊ. "ກ່ຽວກັບພົນງານຂອງການຈັດຕັ້ງ ຄຸ້ມຄອງຊຸດສາຫະກຳທີ່ໄດ້ຮັບໃນເບື້ອງຕົ້ນ".ບັນຫາກ່ຽວກັບການແຍກກຸ່ມຊຸດສາຫະກຳໃຫ້ນ້ອຍລົງນັ້ນ ໄດ້ນຳສະເຫນີຂຶ້ນແລ້ວ. ຫຼັກການການຊ່ຽວຊານຂະແຫນງຊຸດສາຫະກຳນັ້ນໄດ້ອີງໃສ່ພື້ນຖານ ຂອງການແຍກກຸ່ມຊຸດສາຫະກຳດັ່ງກ່າວນັ້ນ.ນັບແຕ່ກາງທ້າຍປີ ໑໙໓໐ ມາ ເມື່ອສະພາ ແຮງງານ ແລະປ້ອງກັນ -ຊາດ ໄດ້ອະນຸຍາດໃຫ້ສະພາ ເສດຖະກິດແຫ່ງຊາດ ສູງສຸດ ແບ່ງກຸ່ມຊຸດສາຫະກຳ "ສະຫະຖ່ານຫີນ", "ເຫລັກກ້າ ", "ເຫລັກກ້າໂນໂວ" ແຕ່ລະກຸ່ມຊຸດສາຫະກຳດັ່ງກ່າວອອກເປັນສີ່ກຸ່ມ, ການປະຕິບັດດັ່ງກ່າວນີ້ ໃນເທດຈິງກໍແມ່ນ ຂະບວນການປັບປຸງ ຊະຫນາດຂອງກຸ່ມຊຸດສາຫະກຳ.ຫລັງຈາກນັ້ນກຸ່ມຊຸດສາຫະກຳດັ່ງກ່າວ ກໍບໍ່ໄດ້ເປັນອົງການ ຂະແຫນງຂອງໃຜລາວ ເອກະລາດອີກແລ້ວ. ເມື່ອເຂົາຫາກສູນເສຍສິດ ວາງແຜນຂະແຫນງຂອງເຂົາແລ້ວ ກຸ່ມຊຸດສາຫະກຳກໍບໍ່ສາມາດແກ້ໄຂເປັນລະບົບ ບັນຫາການຂະຫຍາຍເຕັກນິກໃນຂອບເຂດຂະແຫນງຂອງຕົນ. ອົງການຈັດຕັ້ງຊື້ຂາຍແລະພະລາທິການກໍໄດ້ຖືກແບ່ງອອກເຊັ່ນດຽວກັນ. ກອງປະຊຸມບັນດາຜູ້ອຳນວຍການ

ທີ່ໄດ້ຈັດຂຶ້ນໃນເດືອນມິຖຸນາ ປີ ໑໙໖໑ ນັ້ນໄດ້ເນັ້ນໜັກເຖິງການແກ້ໄຂຂະບວນການດັ່ງກ່າວຖືກຕ້ອງແລ້ວເພິ່ນຍັງສະເໜີໃຫ້ມີການເອົາໃຈໃສ່ ຕໍ່ການປັບປຸງກຸ່ມຊຸດສາຫະກຳຊ່ຽວຊານໃຫ້ແຄບເຂົ້າອີກດ້ວຍ. ຄຽງຂ້າງກັບການແຍກກຸ່ມ ຊຸດສາຫະກຳດັ່ງກ່າວ ເພິ່ນໄດ້ຈັດຕັ້ງອົງການຊື້ຂາຍ ແລະພະລາທິການພິເສດຂຶ້ນ ດັ່ງປະເພດ "ການຊື້ຂາຍເຫລັກກ້າ", "ຊີມັງ" ແລະອື່ນໆ ...

ເຖິງໄລຍະນັ້ນ ກຸ່ມຊຸດສາຫະກຳ ຍັງບໍ່ທັນມີຈຳນວນຫລວງຫລາຍປານໃດ ຄະນະປະທານສະພາເສດຖະກິດແຫ່ງຊາດສູງສຸດ ແລະກົມຄຸ້ມຄອງແຜນພັງເຕັກນິກແລະເສດຖະກິດ ຍັງສາມາດນຳພາໂດຍກົງໄດ້. ແຕ່ໃນເມື່ອຕົກມາເຖິງເດືອນພະຈິກ ປີ ໑໙໖໐ ຄະນະປະທານສະພາເສດຖະກິດແຫ່ງຊາດ ສູງສຸດຂອງ ສ.ສ.ສ.ຊ. ຕົກລົງແບ່ງກົມຄຸ້ມຄອງແຜນພັງ ເຕັກນິກແລະເສດຖະກິດອອກເປັນຫລາຍກົມກອງແລ້ວຈັດຕັ້ງ ໗ ພະແນກຂະແໜງ ແລະ ໑໘ ພະແນກ ບໍລິຫານຂຶ້ນແທນ.

ຫລັງຈາກນັ້ນບໍ່ພໍເທົ່າໃດເດືອນ ພະແນກຂະແໜງດັ່ງກ່າວກໍໄດ້ຖືກປັບປຸງໃໝ່ ເປັນກົມໃຫຍ່ເຊັ່ນ: ກົມໃຫຍ່ຊຸດສາຫະກຳ ກໍ່ສ້າງກົນຈັກ, ກົມໃຫຍ່ຊຸດສາຫະກຳໂລຫະແລະກົມອື່ນໆທີ່ຄ້າຍໆຄືກັນນັ້ນ. ລະບົບຄຸ້ມຄອງແບບສີ່ຂັ້ນ ກໍໄດ້ກຳເນີດຂຶ້ນ (ເຊັ່ນ: ວິສາຫະກິດ–ສະຫະບໍລິສັດ–ກຸ່ມຊຸດສາຫະກຳ– ກົມໃຫຍ່). ໃນຮູບການດັ່ງກ່າວ ທີ່ກຸ່ມຊຸດສາຫະກຳໄດ້ກາຍເປັນຂອດລະຫວ່າງກາງ ຢູ່ໃນລະບົບຄຸ້ມຄອງຊຸດສາຫະກຳ. ການ

ແບ່ງກຸ່ມຊຸດສາຫະກຳ ແລະ ການຈັດຕັ້ງກົມໃຫຍ່ຂຶ້ນ ຕາມຂະແໜງວິຊາການນັ້ນ ແມ່ນການລິເລີ່ມກ້າວໄປສູ່ການເຮັດໃຫ້ມີຊ່ຽວຊານ ຂະແໜງວິຊາການ ຂອງກົງຈັກຄຸ້ມຄອງສູນກາງ.

ແຕ່ ເຖິງຢ່າງໃດກໍຕາມ ການມີລະບົບຄຸ້ມຄອງແບບສີ່ຂັ້ນນີ້ ມັນກໍບໍ່ໄດ້ຕອບສະໜອງຕໍ່ການແກ້ໄຂບັນຫາການດັດສ້າງຊຸດ-ສາຫະກຳ ໃນຂັ້ນຕໍ່ໄປໄດ້. ການຂະຫຍາຍຂະໜາດ ຂອງການຜະລິດ, ການກຳເນີດຂະແໜງຊຸດສາຫະກຳອັນໃໝ່ຂຶ້ນ ແລະຄວາມສັບສົນໃນວຽກງານ ຊຸດສາຫະກຳທັງໝົດນັ້ນ ມັນໄດ້ເຮັດໃຫ້ສະພາເສດຖະກິດແຫ່ງຊາດສູງສຸດ ຂອງ ສ.ສ.-ສ.ຊ. ບໍ່ມີຄວາມສາມາດຊີ້ນຳ ຂະແໜງຊຸດສາຫະກຳ ທັງໝົດນັ້ນໄດ້ແລ້ວ. ການແກ້ໄຂບັນຫາດັ່ງກ່າວ ກ່ຽວກັບການກໍ່ສ້າງ ຊຸດສາຫະກຳຂະໜາດໃຫຍ່ ຂອງປະເທດຊາດນັ້ນມັນມີຄວາມຮຽກຮ້ອງຕ້ອງການ ໃຫ້ມີການເອົາໃຈໃສ່ ຢ່າງເປັນພິເສດ ຕໍ່ການຂະຫຍາຍຊຸດສາຫະກຳໜັກ. ເນື່ອງຈາກວ່າ ມັນເກີດມີຄວາມຮຽກຮ້ອງຕ້ອງການ ຢ່າງນອກຕົວດັ່ງກ່າວນັ້ນໃນມະຕິຂອງສູນກາງພັກກອມມູນິດ ທົ່ວສະຫະພາບ(ໂບນເຊວິກ) ສະບັບເດືອນກຸມພາ ປີ ໑໙໓໑ ນັ້ນ ກ່ຽວກັບ"ວຽກງານການຈັດຕັ້ງເສດຖະກິດ ໃນພາກປະຕິບັດຕົວຈິງ" ເພິ່ນໄດ້ຮັບຮູ້ຄວາມຈຳເປັນ ຕ້ອງແຍກຊຸດສາຫະກຳເບົາແລະຊຸດສາຫະກຳໄມ້ ອອກຈາກການຄຸ້ມຄອງ ຂອງສະພາເສດຖະກິດແຫ່ງຊາດສູງສຸດ, ແລະເພື່ອຊີ້ນຳນຳພາ ຂະແໜງຊຸດສາຫະກຳ ດັ່ງກ່າວນັ້ນ ເພິ່ນໄດ້ຈັດຕັ້ງກະຊວງປະຊາຊົນສະເພາະຂຶ້ນຕາງ-

ຫາກ.ອີງຕາມມະຕິຂອງຄະນະກຳມະການບໍລິຫານສູນກາງສະ
ພາ ໂຊວຽດ ແລະ ສະພາລັດຖະມົນຕີ ສ.ສ.ສ.ຊ. ສະບັບ
ລົງ ເດືອນ ມັງກອນ ປີ ໑໙໓໔ ນັ້ນ ເພິ່ນ ໄດ້ປັບປຸງ ການ
ຈັດຕັ້ງ ສະພາເສດຖະກິດແຫ່ງຊາດສູງສຸດ ຂອງສ.ສ.ສ.ຊ.
ໃຫ້ເປັນກະຊວງປະຊາຊົນ ວ່າການອຸດສາຫະກຳໜັກ.

ສະນັ້ນເມື່ອມາເຖິງທ້າຍຂອງແຜນການຫ້າປີຊຸດທຳອິດນັ້ນ-
ລະບົບຂະແໜງຄຸ້ມຄອງອຸດສາຫະກຳກໍໄດ້ຈັດຕັ້ງຂຶ້ນ.ໃນຂະ-
ແໜງອຸດສາຫະກຳນັ້ນເພິ່ນໄດ້ຈັດຕັ້ງວິສາຫະກິດອຸດສາຫະກຳ
ທີ່ເປັນຂອດພື້ນຖານຂຶ້ນ.ໃນໄລຍະກ່ອນສົງຄາມຂອງແຜນການ
ຫ້າປີ ຂັ້ນຕໍ່ໄປນັ້ນ ເພິ່ນໄດ້ດຳເນີນວຽກງານປັບປຸງລະບົບຄຸ້ມ
ຄອງ ຂອງຂະແໜງອຸດສາຫະກຳ ທີ່ມີຢູ່ນັ້ນຕໍ່ໄປ, ລົງເລິກ
ແລະຂະຫຍາຍການເຮັດໃຫ້ມີການຊ່ຽວຊານ ຂອງການຜະລິດ,
ຂະແໜງອຸດສາຫະກຳໃໝ່ກໍໄດ້ກຳເນີດເກີດຂຶ້ນຢ່າງບໍ່ຢຸດຢັ້ງ,
ລະດັບການຜະລິດອຸດສາຫະກຳ ຢູ່ໃນມາດຕາສ່ວນ ຂອງເສດ
ຖະກິດແຫ່ງຊາດທັງໝົດ ກໍໄດ້ເພີ່ມຂຶ້ນ.

ໝາຍເຫດ

ກະຊວງປະຊາຊົນແມ່ນອົງການສູນກາງຂອງຂະແໜງການສະເພາະຂອງການຄຸ້ມຄອງລັດຂອງສະຫະພັນສາທາລະນະລັດສັງຄົມນິຍົມໂຊວຽດລັດເຊຍ, ແລ້ວຕໍ່ມາກໍເປັນອົງການ ຄຸ້ມຄອງຂອງ ສ.ສ.ສ.ຊ.,ຂອງສາທາລະນະລັດ ສະຫະພາບແລະຂອງສາທາລະນະລັດປົກຄອງຕົນເອງ. ຢູ່ ສ.ສ.ສ.ຊ. ກະຊວງປະຊາຊົນໄດ້ຮັບການຈັດຕັ້ງຂຶ້ນໃນເດືອນຕຸລາປີ໑໙໑໗ ຫລັງຈາກໄຊຊະນະຂອງມະຫາປະຕິວັດສັງຄົມນິຍົມເດືອນຕຸລາ. ໃນເດືອນ ມີນາຂອງປີ ໑໙໔໖ ກະຊວງໄດ້ຮັບການ ປ່ຽນຊື່ເປັນກະຊວງແຫ່ງ ສ.ສ.ສ.ຊ.

ການກວດກາການຜະລິດແລະການຈຳໜ່າຍ ຜະລິດຕະພັນຂອງກຳມະກອນ-ແມ່ນລະບົບມາດຕາການ ຂອງຊົນຊັ້ນກຳມະກອນລັດເຊຍ, ທີ່ແນໃສ່ການກະກຽມ ການເຮັດໃຫ້ ການຜະລິດເປັນຂອງສັງຄົມ ສັງຄົມນິຍົມ. ຫລັງຈາກການລົບລ້າງລະບອບພະເຈົ້າຊາລົງແລ້ວ ໃນລະດູບານໃໝ່ຂອງປີ໑໙໑໗ມາດ

ຕາການນີ້ ໄດ້ນຳອອກມາໃຊ້ກ່ອນໝູ່. ໃນໄລຍະນັ້ນ ໜ້າທີ່ຕົ້ນຕໍຂອງການກວດກາຂອງກຳມະກອນ ແມ່ນການປົກປ້ອງຮັກສາອຸດສາຫະກຳໄວ້ ເພື່ອຫລີກເວັ້ນບໍ່ໃຫ້ພວກນາຍທຶນທຳລາຍມ້າງເພ, ຈຶ່ງພວກນາຍທຶນດັ່ງກ່າວຫວັງຈະບີບຄໍຫອຍ ຂອງການປະຕິວັດສັງຄົມນິຍົມ ທີ່ຍັງຕົກຢູ່ໃນສະພາບ ທີ່ເສດຖະກິດພັງທະລາຍຢູ່ນັ້ນ. ຫລັງຈາກໄຊຊະນະ ຂອງມະຫາປະຕິວັດເດືອນຕຸລາແລ້ວ ເພິ່ນຖືວ່າການກວດກາກຳມະກອນ ທີ່ເພິ່ນນິຍົມກັນໃຊ້ທົ່ວທຸກແຫ່ງຢູ່ນັ້ນ ເປັນມາດຕາການ,ທີ່ໃຊ້ຈຳກັດອຳນາດເສດຖະກິດຂອງພວກນາຍທຶນ ແລະນຳໄປສູ່ ການໂອນເອົາອຸດສາຫະກຳຂະໜາດໃຫຍ່,ທະນາຄານ, ການ ຂົນສົ່ງແລະການຄ້າຕ່າງປະເທດ ມາເປັນຂອງລັດ.

ການກວດກາກຳມະກອນ ໄດ້ມີຄວາມໝາຍອັນສຳຄັນ ໃນການຄ້ຳຈູນການຜະລິດ ໃນໄລຍະຕົ້ນຂອງການປະຕິວັດສັງຄົມນິຍົມ ທີ່ພວມຕົກຢູ່ໃນພາວະຫຍຸ້ງຍາກສັບສົນຢູ່ນັ້ນ ແລະ ພ້ອມທັງສະກັດກັ້ນການກໍ່ວິນາສະກຳຂອງພວກນາຍທຶນໄວ້ໄດ້.ເພິ່ນຖືວ່າອົງການຂອງການກວດກາກຳມະກອນ ເປັນໂຮງຮຽນຄຸ້ມຄອງວິສາຫະກິດ, ຄຸ້ມຄອງເສດຖະກິດຂອງຊົນຊັ້ນກຳມາຊີບ, ທີ່ໄດ້ນຳເອົາບົດຮຽນໃນການຈັດວາງອຸດສາຫະກຳ ອັນສຳຄັນມາໃຫ້ແກ່ຕົນ. ການກວດກາກຳມະກອນໄດ້ມີຄວາມໝາຍສຳຄັນໃນການກະກຽມ ແລະການດຳເນີນການໂອນອຸດສາຫະກຳຂະໜາດໃຫຍ່ມາເປັນຂອງລັດ.

ການກຸ້ມຕົນເອງດ້ານ**ເສດຖະກິດ** ການກຸ້ມຕົນເອງດ້ານການເງິນ ແມ່ນວິທີການເພື່ອດຳເນີນແຜນການເສດຖະກິດ ຂອງວິສາຫະກິດສັງຄົມນິຍົມ, ທີ່ອີງໃສ່ພື້ນຖານການກຸ້ມຕົນເອງດ້ານເສດຖະກິດ, ການນຳໃຊ້ການພົວພັນດ້ານເງິນຕາແລະສິນຄ້າ. ການກຸ້ມຕົນເອງດ້ານ**ເສດຖະກິດນັ້ນ**ສະແດງເຖິງ ການຕີລາຄາໃນຮູບການຈັບຈ່າຍດ້ານ**ເສດຖະກິດ**ແລະຜົນໄດ້ຮັບຈາກກິດຈະການດ້ານເສດຖະກິດ, ການຊົມເຊີຍລາຍຈ່າຍ ຂອງວິສາຫະກິດດ້ວຍລາຍໄດ້ຂອງຕົນເອງ, ຮັບປະກັນກິດຈະການໃຫ້ມີກຳໄລ, ຜົນປະໂຫຍດທາງດ້ານວັດຖຸແລະຄວາມຮັບຜິດຊອບຂອງວິສາຫະກິດ ແລະລັດຖະກອນຂອງເຂົາ.

ວິສາຫະກິດທີ່ກຸ້ມຕົນເອງ**ດ້ານເສດຖະກິດ**ນັ້ນ ແມ່ນວິສາຫະກິດທີ່ມີເອກະລາດທາງດ້ານບໍລິຫານວຽກງານເສດຖະກິດອັນຈຳກັດຢູ່ໃນຂອບເຂດແຜນການຂອງລັດ, ເພິ່ນໄດ້ກຳນົດ ທຶນຮອນທາງການເງິນແລະວັດຖຸກ້ອນໃດກ້ອນໜຶ່ງໃຫ້, ທີ່ຈຳເປັນເພື່ອຮັບໃຊ້ການເຄື່ອນໄຫວໃນການຜະລິດຂອງເຂົາ, ໄດ້ມອບຄວາມຮັບຜິດຊອບໃຫ້ເພື່ອປະຕິບັດແຜນການຜະລິດໃຫ້ສຳເລັດ, ການປະຢັດການໃຊ້ຈ່າຍທຶນຮອນທີ່ມີຢູ່, ປະຕິບັດການໃຫ້ ບຳເນັດແກ່ລັດຖະກອນຜູ້ດີເດັ່ນດ້ວຍວັດຖຸ; ຜົນປະໂຫຍດ ສ່ວນຕົວດ້ານວັດຖຸຂອງກຳມະກອນແຕ່ລະຄົນນັ້ນ ໄດ້ເຊື່ອມຕິດກັບ ຜົນ**ປະໂຫຍດຂອງການຈັດຕັ້ງຮວມໝູ່ທັງໝົດ**. ການກຸ້ມຕົນເອງ**ດ້ານການເງິນ** ມັນສົ່ງເສີມຄວາມພະຍາຍາມຈຸດຜ່ອນ ລາຄາຜົນຜະລິດແລະລາຍຈ່າຍໝູນວຽນລົງເລື້ອຍໆ. ການພົວພັນລະ

ຫວ່າງວິສາຫະກິດກັບລັດນັ້ນ ໄດ້ອີງໃສ່ຫລັກການສົມທົບການຊີ້ນຳແຜນການແບບລວມສູນ ດ້ວຍການໃຊ້ຫົວຄິດປະດິດສ້າງໃນລະດັບທ້ອງຖິ່ນນັ້ນ.

<u>ການເກັບເຂົ້າຊ່ວຍຊາດ</u>ແມ່ນວິທີຈັດຫາຜະລິດຕະພັນ ກະ-ເສດຂອງລັດໃນໄລຍະ "ກອມມູນິດແບບທະຫານ". ໃນສະພາບທີ່ເກີດສົງຄາມກາງເມືອງແລະເສດຖະກິດເພພັງຢູ່ນັ້ນ ອຳນາດໂຊວຽດບໍ່ໄດ້ມີສິນຄ້າອຸດສາຫະກຳ ຈຳນວນພຽງພໍເພື່ອຈະນຳໄປແລກປ່ຽນເອົາຜະລິດຕະພັນກະເສດໄດ້. ມີແຕ່ວິທີ ຈັດຫາເຄື່ອງບໍລິໂພກ ວິທີດຽວເພື່ອພະລາທິການບັນດາ ກຳມະກອນແລະແນວຫນ້າຄືໄດ້ແກ່ການເກັບເກນ ບັນດາເຄື່ອງ ບໍລິໂພກສ່ວນເສດເຫລືອທັງຫມົດເອົາຈາກຊາວນາ. ເພິ່ນໄດ້ປະຕິບັດການເກັບເຂົ້າຊ່ວຍຊາດຕາມຫລັກການຊິນຊຸນ. ແນ່ນອນຜູ້ທີ່ຖືກເກັບເກນຫນັກ ກໍແມ່ນບັນດາພວກຊາວນາຮັ່ງມີ ແລະບຸກຄົນທີ່ມີເສດຖະກິດອຸດົມສົມບູນ. ໃນການດຳເນີນ ການເກັບເຂົ້າຊ່ວຍຊາດ ລັດສັງຄົມນິຍົມໄດ້ເອົາພັນທະພາບກຳມະກອນຊາວນາຜູ້ອອກແຮງງານທາງການເມືອງ ແລະ ການທະຫານເປັນບ່ອນອີງ, ຊຶ່ງພວກເຂົາເຈົ້າມີຄວາມປາຖະຫນາ ອັນແຮງກ້າຢາກໄດ້ໄຊຊະນະຕໍ່ພວກນາຍທຶນ ແລະພວກເຈົ້າທີ່ດິນດັ່ງກ່າວ. ການເກັບເຂົ້າຊ່ວຍຊາດດັ່ງກ່າວ ໄດ້ສ້າງເງື່ອນໄຂ ອັນສະດວກເພື່ອລຳລຽງສະບຽງອາຫານແກ່ກອງທັບແລະກຳມະກອນພຽງພໍໄດ້ ແລະເພື່ອນຳເອົາໄຊຊະນະຕໍ່ພວກສັດຕູຂອງລັດສັງ

ຄົມນິຍົມມາໄດ້. ເຖິງຢ່າງໃດກໍຕາມວິທີການດັ່ງກ່າວບໍ່ໄດ້ຊຸກ **ຍູ້ ໃຫ້ພວກຊາວນາ ມີຄວາມສົນໃຈ ເພື່ອ ປັບປຸງ ຂະ-**ຫຍາຍເສດຖະກິດຂອງຕົນ ແຕ່ຢ່າງໃດ, ສະນັ້ນຫລັງຈາກສົນສຸດສົງຄາມກາງເມືອງແລ້ວ ວິທີນັ້ນກໍພຽງແຕ່ສະກັດກັ້ນ ການຂະຫຍາຍການຜະລິດກະສິກຳ. ໃນປີ ໑໙໒໑ ເພິ່ນຈຶ່ງປ່ຽນຈາກການເກັບເຂົ້າຊ່ວຍຊາດ ມາເປັນການເກັບພາສີກະສິກຳ.

ການປະຕິຮູບເງິນຕາໃນໄລຍະແຕ່ປີ ໑໙໒໒ ຫາ ໑໙໒໔. ການປັບປຸງຢູ່ໃນລະບົບເງິນຕາ, ຊຶ່ງລັດສັງຄົມນິຍົມໄດ້ຈັດຂຶ້ນເພື່ອຈູດປະສົງວາງຊີວິດເສດຖະກິດໃນປະເທດ ໃຫ້ປົກກະຕິ, ເຮັດໃຫ້ພາກສ່ວນການເງິນສັງຄົມນິຍົມແຂງແຮງ, ຍົກລະດັບຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານໃຫ້ສູງຂຶ້ນ. ການປະຕິຮູບດັ່ງກ່າວໄດ້ນຳການປ່ຽນເງິນເຟີ້ນັ້ນ ດ້ວຍເງິນສິນເຊື່ອທີ່ມີລາຄາໝັ້ນທ່ຽງທີ່ເພິ່ນຮຽກວ່າ " **ເງິນເປັນ໑໐ຮູບ** " ແລະ ດ້ວຍຫລຽນໂຊວຽດທີ່ມີລາຄາແລກປ່ຽນ ຄືກັນນັ້ນ. ການປະຕິ ຮູບເງິນຕາດັ່ງກ່າວ ໄດ້ນຳໄປສູ່ການສະຖຽນໝັ້ນ ຂອງເງິນຮູບແລະເຮັດໃຫ້ລະບົບໝູນວຽນຂອງເງິນຕາພາຍໃນ ປະເທດເຂັ້ມແຂງ ແລະໂດຍສະເພາະມັນໄດ້ອຳນວຍ ຄວາມສະດວກແກ່ການປະຕິບັດນະໂຍບາຍເສດຖະກິດໃໝ່, ການເຮັດ ໃຫ້ພາກສ່ວນເສດຖະກິດສັງຄົມນິຍົມແຂງແຮງ, ການຈັດວາງສາຍການພົວພັນດ້ານເສດຖະກິດລະຫວ່າງອຸດສາຫະກຳກັບກະສິກຳ.

ການປະຕິຮູບທຶນສິນເຊື່ອຢູ່ ສ.ສ.ສ.ຊ.-ໃນໄລຍະ ແຕ່ປີ ໑໙໓໐ ຫາປີ ໑໙໓໑ ນັ້ນ ເພິ່ນໄດ້ນຳການສິນເຊື່ອ ໂດຍກົງ

ໂດຍຜ່ານທະນາຄານລັດເຂົ້າມາໃຊ້ແທນກັບການສິນເຊື່ອການຄ້າທີ່ເພິ່ນເຄີຍປະຕິບັດກັນມາລະຫວ່າງວິສາຫະກິດດ້ວຍກັນນັ້ນ. ການນຳໃຊ້ວິທີການໃຫມ່ນີ້ ມັນໄດ້ສ້າງເງື່ອນໄຂ ອັນສະດວກເພື່ອເພີ່ມການກວດກາໂດຍເງິນຮູບໃນການເຄື່ອນໄຫວຂອງວິສາຫະກິດ. ຜົນໄດ້ຮັບຈາກການປະຕິຮູບດັ່ງກ່າວ ແມ່ນມັນໄດ້ເຮັດໃຫ້ທະນາຄານລັດກາຍເປັນສູນຈຳຫນ່າຍສິນເຊື່ອ ໄລຍະສັ້ນແກ່ວິສາຫະກິດ. ເພື່ອຄວາມສະດວກໃນການໃຫ້ເງິນແລະໃນການໃຫ້ກູ້ຢືມໄລຍະຍາວໃນການລົງທຶນນັ້ນ ເພິ່ນໄດ້ຈັດຕັ້ງທະນາຄານພິເສດຂຶ້ນເຊັ່ນ: ທະນາຄານອຸດສາຫະກຳ,ທະນາຄານກະເສດ, ທະນາຄານການຄ້າສູນກາງ ແລະທະນາຄານການຄ້າຕ່າງປະເທດ.

<u>ການລວມສູນປະຊາທິປະໄຕ</u>-ບັນຫານີ້ ແມ່ນທ່ານ ວ.ອີ. ເລນິນໄດ້ຄົ້ນພົບແລະໄດ້ວາງຫລັກການພື້ນຖານເສດຖະກິດສັງຄົມນິຍົມອອກ, ຊຶ່ງພື້ນຖານດັ່ງກ່າວ ໄດ້ມີການພົວພັນກັນ ກັບການຊີ້ນຳລັດແບບລວມສູນດ້ານເສດຖະກິດ ໂດຍໃຫ້ມີການຂະຫຍາຍການໃຊ້ຫົວຄິດປະດິດສ້າງ ຂອງມວນມະຫາຊົນ ຜູ້ອອກແຮງງານ, ໃນການຂະຫຍາຍການລິເລີ່ມປະດິດສ້າງ ຂອງໂຮງຈັກໂຮງງານ, ຂອງອົງການທ້ອງຖິ່ນ ແລະ ການຍົກລະດັບຄວາມຮັບຜິດຊອບຕໍ່ການສຳເລັດ ຂອງແຜນການລັດ.

<u>ການໂອນຊັບສິນບັດມາເປັນຂອງລັດແບບສັງຄົມນິຍົມ</u>-ການໂອນຊັບສິນບັດມາເປັນຂອງລັດແບບສັງຄົມນິຍົມນັ້ນ ແມ່ນການຍຶດກຳມະສິດຂອງຊົນຊັ້ນຜູ້ກົດຂີ່ຂູດຮີດ ແບບປະຕິວັດ ໂດຍລັດ

ຂອງຊົນຊັ້ນກຳມາຊີບ ແລ້ວຫັນປ່ຽນກຳມະສິດດັ່ງກ່າວ ເປັນຂອງລັດສັງຄົມນິຍົມ,ໝາຍຄວາມວ່າເປັນຊັບສົມບັດຂອງປວງຊົນທັງຊາດ. ການໂອນຊັບສົມບັດມາເປັນຂອງລັດແບບສັງຄົມນິຍົມ ເປັນຄວາມຮຽກຮ້ອງຕ້ອງການຢ່າງນອກຕົວ,ເປັນສ່ວນປະກອບອັນສຳຄັນທີ່ສຸດ ຂອງຂະບວນການປະຕິບັດ ໃນການຂ້າມຜ່ານຈາກລະບອບທຶນນິຍົມ ເຂົ້າສູ່ລະບອບສັງຄົມນິຍົມ . ການໂອນຊັບແບບສັງຄົມນິຍົມນີ້ ມັນລົບລ້າງການຍຶດຖື ກຳມະສິດຂອງນາຍທຶນ, ທຳລາຍການຄອບຄອງ ທາງດ້ານເສດຖະກິດຂອງຊົນຊັ້ນຜູ້ກົດຂີ່ຂູດຮີດ, ຈັດຕັ້ງໂຄງຮ່າງ ເສດຖະກິດແບບສັງຄົມນິຍົມ.

ທິດທາງ, ວິທີການແລະຈັງຫວະຂອງການໂອນເອົາພາຫະນະການຜະລິດຕົ້ນຕໍ ແບບສັງຄົມນິຍົມນັ້ນ ມັນຂຶ້ນກັບເງື່ອນໄຂປະຫວັດສາດ. ໃນ ສ.ສ.ສ.ຊ. ການໂອນເອົາ ພາຫະນະການຜະລິດຕົ້ນຕໍ ມາເປັນຂອງລັດນັ້ນ ໄດ້ເລີ່ມຂຶ້ນໃນທັນທີທັນໃດໂລດ ຫລັງຈາກມະຫາປະຕິວັດສັງຄົມນິຍົມ ເດືອນຕຸລາ.

ໃນທ່າມກາງການໂອນເອົາຊັບສິນ ຂອງພວກນາຍທຶນ ນັ້ນເພີ່ນໄດ້ນຳໃຊ້ການຍຶດຊັບ, ການເກນຊັບ ແລະການກັກຊັບ. ວິທີການທີ່ມີຄວາມໝາຍສຳຄັນພິເສດນັ້ນ ໄດ້ແກ່ການ ຍຶດຊັບຊຶ່ງແມ່ນການໂອນເອົາຊັບສົມບັດ ຂອງນາຍທຶນດ້ວຍການ ບັງຄັບແລະບໍ່ມີການທົດແທນຄືນແຕ່ຢ່າງໃດ ໃຫ້ເປັນຊັບ ສົມບັດຂອງລັດໂຊວຽດ. ການເກນຊັບ ກໍໄດ້ຮັບປະຕິບັດຢ່າງກວ້າງຂວາງເຊັ່ນດຽວກັນ, ຊຶ່ງວິທີນີ້ ມັນມີຄວາມແຕກຕ່າງກັບການ

ຍຶດຊັບຢູ່ບ່ອນວ່າ ເພິ່ນໄດ້ໃຊ້ຄ່າທົດແທນຄືນແກ່ຊັບສົມບັດທີ່ລັດໂອນເອົາໄປນັ້ນ. ມາດຕາການທີ່ເພິ່ນໃຊ້ໃນການ ກະກຽມໂອນເອົາຊັບສົມບັດຂອງນາຍທຶນນັ້ນ ເພິ່ນໄດ້ປະຕິບັດວິທີ ກັກຊັບຂອງວິສາຫະກິດຂອງນາຍທຶນໄວ້. ຊຶ່ງແມ່ນການຈຳກັດຫລືການເກືອດຫ້າມເຈົ້າຂອງຊັບຊົມໃຊ້ຊັບສິນຂອງເຂົາ ໂດຍມີລັດຖະບັນຍັດເປັນຂໍ້ຢັ້ງຢືນ.

ການໂອນອຸດສາຫະກຳຂະໜາດໃຫ່ຍ, ທະນາຄານ,ການຂົນສົ່ງ, ການຄ້າພາຍນອກນັ້ນ ມັນສະແດງເຖິງ ລັດໂຊວຽດໄດ້ທັບມ້າງອຳນາດເສດຖະກິດຂອງພວກນາຍທຶນ, ເປັນເຈົ້າເສດຖະກິດທີ່ເປັນປາຍແຫລມ, ຈັດຕັ້ງໂຄງຮ່າງ ເສດຖະກິດແລະສັງຄົມ ສັງຄົມນິຍົມຂຶ້ນ ໃນເສດຖະກິດແຫ່ງຊາດ.

<u>ການຮຸກຮານດ້ານທະຫານຂອງຕ່າງປະເທດ ແລະສົງຄາມກາງເມືອງຢູ່ ສ.ສ.ສ.ຊ. ໃນໄລຍະປີ ໑໙໑໘ ຫາ ໑໙໒໐.</u> ການບຸກໂຈມຕີດ້ານທະຫານ ຂອງບັນດາປະເທດ ຈັກກະພັດໂດຍມີການສົມທົບກັນກັບພວກຕ້ານການປະຕິວັດຂອງພວກນາຍທຶນ ແລະເຈົ້າທີ່ດິນລັດເຊຍຕໍ່ສາທາລະນະລັດໂຊວຽດ ທີ່ ຍັງອ່ອນນ້ອຍຢູ່ນັ້ນ ເພື່ອຫວັງຢາກດັບສູນອຳນາດລັດ ໂຊວຽດ , ສ້າງຕັ້ງອຳນາດນາຍທຶນຄືນ, ເຮັດໃຫ້ປະເທດລັດເຊຍ ເປັນເມືອງຂຶ້ນຂອງຈັກກະພັດຕ່າງດ້າວ. ຫລັງຈາກການລຸກຮືຂຶ້ນຕໍ່ສູ້ຢ່າງພິລະອາດຫານຂອງມວນຊົນຊາວກຳມະກອນແລະຊາວນາຂອງປະເທດລັດເຊຍ ເພື່ອຕ້ານກັບພວກຮຸກຮານ ແລະ ພວກທະຫານຂາວດັ່ງກ່າວ ການຮຸກຮານແລະສົງຄາມກາງເມືອງທີ່

ພວກເຂົາກໍຂຶ້ນນັ້ນ ກໍໄດ້ຍຸດຕິລົງຢ່າງບໍ່ມີວັນກັບຄືນໄດ້ອີກ. ຜູ້ຈັດຕັ້ງແລະນຳພາການຕໍ່ສູ້ຂອງຊາວຜູ້ອອກແຮງງານ ຕ້ານກັບສັດຕູຂອງຊາດນັ້ນ ໄດ້ແກ່ພັກກອມມູນິດ, ຊຶ່ງພາຍໃຕ້ການນຳພາຂອງພັກດັ່ງກ່າວ ບັນດາກຳມະກອນແລະຊາວນາ ໄດ້ປົກປ້ອງກັນໄຊຊະນະຂອງການປະຕິວັດສັງຄົມນິຍົມ ແລະ ສ້າງເງື່ອນໄຂອັນເໝາະສົມ ເພື່ອກໍ່ສ້າງລະບອບສັງຄົມນິຍົມ.

"ກ່ຽວກັບສະຫະກອນກະເສດ"-ບົດນິພົນຂອງທ່ານ ວ.ອີ.ເລນິນ, ທີ່ຂຽນຂຶ້ນໃນປີ ໑໙໒໓ ຊຶ່ງໃນນັ້ນ ເພິ່ນໄດ້ວາງຫຼັກສະມະແຜນການ ການຫັນປ່ຽນກະເສດແບບສັງຄົມນິຍົມອັນມະຫັດສະຈັນທີ່ສຸດ ດ້ວຍການດຶງດູດເອົາຊາວນາ ຜູ້ອອກແຮງງານເຂົ້າຮ່ວມໃນການກໍ່ສ້າງສັງຄົມນິຍົມ ໂດຍຈັດຕັ້ງໃຫ້ເປັນ ສະຫະກອນກະເສດດ້ວຍຄວາມສະໝັກໃຈ.

ກຳມະກອນຝ່າຍຄ້ານ-ແມ່ນພວກສະຫະຊີບ ອານາທິປະໄຕຕ້ານພັກ, ທີ່ເກີດຂຶ້ນໃນປີ ໑໙໒໐. ພວກນີ້ ບໍ່ເຫັນດີ ນຳບົດບາດຊີ້ນຳຂອງພັກກອມມູນິດ, ຂອງຄວາມໝາຍ ຜະເດັດການກຳມາຊີບໃນການກໍ່ສ້າງເສດຖະກິດແລະໄດ້ເອົາອົງການກຳມະບານໄປຕ້ານກັບພັກກອມມູນິດ ແລະລັດໂຊວຽດ. "ກຳມະກອນຝ່າຍຄ້ານ" ນີ້ ໄດ້ຖືກພັກກອມມູນິດຕີແຕກສະລຸຍພ່າຍໄປ.

ກຳມະສິດສັງຄົມນິຍົມ - ກຳມະສິດສັງຄົມນິຍົມແມ່ນກຳມະສິດຂອງສັງຄົມຕໍ່ພາຫະນະການຜະລິດ ແລະຕໍ່ອຸປະກອນ ໃຊ້ສອຍຕ່າງໆ (ເຄື່ອງອຸປະໂພກ).ກຳມະສິດສັງຄົມນິຍົມ ແມ່ນ

ພື້ນຖານເສດຖະກິດຂອງສັງຄົມ ສັງຄົມນິຍົມ ແລະ ຂອງການພົວພັນການຜະລິດຂອງມັນ. ກຳມະສິດດັ່ງກ່າວ ເກີດຂຶ້ນພາຍຫລັງການປະຕິວັດສັງຄົມນິຍົມ ໂດຍການນຳເອົາກຳມະສິດເອກະເທດຂະຫນາດໃຫຍ່ຂອງນາຍທຶນ ມາເປັນຂອງສ່ວນລວມ, ແລະການຫັນປຽນກຳມະສິດເອກະເທດ ຂະຫນາດນ້ອຍ ຂອງຊາວນາແລະຂອງນາຍຊ່າງຫັດຖະກຳໂດຍມີການເຮັດໃຫ້ເສດຖະກິດຂອງພວກເຂົາເປັນສະຫະກອນດ້ວຍຄວາມສະຫມັກໃຈ.

ການຄອບງຳກຳມະສິດສັງຄົມ ແມ່ນການສິ້ນສຸດ ການກົດຂີ່ຂູດຮີດຄົນດ້ວຍຄົນ, ປົດປ່ອຍຄົນອອກຈາກທຸກຮູບການກົດຂີ່ຂົ່ມເຫັງແລະການ**ບໍ່ເປັນເອກະລາດທາງດ້ານສັງຄົມ**ແລະອຳນວຍຄວາມສະດວກອັນກວ້າງຂວາງ ເພື່ອວາງ ແຜນການ, ເພື່ອການຂະຫຍາຍການຜະລິດຂອງສັງຄົມຢ່າງບໍ່ຢຸດຢັ້ງ, ຍົກລະດັບສະມັດຖະພາບແຮງງານຂອງສັງຄົມໃຫ້ສູງຂຶ້ນ, ເຮັດໃຫ້ການອິ່ມຫນຳສຳລານຂອງຊາວຜູ້ອອກແຮງງານ ເພີ່ມຂຶ້ນ ເທື່ອລະກ້າວ, ເຮັດໃຫ້ບຸກຄະລິກລັກສະນະທຸກໆຄົນ ມີຄວາມມ່ວນຊື່ນເບີກບານ.

<u>ກຳມະສິດເອກະຊົນ</u> - ແມ່ນຮູບການຍຶດຖືກຳມະສິດ ຕໍ່ພາຫະນະການຜະລິດ ແລະສິ່ງຂອງອຸປະໂພກທີ່ເປັນຂອງບຸກຄົນ. ກຳມະສິດເອກະຊົນ ໄດ້ເກີດຂຶ້ນໃນໄລຍະລົ້ມລະລາຍຂອງລະບອບສະຫະຊີບປະຖົມບູຮານ ແລະການກຳເນີດສັງຄົມຂ້າທາດ. ວິທີການຜະລິດຂອງລະບອບຂ້າທາດ, ຂອງລະບອບ ສັກດີນາ ແລະຂອງນາຍທຶນນັ້ນ ໄດ້ອີງໃສ່ພື້ນຖານກຳມະສິດເອກະຊົນ.

ໃນລະບອບທຶນນິຍົມນັ້ນ ກຳມະສິດເອກະຊົນ ໄດ້ຮັບການ ຂະຫຍາຍຕົວຢ່າງກວ້າງຂວາງ, ໃນເມື່ອຄວາມຮັ່ງມີຂອງສັງຄົມເປັນກ້ອນອັນໃຫ່ຍຫລວງ ແລະກ່ອນອື່ນຫມົດ ກໍແມ່ນພາຫະນະການຜະລິດໄດ້ເຕົ້າໂຮມເຂົ້າໃນກຳມືຂອງບຸກຄົນ ຈຳ ພວກເຈົ້າກຳມະສິດທີ່ມີຈຳນວນນ້ອຍ ເຊິ່ງໄດ້ກົດຂີ່ຂູດຮີດມວນຊົນຜູ້ອອກແຮງງານທີ່ມີຈຳນວນຫລວງຫລາຍ ກ່າຍກອງນັ້ນ . ໃນເງື່ອນໄຂຂອງລະບອບທຶນນິຍົມ ການເກີດມີການຜະລິດ ເປັນຂອງສ່ວນລວມນັ້ນ ໄດ້ເຮັດໃຫ້ມີຂໍ້ຂັດແຍ້ງ ທີ່ເປັນປໍລະປັກກັບກຳມະສິດເອກະຊົນດັ່ງກ່າວ; ກຳລັງການຜະລິດໄດ້ເຕີບໃຫ່ຍຂະຫຍາຍຕົວຂຶ້ນເຖິງລະດັບ,ຊຶ່ງມັນໄດ້ລື່ນກາຍຂອບເຂດ ດັ່ງກ່າວ ແລ້ວມັນຈຶ່ງຮຽກຮ້ອງໃຫ້ສ້າງຕັ້ງເປັນກຳມະສິດລວມຫມູ່ຕໍ່ພາຫະນະການຜະລິດ. ຄວາມຈຳເປັນຕ້ອງກຳຈັດກຳມະສິດເອກະຊົນນັ້ນ ມັນເປັນສິ່ງຮີບຮ້ອນທີ່ສຸດ.ມະຫາປະຕິວັດສັງຄົມນິຍົມ ເດືອນຕຸລາຢູ່ ສ.ສ.ສ.ຊ. ໄດ້ສະແດງໃຫ້ເຫັນ ຢ່າງຈະແຈ້ງເປັນປະຫວັດສາດກ່ຽວກັບກຳມະສິດເອກະຊົນ ທີ່ມີລັກສະນະຊົ່ວຄາວ. ຫລັງຈາກການປະຕິວັດສັງຄົມນິຍົມ ສຳເລັດລົງແລ້ວ ກຳມະສິດເອກະຊົນ ຕໍ່ພາຫະນະການຜະລິດນັ້ນ ໄດ້ຖືກຕັດຂາດອອກຈາກນາຍທຶນແລ້ວເພີ່ນໄດ້ຫັນປ່ຽນໃຫ້ເປັນກຳມະສິດລວມຫມູ່ ໂດຍການໂອນເອົາມາເປັນຂອງລັດ. ກຳມະສິດສ່ວນຕົວຂອງຊາວນາ, ນາຍຊ່າງຫັດຖະກຳ,ທີ່ກຳເນີດຂຶ້ນຈາກການອອກແຮງງານຂອງບຸກຄົນນັ້ນ ໄດ້ຫັນປ່ຽນ ໃຫ້ເປັນກຳມະສິດສັງຄົມນິຍົມ ໂດຍການຈັດເສດຖະກິດດັ່ງກ່າວ ໃຫ້

ເປັນສະຫະກອນກະເສດດ້ວຍຄວາມສະໝັກໃຈຕື່ມຕື່ມ.

ກອມມູນິດແບບທະຫານ-ນະໂຍບາຍເສດຖະກິດຂອງລັດຈີນ ຈີນກຳມາຈີບ ໃນໄລຍະສົງຄາມກາງເມືອງແລະການຮຸກຮານດ້ານທະຫານຂອງຕ່າງດ້າວໃນປີ ໑໙໑໘ ຫາ ໑໙໒໐ ຊຶ່ງເວລານັ້ນ ເງື່ອນໄຂທາງດ້ານເສດຖະກິດຊຸດໂຊມແລະຂາດເຂີນ ຈັບພະຍາກອນ. ເພິ່ນໄດ້ອີງໃສ່ບົນພື້ນຖານ ຂອງພັນທະພາບດ້ານທະຫານແລະດ້ານການເມືອງຂອງຈີນຈຸ້ນກຳມະກອນ ກັບ ຊາວນາ ເພື່ອຕໍ່ສູ້ຕ້ານກັບພວກສັດຕູ. ການດຳເນີນນະໂຍບາຍ "ກອມມູນິດແບບທະຫານ" ມັນໄດ້ສະແດງເຖິງຄວາມຈຳເປັນຕ້ອງປຸກລະດົມຂົນຂວາຍເອົາຈັບສິນຂອງປະເທດທັງໝົດເພື່ອຮັບໃຊ້ແນວໜ້າ. ເພິ່ນໄດ້ຈັດຕັ້ງຂະບວນອອກແຮງງານລວມສຳລັບຜູ້ທີ່ມີຄວາມສາມາດອອກແຮງງານໄດ້; ໃນຈຸດປະສົງພະລາທິການຊາວກຳມະກອນ ແລະກອງທັບນັ້ນ ເພິ່ນໄດ້ ວາງການເກັບເຂົ້າຊ່ວຍຊາດ,ທີ່ໄດ້ມາຈາກຂອງເສດເຫຼືອ ຂອງເຄື່ອງບໍລິໂພກຂອງຊາວນາ ທີ່ມອບໃຫ້ແກ່ລັດນັ້ນ.ເພິ່ນໄດ້ຮົບໂຮມເອົາອຸດສາຫະກຳຂະໜາດໃຫຍ່,ຂະໜາດກາງທັງໝົດພ້ອມດ້ວຍບາງພາກສ່ວນຂອງອຸດສາຫະກຳຂະໜາດນ້ອຍເຂົ້າຢູ່ໃນກຳມືຂອງລັດ; ການຄຸ້ມຄອງອຸດສາຫະກຳດັ່ງກ່າວ ໄດ້ລວມສູນຢູ່ໃນອົງການສູນກາງ, ທີ່ດຳເນີນ ການຈັດຫາ ເຊື້ອເພີງ, ສັດຖຸດິບ, ວັດຖຸປະກອນ ແກ່ອຸດສາຫະກຳ,ແລະພ້ອມທັງກຳກັບການຈຳໜ່າຍຜະລິດຕະພັນທີ່ສຳເລັດຮູບຕາມໃບສັ່ງຈ່າຍໂດຍປາສະຈາກການຊຳລະດ້ວຍເງິນຕາ. ການພະລາທິ

ການສົ່ງຂອງໃຊ້ສອຍແກ່ປະຊາຊົນໃນຕົວເມືອງນັ້ນ ເພິ່ນໄດ້ນຳໃຊ້ໃບບົງ, ຊຶ່ງການປະຕິບັດດັ່ງກ່າວ ມັນເປັນທີ່ນິຍົມກັນໃຊ້ຢູ່ພາຍໃນໝູ່ຊາວກຳມະກອນ. ເພິ່ນໄດ້ເກືອດຫ້າມ ການຄ້າຂາຍເອກະເທດ ບັນດາເຄື່ອງບໍລິໂພກແລະສິ່ງຂອງຍຸດທະສາດ, ປະເພດຕ່າງໆ, ແລະເພື່ອຮັບປະກັນນັ້ນ ລັດໄດ້ ຈັດຕັ້ງການຜູກຂາດການຄ້າເຂົ້າຈ້ອນ.

ນະໂຍບາຍ "ກອມມູນິດແບບທະຫານ" ນີ້ ໄດ້ຮັບປະກັນໄຊຊະນະແກ່ລັດຊົນຊັ້ນກຳມາຊີບ ໃນເວລາເກີດສົງຄາມ ກາງເມືອງນັ້ນຫຼັງຈາກສົງຄາມກາງເມືອງສິ້ນສຸດລົງແລ້ວເພິ່ນກໍໄດ້ຍຸດຕິນະໂຍບາຍດັ່ງກ່າວ ແລະອຳນາດໂຊວຽດກໍໄດ້ກ້າວເຂົ້າສູ່ການປະຕິບັດນະໂຍບາຍເສດຖະກິດໃໝ່ (ແນບ).

ແຂວງ (ໃນລະບອບຂອງພວກພະເຈົ້າຊາ) - ສ່ວນແບ່ງການປົກຄອງແລະເສດຖະກິດຂອງລັດເຊຍ. ການ ແບ່ງເປັນແຂວງແບບນີ້ ໄດ້ຮັກສາໄວ້ຢູ່ໃນສະໄໝຕົ້ນຂອງອຳນາດ ໂຊວຽດ. ໃນເມື່ອມາເຖິງປີ ໑໙໒໔ ຫາ ໑໙໒໙ ນັ້ນຫຼັງຈາກເພິ່ນໄດ້ແບ່ງປັນເຂດປົກຄອງຂອງ ສ.ສ.ສ.ຊ. ຂອງແຂວງ (ໃນລະບອບຂອງພວກພະເຈົ້າຊາ) ໄດ້ປ່ຽນເປັນແຂວງ(ໂຊວຽດ) ແລະເຂດ.

ຄະນະກຳມະການບໍລິຫານສູນກາງ ສ.ສ.ສ.ຊ. ແລະສະຫະພັນສາທາລະນະລັດ-ແມ່ນອົງການປົກຄອງ ແລະລັດຖະບັນຍັດຂອງອຳນາດໃນໄລຍະລະຫວ່າງການສ້າງຕັ້ງ ສ.ສ.ສ.ຊ. ໃນປີ ໑໙໒໔ ແລະການຮັບຮອງເອົາລັດຖະທຳມະນູນ ສ.ສ.

ສ.ຊ. ໃນປີ ໑໙໗໗.

<u>ຄະນະກຳມະການບໍລິຫານສູນກາງທົ່ວລັດເຊຍ</u> - ແມ່ນອົງການນິຕິບັນຍັດແລະບໍລິຫານສູງສຸດຂອງສະຫະພັນສາທາລະນະລັດສັງຄົມນິຍົມໂຊວຽດລັດເຊຍ ທີ່ເພິ່ນດຳເນີນໄປ ຈົນເຖິງການຮັບຮອງເອົາລັດຖະທຳມະນູນ ສ.ສ.ສ.ຊ.ໃນປີ ໑໙໗໗.

ຄະນະກຳມະການອົງການກຳມະບານ ປະຈຳໂຮງຈັກໂຮງງານ-ຄະນະກຳມະການອົງການກຳມະບານປະຈຳໂຮງ ຈັກໂຮງງານແມ່ນອົງການຂອງການຈັດຕັ້ງອົງການກຳມະບານຂັ້ນພື້ນຖານທີ່ສຸດ, ທີ່ໄດ້ຮັບການເລືອກຕັ້ງຂຶ້ນ ເພື່ອປະຕິບັດວຽກງານປະຈຳວັນຂອງອົງການກຳມະບານ ໃນວິສາຫະກິດອຸດສາຫະກຳ.

<u>ຄະນະກຳມາທິການກວດກາສູນກາງ ແລະ ຄະນະກວດກາຂອງກຳມະກອນຊາວນາ</u> - ຄະນະກຳມາທິການກວດກາ ສູນກາງແມ່ນອົງການກວດກາຂອງພັກທີ່ຈັດຕັ້ງຂຶ້ນ ໃນກອງປະຊຸມໃຫຍ່ຂອງພັກຄັ້ງທີ **X** ໃນປີ ໑໙໒໑. ໃນກອງປະຊຸມໃຫຍ່ຂອງພັກຄັ້ງທີ **XII** ໃນປີ ໑໙໒໓ ນັ້ນ ເພິ່ນໄດ້ຈັດຕັ້ງອົງການປະສົມພັກແລະລັດ ເພື່ອປົກປັກຮັກສາ ຄວາມເປັນອັນໜຶ່ງອັນດຽວຂອງພັກ, ເຮັດໃຫ້ລະບຽບການຂອງພັກ ແລະ ລັດເຂັ້ມແຂງ, ປັບປຸງວຽກງານຂອງກົງຈັກລັດໂຊວຽດ. ໃນກອງປະຊຸມໃຫຍ່ຂອງພັກຄັ້ງທີ **XVII** ໃນປີ ໑໙໓໔ ນັ້ນ ຄະນະກຳມາທິການດັ່ງກ່າວໄດ້ປັບປຸງໃໝ່ເປັນຄະນະກຳມາທິການກວດກາພັກແລະໂຊວຽດ. ກອງປະຊຸມໃຫຍ່ຂອງພັກຄັ້ງທີ **XIX** ໃນປີ

໑໙໕໔ ໄດ້ປັບປຸງຄະນະກຳມາທິການກວດກາພັກ ເປັນຄະນະກຳມະການກວດກາພັກ.

<u>ຄະນະກຳມາທິການແຜນພັງແຫ່ງຊາດ</u> -ແມ່ນອົງການວິທະຍາສາດແຜນພັງເສດຖະກິດ ຂອງປະເທດ. ໃນເບື້ອງຕົ້ນໜ້າທີ່ຂອງການວາງແຜນເສດຖະກິດແຫ່ງຊາດ ພາຍໃຕ້ການຊີ້ນຳນຳພາຂອງພັກກອມມູນິດ ແມ່ນຢູ່ນຳສະພາເສດຖະກິດ ແຫ່ງຊາດສູງສຸດ. ໃນປີ ໑໙໒໐ ນັ້ນ ເພິ່ນໄດ້ຈັດຕັ້ງຄະນະກຳມາທິການລັດຊົ່ວ ເພື່ອຂຶ້ນແຜນການຂະຫຍາຍຕາໜ່າງໄຟຟ້າ ຢູ່ລັດເຊຍ.ຄະນະກຳມາທິການແຜນພັງແຫ່ງຊາດໄດ້ຮັບການແຕ່ງຕັ້ງຂຶ້ນໂດຍດຳລັດຂອງສະພາລັດຖະມົນຕີປະຊາຊົນໃນປີ໑໙໒໑ ເປັນຄະນະກຳມາທິການແຜນພັງແຫ່ງຊາດເຂົ້າຢູ່ໃນ ສະພາແຮງງານແລະປ້ອງກັນຊາດ ເພື່ອ "ຮ່າງແຜນການ ເສດຖະກິດລັດທັງໝົດ ໂດຍອີງໃສ່ຫລັກການທີ່ຕົກລົງຢູ່ໃນກອງປະຊຸມສະພາໂຊວຽດຂະຫຍາຍຕາໜ່າງໄຟຟ້າຄັ້ງທີVIIIແລະເພື່ອຕິດຕາມການປະຕິບັດແຜນການດັ່ງກ່າວນັ້ນ". ໃນເມື່ອເສດຖະກິດສັງຄົມນິຍົມ ໄດ້ເຂັ້ມແຂງແລະໄດ້ຮັບການຂະຫຍາຍ ຕົວແລ້ວ ແລະໄດ້ມີຂະແໜງການຜະລິດໃໝ່ເກີດຂຶ້ນນັ້ນ ໜ້າທີ່ຂອງຄະນະກຳມາທິການແຜນພັງແຫ່ງຊາດ ໄດ້ຂະຫຍາຍອອກຢ່າງກວ້າງຂວາງ ແລະໄດ້ລົງເລິກຕາມຂະແໜງການຜະລິດດັ່ງກ່າວ. ປະຈຸບັນ ຄະນະກຳມາທິການແຜນພັງ ແຫ່ງ ຊາດແມ່ນຄະນະກຳມະການວາງແຜນຂອງລັດ ປະຈຳສະພາລັດຖະມົນຕີ ສ.ສ.ສ.ຊ.

ຄະນະກຳມາທິການພິເສດຕ້ານກັບພວກຝືນປະຕິວັດ ແລະ ພວກກໍ່ວິນາສະກຳ ແມ່ນອົງການຂອງພະເດັດການ ກຳມາຊີບ ກ່ຽວກັບຄວາມປອດໄພຂອງລັດຂອງສາທາລະນະລັດໂຊວຽດ. ຄະນະກຳມາທິການນີ້ ໄດ້ຈັດຕັ້ງຂຶ້ນໃນເດືອນ ທັນວາປີ໑໙໑໗. ໃນເດືອນກຸມພາປີ ໑໙໒໒ ຄະນະກຳມາທິການນີ້ ໄດ້ຮັບການ ປັບປຸງໃໝ່ເປັນກົມການເມືອງໃຫຍ່. ຫຼັງຈາກສ້າງຕັ້ງສ.ສ.ສ. ຊ. ແລ້ວ ກົມການເມືອງໃຫຍ່ ກໍໄດ້ຮັບການປັບປຸງໃໝ່ເປັນ ພະແນກກົມການເມືອງໃນປີ ໑໙໓໔ ກໍໄດ້ເຂົ້າຢູ່ ໃນກະຊວງ ປະຊາຊົນວ່າການພາຍໃນ.

ໂຄງການຈັດຕັ້ງສະຫະກອນກະເສດ ຂອງທ່ານ ວ.ອີ.ເລ ນິນ - ແມ່ນແຜນການປ່ຽນແປງແບບສັງຄົມນິຍົມຂອງເສດຖະ ກິດຊາວນາເອກະເທດຂະໜາດນ້ອຍໂດຍການຈັດຕັ້ງໃຫ້ເປັນ ສະຫະກອນກະເສດແບບສະໝັກໃຈ. ໂຄງການດັ່ງກ່າວແມ່ນ ທ່ານວ.ອີ.ເລນິນ ເປັນຜູ້ວາງອອກໃນບົດນິພົນ ຂອງ ເພິ່ນ "ກ່ຽວກັບສະຫະກອນກະເສດ", "ພາສີເຄື່ອງບໍລິໂພກ".

ໂຄງການສະຫະກອນກະເສດນີ້ ເກີດມາຈາກ ຄວາມ ຈຳ ເປັນຂອງພັນທະພາບຊົນຊັ້ນກຳມະກອນ ແລະຊາວນາເພື່ອຜົນ ປະໂຫຍດການກໍ່ສ້າງລະບອບສັງຄົມນິຍົມ.

ເງື່ອນໄຂຕັດສິນຊີ້ຂາດ ເພື່ອປະຕິບັດໂຄງການສະຫະກອນ ກະເສດນັ້ນ ໄດ້ແກ່ໄຊຊະນະຂອງການປະຕິວັດ ສັງຄົມນິຍົມ, ພະເດັດການກຳມາຊີບ, ການຍຶດຖືເອົາເສດຖະກິດ ທີ່ ເປັນ ປາຍແຫລມ ໂດຍລັດສັງຄົມນິຍົມ. ໃນເງື່ອນໄຂດັ່ງກ່າວ ສະ

ຫະກອນກະເສດເປັນຮູບການເສດຖະກິດສັງຄົມນິຍົມ.

ພາຍໃຕ້ເງື່ອນໄຂຂອງຜະເດັດການກຳມາຊີບນັ້ນ ສະຫະກອນກະເສດ ເປັນເສັ້ນທາງອັນດຽວ ທີ່ອາດສາມາດ ດູດດຶງເອົາຊາວນາຜູ້ອອກແຮງງານ ເຂົ້າຮັບໃຊ້ການກໍ່ສ້າງສັງຄົມນິຍົມເທື່ອລະກ້າວ. ມັນເປັນຮູບການຂອງການຂ້າມຜ່ານ ໄປສູ່ການກໍ່ສ້າງລະບອບສັງຄົມນິຍົມ ທີ່ບັນດາຊາວນາ ອັນຫລວງຫລາຍຈະເຂົ້າໃຈບັນຫາໄດ້ດີກວ່າ ແລະຈະສາມາດເຂົ້າຮ່ວມນຳໄດ້. ແຜນການດັ່ງກ່າວໄດ້ວາງໄວ້ລ່ວງຫນ້າກ່ຽວກັບການຂະຫຍາຍຮູບການສະຫະກອນກະເສດທຸກຢ່າງເຊັ່ນ: ເລີ່ມຈາກຮູບການພະລາທິການແລະຮູບການຊື້ຂາຍ ແບບກະທັດລັດ ຈົນເຖິງຮູບການສະຫະກອນການຜະລິດປະເພດຕ່າງໆ.ຫລັກການອັນສຳຄັນກວ່າຫມູ່ຂອງການຈັດຕັ້ງສະຫະກອນກະເສດ ຂອງຊາວນາຜູ້ອອກແຮງງານນັ້ນ ແມ່ນຄວາມ ສະຫມັກໃຈ.ໂຄງການສະຫະກອນກະເສດທີ່ໄດ້ດຳເນີນ ໂດຍພັກກອມມູນິດ ໃນການຕໍ່ສູ້ຊົນຊັ້ນຢ່າງເອົາເປັນເອົາຕາຍ ກັບພວກນາຍທຶນ ໃນທ່າມກາງການຈັດຕັ້ງກຸ່ມລວມຫມູ່ກະເສດສັງຄົມນິຍົມ.

<u>ໂຄງຮ່າງສັງຄົມນິຍົມ, ພໍ່ຄ້ານ້ອຍແລະນາຍທຶນ</u> ແມ່ນໂຄງຮ່າງເສດຖະກິດແລະສັງຄົມອັນພື້ນຖານ,ທີ່ບອກລັກສະນະເສດຖະກິດຂອງໄລຍະຂ້າມຜ່ານຈາກລະບອບທຶນນິຍົມ ເຂົ້າສູ່ ລະບອບສັງຄົມນິຍົມ. ໃນສະຫະພາບໂຊວຽດຄຽງຄູ່ກັບໂຄງຮ່າງເສດຖະກິດຂອງໄລຍະຂ້າມຜ່ານນັ້ນ ຍັງມີເສດຖະກິດຊາວນາຮາກຖານແລະເສດຖະກິດຂອງນາຍທຶນແຫ່ງຊາດອີກ.

ໂຄງຮ່າງເສດຖະກິດສັງຄົມນິຍົມ ເຕົ້າໂຮມບັນດາວິສາຫະກິດລັດ, ທີ່ເກີດຂຶ້ນຫລັງຈາກໄດ້ນຳເອົາພາຫະນະການຜະລິດເຂົ້າເປັນຂອງສັງຄົມ ສັງຄົມນິຍົມ, ຊຶ່ງພາຫະນະດັ່ງກ່າວໄດ້ຢູ່ໃນກຳມະສິດເອກະຊົນຂອງຊົນຊັ້ນຜູ້ກົດຂີ່ຂູດຮີດ, ແລະຢູ່ໃນວິສາຫະກິດລວມໝູ່, ທີ່ໄດ້ປະກອບຂຶ້ນໂດຍການໂຮມພາກສ່ວນຊາວນາ ແລະນາຍຊ່າງຫັດຖະກຳ ເຂົ້າເປັນຮູບການ ສະຫະກອນແບບຕ່າງໆ ໂດຍຄວາມສະໝັກໃຈ.

ໂຄງຮ່າງເສດຖະກິດພໍ່ຄ້ານ້ອຍ ໄດ້ແກ່ເສດຖະກິດການຜະລິດສິນຄ້າຍ່ອຍເຊັ່ນ: ຊາວນາ, ນາຍຊ່າງຫັດຖະກຳ, ຊຶ່ງການຜະລິດດັ່ງກ່າວມາຈາກກຳມະສິດເອກະຊົນແລະແຮງງານຂອງບຸກຄົນ. ໃນ ສ.ສ.ສ.ຊ. ໂຄງຮ່າງເສດຖະກິດ ພໍ່ຄ້ານ້ອຍມີຢູ່ໃນໄລຍະຕົ້ນຂອງໄລຍະຂ້າມຜ່ານ ຈາກລະບອບທຶນນິຍົມເຂົ້າສູ່ລະບອບສັງຄົມນິຍົມ ໄດ້ກວມພົນລະເມືອງ ຈຳນວນອັນຫລວງຫລາຍແລະມີບົດບາດອັນສຳຄັນ ໃນເສດຖະກິດແຫ່ງຊາດ.

ໂຄງຮ່າງເສດຖະກິດນາຍທຶນປະກອບດ້ວຍບັນດາ ວິສາຫະກິດຂອງນາຍທຶນທີ່ຢູ່ໃນຕົວເມືອງແລະຕາມໝູ່ບ້ານຕ່າງໆນັ້ນ. ໃນຕົວເມືອງໂຄງຮ່າງເສດຖະກິດດັ່ງກ່າວ ມັນໄດ້ ສະ ແດງອອກແມ່ນບັນດາວິສາຫະກິດຊູດສາຫະກຳເອກະເທດ, ສ່ວນຢູ່ໃນບ້ານຕ່າງໆນັ້ນ ໄດ້ແກ່ບັນດາເສດຖະກິດ ຂອງຊາວນາຮັ່ງມີ(ພວກກູລັກ). ໃນເມື່ອບັນຫາໄລຍະຂ້າມຜ່ານຈາກລະບອບທຶນນິຍົມເຂົ້າສູ່ລະບອບສັງຄົມນິຍົມ ຫາກແກ້ໄຂຕົກໄປ ແລ້ວ

ໂຄງຮ່າງເສດຖະກິດສັງຄົມນິຍົມ ກໍໄດ້ເຂົ້າຄອບຄອງຢ່າງຄົບຖ້ວນ. ໂຄງຮ່າງເສດຖະກິດນາຍທຶນນ້ອຍນັ້ນ ກໍໄດ້ ສະລາຍຕົວໄປເປັນໂຄງຮ່າງສັງຄົມນິຍົມເທື່ອລະກ້າວ ໂດຍການເຕົ້າໂຮມເສດຖະກິດນ້ອຍຂອງຊາວນາ ແລະນາຍຊ່າງ ຫັດຖະກຳເຮັດໃຫ້ເປັນສະຫະກອນກະເສດ ດ້ວຍການຖືເອົາ ຫລັກການສະຫມັກໃຈ, ແຕ່ສ່ວນໂຄງຮ່າງນາຍທຶນນັ້ນ ໄດ້ຖືກລົບລ້າງຖິ້ມ.

<u>ສະພາເສດຖະກິດ</u> - ຮູບການຈັດຕັ້ງຄຸ້ມຄອງອຸດສາຫະກຳ ສ.ສ.ສ.ຊ. ອັນໜຶ່ງ, ທີ່ຫລັງຈາກໄຊຊະນະ ມະຫາປະຕິວັດເດືອນຕຸລາ ໄດ້ຮັບການຈັດຕັ້ງຂຶ້ນຢູ່ທ້ອງຖິ່ນ: ຢູ່ເຂດ, ແຂວງ, ອະນຸແຂວງ, ຢູ່ຕາມຕົວເມືອງ, ຢູ່ເມືອງ. ສະພາ ເສດຖະກິດແຫ່ງຊາດສູງສຸດ ຊີ້ນຳລະບົບສະພາເສດຖະກິດ ທັງມວນ. ກົດລະບຽບການຈັດຕັ້ງຂອງສະພາເສດຖະກິດນັ້ນ ໄດ້ມີ ການຮັບຮອງເອົາຈາກສະພາເສດຖະກິດແຫ່ງຊາດສູງສຸດໃນເດືອນທັນວາ ປີ ໑໙໑໗. ສະພາເສດຖະກິດຂຶ້ນກັບສອງອົງການຈັດຕັ້ງ: ສະພາເສດຖະກິດແຫ່ງຊາດສູງສຸດ ແລະ ສະພາຜູ້ແທນຂອງກຳມະກອນ, ຊາວນາແລະທະຫານທ້ອງຖິ່ນ.

ໜ້າທີ່ຕົ້ນຕໍຂອງສະພາເສດຖະກິດ ໄດ້ແກ່ການ ຈັດວາງແລະການຈັດຕັ້ງການເຄື່ອນໄຫວເສດຖະກິດ ຢູ່ໃນລະດັບທ້ອງຖິ່ນ. ສະພາເສດຖະກິດໄດ້ດຳເນີນການເຄື່ອນໄຫວ ໂດຍອີງໃສ່ຈິດໃຈດູດດຶງເອົາຊາວຜູ້ອອກແຮງງານຢ່າງກວ້າງຂວາງ. ໃນສະພາດັ່ງກ່າວມີຜູ້ຕາງໜ້າຈາກສະພາປົກຄອງ ແລະ ອົງ

ການກຳມະບານ. ຄຳສັ່ງຕ່າງໆທີ່ອອກໂດຍສະພາເສດຖະກິດແກ່ວິສາຫະກິດທັງຫມົດ ຫລືສະຖາບັນຕ່າງໆ, ທີ່ຢູ່ໃນຂົງເຂດດັ່ງກ່າວນັ້ນ ມີແຕ່ສະພາເສດຖະກິດແຫ່ງຊາດສູງສຸດ ຜູ້ດຽວເທົ່ານັ້ນ ທີ່ຈະສາມາດປ່ຽນແປງໄດ້. ສະພາເສດຖະກິດໄດ້ມີບົດບາດອັນໃຫ່ຍຫລວງຕໍ່ການຂະຫຍາຍເສດຖະກິດແຫ່ງຊາດ. ມັນໄດ້ຊຸກຍູ້ການຜະລິດໃຫ້ເພີ່ມທະວີຂຶ້ນ, ຍົກລະດັບສະມັດຖະພາບຂອງແຮງງານໃຫ້ສູງຂຶ້ນ; ເຮັດໃຫ້ພາກສ່ວນເສດຖະກິດສັງຄົມນິຍົມເຂັ້ມແຂງຂຶ້ນ, ເພີ່ມທະວີຄວາມອິ່ມຫນຳ ສຳລານຂອງຊາວຜູ້ອອກແຮງງານ.

ພາລະຫນ້າທີ່, ສິດຂອງສະພາເສດຖະກິດໃນໄລຍະມີການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ ແຕ່ລະໄລຍະນັ້ນ ກໍມີການປ່ຽນແປງໄປ. ເນື່ອງຈາກມີການເຕົ້າໂຮມການຄຸ້ມຄອງອຸດສາຫະກຳ ເຂົ້າໂດຍກົງຢູ່ໃນສະພາເສດຖະກິດ ແຫ່ງຊາດສູງສຸດ ສ.ສ.ສ.ຊ. ແລະຢູ່ໃນສະພາເສດຖະກິດ ສາທາລະນະລັດສະຫະພາບນັ້ນ ໄດ້ມີການຫັນປ່ຽນ ເປັນອົງການ ທີ່ຄຸ້ມຄອງອຸດສາຫະກຳທ້ອງຖິ່ນ. ເມື່ອມາເຖິງປີ ໑໙໖໕ ນັ້ນ ສະພາເສດຖະກິດດັ່ງກ່າວນີ້ ກໍໄດ້ຖືກລົບລ້າງ.

ສະພາເສດຖະກິດແຫ່ງຊາດສູງສຸດ - ແມ່ນໄດ້ຮັບການຈັດຕັ້ງຂຶ້ນ ໃນເດືອນທັນວາ ປີ ໑໙໑໗, ມີຫນ້າທີ່ ຈັດວາງແຜນການຂອງວຽກງານເສດຖະກິດ ຂອງປະເທດ, ພົວພັນ ແລະເຕົ້າໂຮມການເຄື່ອນໄຫວຂອງທຸກອົງການເສດຖະກິດ, ຊີ້ນຳນຳພາອົງການທ້ອງຖິ່ນ. ສະພານີ້ ມີສິດໂອນເອົາບັນດາໂຮງ

ຈັກໂຮງງານມາເປັນຂອງລັດ, ດຳເນີນມາດຕາການອື່ນໆອີກ ໃນເປົ້າໝາຍການຈັດຕັ້ງການຜະລິດ ແລະ ຈຳໜ່າຍ. ກົມໃຫຍ່ແລະກົມສູນກາງຄວບຄຸມບາງອຸດສາຫະກຳ. ຢູ່ຕາມທ້ອງຖິ່ນຕ່າງໆ ເພິ່ນກໍໄດ້ຈັດຕັ້ງສະພາເສດຖະກິດຂຶ້ນ, ທ້ອນກັບສະພາເສດຖະກິດແຫ່ງຊາດສູງສຸດ ແລະສະພາຜູ້ແທນກຳມະກອນ, ຊາວນາແລະທະຫານ. ໂຄງຮ່າງຂອງສະພາເສດຖະກິດແຫ່ງຊາດສູງສຸດ ກໍໄດ້ມີການປ່ຽນແປງໄປ ໃຫ້ສອດຄ່ອງກັບໜ້າທີ່ການກໍ່ສ້າງສັງຄົມນິຍົມ. ໃນໄລຍະການປະຕິບັດແຜນການຫ້າປີຊຸດທີ ໑ ນັ້ນ ການເຕີບໂຕຂອງອຸດສາຫະກຳ ຢ່າງໄວວານັ້ນ ໄດ້ນຳໄປສູ່ຄວາມຈຳເປັນຕ້ອງແບ່ງການຄຸ້ມຄອງ ອຸດສາຫະກຳອອກ. ໂດຍອີງໃສ່ພື້ນຖານຂອງສະພາເສດຖະກິດແຫ່ງຊາດສູງສຸດນັ້ນ ເພິ່ນໄດ້ຈັດຕັ້ງກະຊວງປະຊາຊົນຂຶ້ນ, ທີ່ ຄຸ້ມຄອງທາງຂະແໜງອຸດສາຫະກຳ, ເພື່ອອຳນວຍແກ່ການເຕົ້າໂຮມເອົາທຶນຮອນເຂົ້າມາໃນກຳມືຂອງລັດ ເພື່ອຈັດຕັ້ງ ຂະແໜງອຸດສາຫະກຳໜັກທີ່ນຳໜ້າແລະອຳນວຍແກ່ການຈັດຕັ້ງເງື່ອນໄຂ ເພື່ອດຳເນີນ ການກໍ່ສ້າງອຸດສາຫະກຳ ຂະໜາດໃຫຍ່ແບບສັງຄົມນິຍົມຂອງປະເທດ ໃຫ້ໄວ.

<u>ສະພາລັດຖະມົນຕີປະຊາຊົນ</u>-ໃນປີ ໑໙໔໖ ກ່ອນມີການປັບປຸງຢູ່ໃນສະພາລັດຖະມົນຕີ ສ.ສ.ສ.ຊ. ນັ້ນ ສະພາ ລັດຖະມົນຕີປະຊາຊົນ ໄດ້ເປັນອົງການບໍລິຫານ ແລະປົກຄອງສູງສຸດຂອງອຳນາດລັດໃນສະຫະພາບໂຊວຽດ.

ເພິ່ນໄດ້ຈັດຕັ້ງຂຶ້ນເປັນເທື່ອທຳອິດ ເປັນລັດຖະບານ ຂອງ

ສ.ສ.ສ.ຊ. ໂດຍມະຕິຂອງກອງປະຊຸມໃຫຍ່ສະພາ ໂຊວຽດທົ່ວລັດເຊຍຄັ້ງທີ II ໃນວັນທີ ໒໕ ເດືອນຕຸລາ ປີ ໑໙໑໗ ນັ້ນ. ປະທານຜູ້ທຳອິດຂອງສະພາລັດຖະມົນຕີປະຊາຊົນ ດັ່ງກ່າວໄດ້ແກ່ທ່ານ ວ.ອີ.ເລນິນ .

<u>ສະພາປ້ອງກັນຊາດຂອງກຳມະກອນຊາວນາ</u> - ແມ່ນ ອົງການຂອງລັດນຳພາໂດຍທ່ານ ວ.ອີ.ເລນິນ,ຊຶ່ງໃນໄລຍະ ມີການຮຸກຮານດ້ານທະຫານຂອງຕ່າງດ້າວ ແລະ ເກີດສົງຄາມກາງເມືອງຢູ່ນັ້ນ ໄດ້ມອບອຳນາດຢ່າງເດັດຂາດໃຫ້ ເພື່ອປຸກລະດົມຂົນຂວາຍກຳລັງແລະພາຫະນະ ເພື່ອປ້ອງກັນ ປະເທດຊາດ. ສະພາປ້ອງກັນຊາດ ຂອງກຳມະກອນຊາວນາ ໄດ້ຈັດຕັ້ງຂຶ້ນໃນປີ ໑໙໑໘, ແລ້ວຕໍ່ມາ ໃນປີ ໑໙໒໐ ໄດ້ຮັບການປ່ຽນເປັນສະພາແຮງງານ ແລະປ້ອງກັນຊາດ.

<u>ສະພາຜູ້ແທນຊາວຜູ້ອອກແຮງງານ</u> - ແມ່ນອົງການ ຂອງບັນດາຜູ້ຕາງໜ້າອຳນາດລັດ, ທີ່ປະກອບດ້ວຍພື້ນຖານ ທາງການເມືອງຂອງ ສ.ສ.ສ.ຊ.

ສະພາດັ່ງກ່າວ ໄດ້ຖືກນຳມາໃຊ້ຢູ່ປະເທດລັດເຊຍ ໃນໄລຍະການປະຕິວັດ ແຕ່ປີ ໑໙໐໕ ຫາ ໑໙໐໗ ເປັນສະພາ ຜູ້ແທນຂອງກຳມະກອນ. ໃນໄລຍະການປະຕິວັດປະຊາທິປະໄຕຂອງນາຍທຶນ ເດືອນກຸມພາ ໃນປີ ໑໙໑໗ ນັ້ນ ເພິ່ນໄດ້ຈັດຕັ້ງສະພາຜູ້ແທນຂອງກຳມະກອນ ແລະທະຫານຂຶ້ນ ຢູ່ຫຼາຍໆທີ່ແຫ່ງ, ແລະເພິ່ນກໍຍັງໄດ້ຈັດຕັ້ງສະພາຜູ້ແທນຂອງຊາວນາຂຶ້ນອີກດ້ວຍ. ໃນປີ ໑໙໑໘ ໃນກອງປະຊຸມໃຫຍ່ສະພາຜູ້ແທນທົ່ວ

ລັດເຊຍຄັ້ງທີສາມນັ້ນ ໄດ້ມີການເຊື່ອມໂຍງສະພາຜູ້ແທນຂອງ ຊາວກຳມະກອນ, ທະຫານແລະຊາວນາເຂົ້າກັນ. ໃນລັດຖະທຳມະນູນ ສ.ສ.ສ.ຊ. ປີ ໑໙໓໖ ນັ້ນ ສະພາຜູ້ແທນ ຂອງ ຊາວກຳມະກອນ, ຊາວນາ ແລະທະຫານແດງໄດ້ຮັບການຫັນປ່ຽນເປັນສະພາຜູ້ແທນຂອງຊາວຜູ້ອອກແຮງງານ.

ທ່ານ ວ.ອິ.ເລນິນ ໄດ້ຊີ້ບອກວ່າ ສາທາລະນະລັດ ໂຊວຽດ ແມ່ນຮູບການພະເດັດການກຳມາຊີບລັດ. ອຳນາດ ໂຊວຽດໄດ້ກາຍເປັນອົງການຈັດຕັ້ງຂອງຊາວຜູ້ອອກແຮງງານທີ່ມີມະຫາຊົນອັນຫລວງຫລາຍກ່າຍກອງເຂົ້າຮ່ວມໃນການຕໍ່ສູ້ເພື່ອປົບປຸງການສ້າງຕັ້ງສັງຄົມສັງຄົມນິຍົມ.

<u>ສະພາແຮງງານແລະປ້ອງກັນຊາດ</u> -ແມ່ນອົງການທີ່ເຄື່ອນໄຫວພາຍໃຕ້ສິດຂອງກຳມາທິການປະຈຳຢູ່ ສະພາລັດຖະມົນຕີປະຊາຊົນ ສ.ສ.ສ.ຊ., ແລ້ວຕໍ່ມາກໍເປັນຂອງ ສ.ສ.ສ.ຊ. ອົງການດັ່ງກ່າວໄດ້ຮັບການຈັດຕັ້ງຂຶ້ນໃນປີ ໑໙໒໐ ພາຍຫລັງມີການປັບປຸງສະພາປ້ອງກັນກຳມະກອນຊາວນາ. ຫນ້າທີ່ຂອງສະພາແຮງງານແລະປ້ອງກັນຊາດ ໄດ້ແກ່ການປະສົມປະສານການເຄື່ອນໄຫວກັບອົງການອື່ນໆ ໃນບັນດາກໍ່ສ້າງເສດຖະກິດແລະປ້ອງກັນປະເທດຊາດ. ສະພາແຮງງານ ແລະ ປ້ອງກັນຊາດນີ້ ໄດ້ລົບລ້າງໃນປີ ໑໙໓໗ .

<u>ສະຫະບໍລິສັດ</u> - ຮູບການອັນຫນຶ່ງ ຂອງກຸ່ມ ຜູກສາຫະກຳຂອງນາຍທຶນຜູກຂາດ. ສະຫະບໍລິສັດໄດ້ປະກອບຂຶ້ນໂດຍການຕົກລົງລະຫວ່າງບັນດາພວກຮັບເຫມົາ ນາຍທຶນດ້ວຍກັນ ໃນ

ບັນຫາການຂາຍຜະລິດຕະພັນ. ສະຫະບໍລິສັດຮັບຜິດຊອບເອົາການຂາຍສິນຄ້າຂອງວິສາຫະກິດທີ່ຂຶ້ນກັບຕົນນັ້ນ, ບໍ່ໃຫ້ວິສາຫະກິດດັ່ງກ່າວມີສິດເຮັດການຄ້າຕາມລຳພັງໃຈຂອງຕົນ, ກຳນົດບໍລິມາດຜະລິດຕະພັນວິສາຫະກິດຈະຕ້ອງຜະລິດອອກ, ແຈກຢາຍກຳໄລລະຫວ່າງເຂົາເອງ ແລະອື່ນໆ.

ໃນໄລຍະດຳເນີນນະໂຍບາຍເສດຖະກິດໃຫມ່ນັ້ນ ເພິ່ນໄດ້ເອີ້ນສະຫະບໍລິສັດເປັນອົງການຈັດຕັ້ງເສດຖະກິດ, ທີ່ໄດ້ເຕົ້າໂຮມຫມວດອຸດສາຫະກຳຕ່າງໆ ທີ່ມີຜະລິດຕະພັນຄ້າຍໆ ຄືກັນນັ້ນ ເຂົ້າກັນ ໂດຍມີຈຸດປະສົງເຮັດໃຫ້ມີການຂາຍຍົກ, ການຊື້ວັດຖຸດິບ, ການວາງແຜນການກິດຈະການການຄ້າ.ຫນ້າທີ່ຕົ້ນຕໍຂອງສະຫະ ບໍລິສັດ ໄດ້ແກ່ການຈັດຕັ້ງ ການຂາຍຜະລິດຕະພັນຂອງອຸດສາຫະກຳລັດ.

<u>ສະຫະບໍລິສັດບໍລິໂພກສູນກາງ</u> - ແມ່ນສູນກາງຊີ້ນຳສະຫະກອນບໍລິໂພກໃນ ສ.ສ.ສ.ຊ.. ເພິ່ນຈັດຕັ້ງ ແລະ ຫັນ ການເຄື່ອນໄຫວຂອງສະຫະກອນບໍລິໂພກ ໄປສູ່ການສ້າງຕາຫນ່າງການຄ້າຂອງສະຫະກອນໃຫ້ສົມບູນ, ດຳເນີນການຈັດຫາແລະການຊື້ຜະລິດຕະພັນແລະວັດຖຸດິບກະເສດຕາມຊົນນະບົດ. ອົງການສູງສຸດຂອງສະຫະບໍລິສັດ ບໍລິໂພກສູນກາງໄດ້ແກ່ກອງປະຊຸມຜູ້ມີອຳນາດເຕັມຂອງສະຫະກອນກະເສດ ບໍລິໂພກ.

<u>ສັນຍາສັນຕິພາບທີ່ບະເລັດ</u>-ໃນເດືອນມີນາ ປີ ໑໙໑໘ ຢູ່ເມືອງບະເລັດ-ລີໂຕບ ເພິ່ນໄດ້ມີການເຊັນສັນຍາ ສັນຕິພາບລະຫວ່າງປະເທດໂຊວຽດລັດເຊຍ ກັບເຢຍລະມັນ, ປະເທດ

ໂອຕະລິດ-ຮຸງກາລີ, ປະເທດບູນກາລີ ກັບ ຕູລະກີ. ການເຈລະຈາສັນຕິພາບໃນເວລານັ້ນ ໄດ້ດຳເນີນຂຶ້ນຢູ່ໃນບັນຍາກາດຂອງການເຊື່ອມໂຊມທາງດ້ານເສດຖະກິດ, ໃນທ່າມກາງຂອງຄວາມອິດເມື່ອຍຈາກສົງຄາມ ແລະແນວຮົບແຕກສະລຸພູພ່າຍ. ການຍຸດຕິ ສົງຄາມ ມັນແມ່ນ ຄວາມຈຳເປັນ ເພື່ອຈຸດປະສົງເຮັດ ໃຫ້ອຳນາດໂຊວຽດ ເຂັ້ມແຂງ ແລະ ເພື່ອຮັກສາ ເອກະລາດ ຂອງລັດ ໂຊວຽດ ທີ່ຫນຸ່ມນ້ອຍໄວ້. ສັນຕິພາບໄດ້ເຊັນກັນ ໃນເງື່ອນໄຂ ທີ່ ຫຍຸ້ງຍາກ ສັບສົນ ທີ່-ສຸດ.

ການຕົກລົງສັນຕິພາບຢູ່ ບະເລັດ ໄດ້ນຳເອົາ ການຜ່ອນຄາຍແລະສັນຕິພາບໃຫ້ແກ່ປະເທດຊາດໂຊວຽດ. ສາທາລະນະລັດໂຊວຽດ ໄດ້ມີເວລາເພື່ອປັບປຸງອຳນາດໂຊວຽດ, ຈັດຕັ້ງເສດຖະກິດ ແລະກໍ່ສ້າງກອງທັບແດງ. ເນື່ອງຈາກຢູ່ປະເທດເຢຍລະມັນເກີດມີການປະຕິວັດ ແລະກຸ່ມຊຸນເສີກ ເຢຍລະມັນໄດ້ພັງທະລາຍລົງໃນເດືອນພະຈິກ ປີ ໑໙໑໘ ນັ້ນ, ລັດໂຊວຽດກໍໄດ້ລົບລ້າງການຕົກລົງທີ່ເມືອງບະເລັດຖິ້ມ.

<u>ສູນກາງກຳມະບານທົ່ວສະຫະພາບ</u> - ແມ່ນອົງການນຳພາສູງສຸດຂອງຂະບວນການກຳມະບານໂຊວຽດ, ທີ່ໄດ້ຮັບ ການເລືອກຕັ້ງຂຶ້ນ ຢູ່ໃນກອງປະຊຸມຂອງອົງການກຳມະບານທົ່ວສະຫະພາບ. ອົງການນີ້ ໄດ້ມີບົດບາດອັນສຳຄັນ ໃນຊີວິດ ການເມືອງ, ສັງຄົມ, ເສດຖະກິດ ແລະ ວັດທະນະທຳ ຂອງປະເທດ. ອົງການນີ້ໄດ້ຊີ້ນຳວຽກງານຂອງອົງການ ກຳມະບານ

ເມື່ອສຳເລັດໜ້າທີ່ພັກກອມມູນິດໄດ້ວາງອອກນັ້ນ, ເພື່ອ ດຳເນີນບົດບາດຊີ້ນຳຂອງອົງການກຳມະບານຂອງຕົນ ໃຫ້ໄດ້ຮັບຜົນສຳເລັດດີກັນກັບເປັນ ອັນທີ່ເອີ້ນກັນວ່າ ໂຮງຮຽນ ກອມມູນິດ.

ເສດຖະກິດທີ່ເປັນປາຍແຫລມ-ເປັນຂະແໜງນຳໜ້າ, ທີ່ກຳນົດການຂະຫຍາຍເສດຖະກິດແຫ່ງຊາດ. ຫລັງຈາກໄດ້ຮັບໄຊຊະນະທາງດ້ານການເມືອງແລ້ວ, ຊົນຊຸ້ມກຳມະກອນ ຮິບໂຮມເອົາບັນດາເສດຖະກິດທີ່ເປັນປາຍແຫລມ ມາສູ່ກຳມືຂອງຕົນ ກໍເພື່ອຮັບປະກັນການກໍ່ສ້າງສັງຄົມສັງຄົມນິຍົມໃຫ້ສຳເລັດ.

ຕົວເລກປະກັນການຂະຫຍາຍເສດຖະກິດ ສ.ສ.ສ.ຊ.-ທິດທາງພາງໆຂອງແຜນການປະຈຳປີ ຂອງການຂະຫຍາຍ ເສດຖະກິດແຫ່ງຊາດ, ທີ່ເພິ່ນໄດ້ຮ່າງຂຶ້ນໃນໄລຍະ ແຕ່ປີ ໑໙໒໕ ຫາປີ ໑໙໓໐. ເຖິງວ່າ ເສດຖະກິດແຫ່ງຊາດ ຂອງໄລຍະຂ້າມຜ່ານຈາກລະບອບທຶນນິຍົມ ກ້າວໄປສູ່ລະບອບສັງຄົມນິຍົມນັ້ນ ຍັງມີລະບົບຂອງນາຍທຶນ ແລະພໍ່ຄ້ານ້ອຍດຳລົງຄົງຕົວຢູ່ກໍຕາມ, ຄຽງຄູ່ກັບການໃຊ້ຕົວເລກປະກັນ ເພື່ອວາງແຜນການພາກສ່ວນອຸດສາຫະກຳສັງຄົມນິຍົມນັ້ນ ເພິ່ນໄດ້ວາງ ມາດຕາການເພື່ອຈັດວາງພາກສ່ວນອຸດສາຫະກຳເອກະເທດໂດຍການນຳໃຊ້ນະໂຍບາຍລາຄາ, ພາສີ, ສິນເຊື່ອ, ການຂະຫຍາຍສະຫະກອນແລະອື່ນໆ ທີ່ມີລັກສະນະຄ້າຍຄືກັນນີ້. ຕົວເລກປະກັນນີ້ ແມ່ນຄະນະກຳມາທິການແຜນຜັງ ເປັນຜູ້ວາງອອກ. ໃນຄະນະທີ່ພາກສ່ວນອຸດສາຫະກຳສັງຄົມນິຍົມ ໄດ້ຂະຫຍາຍຕົວ

ອອກໄປນັ້ນ, ຕົວເລກປະກັນດັ່ງກ່າວ ກໍໄດ້ກາຍເຂົ້າໄປຢູ່ໃນແຜນການເສດຖະກິດປະຈຳປີຂອງລັດ. ໃນປີ ໑໙໓໑ ນັ້ນເພິ່ນໄດ້ກ້າວຈາກຕົວເລກປະກັນເຂົ້າໄປສູ່ແຜນການປະຈຳປີ ຂອງການຂະຫຍາຍເສດຖະກິດແຫ່ງຊາດ.

ທະນາຄານແຫ່ງຊາດ - ແມ່ນທະນາຄານ ພິມທະນາບັດ, ເປັນທະນາຄານໃຫຍ່ທີ່ໃຫ້ສິນເຊື່ອໄລຍະສັ້ນ, ສູນກາງບັນຊີເອກະພາບແລະສູນລັງເງິນຂອງປະເທດ. ທະນາຄານນີ້ ໄດ້ມີດຳລັດແຕ່ງຕັ້ງຂອງສະພາລັດຖະມົນຕີປະຊາຊົນ ໃນປີ ໑໙໔໑ . ປະຈຸບັນນີ້ ໄດ້ເປັນທະນາຄານທີ່ໃຫຍ່ກ່ອນໝູ່ໃນໂລກ ທາງດ້ານບໍລິມາດກິດຈະການ ການຜະລິດ, ຈຳນວນບໍລິມາດລວມສູນເງິນຕາ ແລະຕາໜ່າງສາຂາທົ່ງໝົດ.

ນະໂຍບາຍເສດຖະກິດໃໝ່ - ແມ່ນຍະໂຍບາຍ ເສດຖະກິດຂອງລັດສັງຄົມນິຍົມໃນໄລຍະຂ້າມຜ່ານ ຈາກລະບອບນາຍທຶນເຂົ້າສູ່ລະບອບສັງຄົມນິຍົມ ເຊິ່ງແນໃສ່ ການສ້າງພື້ນຖານເສດຖະກິດສັງຄົມນິຍົມໂດຍມີການນຳໃຊ້ການພົວພັນ ສິນຄ້າແລະການເງິນ, ເພື່ອຂະຫຍາຍອຸດສາຫະກຳສັງຄົມນິຍົມ, ປັບປຸງສາຍການພົວພັນຂອງອຸດສາຫະກຳກັບກະສິກຳ ເພື່ອແນໃສ່ດູດດຶງເອົາຊົນຊັ້ນຊາວນາຜູ້ອອກແຮງງານ ເຂົ້າຮ່ວມໃນການກໍ່ສ້າງສັງຄົມນິຍົມ.

ນະໂຍບາຍເສດຖະກິດໃໝ່ ໄດ້ດຳເນີນການຈຳກັດ, ການຮັດແຄບແລະທ້າຍທີ່ສຸດ ກໍລຶບລ້າງທາດແທ້ທຶນນິຍົມຖົມຢາງສົນເຊິງ. ການກ້າວເຂົ້າສູ່ນະໂຍບາຍເສດຖະກິດໃໝ່ນັ້ນ ໄດ້

ປະຕິບັດຂຶ້ນໃນລະດູບານໃຫ່ມຂອງປີ ໑໙໔໑ ທີ່ແມ່ນໄລຍະສິ້ນ ສຸດສົງຄາມກາງເມືອງແລະການຮຸກຮານຂອງຕ່າງດ້າວ. ໜ້າ ທີ່ຕົ້ນຕໍຂອງນະໂຍບາຍເສດຖະກິດໃຫ່ມ ແມ່ນການສ້າງພັນທະ ພາບກຳມະກອນຊາວນາທາງດ້ານເສດຖະກິດ ເພື່ອຜົນ ປະ ໂຫຍດຂອງໄຊຊະນະສັງຄົມນິຍົມ.

ມາດຕາການສຳຄັນທີ່ເພີ່ມນຳໃຊ້ໃນໄລຍະກ້າວເຂົ້າສູ່ ນະ ໂຍບາຍເສດຖະກິດໃຫ່ມນັ້ນ ໄດ້ແກ່ການນຳເອົາວິທີເກັບພາສີ ກະສິກຳແທນການເກັບເຂົ້າຊ່ວຍຊາດ, ການອະນຸຍາດ ໃຫ້ມີ ການຄ້າເອກະຊົນ ໂດຍຮັກສາການບັນຊາ ເສດຖະກິດ ແຫ່ງ ຊາດທີ່ເປັນປາຍແຫລມໄວ້ໃນກຳມືຂອງລັດສັງຄົມນິຍົມ. ການ ຕົກລົງນຳເອົາການເກັບພາສີກະສິກຳ ມາໃຊ້ແທນ ການເກັບ ເຂົ້າຊ່ວຍຊາດນັ້ນ ແມ່ນຄຳສະເຫນີຂອງທ່ານ ວ.ອິ. ເລນິນ ທີ່ເພີ່ນຮັບຮອງເອົາຢູ່ໃນກອງປະຊຸມໃຫ່ຍຂອງພັກຄັ້ງທີ X ໃນ ປີ ໑໙໔໑.

ເພີ່ນບໍ່ອາດສາມາດດຳເນີນການປົວແປງເສດຖະກິດ ຫລັງ ຈາກສົງຄາມທຳລາຍມ້າງເພພັ້ນໄດ້ ໂດຍອາໃສສະເພາະແຕ່ ການຂະຫຍາຍເສດຖະກິດແບບສັງຄົມນິຍົມເທົ່ານັ້ນ, ມັນມີຄວາມ ຈຳເປັນທີ່ຈະຕ້ອງອະນຸຍາດໃຫ້ກອງທຶນເອກະເທດ ກັບຄືນ ມາ ເຄື່ອນໄຫວຕໍ່ໄປນັ້ນ ເປັນໄລຍະການຖອຍຫລັງ ຕັ້ງທ່າຊົ່ວຄາວ ໄລຍະໜຶ່ງ.

ການກ້າວໄປສູ່ນະໂຍບາຍເສດຖະກິດໃຫ່ມນັ້ນ ບໍ່ໄດ້ຫມາຍ ເຖິງການຢູ່ຮ່ວມກັນໂດຍສັນຕິວິທີ ລະຫວ່າງ ລະບອບທຶນ ນິຍົມ

ແລະລະບອບສັງຄົມນິຍົມແຕ່ຢ່າງໃດ, ແຕ່ມັນແມ່ນການຕໍ່ສູ້ຊົນຊັ້ນຢ່າງດຸເດືອດ ຕາມຫລັກການທີ່ວ່າ "ໃຜຈະເອົາຊະນະໃຜ", ສິ່ງທີ່ນຳມາໃຫ້ຕາມພາຍຫລັງໃນໄຊຊະນະ ທາງດ້ານຮູບການເສດຖະກິດສັງຄົມນິຍົມ, ຊຶ່ງໄດ້ຮັບການເຕົ້າໂຮມເອົາ ພື້ນຖານເສດຖະກິດທີ່ເປັນປາຍແຫລມ ທີ່ໄດ້ແກ່ອຸດສາຫະກຳ ຂະຫນາດໃຫ່ຍ, ລະບົບທະນາຄານ, ການຂົນສົ່ງ, ການຄ້າພາຍນອກ ໄດ້ເຂົ້າຢູ່ໃນກຳມືຂອງລັດຊົນຊັ້ນກຳມາຊີບຫມົດທັງນັ້ນ. ເນື່ອງຈາກການດຳເນີນນະໂຍບາຍເສດຖະກິດໃຫ່ມ ການສົ່ງເສີມພັນທະພາບກຳມະກອນຊາວນາ ໄດ້ເຮັດໃຫ້ຜະເດັດການກຳມາຊີບແຂງແຮງຂຶ້ນ ທີ່ເປັນອາວຸດຕົ້ນຕໍໃນການຕໍ່ສູ້ເພື່ອສັງຄົມນິຍົມ.

ການກໍ່ສ້າງອຸດສາຫະກຳຂະຫນາດໃຫ່ຍສັງຄົມນິຍົມ ແລະການເຮັດໃຫ້ເປັນສະຫະກອນກະເສດ, ການຂະຫຍາຍການຄ້າໂຊວຽດ ໄດ້ຮັບປະກັນໄຊຊະນະທາງດ້ານເສດຖະກິດຂອງຮູບການເສດຖະກິດສັງຄົມນິຍົມ ຕໍ່ຮູບການເສດຖະກິດ ຂອງນາຍທຶນ. ຫລັງຈາກພື້ນຖານສັງຄົມນິຍົມ ໄດ້ຮັບການສ້າງຕັ້ງ ຂຶ້ນແລ້ວ, ມີການຮັບປະກັນການຍຶດຄອງເສດຖະກິດ ຢ່າງເດັດຂາດແລ້ວ ນະໂຍບາຍເສດຖະກິດໃຫ່ມ ກໍໄດ້ຖືກຍົກເລີກໄປ. ຫລັກການພື້ນຖານຂອງນະໂຍບາຍດ້ານເສດຖະກິດ ໃນໄລຍະຂ້າມຜ່ານຈາກລະບອບນາຍທຶນສູ່ສັງຄົມນິຍົມນີ້ ໄດ້ນຳໄປໃຊ້ຢູ່ໃນບັນດາປະເທດອື່ນໆ ທີ່ກຳລັງກໍ່ສ້າງສັງຄົມນິຍົມ.

ນັກກອມມູນິດອຽງຊ້າຍ - ແມ່ນພວກປີລະປັກພັກກອມມູນິດ

ທີ່ເກີດຂຶ້ນ ເນື່ອງຈາກການເຊັນສັນຍາສັນຕິພາບ ຢູ່ເມືອງບະເລັດໃນຕົ້ນປີ ໑໙໑໘, ພວກເຂົາໄດ້ປ້ອງກັນທິດທາງ ການເມືອງທີ່ຈ່ອງດຶງເອົາສາທາລະນະລັດໂຊວຽດ ທີ່ຍັງອ່ອນນ້ອຍຢູ່ນັ້ນ ເຂົ້າເຮັດສົງຄາມກັບປະເທດເຢຍລະມັນ,ທີ່ເປັນອັນຕະລາຍຕໍ່ການດຳລົງຄົງຕົວຂອງອຳນາດໂຊວຽດ ຢູ່ປະເທດ ລັດເຊຍ. "ນັກກອມມູນິດອຽງຊ້າຍ" ໄດ້ຖືກທັບມ້າງ ໂດຍພັກກອມມູນິດແລະສັນຍາສັນຕິພາບຢູ່ບະເລັດ ກໍໄດ້ເຊັນກັນ.ຫລັງຈາກນັ້ນລັດໂຊວຽດໄດ້ມີໂອກາດກໍ່ສ້າງ ແລະເຮັດໃຫ້ອຳນາດເສດຖະກິດແລະການປ້ອງກັນຊາດເຂັ້ມແຂງຂຶ້ນ.

ບໍລິສັດອູດສາຫະກຳ - ບໍລິສັດອູດສາຫະກຳ ແມ່ນຮູບການຜູກຂາດຂອງນາຍທຶນອັນໜຶ່ງ, ຊຶ່ງເກີດມາຈາກ ການເຕົ້າໂຮມການຜະລິດເຂົ້າກັນ, ທີ່ມີບັນດາວິສາຫະກິດ ທີ່ ສູນເສຍຄວາມກຸ້ມຕົນເອງແລ້ວ ຍິນຍອມເຂົ້າຢູ່ພາຍໃຕ້ຄວາມຄຸ້ມຄອງຂອງບໍລິສັດອັນໜຶ່ງ.

ໃນເສດຖະກິດສັງຄົມນິຍົມນັ້ນ ບໍລິສັດອູດສາຫະກຳແມ່ນຮູບການ ການຈັດຕັ້ງການຜະລິດອູດສາຫະກຳອັນໜຶ່ງ.ໃນໄລຍະຂ້າມຜ່ານຈາກລະບອບທຶນນິຍົມເຂົ້າສູ່ລະບອບສັງຄົມນິຍົມ ນັ້ນບໍລິສັດອູດສາຫະກຳນັ້ນ ເປັນຂະແໜງລະຫວ່າງກາງຂອງລະບົບຄຸ້ມຄອງລວມສູນອູດສາຫະກຳລັດ. ເພິ່ນໄດ້ເຕົ້າໂຮມເອົາການຜະລິດທີ່ມີລັກສະນະຄ້າຍຄືກັນ ຫລືຂະແໜງປະກອບ ຈຳນວນຫລວງຫລາຍ ໃນການພົວພັນການຜະລິດຂອງວິສາຫະກິດເຂົ້າກັນ. ລັກສະນະພິເສດຂອງບໍລິສັດອູດສາຫະກຳນັ້ນແມ່ນ:

ການແຍກເປັນກຸ່ມອອກຢ່າງຖືກຕ້ອງຕາມລັດຖະບັນຍັດ, ການກຸ້ມຕົນເອງທາງເສດຖະກິດ ໃນຂອບເຂດຂອງແຜນການ ທີ່ວາງອອກຕາມທີ່ບົ່ງໄວ້ໃນລັດຖະບັນຍັດນັ້ນ; ມີໂຄງການການຜະລິດ, ການບໍລິຫານຄຸ້ມຄອງ, ການຊີ້ນຳດ້ານ ເຕັກນິກ , ການລົງທຶນ ແລະການພະລາທິການດ້ານເຕັກນິກ ແລະ ວັດຖຸເປັນເອກະພາບ. ຮູບການຂອງການຈັດຕັ້ງຂອງບໍລິສັດອຸດສາຫະກຳນີ້ ປ່ຽນແປງຢູ່ຕະຫລອດເວລາ. ມັນໄດ້ເຕີບໃຫຍ່ ຂະຫຍາຍຕົວອອກ, ໄດ້ຮັບການປັບປຸງໃຫ້ສົມບູນແບບ, ດັດແປງແກ້ໄຂໃຫ້ສອດຄ່ອງກັບສະພາບການໃຫມ່ ແລະໄດ້ມີລັກສະນະໃຫມ່.

ຜະເດັດການກຳມາຊີບ - ແມ່ນອຳນາດລັດຂອງຊົນຊັ້ນກຳມາຊີບ, ທີ່ໄດ້ສ້າງຕັ້ງຂຶ້ນ ພາຍຫລັງການລົບລ້າງລະບອບທຶນນິຍົມ ແລະຫລັງຈາກການພັງທະລາຍ ຂອງກົງຈັກລັດນາຍທຶນລົງແລ້ວນັ້ນ. ໄຊຊະນະຂອງການສ້າງຕັ້ງຜະເດັດການກຳມາຊີບນັ້ນ ມັນໄດ້ສະແດງອອກເຖິງເນື້ອໃນອັນຕົ້ນຕໍຂອງການປະຕິວັດສັງຄົມນິຍົມ. ນຜະເດັດການຂອງຊົນຊັ້ນກຳມາຊີບ ນີ້ຫມາຍເຖິງຜະເດັດການຂອງຜູ້ຖືກກົດຂີ່ ອັນມີຈຳນວນ ຫລວງຫລາຍຕໍ່ບຸກຄົນຈຳນວນນ້ອຍໆ,ມັນຈັດຕັ້ງຂຶ້ນຕ້ານກັບພວກກົດຂີ່ຂູດຮີດ, ຕ້ານກັບການຂູດເນື້ອເຖືອຫນັງປະຊາຊົນ, ແນ ໃສ່ການລົບລ້າງການກົດຂີ່ຂູດຮີດຄົນຕໍ່ຄົນ ແລະ ສະແດງ ຜົນປະໂຫຍດຂອງຊາວຜູ້ອອກແຮງງານທັງຫມົດ.

ຊົນຊັ້ນກຳມະກອນໃຊ້ອຳນາດຂອງຕົນ ເພື່ອປາບການຕ້ານ

ຄືນຂອງພວກກົດຂີ່ຂູດຮີດ, ສ້າງຄວາມເຂັ້ມແຂງໃຫ້ແກ່ໄຊຊະນະຂອງສັງຄົມນິຍົມ, ຕ້ານກັບຄວາມພະຍາຍາມຢາກຮື້ຟື້ນຄືນຂອງລະບອບທຶນນິຍົມ; ແຕ່ວ່າພະເດັດການກຳມາຊີບ ບໍ່ແມ່ນໃຊ້ກຳລັງຮຸນແຮງປາບປາມເປັນຕົ້ນຕໍ, ໜ້າທີ່ຕົ້ນຕໍ ຂອງ ພະເດັດການກຳມາຊີບແມ່ນເຈົ້າຫົວຄິດປະດິດສ້າງ. ພະເດັດການກຳມາຊີບແມ່ນເງື່ອນໄຂອັນຕົ້ນຕໍຂອງໄຊຊະນະ ຂອງສັງຄົມນິຍົມ. ມັນໃຊ້ເປັນເຄື່ອງມືຂອງຊົນຊັ້ນກຳມະກອນໃນຈຸດປະສົງເພື່ອຊັກດຶງມວນມະຫາຊົນຜູ້ອອກແຮງງານອັນກວ້າງໃຫ່ຍເຂົ້າມາຫາຝ່າຍຕົນ, ດຳເນີນການອົບຮົມກໍ່ສ້າງພວກເຂົາ ແລ້ວນຳພາພວກເຂົາໄປສູ່ການກໍ່ສ້າງສັງຄົມນິຍົມ, ເພື່ອຫັນປ່ຽນທຸກຂົງເຂດຊີວິດຂອງສັງຄົມເຂົ້າສູ່ເສັ້ນທາງປະຕິວັດ.

ພື້ນຖານຂອງພະເດັດການກຳມາຊີບ ແລະຫລັກການສູງສຸດຂອງມັນໄດ້ແກ່ພັນທະພາບຊົນຊັ້ນກຳມະກອນກັບຊາວນາ ໂດຍພາຍໃຕ້ບົດບາດການຊີ້ນຳນຳພາຂອງຊົນຊັ້ນກຳມະກອນ. ກຳລັງແຮງຍູ້ໜູນອັນມະຫາສານໃນລະບົບພະເດັດການກຳມາຊີບນັ້ນ ແມ່ນພັກກອມມູນິດ. ໃນທ່າມກາງການກໍ່ສ້າງລະບອບສັງຄົມນິຍົມນັ້ນ ໄດ້ມີການຂະຫຍາຍຕົວດ້ານພື້ນຖານຂອງພະເດັດການກຳມາຊີບ, ແລະສັງຄົມກໍກາຍເປັນອັນໜຶ່ງອັນດຽວ ກັນທາງດ້ານສັງຄົມ, ການເມືອງແລະແນວຄິດ. ພ້ອມດຽວກັນກັບຂະບວນການຂະຫຍາຍຕົວຂອງໂຄງຮ່າງຂອງສັງຄົມໄປສູ່ການເປັນອັນໜຶ່ງອັນດຽວກັນຢ່າງແໜ້ນແຟ້ນນັ້ນ ພະເດັດການກຳມາຊີບ ກໍໄດ້ຮັບການປ່ຽນແປງໄປ ແລະລັດພະເດັດການ ກຳ

ມາຊິບກໍໄດ້ກາຍເປັນລັດຂອງປະຊາຊົນທັງມວນ.

ພາສີເຄື່ອງບໍລິໂພກ-ແມ່ນພາສີເປັນວັດຖຸທີ່ເພິ່ນເກັບ ຈາກເສດຖະກິດຊາວນາ,ຊຶ່ງໄດ້ນຳໃຊ້ໃນປີ໑໙໒໑ເພື່ອໃຊ້ ແທນ-ການເກັບເຂົ້າຊ່ວຍຊາດ.ການຕົກລົງນຳໃຊ້ການເກັບພາສີບໍລິໂພກນັ້ນ ແມ່ນທ່ານ ວ.ອີ.ເລນິນ ເປັນຜູ້ສະເໜີແລະໄດ້ຮັບຮອງເອົາຢູ່ໃນກອງປະຊຸມໃຫ່ຍຂອງພັກກອມມູນິດ ຄັ້ງທີ X ໃນປີ ໑໙໒໑. ຄວາມແຕກຕ່າງຈາກວິທີເກັບເຂົ້າຊ່ວຍຊາດ ນັ້ນມັນມີຢູ່ບ່ອນວ່າ ຂະໜາດການເກັບນັ້ນ ນ້ອຍກ່ວາກັນ. ຫລັງຈາກຈ່າຍຄ່າພາສີເຄື່ອງບໍລິໂພກແລ້ວ ສ່ວນເຫລືອນັ້ນ ກໍເປັນສົມບັດຂອງຊາວນາ, ຊຶ່ງເຂົາສາມາດນຳອອກໄປຂາຍ ຕາມຕະຫລາດຢ່າງເສລີໄດ້.

ພັກກອມມູນິດລັດເຊຍ (ໂບນເຊວິກ) ;

ພັກກອມມູນິດທົ່ວສະຫະພາບ (ໂບນເຊວິກ) - ແມ່ນຊື່ຂອງພັກກອມມູນິດໃນໄລຍະການເຄື່ອນໄຫວຂອງຕົນແຕ່ລະໄລຍະ. ເຖິງເດືອນມີນາ ໑໙໑໘ ພັກກອມມູນິດໄດ້ມີຊື່ວ່າ "ພັກສັງຄົມປະຊາທິປະໄຕລັດເຊຍ (ໂບນເຊວິກ)".

ໃນກອງປະຊຸມໃຫຍ່ພັກ ຄັ້ງທີ VII ໃນປີ ໑໙໑໘ນັ້ນ ເພິ່ນໄດ້ປ່ຽນຊື່ໃຫ່ມ ມາເປັນພັກກອມມູນິດລັດເຊຍ(ໂບນເຊວິກ). ຫລັງຈາກສະຖາປະນາ ສ.ສ.ສ.ຊ. ຂຶ້ນແລ້ວ ກອງປະຊຸມໃຫຍ່ ຂອງພັກຄັ້ງທີ XIV ໃນປີ ໑໙໒໕ ໄດ້ມີມະຕິຕົກລົງປ່ຽນຊື່ພັກກອມມູນິດເປັນພັກກອມມູນິດທົ່ວສະຫະພາບ(ໂບນເຊວິກ).

ແຜນການຫ້າປີຊຸດທຳອິດ - ແຜນການຫ້າປີຊຸດທຳອິດແມ່ນ

ແນໃສ່ຂະຫຍາຍເສດຖະກິດແຫ່ງຊາດຂອງ ສ.ສ.ສ.ຊ. ໃນໄລຍະແຕ່ປີ ໑໙໒໘-໑໙໓໒. ແຜນການຫ້າປີ ແມ່ນແຜນການຂອງລັດເພື່ອຂະຫຍາຍເສດຖະກິດ ແລະວັດທະນະທຳຂອງສະຫະພາບໂຊວຽດ, ທີ່ວາງອອກເປັນໄລຍະຫ້າປີ.ແຜນການຫ້າປີຫລາຍໆຊຸດນັ້ນ ສະແດງເຖິງທ່ວງການກໍ່ສ້າງ ລະບອບສັງຄົມນິຍົມ ແລະລະບອບກອມມູນິດທ່ວງຫນຶ່ງ.ເມື່ອສຳເລັດແຜນການຫ້າປີຊຸດທຳອິດນັ້ນ ເພິ່ນໄດ້ກໍ່ສ້າງພື້ນຖານລະບອບສັງຄົມນິຍົມ, ສ.ສ.ສ.ຊ. ທີ່ເປັນປະເທດກະສິກຳຫລ້າຫລັງ ໃນເມື່ອກ່ອນໄດ້ກາຍເປັນປະເທດອຸດສາຫະກຳຂະຫຍາຍຕົວ; ໃນຂັ້ນ ພື້ນຖານແມ່ນເພິ່ນໄດ້ເຮັດໃຫ້ເສດຖະກິດຂະຫນາດນ້ອຍ ກະແຈກກະຈາຍຂອງຊາວນາຫັນເຂົ້າໄປສູ່ການຈັດຕັ້ງ ໃຫ້ເປັນກຸ່ມກະສິກຳຂະຫນາດໃຫ່ຍ, ສ້າງເງື່ອນໄຂ ເພື່ອທັບມ້າງ ທາດແທ້ຂອງນາຍທຶນໃຫ້ຮາບກ້ຽງ ແລະເຮັດໃຫ້ການປ້ອງກັນປະເທດເຂັ້ມແຂງຂຶ້ນ.

<u>ພື້ນຖານວັດຖຸແລະເຕັກນິກຂອງສັງຄົມນິຍົມ</u> - ແມ່ນ ການຜະລິດກົນຈັກຂະຫນາດໃຫ່ຍ, ທີ່ເຊື່ອມໂຍງໄປຮອດທຸກໆ ຂະແຫນງເສດຖະກິດແຫ່ງຊາດນັ້ນ ແມ່ນອີງໃສ່ກຳມະສິດຂອງສັງຄົມຕໍ່ພາຫະນະການຜະລິດ. ວິຊາຊ່າງອຸດສາຫະກຳ ທີ່ ກ້າວຫນ້າແລະມີການຂະຫຍາຍຕົວແບບ**ວ່ອງໄວ** , ການເຕົ້າໂຮມການຜະລິດຂະຫນາດໃຫ່ຍເຂົ້າຫາກັນ,ການເຮັດໃຫ້ເປັນຊ່ຽວຊານ ແລະການຮ່ວມໄມ້ຮ່ວມມືໃນການຜະລິດ,ການຂະຫຍາຍຕົວຢ່າງສະຫມ່ຳສະເຫມີຂອງສະມັດຖະພາບແຮງງານຂອງສັງ

ຄົມທັງຫມົດນີ້ ມັນແມ່ນເປົ້າຫມາຍສະເພາະຂອງພື້ນຖານວັດຖຸເຕັກນິກຂອງສັງຄົມນິຍົມ. ພື້ນຖານວັດຖຸແລະເຕັກນິກຂອງສັງຄົມນິຍົມ ຈັດຕັ້ງຂຶ້ນໂດຍເຮັດໃຫ້ເປັນແຜນການ ໃນຂະບວນການກໍ່ສ້າງສັງຄົມນິຍົມ. ການເຮັດໃຫ້ອຸດສາຫະກຳ ມີລັກສະນະຂະຫນາດໃຫຍ່ແບບສັງຄົມນິຍົມນັ້ນ ມັນແມ່ນປັດໃຈອັນຕົ້ນຕໍຂອງການກໍ່ສ້າງພື້ນຖານວັດຖຸເຕັກນິກດັ່ງກ່າວ.

ການກໍ່ສ້າງພື້ນຖານວັດຖຸເຕັກນິກສັງຄົມນິຍົມຂຶ້ນນັ້ນ ມັນຮັບປະກັນ ການເປັນເຈົ້າກຳມະສິດຂອງພາຫະນະ ການຜະລິດຂອງສັງຄົມແລະການພົວພັນການຜະລິດສັງຄົມນິຍົມ ຢ່າງເດັດຂາດ, ລົບລ້າງຈຸ້ນຂຸນຂູດຮີດແລະບໍ່ເກີດທີ່ອຳນວຍແກ່ການຂູດຮີດຄົນດ້ວຍຄົນຢ່າງສິ້ນເຊີງ, ຂະຫຍາຍລະດັບ ວັດທະນະທຳແລະເຕັກນິກຂອງຊາວຜູ້ອອກແຮງງານ, ຍົກລະດັບຊີວິດ ອັນອີ່ມຫນຳສຳລານຂຶ້ນຢ່າງບໍ່ຢຸດຢັ້ງ, ເຮັດໃຫ້ການປ້ອງກັນ ລັດສັງຄົມນິຍົມເຂັ້ມແຂງຍິ່ງຂຶ້ນ.

ພື້ນຖານທາງດ້ານວິຊາການຂອງພື້ນຖານວັດຖຸແລະເຕັກນິກສັງຄົມນິຍົມນັ້ນ ໄດ້ແກ່ການຂະຫຍາຍຕາຫນ່າງໄຟຟ້າ ຮັບໃຊ້ເສດຖະກິດແຫ່ງຊາດ, ການນຳໃຊ້ກົນຈັກເຂົ້າໃນການຜະລິດແລະການກ້າວໄປສູ່ການນຳໃຊ້ລະບົບອັດຕະໂນມັດ ເຂົ້າ ໃນການຜະລິດຢ່າງກວ້າງຂວາງ. ໃນ ສ.ສ.ສ.ຊ. ພື້ນຖານວັດຖຸແລະເຕັກນິກຂອງສັງຄົມນິຍົມ ໄດ້ສ້າງຕັ້ງຂຶ້ນໂດຍສະເພາະແມ່ນໃນໄລຍະແຜນການຫ້າປີຊຸດທີຫນຶ່ງ(໑໙໒໘ ຫາ ໑໙໓໒) ແລະໃນໄລຍະແຜນການຫ້າປີຊຸດທີສອງ (ເລີ່ມຈາກປີ ໑໙໓໓

ຫາ ໑໙໓໗) ນັ້ນ.

<u>ເມືອງ ຫລື ຕາແສງ</u> - ເມືອງຫລືຕາແສງແມ່ນສ່ວນແບ່ງຂັ້ນລຸ່ມຂອງການປົກຄອງ, ການສານແລະການເງິນ ຂັ້ນຫນຶ່ງຂອງປະເທດລັດເຊຍ. ໃນ ສ.ສ.ສ.ຊ. ເມືອງຫລືຕາແສງໝົດກຳລັງຄົງຕົວຢູ່ເຖິງປີ ໑໙໒໙ .

<u>ລະບົບກົມໃຫຍ່</u> - ແມ່ນລະບົບຊີ້ນຳແບບລວມສູນ ສູດຍອດຂອງອຸດສາຫະກຳໂຊວຽດ ໃນໄລຍະທີ່ເພີ່ນ ປະຕິບັດ ນະໂຍບາຍ "ກອມມູນິດແບບທະຫານ" ແຕ່ປີ ໑໙໑໘ ຫາປີ ໑໙໒໐ ໂດຍແມ່ນກົມໃຫຍ່ແລະກົມສູນກາງຂອງຂະແຫນງອຸດສາຫະກຳທີ່ປະຈຳຢູ່ໃນສະພາເສດຖະກິດແຫ່ງຊາດສູງສຸດ. ລະບົບຊີ້ນຳດັ່ງກ່າວ ມັນໄດ້ຂຶ້ນກັບຫນ້າທີ່ສະພາບການທະຫານແລະໄດ້ປະຕິບັດຫນ້າທີ່ປູກລະດົມອົບຂວາຍຊັບພະຍາກອນການຜະລິດ ອັນຈຳກັດເພື່ອຕອບສະຫນອງຄວາມຕ້ອງການ ຂອງການປ້ອງກັນປະເທດຊາດ. ພາຍໃນລະບົບດັ່ງກ່າວ ກົມໃຫຍ່ໄດ້ຊີ້ນຳຢ່າງຮອບດ້ານ ການເຄື່ອນໄຫວຂອງວິສາຫະກິດອຸດສາຫະກຳ, ທີ່ບໍ່ໄດ້ມີການກຸ້ມຕົນເອງດ້ານບໍລິຫານເສດຖະກິດ. ກົມໃຫຍ່ໄດ້ປະຕິບັດການຈັດຫາວັດຖຸເຕັກນິກແກ່ວິສາຫະກິດ, ດຳເນີນການຊື້ຂາຍຜະລິດຕະພັນຂອງວິສາຫະກິດ ໂດຍໃຊ້ໃບສັ່ງຈ່າຍໂດຍປາສະຈາກການຊຳລະດ້ວຍເງິນຕາ. ຫລັງຈາກເຂົ້າໄປສູ່ການກໍ່ສ້າງໃນເງື່ອນໄຂສັນຕິພາບແລ້ວ ລະບົບຄຸ້ມຄອງອັນນັ້ນ ໄດ້ປ່ຽນເປັນລະບົບໃຫມ່, ທີ່ຈັດຕັ້ງຂຶ້ນບົນພື້ນຖານ ຂອງການສົມທົບຫລັກການຊີ້ນຳໂຮງຈັກໂຮງງານແບບລວມສູນ ກັບການກຸ້ມ

ຕົນຂອງທາງດ້ານເສດຖະກິດ, ຫມູນໃຊ້ຫົວຄິດ ປະດິດ ສ້າງຂອງຕົນ, ນຳໃຊ້ຫລັກການກຸ້ມຕົນຂອງດ້ານການເງິນ.

ລະບົບຫົວຫນ້ານີ້- ແມ່ນຫລັກການຄຸ້ມຄອງສຳຄັນທີ່ສຸດ ອັນຫນຶ່ງຂອງລະບອບສັງຄົມນິຍົມ, ທີ່ເຫັນຄວາມຈຳເປັນເຮັດໃຫ້ຫນ່ວຍລວມຫມູ່ຂອງລັດຖະກອນໃນວິສາຫະກິດການຜະລິດ ຫລື ສະຖາບັນເຂົ້າຢູ່ໃຕ້ເຈດຕະນາຂອງບຸກຄົນຜູ້ດຽວ ທີ່ເພີ່ນເອີ້ນກັນວ່າ ຜູ້ນຳພາ(ຜູ້ອຳນວຍການ, ຫົວຫນ້າກົມ ແລະ ອື່ນໆ) ແລະອິດທິພົນການຮັບຜິດຊອບຂອງເຂົາຕໍ່ວຽກງານ ທີ່ ມອບຫມາຍໃຫ້ .

ໃນສັງຄົມສັງຄົມນິຍົມ ລະບົບຫົວຫນ້າມີການປະສານສົມທົບກັບການຊັກຈູງເອົາຊາວຜູ້ອອກແຮງງານອັນຫລວງຫລາຍກ່າຍກອງເຂົ້າສູ່ການຄຸ້ມຄອງ, ເຂົ້າສູ່ການແລກປ່ຽນ ຄວາມ ຄິດ ຄວາມເຫັນແລະແກ້ໄຂບັນຫາ, ທີ່ພົວພັນເຖິງການ ຂະຫຍາຍການຜະລິດແບບສັງຄົມ.

ໄລຍະຂ້າມຜ່ານຈາກລະບອບທຶນນິຍົມ ເຂົ້າສູ່ລະບອບສັງຄົມນິຍົມ - ໄລຍະນີ້ ມັນແມ່ນໄລຍະປະຫວັດສາດທີ່ເລີ່ມຈາກການສົມທົບກັນລະຫວ່າງຊົນຊັ້ນກຳມະກອນ ແລະຊາວນາ ໄດ້ຕໍ່ສູ້ຍາດເອົາອຳນາດທາງດ້ານການເມືອງ ແລະຍຶດເອົາເສດຖະກິດທີ່ເປັນປາຍແຫລມມາໄດ້ ແລະສຳເລັດການກໍ່ສ້າງ ລະບອບສັງຄົມນິຍົມ. ໃນໄລຍະຂ້າມຜ່ານນັ້ນ ຊົນຊັ້ນກຳມະກອນໄດ້ເອົາຊະນະການຕອບໂຕ້ຂອງບັນດາພວກກົດຂີ່ຂູດຣີດ ແລະດຳເນີນການຫັນປ່ຽນເສດຖະກິດແຫ່ງຊາດ ໃນຂັ້ນພື້ນຖານ ,

ຂະຫຍາຍກຳລັງການຜະລິດ, ສ້າງເສດຖະກິດ ສັງຄົມນິຍົມ, ຫລໍ່ຫລອມຕົນເອງໃຫ້ເປັນກຳລັງທີ່ສາມາດຊຸມຄອງ ປະເທດຊາດ, ດັດສ້າງພວກນາຍທຶນນ້ອຍເອກະເທດ ອັນມີ ຈຳນວນຫລວງຫລາຍ.

ເສດຖະກິດຂອງໄລຍະອ້ານຜ່ານນັ້ນ ໄດ້ເກີດຂຶ້ນພາຍຫລັງການໂຄ່ນລົ້ມລະບອບນາຍທຶນ, ໄດ້ມີການຈັດຕັ້ງຜະເດັດການກຳມາຊີບຂຶ້ນ ແລະໄດ້ເຮັດໃຫ້ພາຫະນະການຜະລິດຕົ້ນຕໍເປັນຂອງສັງຄົມສັງຄົມນິຍົມ. ລະບອບພື້ນຖານເສດຖະກິດແລະສັງຄົມໃນໄລຍະອ້ານຜ່ານ ໄດ້ແກ່ລະບົບສັງຄົມນິຍົມ, ພໍ່ຄ້ານ້ອຍເອກະເທດແລະທຶນນິຍົມ. ຄຽງຄູ່ກັນກັບລະບອບພື້ນຖານ ດັ່ງກ່າວໃນໄລຍະອ້ານຜ່ານນັ້ນ ອາດມີຮູບການເສດຖະກິດ ອື່ນໆອີກ, ຕົວຢ່າງ : ເສດຖະກິດຮາກຖານ, ແລະກໍຍັງມີເສດຖະກິດຂອງນາຍທຶນແຫ່ງຊາດອີກດ້ວຍ. ລະບອບພື້ນຖານຂອງໄລຍະອ້ານຜ່ານ ມັນສອດຄ່ອງກັບຊົນຊັ້ນທີ່ດຳລົງຄົງຕົວ ຢູ່ໃນເວລານັ້ນເຊັ່ນ : ຊົນຊັ້ນກຳມະກອນ, ນາຍທຶນນ້ອຍ (ໂດຍສະເພາະແມ່ນຈຳພວກຊາວນາ) ແລະນາຍທຶນ.ຂໍ້ຂັດແຍ່ງຕົ້ນຕໍຂອງໄລຍະອ້ານຜ່ານ ແມ່ນຂໍ້ຂັດແຍ້ງລະຫວ່າງລະບອບທຶນນິຍົມທີ່ກຳລັງດັບສູນລົງໄປນັ້ນ ກັບລະບອບສັງຄົມນິຍົມ ທີ່ກຳລັງຈະເລີນງອກງາມຂຶ້ນມານັ້ນເອງ.

ໃນໄລຍະອ້ານຜ່ານ ມີການຕໍ່ສູ້ລະຫວ່າງ ລະບອບສັງຄົມນິຍົມທີ່ກຳລັງປາກົດອອກມາ ກັບລະບອບທຶນນິຍົມ ທີ່ຖືກໂຄ່ນລົ້ມໄປແລ້ວນັ້ນ, ແຕ່ຫາກຍັງບໍ່ທັນໄດ້ດັບສູນຮາບກ້ຽງເທື່ອນັ້ນ .

ລັດສັງຄົມນິຍົມດຳເນີນນະໂຍບາຍເສດຖະກິດ,ທີ່ແນໃສ່ການກໍ່ສ້າງລະບອບສັງຄົມນິຍົມບົນພື້ນຖານພັນທະພາບ ກຳມະກອນຊາວນາໂດຍຢູ່ພາຍໃຕ້ການຊີ້ນຳຂອງຊົນຊັ້ນກຳມະກອນ. ໄລຍະຂ້າມຜ່ານຈະສິ້ນສຸດລົງໃນເມື່ອທາດແທ້ຂອງນາຍທຶນໃນອຸດສາຫະກຳແລະໃນກະສິກຳ ຫາກຖືກດັບສູນຢ່າງຣາບກ້ຽາແລ້ວ ແລະໄຊຊະນະຂອງລະບອບສັງຄົມນິຍົມ ຫາກໄດ້ແຊກຊຶມເຂົ້າໃນເສດຖະກິດແຫ່ງຊາດທຸກໆຂະແໜງການ.

ໄລຍະຟື້ນຟູເສດຖະກິດຢູ່ ສ.ສ.ສ.ຊ.(ປີ ໑໙໒໑ ຫາ ປີ ໑໙໒໕) ແມ່ນໄລຍະປະຫວັດສາດຂອງການຟື້ນຟູ ເສດຖະກິດທີ່ໄດ້ຖືກເສຍຫາຍໃນໄລຍະສົງຄາມໂລກຄັ້ງທີ ໜຶ່ງນັ້ນ , ແລ້ວຈາກນັ້ນ ກໍແມ່ນຢູ່ໃນໄລຍະການຣຸກຣານ ທາງທະຫານຂອງຕ່າງດ້າວແລະໃນສົງຄາມກາງເມືອງນັ້ນ.

ການໂອນເອົາອຸດສາຫະກຳຂະໜາດໃຫຍ່, ທະນາຄານ, ການຂົນສົ່ງ, ການຄ້າຕ່າງປະເທດນັ້ນ ມາເປັນຂອງລັດແລະການປະຕິບັດພັນທະພາບຂອງຊົນຊັ້ນກຳມະກອນຊາວນາ ທາງດ້ານເສດຖະກິດນັ້ນ ມັນໄດ້ສ້າງເງື່ອນໄຂອັນສະດວກແກ່ການຟື້ນຟູເສດຖະກິດໃຫ້ສຳເລັດຢ່າງເລວໄວ. ການຟື້ນຟູ ອຸດສາຫະກຳນັ້ນ ເພິ່ນໄດ້ດຳເນີນໄປໂດຍອີງໃສ່ພື້ນຖານຂອງນະໂຍບາຍເສດຖະກິດໃຫມ່ນັ້ນ ໂດຍປາສະຈາກການຊ່ວຍເຫຼືອຂອງຕ່າງປະເທດ. ພາກສ່ວນຂອງເສດຖະກິດສັງຄົມນິຍົມໄດ້ບຽດຍຶດກອງທຶນເອກະເທດໃນອຸດສາຫະກຳແລະການຄ້າຢ່າງວ່ອງໄວ, ເພິ່ນໄດ້ດຳເນີນການຈັດຕັ້ງສະຫະກອນກະເສດ ໂດຍ

ຄວາມສະໜັກໃຈຂອງຊາວນາ, ຍົກລະດັບຊີວິດ ການເປັນຢູ່ຂອງຊາວຜູ້ອອກແຮງງານໃຫ້ສູງຂຶ້ນ. ຍ້ອນຈາກຜົນສຳເລັດດັ່ງກ່າວເພິ່ນຈຶ່ງສາມາດກະກຽມເງື່ອນໄຂ ເພື່ອການກໍ່ສ້າງອຸດສາຫະກຳຂະໜາດໃຫຍ່ແບບສັງຄົມນິຍົມໄດ້.

"ໜ້າທີ່ສະເພາະໜ້າຂອງອຳນາດໂຊວຽດ"-ແມ່ນບົດນິພົນຂອງທ່ານ ວ.ອີ. ເລນິນ ທີ່ສະເໜີ ແຜນການລິເລີ່ມຂອງການກໍ່ສ້າງສັງຄົມນິຍົມຢູ່ ສ.ສ.ສ.ຣ. ບົດນິພົນດັ່ງກ່າວ ໄດ້ຂຽນຂຶ້ນໃນລະດູບານໃໝ່ຂອງປີ ໑໙໑໘, ທີ່ເພິ່ນໄດ້ວາງພື້ນຖານນະໂຍບາຍເສດຖະກິດຂອງອຳນາດໂຊວຽດ ໃນໄລຍະຂ້າມຜ່ານຈາກທຶນນິຍົມໄປຫາສັງຄົມນິຍົມ. ທ່ານ ວ.ອີ. ເລນິນ ໄດ້ຊີ້ແຈງໃຫ້ເຫັນຄວາມຈຳເປັນໃນການສ້າງສາຍ ການພົວພັນການຜະລິດສັງຄົມນິຍົມ ແບບໃໝ່ ບົນພື້ນຖານສ້າງກຳມະສິດຂອງສັງຄົມຕໍ່ພາຫະນະການຜະລິດຂຶ້ນ. ທ່ານ ວ.ອີ.ເລນິນ ໄດ້ຖືວ່າ ໜ້າທີ່ສະເພາະໜ້າອັນຮີບດ່ວນອັນໜຶ່ງ ແມ່ນການນຳໃຊ້ການບັນຊີແລະການກວດກາຢ່າງເຄັ່ງຄັດຕໍ່ການຜະລິດແລະການແຈກຢາຍຜະລິດຕະພັນ, ພ້ອມທັງຖືວ່າ ເປັນບາດກ້າວບາດທຳອິດບົນເສັ້ນທາງກ້າວໄປສູ່ສັງຄົມນິຍົມແລະກໍແມ່ນເງື່ອນໄຂອັນຈຳເປັນອັນໜຶ່ງ ຂອງການກໍ່ສ້າງພື້ນຖານ ເສດຖະກິດສັງຄົມນິຍົມ.

ທ່ານ ວ.ອີ. ເລນິນ ໄດ້ຖືວ່າເງື່ອນໄຂອັນສຳຄັນຂອງໄຊຊະນະສັງຄົມນິຍົມນັ້ນ ແມ່ນການບັນລຸສະມັດຖະພາບແຮງງານສັງຄົມສູງກ່ອນຢູ່ໃນລະບອບທຶນນິຍົມ, ແມ່ນການຈັດຕັ້ງ ແຂ່ງ

ອັນ ສັງຄົມນິຍົມແລະການຈັດຕັ້ງລະບຽບການອອກແຮງງານສັງຄົມນິຍົມແບບໃໝ່.

ທ່ານ ວ.ອີ.ເລນິນ ໄດ້ເອົາໃຈໃສ່ເປັນພິເສດ ຕໍ່ບັນຫາການປັບປຸງພະເດັດການກຳມາຊີບໃຫ້ເຂັ້ມແຂງ ແລະການຍົກຖານະບົດບາດລັດໃນພູກອົງເຂດ ໃນການກໍ່ສ້າງສັງຄົມນິຍົມ.

ໂດຍການຊີ້ນຳຂອງພັກກອມມູນິດນັ້ນ ໂຄງການກໍ່ສ້າງ ສັງຄົມນິຍົມຂອງທ່ານເລນິນ ກໍໄດ້ນຳສູ່ການປະຕິບັດຢ່າງເກີດຜົນສຳເລັດ.

<u>"ຫລັກການເດືອນເມສາ" ຂອງທ່ານ ວ.ອີ.ເລນິນ</u>-ຫລັກການຂອງທ່ານ ວ.ອີ. ເລນິນ "ກ່ຽວກັບໜ້າທີ່ ຂອງຊົນຊັ້ນກຳມາຊີບໃນການປະຕິວັດເທື່ອນີ້", ທີ່ເພິ່ນໄດ້ຂຽນກ່າວ ໃນເດືອນເມສາ ປີ ໑໙໑໗ ; ຫລັກການເດືອນເມສານີ້ໄດ້ລວບລວມເອົາບົດຮຽນປະຕິວັດ ອັນມະຫາສານ ຂອງພັກກອມມູນິດ, ຊຶ່ງໃນນັ້ນມີແຜນການຕໍ່ຕ້ານໃນໄລຍະຂ້າມຜ່ານຈາກການປະຕິວັດປະຊາທິປະໄຕນາຍທຶນ ໄປສູ່ການປະຕິວັດສັງຄົມນິຍົມ.

ໃນດ້ານເສດຖະກິດ ມາດຕາການທີ່ປະຕິບັດໃນໄລຍະຂ້າມຜ່ານນັ້ນ ມີດັ່ງນີ້: ໂອນເອົາເນື້ອທີ່ດິນທັງໝົດ ພາຍໃນປະເທດເປັນຂອງລັດ ໂດຍການຍຶດເອົາທີ່ດິນຂອງພວກເຈົ້າທີ່ດິນ ແລະຮິບໂຮມທະນາຄານທຸກໆອັນເຂົ້າເປັນທະນາຄານ ແຫ່ງຊາດອັນດຽວ; ຈັດຕັ້ງການກວດກາທະນາຄານນີ້ ຈາກຝ່າຍສະພາຜູ້ແທນຂອງກຳມະກອນ; ນຳໃຊ້ການກວດກາຕໍ່ການຜະລິດແລະການຈຳໜ່າຍຜະລິດຕະພັນ.

ໃນດ້ານການເມືອງນັ້ນ ທ່ານ ວ.ອີ. ເລນິນ ໄດ້ສະເໜີປ່ຽນຈາກສະພາສາທາລະນະລັດ ໄປສູ່ສາທາລະນະລັດ ໂຊວຽດ, ເຊິ່ງເພິ່ນໄດ້ມອງເຫັນເປັນຮູບລັດ ຂອງພະເດັດການກຳມາຊີບ. ຄວາມຮຽກຮ້ອງຕ້ອງການອັນຕົ້ນຕໍ ຂອງ "ຫລັກການເດືອນເມສາ" ແມ່ນການເອົາອຳນາດມອບໃຫ້ແກ່ສະພາໂຊວຽດ.

"ຫລັກການເດືອນເມສາ" ໄດ້ມີບົດບາດອັນສຳຄັນຍິ່ງ, ທີ່ໄດ້ຊີ້ບອກທາງແກ່ພັກກອມມູນິດແລະຊົນຊັ້ນກຳມະກອນເພື່ອຈະນຳເອົາໄຊຊະນະການປະຕິວັດສັງຄົມນິຍົມມາໄດ້.

ອຸດສາຫະກຳຂະໜາດໃຫຍ່ສັງຄົມນິຍົມຂອງ ສ.ສ.ສ.ຊ:

ຂະບວນການລົບລ້າງຄວາມຫລ້າຫລັງຂອງເສດຖະກິດຂອງປະເທດແລະຫັນປ່ຽນ ໃຫ້ມັນເປັນລັດອຸດສາຫະກຳຂະໜາດໃຫຍ່ກ້າວໜ້າ ດ້ວຍການຈັດຕັ້ງແລະຂະຫຍາຍຂະແໜງອຸດສາຫະກຳໜັກ ໃຫ້ໄປກ່ອນກ້າວໜຶ່ງ ທີ່ເພິ່ນຖືວ່າແມ່ນພື້ນຖານວັດຖຸເຕັກນິກຕົ້ນຕໍ. ບົນເສັ້ນທາງກໍ່ສ້າງດັ່ງກ່າວ ໄຊຊະນະ ຂອງຮູບການເສດຖະກິດສັງຄົມນິຍົມ ຕໍ່ຮູບການເສດຖະກິດນາຍທຶນແລະພໍ່ຄ້ານ້ອຍ, ການປັບປຸງການຈັດຕັ້ງເສດຖະກິດ ໂດຍອີງໃສ່ຄວາມກ້າວໜ້າທາງດ້ານວິທະຍາສາດແລະເຕັກນິກ, ການເອົາຊະນະຄວາມບໍ່ມີເອກະລາດດ້ານເຕັກນິກ ແລະ ເສດຖະກິດຂອງປະເທດ ຈາກປະເທດທຶນນິຍົມ, ການເຮັດໃຫ້ສະມັດຖະພາບການປ້ອງກັນ ສ.ສ.ສ.ຊ. ເຂັ້ມແຂງຂຶ້ນນັ້ນ ໄດ້ຖືກຮັບປະກັນ.

ອຸດສາຫະກຳຂະຫນາດໃຫຍ່ສັງຄົມນິຍົມ ແມ່ນແນໃສ່ ການລົບລ້າງຂໍ້ຂັດແຍ້ງຂອງໄລຍະຂ້າມຜ່ານ ຈາກລະບອບທຶນນິຍົມເຂົ້າສູ່ລະບອບສັງຄົມນິຍົມ, ຍົກລະດັບຊີວິດການເປັນຢູ່ ທາງດ້ານວັດຖຸແລະວັດທະນະທຳຂອງຊາວຜູ້ອອກແຮງງານໃຫ້ດີຂຶ້ນ. ອຸດສາຫະກຳຂະຫນາດໃຫຍ່ດັ່ງກ່າວສາມາດຈັດຫາກົນຈັກເຕັກນິກທັນສະໄຫມແກ່ກະສິກຳໄດ້, ຈັດຕັ້ງເງື່ອນໄຂເພື່ອຫັນປ່ຽນເສດຖະກິດດັ່ງກ່າວໄປສູ່ພື້ນຖານອັນໃຫມ່ ໂດຍມີການເຮັດໃຫ້ເສດຖະກິດຂອງຊາວນາ ການເປັນສະຫະກອນກະເສດ ດ້ວຍຄວາມສະຫມັກໃຈ, ເຮັດໃຫ້ພົນທະພາບກຳມະກອນ ຊາວນາເປັນປຶກແຜ່ນແຫນ້ນຫນາ. ບໍ່ເກີດຕົ້ນຕໍຂອງອຸດສາຫະກຳ ຂະຫນາດໃຫຍ່ສັງຄົມນິຍົມ ໄດ້ແກ່ລາຍຮັບຂອງອຸດສາຫະກຳ ທີ່ໂອນມາເປັນຂອງລັດ, ການສະສົມກະສິກຳ, ລະບົບ ທະນາຄານ, ການຄ້າຕ່າງປະເທດ ແລະພາຍໃນປະເທດ.

ອຸດສາຫະກຳຂະຫນາດໃຫຍ່ສັງຄົມນິຍົມ ໄດ້ຂະຫຍາຍ ຕົວໄປດ້ວຍຈັງຫວະອັນວ່ອງໄວ. ເນື່ອງຈາກທ່າແຮງຂອງລະບົບເສດຖະກິດສັງຄົມນິຍົມ ສ.ສ.ສ.ຊ. ສາມາດດຳເນີນ ການເຮັດໃຫ້ເປັນອຸດສາຫະກຳຂະຫນາດໃຫຍ່ໃນໄລຍະອັນສັ້ນໆໄດ້. ຫລັງຈາກການສຳເລັດແຜນການຫ້າປີ ພຽງສອງຊຸດເທົ່າ ນັ້ນ (ແຕ່ປີ ໑໙໒໘ ຫາປີ ໑໙໓໒) ສ.ສ.ສ.ຊ.ໄດ້ປ່ຽນຈາກເປັນປະເທດກະສິກຳຫລ້າຫລັງ ມາເປັນປະເທດ ເຂັ້ມແຂງທາງດ້ານອຸດສາຫະກຳໄດ້. ອັດຕາສ່ວນ ການຜະລິດຂອງອຸດສາຫະກຳຂະຫນາດໃຫຍ່ ແຕ່ໄລຍະ ໑໙໑໓ ຫາ ໑໙໓໗ແລະ

ການຜະລິດຂອງກະສິກຳນັ້ນ ໄດ້ເພີ່ມຂຶ້ນຈາກ ໔໘,໑% ເຖິງ ໗໗,໔% . ການສ້າງຕັ້ງອຸດສາຫະກຳຫນັກ ມັນເປັນພື້ນຖານ ໃຫ້ແກ່ການຍົກລະດັບສະມັດຖະພາບຂອງແຮງງານ ແລະການ ຍົກລະດັບຄວາມອິ່ມຫນຳສຳລານຂອງຊາວຜູ້ອອກແຮງງານຂຶ້ນ ຢ່າງບໍ່ຢຸດຢັ້ງ, ແລະເພື່ອເຮັດໃຫ້ອຳນາດປ້ອງກັນຊາດ ເຂັ້ມ ແຂງຂຶ້ນ .

ບັນດາທ່ານຜູ້ອ່ານທີ່ນັບຖື!

ສຳນັກພິມ "ປະໂລກະເລັດ" ມີຄວາມຍິນດີຢາກຈະຮັບຟັງຄວາມຄິດເຫັນຂອງທ່ານ ກ່ຽວກັບການແປແລະການຮຽບຮຽງປຶ້ມຫົວນີ້. ດັ່ງນັ້ນ ຖ້າຫາກທ່ານມີຄຳສະເໜີອັນໃດອັນຈະເປັນການຊ່ວຍ ໃຫ້ມີການປັບປຸງການພິມໃນຂ້າງໜ້າແລ້ວ ຂໍເຊີນທ່ານສົ່ງຄວາມຄິດເຫັນໄປຍັງ:

17,Zoubovski boulevard,Moscou,U.R.S.S.